ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2025

# ຄູ່ມືນັກເດິນສຳຫຼວດ





ສູນສະຖິຕິແຫ່ງຊາດ

ກະຊວງການເງິນ

ສປປ ລາວ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະຊີ້ນຳລະດັບຊາດການສຳຫຼວດພົນລະເມືອງ
ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025

ເລກທີ............/ຄຊພ

ນະຄອນຫຼວງວຽງຈັນ, ວັນທີ....................

# ຄູ່ມື
# ນັກເດີນສຳຫຼວດ
# ສຳລັບແບບສອບຖາມ ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025

ຫ້ອງການສາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ

**ປີ 2025**

## ຄຳນຳ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ປີ 2025 ແມ່ນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V ຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງຈັດຕັ້ງປະຕິບັດໂດຍສູນສະຖິຕິແຫ່ງຊາດ, ກະຊວງການເງິນ ເລີ່ມຕົ້ນ ເດືອນ ພະຈິກ ປີ 2025, ໂດຍການສະໜັບສະໜູນຂອງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA), ອົງການພັດທະນາສາກົນສະຫະລັດອາເມລິກາ (USAID), ສາທາລະນະລັດ ປະຊາຊົນຈີນ, ກະຊວງການຕ່າງປະເທດ ແລະ ການຄ້າ ປະເທດອົດສະຕາລີ (DFAT), ອົງການເພື່ອການພັດທະນາ ແລະ ການຮ່ວມມືສະວິດ (SDC), ອົງການເພື່ອການພັດທະນາ ແລະ ການຮ່ວມມືລຸກຊຳບວກ (Luxembourg) ແລະ ທະນາຄານໂລກ (WB). ການສຳຫຼວດຄັ້ງນີ້ຈະໄດ້ສຳຫຼວດທຸກໆຄົວເຮືອນໃນຂອບເຂດທົ່ວປະເທດ ຊຶ່ງຈະກວມເອົາຫຼາຍບັນຫາທີ່ພົວພັນເຖິງຄຸນລັກສະນະ ແລະ ທີ່ຢູ່ອາໄສຂອງພົນລະເມືອງເປັນຕົ້ນແມ່ນ: ຂໍ້ມູນຕົ້ນຕໍກ່ຽວກັບຄຸນລັກສະນະຂອງສະມາຊິກທຸກຄົນໃນຄົວເຮືອນ, ຄົນພິການຂອງສະມາຊິກໃນຄົວເຮືອນ, ການສຶກສາ, ສະພາບແຮງງານ, ການເກີດ, ການເສຍຊີວິດ, ການໂຍກຍ້າຍ ແລະ ຄຸນລັກສະນະທີ່ຢູ່ອາໄສຂອງຄົວເຮືອນ ເພື່ອຈັດຕັ້ງປະຕິບັດການສຳຫຼວດດັ່ງກ່າວໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ສຳເລັດຕາມເວລາທີ່ກຳນົດໄວ້ດ້ວຍຜົນສຳເລັດອັນດີງາມ ຈຶ່ງຈຳເປັນຕ້ອງມີນັກເດີນສຳຫຼວດ ແລະ ນັກກວດກາຈຳນວນຫຼາຍ ເຊິ່ງຄາດວ່າຈຳນວນທັງໝົດປະມານ 10,000 ຄົນ ເພື່ອດຳເນີນການສຳຫຼວດໂດຍກົງກັບແຕ່ລະຄົວເຮືອນທີ່ຢູ່ໃນເຂດສຳຫຼວດ ຂອງຕົນຮັບຜິດຊອບໃຫ້ຄົບຖ້ວນ ພ້ອມທັງສອບຖາມ ແລະ ບັນທຶກບັນດາຄຳຕອບເຂົ້າໃນແບບສອບຖາມດ້ວຍລະບົບອີເລັກໂຕນິກ.

ໃນການດຳເນີນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດຄັ້ງນີ້, ນັກເດີນສຳຫຼວດມີບົດບາດສຳຄັນໃນການຕັດສິນຜົນສຳເລັດ ຫຼື ຄວາມຜິດພາດ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສໃນຄັ້ງນີ້. ເພື່ອເປັນການຊ່ວຍເຫຼືອໃຫ້ນັກເດີນສຳຫຼວດສາມາດກຳແໜ້ນ ແລະ ເປັນເອກະພາບທາງດ້ານວິຊາການ ແລະ ປະຕິບັດໜ້າທີ່ວຽກຂອງຕົນໄດ້ສະດວກ, ທັນເວລາ ແລະ ບັນທຶກຈົດກ່າຍໄດ້ຢ່າງຊັດເຈນ, ໂດຍບໍ່ຈົດຊ້ຳ, ບໍ່ຈົດຂາດ, ມີເນື້ອໃນຄົບຖ້ວນ, ຖືກຕ້ອງ ແລະ ຈະແຈ້ງ ດັ່ງນັ້ນ, ສູນສະຖິຕິແຫ່ງຊາດ ກໍ່ຄື ຫ້ອງການສຳຫຼວດພົນລະເມືອງຂັ້ນສູນກາງ ຈຶ່ງໄດ້ຮຽບຮຽງ “ຄູ່ມືນັກເດີນສຳຫຼວດ” ເຊິ່ງມີບັນດາເນື້ອໃນທີ່ສຳຄັນເປັນຕົ້ນແມ່ນນິຍາມກອບແນວຄວາມຄິດ, ຫຼັກການຕົ້ນຕໍຂອງການສຳຫຼວດ, ຄຳອະທິບາຍກ່ຽວກັບວິທີການສອບຖາມ, ການຈົດກ່າຍ ຫຼື ບັນທຶກຄຳຕອບ ແລະ ຕົວຢ່າງປະກອບ ຊຶ່ງຈະເປັນປະໂຫຍດຫຼາຍ ແລະ ເປັນເຄື່ອງມືເພື່ອຊ່ວຍນັກເດີນສຳຫຼວດໃນເວລາປະຕິບັດໜ້າທີ່ຕົນດຽວ. ພ້ອມດຽວກັນນີ້, ການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ນອນໃນແຜນການຈັດຕັ້ງປະຕິບັດການສຳຫຼວດໃນຄັ້ງນີ້. ດັ່ງນັ້ນ, ສິ່ງສຳຄັນທີ່ສຸດແມ່ນນັກເດີນສຳຫຼວດຈະຕ້ອງໄດ້ອ່ານໃຫ້ເຂົ້າໃຈ ເຖິງເນື້ອໃນ, ຈຸດປະສົງ, ລະດັບຄາດໝາຍ ຂອງການເກັບກຳຂໍ້ມູນ ແລະ ປະຕິບັດຕາມຄຳແນະນຳທຸກປະການຢ່າງເຂັ້ມງວດ ເພື່ອຮັບປະກັນການປະຕິບັດການເດີນສຳຫຼວດໃຫ້ໄດ້ຮັບໝາກຜົນທີ່ມີຄຸນນະພາບດີ ແລະ ບັນລຸຜົນສຳເລັດຢ່າງມີໄຊ.

ໃນນາມຄະນະຊີ້ນຳລະຊາດ ຜູ້ປະຈຳການ ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ຂໍສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ການປະກອບສ່ວນຂອງບັນດາທ່ານ ແລະ ທຸກພາກສ່ວນທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ມີສ່ວນຮ່ວມເຮັດໃຫ້ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງນີ້ໄດ້ປະສົບຜົນສຳເລັດຕາມແຜນທີ່ວາງໄວ້. ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຮ່ວມມືຈາກນັກເດີນສຳຫຼວດທຸກໆ ທ່ານໄດ້ເປັນຢ່າງດີ ແລະ ຮັກສາຄວາມລັບຂອງຂໍ້ມູນຢ່າງເຂັ້ມງວດ.

ຫົວໜ້າສູນສະຖິຕິແຫ່ງຊາດ

ເພັດສະໝອນ ສອນ

CamScanner

# ສາລະບານ


ຄຳຫຍໍ້ ........ iii

I. ສະພາບລວມການສຳຫຼວດ ........ 4

1.1. ພາກສະເໜີ ........ 4

1.2. ຄວາມໝາຍຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ........ 5

1.3. ເປົ້າໝາຍ ແລະ ຈຸດປະສົງ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ........ 6

1.4. ໂຄງຮ່າງການຈັດຕັ້ງຂອງການສຳຫຼວດ ........ 7

1.5. ດ້ານນິຕິກຳ ........ 9

1.6. ການຮັກສາຄວາມລັບຂອງຂໍ້ມູນການສຳຫຼວດ ........ 9

1.7. ຄວາມເປັນກາງ ........ 11

1.8. ເນື້ອໃນຂອງການສຳຫຼວດ ........ 11

1.9. ການຕິດຕາມການສຳຫຼວດ ........ 12

1.10. ກອບແນວຄວາມຄິດ ແລະ ນິຍາມ ........ 13

II. ຄຳແນະນຳໃນການເກັບກຳຂໍ້ມູນ ........ 15

2.1 ເວລານັດໝາຍການສຳຫຼວດ ........ 16

2.2 ເວລາ ແລະ ໄລຍະເວລາຂອງການສຳຫຼວດ ........ 16

2.3 ເວລາຈົດນັບ ແລະ ວິທີການຈົດນັບ ........ 16

2.4 ເຂດສຳຫຼວດ (EA) ........ 17

2.5 ເປົ້າໝາຍການຈົດນັບ ແລະ ຂໍ້ມູນທີ່ຕ້ອງໄດ້ເກັບກຳ ........ 18

2.5.1 ຄົນອາໄສຢູ່ເປັນປະຈຳ ........ 19

2.5.2 ຜູ້ມາຢ້ຽມຢາມ ........ 21

2.5.3 ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ........ 21

2.5.4 ຄົວເຮືອນ ........ 21

2.5.5 ອາຄານ ແລະ ທີ່ຢູ່ອາໄສ ........ 23

2.6 ການນຳໃຊ້ແທັບເລັດ ........ 24

2.7 ໜ້າທີ່ຂອງນັກເດີນສຳຫຼວດ ........ 24

2.7.1 ໄລຍະກະກຽມ ........ 24

2.7.2 ໄລຍະສຳຫຼວດ ........ 26

2.7.3 ໄລຍະຫຼັງການສຳຫຼວດ ........ 27

2.8 ວິທີການເຮັດວຽກກັບແຜນທີ່ເຂດສຳຫຼວດ ........ 27

2.8.1. ອົງປະກອບທົ່ວໄປຂອງແຜນທີ່ເຂດສຳຫຼວດ ........ 27

2.8.2. ຄວາມຄືບໜ້າໃນການເກັບກຳຂໍ້ມູນໃນອາຄານ ແລະ ລະຫັດສີ ........ 28

2.8.3. ບັນຊີອາຄານ ........ 30

2.8.4. ເຄື່ອງມືສຳລັບແຜນທີ່ ........ 31

2.9. ສິນລະປະການສຳພາດ ........ 33

III. ແທັບເລັດ ແລະ ໂປຣແກຣມ ທີ່ໃຊ້ສຳລັບການສຳຫຼວດ ........ 37

3.1 ການໃຊ້ງານແທັບເລັດ ........ 37

3.1.1. ການເປີດ ແລະ ປິດແທັບເລັດ ........ 38

3.1.2. ລະດັບແບັດເຕີລີ້ ແລະ ການສາກແທັບເລັດ....39
3.1.3. ການເຊື່ອມຕໍ່ແທັບເລັດກັບອິນເຕີເນັດ....40
3.2. ໂປຣແກຣມສຳລັບການຈັດນັບທີ່ຢູ່ອາໄສ ແລະ ຄົວເຮືອນ....40
3.2.1 ການຈັດການແບບສອບຖາມ....43
3.2.2 ລາຍການຂອງປຸ່ມສາມຈ້ຳທາງຕັ້ງ....44
IV. ໂຄງປະກອບແບບສອບຖາມ ແລະ ວິທີການບັນທຶກຂໍ້ມູນເຂົ້າໂປຣແກຣມແບບສອບຖາມ....47
4.1. ໂຄງປະກອບແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່....47
4.2. ວິທີການເຂົ້າໂປຣແກຣມແບບສອບຖາມການສຳຫຼວດ....49
4.3. ວິທີການສອບຖາມ ແລະ ບັນທຶກຂໍ້ມູນ ແບບສອບຖາມພາກ M - ຂໍ້ມູນອາຄານ....49
4.4. ວິທີການສອບຖາມ ແລະ ບັນທຶກຂໍ້ມູນ ແບບສອບຖາມພາກ ID-RP - ຂໍ້ມູນເອກະລັກ....54
4.4.1 ການເລີ່ມແບບສອບຖາມພາກ ID-RP - ຂໍ້ມູນເອກະລັກ....54
4.4.2 ແບບສອບຖາມພາກ ID-RP – ຂໍ້ມູນເອກະລັກ....55
4.5. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ A – ເລີ່ມການສຳຫຼວດ....58
4.6. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ B – ທີ່ຢູ່ອາໄສ ແລະ ຄົວເຮືອນ....64
4.7. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ C – ຂໍ້ມູນສະມາຊິກຄົວເຮືອນ....77
4.8. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ D – ຂໍ້ມູນບຸກຄົນ....82
4.9. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ E – ຂໍ້ມູນການເສຍຊີວິດ....112
4.10. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ F – ຂໍ້ມູນຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ 115
4.11. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ G – ຂໍ້ມູນຜູ້ຢ້ຽມຢາມຊົ່ວຄາວ 119
4.12. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ H – ສຳເລັດການສຳພາດ....122
V. ການເກັບກຳຂໍ້ມູນຄົວເຮືອນລວມໝູ່....124
5.1. ປະເພດຄົວເຮືອນລວມໝູ່....124
5.2. ການເກັບກຳຂໍ້ມູນຄົວເຮືອນລວມໝູ່....125
5.3. ໂປຣແກຣມເກັບກຳຂໍ້ມູນຄົວເຮືອນລວໝູ່....129
VI. ຫຼັກການທີ່ສຳຄັນ....133
ເອກະສານຊ້ອນທ້າຍ 1. ໜັງສືແຈ້ງເຂົ້າຮ່ວມການສຳຫຼວດ....134
ເອກະສານຊ້ອນທ້າຍ 2 ລະຫັດຊົນເຜົ່າໃນ ສປປ ລາວ....135

# ຄຳຫຍໍ້

| | |
|---|---|
| CAPI | – ການເກັບກຳຂໍ້ມູນດ້ວຍລະບົບຄອມພິວເຕີ |
| EA | – ເຂດສຳຫຼວດ |
| GPS | – ລະບົບກຳນົດຕຳແໜ່ງທີ່ຕັ້ງທົ່ວໂລກ |
| GIS | – ລະບົບຂໍ້ມູນຂ່າວສານພູມສາດ |
| ID | – ຂໍ້ມູນເອກະລັກ |
| LSB | – ສູນສະຖິຕິແຫ່ງຊາດ |
| PDR | – ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| PHC | – ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ |
| UN | – ອົງການສະຫະປະຊາຊາດ |

# I. ສະພາບລວມການສຳຫຼວດ

## 1.1. ພາກສະເໜີ

ລັດຖະບານແຫ່ງ ສປປ ລາວ ໄດ້ຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ມາແລ້ວ 4 ຄັ້ງ, ເລີ່ມແຕ່ ປີ 1985 ເປັນຕົ້ນມາ ເຊິ່ງການສຳຫຼວດຄັ້ງຫຼ້າສຸດແມ່ນໄດ້ຈັດຕັ້ງປະຕິບັດໃນເດືອນ ມີນາ ປີ 2015. ຜົນການສຳຫຼວດດັ່ງກ່າວ ໄດ້ສະໜອງຂໍ້ມູນສະຖິຕິທີ່ສຳຄັນ ກ່ຽວກັບຄຸນລັກສະນະທາງດ້ານພົນລະເມືອງ ແລະ ເສດຖະກິດ-ສັງຄົມ ຂອງພົນລະເມືອງລາວ. ຂໍ້ມູນດັ່ງກ່າວນີ້ເປັນຂໍ້ມູນທີ່ຈຳເປັນໃນການສະໜອງໃຫ້ແກ່ການຕິດຕາມ, ປະເມີນ ແລະ ສ້າງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ, ນະໂຍບາຍດ້ານປະຊາກອນ ແລະ ການພັດທະນາ ແລະ ການແກ້ໄຂບັນຫາທາງດ້ານພົນລະເມືອງ. ໃນປັດຈຸບັນ, ແມ່ນກຳລັງຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V ປີ 2025.

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ສະໜອງຂໍ້ມູນສຳລັບການກຳນົດນະໂຍບາຍ, ການສ້າງແຜນ ແລະ ເປັນຂໍ້ມູນສຳລັບການບໍລິຫານ ໃນລະດັບລະດັບຊາດ. ຂໍ້ມູນກ່ຽວກັບຂະໜາດ, ການແຈກຢາຍ ແລະ ຄຸນລັກສະນະທາງດ້ານພົນລະເມືອງ ແມ່ນມີຄວາມສຳຄັນທີ່ສະແດງໃຫ້ເຫັນສະພາບເສດຖະກິດ, ສັງຄົມ ແລະ ສະພາບຂອງພົນລະເມືອງ. ຂໍ້ມູນດັ່ງກ່າວນີ້ແມ່ນມີຄວາມຕ້ອງການສຳລັບການປັບປຸງນະໂຍບາຍ, ການສ້າງແຜນການພັດທະນາ ແລະ ແຜນງານຕ່າງໆ ເພື່ອປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ເປັນແຫຼ່ງຂໍ້ມູນສະຖິຕິໜຶ່ງດຽວທີ່ມີຄວາມຄົບຖ້ວນ ແລະ ສຳຄັນທີ່ສຸດຂອງປະເທດ.

ສະນັ້ນ, ໃນຖານະເປັນນັກເດີນສຳຫຼວດ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຄັ້ງນີ້, ນັກເດີນສຳຫຼວດຈະມີບົດບາດທີ່ສຳຄັນທີ່ສຸດໃນການເກັບກຳຂໍ້ມູນບຸກຄົນ, ຄົວເຮືອນ ແລະ ທີ່ຢູ່ອາໄສ. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ຈະເປັນເປັນຄັ້ງທຳອິດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທີ່ນຳໃຊ້ແທັບເລັດ ແລະ ແບບສອບຖາມດີຈິຕອນ ເຂົ້າໃນການເກັບກຳຂໍ້ມູນ. ເຖິງແມ່ນວ່າສູນສະຖິຕິແຫ່ງຊາດຈະເຄີຍໃຊ້ແທັບເລັດເຂົ້າໃນການສຳຫຼວດອື່ນມາແລ້ວກໍ່ຕາມ, ແຕ່ຍັງຄົງເປັນວິທີການເກັບກາຂໍ້ມູນຮູບແບບໃໝ່ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ນອກຈາກການນຳໃຊ້ແບບສອບຖາມດີຈິຕອນ ແລະ ການເກັບກຳຂໍ້ມູນດ້ວຍລະບົບຄອມພິວເຕີ (CAPI) ແລ້ວ, ຍັງມີການນຳໃຊ້ລະບົບແຜນທີ່ແບບທີດີຈິຕອນ ແລະ ລະບົບຂໍ້ມູນຂ່າວສານພູມສາດ (GIS) ເຂົ້າໃນການສຳຫຼວດອີກດ້ວຍ. ວິທີການດັ່ງກ່າວນີ້ເປັນການປັບປຸງວິທີການສຳຫຼວດທີ່ສຳຄັນ ເມື່ອທຽບກັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂອງ ສປປ ລາວ ໃນຫຼາຍຄັ້ງຜ່ານມາ.

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນໄດ້ມີການແບ່ງພື້ນທີ່ຂອງປະເທດລາວ ອອກເປັນຫຼາຍເຂດສຳຫຼວດ (EA). ແຕ່ລະເຂດສຳຫຼວດຖືກອອກແບບມາໃຫ້ນັກເດີນສຳຫຼວດໜຶ່ງຄົນຮັບຜິດຊອບ ແລະ ສາມາດຈົດນັບທຸກທີ່ຢູ່ອາໄສ, ຄົວເຮືອນ ແລະ ຜູ້ທີ່ອາໄສຢູ່ໃນເຂດສຳຫຼວດນັ້ນໆໃຫ້ສຳເລັດ ໃນໄລຍະເວລາການສຳຫຼວດທີ່ກຳນົດໄວ້. ໃນໄລຍະເວລາການການສຳຫຼວດ, ນັກເດີນສຳຫຼວດຈະໄດ້ລົງໄປເກັບກຳຂໍ້ມູນທຸກທີ່ຢູ່ອາໄສ ແລະ ຄົວເຮືອນ ໃນເຂດສຳຫຼວດທີ່ໄດ້ຮັບມອບໝາຍ ແລະ ດຳເນີນການສຳພາດເພື່ອເກັບກຳຂໍ້ມູນ. ນັກເດີນສຳຫຼວດຕ້ອງມີຄວາມຮັບຜິດຊອບໃນການເກັບຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງ.

ປື້ມຄູ່ມືນັກເດີນສຳຫຼວດສະບັບນີ້ມີ 3 ຈຸດປະສົງຫຼັກ ດັ່ງຕໍ່ໄປນີ້:

- ເພື່ອເປັນເອກະສານຢັ້ງຢືນດ້ານຂະບວນການ ແລະ ຄວາມຮັບຜິດຊອບໃນໄລຍະເວລາການສຳຫຼວດ;
- ເພື່ອເປັນບ່ອນອີງໃຫ້ແກ່ການຝຶກອົບຮົມນັກເດີນສຳຫຼວດ ແລະ ນັກກວດກາ;
- ເພື່ອເປັນເອກະສານອ້າງອີງໃຫ້ແກ່ນັກສຳຫຼວດ ແລະ ນັກກວດກາ ທີ່ຈຳເປັນຕ້ອງໄດ້ສຶກສາຮໍ່າຮຽນໃນການກະກຽມສຳຫຼວດ ແລະ ສາມາດໃຫ້ຄຳປຶກສາໃນໄລຍະເວລາການກຳເກັບຂໍ້ມູນຢູ່ພາກສະໜາມ.

ປຶ້ມຄູ່ມືສະບັບນີ້ ໄດ້ອະທິບາຍທຸກຂັ້ນຕອນ ແລະ ວິທີການຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ປຶ້ມຄູ່ມືສະບັບນີ້ ຈະຖືກນຳໃຊ້ໃນໄລຍະການຝຶກອົບຮົມ ພ້ອມທັງເປັນເອກະສານອ້າງອີງທີ່ນັກເດີນສຳຫຼວດສາມາດນຳໃຊ້ໃນເວລາທີ່ມີບັນຫາໃນການປະຕິບັດວຽກງານຢູ່ພາກສະໜາມ. ນັກເດີນສຳຫຼວດຕ້ອງສຶກສາຄູ່ມືສະບັບນີ້ຢ່າງລະອຽດ ແລະ ໃຫ້ເຂົ້າໃຈທຸກບັນຫາ ກ່ອນທີ່ຈະລົງໄປເກັບກຳຂໍ້ມູນຢູ່ພາກສະໜາມ.

## 1.2. ຄວາມໝາຍຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ

ອົງສະຫະປະຊາຊາດ ໄດ້ໃຫ້ຄຳນິຍາມການສຳຫຼວດພົນລະເມືອງວ່າ ແມ່ນ *'ຂະບວນການເກັບກຳ, ການສັງລວມ, ການປະເມີນ, ການວິໄຈ ແລະ ການເຜີຍແຜ່ຂໍ້ມູນຂ່າວສານທາງດ້ານພົນລະເມືອງ, ເສດຖະກິດ ແລະ ສັງຄົມ ໃນເວລາສະເພາະໃດໜຶ່ງ, ທີ່ກ່ຽວກັບພົນລະເມືອງທັງໝົດພາຍໃນປະເທດ ຫຼື ສ່ວນໃດໜຶ່ງຂອງປະເທດ'*. ການສຳຫຼວດພົນລະເມືອງແມ່ນການຈົດນັບພົນລະເມືອງທຸກໆຄົນໃນປະເທດ ໃນເວລາສະເພາະໃດໜຶ່ງ ເພື່ອປັບປຸງຂໍ້ມູນພົນລະເມືອງ ໃຫ້ມີຄວາມໜ້າເຊື່ອຖື ແລະ ເປັນບ່ອນອີງໃນການຕັດສິນໃຈບັນຫາຂອງປະເທດ. ການສຳຫຼວດພົນລະເມືອງ ແມ່ນມີຄວາມທີ່ສຳຄັນຫຼາຍ ເພາະວ່າເປັນແຫຼ່ງຂໍ້ມູນຕົ້ນຕໍກ່ຽວກັບຂະໜາດ, ການແຈກຢາຍ ແລະ ອົງປະກອບຂອງພົນລະເມືອງ, ລວມທັງຄຸນລັກສະນະທາງດ້ານເສດຖະກິດ ແລະ ສັງຄົມອື່ນໆ. ການສຳຫຼວດດັ່ງກ່າວຍັງໃຫ້ຂໍ້ມູນທີ່ສຳຄັນ ສຳລັບການຕິດຕາມຄວາມຄືບໜ້າ ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງປະເທດ ພ້ອມທັງເປັນຂໍ້ມູນທີ່ສຳຄັນສຳລັບວຽກງານການບໍລິຫານທຸກຂັ້ນ ແຕ່ສູນກາງຮອດທ້ອງຖິ່ນ.

ການສຳຫຼວດຫຼວດທີ່ຢູ່ອາໄສ ເປັນການຈົດນັບທີ່ຢູ່ອາໄສທັງໝົດໃນປະເທດ ທີ່ຢູ່ໃນລະດັບພູມີສາດນ້ອຍສຸດ ແລະ ເກັບກຳຂໍ້ມູນຄຸນລັກສະນະຈຳນວນໜຶ່ງຂອງທີ່ຢູ່ອາໄສ. ສະນັ້ນ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໝາຍເຖິງການຈັດຕັ້ງປະຕິບັດທັງໝົດທີ່ປະກອບດ້ວຍການວາງແຜນ, ການເກັບກຳຂໍ້ມູນ, ການສັງລວມ, ການປະເມີນ, ການວິໄຈ ແລະ ການເຜີຍແຜ່ ຂໍ້ມູນພົນລະເມືອງ, ຄົວເຮືອນ ແລະ ທີ່ຢູ່ອາໄສ ທັງໝົດໃນຂອບເຂດທົ່ວປະເທດ.

ໂດຍປົກກະຕິແລ້ວ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະເປັນອົງປະກອບທີ່ສຳຄັນຂອງລະບົບສະຖິຕິແຫ່ງຊາດ, ເຊິ່ງໃນລະບົບສະຖິຕິແຫ່ງຊາດອາດປະກອບດ້ວຍການສຳຫຼວດໃຫຍ່ຕ່າງໆ (ຍົກຕົວຢ່າງ, ການສຳຫຼວດກະສິກຳທົ່ວປະເທດ, ການສຳຫຼວດເສດຖະກິດເທົ່າປະເທດ), ການສຳຫຼວດແບບຕົວແທນ ແລະ ນຳໃຊ້ຂໍ້ມູນການຈາກການຂຶ້ນຖະບຽນໃນລະບົບລາຍງານບໍລິຫານ. ດັ່ງນັ້ນ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ມີຄຸນລັກສະນະທີ່ຈຳເປັນ ແລະ ແຕກຕ່າງຈາກການສຳຫຼວດໃຫຍ່ອື່ນໆ ດັ່ງຕໍ່ໄປນີ້:

- ເກັບກຳຂໍ້ມູນລະດັບບຸກຄົນ: ຂໍ້ມູນຄຸນລະນະຂອງແຕ່ລະບຸກຄົນ ແມ່ນຈະຖືກເກັບກຳເປັນລາຍບຸກຄົນ;
- ການຄອບຄຸມ: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ສາມາດສະໜອງຂໍ້ມູນກ່ຽວກັບຈຳນວນພົນລະເມືອງ, ຄົວເຮືອນ ແລະ ທີ່ຢູ່ອາໄສ ໃນຂອບເຂດທົ່ວປະເທດ;
- ເວລາດຽວກັນ: ຂໍ້ມູນທັງໝົດກ່ຽວກັບບຸກຄົນ, ຄົວເຮືອນ ແລະ ທີ່ຢູ່ອາໄສ ແມ່ນອ້າງອີງໃສ່ເວລາທີ່ກຳນົດໄວ້ ຫຼື ຊ່ວງສະເພາະໃດໜຶ່ງ;
- ຄວາມສະໝໍ່າສະເໝີ: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄວນຈັດຕັ້ງປະຕິບັດຕາມໄລຍະຫ່າງປົກກະຕິ, ຕາມຄຳແນະນຳຂອງສາກົນ ແມ່ນຈັດຕັ້ງປະຕິບັດໃນທຸກໆ 10 ປີ;
- ສາມາດຜະລິດຂໍ້ມູນສະຖິຕິໃນພື້ນທີ່ຂະໜາດນ້ອຍ: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ສາມາດຜະລິດຂໍ້ມູນກ່ຽວກັບຈຳນວນ ແລະ ຄຸນລັກສະນະຂອງພົນລະເມືອງ, ຄົວເຮືອນ ແລະ ທີ່ຢູ່ອາໄສ ໃນພື້ນທີ່ພູມີສາດຂະໜາດນ້ອຍໃນຂອບເຂດທົ່ວປະເທດ ແລະ ສາມາດແບ່ງກຸ່ມຍ່ອຍຂອງພົນລະເມືອງໄດ້.

ການສຳຫຼວດໃຫຍ່ ໄດ້ເປີດໂອກາດໃນການນຳໃຊ້ນະວັດຕະກຳໃໝ່ເຂົ້າໃນລະບົບສະຖິຕິແຫ່ງຊາດ. ເຊິ່ງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ຈະໄດ້ນຳໃຊ້ສອງນະວັດຕະກຳໃໝ່ເຂົ້າໃນການສຳຫຼວດຄື:

- ສູນສະຖິຕິແຫ່ງຊາດ (LSB) ໄດ້ຕັດສິນໃຈນຳໃຊ້ແບບສອບຖາມດິຈິຕອນຢ່າງເຕັມຮູບແບບ ເຂົ້າໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ໂດຍການນຳໃຊ້ແທັບເລັດ (ການເກັບກຳຂໍ້ມູນດ້ວຍ

ລະບົບຄອມພິວເຕີ - CAPI). ຂໍ້ມູນທັງໝົດທີ່ເກັບກໍາຢູ່ພາກສະໜາມຈະຖືກຖ່າຍໂອນໄປຫາເຊີເວີການສໍາຫຼວດຂອງຂອງສູນສະຖິຕິແຫ່ງຊາດ ຜ່ານທາງອິນເຕີເນັດ. ການກວດແກ້ ແລະ ການກວດສອບຂໍ້ມູນຈະເຮັດເປັນແບບອັດຕະໂນມັດ ແລະ ບໍ່ຈຳເປັນຕ້ອງການເສຍເວລາໃນການປ້ອນ ແລະ ກວດຂໍ້ມູນດ້ວຍມື ຄືກັນກັບການໃຊ້ແບບສອບຖາມເຈ້ຍ ອີກຕໍ່ໄປ. ການນຳໃຊ້ລະບົບເກັບກຳຂໍ້ມູນດ້ວຍລະບົບ CAPI ໃນການສໍາຫຼວດຄັ້ງນີ້ ແມ່ນຄາດວ່າຈະສາມາດເພີ່ມຄຸນນະພາບຂອງຂໍ້ມູນ ແລະ ຫຼຸດຜ່ອນເວລາໃນການຄຸ້ມຄອງຂໍ້ມູນ;

- ແຜນທີ່ເຂດສຳຫຼວດທີ່ດີຈີຕອນຈະຖືກສ້າງຂຶ້ນ ແລະ ປະສົມປະສານເຂົ້າກັບແບບສອບຖາມດີຈີຕອນພ້ອມທັງນໍາໃຊ້ລະບົບຈຸດທີ່ຕັ້ງ (GPS). ການກະກຽມເຂດສຳຫຼວດດີຈີຕອນ ຈະຊ່ວຍປັບປຸງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃຫ້ດີຂຶ້ນກວ່າການສຳຫຼວດຄັ້ງຜ່ານມາ.

ນັກເດີນສຳຫຼວດ ຈະມີບົດບາດສຳຄັນຫຼາຍໃນການດຳເນີນການສຳຫຼວດພາກສະໜາມ ຊຶ່ງນັກເດີນສຳຫຼວດຈະຕ້ອງເກັບກໍາຂໍ້ມູນທັງໝົດກ່ຽວກັບທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ໃນເຂດສຳຫຼວດທີ່ໄດ້ຮັບມອບໝາຍ. ຜົນສຳເລັດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນຂຶ້ນກັບການເຮັດວຽກຂອງນັກເດີນສຳຫຼວດຕາມທີ່ໄດ້ຮັບມອບໝາຍໃຫ້ສຳເລັດ.

### 1.3. ເປົ້າໝາຍ ແລະ ຈຸດປະສົງ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025

ຈຸດປະສົງຕົ້ນຕໍຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ແມ່ນ:

- ເພື່ອດຳເນີນການເກັບກຳຂໍ້ມູນ ໂດຍນຳໃຊ້ເຄື່ອງມືອີເລັກໂທນິກ ເຂົ້າໃນການເກັບກຳຂໍ້ມູນພົນລະເມືອງໃນຂອບເຂດທົ່ວປະເທດ ຊຶ່ງປະກອບດ້ວຍ: ຄຸນລັກສະນະຂອງພົນລະເມືອງ, ການຂະຫຍາຍຕົວຂອງພົນລະເມືອງ, ສະພາບການເກີດ, ການເສຍຊີວິດ, ຄວາມພິການ, ການຍົກຍ້າຍ, ແຮງງານ, ການຈົດທະບຽນການເກີດ, ຄຸນລັກສະນະຂອງທີ່ຢູ່ອາໄສ ແລະ ການເຂົ້າເຖິງການບໍລິການຕ່າງໆ ຂອງພົນລະເມືອງ ໃນ ສປປ ລາວ ຊ່ວງໄລຍະ 10 ປີ ເພື່ອສ້າງເປັນລະບົບຂໍ້ມູນຂ່າວສານສະແດງການປ່ຽນແປງດ້ານປະຊາກອນ;
- ເພື່ອປັບປຸງແຜນທີ່ຈຸດທີ່ຕັ້ງບ້ານ, ຈຸດທີ່ຕັ້ງໂຄງສ້າງອາຄານ, ຄົວເຮືອນ ແລະ ພື້ນຖານໂຄງລ່າງຕ່າງໆ ໃນຂອບເຂດທົ່ວປະເທດ, ເພື່ອສ້າງແຜນທີ່ບ້ານ, ແຜນທີ່ເຂດສຳຫຼວດ, ຮັບໃຊ້ໃຫ້ແກ່ການເດີນສຳຫຼວດ, ການວິໄຈຂໍ້ມູນເຂົ້າໃນລະບົບແຜນທີ່ດ້ານເສດຖະກິດ-ສັງຄົມຂອງ ສປປ ລາວ ແລະ ການເຜີຍແຜ່ຂໍ້ມູນດ້ວຍລະບົບແຜນທີ່ ຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍ, ແຜນງານ ແລະ ໂຄງການຕ່າງໆຂອງລັດຖະບານ;
- ເພື່ອປັບປຸງຖານຂໍ້ມູນພົນລະເມືອງຮັບໃຊ້ໃຫ້ແກ່ການສ້າງແຜນນະໂຍບາຍດ້ານພົນລະເມືອງ ແລະ ວຽກງານຄຸ້ມຄອງພົນລະເມືອງ, ຕິດຕາມ ແລະ ປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ວິໄສທັດຮອດ ປີ 2030;
- ເພື່ອສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມຄວາມອາດສາມາດຂອງພະນັກງານ ສູນສະຖິຕິແຫ່ງຊາດ ໃນການດຳເນີນກິດຈະກຳຕ່າງໆຂອງການສຳຫຼວດ ໂດຍໃຫ້ເປັນອີງກອນທີ່ນຳໃຊ້ເທັກໂນໂລຊີທັນສະໄໝໃນການປຸງແຕ່ງຂໍ້ມູນ;
- ເພື່ອພັດທະນາ ແລະ ຮັກສາຖານຂໍ້ມູນພົນລະເມືອງແຫ່ງຊາດໃຫ້ມີຄວາມຍືນຍົງ ແລະ ສົ່ງເສີມເຜີຍແຜ່ໃຫ້ທຸກຊັ້ນຄົນໃນສັງຄົມ ເຫັນໄດ້ຄວາມໝາຍຄວາມສຳຄັນຂອງຂໍ້ມູນດ້ານພົນລະເມືອງ ແລະ ການນຳໃຊ້ຂໍ້ມູນດັ່ງກ່າວ ເຂົ້າໃນຂະບວນການສ້າງແຜນນະໂຍບາຍ ແລະ ການພັດທະນາຢ່າງກວ້າງຂວາງ. ຂໍ້ມູນທີ່ໄດ້ຈາກສຳຫຼວດດັ່ງກ່າວນີ້ ເປັນແຫຼ່ງຂໍ້ມູນທີ່ສຳຄັນເພື່ອນຳໃຊ້ໃນການຄິດໄລ່ ແລະ ສົມທຽບຂອງວຽກງານການຈົດທະບຽນ ແລະ ສະຖິຕິພົນລະເມືອງ (CRVS);

- ສ້າງຄວາມເຂົ້າໃຈ ໃຫ້ທຸກພາກສ່ວນລວມທັງພາກລັດ ແລະ ພະນັກງານລະດັບສູງກ່ຽວກັບຄວາມສຳຄັນຂອງຂໍ້ມູນດ້ານພົນລະເມືອງທີ່ມີຄຸນນະພາບສູງ ແລະ ການນຳໄປໃຊ້ໃຫ້ບັນລຸຈຸດປະສົງໃນການສ້າງສາ ແລະ ພັດທະນາປະເທດ.

ຂໍ້ມູນທີ່ເກັບກຳໄດ້ຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະຖືກນຳໃຊ້ໃນຫຼາຍຮູບແບບ ແລະ ຫຼາຍອົງການ ທັງອົງການພາກລັດ ແລະ ພາກສ່ວນອື່ນໆ. ບາງຕົວຢ່າງການນຳໃຊ້ຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ມີດັ່ງຕໍ່ໄປນີ້:

- ກະຊວງສຶກສາທິການ ແລະ ກິລາ ຈະສາມາດຕັດສິນໃຈໄດ້ດີຂຶ້ນວ່າຈະສ້າງໂຮງຮຽນໃໝ່ຢູ່ໃສ ຫຼື ບ່ອນໃດມີຄວາມຕ້ອງການຄູເພີ່ມຕື່ມ;
- ກະຊວງຄົມມະນາຄົມ ແລະ ຂົນສົ່ງ ຈະສາມາດຄາດຄະເນໄດ້ວ່າ ຈະມີການສ້າງຖະໜົນຫົນທາງຫຼາຍປານໃດ, ຢູ່ບ່ອນໃດ ໂດຍອີງໃສ່ຄວາມໜາແໜ້ນຂອງພົນລະເມືອງທີ່ອາໄສຢູ່ໃນພື້ນທີ່ນັ້ນໆ;
- ກະຊວງສາທາລະນະສຸກ ຈະມີຂໍ້ມູນສຳລັບການວາງແຜນໃນການສ້າງສະຖານທີ່ບໍລິການສາທາລະນະສຸກ (ຄລີນິກ, ຮ້ານຂາຍຢາ, ໂຮງໝໍ) ແລະ ການໃຫ້ບໍລິການສາທາລະນະສຸກຢູ່ໃນຂົງເຂດທີ່ມີຄວາມຕ້ອງການຫຼາຍທີ່ສຸດ;
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈະມີຂໍ້ມູນກ່ຽວກັບ ທັກສະການເຮັດວຽກຂອງພົນລະເມືອງ ຊຶ່ງສາມາດວັດແທກໄດ້ຈາກຄວາມຕ້ອງການຂອງຕະຫຼາດແຮງງານ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ຈະມີຂໍ້ມູນສະຖານະພາບ ແລະ ຄຸນລັກສະນະຂອງພົນລະເມືອງພິການ ເພື່ອພັດທະນາໂຄງການສະເພາະ ແລະ ການອອກແບບສະພາບແວດລ້ອມ ທີ່ສະໜອງການມີສ່ວນຮ່ວມທາງດ້ານສັງຄົມ ແລະ ເຂົ້າເຖິງການບໍລິການ ເຊັ່ນ: ການຝຶກອົບຮົມ, ດ້ານງົບປະມານ, ອຸປະກອນຊ່ວຍເຫຼືອ ແລະ ອື່ນໆ;
- ເພື່ອສ້າງສິ່ງອຳນວຍຄວາມສະດວກໃຫ້ດີຂຶ້ນ, ການສຳຫຼວດຈະສະໜອງຂໍ້ມູນສຳລັບການວາງແຜນ ໂດຍອີງໃສ່ລະດັບຄວາມພ້ອມຂອງສິ່ງອຳນວຍຄວາມສະດວກຕ່າງໆເຊັ່ນ: ການເຂົ້າເຖິງຕາຄ່າຍໄຟຟ້າ, ການສະໜອງນໍ້າສະອາດ, ສຸຂະອະນາໄມ, ລະບົບບຳບັດນໍ້າເສຍ ແລະ ອື່ນໆ;
- ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະເປັນຂໍ້ມູນພື້ນຖານສຳລັບການຄາດຄະເນພົນລະເມືອງໃນອານາຄົດ, ຄຸນລັກສະນະຂອງພົນລະເມືອງ ຢູ່ໃນ ສປປ ລາວ ເພື່ອສະໜອງໃຫ້ກັບຜູ້ວາງນະໂຍບາຍ ແລະ ຜູ້ວາງແຜນກ່ຽວກັບທ່າອ່ຽງ ແລະ ການປ່ຽນແປງຂອງພົນລະເມືອງໃນອະນາຄົດ.

ນອກຈາກນັ້ນ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຍັງຈະຖືກນຳໃຊ້ເປັນກອບຕົວແທນ ເພື່ອຄັດເລືອກຄົວເຮືອນ ແລະ ບຸກຄົນສຳລັບການສຳຫຼວດຕົວແທນຕ່າງໆ ໃນອະນາຄົດ. ຕົວຢ່າງ: ການສຳຫຼວດລົງເລິກກ່ຽວກັບການຍົກຍ້າຍ, ສຸຂະພາບ, ສະພາບຊີວິດການເປັນຢູ່, ການຈ້າງງານ ແລະ ການຫວ່າງງານ ທັງໝົດນີ້ແມ່ນຂຶ້ນກັບຂະໜາດ ແລະ ການແຈກຢາຍຂອງພົນລະເມືອງ.

## 1.4. ໂຄງຮ່າງການຈັດຕັ້ງຂອງການສຳຫຼວດ

ສູນສະຖິຕິແຫ່ງຊາດ, ກະຊວງການເງິນ ເປັນເຈົ້າການຫຼັກໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025. ຫ້ອງການສຳຫຼວດພົນລະເມືອງ ໄດ້ຮັບການສ້າງຕັ້ງຂຶ້ນໃນ ສູນສະຖິຕິແຫ່ງຊາດ ເພື່ອຄຸ້ມຄອງ, ວາງແຜນ ແລະ ດຳເນີນກິດຈະກຳທັງໝົດຂອງການສຳຫຼວດ. ເພື່ອໃຫ້ການຈັດຕັ້ງປະຕິບັດດຳເນີນໄປຢ່າງມີປະສິດທິພາບ ຈຶ່ງໄດ້ມີການແຕ່ງຕັ້ງຄະນະຊີ້ນຳ ແລະ ໂຄງຮ່າງການຈັດຕັ້ງຂຶ້ນ.

ໂຄງຮ່າງການຈັດຕັ້ງຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 (ເບິ່ງຮູບສະແດງທີ 1.1) ປະກອບມີ 4 ຂັ້ນ ດັ່ງຕໍ່ໄປນີ້:

1. ຄະນະຊີ້ນຳການສຳຫຼວດລະດັບຊາດແມ່ນຄະນະຮັບຜິດຊອບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໂດຍມີຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ເປັນກອງເລຂາ. ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ປະກອບມີ 5 ໜ່ວຍງານຄື: 1) ໜ່ວຍງານບໍລິຫານ ແລະ ວິທີການສຳຫຼວດ, 2) ໜ່ວຍງານແຜນທີ່, ປຸງແຕ່ງ ແລະ ວິໄຈຂໍ້ມູນ 3) ໜ່ວຍງານໂຄສະນາ, ເຜີຍແຜ່ ແລະ ຕິດຕາມການສຳຫຼວດ, 4) ໜ່ວຍງານໄອຊີທີ ແລະ ຖານຂໍ້ມູນ ແລະ 5) ໜ່ວຍງານການເງິນ ແລະ ງົບປະມານ;
2. ຄະນະຊີ້ນຳການສຳຫຼວດຂັ້ນແຂວງແມ່ນຄະນະຮັບຜິດຊອບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຂັ້ນແຂວງ ໂດຍມີຫ້ອງການສຳຫຼວດຂັ້ນແຂວງເປັນກອງເລຂາ ຊຶ່ງປະກອບມີ 3 ໜ່ວຍງາຍຄື: 1) ໜ່ວຍງານຄຸ້ມຄອງບໍລິຫານ ແລະ ສ້າງແຜນການສຳຫຼວດ ແລະ 2) ໜ່ວຍງານວາງແຜນ, ໂຄສະນາ ແລະ ຕິດຕາມການສຳຫຼວດ; 3) ໜ່ວຍງານການເຜີຍແຜ່;
3. ຄະນະຊີ້ນຳການສຳຫຼວດຂັ້ນເມືອງແມ່ນຄະນະຮັບຜິດຊອບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຂັ້ນເມືອງ ໂດຍມີຫ້ອງການສຳຫຼວດຂັ້ນເມືອງ ຊຶ່ງປະກອບມີ 2 ໜ່ວຍງານຄື: 1) ໜ່ວຍງານຄຸ້ມຄອງບໍລິຫານ ແລະ ການເງິນ ແລະ 2) ໜ່ວຍງານສ້າງແຜນການສຳຫຼວດ;
4. ອຳນາດການປົກຄອງບ້ານມີໜ້າທີ່ອຳນວຍຄວາມສະດວກໃຫ້ແກ່ທີມງານນັກເດີນສຳຫຼວດ ແລະ ປະສານງານກັບສະມາຊິກພາຍໃນບ້ານ ເພື່ອເຂົ້າຮ່ວມຂະບວນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ.

**ຮູບສະແດງທີ 1.1. ໂຄງຮ່າງການຈັດຕັ້ງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ**




ອີງຕາມໂຄງຮ່າງການຈັດຕັ້ງການສຳຫຼວດ ແນວໜ້າຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນທີມງານພາກສະໜາມ ໃນຖານະເປັນນັກເດີນສຳຫຼວດ ທ່ານແມ່ນສ່ວນໜຶ່ງຂອງທີມງານພາກສະໜາມ. ແຕ່ລະທີມງານພາກສະໜາມປະກອບມີ 4 ນັກເດີນສາຫຼວດ ແລະ 1 ນັກກວດກາ.

## 1.5. ດ້ານນິຕິກຳ

ລັດຖະບານແຫ່ງ ສປປ ລາວ ໄດ້ໃຫ້ບຸລິມະສິດອັນສຳຄັນຕໍ່ກັບວຽກງານສະຖິຕິແຫ່ງຊາດ ເຊິ່ງກົດໝາຍວ່າດ້ວຍ ສະຖິຕິສະບັບທຳອິດ ໄດ້ຖືກຮັບຮອງໃນປີ 2010 ແລະ ໄດ້ຍົກສະຖານະພາບຈາກ ກົມສະຖິຕິ ມາເປັນ ສູນສະຖິຕິແຫ່ງຊາດ ທີ່ມີຖານະທຽບເທົ່າທະບວງ ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ແລະ ມາໃນ ປີ 2025 ໄດ້ມີການປັບປຸງກົງຈັກການຈັດຕັ້ງ ສູນສະຖິຕິແຫ່ງຊາດ ແມ່ນຂຶ້ນກັບກະຊວງການເງິນ. ໃນປີ 2017 ກົດໝາຍວ່າດ້ວຍສະຖິຕິໄດ້ຮັບການປັບປຸງເພີ່ມເຕີມ. ເພື່ອພັດທະນາລະບົບສະຖິຕິ, ລັດຖະບານໄດ້ຮັບຮອງເອົາຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020 ໃນປີ 2010 ແລະ ຫຼັງຈາກນັ້ນຍຸດທະສາດດັ່ງກ່າວໄດ້ຮັບການປັງປຸງມາເປັນ “ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດຮອດປີ 2030” ເຊິ່ງເປັນນິຕິກຳບ່ອນອີງທີ່ສຳຄັນ ແລະ ເປັນພື້ນຖານທາງດ້ານຫຼັກການກ່ຽວກັບລະບົບການເກັບກຳ, ການສັງລວມ, ການວິໄຈ ແລະ ການເຜີຍແຜ່ຂໍ້ມູນສະຖິຕິທາງການ ທີ່ຈັດຕັ້ງປະຕິບັດບົນພື້ນຖານຫຼັກການສະຖິຕິ ແລະ ລະບົບການລາຍງານທີ່ເປັນເອກະພາບ. ໂຄງປະກອບຂອງລະບົບສະຖິຕິສາຍຕັ້ງປະກອບດ້ວຍສູນສະຖິຕິແຫ່ງຊາດ, ຂະແໜງການສະຖິຕິຂັ້ນແຂວງ ແລະ ໜ່ວຍງານສະຖິຕິຂັ້ນເມືອງ.

ຕາມກົດໝາຍວ່າດ້ວຍສະຖະຕິ (2017) ຂໍ້ມູນສະຖິຕິພົນລະເມືອງ ແລະ ສະຖິຕິອື່ນໆ ເປັນເຄື່ອງມືທີ່ສຳຄັນ ແລະ ຈຳເປັນຫຼາຍ ໃນການປັບປຸງນະໂຍບາຍສາທາລະນະໃນໄລຍະຍາວ ແລະ ວິໄສທັດການສະໄໝ, ພ້ອມທັງການຕິດຕາມ ແລະ ປະເມີນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ. ກົດໝາຍວ່າດ້ວຍສະຖິຕິ ຍັງໄດ້ກຳນົດວິທີການຜະລິດສະຖິຕິແຫ່ງຊາດ ດ້ວຍຫຼາຍວິທີ ເຊິ່ງລວມມີການສຳຫຼວດໃຫຍ່ ແລະ ການສຳຫຼວດແບບຕົວແທນ, ຂໍ້ມູນການລາຍງານທານບໍລິຫານ ແລະ ລະບົບການຈົດທະບຽນ.

## 1.6. ການຮັກສາຄວາມລັບຂອງຂໍ້ມູນການສຳຫຼວດ

ໃນທຸກຂັ້ນຕອນການຈັດຕັ້ງປະຕິບັດການສຳຫຼວດ ແມ່ນໄດ້ກຳນົດວິທີການເພື່ອຮັບປະກັນຄວາມເປັນສ່ວນຕົວຂອງແຕ່ລະບຸກຄົນ. ການຮັກສາຄວາມລັບ ແລະ ການປົກປ້ອງຂໍ້ມູນ ຖືເປັນບຸລິມະສິດທີ່ສຳຄັນໃນການຈັດຕັ້ງປະຕິບັດໃນທຸກຂັ້ນຕອນຂອງການສຳຫຼວດ. ດ້ວຍເຫດຜົນດັ່ງກ່າວນີ້, ແທັບເລັດທີ່ໃຊ້ໃນການເກັບກຳຂໍ້ມູນແຕ່ລະໜ່ວຍແມ່ນມີລະຫັດຜ່ານ ແລະ ຂໍ້ມູນໃນແທັບເລັດຈະຖືກເກັບຮັກສາໄວ້ຢ່າງປອດໄພ, ໝາຍຄວາມວ່າຂໍ້ມູນໄດ້ເຂົ້າລະຫັດໄວ້ຢ່າງດີ ເພື່ອບໍ່ໃຫ້ບຸກຄົນທີ່ບໍ່ກ່ຽວຂ້ອງກັບການສຳຫຼວດເຂົ້າໄປອ່ານໄດ້ໂດຍບໍ່ໄດ້ຮັບອະນຸຍາດ.

ໃນກົດໝາຍວ່າດ້ວຍສະຖິຕິໄດ້ຂຽນໄວ້ຈະແຈ້ງແລ້ວວ່າ ຂໍ້ມູນສ່ວນບຸກຄົນທີ່ໄດ້ຈາກການເກັບກຳຂໍ້ມູນການສຳຫຼວດຈະຕ້ອງເກັບຮັກສາໄວ້ເປັນຄວາມລັບ ເຊິ່ງຈະຖືກນຳໃຊ້ເພື່ອຈຸດປະສົງທາງສະຖິຕິເທົ່ານັ້ນ. ຜົນໄດ້ຮັບຈາກສຳຫຼວດຈະຖືກເຜີຍແຜ່ໃນລັກສະນະເປັນຜົນລວມ ເຊິ່ງບໍ່ສາມາດລາຍງານຂໍ້ມູນເປັນບຸກຄົນໄດ້ເຊັ່ນ: ຊື່ ຫຼື ເລກປະຈຳຕົວ (IDs) ຫຼື ຂໍ້ມູນສ່ວນບຸກຄົນອື່ນໆ. ຜົນໄດ້ຮັບຈະເຜີຍແຜ່ໃນຮູບແບບຕາຕະລາງ, ຮູບສະແດງ ຫຼື ຕົວຊີ້ບອກລວມເທົ່ານັ້ນ. ການຮັກສາຄວາມລັບເປັນບູລິມະສິດຫຼັກທີ່ນັກເດີນສຳຫຼວດຈະຕ້ອງໄດ້ປະຕິບັດ ເຊິ່ງມີຂໍປະຕິບັດດັ່ງຕໍ່ໄປນີ້:

- ບໍ່ອະນຸຍາດໃຫ້ນັກເດີນສຳຫຼວດເວົ້າ ຫຼື ນິນທາ ຫຼື ສະແດງຂໍ້ມູນທີ່ເກັບກຳໄດ້ໃຫ້ຄົນອື່ນຟັງ;
- ນັກເດີນສຳຫຼວດຕ້ອງໄດ້ຕື່ມຂໍ້ມູນ ເຂົ້າໃນແບບສອບຖາມດິຈິຕອນດ້ວຍຕົນເອງ ໂດຍຜູ້ຖືກສຳພາດຈະບໍ່ສາມາດຕື່ມແບບສອບຖາມດັ່ງກ່າວໄດ້;
- ນັກເດີນສຳຫຼວດບໍ່ຄວນປະແທັບເລັດ ແລະ ອຸປະກອນສຳຫຼວດອື່ນໆ ຢູ່ບ່ອນທີ່ບໍ່ປອດໄພ ຫຼື ບ່ອນທີ່ບຸກຄົນທີ່ບໍ່ກ່ຽວຂ້ອງເຂົ້າເຖິງໄດ້;
- ໃນຊ່ວງເລີ່ມຕົ້ນຂອງການສຳພາດ ນັກເດີນສຳຫຼວດຕ້ອງໄດ້ອະທິບາຍໃຫ້ຜູ້ຖືກສຳພາດໄດ້ຮູ້ວ່າການເກັບກຳຂໍ້ມູນຈະຖືກເກັບເປັນຄວາມລັບ. ໃນກົດໝາຍວ່າດ້ວຍສະຖິຕິໄດ້ກຳນົດໄວ້ວ່າ ຂໍ້ມູນສ່ວນບຸກຄົນທີ່

ເກັບກຳໄດ້ແມ່ນບໍ່ອະນຸຍາດໃຫ້ເຜີຍແຜ່ ຫຼື ສົ່ງຕໍ່ໃຫ້ບຸກຄົນອື່ນໄດ້ ເຊິ່ງຂໍ້ມູນດັ່ງກ່າວຈະນຳໃຊ້ສະເພາະການວິໄຈສະຖິຕິເທົ່ານັ້ນ;

- ນັກເດີນສຳຫຼວດ ບໍ່ຄວນອະນຸຍາດໃຫ້ບຸກຄົນພາຍນອກທີ່ບໍ່ແມ່ນສະມາຊິກຄົວເຮືອນ ເຂົ້າຮ່ວມໃນເວລາສຳພາດ, ຖ້າວ່າມີບຸກຄົນທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນ ຢູ່ໃນບ່ອນນັ້ນໃນເວລາສຳພາດ ກະລຸນາຮ້ອງຂໍໃຫ້ເຂົາເຈົ້າອອກໄປກ່ອນ ເພື່ອເຄົາລົບຄວາມເປັນສ່ວນຕົວຂອງຜູ້ຖືກສຳພາດ;
- ບໍ່ຄວນສົນທະນາກ່ຽວກັບສິ່ງທີ່ເກີດຂຶ້ນ ຫຼື ຂໍ້ມູນທີ່ໄດ້ຮັບທີ່ເປັນຂໍ້ມູນຂອງບຸກຄົນ ຫຼື ຄົວເຮືອນອື່ນ ໃຫ້ກັບຄົວເຮືອນທີ່ກຳລັງສຳພາດຢູ່;
- ຖ້າວ່າຜູ້ຖືກສຳພາດລັງເລທີ່ຈະຕອບ ຫຼື ຖາມວ່າຂໍ້ມູນທີ່ເກັບກຳຈະນຳໃຊ້ເພື່ອຫຍັງ, ກະລຸນາອະທິບາຍໃຫ້ເຂົາເຈົ້າເຂົ້າໃຈວ່າຂໍ້ມູນຈະຖືກເກັບເປັນຄວາມລັບ ແລະ ຈະຖືກນຳໄປນຳໃຊ້ສະເພາະໃນທາງສະຖິຕິເທົ່ານັ້ນ ໂດຍທີ່ບໍ່ໄດ້ລະບຸຂໍ້ມູນຂອງບຸກຄົນ.

**ເອກະສານຄຳປະຕິຍານການເກັບຮັກສາຄວາມລັບຂອງຂໍ້ມູນ:**

**ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025**

ເອກະສານຄຳປະຕິຍານການເກັບຮັກສາຄວາມລັບ ແລະ ປະຕິບັດຕາມລະບຽບຂອງການສຳຫຼວດ

- ຂ້າພະເຈົ້າ ຊື່:.............................................................................................
- ເກີດໃນວັນທີ:.................., ເດືອນ:........................., ປີ...................
- ສະຖານທີ່ເກີດ ບ້ານ:..............................., ເມືອງ:........................, ແຂວງ:..........................
- ສະຖານທີ່ຢູ່ປັດຈຸບັນ ບ້ານ:.........................., ເມືອງ:....................., ແຂວງ:.........................

ຂ້າພະເຈົ້າຂໍປະຕິຍານຕົນວ່າຈະປະຕິບັດໜ້າທີ່ນັກເດີນສາຫຼວດຂອງການສາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ດ້ວຍຄວາມຊື່ສັດ ແລະ ຈະບໍ່ເປີດເຜີຍຂໍ້ມູນໃດໆທີ່ເກັບກຳໄດ້ ຕໍ່ບຸກຄົນທີ່ບໍ່ກ່ຽວຂ້ອງກັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ຮັບຮູ້. ຂ້າພະເຈົ້າຂໍສັນຍາວ່າຈະບັນທຶກຂໍ້ມູນທີ່ຜູ້ຖືກສຳພາດໃຫ້ມາດ້ວຍຄວາມຊື່ສັດ ແລະ ຖືກຕ້ອງຕາມຄວາມເປັນຈິງ ໂດຍບໍ່ຕື່ມຂໍ້ມູນໃດໆທີ່ບໍ່ຖືກຕ້ອງຕາມຜູ້ຖືກສຳພາດສະໜອງໃຫ້. ຂ້າພະເຈົ້າຈະເກັບກຳຂໍ້ມູນຢູ່ທຸກຄົນເຮືອນທີ່ຖືກມອບໝາຍໃຫ້ຮັບຜິດຊອບ ແລະ ຖາມຄຳຖາມທີ່ກ່ຽວຂ້ອງທັງໝົດທີ່ມີຢູ່ໃນແບບສອບຖາມການສຳຫຼວດ.

ຂ້າພະເຈົ້າເຂົ້າໃຈວ່າການທີ່ບໍ່ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ ຈະຖືກປະຕິບັດທາງວິໄນຢ່າງເຂັ້ມງວດ.

ທີ່:............................ວັນທີ:...................................

ລາຍເຊັນ ແລະ ຊື່ແຈ້ງ

ກ່ອນທີ່ຈະເລີ່ມເກັບກຳຂໍ້ມູນຢູ່ພາກສະໜາມ, ນັກເດີນສຳຫຼວດຕ້ອງໄດ້ເຊັນເອກະສານຄຳປະຕິຍານໃນການເກັບຮັກສາຄວາມລັບຂໍ້ມູນ. ນັກເດີນສຳຫຼວດຈະບໍ່ໄດ້ຮັບອະນຸຍາດລົງເກັບກຳຂໍ້ມູນຢູ່ພາກສະໜາມ ຖ້າບໍ່ໄດ້ຮັບ ແລະ ເຊັນເອກະສານຄຳປະຕິຍານດັ່ງກ່າວ. ນັກເດີນສຳຫຼວດທີ່ບໍ່ປະຕິບັດຕາມຄຳປະຕິບາຍນີ້ຈະຖືກໄລ່ອອກຈາກການເປັນນັກເດີນສຳຫຼວດ, ຖ້າຈຳເປັນແມ່ນຕ້ອງໄດ້ດຳເນີນຕາມກົດໝາຍຕໍ່ບຸກຄົນນັ້ນ.

## 1.7. ຄວາມເປັນກາງ

ໂດຍທົ່ວໄປແລ້ວ ຄົນສ່ວນຫຼາຍແມ່ນມີຄວາມສຸພາບຕໍ່ກັບຄົນແປກໜ້າ ແລະ ຜູ້ມາຢ້ຽມຢາມ. ດັ່ງນັ້ນ, ຜູ້ຖືກສຳພາດອາດຈະໃຫ້ຄຳຕອບຕາມສະພາບທາງສັງຄົມ ຫຼື ຕາມທີ່ພວກເຂົາເຊື່ອວ່າຈະເປັນທີ່ພໍໃຈຕໍ່ນັກເດີນສຳຫຼວດ. ສະນັ້ນ, ມັນເປັນສິ່ງສຳຄັນທີ່ສຸດທີ່ນັກເດີນສຳຫຼວດຈະຕ້ອງມີຄວາມເປັນກາງ ກ່ຽວກັບເນື້ອໃນຂອງການສຳພາດ. ນັກເດີນສຳຫຼວດບໍ່ຕ້ອງສະແດງຄວາມຄິດເຫັນຂອງຕົນເອງ ເຊັ່ນ: ການໃຫ້ຄຸນຄ່າທາງວັດທະນະທຳ ຫຼື ສາສະໜາ, ຄວາມເຊື່ອ ແລະ ຄວາມມັກຮັກທາງດ້ານການເມືອງ. ບໍ່ຕ້ອງສະແດງອາການເຫັນດີເຫັນພ້ອມກັບຜູ້ຖືກສຳພາດດ້ວຍນ້ຳສຽງ ຫຼື ການສະແດງອາການອອກທາງໃບໜ້າ, ບໍ່ຄວນສົນທະນາກ່ຽວກັບສິ່ງທີ່ກ່າວມາຂ້າງເທິງກ່ອນການສຳພາດ, ລະຫວ່າງການສຳພາດ ຫຼື ຫຼັງການສຳພາດ. ພະຍາຍາມອະທິບາຍວ່າບໍ່ແມ່ນໜ້າທີ່ຂອງນັກເດີນສຳຫຼວດທີ່ຈະສົນທະນາເລື່ອງດັ່ງກ່າວ.

## 1.8. ເນື້ອໃນຂອງການສຳຫຼວດ

ສູນສະຖິຕິແຫ່ງຊາດ ໄດ້ປະຕິບັດຕາມຫຼັກການ ແລະ ຄຳແນະນຳຂອງ ອົງການສະຫະປະຊາຊາດ ກ່ຽວກັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ເຊິ່ງລວມມີເນື້ອໃນຫົວຂໍ້ສະເພາະໃນແຕ່ລະພາກທີ່ແຕກຕ່າງກັນ. ເນື້ອໃນຂອງແບບສອບຖາມປະກອບ 2 ກຸ່ມໃຫຍ່ຄື: ຄຸນລັກສະນະພົນລະເມືອງ ແລະ ຄຸນລັກສະນະທີ່ຢູ່ອາໄສ.

### ຄຸນລັກສະທີ່ຢູ່ອາໄສ:

ເນື້ອໃນຂອງແບບສອບຖາມການສຳຫຼວດໄດ້ຖາມເຖິງຄຸນລັກສະນະຕ່າງໆຂອງທີ່ຢູ່ອາໄສ ແລະ ຂໍ້ມູນກ່ຽວກັບອາຄານ ເຊິ່ງລວມມີວັດສະດຸທີ່ນຳໃຊ້ໃນການເຮັດຝາ, ຫຼັງຄາ ແລະ ພື້ນຂອງທີ່ຢູ່ອາໄສ, ຈຳນວນຫ້ອງ, ສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ: ຫ້ອງນ້ຳ, ໄຟຟ້າ, ນ້ຳດື່ມ, ອິນເຕີເນັດ ແລະ ສິ່ງອຳນວຍຄວາມສະດວກຕ່າງໆໃນຄົວເຮືອນ.

### ຄຸນລັກສະນະພົນລະເມືອງ:

ຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ຈະສະໜອງຂໍ້ມູນທີ່ຄົບຖ້ວນ ກ່ຽວກັບການແຈກຢາຍຂອງພົນລະເມືອງ ແລະ ກຸ່ມຍ່ອຍຂອງພົນລະເມືອງທີ່ແຕກຕ່າງກັນ.

- **ຄຸນລັກສະນະທາງດ້ານປະຊາກອນສາດ**
  - ຂໍ້ມູນຂອງພົນລະເມືອງປະກອບມີ ເພດ, ອາຍຸ ແລະ ສະຖານະສົມລົດ. ຂໍ້ມູນເຫຼົ່ານີ້ເປັນພື້ນຖານໃນການໄຈ້ແຍກ ແລະ ລາຍງານຂໍ້ມູນອື່ນໆຂອງການສຳຫຼວດ ເພື່ອຊ່ວຍໃຫ້ເຂົ້າໃຈບັນຫາຄຸນລັກສະນະທາງດ້ານເສດຖະກິດ–ສັງຄົມ ແລະ ພົນລະເມືອງ;
  - ການຍົກຍ້າຍພາຍໃນ ແລະ ພາຍນອກ ເປັນປັດໄຈສຳຄັນໃນການປ່ຽນແປງຂະໜາດພົນລະເມືອງ, ໂຄງປະກອບ ແລະ ການແຈກຢາຍ ຂອງພົນລະເມືອງ. ຊຸດຄຳຖາມທີ່ຄົບຖ້ວນຈະສະໜອງຂໍ້ມູນກ່ຽວກັບລັກສະນະການຍົກຍ້າຍ ລວມທັງສະຖານທີ່ເກີດ, ສັນຊາດ, ສະຖານທີ່ອາໄສຢູ່ກ່ອນໜ້ານີ້, ຈຳນວນປີທີ່ອາໄສຢູ່ເມືອງນີ້ ແລະ ເຫດຜົນຂອງການຍົກຍ້າຍ;
  - ຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ສາມາດຄິດໄລ່ລະດັບການຈະເລີນພັນໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ກຸ່ມຍ່ອຍຂອງພົນລະເມືອງທີ່ແຕກຕ່າງກັນ. ຄຳຖາມແມ່ນໄດ້ຖາມກ່ຽວກັບຈຳນວນເດັກທີ່ແມ່ຍິງເກີດໃນຊ່ວງຊີວິດຂອງລາວ ລວມທັງຂໍ້ມູນກ່ຽວກັບການເກີດລູກຜູ້ສຸດທ້າຍ;
  - ເກັບກຳຂໍ້ມູນບຸກຄົນທີ່ອາໄສຢູ່ໃນຄົວເຮືອນ ແລະ ຜູ້ທີ່ເສຍຊີວິດໃນ 12 ເດືອນຜ່ານມາ ເຊິ່ງຈະເປັນຂໍ້ມູນທີ່ສຳຄັນໃນການຄາດຄະເນລະດັບການເສຍຊີວິດ.

- **ຄຸນລັກສະນະທາງດ້ານເສດຖະກິດ:** ຂໍ້ມູນກ່ຽວກັບກິດຈະກຳການຜະລິດຂອງບຸກຄົນ ແມ່ນມີຄວາມສຳຄັນຫຼາຍໃນການເບິ່ງໂຄງສ້າງເສດຖະກິດ ແລະ ຮູບແບບການເຮັດວຽກຂອງພົນລະເມືອງ ໃນທົ່ວປະເທດ, ການເຂົ້າຮ່ວມຕະຫຼາດແຮງງານ ແລະ ແຮງງານທີ່ຢູ່ນອກຕະຫຼາດແຮງງານ. ຂໍ້ມູນເຫຼົ່ານີ້ແມ່ນມີຄວາມສຳຄັນໃນການປະເມີນສະພາບເສດຖະກິດ–ສັງຄົມຂອງແຕ່ລະບຸກຄົນ ແລະ ຄົວເຮືອນ ເຊິ່ງເປັນຂໍ້ມູນທີ່ຈຳເປັນເພື່ອວາງແຜນນະໂຍບາຍທາງດ້ານເສດຖະກິດ ແລະ ສັງຄົມ ແລະ ບັນດາໂຄງການທີ່ກ່ຽວຂ້ອງກັບການສ້າງວຽກເຮັດງານທຳ, ການຫຼຸດຜ່ອນຄວາມທຸກຍາກ, ການສຶກສາ ແລະ ການຝຶກອົບຮົມ, ການປະກັນສັງຄົມ ແລະ ຜົນປະໂຫຍດທາງດ້ານສັງຄົມ, ຄວາມສະເໝີພາບລະຫວ່າງຍິງ–ຊາຍ ແລະ ບັນຫາທາງດ້ານສັງຄົມອື່ນໆ.
- **ຄຸນລັກສະນະທາງດ້ານການສຶກສາ:** ການສຶກສາເປັນປັດໃຈທີ່ສຳຄັນຂອງການພັດທະນາ. ຄຳຖາມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ກ່ຽວກັບການສຶກສາ ຈະລວມມີເນື້ອໃນກ່ຽວກັບ ການຮູ້ໜັງສື, ການເຂົ້າໂຮງຮຽນ ແລະ ການບັນລຸການສຶກສາສູງສຸດຂອງພົນລະເມືອງ.
- **ລັກສະນະທາງດ້ານຊົນເຜົ່າ ແລະ ວັດທະນະທຳ:** ຂໍ້ມູນທີ່ເກັບກຳແມ່ນອີງໃສ່ຄຳຕອບຂອງຜູ້ຖືກສຳພາດ ເຊິ່ງໝາຍຄວາມວ່າພວກເຂົາບໍ່ມີຂໍ້ຜູກພັນທາງກົດໝາຍວ່າຈຳເປັນຕອບຂໍ້ມູນດັ່ງກ່າວ, ແຕ່ອາດຈະລະບຸວ່າເຂົາເຈົ້າບໍ່ສາມາດໃຫ້ຂໍ້ມູນນັ້ນໄດ້.
- **ຂໍ້ຈຳກັດທາງດ້ານໜ້າທີ່ການ:** ເນື້ອໃນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄດ້ເກັບກຳຂໍ້ມູນກ່ຽວກັບ ຂໍ້ຈຳກັດດ້ານໜ້າທີ່ການຕ່າງໆຂອງພົນລະເມືອງ ເຊິ່ງລວມເອົາບຸກຄົນທີ່ມີຄວາມສ່ຽງໃນການພົບພໍ້ຂໍ້ຈຳກັດໃນການປະຕິບັດວຽກງານສະເພາະໃດໜຶ່ງ ຫຼື ຂໍ້ຈຳກັດເຂົ້າຮ່ວມກິດຈະກຳຕ່າງໆ ໃນສັງຄົມ.
- **ຄຸນລັກສະນະຂອງຄົວເຮືອນ ແລະ ຄອບຄົວ:** ເນື້ອໃນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄດ້ກຳເກັບຂໍ້ມູນກ່ຽວກັບຂະໜາດ, ປະເພດ ແລະ ອົງປະກອບຂອງຄົວເຮືອນ ແລະ ຄອບຄົວ ລວມທັງສິ່ງອຳນວຍຄວາມສະດວກ ແລະ ເຄື່ອງໃຊ້ຍາວນານຂອງຄົວເຮືອນ.
- **ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ:** ແບບສອບຖາມການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄດ້ເກັບກຳຂໍ້ມູນສະມາຊິກຂອງຄົວເຮືອນທີ່ອາໄສຢູ່ຕ່າງປະເທດ ເຊິ່ງບຸກຄົນດັ່ງກ່າວເຄີຍເປັນສະມາຊິກຂອງຄົວເຮືອນກ່ອນຍົກຍ້າຍໄປອາໄສຢູ່ຕ່າງປະເທດ ຜູ້ທີ່ຍັງໄດ້ຕິດຕໍ່ກັບສະມາຊິກຂອງຄົວເຮືອນ.
- **ຜູ້ມາຢ້ຽມຢາມ:** ແບບສອບຖາມການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄດ້ເກັບກຳຂໍ້ມູນບຸກຄົນທີ່ມາອາໄສຢູ່ໃນຄົວເຮືອນແບບຊົ່ວຄາວ ໃນຄືນສຳຫຼວດ.

## 1.9. ການຕິດຕາມການສຳຫຼວດ

ໃນໄລຍະການເກັບກຳຂໍ້ມູນຢູ່ພາກສະໜາມແມ່ນມີການຕິດຕາມຢ່າງໃກ້ຊິດ ເພື່ອກວດບັນຫາທີ່ກ່ຽວຂ້ອງກັບຄວາມຄືບໜ້າ ແລະ ຄຸນນະພາບຂອງການສຳຫຼວດ ໄດ້ທັນເວລາ. ບັນຫາທີ່ພົບເຫັນຕ້ອງໄດ້ຮັບການແກ້ໄຂ ແລະ ຮັບປະກັນວ່າການສຳຫຼວດຕ້ອງສຳເລັດຕາມກຳນົດເວລາ ແລະ ຮັບປະກັນມາດຕະຖານດ້ານຄຸນນະພາບ.

ນັກກວດກາແມ່ນຜູ້ທຳອິດທີ່ຕ້ອງໄດ້ຕິດຕາມຄວາມຄືບໜ້າການເກັບກຳຂໍ້ມູນ ຂອງນັກເດີນສຳຫຼວດທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ສິດ, ເພື່ອໃຫ້ນັກເດີນສຳຫຼວດເຮັດວຽກເຕັມທີ່ຕາມຄວາມສາມາດຂອງຕົນ, ອຳນວຍຄວາມສະດວກໃຫ້ແກ່ວຽກງານການເກັບກຳຂໍ້ມູນຂອງນັກເດີນສຳຫຼວດ. ນັກກວດກາຈະຊ່ວຍໃນການວາງແຜນການລົງເກັບກຳຂໍ້ມູນ, ການປະສານງານກັບອຳນາດການປົກຄອງບ້ານ, ຊ່ວຍອະທິບາຍຂັ້ນຕອນຂອງການເກັບກຳຂໍ້ມູນ, ການເຮັດວຽກຂອງແທັບເລັດ ແລະ ການນຳໃຊ້ແຜນທີ່ ແລະ ແບບສອບຖາມດິຈິຕອນ. ນັກກວດກາຍັງຈະຕ້ອງໄດ້ເຂົ້າຮ່ວມການສຳພາດເພື່ອກວດສອບເບິ່ງວ່າການສຳພາດ, ການບັນທຶກ ແລະ ການຖ່າຍໂອນຂໍ້ມູນ ດຳເນີນໄປຕາມຂັ້ນຕອນ ຫຼື ບໍ່. ໜ້າທີ່ຂອງນັກກວດກາຍັງປະກອບດ້ວຍການຕິດຕາມເພື່ອເກັບກຳຂໍ້ມູນຄົວເຮືອນທີ່

ປະຕິເສດການໃຫ້ສໍາພາດ, ກວດສອບກໍລະນີບໍ່ສາມາດຕິດຕໍ່ໄດ້ ແລະ ທີ່ຢູ່ອາໄສຫວ່າງເປົ່າ. ພະນັກງານຫ້ອງການສໍາຫຼວດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຈະລົງຕິດຕາມນັກເດີນສໍາຫຼວດຢູ່ພາກສະໜາມ. ພວກເຂົາຈະຕິດຕາມຄວາມຄືບໜ້າຂອງການເກັບກໍາຂໍ້ມູນ ແລະ ບັນຫາຕ່າງໆທີ່ພົບພໍ້ ແລະ ຈະກວດສອບການເກັບກໍາຂໍ້ມູນຖືກຕ້ອງຕາມຂັ້ນຕອນ ຫຼື ບໍ່.

ໂປຣແກຣມໃນເຄື່ອງແທັບເລັດ ທີ່ມີແຜນທີ່ ແລະ ແບບສອບຖາມດິຈິຕອນ ແລະ ຍັງເປັນເຄື່ອງມືຕິດຕາມທີ່ສໍາຄັນອີກດ້ວຍ. ຍົກຕົວຢ່າງ, ການບັນທຶກສະຖານທີ່, ເວລາ ແລະ ໄລຍະເວລາຂອງການສໍາພາດ. ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ຫ້ອງການສໍາຫຼວດສາມາດກວດສອບວ່າການເກັບກໍາຂໍ້ມູນແມ່ນໄດ້ສໍາພາດຢູ່ໃນເຂດສໍາຫຼວດນັ້ນແທ້ ຫຼື ບໍ່ ແລະ ມັນຍັງສາມາດລະບຸວ່າການສໍາພາດສໍາເລັດໄວ ຫຼື ຊ້າເກີນໄປ ຫຼື ບໍ່.

ນອກຈາກນີ້, ຍັງມີການພັດທະນາເຄື່ອງມືຕິດຕາມການສໍາຫຼວດ. ເຄື່ອງມືການຕິດຕາມນີ້ ແມ່ນເພື່ອກວດເບິ່ງວ່າການສໍາຫຼວດຂອງນັກເດີນສໍາຫຼວດແຕ່ລະຄົນ, ນັກກວດກາແຕ່ລະຄົນ, ແຕ່ລະບ້ານ, ແຕ່ລະເມືອງ, ແຕ່ລະແຂວງ ແລະ ທົ່ວປະເທດ ສາມາດສໍາເລັດຕາມໄລຍະເວລາການສໍາຫຼວດ ຫຼື ບໍ່. ນອກຈາກນີ້, ຍັງສາມາດຕິດຕາມບັນຫາຕ່າງໆເຊັ່ນ: ອັດຕາສ່ວນປະຕິເສດການສໍາພາດ, ຄົວເຮືອນທີ່ບໍ່ສາມາດຕິດຕໍ່ໄດ້ ຫຼື ທີ່ຢູ່ອາໄສວ່າງເປົ່າ, ຂະໜາດຄົວເຮືອນສະເລ່ຍນ້ອຍຫຼາຍ ແລະ ອື່ນໆ. ນັກກວດກາ ແລະ ພະນັກງານຫ້ອງການສໍາຫຼວດຂັ້ນສູນກາງຜູ້ທີ່ສາມາດນໍາໃຊ້ເຄື່ອງມືຕິດຕາມນີ້ ສາມາດແກ້ໄຂບັນຫາຕ່າງໆເຫຼົ່ານີ້ໃຫ້ທັນເວລາ.

## 1.10. ກອບແນວຄວາມຄິດ ແລະ ນິຍາມ

ເພື່ອດໍາເນີນການສໍາພາດ, ນັກເດີນສໍາຫຼວດຈະຕ້ອງໄດ້ຮຽນຮູ້ກ່ຽວກັບ ກອບແນວຄວາມຄິດ ແລະ ນິຍາມຕ່າງໆ ທີ່ຈໍາເປັນສໍາລັບຂັ້ນຕອນຂອງການສໍາຫຼວດ. ໃນພາກນີ້ຈະໄດ້ອະທິບາຍກອບແນວຄວາມຄິດ ແລະ ນິຍາມຫຼັກທີ່ສໍາຄັນດັ່ງນີ້:

**ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ:** ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນການຈົດນັບຂໍ້ມູນບຸກຄົນ, ຄົວເຮືອນ ແລະ ທີ່ຢູ່ອາໄສທັງໝົດໃນຂອບເຂດທົ່ວປະເທດ ໃນເວລາສະເພາະໃດໜຶ່ງ ເຊິ່ງຈະສາມາດສະໜອງຂໍ້ມູນຄຸນລັກສະນະທາງດ້ານພົນລະເມືອງ, ເສດກະກິດ, ສັງຄົມ ແລະ ຄຸນລັກສະນະຂອງທີ່ຢູ່ອາໄສ.

**ມື້ສໍາຫຼວດ:** ແມ່ນມື້ເຊົ້າຂອງຄືນສໍາຫຼວດ ແລະ ເປັນມື້ທໍາອິດຂອງຊ່ວງໄລຍະເວລາການສໍາຫຼວດ. ມື້ສໍາຫຼວດຂອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ແມ່ນວັນທີ 3 ພະຈິກ 2025.

**ເວລານັດໝາຍການສໍາຫຼວດ:** ແມ່ນກໍານົດເອົາທ່ຽງຄືນເວລາ 00:00 ໂມງ ຂອງກາງຄືນຂອງວັນທີ 2 ແລະ ວັນທີ 3 ພະຈິກ 2025. ເວລານັດໝາຍການສາຫຼວດແມ່ນເວລາທີ່ສາຄັນເພື່ອການົດວ່າແມ່ນໃຜຈະຖືກຈົດນັບເຂົ້າໃນການສໍາຫຼວດ.

**ຄືນສໍາຫຼວດ:** ແມ່ນຄືນທີ່ກວມເອົາເວລານັດໝາຍການສາຫຼວດ ຊຶ່ງການສາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2025 ແມ່ນກໍານົດເອົາຄືນວັນທີ 2 ຫາ 3 ພະຈິກ 2025.

**ໄລຍະເວລາການສໍາຫຼວດ:** ໝາຍເຖິງໄລຍະເວລາ ທີ່ຈະມີການເກັບກໍາຂໍ້ມູນການສໍາຫຼວດຢູ່ພາກສະໜາມ. ໄລຍະເວລາການສໍາຫຼວດຂອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ແມ່ນຈະໃຊ້ເວລາ 6 ອາທິດເລີ່ມແຕ່ວັນທີ 3 ພະຈິກ ຫາ 14 ທັນວາ 2025.

**ການຈົດນັບ:** ແມ່ນຂະບວນການນັບ ແລະ ເກັບກໍາຂໍ້ມູນທາງດ້ານພົນລະເມືອງ ແລະ ເສດຖະກິດ–ສັງຄົມ ຂອງທັງໝົດທຸກຄົນ ໃນຂອບເຂດທົ່ວປະເທດ ໃນເວລາໃດໜຶ່ງທີ່ກໍານົດໄວ້ (ເວລານັດໝາຍການສໍາຫຼວດ). ຂໍ້ມູນເຫຼົ່ານີ້ຖືກເກັບກໍາໂດຍຜ່ານການຕອບແບບສອບຖາມສໍາລັບແຕ່ລະທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ໃນຂອບເຂດທົ່ວປະເທດ.

**ເຂດສຳຫຼວດ (EA)**: ແມ່ນຫົວໜ່ວຍທາງພູມີສາດຂະໜາດນ້ອຍ ທີ່ແບ່ງພື້ນທີ່ຂອງປະເທດອອກເປັນສ່ວນໆ ສຳລັບຈຸດປະສົງການສຳຫຼວດ ແລະ ຈຸດປະສົງທາງສະຖິຕິ ແລະ ເພື່ອໃຫ້ນັກເດີນສຳຫຼວດສາມາດເກັບກຳຂໍ້ມູນຢູ່ໃນເຂດສຳຫຼວດທີ່ຕົນຮັບຜິດຊອບສຳເລັດໃນຊ່ວງເວລາການສຳຫຼວດ.

**ແຜນທີ່ເຂດສຳຫຼວດ:** ແມ່ນເປັນແຜນທີ່ດີຈິຕອນທີ່ລວມເຂົ້າກັບແບບສອບຖາມຢູ່ໃນແທັບເລັດ. ແຜນທີ່ເຂດສຳຫຼວດສະແດງເສັ້ນຂອບເຂດຂອງເຂດສຳຫຼວດ ພ້ອມທັງຮູບອາຄານທັງໝົດທີ່ຕ້ອງໄດ້ສຳຫຼວດໃຫ້ສຳເລັດ.

**ອາຄານ:** ແມ່ນໂຄງສ້າງເອກະລາດບໍ່ຕິດກັບໂຄງສ້າງອື່ນທີ່:

- ສາມາດປະກອບມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສ, ຫ້ອງ ຫຼື ພື້ນທີ່ຫວ່າງອື່ນໆ;
- ມຸ້ງດ້ວຍຫຼັງຄາ;
- ອ້ອມດ້ວຍຝາດ້ານນອກ ແລະ ຝາແບ່ງທີ່ສ້າງຈາກພື້ນເຖິງຫຼັງຄາ;
- ອອກແບບເພື່ອຈຸດປະສົງເປັນທີ່ຢູ່ອາໄສ, ການກະສິກຳ, ການຄ້າ, ອຸດສາຫະກຳ, ສະຖາບັນ ຫຼື ວັດທະນະທຳ ຫຼື ການບໍລິການ;

ສະນັ້ນ, ອາຄານ ສາມາດເປັນເຮືອນດ່ຽວ, ອາພາດເມັນ, ສຳນັກງານ, ໂຮງງານ, ຮ້ານຄ້າ, ສາງເກັບເຄື່ອງ, ເຮືອນຈອດລົດ, ເລົ້າເຂົ້າ ແລະ ອື່ນໆ.

**ຫົວໜ່ວຍການສຳຫຼວດ:** ຫົວໜ່ວຍການສຳຫຼວດ ໝາຍເຖິງຫົວໜ່ວຍພື້ນຖານທີ່ຕ້ອງໄດ້ຈົດນັບໃນເວລາສຳຫຼວດ. ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2025 ປະກອບດ້ວຍ 4 ຫົວໜ່ວຍການສຳຫຼວດ ຄື: 1) ບຸກຄົນທີ່ຢູ່ອາໄສຢູ່ ສປປ ລາວ ເປັນປະຈຳໃນຄືນສຳຫຼວດ, 2) ຄົວເຮືອນສ່ວນບຸກຄົນ, 3) ທີ່ຢູ່ອາໄສ ແລະ 4) ທີ່ຢູ່ອາໄສລວມໝູ່.

**ທີ່ຢູ່ອາໄສ:** ທີ່ຢູ່ອາໄສໝາຍເຖິງສະຖານທີ່ທີ່ເປັນບ່ອນຢູ່ອາໄສທີ່ແຍກຕ່າງຫາກ ແລະ ເປັນອິດສະຫຼະ.

- ສ້າງຂຶ້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສຂອງຄົນສຳລັບໜຶ່ງຄົວເຮືອນ ເຖິງແມ່ນວ່າຈະມີ ຫຼື ບໍ່ມີຄົນອາໄສຢູ່ໃນເວລານັດໝາຍການສຳຫຼວດກໍ່ຕາມ;
- ຫຼື ບໍ່ມີຈຸດປະສົງສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສຂອງຄົນ ແຕ່ຖືກນຳໃຊ້ເປັນທີ່ຢູ່ອາໄສໃນເວລານັດໝາຍການສຳຫຼວດ.

**ຄົວເຮືອນ:** ຄົວເຮືອນແມ່ນກຸ່ມຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສຮ່ວມກັນ ແລະ ມີການແບ່ງປັນທາງດ້ານເສດຖະກິດສ່ວນໃດໜຶ່ງ ຫຼື ທັງໝົດ ຊຶ່ງປະກອບດ້ວຍການແບ່ງປັນອາຫານ ຫຼື ກິນເຂົ້າຮ່ວມກັນເປັນປົກກະຕິ, ອາໄສຢູ່ຮ່ວມກັນ ແລະ ນຳໃຊ້ເຄື່ອງໃຊ້ສອຍທີ່ຈຳເປັນໃນຊີວິດປະຈຳວັນຮ່ວມກັນ. ໂດຍສ່ວນໃຫຍ່ຄົວເຮືອນຈະປະກອບມີ ສອງ ຫຼື ຫຼາຍຄົນ ທີ່ອາໄສຢູ່ຮ່ວມກັນ. ເຖິງຢ່າງໃດກໍ່ຕາມ, ຄົວເຮືອນຍັງສາມາດມີແຕ່ຄົນດຽວກິນຢູ່ຕ່າງຫາກທີ່ບໍ່ຂຶ້ນກັບຄົນອື່ນ.

**ທີ່ຢູ່ອາໄສຄົວເຮືອນລວມໝູ່:** ທີ່ຢູ່ອາໄສຄົວເຮືອນລວມໝູ່ແມ່ນທີ່ຢູ່ອາໄສທີ່:

- ອອກແບບມາເພື່ອເປັນທີ່ຢູ່ອາໄສຂອງກຸ່ມຄົນຈຳນວນຫຼາຍ ຫຼື ຫຼາຍຄົວເຮືອນ ແລະ;
- ຖືກໃຊ້ເປັນທີ່ຢູ່ອາໄສເປັນປະຈຳສຳລັບຢ່າງໜ້ອຍໜຶ່ງຄົນໃນເວລານັດໝາຍການສຳຫຼວດ.

ເປັນທີ່ຢູ່ອາໄສຂອງກຸ່ມຄົນ ຊຶ່ງປົກກະຕິແລ້ວບໍ່ມີສາຍພົວພັນທາງສົມລົດ, ສາຍເລືອດ, ລູກບຸນທຳ ຫຼື ລູກລ້ຽງ ແຕ່ມາອາໄສຢູ່ຮ່ວມກັນເພື່ອຈຸດປະສົງດ້ານການສຶກສາ, ສຸຂະພາບ, ສະຖານກັກກັນ, ສະຫວັດດີການ ແລະ ອື່ນໆ. ບຸກຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ແມ່ນມີບັນຊີຂຶ້ນກັບອົງການຈັດຕັ້ງ ຫຼື ນິຕິບຸກຄົນ (ບໍລິສັດ/ໂຮງງານ) ໃດໜຶ່ງ. ນັກເດີນສຳຫຼວດຈະໄດ້ຮັບຜິດຊອບໃນການເກັບກຳຂໍ້ມູນຂອງຄົວເຮືອນລວມໝູ່ນຳ

ຍົກເວັ້ນຄົວເຮືອນລວມໝູ່ທີ່ມີຂະໜາດໃຫຍ່ເກີນ 100 ຄົນ ແມ່ນຈະມີນັກເດີນສາຫຼວດພິເສດຮັບຜິດຊອບໃນການເກັບກຳຂໍ້ມູນໃນທີ່ຢູ່ອາໄສດັ່ງກ່າວ.

**ຄົນອາໄສຢູ່ເປັນປະຈຳ ແລະ ສະຖານທີ່ອາໄສຢູ່ເປັນປະຈຳ:** ຄົນອາໄສຢູ່ເປັນປະຈຳ ແມ່ນໝົດທຸກຄົນທີ່ມີສະຖານທີ່ອາໄສຢູ່ເປັນປະຈຳໃນ ສປປ ລາວ ໂດຍບໍ່ຈຳແນກວ່າຈະເປັນພົນລະເມືອງສັນຊາດໃດກໍ່ຕາມ ແລະ ເຖິງແມ່ນວ່າພວກເຂົາຈະມີໜ້າ ຫຼື ບໍ່ມີໜ້າຢູ່ໃນສະຖານທີ່ອາໄສຢູ່ເປັນປະຈຳ ຫຼື ບໍ່ມີໜ້າຊົ່ວຄາວ ໃນເວລານັດໝາຍການສຳຫຼວດກໍ່ຕາມ. "ສະຖານທີ່ອາໄສຢູ່ເປັນປະຈຳ" ແມ່ນສະຖານທີ່ທາງພູມີສາດ ບ່ອນທີ່ບຸກຄົນອາໄສຢູ່ຢ່າງຕໍ່ເນື່ອງຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ຮອດເວລານັດໝາຍການສຳຫຼວດ ຫຼື ມີຈຸດປະສົງມາອາໄສຢູ່ສະຖານທີ່ດັ່ງກ່າວຢ່າງໜ້ອຍ 6 ເດືອນ ຂຶ້ນໄປ. ດັ່ງນັ້ນ, ຄົນທີ່ອາໄສຢູ່ເປັນປະຈຳໃນທີ່ຢູ່ອາໄສທີ່ນັກເດີນນຳຫຼວດຈະຕ້ອງໄດ້ຈົດນັບປະກອບດ້ວຍ:

- ບັນດາບຸກຄົນທີ່ອາໄສຢູ່ໃນສະຖານທີ່ອາໄສຢູ່ເປັນປະຈຳ 6 ເດືອນ ຂຶ້ນໄປ ກ່ອນ (ແລະ ລວມເອົາ) ເວລານັດໝາຍການສຳຫຼວດ ໂດຍບໍ່ຄຳນຶງເຖິງມື້ບໍ່ມີໜ້າຊົ່ວຄາວສຳລັບການທ່ອງທ່ຽວໃນວັນພັກຜ່ອນ ຫຼື ໄປເຮັດວຽກຕາມການມອບໝາຍ;
- ບັນດາບຸກຄົນທີ່ອາໄສຢູ່ໃນສະຖານທີ່ອາໄສຢູ່ເປັນປະຈຳບໍ່ຮອດ 6 ເດືອນ (ລວມທັງເວລານັດໝາຍການສຳຫຼວດ), ແຕ່ມີຈຸດປະສົງມາອາໄສຢູ່ສະຖານທີ່ດັ່ງກ່າວຫຼາຍກວ່າ 6 ເດືອນ ຂຶ້ນໄປ (ຍົກຕົວຢ່າງ, ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 1 ປີ ຫຼື ສະມາຊິກຂອງຄົວເຮືອນທີ່ກັບຄືນມາຈາກຕ່າງປະເທດ).

"ຢ່າງຕໍ່ເນື່ອງ" ໝາຍເຖິງ ຜູ້ທີ່ບໍ່ມີໜ້າຊົ່ວຄາວໃນສະຖານທີ່ຢູ່ອາໄສເປັນປະຈຳ ໃນໄລຍະເວລາຕ່ຳກວ່າ 6 ເດືອນ ແມ່ນບໍ່ສົ່ງຜົນຕໍ່ສະຖານທີ່ອາໄສຢູ່ເປັນປະຈຳ. ດັ່ງນັ້ນ, ບໍ່ມີໜ້າຊົ່ວຄາວ 2-3 ມື້, 2-3 ອາທິດ ຫຼື 2-3 ເດືອນ ເຊັ່ນ: ໄປຢ້ຽມຢາມພີ່ນ້ອງ ຫຼື ໄປເຂົ້າໂຮງໝໍ, ໄປທ່ອງທ່ຽວໃນວັນພັກ ຫຼື ໄປເຮັດວຽກ ແມ່ນບໍ່ກະທົບຕໍ່ສະຖານທີ່ອາໄສຢູ່ເປັນປະຈຳ ເຊິ່ງແມ່ນສະຖານທີ່ທີ່ບຸກຄົນດັ່ງກ່າວຈະກັບມາຫຼັງຈາກບໍ່ມີໜ້າຊົ່ວຄາວ.

**ຄົນບໍ່ມີທີ່ຢູ່ອາໄສ:** ແມ່ນບຸກຄົນທີ່ອາໄສຢູ່ຕາມຖະໜົນ ແລະ ສະຖານທີ່ສາທາລະນະຕ່າງໆ ໂດຍບໍ່ມີທີ່ລີ້ນໄພ.

**ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ:** ແມ່ນບຸກຄົນທີ່ເຄີຍເປັນສະມາຊິກຂອງຄົວເຮືອນທີ່ກຳລັງສຳພາດຢູ່ ແຕ່ປັດຈຸບັນໄດ້ຍ້າຍອອກໄປອາໄສຢູ່ຕ່າງປະເທດ.

**ຜູ້ມາຢ້ຽມຢາມ:** ຜູ້ມາຢ້ຽມຢາມແມ່ນບຸກຄົນທີ່ມາອາໄສຢູ່ຊົ່ວຄາວກັບຄົວເຮືອນນັ້ນໃນຄືນມື້ສຳຫຼວດ, ຍົກຕົວຢ່າງ: ພີ່ນ້ອງ ຫຼື ໝູ່ເພື່ອນມາຢ້ຽມຢາມ. ຜູ້ມາຢ້ຽມຢາມຍັງແມ່ນບຸກຄົນທີ່ມາອາໄສຢູ່ໃນທີ່ຢູ່ອາໄສ ໃນຄືນສຳຫຼວດ ຖ້າວ່າສະຖານທີ່ອາໄສຢູ່ນັ້ນເປັນບ່ອນຢູ່ທີ່ສອງ ຫຼື ເປັນເຮືອນຫຼັງທີສອງ.

**ນັກເດີນສຳຫຼວດ**: ແມ່ນສ່ວນໜຶ່ງຂອງພະນັກງານຢູ່ພາກສະໜາມ, ເຮັດໜ້າທີ່ເກັບກຳຂໍ້ມູນທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ໃນເຂດສຳຫຼວດທີ່ຕົນຮັບຜິດຊອບ.

**ນັກກວດກາ:** ແມ່ນສ່ວນໜຶ່ງຂອງພະນັກງານພາກສະໜາມ ມີໜ້າທີ່ໃນການໃຫ້ຄຳແນະນຳ, ຕິດຕາມ ແລະ ຊ່ວຍເຫຼືອນັກເດີນສຳຫຼວດ ເຊິ່ງນັກກວດກາ 1 ທ່ານ ຮັບຜິດຊອບນັກເດີນສຳຫຼວດ 4 ທ່ານ (4 ເຂດສາຫຼວດ).

## II. ຄຳແນະນຳໃນການເກັບກຳຂໍ້ມູນ

ເພື່ອໃຫ້ເປັນນັກເດີນສຳຫຼວດທີ່ປະສົບຜົນສຳເລັດ, ນັກເດີນສຳຫຼວດຕ້ອງໄດ້ປະຕິບັດໜ້າວຽກຫຼາຍຢ່າງຕາມທີ່ໄດ້ກຳນົດໄວ້ຢ່າງຊັດເຈນ. ໃນພາກນີ້, ນັກເດີນສຳຫຼວດຕ້ອງຮຽນຮູ້ໜ້າວຽກທີ່ໄດ້ຮັບມອບໝາຍ ແລະ ຄຳແນະນຳວິທີການຈັດຕັ້ງປະຕິບັດ.

## 2.1 ເວລານັດໝາຍການສຳຫຼວດ

ຂໍ້ມູນທີ່ເກັບກຳໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ເປັນຕົ້ນແມ່ນຂໍ້ມູນ ຄຸນລັກສະນະຂອງພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນອີງໃສ່ເວລາສະເພາະທີ່ກຳນົດໄວ້ ທີ່ເອີ້ນວ່າ "ເວລານັດໝາຍການສຳຫຼວດ". ສຳລັບການສຳຫຼວດພົນລະເມືອງ, ແຕ່ລະບຸກຄົນທີ່ມີຊີວິດຢູ່ໃນເວລານັດໝາຍການສຳຫຼວດ ແມ່ນຈະຕ້ອງໄດ້ຖືກຈົດນັບເຂົ້າໃນການສຳຫຼວດ, ເຖິງແມ່ນວ່າພວກເຂົາອາດຈະເສຍຊີວິດໃນຊ່ວງເວລາລະຫວ່າງເວລານັດໝາຍການສຳຫຼວດ ແລະ ເວລາການສຳພາດກໍ່ຕາມ. ເດັກນ້ອຍທີ່ເກີດຫຼັງຈາກເວລານັດໝາຍການສຳຫຼວດຈະບໍ່ຖືກຈົດນັບເຂົ້າໃນການສຳຫຼວດ ເຖິງແມ່ນວ່າເດັກຈະມີຊີວິດຢູ່ ໃນເວລາຈົດນັບສະມາຊິກຄົວເຮືອນຄົນອື່ນກໍ່ຕາມ. ເວລານັດໝາຍການສຳຫຼວດ ຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ໄດ້ກຳນົດເອົາ ທ່ຽງຄືນເວລາ 00:00 ຂອງຄືນວັນທີ 2 ຫາ 3 ພະຈິກ 2025 (ທ່ຽງຄືນຂອງຄືນສຳຫຼວດ).

## 2.2 ເວລາ ແລະ ໄລຍະເວລາຂອງການສຳຫຼວດ

ການເກັບກຳຂໍ້ມູນພາກສະໜາມຈະໄດ້ຈັດຕັ້ງປະຕິບັດເປັນໄລຍະເວລາ 6 ອາທິດ ເລີ່ມຈາກວັນທີ 3 ພະຈິກ ຫາ 14 ທັນວາ 2025 ເປັນໄລຍະເວລາການສຳຫຼວດ. ບັນດາບຸກຄົນທີ່ອາໄສຢູ່ໃນຄົວເຮືອນເປັນປະຈຳໃນຄືນຂອງວັນທີ 2 ຫາ 3 ພະຈິກ 2025 (ໂດຍສະເພາະ ແມ່ນໃນເວລານັດໝາຍການສຳຫຼວດ) ຈະຕ້ອງໄດ້ຖືກຈົດນັບ ແລະ ຂໍ້ມູນຄຸນລັກສະນະດ້ານຕ່າງໆຂອງສະມາຊິກຄົວເຮືອນ ແມ່ນຈະຖືກບັນທຶກເຂົ້າໃນແບບສອບຖາມ. ໃນໄລຍະເວລາການສຳຫຼວດ, ນັກເດີນສຳຫຼວດແຕ່ລະຄົນຈະຖືກມອບໝາຍໃຫ້ຮັບຜິດຊອບເກັບກຳຂໍ້ມູນໃນໜຶ່ງເຂດສຳຫຼວດ. ທຸກທີ່ຢູ່ອາໄສ, ທຸກຄົວເຮືອນ ແລະ ທຸກຄົນຢູ່ ໃນເຂດສຳຫຼວດທີ່ໄດ້ຮັບການມອບໝາຍຕ້ອງໄດ້ຖືກຈົດນັບທັງໝົດ ໃນໄລຍະເວລາການສຳຫຼວດ.

## 2.3 ເວລາຈົດນັບ ແລະ ວິທີການຈົດນັບ

ນັກເດີນສຳຫຼວດຕ້ອງໄດ້ເລີ່ມເກັບກຳຂໍ້ມູນພາກສະໜາມໃນມື້ສຳຫຼວດ, ໃນວັນທີ່ 3 ພະຈິກ 2025 ແລະຮັບປະກັນວ່າການກຳເກັບຂໍ້ມູນຕ້ອງສຳເລັດຕາມເວລາທີ່ກຳນົດໄວ້, ໝາຍຄວາມວ່າຕ້ອງໃຫ້ສຳເລັດກ່ອນວັນທີ 14 ທັນວາ 2025.

ໜ້າທີ່ທຳອິດທີ່ນັກເດີນສຳຫຼວດທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດ ແມ່ນກວດເບິ່ງເຂດສຳຫຼວດ (EA) ທີ່ຕົນຮັບຜິດຊອບ ເພື່ອລະບຸຂອບເຂດຂອງເຂດສຳຫຼວດທີ່ນັກເດີນສຳຫຼວດຈະຕ້ອງຈົດນັບທີ່ຢູ່ອາໄສ, ຄົວເຮືອນ ແລະບຸກຄົນທັງໝົດ ໃນເຂດສຳຫຼວດນັ້ນ. ໜ້າວຽກດັ່ງກ່າວນີ້ອາດຈະໃຊ້ປະມານເວລາ 1 ວັນ. ເຖິງຢ່າງໃດກໍ່ຕາມ, ວຽກດັ່ງກ່າວນີ້ນັກເດີນສຳຫຼວດອາດຈະຕ້ອງໄດ້ເຮັດວຽກຮ່ວມກັນກັບນັກກວດກາ ແລະ ຖ້າຫາກວ່າຂອບເຂດຂອງເຂດສຳຫຼວດ ຍັງບໍ່ຈະແຈ້ງ ຕ້ອງໄດ້ກວດຄືນກັບນັກເດີນສຳຫຼວດຄົນອື່ນນຳ.

ໃນມື້ທຳອິດຂອງການສຳຫຼວດ, ນັກເດີນສຳຫຼວດຕ້ອງໄດ້ທຳຄວາມເຂົ້າໃຈ ກ່ຽວກັບອາຄານ ແລະ ທີ່ຢູ່ອາໄສທີ່ຢູ່ໃນເຂດສຳຫຼວດຂອງຕົນ ເພື່ອເຮັດໃຫ້ນັກເດີນສຳຫຼວດໄດ້ແນວຄວາມຄິດກ່ຽວກັບການເດີນສຳຫຼວດ ແລະ ວິທີການເດີນສຳຫຼວດໄປໃນທິດທາງທີ່ມີປະສິດທິພາບສູງສຸດສຳລັບການເກັບກຳຂໍ້ມູນທີ່ຢູ່ອາໄສ ແລະ ຄົວເຮືອນ ຢ່າງຄົບຖ້ວນ ແລະ ບໍ່ຈົດນັບຊໍ້າຊ້ອນ. ຫຼັງຈາກການກວດເບິ່ງສຳຫຼວດໃນມື້ທຳອິດແລ້ວ, ນັກເດີນສຳຫຼວດຈະຕ້ອງໄດ້ເລີ່ມຕົ້ນການສຳຫຼວດຕົວຈິງ.

ຖ້າວ່ານັກເດີນສຳຫຼວດ ຄາດວ່າຈະໃຊ້ເວລາຫຼາຍກວ່າເວລາທີ່ກຳນົດໄວ້ ຄືຕ້ອງໃຊ້ເວລາເພີ່ມຕື່ມ 1 ອາທິດດ້ວຍເຫດຜົນຈຳເປັນ, ນັກເດີນສຳຫຼວດຕ້ອງໄດ້ແຈ້ງໃຫ້ນັກກວດກາຂອງຕົນຮັບຊາບໂດຍໄວທີ່ສຸດ. ເພື່ອຈັດສັນການເກັບກຳຂໍ້ມູນ ເພື່ອຮັບປະກັນວ່າວ່າການສຳຫຼວດຈະສຳເລັດຕາມເວລາທີ່ກຳນົດໄວ້. ຕົວຢ່າງ: ຖ້າວ່າເກີດກໍລະນີມີການເຈັບປ່ວຍ ຫຼື ໄດ້ຮັບບາດເຈັບ ຈົນບໍ່ສາມາດສືບຕໍ່ເກັບກຳຂໍ້ມູນຕໍ່ໄປໄດ້, ນັກເດີນສຳຫຼວດຕ້ອງໄດ້ແຈ້ງໃຫ້ນັກກວດກາຮັບຊາບໃນທັນທີ.

ເວລາທີ່ດີທີ່ສຸດ ສຳລັບການລົງໄປພົບກັບຄົວເຮືອນເພື່ອເກັບກຳຂໍ້ມູນ ແມ່ນຕອນເຊົ້າກ່ອນທີ່ທຸກຄົນຈະອອກໄປເຮັດວຽກ ແລະ ໃນຕອນຄ່ຳຫຼັງເລີກວຽກ, ເຖິງຢ່າງໃດກໍ່ຕາມ, ມັນຂຶ້ນກັບແຕ່ລະຂົງເຂດພື້ນທີ່ ແລະ ວິຖີຊີວິດຂອງປະຊາຊົນຢູ່ໃນເຂດນັ້ນໆ. ຊ່ວງເວລາທີ່ດີສຳລັບການເກັບກຳຂໍ້ມູນອີກໄລຍະໜຶ່ງແມ່ນໃນມື້ວັນພັກ (ເສົາ ແລະ ວັນອາທິດ) ເພາະວ່າປະຊາຊົນສ່ວນໃຫຍ່ຈະຢູ່ເຮືອນ. ດັ່ງນັ້ນ, ນັກເດີນສຳຫຼວດຈະຕ້ອງໄດ້ສືບຕໍ່ເຮັດວຽກໃນວັນພັກ (ເສົາ ແລະ ອາທິດ) ຕະຫຼອດໄລຍະການສຳຫຼວດ. ມື້ດັ່ງກ່າວນີ້ແມ່ນມີຄວາມສຳຄັນຫຼາຍ ຊຶ່ງຈະສາມາດເຂົ້າຫາປະຊາຊົນເພື່ອສຳພາດໄດ້ງ່າຍຂຶ້ນ.

ປະຊາຊົນຈະຢູ່ເຮືອນເພື່ອລໍຖ້າການລົງມາສຳພາດ ຖ້າວ່ານັກເດີນສຳຫຼວດໄດ້ນັດໝາຍເຂົາເຈົ້າໄວ້ວ່າຈະລົງໄປສຳພາດໃນເວລາໃດ. ມັນເປັນການວາງແຜນທີ່ດີ ຖ້າວ່ານັກເດີນສຳຫຼວດໄດ້ມີການນັດໝາຍກັບປະຊາຊົນໄວ້ແຕ່ຕອນເລີ່ມຕົ້ນ ເພື່ອຈັດສັນເວລາໃນການລົງໄປເກັບກຳຂໍ້ມູນ. ເນື່ອງຈາກໄລຍະເວລາການສຳຫຼວດມີຈຳກັດ, ນັກເດີນສຳຫຼວດຕ້ອງເຮັດວຽກໃຫ້ມີປະສິດທິພາບໃຫ້ດີທີ່ສຸດ.

ນັກເດີນສຳຫຼວດຫຼາຍກວ່າໜຶ່ງຄົນ ເກັບກຳຂໍ້ມູນຢູ່ໃນເຂດສຳຫຼວດດຽວກັນ ແມ່ນບໍ່ເກີດປະໂຫຍດໃດໆ. ນັກເດີນສຳຫຼວດສອງຄົນ (ແທັບເລັດ 2 ເຄື່ອງ) ເກັບກຳຂໍ້ມູນໃນເຂດສຳຫຼວດດຽວກັນ, ເມື່ອສົ່ງຂໍ້ມູນເຂົ້າຫາຫ້ອງການສຳຫຼວດຂັ້ນສູນກາງ ຈະເຮັດໃຫ້ມີການລຶບຂໍ້ມູນທີ່ເກັບໄດ້ເຊິ່ງກັນ ແລະ ກັນ. ດັ່ງນັ້ນ, **ໃນໜຶ່ງເຂດສຳຫຼວດ ຈະມີນັກເດີນສຳຫຼວດຮັບຜິດຊອບໃນການເກັບກຳຂໍ້ມູນພຽງແຕ່ 1 ຄົນ ເທົ່ານັ້ນ.**

ປະສົບການຜ່ານມາໄດ້ສະແດງໃຫ້ເຫັນວ່າ ການເກັບກຳຂໍ້ມູນແມ່ນບໍ່ສາມາດປິດເຂດສຳຫຼວດໄດ້ ຖ້າວ່ານັກເດີນສຳຫຼວດຫຼາຍກວ່າໜຶ່ງຄົນ ເຮັດວຽກໃນເຂດສຳຫຼວດດຽວກັນ. ຖ້າວ່ານັກເດີນສຳຫຼວດເຫັນວ່າຈະບໍ່ສາມາດເກັບກຳຂໍ້ມູນໃນເຂດສຳຫຼວດຂອງຕົນໃຫ້ສຳເລັດໄດ້ທັນເວລາທີ່ກຳນົດໄວ້ ເນື່ອງຈາກຈຳນວນຄົວເຮືອນໃນເຂດດັ່ງກ່າວຫຼາຍເກີນໄປ, ນັກເດີນສຳຫຼວດຈະຕ້ອງໄດ້ປະສານກັບນັກກວດກາຂອງຕົນທັນທີ. ນັກເດີນສຳຫຼວດຈະສາມາດໄປເກັບກຳຂໍ້ມູນຊ່ວຍນັກເດີນສຳຫຼວດຄົນອື່ນໄດ້ ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດຈາກນັກກວດກາເທົ່ານັ້ນ. ໃນກໍລະນີດັ່ງກ່າວ ນັກເດີນສຳຫຼວດຈະໄດ້ຮັບຄຳແນະນຳຈາກນັກກວດກາ ກ່ຽວກັບການໃສ່ລະຫັດສະເພາະສຳລັບຄົວເຮືອນທີ່ນັກເດີນສຳຫຼວດເກັບກຳຢູ່ນອກເຂດສຳຫຼວດທີ່ຕົນຮັບຜິດຊອບ.

ແບບສອບຖາມທີ່ຢູ່ໃນແທັບເລັດມີທັງ ພາສາລາວ ແລະ ພາສາອັງກິດ. ນັກເດີນສຳຫຼວດສາມາດນຳໃຊ້ພາສາທີ່ສະດວກ ສຳລັບຜູ້ຖືກສຳພາດ. ເຖິງຢ່າງໃດກໍ່ຕາມ, ຖ້າວ່າຜູ້ຖືກສຳພາດເວົ້າໄດ້ພຽງແຕ່ພາສາທີ່ທ່ານບໍ່ສາມາດເຂົ້າໃຈໄດ້ ໃຫ້ປຶກສາບັນຫາດັ່ງກ່າວ ກັບນັກກວດກາຂອງຕົນ.

## 2.4 ເຂດສຳຫຼວດ (EA)

ໃນໄລຍະການສຳຫຼວດ, ນັກເດີນສຳຫຼວດສາມາດນຳໃຊ້ແຜນທີ່ທີ່ບັນທຶກໄວ້ຢູ່ໃນແທັບເລັດຂອງຕົນ ທີ່ມີຂໍ້ມູນລາຍລະອຽດກ່ຽວກັບບ່ອນທີ່ນັກເດີນສຳຫຼວດຈະລົງໄປເກັບກຳຂໍ້ມູນ. ພື້ນທີ່ທັງໝົດຂອງປະເທດຈະຖືກແບ່ງອອກເປັນເຂດສຳຫຼວດ (EA) ໂດຍທີ່ບໍ່ມີພື້ນທີ່ຂາດຫາຍ ຫຼື ຊ້ຳຊ້ອນກັນ. ເຂດສຳຫຼວດໜຶ່ງຖືກແຕ້ມຂຶ້ນມາ ສຳລັບນັກເດີນສຳຫຼວດ 1 ຄົນ ຮັບຜິດຊອບ ໃນການລົງໄປກັບກຳຂໍ້ມູນທຸກທີ່ຢູ່ອາໄສ ແລະ ຄົວເຮືອນ ໂດຍໃຊ້ຍະເວລາ 6 ອາທິດ.

ໜຶ່ງເຂດສຳຫຼວດປະກອບມີປະມານ 300-320 ຄົວເຮືອນ ທີ່ກວມເອົາຂອບເຂດສ່ວນໃດໜຶ່ງ ຫຼື ທັງໝົດຂອງບ້ານ. ເຖິງຢ່າງໃດກໍ່ຕາມ, ໂດຍອີງປັດໃຈດ້ານອື່ນໆ ເປັນຕົ້ນແມ່ນຄວາມໜາແໜ້ນຂອງພົນລະເມືອງ ແລະ ຄຸນລັກສະນະດ້ານທີ່ຕັ້ງຂອງຂົງເຂດນັ້ນໆ, ເຂດສຳຫຼວດຈະຖືກແບ່ງເພື່ອອຳນວຍຄວາມສະດວກໃຫ້ແກ່ນັກເດີນສຳຫຼວດສາມາດເຂົ້າເຖິງໄດ້ງ່າຍ. ດັ່ງນັ້ນ, ໃນເຂດສຳຫຼວດທີ່ນັກເດີນສຳຫຼວດໄດ້ຮັບມອບໝາຍ ໃນການລົງເກັບກຳຂໍ້ມູນອາດຈະມີຫຼາຍ ຫຼື ໜ້ອຍຄົວເຮືອນ ກວ່າທີ່ໄດ້ກຳນົດໄວ້. ເຂດສຳຫຼວດຢູ່ໃນເຂດຕົວເມືອງ ອາດຈະມີຫຼາຍຄົວເຮືອນກວ່າຢູ່ໃນເຂດຊົນນະບົດ ເນື່ອງຈາກການເດີນທາງລະຫວ່າງອາຄານນີ້ ໄປຫາອາຄານອື່ນ ແມ່ນມີຄວາມສະດວກ ແລະ ໃຊ້ເວລາໜ້ອຍກວ່າ.

ນັກເດີນສຳຫຼວດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະຕ້ອງໄດ້ຮັບຜິດຊອບລົງໄປເກັບກຳຂໍ້ມູນໃນທຸກໆທີ່ຢູ່ອາໄສ ແລະ ທຸກໆຄົວເຮືອນໃນເຂດເຂດສຳຫຼວດທີ່ຕົນຮັບຜິດຊອບ ແລະ ຈະຕ້ອງໄດ້ບັນທຶກຂໍ້ມູນລະອຽດໃນທຸກໆທີ່ຢູ່ອາໄສ, ທຸກໆຄົວເຮືອນ ແລະ ທຸກໆຄົນ ທີ່ຢູ່ໃນເຂດສຳຫຼວດນັ້ນຕະຫຼອດໄລຍະເວລາການສຳຫຼວດ. ນັກເດີນສຳຫຼວດຕ້ອງກວດສອບໃຫ້ໝັ້ນໃຈວ່າຈະບໍ່ມີທີ່ຢູ່ອາໄສ ແລະ ຄົວເຮືອນໃດໆທີ່ບໍ່ໄດ້ຖືກຈົດນັບ ຫຼື ຖືກຈົດນັບຊ້ຳຊ້ອນ. ກະລຸນາຈື່ໄວ້ວ່າ ມີບາງທີ່ຢູ່ອາໄສອາດຈະບໍ່ໄດສະແດງຢູ່ໃນແຜນທີ່ເຂດສຳຫຼວດ ຍ້ອນວ່າທີ່ຢູ່ອາໄສນັ້ນອາດຖືກສ້າງຂື້ນພາຍຫຼັງການເກັບຂໍ້ມູນທີ່ຕັ້ງຂອງທີ່ຢູ່ອາໄສຢູ່ພາກສະໜາມ. ເຖິງແມ່ນວ່າທີ່ຢູ່ອາໄສທີ່ບໍ່ຢູ່ໃນແຜນທີ່ກໍ່ຕາມ ແຕ່ນັກເດີນສຳຫຼວດກໍ່ຕ້ອງໄດ້ເກັບກຳຂໍ້ມູນທີ່ຢູ່ອາໄສ, ຄົວເຮືອນ ແລະ ຂໍ້ມູນບຸກຄົນເຫຼົ່ານັ້ນເຊັ່ນກັນຕາມທີ່ພົບເຫັນຕົວຈິງຢູ່ພາກສະໜາມ.

## 2.5 ເປົ້າໝາຍການຈົດນັບ ແລະ ຂໍ້ມູນທີ່ຕ້ອງໄດ້ເກັບກຳ

ເພື່ອເຮັດໃຫ້ການສຳຫຼວດປະສົບຜົນສຳເລັດ, ມັນມີຄວາມສຳຄັນຫຼາຍທີ່ນັກເດີນສຳຫຼວດຈະຕ້ອງໄດ້ເຂົ້າໃຈຢ່າງຈະແຈ້ງວ່າແມ່ນໃຜ ແລະ ຂໍ້ມູນໃດແດ່ ທີ່ຈະຕ້ອງໄດ້ເກັບກຳໃນໄລຍະການສຳຫຼວດ. ໃຫ້ຈື່ໄວ້ວ່າ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ບໍ່ພຽງແຕ່ເກັບຂໍ້ມູນຂອງບຸກຄົນ ເທົ່ານັ້ນ, ແຕ່ຍັງໄດ້ເກັບກຳຂໍ້ມູນລະອຽດກ່ຽວກັບທີ່ຢູ່ອາໄສອີກດ້ວຍ. ດັ່ງນັ້ນ, ຈຶ່ງເອີ້ນການສຳຫຼວດນີ້ວ່າ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ອີງຕາມບົດແນະນຳຂອງສາກົນ, ຫົວໜ່ວຍການສຳຫຼວດຕໍ່ໄປນີ້ທີ່ແມ່ນເປົ້າໝາຍຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025:

- ບັນດາບຸກຄົນທີ່ອາໄສຢູ່ເປັນປະຈຳໃນ ສປປ ລາວ ໃນເວລານັດໝາຍການສຳຫຼວດ, ເຖິງແມ່ນວ່າບັນດາບຸກຄົນ ເຫຼົ່ານັ້ນຈະເປັນຄົນລາວ ຫຼື ບໍ່ແມ່ນກໍ່ຕາມ ແລະ ບໍ່ວ່າບຸກຄົນເຫຼົ່ານັ້ນຈະມີໜ້າໃນເວລານັດໝາຍການສຳຫຼວດ ຫຼື ບໍ່ກໍ່ຕາມ (ຫຼື ບໍ່ມີໜ້າຊົ່ວຄາວໃນເວລາການສຳພາດ);
- ຄົວເຮືອນ;
- ທີ່ຢູ່ອາໄສທີ່ສ້າງຂື້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສຂອງຄົນ, ເຖິງແມ່ນວ່າຈະມີ ຫຼື ບໍ່ມີຄົນອາໄສຢູ່ ໃນເວລານັດໝາຍການສຳຫຼວດກໍ່ຕາມ;
- ທີ່ຢູ່ອາໄສຄົວເຮືອນລວມໝູ່.

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະຕ້ອງໄດ້ຈົດນັບຫົວໜ່ວຍທັງໝົດທີ່ໄດ້ກ່າວມາຂ້າງເທິງນີ້. ນອກຈາກເກັບກຳຂໍ້ມູນພົນລະເມືອງທີ່ອາໄສຢູ່ເປັນປະຈຳແລ້ວ, ການສຳຫຼວດຍັງຈະໄດ້ເກັບກຳຂໍ້ມູນກ່ຽວກັບຜູ້ມາຢ້ຽມຢາມ (ບຸກຄົນທີ່ມາອາໄສຊົ່ວຄາວໃນເວລານັດໝາຍການສຳຫຼວດ) ແລະ ຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ. ມີຫົວໜ່ວຍການສຳຫຼວດບາງປະເພດທີ່ຍົກເວັ້ນບໍ່ລວມເຂົ້າໃນການສຳຫຼວດ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

- ພະນັກງານການທູດຕ່າງປະເທດທີ່ອາໄສຢູ່ ໃນ ສປປ ລາວ;
- ທີ່ຢູ່ອາໄສທີ່ກຳລັງກໍ່ສ້າງ ແລະ ບໍ່ມີຄົນຢູ່ອາໄສຢູ່;
- ທີ່ຢູ່ອາໄສທີ່ໃຊ້ເພື່ອຈຸດປະສົງອື່ນ ເຊັ່ນ: ທີ່ຢູ່ອາໄສທີ່ຖືກດັດປັບໃຫ້ເປັນຫ້ອງການ ຫຼື ບ່ອນເຮັດວຽກ;
- ທີ່ຢູ່ອາໄສທີ່ຖືກທຳລາຍທີ່ບໍ່ມີຄົນອາໄສຢູ່;
- ອາຄານທີ່ໃຊ້ເພື່ອຈຸດປະສົງອື່ນທີ່ບໍ່ແມ່ນທີ່ຢູ່ອາໄສເຊັ່ນ: ໂຮງງານ ແລະ ຮ້ານຄ້າທີ່ບໍ່ມີຄົນອາໄສຢູ່.

ໝາຍເຫດ: ສິ່ງປຸກສ້າງໃດໆ ທີ່ບໍ່ໄດ້ສ້າງຂື້ນມາເພື່ອຈຸດປະສົງເປັນທີ່ຢູ່ອາໄສຂອງຄົນ (ເຊັ່ນ: ຮ້ານຄ້າ ຫຼື ສາງສິນຄ້າ) ແຕ່ມີຄົນອາໄສຢູ່ໃນເວລານັດໝາຍການສຳຫຼວດ ຕ້ອງໄດ້ຖືກຈົດນັບເປັນທີ່ຢູ່ອາໄສ ພ້ອມທັງຈົດນັບເອົາຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວ. ຄວນຈື່ໄວ້ອີກວ່າ ອາຄານໃດທີ່ສ້າງຂື້ນມາເພື່ອຈຸດປະສົງບໍ່ເປັນທີ່ຢູ່ອາໄສ ແລະ ບໍ່ມີຄົນອາໄສຢູ່ ແມ່ນບໍ່ໄດ້ຈົດນັບ.

ມີບາງຫົວໜ່ວຍການສຳຫຼວດແມ່ນຂຶ້ນຢູ່ກັບຄວາມຮັບຜິດຊອບຂອງບັນດາກະຊວງທີ່ກ່ຽວຂ້ອງ ຊຶ່ງນັກເດີນສຳຫຼວດຕ້ອງໄດ້ຍົກເວັ້ນຫົວໜ່ວຍດັ່ງກ່າວ ຊຶ່ງມີລາຍລະອຽດດັ່ງນີ້:

1. ເອກອັກຄະລະສະທູດ, ພະນັກງານການທູດ, ຜູ້ຊ່ວຍວຽກ ທີ່ເປັນຄົນລາວປະຈຳຢູ່ສະຖານທູດ ຫຼື ສະຖານກົງສູນຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ພ້ອມດ້ວຍຄອບຄົວຂອງເຂົາທີ່ອາໄສຢູ່ບ່ອນດັ່ງກ່າວ (ສຳຫຼວດໂດຍກະຊວງການຕ່າງປະເທດ);
2. ຄຸກ ຫຼື ສະຖານກັກ (ສຳຫຼວດໂດຍກະຊວງປ້ອງການຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ);
3. ຄ້າຍທະຫານ/ຄ້າຍຕຳຫຼວດ (ສຳຫຼວດໂດຍກະຊວງປ້ອງການຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ);
4. ສະຖາບັນການທະຫານ/ສະຖາບັນຕຳຫຼວດ (ສຳຫຼວດໂດຍກະຊວງປ້ອງການຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ);
5. ຄົວເຮືອນນາຍທະຫານ ແລະ ນາຍຕຳຫຼວດຊັ້ນ ພັນເອກຂຶ້ນໄປ (ສຳຫຼວດໂດຍກະຊວງປ້ອງການຊາດ ແລະ ກະຊວງປ້ອງກັນຄວາມສະຫງົບ);
6. ຄົວເຮືອນການນັ້ນຂັ້ນສູງ

- ການນຳຂັ້ນທ້ອງຖິ່ນປະກອບດ້ວຍ: ຄົວເຮືອນເຈົ້າແຂວງ (ປະທານປົກຄອງແຂວງ) ແລະ ຄົວເຮືອນປະທານສະພາແຂວງ (ເກັບກຳໂດຍກະຊວງປ້ອງກັນຄວາມສະຫງົບ);
- ການນຳຂັ້ນສູນກາງ: ຄົວເຮືອນຂອງການນາຕຳແໜ່ງລັດຖະມົນຕີຂຶ້ນໄປ ຫຼື ກົມການເມືອງຂຶ້ນໄປ

7. ເຂດເສດຖະກິດພິເສດ (ສຳຫຼວດໂດຍຫ້ອງການຄຸ້ມຄອງເສດຖະກິດພິເສດ).

### 2.5.1 ຄົນອາໄສຢູ່ເປັນປະຈຳ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ນຳໃຊ້ຫຼັກການໃນການເກັບກຳຂໍ້ມູນແບບຄົນອາໄສຢູ່ເປັນປະຈຳ 'de jure' ເຊິ່ງໝາຍຄວາມວ່າບຸກຄົນທີ່ອາໄສຢູ່ເປັນປະຈຳເທົ່ານັ້ນ ທີ່ຈະຖືກຈົດນັບເຂົ້າໃນການສຳຫຼວດ. ຄົນອາໄສຢູ່ເປັນປະຈຳ ແມ່ນບຸກຄົນທີ່ມີອາໄສຢູ່ເປັນປະຈຳໃນ ສປປ ລາວ ເຖິງແມ່ນວ່າຈະມີສັນຊາດໃດກໍ່ຕາມ ແລະ ເຖິງແມ່ນວ່າຈະມີໜ້າ ຫຼື ບໍ່ມີໜ້າຊົ່ວຄາວ ໃນເວລານັດໝາຍການສຳຫຼວດກໍ່ຕາມ. ນິຍາມກ່ຽວກັບ ສະຖານທີ່ອາໄສຢູ່ເປັນປະຈຳ ແລະ ຄົນອາໄສຢູ່ເປັນປະຈຳ ແມ່ນໄດ້ອະທິບາຍໄວ້ໃນຫົວຂໍ້ 1.10 (ໜ້າທີ 11) ໃນປຶ້ມຄູ່ມືສະບັບນີ້.

ໂດຍທົ່ວໄປແລ້ວ ມັນຮູ້ຢ່າງຈະແຈ້ງແລ້ວວ່າ ທີ່ຢູ່ອາໄສເປັນປະຈຳຂອງບຸກຄົນຢູ່ໃສ. ເຖິງຢ່າງໃດກໍ່ຕາມ, ຍັງມີບາງກໍລະນີທີ່ຍັງບໍ່ມີຄວາມຈະແຈ້ງເທື່ອ. ຕາຕະລາງຕໍ່ໄປນີ້ ສະແດງຂໍ້ມູນກ່ຽວກັບກໍລະນີຕ່າງໆທີ່ນັກເດີນສຳຫຼວດອາດຈະພົບພໍ້. ໃນກໍລະນີທີ່ຍັງບໍ່ຮູ້ຈະແຈ້ງວ່າບຸກຄົນນັ້ນຈະຖືກຈົດນັບ ຫຼື ບໍ ແມ່ນໃຫ້ຖາມນັກກວດກາຂອງຕົນ.

*ຕາຕະລາງ 2.1: ບາງກໍລະນີທີ່ມີຄວາມຫຍຸ້ງຍາກໃນການພິຈາລະນາໃນການຈົດນັບ*

| ກໍລະນີ | ສະຖານທີ່ຢູ່ເປັນປະຈຳ ແລະ ສະຖານທີ່ຈົດນັບ |
|---|---|
| ກຳມະກອນ (ລວມທັງກຳລັງປະກອບອາວຸດ) ຜູ້ທີ່ອາໄສຢູ່ບ່ອນອື່ນ ເພື່ອເຮັດວຽກ (ລວມທັງແຮງງານຂ້າມຊາຍແດນ) | • ໃຫ້ຈົດນັບເອົາຢູ່ເຮືອນຂອງຕົນເອງ, ຖ້າພວກເຂົາກັບຄືນເຮືອນເປັນປະຈຳທຸກອາທິດ (ຕົວຢ່າງ: ທຸກໆທ້າຍອາທິດ);<br>• ໃຫ້ຈົດເອົາບ່ອນທີ່ເຂົາເຈົ້າອາໄສຢູ່, ຖ້າຫາກບໍ່ໄດ້ກັບຄືນເຮືອນເປັນປະຈຳທຸກອາທິດ. |

| ກໍລະນີ | ສະຖານທີ່ຢູ່ເປັນປະຈຳ ແລະ ສະຖານທີ່ຈົດນັບ |
|---|---|
| ບັນດາ ບຸກຄົນທີ່ອາໄສຢູ່ຫຼາຍບ່ອນ (ຕົວຢ່າງ: ເດັກທີ່ພໍ່ແມ່ຢ່າຮ້າງກັນ, ອາໄສຢູ່ 2 ບ່ອນ) | • ສະຖານທີ່ຢູ່ເປັນປະຈຳ ຈະກຳນົດເອົາ ສະຖານທີ່ ທີ່ລາວອາໄສ ຢູ່ ເປັນສ່ວນໃຫຍ່ (ອາໄສຢູ່ສະຖານທີ່ນີ້ຫຼາຍກວ່າສະຖານທີ່ ອື່ນ);<br>• ຖ້າວ່າບຸກຄົນດັ່ງກ່າວອາໄສຢູ່ແຕ່ລະສະຖານເທົ່າກັນ ແມ່ນໃຫ້ຈົດນັບເອົາຢູ່ສະຖານທີ່ທີ່ບຸກຄົນດັ່ງກ່າວອາໄສຢູ່ໃນເວລານັດໝາຍການສຳຫຼວດ. |
| ບັນດາ ບຸກຄົນ ທີ່ຍ້າຍເຂົ້າມາອາໄສຢູ່ ທີ່ຢູ່ອາໄສນັ້ນຕໍ່າກວ່າ 6 ເດືອນ ແລະ ບໍ່ມີຈຸດປະສົງອາໄສ ຢູ່ສະຖານທີ່ນັ້ນ ຮອດ 6 ເດືອນ. | ສະຖານທີ່ຢູ່ເປັນປະຈຳຂອງເຂົາເຈົ້າ ແມ່ນ ສະຖານທີ່ ທີ່ພວກເຂົາອາໄສຢູ່ໃນຄືນສຳຫຼວດ. |
| ບັນດາບຸກຄົນທີ່ເຄື່ອນຍ້າຍເລື້ອຍໆ ແລະ ບໍ່ມີທີ່ຢູ່ອາໄສປະຈຳ (ຕົວຢ່າງ: ຄົນບໍ່ມີທີ່ຢູ່ອາໄສ) | ບ່ອນທີ່ພົບເຫັນພວກເຂົາໃນເວລາສຳຫຼວດ, ຄົນບໍ່ມີທີ່ຢູ່ອາໄສແມ່ນຈະຖືກສຳຫຼວດ. |
| ບັນດາບຸກຄົນຜູ້ທີ່ອາໄສຢູ່ ຄົວເຮືອນລວມໝູ່ ໃນຄືນສຳຫຼວດ(ຕົວຢ່າງ: ວັດ, ຄຸກ, ໂຮງໝໍ, ສະຖານທີ່ລ້ຽງເດັກກຳພ້າ) ຫຼື ແຄ້ມ (ຕົວຢ່າງ: ກຳມະກອນກໍ່ສ້າງຖະໜົນຫົນທາງ) ຫຼື ໂຮງແຮມ. | • ຄົວເຮືອນລວມໝູ່/ແຄ້ມ/ໂຮງແຮມ, ຖ້າວ່າ ໃນເວລານັດໝາຍການສຳຫຼວດ, ພວກເຂົາອາໄສຢູ່ບ່ອນນັ້ນ ຢ່າງໜ້ອຍ 6 ເດືອນ ຫຼື ພວກເຂົາມີຈຸດປະສົງອາໄສຢູ່ ຢ່າງໜ້ອຍ 6 ເດືອນ;<br>• ຢູ່ເຮືອນຂອງລາວ, ຖ້າວ່າ ໃນເວລານັດໝາຍການສຳຫຼວດ, ພວກເຂົາບອກວ່າ ເຂົາອາໄສຢູ່ທີ່ນັ້ນ ໜ້ອຍກວ່າ 6 ເດືອນ ແລະ ມີຈຸດປະສົງອາໄສຢູ່ທີ່ນັ້ນ ໜ້ອຍກວ່າ 6 ເດືອນ. |
| ທະຫານ ແລະ ພະນັກງານການທູດ ແລະ ຄອບຄົວຂອງເຂົາເຈົ້າ ທີ່ໄປ ປະຈຳການຢູ່ຕ່າງປະເທດ. | ສິ່ງທີ່ຄວນເອົາໃຈໃສ່:<br>ກະຊວງການຕ່າງປະເທດຮັບຜິດຊອບເກັບກຳພະນັກງານການທູດ ແລະ ຄອບຄົວຂອງເຂົາເຈົ້າ ທີ່ປະຈຳຢູ່ຕ່າງປະເທດ. |
| ຄົນຕ່າງປະເທດ ລວມທັງຜູ້ທີ່ເຂົ້າເມືອງ ຜິດກົດໝາຍ, ຜິດປົກກະຕິ ຫຼື ບໍ່ມີເອກະສານທີ່ກ່ຽວຂ້ອງ, ຕະຫຼອດຮອດ ຜູ້ຂໍລີ້ໄພ ແລະ ຍື່ນຂໍ ຫຼື ໄດ້ຮັບສະຖານະຜູ້ລີ້ໄພແລ້ວ. | • ໃນສະຖານທີ່ທີ່ເຂົາເຈົ້າອາໄສຢູ່ ໃນຄືນສຳຫຼວດ ຖ້າພວກເຂົາໄດ້ອາໄສຢູ່ທີ່ນັ້ນ ຢ່າງໜ້ອຍ 6 ເດືອນ ຫຼື ມີຈຸດປະສົງທີ່ຈະອາໄສຢູ່ປະເທດລາວ ຢ່າງໜ້ອຍ 6 ເດືອນ;<br>• ຖ້າພວກເຂົາ ບໍ່ຄົບມາດຖານການອາໃສຢູ່ເປັນປະຈຳ, ພວກເຂົາຈະບໍ່ຖືກຈົດນັບເປັນຜູ້ອາໄສຢູ່ເປັນປະຈຳ, ແຕ່ຈະແຍກຈົດນັບໃສ່ໃນ ພາກ "ຜູ້ມາຢ້ຽມຢາມ".<br>ສິ່ງທີ່ຄວນເອົາໃຈໃສ່: ກອງກຳລັງທະຫານ ແລະ ພະນັກງານການທູດຕ່າງປະເທດ ພ້ອມດ້ວຍຄອບຄົວ ແມ່ນຈະບໍ່ຖືກຈົດນັບ |
| ເດັກນ້ອຍນັກຮຽນຊັ້ນປະຖົມ ຫຼື ມັດທະຍົມ, ຜູ້ອາໄສຢູ່ບ່ອນອື່ນ ໃນຊ່ວງໄລຍະເປີດສົກຮຽນ. | ໃຫ້ຈົດນັບເອົາຢູ່ເຮືອນຂອງຕົນເອງ, ຖ້າພວກເຂົາກັບຄືນເຮືອນເປັນປະຈຳທຸກອາທິດ (ຕົວຢ່າງ: ທຸກໆທ້າຍອາທິດ); |
| ນັກສຶກສາ ມະຫາວິທະຍາໄລ ຫຼື ການສຶກສາຊັ້ນສູງອື່ນໆ ຜູ້ທີ່ອາໄສຢູ່ບ່ອນອື່ນ ໃນຊ່ວງເປີດ | ໃຫ້ຈົດເອົາບ່ອນທີ່ເຂົາເຈົ້າອາໄສຢູ່, ຖ້າຫາກບໍ່ໄດ້ກັບຄືນເຮືອນເປັນປະຈຳທຸກອາທິດ. |

| ກໍລະນີ | ສະຖານທີ່ຢູ່ເປັນປະຈໍາ ແລະ ສະຖານທີ່ຈົດນັບ |
|---|---|
| ສຶກຮຽນ. | |

ໝາຍເຫດ: ການສໍາຫຼວດພົນລະເມືອງແມ່ນນໍາໃຊ້ຫຼັກການຈົດນັບຜູ້ທີ່ອາໄສຢູ່ເປັນປະຈໍາ 'de jure' ***ເຊິ່ງບໍ່ໄດ້ໝາຍເຖິງສະຖານທີ່ທີ່ພົນລະເມືອງໄດ້ຈົດທະບຽນຢູ່.*** ດັ່ງນັ້ນ, ຂໍ້ມູນໃນປຶ້ມສໍາມະໂນຄົວບໍ່ສາມາດນໍາໃຊ້ເຂົ້າໃນການຈົດລາຍຊື່ສະມາຊິກຄົວເຮືອນທີ່ອາໄສຢູ່ເປັນປະຈໍາໃນທີ່ຢູ່ອາໄສໄດ້, ຍົກເວັ້ນກໍລະນີຂໍ້ມູນທີ່ສອດຄ່ອງກັບນິຍາມຄົນອາໄສຢູ່ເປັນປະຈໍາ. ນີ້ໝາຍຄວາມວ່າ ບຸກຄົນທີ່ບໍ່ໄດ້ຈົດທະບຽນໃດໆ (ເຊັ່ນ: ສໍາມະໂນຄົວ, ບັດປະຈໍາຕົວ, ໜັງສືຜ່ານແດນ) ແລະ ຜູ້ທີ່ອາໄສຢູ່ພາຍໃນປະເທດແບບຜິດກົດໝາຍກໍ່ຕ້ອງໄດ້ຈົດນັບເຂົ້າໃນການສໍາຫຼວດຄືກັນ ໂດຍອີງໃສ່ຫຼັກການຄົນອາໄສຢູ່ເປັນປະຈໍາ.

2.5.2 ຜູ້ມາຢ້ຽມຢາມ

ຜູ້ມາຢ້ຽມຢາມແມ່ນບຸກຄົນທີ່ມາອາໄສຢູ່ຊົ່ວຄາວກັບຄົວເຮືອນນັ້ນໃນຄືນສໍາຫຼວດ, ຍົກຕົວຢ່າງ: ພີ່ນ້ອງ ຫຼື ໝູ່ເພື່ອນມາຢ້ຽມຢາມ. ຜູ້ມາຢ້ຽມຢາມຍັງແມ່ນບຸກຄົນທີ່ມາອາໄສຢູ່ໃນທີ່ຢູ່ອາໄສ ໃນຄືນສໍາຫຼວດ ຖ້າຫາກວ່າສະຖານທີ່ອາໄສຢູ່ນັ້ນເປັນບ່ອນຢູ່ທີ່ສອງ ຫຼື ເປັນເຮືອນຫຼັງທີສອງ.

ຜູ້ມາຢ້ຽມຢາມແມ່ນບຸກຄົນທີ່ມາອາໄສຢູ່ຊົ່ວຄາວໃນຄົວເຮືອນເພື່ອມາຢ້ຽມຢາມພີ່ນ້ອງ ຫຼື ໝູ່ເພື່ອ ໃນຄືນສໍາຫຼວດ. ຖ້າວ່ານັກເດີນສໍາຫຼວດນໍາໃຊ້ຫຼັກການຄົນອາໄສຢູ່ເປັນປະຈໍາຢ່າງຖືກຕ້ອງໃນການຈົດນັບພົນລະເມືອງ ຢູ່ແຕ່ລະເຂດສໍາຫຼວດ ຜູ້ມາຢ້ຽມຢາມຖືກຈົດນັບຢູ່ສະຖານທີ່ທີ່ເຂົາເຈົ້າອາໄສຢູ່ເປັນປະຈໍາ ເຊິ່ງບໍ່ແມ່ນສະຖານທີ່ທີ່ເຂົາເຈົ້າມາຢ້ຽມຢາມ. ເຖິງຢ່າງໃດກໍ່ຕາມ, ຍັງມີຫຼາຍຄົນທີ່ຍັງບໍ່ທັນເຂົ້າໃຈແຈ້ງຕໍ່ກັບກໍລະນີດັ່ງກ່າວນີ້. ນອກຈາກນັ້ນ , ຖ້າວ່າສະມາຊິກຄົວເຮືອນທັງໝົດອອກໄປຢ້ຽມຢາມຢູ່ບ່ອນອື່ນ ພວກເຂົາອາດບໍ່ສາມາດຕິດຕໍ່ໄດ້ໃນສະຖານທີ່ທີ່ເຂົາເຈົ້າອາໄສຢູ່ເປັນປະຈໍາຢູ່ໃນໄລຍະການສໍາຫຼວດ, ດັ່ງນັ້ນ ພວກເຂົາອາດບໍ່ໄດ້ຖືກຈົດນັບເຂົ້າໃນການສໍາຫຼວດ. ການມີພາກຜູ້ມາຢ້ຽມຢາມ ໃນໂປຣແກຣມແບບສອບຖາມ ຈະຊ່ວຍໃຫ້ມີຄວາມເປັນໄປໄດ້ໃນການປັບປຸງບັນຫາຄວາມເຂົ້າໃຈຜິດດັ່ງກ່າວ ແລະ ບັນຫາການຈົດຊໍ້າຊ້ອນ, ດັ່ງນັ້ນ ຈະສາມາດຊ່ວຍປັບປຸງຄວາມຄົບຖ້ວນຂອງການສໍາຫຼວດໄດ້.

ລາຍການສໍາຄັນສໍາລັບຜູ້ມາຢ້ຽມຢາມຍັງປະກອບດ້ວຍບັນດາບຸກຄົນທີ່ຢູ່ອາໄສຢູ່ເຮືອນຫຼັງທີສອງ ຫຼື ເຮືອນພັກເຊົາຊົ່ວຄາວຂອງເຂົາເຈົ້າ. ກໍລະນີນີ້ເຂົາເຈົ້າບໍ່ແມ່ນຜູ້ອາໄສຢູ່ເປັນປະຈໍາ ເຊິ່ງບໍ່ຄວນຈົດນັບຢູ່ສະຖານທີ່ດັ່ງກ່າວ ແຕ່ຕ້ອງໄດ້ຈົດນັບເປັນຜູ້ມາຢ້ຽມຢາມແທນ.

2.5.3 ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ

ບັນດາບຸກຄົນທີ່ຍົກຍ້າຍໄປອາໄສຢູ່ຕ່າງປະເທດ ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ບໍ່ແມ່ນຄົນທີ່ມີສະຖານທີ່ອາໄສຢູ່ເປັນປະຈໍາໃນປະເທດລາວ, ດັ່ງນັ້ນ ພວກເຂົາບໍ່ຄວນຖືກຈົດນັບເປັນສ່ວນໜຶ່ງຂອງພົນລະເມືອງທີ່ອາໄສຢູ່ເປັນປະຈໍາໃນ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ຄົວເຮືອນທີ່ເຂົາເຈົ້າເຄີຍອາໄສຢູ່ ທີ່ຍັງຢູ່ໃນ ສປປ ລາວ ອາດພິຈາລະນາຜູ້ທີ່ຍົກຍ້າຍໄປອາໄສຢູ່ຕ່າງປະເທດເຫຼົ່ານັ້ນຍັງເປັນສະມາຊິກຄົວເຮືອນຢູ່.

ແບບສອບຖາມພາກຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ອະນຸຍາດໃຫ້ຈົດນັບສະມາຊິກຄົວເຮືອນ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດໄດ້. ເພື່ອເປັນການແຍກໃຫ້ເຫັນຄວາມແຕກຕ່າງລະຫວ່າງນິຍາມຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແລະ ຜູ້ທີ່ອາໄສຢູ່ເປັນປະຈໍາ ແລະ ຍັງເຮັດໃຫ້ຜູ້ຖືກສໍາພາດຮູ້ສຶກວ່າບຸກຄົນດັ່ງກ່າວຍັງຖືກຈົດນັບເປັນສະມາຊິກຄົວເຮືອນ.

2.5.4 ຄົວເຮືອນ

ແນວຄວາມຄິດກ່ຽວກັບຄົວເຮືອນ ແມ່ນອີງໃສ່ການຈັດສັນທີ່ຢູ່ອາໄສ, ການແບ່ງປັນອາຫານ ແລະ ການນຳໃຊ້ເຄື່ອງໃຊ້ສອຍທີ່ຈຳເປັນໃນຊີວິດປະຈຳວັນຮ່ວມກັນ ຂອງບຸກຄົນ ຫຼື ກຸ່ມຄົນ. ຄົວເຮືອນປະກອບດ້ວຍ ໜຶ່ງ ຫຼື ຫຼາຍຄົນ ທີ່ອາໄສຢູ່ໃນທີ່ຢູ່ອາໄສດຽວກັນ ແລະ ກິນເຂົ້າຮ່ວມກັນ. ການອາໄສຢູ່ໃນທີ່ຢູ່ອາໄສດຽວກັນ ແລະ ກິນເຂົ້າຮ່ວມກັນ ແມ່ນສອງເງື່ອນໄຂທີ່ຈຳເປັນສຳລັບການກຳນົດວ່າແມ່ນໃຜແດ່ເປັນສະມາຊິກຂອງຄົວເຮືອນດຽວກັນ. ໃນການນຳໃຊ້ທົ່ວໄປ, ມັນອາດເວົ້າໄດ້ວ່າຄົວເຮືອນປະກອບດ້ວຍ 'ທຸກຄົນທີ່ອາໄສຢູ່ຮ່ວມກັນ ແລະ ກິນເຂົ້າຮ່ວມພາດຽວກັນ ຢ່າງເປັນປະຈຳ'. ບັນດາບຸກຄົນເຫຼົ່ານັ້ນຈະຖືກຈົດນັບເຂົ້າໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສເຊິ່ງເອີ້ນປະເພດຄົວເຮືອນນີ້ວ່າ ຄົວເຮືອນສ່ວນບຸກຄົນ. ຄົວເຮືອນສ່ວນບຸກຄົນໜຶ່ງອາດຈະເປັນຄົວເຮືອນດ່ຽວ ຫຼື ຄົວເຮືອນທີ່ມີຫຼາຍຄົນ.

- ຄົວເຮືອນດ່ຽວ: ແມ່ນບຸກຄົນທີ່ອາໄສຢູ່ຄົນດຽວສະໜອງອາຫານ ແລະ ເຄື່ອງໃຊ້ສອຍທີ່ຈຳເປັນໃນຊີວິດປະຈຳວັນດ້ວຍຕົວຂອງລາວເອງ ໂດຍບໍ່ໄດ້ໃຊ້ຮ່ວມກັບໃຜ;
- ຄົວເຮືອນທີ່ມີຫຼາຍຄົນ: ແມ່ນກຸ່ມຄົນທີ່ມີສອງ ຫຼື ຫຼາຍຄົນ ທີ່ອາໄສຢູ່ຮ່ວມກັນ, ແບ່ງປັນອາຫານ ແລະ ນຳໃຊ້ເຄື່ອງໃຊ້ສອຍທີ່ຈຳເປັນໃນຊີວິດປະຈຳວັນຮ່ວມກັນ. ກຸ່ມຄົນເຫຼົ່ານັ້ນອາດຈະລວມຊັບພະຍາກອນ ແລະ ໃຊ້ຈ່າຍງົບປະມານຮ່ວມກັນ ເຊິ່ງກຸ່ມຄົນເຫຼົ່ານີ້ອາດຈະມີ ຫຼື ບໍ່ມີສາຍພົວພັນທາງຄອບຄົວ ຫຼື ສາຍພົວພັນທາງສາຍເລືອດ ຫຼື ບໍ່ມີສາຍພົວພັນກໍ່ຕາມ.

ໂດຍອີງໃສ່ນິຍາມທີ່ກ່າວມານີ້, ນັກເດີນສຳຫຼວດຈະສາມາດຮູ້ໄດ້ວ່າມີຈັກຄົວເຮືອນທີ່ອາໄສຢູ່ໃນໜຶ່ງທີ່ຢູ່ອາໄສ. ໂດຍທົ່ວໄປແລ້ວ ໜຶ່ງທີ່ຢູ່ອາໄສຈະມີໜຶ່ງຄົວເຮືອນອາໄສຢູ່, ແຕ່ໃນຄວາມເປັນຈິງແລ້ວໃນບາງທີ່ຢູ່ອາໄສອາດມີສອງ ຫຼື ຫຼາຍຄົວເຮືອນອາໄສຢູ່ຮ່ວມກັນ. ໃນກໍລະນີດັ່ງກ່າວນີ້, ພວກເຂົາອາໄສຢູ່ໃນຢູ່ທີ່ຢູ່ອາໄສດຽວກັນ, ແຕ່ບໍ່ໄດ້ກິນເຂົ້າຮ່ວມກັນເປັນປະຈຳ. ມັນມີຄວາມຈຳເປັນທີ່ນັກເດີນສຳຫຼວດທີ່ຈະຕ້ອງຈຳແນກໃຫ້ໄດ້ ແລະ ຈົດນັບທຸກຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສນັ້ນ.

ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄຳວ່າ 'ຄອບຄົວ' ບໍ່ໄດ້ມີຄວາມໝາຍຄືກັນກັບ 'ຄົວເຮືອນ'. ຄອບຄົວປະກອບດ້ວຍສະມາຊິກທັງໝົດທີ່ມີສາຍພົວພັນທາງສາຍເລືອດ ຫຼື ການແຕ່ງດອງ, ເຖິງແມ່ນວ່າພວກເຂົາຈະອາໄສຢູ່ຮ່ວມກັນ ຫຼື ບໍ່ຢູ່ຮ່ວມກັນກໍ່ຕາມ. ສຳລັບສະມາຊິກຄົວເຮືອນ, ທຸກຄົນທີ່ເປັນສະມາຊິກຄົວເຮືອນດຽວກັນຕ້ອງອາໄສຢູ່ໃນທີ່ຢູ່ອາໄສດຽວກັນ ແລະ ກິນເຂົ້າຮ່ວມກັນເປັນປະຈຳ ຕາມທີ່ກຳນົດໄວ້ຂ້າງເທິງ. ພວກເຂົາເຫຼົ່ານັ້ນບໍ່ຈຳເປັນຕ້ອງມີສາຍພົວພັນທາງສາຍເລືອດ ຫຼື ການແຕ່ງດອງ.

ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ຫຼາຍຄົວເຮືອນຈະປະກອບດ້ວຍຄອບຄົວທີ່ມີ ຫຼື ບໍ່ມີລູກ. ເຖິງຢ່າງໃດກໍ່ຕາມ, ນັກເດີນສຳຫຼວດຕ້ອງໄດ້ເອົາໃຈໃສ່ວ່າບາງຄົວເຮືອນແມ່ນມີຮູບແບບທີ່ສັບສົນຫຼາຍ ຊຶ່ງບັນດາບຸກຄົນທີ່ອາໄສຢູ່ຮ່ວມກັນ ໃນບາງກໍລະນີແມ່ນບໍ່ມີສາຍພົວພັນເຊິ່ງກັນ ແລະ ກັນ ຫຼື ສະມາຊິກຄອບຄົວອາໄສຢູ່ຮ່ວມກັນ. ເພື່ອກຳນົດປະເພດຂອງຄົວເຮືອນ, ພວກເຮົານຳໃຊ້ແນວຄວາມຄິດກ່ຽວກັບ 'ຫົວໜ້າຄົວເຮືອນ'. ຫົວໜ້າຄົວເຮືອນແມ່ນຜູ້ ທີ່ຮັບຜິດຊອບຫຼັກທາງດ້ານເສດຖະກິດ, ການຕັດສິນໃຈບັນຫາທີ່ສຳຄັນຕ່າງໆ ແລະ ໄດ້ຮັບການຍອມຮັບຈາກສະມາຊິກໃນຄົວເຮືອນທັງໝົດວ່າເປັນຫົວໜ້າຄົວເຮືອນ. ຫົວໜ້າຄົວເຮືອນອາດແມ່ນຜູ້ຊາຍ ຫຼື ຜູ້ຍິງກໍ່ໄດ້. ຕົວຢ່າງຕໍ່ໄປນີ້ ແມ່ນຄົວເຮືອນສຳລັບສ່ວນບຸກຄົນ:

- ຄອບຄົວດຽວ ຫຼື ຄົວເຮືອນທີ່ມີຄົນດຽວ: ເຮືອນ, ອາພາດເມັນ ຫຼື ຕູບ ທີ່ມີກຳມະສິດໂດຍຄອບຄົວດຽວ ຫຼື ອາໄສຢູ່ຄົນດຽວ;
- ສອງຄອບຄົວຂຶ້ນໄປ: ເຮືອນ, ອາພາດເມັນ ຫຼື ຕູບ ທີ່ມີອຳມະສິດໂດຍສອງຄອບຄົວຂຶ້ນໄປ ອາໄສຢູ່ ແລະ ກິນເຂົ້າຮ່ວມກັນ ເປັນຫົວໜ່ວຍດຽວ;
- ກຸ່ມຄົນທີ່ບໍ່ມີສາຍພົວພັນ: ອາພາດເມັນ ຫຼື ເຮືອນທີ່ມີສອງ ຫຼື ຫຼາຍຄົນ ທີ່ບໍ່ມີສາຍພົວພັນ ແຕ່ອາໄສຢູ່ຮ່ວມກັນ ເປັນໜ່ວຍດຽວ.

ນອກຈາກນັ້ນແລ້ວຍັງມີກຸ່ມຄົນທີ່ບໍ່ໄດ້ເປັນສະມາຊິກຂອງຄົວເຮືອນສ່ວນບຸກຄົນ ແຕ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ ເຊັ່ນ: ຄົວເຮືອນລວມໝູ່ (ຕົວຢ່າງ, ວັດ, ຄຸກ, ສະຖານທີ່ລ້ຽງເດັກກຳພ້າ, ຫໍພັກໂຮງຮຽນ ຫຼື ວິທະຍາໄລ) ຫຼື ຄ້າຍ/ແຄັມ (ຕົວຢ່າງ, ຄ້າຍທະຫານ, ແຄັມກຳມະກອນກໍ່ສ້າງຖະໜົນຫົນທາງ) ຫຼື ໂຮງແຮມ ແລະ ເຮືອນພັກອື່ນໆ. ຖ້າບຸກຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ໃນຄືນສຳຫຼວດ ແລະ ອາໄສຢູ່ສະຖານທີ່ນັ້ນ 6 ເດືອນຂຶ້ນໄປ (ຫຼື ມີຈຸດປະສົງມາອາໄສຢູ່ 6 ເດືອນ ຂຶ້ນໄປ), ເຂົາເຈົ້າຈະຖືກຈົດນັບເຂົ້າເປັນສະມາຊິກຄົວເຮືອນລວມໝູ່. ດັ່ງນັ້ນ, ພຣະສົງ ຜູ້ທີ່ອາໄສຢູ່ວັດເປັນເວລາຫຼາຍປີຈະຖືກນັບຢູ່ຄົວເຮືອນລວມໝູ່ຢູ່ວັດ. ເຊັ່ນດຽວກັນ, ແຂກຂອງໂຮງແຮມ ຜູ້ທີ່ອາໄສຢູ່ໃນໂຮງແຮມຫຼາຍກວ່າ 6 ເດືອນ (ຫຼື ມີຈຸດປະສົງອາໄສຢູ່ 6 ເດືອນ ຂຶ້ນໄປ) ຈະຖືກຈົດນັບຢູ່ຄົວເຮືອນລວມໝູ່ໃນໂຮງແຮມ. ຖ້າວ່າພວກເຂົາຢູ່ໃນໂຮງແຮມໜ້ອຍກວ່າ 6 ເດືອນ (ຫຼື ມີຈຸດປະສົງອາໄສຢູ່ ໜ້ອຍກວ່າ 6 ເດືອນ) ຈະຖືກນັບຢູ່ຄົວເຮືອນທີ່ເຂົາເຈົ້າອາໄສຢູ່ເປັນປະຈຳ.

ເຖິງຢ່າງໃດກໍຕາມ, ຖ້າວ່າບຸກຄົນອາໄສຢູ່ໃນຄົວເຮືອນລວມໝູ່ໜ້ອຍກວ່າ 6 ເດືອນ (ແລະ ບໍ່ມີຈຸດປະສົງອາໄສຢູ່ສະຖານທີ່ດັ່ງກ່າວຮອດ 6 ເດືອນ) ຈະຖືກນັບຢູ່ຄົວເຮືອນທີ່ເຂົາເຈົ້າອາໄສຢູ່ເປັນປະຈຳ. ໝາຍຄວາມວ່າ, ເມື່ອນັກເດີນສຳຫຼວດຈົດນັບສະມາຊິກຄົວເຮືອນສ່ວນບຸກຄົນ ທີ່ມີສະມາຊິກຄົນໃດໜຶ່ງຍ້າຍໄປອາໄສຢູ່ຄົວເຮືອນລວມໝູ່, ນັກເດີນສຳຫຼວດຕ້ອງໄດ້ຖາມເຈາະຈີ້ມວ່າບຸກຄົນດັ່ງກ່າວອາໄສຢູ່ໃສໃນຄືນສຳຫຼວດ ແລະ ອາໄສຢູ່ບ່ອນນັ້ນດົນປານໃດແລ້ວ (ຫຼື ມີຈຸດປະສົງຈະອາໄສຢູ່ສະຖານທີ່ດັ່ງກ່າວດົນປານໃດ). ໂດຍອີງໃສ່ຄຳຖາມເຈາະຈີ້ມດັ່ງກ່າວ, ນັກເດີນສຳຫຼວດຈຶ່ງຕັດສິນໃຈວ່າ ຄວນຈະລວມເອົາບຸກຄົນດັ່ງກ່າວເຂົ້າໃນຄົວເຮືອນ ຫຼື ບໍ່.

### 2.5.5 ອາຄານ ແລະ ທີ່ຢູ່ອາໄສ

ໃນຊີວິດປະຈຳວັນ, ຄົນສ່ວນຫຼາຍມັກຈະເຂົ້າໃຈວ່າອາຄານ ແລະ ທີ່ຢູ່ອາໄສ ແມ່ນອັນດຽວກັນ. ເຖິງຢ່າງໃດກໍຕາມ, ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ອາຄານ ແລະ ທີ່ຢູ່ອາໄສບໍ່ແມ່ນອັນດຽວກັນ. ດັ່ງນັ້ນ, ມັນເປັນສິ່ງຈຳເປັນທີ່ຈະຕ້ອງໄດ້ເຂົ້າໃຈຢ່າງລະອຽດ ກ່ຽວກັບຄວາມແຕກຕ່າງລະຫວ່າງອາຄານ ແລະ ທີ່ຢູ່ອາໄສ. ໂດຍທົ່ວໄປແລ້ວ, ອາຄານແມ່ນຕົວໂຄງສ້າງ (ໂດຍບໍ່ຄຳນຶງເຖິງວັດສະດຸກໍ່ສ້າງ) ທີ່ປຸກສ້າງໃນດິນຕອນໃດໜຶ່ງ ສາມາດນຳໃຊ້ເພື່ອຈຸດປະສົງຕ່າງໆ ເຊັ່ນ: ທີ່ຢູ່ອາໄສ, ບໍ່ແມ່ນທີ່ຢູ່ອາໄສ ຫຼື ປະເພດການນຳໃຊ້ອື່ນໆ. ທີ່ຢູ່ອາໄສແມ່ນຫົວໜ່ວຍສະຖານທີ່ທີ່ເປັນທີ່ຢູ່ອາໄສຂອງຄົນ ທີ່ມີໜຶ່ງ ຫຼື ຫຼາຍຄົນອາໄສຢູ່ຮ່ວມກັນ ຫຼື ສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສຂອງຄົນແຕ່ບໍ່ມີຄົນອາໄສຢູ່ຊົ່ວຄາວ. ເພື່ອຄວາມຊັດເຈນ, ບົດແນະນຳຂອງສາກົນ ໄດ້ໃຫ້ນິຍາມກ່ຽວກັບອາຄານ ແລະ ທີ່ຢູ່ອາໄສ ດັ່ງທີ່ໄດ້ອະທິບາຍໃນຫົວຂໍ້ 1.10 (ໜ້າທີ 10).

ທີ່ຢູ່ອາໄສສ່ວນໃຫຍ່ແມ່ນຈະເປັນບ່ອນຢູ່ອາໄສຂອງຄົວເຮືອນ ເຊັ່ນ: ເຮືອນຢູ່ໃນບ້ານ ຫຼື ຫ້ອງອາພາດເມັນໃນອາຄານອາພາດເມັນ, ນອກນັ້ນຍັງມີໂຄງສ້າງເຄິ່ງຖາວອນ ເຊັ່ນ: ເຕັ້ນ, ເຮືອນເຄື່ອນທີ່ (ເຊັ່ນ: ຄາລາວານ), ຕູບ ແລະ ທີ່ລີ້ໄພ ທີ່ສ້າງຂຶ້ນເພື່ອອາໄສຢູ່. ຕົວຢ່າງ: ຫົວໜ່ວຍທີ່ສ້າງໂດຍບໍ່ມີຈຸດປະສົງເພື່ອໃຫ້ຄົນອາໄສ ແຕ່ຖືກນຳໃຊ້ເປັນທີ່ຢູ່ອາໄສເປັນປະຈຳ ປະກອບມີ ຮ້ານຄ້າ, ຫ້ອງການ, ໂຮງງານ ແລະ ອື່ນໆ.

ນັກເດີນສຳຫຼວດຈະຕ້ອງໄດ້ຈົດນັບທີ່ຢູ່ອາໄສປະເພດທີ່ໜຶ່ງທັງໝົດ, ຕົວຢ່າງ ສະຖານທີ່ທີ່ສ້າງຂຶ້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສຂອງຄົວເຮືອນ ໂດຍທີ່ບໍ່ຈຳແນກວ່າຈະມີຄົນອາໄສຢູ່ ຫຼື ບໍ່ກໍ່ຕາມ. ການຈົດນັບດັ່ງກ່າວແມ່ນຍ້ອນວ່າການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນບໍ່ພຽງແຕ່ຈົດນັບສະເພາະພົນລະເມືອງເທົ່ານັ້ນ, ແຕ່ຍັງຈົດນັບທີ່ຢູ່ອາໄສອີກດ້ວຍ. ທີ່ຢູ່ອາໄສປະເພດທີສອງ, ຕົວຢ່າງ ສະຖານທີ່ທີ່ສ້າງຂຶ້ນມາບໍ່ມີຈຸດປະສົງເພື່ອເປັນທີ່ຢູ່ອາໄສຂອງຄົນ ຈະຖືກຈົດນັບພຽງແຕ່ໃນກໍລະນີທີ່ມີຄົນອາໄສຢູ່ເທົ່ານັ້ນ.

ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ສິ່ງທີ່ພວກເຮົາສົນໃຈຕົ້ນຕໍແມ່ນທີ່ຢູ່ອາໄສ ເຊິ່ງບໍ່ແມ່ນອາຄານ. ອາຄານໜຶ່ງສາມາດມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສ (ຕົວຢ່າງ, ອາຄານອາພາດເມັນ). ອາຄານອາດສ້າງຂຶ້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສຂອງຄົນ ຫຼື ເພື່ອຈຸດປະສົງອື່ນໆ. ໃນເວລາໃດກໍ່ຕາມ, ອາຄານສາມາດປະກອບຫົວໜ່ວຍທີ່ສ້າງຂຶ້ນບໍ່ມີຈຸດປະສົງເປັນທີ່ຢູ່ອາໄສຂອງຄົນ (ຕົວຢ່າງ, ຮ້ານຄ້າ ຫຼື ຫ້ອງການ), ເຖິງຢ່າງໃດກໍ່ຕາມ, ສະຖານທີ່

ດັ່ງກ່າວອາດມີໜຶ່ງ ຫຼື ຫຼາຍຄົນອາໄສຢູ່. ຜູ້ທີ່ອາໄສຢູ່ສະຖານທີ່ດັ່ງກ່າວນັ້ນຈະຖືກຈົດນັບເຂົ້າໃນການສໍາຫຼວດ. ດັ່ງນັ້ນ, ມັນເປັນສິ່ງທີ່ຈໍາເປັນທີ່ຈະຕ້ອງໄດ້ສັງເກດ ຫຼື ສອບຖາມໃຫ້ລະອຽດ ວ່າມີຄົນອາໄສຢູ່ໃນສະຖານທີ່ດັ່ງກ່າວນັ້ນ ຫຼື ບໍ່.

## 2.6 ການນໍາໃຊ້ແທັບເລັດ

ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ແມ່ນນໍາໃຊ້ແທັບເລັດເຂົ້າໃນການເກັບກໍາຂໍ້ມູນທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ. ຂໍ້ມູນຈະຖືກປ້ອນຢູ່ພາກສະໜາມໂດຍນໍາໃຊ້ໂປຣແກຣມແບບສອບຖາມດີຈີຕອນ. ວິທີການເກັບກໍາຂໍ້ມູນດັ່ງກ່າວນີ້ເປັນທີ່ຮູ້ຈັກກັນວ່າ (ກາປີ້ 'CAPI'): ການນໍາໃຊ້ລະບົບຄອມພິວເຕີຊ່ວຍສໍາພາດສ່ວນບຸກຄົນ.

ຄຸນປະໂຫຍດຂອງການນໍາໃຊ້ລະບົບ CAPI ແມ່ນການກໍານົດຊ່ອງປ້ອນຂໍ້ມູນເຊັ່ນ ຂໍ້ມູນເອກະລັກ ແມ່ນສາມາດຖືກປ້ອນເຂົ້າໃນໂປຣແກຣມໄວ້ລ່ວງໜ້າ. ເຊິ່ງຈະສາມາດຫຼີກລ້ຽງຂໍ້ຜິດພາດໃນການປ້ອນຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບສະຖານທີ່ສໍາພາດ. ນອກຈາກນີ້, ໂປຣແກຣມຍັງລວມເອົາການກວດສອບຄວາມສອດຄ່ອງ ແລະ ການເຕັ້ນຂ້າມຂອງຄໍາຖາມຈາກຄໍາຖາມໜຶ່ງໄປຫາອີກຄໍາຖາມໜຶ່ງໄດ້ຢ່າງອັດຕະໂນມັດ. ການກວດສອບ ແລະ ການເຕັ້ນຂ້າມຢ່າງອັດຕະໂນມັດນີ້ຈະຫຼຸດຜ່ອນຄວາມຜິດພາດໃນການເກັບກໍາຂໍ້ມູນ ແລະ ຈະຊ່ວຍປັບປຸງຄຸນນະພາບຂອງຂໍ້ມູນການສໍາຫຼວດໄດ້ຢ່າງຫຼວງຫຼາຍ.

ແທັບເລັດເປັນເຄື່ອງມືສໍາຄັນທີ່ສຸດຕະຫຼອດໄລຍະການສໍາຫຼວດ. ນັກເດີນສໍາຫຼວດຕ້ອງຮັກສາແທັບເລັດໄວ້ເປັນຢ່າງດີ ໃນໄລຍະເວລາການເກັບກໍາຂໍ້ມູນການສໍາຫຼວດ. ໃນປຶ້ມຄູ່ມືສະບັບນີ້, ນັກເດີນສໍາຫຼວດຈະໄດ້ຮຽນຮູ້ກ່ຽວກັບການນໍາໃຊ້ແທັບເລັດເຂົ້າໃນການຈົດນັບທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ. ນັກເດີນສໍາຫຼວດຕ້ອງທໍາຄວາມຄຸ້ນເຄີຍໃນການນໍາໃຊ້ແທັບເລັດເຂົ້າໃນການສໍາຫຼວດ.

## 2.7 ໜ້າທີ່ຂອງນັກເດີນສໍາຫຼວດ

ນັກເດີນສໍາຫຼວດຈະຕ້ອງປະຕິບັດຄວາມຮັບຜິດຊອບຫຼາຍຢ່າງ ແລະ ປະຕິບັດບັນດາໜ້າວຽກທີ່ໄດ້ຖືກກໍານົດໄວ້ລ່ວງໜ້າ. ນັກເດີນສໍາຫຼວດຈະຕ້ອງໄດ້ປະຕິບັດໜ້າວຽກສະເພາະຈໍານວນໜຶ່ງກ່ອນການສໍາຫຼວດພາກສະໜາມ, ໃນລະຫວ່າງການສໍາຫຼວດພາກສະໜາມ ແລະ ທັນທີທີ່ສໍາເລັດການສໍາຫຼວດຢູ່ເຂດສໍາຫຼວດຂອງຕົນ.

### 2.7.1 ໄລຍະກະກຽມ

- ເຂົ້າຮ່ວມການຝຶກອົບຮົມນັກເດີນສໍາຫຼວດຢ່າງຫ້າວຫັນ, ເອົາໃຈໃສ່ການຝຶກອົບຮົມທຸກຂັ້ນຕອນ ແລະ ເຮັດສໍາເລັດບົດທົດສອບຂອງການຝຶກອົບຮົມ. ເມື່ອເລີ່ມການຝຶກອົບຮົມ ນັກເດີນສໍາຫຼວດຈະໄດ້ຮັບອຸປະກອນຕ່າງໆຄື: ປຶ້ມຂຽນ, ບິກ, ຄູ່ມືນັກເດີນສໍາຫຼວດ ແລະ ອື່ນໆ;
- ການຄັດເລືອກນັກເດີນສໍາຫຼວດຮອບສຸດທ້າຍ ແມ່ນຈະເລືອກໃນຕອນທ້າຍຂອງການຝຶກອົບຮົມ ໂດຍພິຈາລະນາຈາກຜົນຂອງການທົດສອບ ແລະ ຄວາມຕ້ອງການຂອງພະນັກງານຂັ້ນທ້ອງຖິ່ນ. ສໍາລັບຜູ້ເຂົ້າຮ່ວມຝຶກອົບຮົມທີ່ບໍ່ຖືກເລືອກແມ່ນຈະເປັນນັກເດີນສໍາຫຼວດສໍາຮອງ ເພື່ອປ່ຽນແທນນັກເດີນສໍາຫຼວດຜູ້ທີ່ບໍ່ສາມາດດໍາເນີນການສໍາຫຼວດໃນໄລຍະການສໍາຫຼວດພາກສະໜາມໄດ້.
- ຫ້ອງການສໍາຫຼວດຈະແຈ້ງລາຍຊື່ຜູ້ທີ່ຜ່ານການຝຶກອົບຮົມ ແລະ ຂະບວນການຄັດເລືອກຢ່າງເປັນທາງການ. ໃນມື້ສຸດທ້າຍຂອງການຝຶກອົບຮົມ, ນັກເດີນສໍາຫຼວດທີ່ຖືກຄັດເລືອກຈະຕ້ອງເຊັນສັນຍາຕາມເງື່ອນໄຂຂອງນັກເດີນສໍາຫຼວດທີ່ໄດ້ລະບຸໄວ້. ຫຼັງຈາກນັ້ນ, ນັກເດີນສໍາຫຼວດຈະຖືກແຈ້ງໃຫ້ຊາບກ່ຽວກັບເຂດສໍາຫຼວດທີ່ນັກເດີນສໍາຫຼວດຖືກມອບໝາຍໃຫ້ຮັບຜິດຊອບ ແລະ ຂໍ້ມູນການຕິດຕໍ່ກັບນັກນັກກວດກາຂອງຕົນ (ຊື່, ເບີໂທລະສັບ ແລະ ອື່ນໆ...).

- ການເຊັນສັນຍາການຮັກສາຄວາມລັບຂອງການສຳຫຼວດ, ໃນເວລາທີ່ນັກເດີນສຳຫຼວດເຊັນສັນຍາຕາມເງື່ອນໄຂຂອງນັກເດີນສຳຫຼວດທີ່ລະບຸໄວ້, ນັກເດີນສຳຫຼວດຍັງຈະໄດ້ເຊັນສັນຍາໃນເອກະສານການຮັກສາຄວາມລັບຂອງການສຳຫຼວດ. ໃນຖານະເປັນນັກເດີນສຳຫຼວດ, ຈະຕ້ອງຄຳນຶງເຖິງຄວາມສຳຄັນຂອງການຮັກສາຄວາມລັບຂອງຂໍ້ມູນ. ການເປີດເຜີຍຂໍ້ມູນໃຫ້ໃຜກໍ່ຕາມທີ່ບໍ່ໄດ້ຮັບອະນຸຍາດຈາກສູນສະຖິຕິແຫ່ງຊາດ ຖືເປັນຄວາມຜິດ ແລະ ມີໂທດທາງກົດໝາຍ.

- ຫຼັງຈາກເຊັນສັນຍາຕາມເງື່ອນໄຂຂອງນັກເດີນສຳຫຼວດທີ່ລະບຸໄວ້ແລ້ວ, ນັກເດີນສາຫຼວດຈະໄດ້ຮັບ:
  - ໜັງສືການອະນຸຍາດການສຳຫຼວດ: ແມ່ນໜັງສືທາງການຈາກສູນສະຖິຕິແຫ່ງຊາດທີ່ລະບຸສະຖານະນັກເດີນສຳຫຼວດ ສຳລັບເຂດສຳຫຼວດທີ່ຖືກມອບໝາຍໃຫ້;
  - ບັດນັກເດີນສຳຫຼວດ: ແມ່ນປ້າຍຫ້ອຍຄໍທີ່ລະບຸສະຖານະນັກເດີນສຳຫຼວດ ແລະ ມີຊື່, ນາມສະກຸນ ແລະ ຮູບຖ່າຍຂອງນັກເດີນສຳຫຼວດຕິດໃສ່ບັດດັ່ງກ່າວ.

- ຢູ່ທີ່ຫ້ອງການສຳຫຼວດຂັ້ນເມືອງ, ນັກເດີນສຳຫຼວດຈະໄດ້ຮັບອຸປະກອນການສຳຫຼວດພາກສະໜາມ. ຫຼັງຈາກໄດ້ຮັບອຸປະກອນແລ້ວ ໃຫ້ກວດສອບວ່າໄດ້ຮັບທຸກຢ່າງຄົບຖ້ວນ ຫຼື ບໍ, ເຊິ່ງນັກເດີນສຳຫຼວດຈະໄດ້ຮັບອຸປະກອນດັ່ງນີ້:

  - ແທັບເລັດພ້ອມກັບສາຍສາກ;
  - ຊິມອິນເຕີເນັດທີ່ໄດ້ໃສ່ໃນແທັບເລັດໄວ້ແລ້ວ;
  - ກະເປົານັກເດີນສຳຫຼວດ;
  - ໝວກ ແລະ ເສື້ອນັກເດີນສຳຫຼວດ;
  - ສະຕິກເກີ້ການສຳຫຼວດ;
  - ໜັງສືແຈ້ງການສຳຫຼວດ, ເຊິ່ງເປັນໜັງສືເພື່ອແຈ້ງຫາຄົວເຮືອນທີ່ບໍ່ມີໃຜຢູ່ເຮືອນກ່ຽວກັບ ວັນທີ ແລະ ເວລາທີ່ນັກເດີນສຳຫຼວດຈະກັບໄປສຳພາດຄົວເຮືອນດັ່ງກ່າວໃນຄັ້ງຕໍ່ໄປ ແລະ ຂຽນເບີໂທລະສັບໄວ້ເພື່ອການຕິດຕໍ່.

- ຫຼັງຈາກໄດ້ຮັບແທັບເລັດແລ້ວ ໃຫ້ກວດສອບວ່າແທັບເລັດແມ່ນຢູ່ໃນສະພາບດີພ້ອມໃຊ້ງານ ຫຼື ບໍ:
  - ເປີດເຄື່ອງ ແລະ ກວດສອບວ່າສາມາດເປີດໂປຣແກຣມແບບສອບຖາມດິຈິຕອນໄດ້ ຫຼື ບໍ;
  - ກວດເບິ່ງວ່າມີຊິມເນັດໃນແທັບເລັດ ແລະ ສາມາດເປີດໃຊ້ງານໄດ້ ຫຼື ບໍ;
  - ກວດເບິ່ງແຜນເຂດສຳຫຼວດດິຈິຕອນ ວ່າແມ່ນແຜນທີ່ເຂດດຽວກັນກັບເຂດສຳຫຼວດທີ່ຮັບມອບໝາຍ ຫຼື ບໍ.

  ຖ້າມີຫຍັງທີ່ບໍ່ເປັນໄປຕາມທີ່ກ່າວມານີ້, ໃຫ້ປະສານກັບພະນັກງານຫ້ອງການສຳຫຼວດຂັ້ນເມືອງທັນທີ.

- ທຳຄວາມຄຸ້ນເຄີຍກັບການເຮັດວຽກຂອງແທັບເລັດ, ໂປຣແກຣມແບບສອບຖາມດິຈິຕອນ, ເນື້ອໃນແບບສອບຖາມການສຳຫຼວດ ແລະ ຄູ່ມືສະບັບນີ້. ນັກເດີນສຳຫຼວດຄວນໃຊ້ເວລາຢ່າງໜ້ອຍ 2 ມື້ ເພື່ອສຶກສາເຄື່ອງມືເຫຼົ່ານີ້ ກ່ອນຈະເລີ່ມເຮັດການສຳຫຼວດໃນເຂດສຳຫຼວດທີ່ຕົນຮັບຜິດຊອບ.

- ທຳຄວາມຄຸ້ນເຄີຍກັບເຂດສຳຫຼວດທີ່ຕົນຮັບຜິດຊອບຢ່າງລະອຽດ, ລວມທັງການລະບຸຂອບເຂດຂອງພື້ນທີ່ ແລະ ບັນດາອາຄານບ່ອນທີ່ຈະຕ້ອງໄດ້ຈົດນັບເອົາເປັນທີ່ຢູ່ອາໄສ ແລະ ຄົວເຮືອນ. ກຳນົດເສັ້ນທາງທີ່ເໝາະສົມທີ່ສຸດໃນການໄປຫາອາຄານ ແລະ ຖ້າວ່າມີກໍລະນີທີ່ບໍ່ຈະແຈ້ງຕ້ອງບັນທຶກໄວ້. ນັກກວດກາຈະໃຫ້ການຊ່ວຍເຫຼືອແນະນຳເພີ່ມເຕີມ.

- ວາງແຜນຮ່ວມກັບນັກກວດກາ ກ່ຽວກັບບັນດາໜ້າວຽກຕ່າງໆ ແລະ ຈັດລຽງລຳດັບການໄປຫາບັນດາອາຄານທີ່ຢູ່ໃນເຂດສຳຫຼວດທີ່ໄດ້ຮັບຜິດຊອບ. ການວາງແຜນນີ້ເພື່ອຮັບປະກັນວ່າຈະສຳເລັດການສຳຫຼວດ

ພາຍໃນໄລຍະເວລາ 6 ອາທິດ ເລີ່ມແຕ່ວັນ 3 ພະຈິກ ຫາ 14 ທັນວາ 2025. ນັກເດີນສຳຫຼວດຕ້ອງໄດ້ຄຳນຶງວ່າການສຳຫຼວດໃນໄລຍະທຳອິດຈະເປັນໄປໄດ້ຊ້າ: ນັກເດີນສຳຫຼວດຕ້ອງໄດ້ສະສົມຄວາມຮູ້ກ່ຽວກັບທ້ອງຖິ່ນ, ປະສົບການກ່ຽວກັບຂັ້ນຕອນການສຳຫຼວດ ແລະ ທຳຄວາມເຂົ້າໃຈກັບເນື້ອໃນແບບສອບຖາມ, ຕ້ອງໄດ້ສຶກສາຄູ່ມືສະບັບນີ້ ແລະ ປຶກສາຫາລືກັບນັກກວດກາຢ່າງເປັນປະຈຳ. ນອກຈາກນີ້, ໃນໄລຍະທ້າຍຂອງການສຳຫຼວດ ການເກັບກຳຂໍ້ມູນອາດຈະຊ້າລົງ ເນື່ອງຈາກວ່າ ນັກເດີນສຳຫຼວດຍັງຈະຕ້ອງໄດ້ໄປຫາຄົວເຮືອນທີ່ມີຄວາມຫຍຸ້ງຍາກໃນການຕິດຕໍ່ອີກຄັ້ງ ແລະ ອາດຈະຕ້ອງໄດ້ໄປຫາທີ່ຢູ່ອາໄສທີ່ຢູ່ໄກ ເຊິ່ງຍັງບໍ່ສາມາດສຳເລັດການສຳຫຼວດໄດ້. ດັ່ງນັ້ນ, ນັກເດີນສຳຫຼວດຕ້ອງໄດ້ເຜື່ອເວລາສຳລັບກໍລະນີເຫຼົ່ານີ້.

2.7.2 ໄລຍະສຳຫຼວດ

- ຈົດນັບເອົາທຸກໆທີ່ຢູ່ອາໄສຢູ່ໃນອາຄານທີ່ຢູ່ໃນເຂດສຳຫຼວດທີ່ຕົນຮັບຜິດຊອບ, ໂດຍອີງໃສ່ແຜນທີ່ເຂດສຳຫຼວດທີ່ຢູ່ໃນແທັບເລັດ ແລະ ແຜນການສຳຫຼວດທີ່ນັກເດີນສຳຫຼວດທີ່ໄດ້ເຮັດໄວ້.
- ເຮັດສຳເລັດແບບສອບຖາມການສຳຫຼວດສຳລັບທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ທັງໝົດ ໃນເຂດສຳຫຼວດຂອງຕົນ.
- ບັນທຶກທຸກຄຳຕອບໃສ່ໃນແບບສອບຖາມຢ່າງລະມັດລະວັງ. ລາຍລະອຽດຄຳແນະນຳກ່ຽວກັບແບບສອບຖາມແມ່ນຢູ່ໃນພາກທີ IV ຂອງຄູ່ມືສະບັບນີ້.
- ຝາກໜັງສືແຈ້ງການສຳຫຼວດ ໃນກໍລະນີບໍ່ມີຄົນຢູ່ເຮືອນ ຫຼື ບໍ່ສາມາດຕິດຕໍ່ກັບຄົວເຮືອນໄດ້ ຫຼື ເມື່ອຕ້ອງການກັບໄປສຳພາດອີກຄັ້ງໃນເວລາໃໝ່, ໃນກໍລະນີບໍ່ສາມາດຕິກຕໍ່ໄດ້ ນັກເດີນສຳຫຼວດຕ້ອງພະຍາຍາມຕິດຕໍ່ຫາຄົວເຮືອນຢ່າງໜ້ອຍ 3 ຄັ້ງ ໃນວັນເວລາທີ່ແຕກຕ່າງກັນ. ພະຍາຍາມຕິດຕໍ່ກັບສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ ທີ່ສາມາດຕອບທຸກຄຳຖາມຂອງແບບສອບຖາມການສຳຫຼວດໄດ້.
- ຮັບປະກັນວ່າຂໍ້ມູນທີ່ໄດ້ຖືກເກັບກຳໃນແຕ່ລະວັນ ແມ່ນໄດ້ສົ່ງຫາຫ້ອງການສຳຫຼວດຂັ້ນສູນກາງເປັນລາຍວັນ, ເຊິ່ງແມ່ນການສົ່ງຖານຂໍ້ມູນໄປຫາເຊີເວີຂອງສູນສະຖິຕິແຫ່ງຊາດ. ໃນຄູ່ມືສະບັບນີ້ໄດ້ມີການແນະນຳກ່ຽວກັບວິທີການສົ່ງຂໍ້ມູນໄປຫາຫ້ອງການສຳຫຼວດຂັ້ນສູນກາງ. ອາດມີບາງຂົງເຂດທີ່ມີຄວາມຫຍຸ້ງຍາກໃນການເຊື່ອມຕໍ່ກັບສັນຍານອິນເຕີເນັດເພື່ອສົ່ງຂໍ້ມູນມາຫາເຊີເວີຂອງສູນກາງ. ໃນກໍລະນີນີ້, ນັກກວດກາຈະສົ່ງຂໍ້ມູນຈາກແທັບເລັດຂອງນັກເດີນສຳຫຼວດໄປຫາແທັບເລັດຂອງນັນກວດກາໂດຍກົງ ແລະ ນັກກວດກາຈະສົ່ງຂໍ້ມູນດັ່ງກ່າວຈາກແທັບເລັດຂອງນັກກວດກາໄປຫາເຊເວີຂອງສູນກາງທັນທີທີ່ສາມາດເຊື່ອຕໍ່ກັບອິນເຕີເນັດໄດ້.
- ໃນຕອນເຊົ້າຂອງແຕ່ລະວັນ ນັກເດີນສຳຫຼວດຕ້ອງກວດສອບວ່າໄດ້ນັດກັບຄົວເຮືອນທີ່ຍັງສຳພາດບໍ່ສຳເລັດເພື່ອກັບໄປຫາອີກຄັ້ງ ຫຼື ບໍ.
- ລາຍງານທຸກໆກໍລະນີ ທີ່ມີຄົນປະຕິເສດການສຳພາດ ຫຼື ຂັດຂວາງການສຳຫຼວດ ຕໍ່ນັກກວດກາ.
- ກວດສອບທຸກໆອາຄານໃນເຂດສຳຫຼວດທີ່ຕົນຮັບຜິດຊອບ ວ່າມີຄວາມເປັນໄປໄດ້ທີ່ຈະເປັນທີ່ຢູ່ອາໄສ ຫຼື ບໍ, ເຖິງແມ່ນວ່າ ອາຄານດັ່ງກ່າວສ້າງຂຶ້ນບໍ່ມີຈຸດປະສົງເປັນທີ່ຢູ່ອາໄສຂອງຄົນກໍ່ຕາມ ເຊັ່ນ: ຮ້ານຄ້າ, ສາງ, ໂຮງງານ ແລະ ອື່ນໆ. ນອກຈາກນີ້, ຍັງລວມເອົາອາຄານທີ່ຍັງກໍ່ສ້າງບໍ່ສຳເລັດ ຫຼື ຖືກທຳລາຍ.
- ລາຍງານຄວາມບໍ່ສອດຄ່ອງ ລະຫວ່າງຂໍ້ມູນໃນແຜນທີ່ເຂດສຳຫຼວດ ແລະ ສະຖານະການຕົວຈິງຢູ່ພາກສະໜາມ ເຊັ່ນ ອາຄານທີ່ສ້າງຂຶ້ນໃໝ່ ແລະ ອາຄານທີ່ໄດ້ຖືກຮື້ຖອນອອກໄປແລ້ວ.
- ຖ້າເປັນໄປໄດ້ ໃຫ້ມີການນັດພົບກັບນັກກວດກາທຸກວັນ ເພື່ອກວດຄວາມຄືບໜ້າຂອງການສຳຫຼວດຢູ່ໃນເຂດສຳຫຼວດຂອງຕົນ ແລະ ບັນຫາ ຫຼື ຂໍ້ຫຍຸ້ງຍາກທີ່ພົບພໍ້ ໃນລະຫວ່າງການເກັບກຳຂໍ້ມູນຢູ່ພາກສະໜາມ.

ຖ້າບໍ່ສາມາດນັດພົບໄດ້ທຸກວັນໄດ້, ຄວນນັດພົບກັນເລື້ອຍໆເທົ່າທີ່ຈະເປັນໄປໄດ້ ແລະ ຕິດຕໍ່ປະສານງານກັນຜ່ານທາງໂທລະສັບ.

- ໃນໄລຍະການສໍາຫຼວດ ຈະມີທີມງານໄອທີເພື່ອໃຫ້ການຊ່ວຍເຫຼືອໃນກໍລະນີມີບັນຫາກ່ຽວກັບແທັບເລັດ ຫຼື ໂປຣແກຣມ. ຖ້າວ່ານັກກວດກາບໍ່ສາມາດແກ້ບັນຫາໄດ້, ນັກກວດກາຈະຕິດຕໍ່ຫາທີມງານໄອທີເພື່ອຂໍຄວາມຊ່ວຍເຫຼືອ.
- ເຊັ່ນດຽວກັນນັ້ນ, ຈະມີທີມງານແຕ້ມແຜນທີ່ (ທີມງານ GIS) ເພື່ອໃຫ້ການຊ່ວຍເຫຼືອໃນກໍລະນີມີບັນຫາກ່ຽວກັບແຜນທີ່ຂອງເຂດສໍາຫຼວດ ແລະ ສະຖານະການໃນພື້ນທີ່ ຕົວຢ່າງ: ໃນກໍລະນີຂອບເຂດ ຫຼື ອາຄານທີ່ຕັ້ງຢູ່ໃນເຂດແດນນັ້ນບໍ່ຊັດເຈນ, ຖ້າວ່ານັກກວດກາບໍ່ສາມາດແກ້ບັນຫາໄດ້, ນັກກວດກາຈະຕິດຕໍ່ຫາທີມງານແຕ້ມແຜນທີ່ເພື່ອຂໍຄວາມຊ່ວຍເຫຼືອ.
- ເອົາອຸປະກອນທີ່ຈໍາເປັນທັງໝົດໃສ່ໃນກະເປົາເປ້ທີ່ໄດ້ແຈກຢາຍໃຫ້ ແລະ ພະຍາຍາມຮັກສາແທັບເລັດບໍ່ໃຫ້ເປ່ເພ ແລະ ເສຍຫາຍ. ຖ້າຫາກອຸປະກອນການສໍາຫຼວດເກີດຄວາມເສຍຫາຍ ແມ່ນໃຫ້ລາຍງານຫານັກກວດກາທັນທີ.
- ຕ້ອງໄດ້ປະຕິບັດບັນດາໜ້າວຽກທັງໝົດທີ່ໄດ້ຮັບມອບໝາຍຈາກຜູ້ຄອບຄຸມ ຫຼື ຈາກຫ້ອງການສໍາຫຼວດຂັ້ນທ້ອງຖິ່ນ.

#### 2.7.3 ໄລຍະຫຼັງການສໍາຫຼວດ

ນັກເດີນສໍາຫຼວດຕ້ອງພະຍາຍາມເຮັດການສໍາຫຼວດໃນເຂດສໍາຫຼວດທີ່ຕົນຮັບຜິດຊອບໃຫ້ສໍາເລັດ ກ່ອນມື້ສຸດທ້າຍຂອງໄລຍະການສໍາຫຼວດ (ກ່ອນວັນທີ 14 ທັນວາ 2025). ນັກເດີນສໍາຫຼວດຈະໄດ້ຮັບຄໍາແນະນໍາຈາກນັກກວດກາວ່າການສໍາຫຼວດນີ້ສໍາເລັດແລ້ວ ຫຼື ຍັງ. ນີ້ອາດໝາຍຄວາມວ່ານັກເດີນສໍາຫຼວດຈະຕ້ອງໄດ້ສືບຕໍ່ການເຮັດວຽກເກີນໄລຍະເວລາການສໍາຫຼວດ ຖ້າວ່າຍັງເຮັດການສໍາຫຼວດບໍ່ສໍາເລັດ ຫຼື ຍັງບໍ່ຄົບຖ້ວນ.

ທັນທີທີ່ໄດ້ຮັບແຈ້ງຈາກນັກກວດກາວ່າການສໍາຫຼວດໃນເຂດສໍາຫຼວດແມ່ນເຮັດສໍາເລັດແລ້ວ, ນັກເດີນສໍາຫຼວດຕ້ອງກວດສອບວ່າຂໍ້ມູນໃນແບບສອບຖາມໄດ້ຖືກສົ່ງໄປຫາເຊເວີຂອງສູນກາງແລ້ວ ຫຼື ບໍ. ຫຼັງຈາກນັ້ນ, ນັກເດີນສໍາຫຼວດຕ້ອງສົ່ງແທັບເລັດ, ສາຍສາກ ແລະ ອຸປະກອນການສໍາຫຼວດຕ່າງໆໃຫ້ນັກກວດກາ.

ຂໍ້ມູນຈາກເຂດສໍາຫຼວດທີ່ນັກເດີນສໍາຫຼວດຮັບຜິດຊອບ ຈະຖືກກວດສອບຢູ່ຖານຂໍ້ມູນຂອງການສໍາຫຼວດຂັ້ນສູນກາງ. ຖ້າວ່າຜ່ານການກວດຄວາມຄົບຖ້ວນ ແລະ ຄຸນນະພາບຂອງຂໍ້ມູນແລ້ວ, ນັກເດີນສໍາຫຼວດຈະໄດ້ຮັບແຈ້ງຢ່າງທາງການວ່າໄດ້ໝົດໜ້າທີ່ການເປັນນັກເດີນສໍາຫຼວດຂອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ໝາຍເຫດ: ເຖິງແມ່ນວ່າຈະສໍາເລັດການສໍາຫຼວດແລ້ວ ນັກເດີນສໍາຫຼວດຍັງຈະຕ້ອງໄດ້ຮັກສາຄວາມລັບກ່ຽວກັບຂໍ້ມູນຂອງການສໍາຫຼວດ.

## 2.8 ວິທີການເຮັດວຽກກັບແຜນທີ່ເຂດສໍາຫຼວດ

#### 2.8.1. ອົງປະກອບທົ່ວໄປຂອງແຜນທີ່ເຂດສໍາຫຼວດ

ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ແມ່ນນໍາໃຊ້ແທັບເລັດ ແລະ ໂປຣແກຣມເຂົ້າໃນການເກັບກໍາຂໍ້ມູນທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ. ສ່ວນໜຶ່ງຂອງໂປຣແກຣມດັ່ງກ່າວ ແມ່ນແຜນທີ່ເຂດສໍາຫຼວດດິຈິຕອນທີ່ນັກເດີນສໍາຫຼວດໄດ້ຮັບການມອບໝາຍໃຫ້. ແຜນທີ່ເຂດສໍາຫຼວດ ແມ່ນເຄື່ອງມືສໍາຄັນທີ່ຈະຊ່ວຍໃຫ້ນັກເດີນສໍາຫຼວດຮູ້ວ່າຕ້ອງໄປສໍາພາດບັນດາຫົວໜ່ວຍຂອງການສໍາຫຼວດຢູ່ໃສແດ່. ຄູມືນັກເດີນສໍາຫຼວດພາກນີ້ອະທິບາຍຄຸນລັກສະນະພື້ນຖານຂອງແຜນທີ່ເຂດສໍາຫຼວດ.

ຮູບສະແດງ 2.1 ສະແດງໃຫ້ເຫັນຕົວຢ່າງຂອງແຜນທີ່ເຂດສໍາຫຼວດຢູ່ໃນແທັບເລັດ, ໃນກໍລະນີ ເປັນແຜນທີ່ຢູ່ເຂດຕົວເມືອງ. ນັກເດີນສໍາຫຼວດສາມາດຂະຫຍາຍແຜນທີ່ໃຫ້ໃຫຍ່ຂຶ້ນໄດ້ (zoom-in) ໂດຍການໃຊ້ນິ້ວໂປ້ ແລະ ນິ້ວຊີ້ກົດໃສ່ແຜນທີ່ ແລ້ວລາກນິ້ວໂປ້ ແລະ ນິ້ວຊີ້ອອກຈາກກັນ, ນັກເດີນສໍາຫຼວດຍັງສາມາດເຮັດໃຫ້ແຜນທີ່ນ້ອຍລົງໄດ້ (zoom-out) ໂດຍການລາກນິ້ວມືທັງສອງເຂົ້າຫາກັນ. ອົງປະກອບຫຼັກຂອງແຜນທີ່ເຂດສໍາຫຼວດແມ່ນມີດັ່ງຕໍ່ໄປນີ້:

A. ພື້ນຫຼັງຂອງແຜນທີ່ແມ່ນພາບຖ່າຍທາງອາກາດຂອງພື້ນທີ່ດັ່ງກ່າວ, ສະແດງໃຫ້ເຫັນບັນດາອາຄານ, ຖະໜົນຫົນທາງ, ແມ່ນໍ້າ, ທົ່ງນາ, ປ່າ ແລະ ຄຸນລັກສະນະອື່ນໆທີ່ກ່ຽວຂ້ອງ. ເສັ້ນສີມ່ວງບົ່ງບອກເຖິງເຂດແດນຂອງເຂດສໍາຫຼວດ. ນັກເດີນສໍາຫຼວດຕ້ອງຈົດນັບເອົາທຸກຫົວໜ່ວຍການສໍາຫຼວດ (ທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ) ທີ່ຢູ່ໃນເຂດແດນນັ້ນທັງໝົດ;
B. ຈຸດສີແດງແມ່ນຈະຖືກວາງໄວ້ເທິງອາຄານທີ່ສະແດງໃນແຜນທີ່ເຂດສໍາຫຼວດ ເຊິ່ງໄດ້ຖືກກໍານົດໃສ່ໃນໄລຍະການແຕ້ມແຜນທີ່ ໃນຂັ້ນຕອນການກະກຽມການສໍາຫຼວດ. ສີຂອງຈຸດອາຄານຈະປ່ຽນໄປຕາມຄວາມຄືບໜ້າການສໍາຫຼວດໃນອາຄານ (ເບິ່ງໃນພາກທີ 2.8.2). ໃນຕອນເລີ່ມຕົ້ນຂອງການສໍາຫຼວດ, ຈຸດຂອງອາຄານທັງໝົດຈະເປັນສີແດງ ເຊິ່ງສະແດງໃຫ້ເຫັນວ່າຍັງບໍ່ໄດ້ເລີ່ມການສໍາຫຼວດ;
C. ບັນດາປຸ່ມຕ່າງໆທີ່ຢູ່ທາງລຸ່ມເບື້ອງຂວາມື ແມ່ນຊຸດເຄື່ອງມືສໍາລັບການເຮັດວຽກຂອງໂປຣແກຣມແຜນທີ່. (ພາກທີ 2.8.4);
D. ຢູ່ຂ້າງລຸ່ມຂອງແຜນທີ່ແມ່ນບັນຊີອາຄານທັງໝົດ ທີ່ໄດ້ຖືກໃສ່ຈຸດອາຄານໄວ້ໃນແຜນທີ່ (ພາກທີ 2.8.3). ແຕ່ລະລາຍການອາຄານຈະມີຂໍ້ມູນລາຍລະອຽດກ່ຽວກັບອາຄານນັ້ນ.

*ຮູບສະແດງ 2.1: ຕົວຢ່າງແຜນທີ່ເຂດສໍາຫຼວດ ໃນຕອນເລີ່ມຕົ້ນຂອງການສໍາຫຼວດ*




2.8.2. ຄວາມຄືບໜ້າໃນການເກັບກໍາຂໍ້ມູນໃນອາຄານ ແລະ ລະຫັດສີ

ອາຄານແມ່ນອົງປະກອບທໍາອິດທີ່ຕ້ອງໄດ້ໄປກວດເບິ່ງໃນລະໄລຍະການສໍາຫຼວດ. ແຜນທີ່ເຂດສໍາຫຼວດດິຈິຕອນຈະສະແດງອາຄານທັງໝົດໃນເຂດສໍາຫຼວດດ້ວຍຈຸດຂອງອາຄານ ໂດຍບໍ່ໄດ້ຄໍານຶງເຖິງຈຸດປະສົງຂອງການກໍ່ສ້າງອາຄາ. ດັ່ງນັ້ນ, ມັນອາດຈະແມ່ນເຮືອນ, ຕຶກແຖວ, ສາງສິນຄ້າ, ຮ້ານຄ້າ, ວັດ ແລະ ອື່ນໆ. ສໍາລັບແຕ່ລະອາຄານໃນເຂດສໍາຫຼວດ, ນັກເດີນສໍາຫຼວດຕ້ອງໄດ້ກວດສອບວ່າມີທີ່ຢູ່ອາໄສຢູ່ໃນອາຄານ ຫຼື ບໍ່, ໂດຍບໍ່ສົນໃຈວ່າທີ່ຢູ່ອາໄສນັ້ນຈະມີຄົນອາໄສຢູ່ ຫຼື ບໍ່ກໍ່ຕາມ. ໂປຣແກຣມແບບສອບຖາມການສໍາຫຼວດໃນແທັບເລັດ ມີບາງຄໍາຖາມທີ່ຈະຊ່ວຍນັກ

ເດີນສຳຫຼວດໃນການກວດສອບສະຖານະຂອງອາຄານ. ການກວດສອບນີ້ເປັນການກຳນົດວ່າ ຄວນຈະເລີ່ມການສຳຫຼວດໃນອາຄານນັ້ນ ຫຼື ບໍ.

- ເມື່ອນັກເດີນສຳຫຼວດເປີດໂປຣແກຣມແຜນທີ່ຂຶ້ນມາຄັ້ງທຳອິດ, ຈຸດຂອງອາຄານທັງໝົດຈະເປັນສີແດງ. ບັນດາຈຸດຂອງອາຄານຈະປ່ຽນສີໃນລະຫວ່າງສຳຫຼວດອາຄານ, ເຊິ່ງຂຶ້ນກັບຄວາມຄືບໜ້າຂອງການສຳຫຼວດໃນອາຄານ, ຈຸດສີແດງໝາຍເຖິງ ອາຄານນັ້ນຍັງບໍ່ໄດ້ເລີ່ມການສຳຫຼວດເທື່ອ;
- ນອກຈາກສີແດງແລ້ວ, ສີຈຸດຂອງອາຄານຍັງສາມາດເປັນໄດ້ອີກ 3 ສີ. ຈຸດສີເຫຼືອງ ໝາຍເຖິງອາຄານທີ່ໄດ້ເລີ່ມການສຳຫຼວດແລ້ວ ແຕ່ວ່າຍັງບໍ່ທັນສຳເລັດ;
- ຈຸດສີຂຽວ ໝາຍເຖິງການສຳຫຼວດທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ໃນອາຄານດັ່ງກ່າວແມ່ນສຳເລັດແລ້ວ. ໝາຍເຫດ: ອາຄານໜຶ່ງສາມາດມີຫຼາຍທີ່ຢູ່ອາໄສ ແລະ ຫຼາຍຄົວເຮືອນໄດ້. ນັກເດີນສຳຫຼວດຕ້ອງຈົດນັບເອົາທຸກໆທີ່ຢູ່ອາໄສທີ່ຢູ່ໃນອາຄານ ລວມທັງຄົວເຮືອນ ແລະ ບຸກຄົນທີ່ອາໄສຢູ່ໃນນັ້ນ;
- ຈຸດສີເທົາ ໝາຍເຖິງອາຄານນັ້ນບໍ່ມີທີ່ຢູ່ອາໄສ ແລະ ບໍ່ມີຄົວເຮືອນ ທີ່ຕ້ອງໄດ້ສຳຫຼວດ. ອາຄານດັ່ງກ່າວອາດຈະແມ່ນ ຮ້ານຄ້າ ແລະ ອາຄານການຄ້າຕ່າງໆ, ເຮືອນຄົວ, ຄອກລ້ຽງສັດ, ວັດ, ໂຮງງານ ແລະ ອື່ນໆທີ່ບໍ່ມີຄົນອາໄສຢູ່.

*ຮູບສະແດງ 2.2:ຈຸດຂອງອາຄານ ແລະ ລະຫັດສີຈຸດຂອງອາຄານ*




ຈຸດສີເຫຼືອງ ແລະ ສີຂຽວແມ່ນສາມາດມີສີຟ້າ ແລະ ສີແດງຢູ່ທາງກາງຂອງຈຸດໄດ້. ຈຸດທີ່ມີສີຟ້າຢູ່ທາງກາງຂອງຈຸດ ໝາຍເຖິງ ນັກເດີນສຳຫຼວດບໍ່ສາມາດຕິດຕໍ່ກັບຄົວເຮືອນທີ່ກຳລັງອາໄສຢູ່ໃນທີ່ຢູ່ອາໄສເພື່ອການສຳພາດໄດ້. ນັກເດີນສຳຫຼວດຕ້ອງໄປຫາທີ່ຢູ່ອາໄສນັ້ນຢ່າງໜ້ອຍ 3 ຄັ້ງ ຈຶ່ງຈະສາມາດກຳນົດສະຖານະອາຄານນັ້ນວ່າສຳເລັດການສຳຫຼວດ ໂດຍການ "ປິດ" ອາຄານ (ສີຈຸດຂອງອາຄານນັ້ນຈະປ່ຽນຈາກສີເຫຼືອງໄປເປັນສີຂຽວ). ຈຸດສີເຫຼືອງ ແລະ ສີຂຽວ ທີ່ມີສີແດງຢູ່ທາງກາງຂອງຈຸດ ແມ່ນໝາຍເຖິງ ອາຄານນັ້ນ ມີຄົວເຮືອນທີ່ບໍ່ຕ້ອງການຖືກຈົບນັບ (ຄົວເຮືອນປະຕິເສດ). ນັກເດີນສຳຫຼວດສາມາດປິດອາຄານທີ່ມີຄົວເຮືອນປະຕິເສດໄດ້ (ການກຳນົດສະຖານະຂອງອາຄານແມ່ນ "ສຳເລັດການສຳຫຼວດ", ສີຈຸດຂອງອາຄານນັ້ນຈະປ່ຽນຈາກສີເຫຼືອງໄປເປັນສີຂຽວ), ແຕ່ວ່ານັກກວດກາຕ້ອງໄປຫາຄົວເຮືອນດັ່ງກ່າວເພື່ອໂນ້ມນ້າວໃຫ້ເຂົາເຈົ້າໃຫ້ການຮ່ວມມືໃນການສຳຫຼວດ. ຮູບສະແດງ 2.3 ແມ່ນສະແດງແຜນທີ່ເຂດສຳຫຼວດ ແລະ ອາຄານທີ່ມີສີຈຸດສະຫັດສີທີ່ແຕກຕ່າງກັນທີ່ສາມາດປະກົດຂຶ້ນໃນແຜນທີ່.

**ການສຳຫຼວດໃນເຂດສຳຫຼວດ ຈະສຳເລັດກໍ່ຕໍ່ເມື່ອສີຈຸດຂອງອາຄານທັງໝົດປ່ຽນເປັນສີຂຽວ ຫຼື ສີເທົາ!,** ຖ້າວ່າໃນແຜນທີ່ເຂດສຳຫຼວດຍັງມີຈຸດສີແດງ ຫຼື ສີເຫຼືອງ, ນັກເດີນສຳຫຼວດຕ້ອງໄດ້ສືບຕໍ່ການສຳຫຼວດ ຫຼື ສືບຕໍ່ການປິດອາຄານເຫຼົ່ານັ້ນ (ຫຼື ອາດຈະສືບຕໍ່ເຮັດທັງສອງຢ່າງ).

*ຮູບສະແດງ 2.3: ແຜນທີ່ເຂດສຳຫຼວດ,ຈຸດຂອງອາຄານ ແລະ ລະຫັດສີຈຸດຂອງອາຄານ*



2.8.3. ບັນຊີອາຄານ

ບັນຊີອາຄານຢູ່ດ້ານລຸ່ມຂອງແຜນທີ່ (ອີງປກອບ E ໃນຮູບສະແດງ 2.1) ສະໜອງຂໍ້ມູນອາຄານໃຫ້ແກ່ຈຸດຂອງອາຄານໃນແຜນທີ່. ນັກເດີນສຳຫຼວດສາມາດເລື່ອນລາຍການຂຶ້ນເພື່ອເບິ່ງບັນຊີທັງໝົດໄດ້. ອາຄານໃນບັນຊີ ແລະ ອາຄານທີ່ສະແດງໃນແຜນທີ່ແມ່ນເຊື່ອມໂຍງກັນ, ໝາຍຄວາມວ່າ ພວກມັນສະແດງຄວາມຄືບໜ້າຂອງການສຳຫຼວດໃນອາຄານຄືກັນ. ດັ່ງນັ້ນ, ສີຈຸດຂອງອາຄານໃນແຜນທີ່ແມ່ນສີດຽວກັນກັບຈຸດຂອງອາຄານໃນບັນຊີ. ບັນຊີອາຄານຈະມີຂໍ້ມູນດັ່ງຕໍ່ໄປນີ້:

- ຄວາມຄືບໜ້າຂອງການສຳຫຼວດໃນອາຄານ, ສະແດງໃຫ້ເຫັນດ້ວຍສີຈຸດຂອງອາຄານ;
- ເລກທີອາຄານມີ 4 ຫຼັກ, ເລີ່ມຈາກ 0001 ໃນແຕ່ລະເຂດສຳຫຼວດ;
- ສະຖານະການການສຳຫຼວດ ໃນອາຄານ, ສອດຄ່ອງກັບສີຈຸດຂອງອາຄານເຊັ່ນ: ຍັງບໍ່ໄດ້ເລີ່ມການສຳຫຼວດ, ເລີ່ມການສຳຫຼວດແລ້ວ, ອາຄານມີທີ່ຢູ່ອາໄສແຕ່ບໍ່ສາມາດຕິດຕໍ່ໄດ້, ອາຄານມີທີ່ຢູ່ອາໄສແຕ່ຖືກປະຕິເສດການສຳພາດ, ການສຳຫຼວດສຳເລັດແລ້ວ, ສຳເລັດການສຳຫຼວດໂດຍບໍ່ສາມດຕິດຕໍ່ໄດ້, ສຳເລັດການສຳຫຼວດໂດຍຖືກປະຕິເສດ ແລະ ອາຄານບໍ່ມີທີ່ຢູ່ອາໄສ ຊຶ່ງບໍ່ຈຳເປັນຕ້ອງໄດ້ສຳຫຼວດ;
- ຄາດຄະເນຈຳນວນທີ່ຢູ່ອາໄສ: ການຄາດຄະເນຈຳນວນທີ່ຢູ່ອາໄສທີ່ໄດ້ເຮັດໃນລະຫວ່າງການແຕ້ມທີ່ໃນການກະກຽມການສຳຫຼວດ. ມັນສາມາດເປັນໄປໄດ້ທີ່ນັກເດີນສຳຫຼວດອາດຈະພົບວ່າມີທີ່ຢູ່ອາໄສໃນອາຄານຫຼາຍກວ່າທີ່ຄາດຄະເນໄວ້, ເຊິ່ງນັກເດີນສຳຫຼວດຕ້ອງໄດ້ຈົດນັບເອົາທີ່ຢູ່ອາໄສທັງໝົດ. ສຳລັບເຮືອນປົກກະຕິຢູ່ຕາມບ້ານ, ຄາດຄະເນຈຳນວນທີ່ຢູ່ອາໄສປົກກະຕິແລ້ວຈະມີ '1' ທີ່ຢູ່ອາໄສ, ແຕ່ໃນອາພາດເມັ້ນແມ່ນອາດຈະມີຫຼາຍເຖິງ 150 ທີ່ຢູ່ອາໄສກໍ່ເປັນໄດ້. ອາຄານທີ່ມີຈຸດປະສົງເພື່ອການຄ້າຄາດຄະເນຈຳນວນທີ່ຢູ່ອາໄສຈະມີ 0 ທີ່ຢູ່ອາໄສ. ແຕ່ວ່າມັນແມ່ນໜ້າທີ່ຂອງນັກເດີນສຳຫຼວດທີ່ຈະຕ້ອງໄດ້ກວດສອບວ່າ ເປັນອາຄານທີ່ນຳໃຊ້ສະເພາະເພື່ອການຄ້າເທົ່ານັ້ນ ຫຼື ມີສ່ວນໃດສ່ວນໃດໜຶ່ງຂອງອາຄານນັ້ນຖືກນຳໃຊ້ເປັນທີ່ຢູ່ອາໄສສຳລັບໜຶ່ງ ຫຼື ຫຼາຍຄົນ.

ເມື່ອເປີດແຜນທີ່ເຂດສຳຫຼວດຂຶ້ນມາ, ບັນຊີອາຄານແມ່ນຈະລຽງຕາມລຳດັບ, ໂດຍເລີ່ມຈາກເລກທີອາຄານ 0001 ທີ່ຢູ່ທາງເທິງສຸດຂອງບັນຊີອາຄານ ແລະ ອາຄານເລກທີ່ສຸດທ້າຍແມ່ນຈະຢູ່ລຸ່ມສຸດ. ແຕ່ວ່າ ເມື່ອແຕະໃສ່ຈຸດຂອງອາຄານໃນແຜນທີ່, ລາຍການອາຄານນັ້ນຈະປະກົດຢູ່ເທິງສຸດໃນບັນຊີ. ຕົວຢ່າງໃນຮູບ 2.4, ເລກທີອາຄານ 0028.

*ຮູບສະແດງ 2.4: ບັນຊີອາຄານ*




*ຮູບສະແດງ 2.5: ຂໍ້ມູນລາຍລະອຽດຂອງອາຄານ*



ເມື່ອແຕະໃສ່ອາຄານທີ່ຢູ່ໃນບັນຊີ, ໂປຣແກຣມຈະຂະຫຍາຍແຜນທີ່ໄປຫາອາຄານນັ້ນ ແລະ ຈະສະແດງຂໍ້ມູນຂອງອາຄານດັ່ງກ່າວ (ເລກທີອາຄານ, ສະຖານະການສຳຫຼວດ, ຄາດຄະເນຈຳນວນທີ່ຢູ່ອາໄສ).

2.8.4. ເຄື່ອງມືສຳລັບແຜນທີ່

ຢູ່ດ້ານລຸ່ມເບື້ອງຂວາມືຂອງແຜນທີ່ ມີຊຸດເຄື່ອງມືໃນການເຮັດວຽກຂອງໂປຣແກຣມແຜນທີ່ (ອີງປະກອບ D ໃນຮູບສະແດງ 2.1). ເຄື່ອງມືເຫຼົ່ານີ້ມີຄວາມສຳຄັນສຳລັບການສຳຫຼວດ ແລະ ການຈັດຕັ້ງປະຕິບັດຂັ້ນຕອນຂອງການສຳຫຼວດ.

| | |
|---|---|
| ⊕ | ***ປຸ່ມລະບຸຕຳແໜ່ງປະຈຸບັນ*** *(Current position icon)*. ເມື່ອກົດໃສ່ປຸ່ມນີ້, ສັນຍາລັກສີຟ້າຈະປະກົດຢູ່ໃນແຜນທີ່ ມັນບອກສະຖານທີ່ປະຈຸບັນຂອງແທັບເລັດ. ນັກເດີນສຳຫຼວດອາດຈະຕ້ອງໄດ້ລໍຖ້າໜ້ອຍໜຶ່ງ ແລະ ແຕະໃສ່ອີກຄັ້ງເພື່ອຄົ້ນຫາຕຳແໜ່ງຂອງຕົນໃຫ້ຊັດເຈນຂຶ້ນ. ເຄື່ອງມືນີ້ແມ່ນມີປະໂຫຍດຫຼາຍໃນການເຮັດວຽກຢູ່ພາກສະໜາມ ແລະ ການຄົ້ນຫາຕຳແໜ່ງວ່າປັດຈຸບັນຢູ່ບ່ອນໃດ, ຕົວຢ່າງ : ມັນຈະບອກໃຫ້ຮູ້ວ່າ ແມ່ນອາຄານໃດຢູ່ໃນແຜນທີ່ ຢູ່ຕໍ່ໜ້າບ່ອນທີ່ນັກເດີນສຳຫຼວດກຳລັງຢືນຢູ່. ໝາຍເຫດ: ຕຳແໜ່ງທີ່ແທ້ຈິງນັ້ນ ອາດຈະຄາດເຄື່ອນກັບຕົວຈິງປະມານສອງ ຫຼື ສາມແມັດ. ຖ້າວ່ານັກເດີນສຳຫຼວດເລີ່ມເຄື່ອນທີ່, ຕຳແໜ່ງປະຈຸບັນໃນແຜນທີ່ກໍ່ຈະເຄື່ອນທີ່ໄປໃນທິດທາງດຽວກັນກັບນັກເດີນສຳຫຼວດທີ່ກຳລັງເຄື່ອນທີ່ໄປ, ເຊິ່ງສາມາດຊ່ວຍໃຫ້ນັກເດີນສຳຫຼວດປັບທິດທາງຂອງຕົນເອງໄດ້ໃນເຂດດັ່ງກ່າວ. |
| ✚ | ***ປຸ່ມເພີ່ມ*** *(Add icon)*. ການກົດໃສ່ປຸ່ມນີ້ ຈະອະນຸຍາດໃຫ້ນັກເດີນສຳຫຼວດສາມາດເພີ່ມຈຸດຂອງອາຄານໃໝ່ໃສ່ໃນແຜນທີ່ໄດ້. ມັນອາດເປັນໄປໄດ້ວ່າຫຼັງຈາກການແຕ້ມແຜນທີ່ໃນການກະກຽມສຳຫຼວດມີການປຸກສ້າງອາຄານໃໝ່ຂຶ້ນມາ ຫຼື ຜູ້ແຕ້ມແຜນທີ່ອາດຈະບໍ່ໄດ້ໝາຍເອົາອາຄານດັ່ງກ່າວໃນເຂດສຳຫຼວດ. ໃນກໍລະນີນີ້, ນັກເດີນສຳຫຼວດຕ້ອງໄດ້ເພີ່ມຈຸດຂອງອາຄານໃສ່ໃນແຜນທີ່ ໂດຍການໃຊ້ປຸ່ມເພີ່ມ (Add icon).<br>ໝາຍເຫດ: ນັກເດີນສຳຫຼວດຄວນເພີ່ມອາຄານໃໝ່, ຖ້າວ່າອາຄານດັ່ງກ່າວ:<br>● ນຳໃຊ້ສຳລັບເປັນທີ່ຢູ່ອາໄສເທົ່ານັ້ນ, ລວມທັງເປັນທີ່ຢູ່ອາໄສສຳລັບຄົວເຮືອນລວມໝູ່ ຕົວຢ່າງ: ເຮືອນດ່ຽວ, ຫໍພັກນັກສຶກສາ ແລະ ອື່ນໆ;<br>● ນຳໃຊ້ເປັນທີ່ຢູ່ອາໄສ ແລະ ບໍ່ແມ່ນທີ່ຢູ່ອາໄສ (ແບບປະສົມ) ຕົວຢ່າງ: ອາພາດເມັ້ນທີ່ມີຮ້ານຄ້າຢູ່ຊັ້ນລຸ່ມຂອງອາຄານ.<br>ຂັ້ນຕອນການເພີ່ມຈຸດຂອງອາຄານໃໝ່ ແມ່ນໃຫ້ປະຕິບັດດັ່ງລຸ່ມນີ້:<br>1. ກົດໃສ່ປຸ່ມເພີ່ມ (Add icon) ໃນຊຸດເຄື່ອງມື;<br>2. ກົດໃສ່ຕຳແໜ່ງທີ່ຖືກຕ້ອງໃນແຜນທີ່ ບ່ອນທີ່ຄວນເພີ່ມຈຸດຂອງອາຄານໃໝ່, ແນະນຳໃຫ້ຂະຫຍາຍແຜນທີ່ອອກກ່ອນ ເຊິ່ງຈະເຮັດໃຫ້ສາມາດວາງຕຳແໜ່ງອາຄານໃໝ່ໄດ້ຢ່າງຊັດເຈນ;<br>3. ເຄື່ອງໝາຍລະບຸຕຳແໜ່ງ 📍 ຈະປະກົດຢູ່ໃນແຜນທີ່;<br>4. ກົດໃສ່ປຸ່ມຢືນຢັນ (✔) ທີ່ປະກົດຢູ່ດ້ານລຸ່ມເບື້ອງຂວາມືຂອງແຜນທີ່;<br>5. ໜ້າຕ່າງຈະປະກົດຂຶ້ນໃນໜ້າຈໍ ເພື່ອໃຫ້ນັກເດີນສຳຫຼວດໃສ່ຈຳນວນທີ່ຢູ່ອາໄສທັງໝົດທີ່ຢູ່ໃນອາຄານດັ່ງກ່າວ; |

| | |
|---|---|
| | 6. ຈຸດສີແດງທີ່ເປັນຕົວແທນຂອງອາຄານໃໝ່ທີ່ໄດ້ເພີ່ມເຂົ້າມາຈະປະກົດຂຶ້ນຢູ່ໃນແຜນທີ່.<br><br>ເປັນໄປໄດ້ທີ່ອາດຈະເກີດຂຶ້ນໂດຍບັງເອີນ, ທີ່ນັກເດີນສໍາຫຼວດກົດໃສ່ແຜນທີ່ຫຼາຍໆຄັ້ງ, ໂດຍວາງເຄື່ອງໝາຍລະບຸຕໍາແໜ່ງໄວ້ຫຼາຍບ່ອນ. ໃນກໍລະນີນີ້ ນັກເດີນສໍາຫຼວດຄວນປິດໂປຣແກຣມອອກກ່ອນ ແລ້ວຈຶ່ງເລີ່ມໃໝ່ອີກຄັ້ງ.<br><br>ຖ້າວ່າໄດ້ເພີ່ມຈຸດຂອງອາຄານໃໝ່ຂຶ້ນມາໂດຍບໍ່ໄດ້ຕັ້ງໃຈ, ໂປຣແກຣມຈະອະນຸຍາດໃຫ້ລະບຸສະຖານະຂອງອາຄານນັ້ນເປັນ "ເພີ່ມເຂົ້າມາໂດຍບໍ່ໄດ້ຕັ້ງໃຈ" (ສີຈຸດຂອງອາຄານຈະປ່ຽນເປັນສີເທົາ). |
| | ***ປຸ່ມກັ່ນຕອງ*** *(Filter icon).* ການໃຊ້ເຄື່ອງມືນີ້ແມ່ນອະນຸຍາດໃຫ້ນັກເດີນສໍາຫຼວດກັ່ນຕອງອາຄານຕາມສະຖານະການສໍາຫຼວດໃນອາຄານ ເຊັ່ນ: ຍັງບໍ່ໄດ້ເລີ່ມການສໍາຫຼວດ, ເລີ່ມການສໍາຫຼວດແລ້ວ, ອາຄານມີທີ່ຢູ່ອາໄສແຕ່ບໍ່ສາມາດຕິດຕໍ່ໄດ້, ອາຄານມີທີ່ຢູ່ອາໄສແຕ່ຖືກປະຕິເສດການສໍາພາດ, ການສໍາຫຼວດສໍາເລັດແລ້ວ, ສໍາເລັດການສໍາຫຼວດໂດຍບໍ່ສາມດຕິດຕໍ່ໄດ້, ສໍາເລັດການສໍາຫຼວດໂດຍຖືກປະຕິເສດ, ອາຄານບໍ່ມີທີ່ຢູ່ອາໄສ ແລະ ອາຄານທັງໝົດ. ເມື່ອແຕະໃສ່ປຸ່ມກັ່ນຕອງ, ຈະມີລາຍການປະກົດຂຶ້ນມາ ບ່ອນທີ່ສາມາດເລືອກສະຖານະຂອງການສໍາຫຼວດທີ່ຕ້ອງການເບິ່ງໃນແຜນທີ່ໄດ້. ຕົວຢ່າງ: ມັນສາມາດຊ່ວຍໃນການຄົ້ນຫາບັນດາອາຄານທີ່ຕ້ອງກັບໄປຫາເພື່ອພະຍາຍາມສໍາຫຼວດເອົາອີກຄັ້ງ, ນັກກວດກາສາມາດຄົ້ນຫາອາຄານທີ່ມີສະຖານະ "ບໍ່ຈໍາເປັນຕ້ອງສໍາຫຼວດ" ໄດ້ຢ່າງງ່າຍດາຍ ເພື່ອກວດສອບວ່າບໍ່ມີທີ່ຢູ່ອາໄສ ຫຼື ຄົວເຮືອນທີ່ຈະຕ້ອງຖືກສໍາຫຼວດແທ້ບໍ. |
| | ***ປຸ່ມເຊື່ອມຕໍ່ ສໍາລັບການສົ່ງຂໍ້ມູນ*** *(Synchronize icon).* ເປັນການໃຊ້ເຄື່ອງມືໃນການສົ່ງແບບສອບຖາມທີ່ປ້ອນຂໍ້ມູນສໍາເລັດຢູ່ໃນແທັບເລັດ ໄປຫາຖານຂໍ້ມູນການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສຂອງສູນກາງ, ເຊິ່ງເອີ້ນວ່າ "ການສົ່ງຂໍ້ມູນຫາສູນກາງ". ເພື່ອຮັບປະກັນການເກັບຮັກສາຂໍ້ມູນການສໍາຫຼວດໃຫ້ມີຄວາມປອດໄພ, ນັກເດີນສໍາຫຼວດຕ້ອງໄດ້ສົ່ງຂໍ້ມູນຫາສູນກາງທຸກໆມື້. ເພື່ອຫຼີກລ້ຽງບໍ່ໃຫ້ນັກເດີນສໍາຫຼວດສົ່ງຂໍ້ມູນຫາສູນກາງໃນເວລາດຽວກັນຫຼາຍເກີນໄປ ແລະ ເຮັດໃຫ້ການເຊື່ອມຕໍ່ສັນຍານໃນການສົ່ງຂໍ້ມູນຊ້າເກີນໄປ, ນັກເດີນສໍາຫຼວດຈະໄດ້ຮັບແຈ້ງວ່າໃນຊ່ວງເວລາໃດທີ່ຄວນສົ່ງຂໍ້ມູນຫາສູນກາງ. |
| | ***ປຸ່ມມູມມອງ*** *(Layers icon).* ຄ່າເລີ່ມຕົ້ນຂອງແຜນທີ່ເຂດສໍາຫຼວດແມ່ນສະແດງໃນຮູບແບບຂອງພາບຖ່າຍທາງອາກາດ. ການແຕະໃສ່ປຸ່ມມູມມອງຈະອະນຸຍາດໃຫ້ນັກເດີນສໍາຫຼວດສາມາດເລືອກຮູບແບບໃນການສະແດງຂອງແຜນທີ່ໄດ້. ເຊິ່ງມີຕົວເລືອກດັ່ງລຸ່ມນີ້:<br>● ແຜນທີ່ເສັ້ນທາງ (Roadmap) ສະແດງໃຫ້ເຫັນຖະໜົນ ແລະ ເສັ້ນທາງ (ບາງຄັ້ງກໍ່ສະແດງຊື່ຖະໜົນນໍາ) ຮູບຊົງ ແລະ ທີ່ຕັ້ງຂອງອາຄານ ແລະ ຊື່ສະເພາະຂອງອາຄານ ເຊັ່ນ: ໂຮງແຮມ, ຮ້ານອາຫານ, ອານຸສາວະລີ, ບັນດາກະຊວງຕ່າງໆ ແລະ ອື່ນໆ. (ເບິ່ງຮູບສະແດງ 2.6)<br>● ແຜນທີ່ແບບປະສົມ (Hybrid) ຈະສະແດງຮູບຖ່າຍທາງອາກາດ (ເປັນຕົວເລືອກຄ່າເລີ່ມຕົ້ນ)<br>● ແຜນທີ່ພາບຖ່າຍດາວທຽມ (Satellite) ແມ່ນສະແດງໃຫ້ເຫັນແຜນທີ່ໃນຮູບແບບຂອງພາບຖ່າຍດາວທຽມ. |
| | ***ປຸ່ມໂອນຍ້າຍຂໍ້ມູນ*** *(Transfer icon):* ນັກເດີນສໍາຫຼວດບາງທ່ານອາດຈະເຮັດວຽກໃນເຂດສໍາຫຼວດທີ່ບໍ່ມີສັນຍານອິນເຕີເນັດສໍາລັບການສົ່ງຂໍ້ມູນໃນແທັບເລັດໄປຫາສູນກາງ, ປຸ່ມໂອນຍ້າຍຂໍ້ມູນນີ້ເປັນອີກຂັ້ນຕອນໜຶ່ງໃນການສົ່ງຂໍ້ມູນໄປຫາສູນນກາງ. ໃນຂັ້ນຕອນນີ້ຂໍ້ມູນໃນເຄື່ອງແທັບເລັດຂອງນັກເດີນສໍາຫຼວດຈະຖືກສົ່ງໄປຫາແທັບເລັດຂອງນັກກວດກາ, ໂດຍໃຊ້ການເຊື່ອມຕໍ່ບລູທູດ (Bluetooth) ເຊິ່ງນັກກວດກາຈະຮູ້ຂັ້ນຕອນໃນການເຮັດວຽກດັ່ງກ່າວ. ນັກກວດກາສາມາດສົ່ງຂໍ້ມູນໄປຫາສູນກາງໄດ້ພາຍຫຼັງ |

| | |
|---|---|
| | ເມື່ອໄປຮອດເຂດທີ່ມີສັນຍານອິນເຕີເນັດ ແລະ ເຄື່ອງມືນີ້ຈະອະນຸຍາດໃຫ້ໂອນຍ້າຍຂໍ້ມູນທີ່ຍັງບໍ່ໄດ້ສົ່ງໄປຫາສູນກາງໄປຫາເຄື່ອງແທັບເລັດຂອງນັກກວດກາໄດ້. |

*ຮູບສະແດງ 2.6: ແຜນທີ່ເຂດສຳຫຼວດ ທີ່ສະແດງໃນຮູບແບບແຜນທີ່ເສັ້ນທາງ 'Roadmap'.*




## 2.9. ສິນລະປະການສຳພາດ

ໃນຖານະນັກເດີນສຳຫຼວດ, ການດຳເນີນການສຳພາດໃນຄັ້ງທຳອິດອາດເປັນວຽກງານທີ່ໜ້າກັງວົນຫຼາຍສຳລັບນັກເດີນສຳຫຼວດ. ໃນຂະນະດຽວກັນກໍ່ມີຄວາມຕ້ອງການຄວາມສາມາດໃນການສຳພາດຢ່າງເປັນທຳມະຊາດ, ເຊິ່ງສິລະປະໃນການສຳພາດນັ້ນຈະໄດ້ຮັບການປັບປຸງໄປຕາມການສຳພາດຕົວຈິງ. ການປະຕິບັດຕາມລະບຽບ ແລະ ຫຼັກການ ເຮັດໃຫ້ນັກເດີນສຳຫຼວດປະສົບຜົນສຳເລັດໃນການສຳພາດ. ໃນພາກນີ້, ນັກເດີນສຳຫຼວດຈະໄດ້ຮັບຄຳແນະນຳຫຼາຍຢ່າງກ່ຽວກັບການສ້າງສາຍສຳພັນກັບຜູ້ຖືກສຳພາດ ແລະ ການດຳເນີນການສຳພາດໃຫ້ປະສົບຜົນສຳເລັດ.

- ຄວາມປະທັບໃຈທຳອິດທີ່ນັກເດີນສຳຫຼວດເຮັດຕໍ່ກັບຜູ້ຖືກສຳພາດ ແມ່ນເປັນສິ່ງທີ່ສຳຄັນທີ່ສຸດ. ໃຫ້ຈື່ໄວ້ວ່າ ນັກເດີນສຳຫຼວດຈະໄດ້ຮັບໂອກາດພຽງຄັ້ງດຽວໃນການສ້າງຄວາມປະທັບໃຈຄັ້ງທຳອິດ. ນັກເດີນສຳຫຼວດຕ້ອງແຕ່ງກາຍໃຫ້ສຸພາບ ແລະ ຕ້ອງນຸ່ງເສື້ອການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທີ່ສູນສະຖິຕິແຫ່ງຊາດແຈກຢາຍໃຫ້, ສະແດງບັດນັກເດີນສຳຫຼວດຕໍ່ຜູ້ຖືກສຳພາດ ແລະ ເລີ່ມການສຳພາດດ້ວຍຮອຍຍິ້ມ ແລະ ການທັກທາຍທີ່ເປັນມິດສະເໝີ. ແນະນຳຕົວເອງວ່າແມ່ນນັກເດີນສາຫາວດພາກສະໜາມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ນຳສະເໜີຕົວເອງດ້ວຍຄວາມໝັ້ນໃຈ ແລະ ຮູ້ວ່າກຳລັງເຮັດຫຍັງຢູ່. ນອກຈາກນີ້, ນັກເດີນສຳຫຼວດຈະຕ້ອງໄດ້ທຳຄວາມຄຸ້ນເຄີຍກັບວັດທະນະທຳ ແລະ ຮີດຄອງປະເພນີຂອງເຂດພື້ນທີ່ທີ່ກຳລັງສຳຫຼວດຢູ່;

- ອະທິບາຍຈຸດປະສົງໃນການມາເຮັດວຽກ ແລະ ຖາມວ່າສະດວກທີ່ຈະໃຫ້ດຳເນີນການສຳພາດໃນເວລານັ້ນ ຫຼື ບໍ. ໂປຼແກຼມແບບສອບຖາມຈະມີຂໍ້ມູນກ່ຽວກັບວິທີການດຳເນີນການດັ່ງກ່າວໃຫ້ກັບນັກເດີນສຳຫຼວດ. ຮຽນຮູ້ຄຳແນະນຳພື້ນຖານເຫຼົ່ານີ້ໃຫ້ຈື່ໄດ້ຂຶ້ນໃຈ ເພື່ອທີ່ຈະບໍ່ຕ້ອງອ່ານຈາກແທັບເລັດ ແຕ່ສາມາດອະທິບາຍໄດ້ຢ່າງເປັນທຳມະຊາດ;

- ຖ້າເປັນໄປໄດ້ ໃຫ້ນັກເດີນສຳຫຼວດອະທິບາຍຈຸດປະສົງຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ມັນຈະເປັນປະໂຫຍດແນວໃດຕໍ່ພົນລະເມືອງລາວ. ເບິ່ງໃນພາກທີ 1.3 ຂອງຄູ່ມືສະບັບນີ້;

- ໃນສ່ວນໜຶ່ງຂອງການແນະນຳຕົນເອງ, ນັກເດີນສຳຫຼວດຄວນເນັ້ນເຖິງການຮັກສາຄວາມລັບຂອງຂໍ້ມູນການສຳຫຼວດ ທີ່ຜູ້ຖືກສຳພາດຕອບ. ສຳລັບເຫດຜົນນີ້, ນັກເດີນສາຫຼວດຄວນສຳພາດໃນສະຖານທີ່ທີ່ມີຄວາມເປັນສ່ວນຕົວ, ໂດຍບໍ່ມີຄົນທີ່ບໍ່ແມ່ນສະມາຊິກຄົວເຮືອນຢູ່ນຳ;
- ການນັ່ງສຳພາດຢູ່ໃນເຮືອນຈະເຮັດໃຫ້ການສຳພາດງ່າຍຂຶ້ນ, ໂດຍສະເພາະຖ້າວ່າສະພາບອາກາດບໍ່ເອື້ອອຳນວຍ. ນັກເດີນສຳຫຼວດອາດຈະຖາມຜູ້ຖືກສຳພາດຢ່າງສຸພາບວ່າເຕັມໃຈທີ່ຈະໃຫ້ສຳພາດຢູ່ໃນເຮືອນ ຫຼື ບໍ, ແຕ່ວ່າບໍ່ໃຫ້ກົດດັນຜູ້ຖືກສຳພາດຫຼາຍເກີນໄປ;
- ກຽມພ້ອມໃນການຕອບຄຳຖາມກ່ຽວກັບການສຳຫຼວດ. ໃນລະຫວ່າງການແນະນຳຕົວ ຫຼື ລະຫວ່າງການສຳພາດ, ຜູ້ຖືກສຳພາດອາດຈະມີຄຳຖາມກ່ຽວກັບການສຳຫຼວດ. ຕົວຢ່າງ:
  - ກ່ຽວກັບເວລາທີ່ຈະໃຊ້ໃນການສຳພາດ (ຈະໃຊ້ເວລາປະມານ 6-7 ນາທີ ຕໍ່ສະມາຊິດຄົວເຮືອນໜຶ່ງຄົນ ແລະ ສະເລ່ຍປະມານ 30 ນາທີ ຕໍ່ໜຶ່ງຄົວເຮືອນ)
  - ຈຸດປະສົງຂອງການສຳຫຼວດ (ເບິ່ງໃນພາກທີ 1.3 ຂອງຄູ່ມືສະບັບນີ້)
  - ການຮັກສາຄວາມລັບຂອງຂໍ້ມູນ (ເບິ່ງໃນພາກທີ 1.6 ຂອງຄູ່ມືສະບັບນີ້)
  - ບຸກຄົນທີ່ຕ້ອງຖືກຈົດນັບ (ເບິ່ງໃນພາກທີ 2.5 ຂອງຄູ່ມືສະບັບນີ້)
  - ຈຸດປະສົງ ແລະ ຄວາມໝາຍຂອງຄຳຖາມສະເພາະເຈາະຈົງໃດໜຶ່ງ (ເບິ່ງໃນພາກທີ 4 ຂອງຄູ່ມືສະບັບນີ້).
- ການແນະນຳຕົວທີ່ສຸພາບ, ເປັນມິດ ແລະ ໝັ້ນໃຈ ແມ່ນບາດກ້າວທຳອິດທີ່ສຳຄັນເພື່ອສ້າງສາຍສຳພັນກັບຜູ້ຖືກສຳພາດ. ສິ່ງເຫຼົ່ານີ້ສາມາດປັບປຸງຄວາມສຳພັນ ແລະ ເຮັດໃຫ້ຜູ້ຖືກສຳພາດຮູ້ສຶກສະບາຍໃຈຂຶ້ນ. ຈະເປັນປະໂຫຍດຫຼາຍຖ້າວ່ານັກເດີນສຳຫຼວດຂະຫຍາຍຄວາມໂດຍການເວົ້າຢ່າງຊ້າໆ, ຊັດເຈນ ແລະ ໃຫ້ເວລາກັບຜູ້ຖືກສຳພາດໄດ້ຄິດ. ຖ້າວ່າຜູ້ຖືກສຳພາດຮູ້ສຶກວ່າຮີບຮ້ອນ ຫຼື ບໍ່ໄດ້ຮັບອະນຸຍາດໃຫ້ສະແດງຄວາມຄິດເຫັນ, ພວກເຂົາອາດຈະໃຫ້ຄຳຕອບທີ່ບໍ່ຊັດເຈນ ຫຼື ຕອບກັບມາວ່າ "ບໍ່ຮູ້", ເຊິ່ງຈະສົ່ງຜົນໃຫ້ຕ້ອງໄດ້ອະທິບາຍເພີ່ມເຕີມ ຫຼື ຖາມເຈາະຈີ້ມຫາຄຳຕອບຕື່ມອີກ;
- ຮັກສາທັດສະນະຄະຕິທີ່ເປັນກາງຕະຫຼອດການສຳພາດ. ຄົນສ່ວນຫຼາຍຈະສຸພາບໂດຍສະເພາະກັບຄົນແປກໜ້າ ແລະ ມີທ່າອ່ຽງທີ່ຈະໃຫ້ຄຳຕອບຕາມທັດສະນະທາງສັງຄົມ ຫຼື ຕອບຕາມແນວທາງທີ່ພວກເຂົາຄິດວ່າຜູ້ສຳພາດຄາດຫວັງຈາກພວກເຂົາ. ດັ່ງນັ້ນ, ນັກເດີນສຳຫຼວດຕ້ອງບໍ່ສະແດງທັດສະນະຄະຕິຂອງຕົນເອງ ເຊັ່ນ: ຄຸນຄ່າທາງວັດທະນະທຳ, ສາສະໜາ, ຄວາມມັກຮັກທາງດ້ານການເມືອງ ຫຼື ສະແດງຄວາມປະຫຼາດໃຈ, ການເຫັນດີເຫັນພ້ອມ ຫຼື ບໍ່ເຫັນດ້ວຍກັບຄຳຕອບຂອງຜູ້ຖືກສຳພາດດ້ວຍຄວາມຄິດເຫັນ, ນ້ຳສຽງ ຫຼື ການສະແດງອອກທາງສີໜ້າຂອງຕົນ;
- ເຖິງຢ່າງໃດກໍຕາມ, ພະຍາຍາມບໍ່ໃຊ້ເວລາຫຼາຍເກີນໄປໃນການຕອບຄຳຖາມທີ່ບໍ່ຈຳເປັນ ຫຼື ມີສ່ວນຮ່ວມໃນການສົນທະນາທາງສັງຄົມ. ຖ້າວ່າຜູ້ຖືກສຳພາດສົນທະນານອກເລື່ອງໃນລະຫວ່າງການສຳພາດ, ນັກເດີນສຳຫຼວດບໍ່ຄວນແຊກໃນການສົນທະນາຂອງເຂົາເຈົ້າ, ແຕ່ຫຼັງຈາກຟັງການສົນທະນາແລ້ວ, ໃຫ້ພະຍາຍາມນຳພາການສົນທະນາກັບຄືນມາຫາແບບສອບຖາມຢ່າງສຸພາບ. ນັກເດີນສຳຫຼວດອາດຈະຫຼີກລ້ຽງການບ່ຽງເບນຄວາມສົນໃຈຕື່ມອີກໄດ້ໂດຍການແນະນຳວ່າທ່ານຍັງຈະຕ້ອງໄດ້ສຳພາດອີກຫຼາຍຄົວເຮືອນໃຫ້ສຳເລັດໃນມື້ນີ້.
- ບໍ່ຕ້ອງຄາດເດົາວ່າຕົນເອງຮູ້ຄຳຕອບຂອງຄຳຖາມນັ້ນ ແລະ ບັນທຶກຄຳຕອບໂດຍບໍ່ຖາມຄຳຖາມຢ່າງຊັດເຈນຕາມຂໍ້ຄວາມທີ່ສະແດງໃນແທັບເລັດ. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະເກັບກຳຂໍ້ມູນຈາກປະຊາຊົນ, ບໍ່ແມ່ນຈາກນັກເດີນສຳຫຼວດເອງ! ມັນແມ່ນໜ້າທີ່ຂອງນັກເດີນສຳຫຼວດທີ່ຕ້ອງຖາມຄຳຖາມ ແລະ ບັນທຶກຄຳຕອບ, ໃນຂະນະທີ່ບົດບາດຂອງຜູ້ຖືກສຳພາດແມ່ນການຕອບຄຳຖາມ. ຖ້າວ່ານັກເດີນສຳ

ຫຼວດຮູ້ສຶກອຶດອັດໃຈໃນການຖາມຄຳຖາມທີ່ເບິ່ງຄືວ່າຄຳຕອບນັ້ນຊັດເຈນແລ້ວ (ເຊັ່ນ: ເພດຂອງບຸກຄົນ), ໃຫ້ອະທິບາຍການແບ່ງປົດບາດນີ້ ແລະ ນັກເດີນສຳຫຼວດບໍ່ໄດ້ຮັບອະນຸຍາດໃຫ້ບັນທຶກຂໍ້ມູນທີ່ຜູ້ຖືກສຳພາດບໍ່ໄດ້ໃຫ້ມາ.

- ບໍ່ໃຫ້ແນະນຳຄຳຕອບແກ່ຜູ້ຖືກສຳພາດ ຫຼື ອ່ານຄຳຕອບທີ່ກຳນົດໄວ້ລ່ວງໜ້າໃນແທັບເລັດ ນອກຈາກວ່າມີຄຳແນະນຳຈະລະບຸໄວ້ຢ່າງຈະແຈ້ງວ່າຄວນອ່ານລາຍການຕົວເລືອກຄຳຕອບ. ເນື່ອງຈາກວ່າ, ຄົນສ່ວນຫຼາຍມີທ່າອ່ຽງທີ່ຈະປະຕິບັດຕາມນັກເດີນສຳຫຼວດ, ຄຳແນະນຳຂອງນັກເດີນສຳຫຼວດຈຶ່ງອາດຈະມີຜົນຕໍ່ຄຳຕອບທີ່ໄດ້ມາ. ນອກຈາກນີ້, ລຳດັບຂອງຕົວເລືອກຄຳຕອບກໍ່ອາດຈະມີຜົນຕໍ່ຄຳຕອບຂອງຜູ້ຖືກສຳພາດໄດ້. ດັ່ງນັ້ນ, ນັກເດີນສຳຫຼວດຄວນພຽງແຕ່ອ່ານລາຍການຕົວເລືອກຄຳຕອບເມື່ອມີຄຳແນະນຳທີ່ລະບຸຢ່າງຊັດເຈນໃນໂປຼແກຼມແບບສອບຖາມວ່າໃຫ້ອ່ານລາຍການຄຳຕອບນັ້ນ.
- ຖາມຄຳຖາມຂອງການສຳຫຼວດຢ່າງຖືກຕ້ອງຕາມທີ່ໄດ້ສະແດງໃນໜ້າຈໍແທັບເລັດ ແລະ ຕາມລຳດັບຂອງແບບສອບຖາມ. ຄຳຖາມ ແລະ ລຳດັບຂອງຄຳຖາມໄດ້ຖືກອອກແບບ ແລະ ທົດລອງຢ່າງລະອຽດຖີ່ຖ້ວນແລ້ວ; ການປ່ຽນຄຳສັບເລັກນ້ອຍໃນປະໂຫຍກຄຳຖາມກໍ່ສາມາດປ່ຽນຄວາມໝາຍຂອງຄຳຖາມ ແລະ ມີຜົນກະທົບຕໍ່ຄຳຕອບໄດ້. ສາມຕົວຢ່າງຕໍ່ໄປນີ້ຈະສະແດງໃຫ້ເຫັນການປ່ຽນແປງເລັກນ້ອຍທີ່ອາດມີຜົນຕໍ່ຄຳຕອບ.

| | |
|---|---|
| *ໃນອາທິດຜ່ານມາ, ທ່ານ ພັນທະວົງ ໄດ້ເຮັດວຽກ(ອື່ນໆ) ທີ່ສ້າງລາຍຮັບບໍ, ເຖິງແມ່ນວ່າຈະໃຊ້ເວລາພຽງແຕ່ 1 ຊົ່ວໂມງກໍ່ຕາມ, ຕົວຢ່າງ: ວຽກທີ່ໄດ້ຮັບຄ່າຈ້າງ, ທຸລະກິດຕົນເອງ, ວຽກປະຈຳ, ວຽກເສີມ, ວຽກພິເສດ, ເຮັດເຄື່ອງຂາຍ, ໃຫ້ບໍລິການທີ່ໄດ້ຮັບຄ່າຈ້າງບໍ?* | ຄຳວ່າ 'ພຽງແຕ່ 1 ຊົ່ວໂມງ' ແມ່ນສຳຄັນຫຼາຍ, ເຊິ່ງຈະເຮັດໃຫ້ຜູ້ຖືກສຳພາດຮູ້ວ່າພຽງແຕ່ວຽກເລັກໆນ້ອຍໆໃນອາທິດທີ່ອ້າງອີງເຖິງກໍ່ຄວນຖືກລາຍງານ. ຖ້ານັກເດີນສຳຫຼວດບໍ່ຄຳນຶງເຖິງສິ່ງນີ້ໃນຄຳຖາມ, ຄົນສ່ວນຫຼາຍຈະບໍ່ລາຍງານວຽກເລັກໆນ້ອຍໆເຫຼົ່ານີ້, ເຊິ່ງໝາຍຄວາມວ່າຂໍ້ມູນການສຳຫຼວດບໍ່ສາມາດວັດແທກການຈ້າງງານອີງຕາມນິຍາມທີ່ເປັນທາງການໄດ້.<br><br>ນອກຈາກນີ້ຍັງສົ່ງຜົນຕໍ່ຄວາມຄາດເຄື່ອນລະຫວ່າງ ເພດ ແລະ ອາຍຸໃນຂໍ້ມູນການສຳຫຼວດ, ເນື່ອງຈາກວ່າ ມັນເກີດຂຶ້ນເລື້ອຍໆກັບຜູ້ຍິງ, ຄົນໜຸ່ມສາວ ແລະ ຜູ້ເຖົ້າ ຜູ້ທີ່ເຮັດວຽກພຽງ ສອງ ຫຼື ສາມຊົ່ວໂມງເທົ່ານັ້ນ, ການມີສ່ວນຮ່ວມໃນຕະຫຼາດແຮງງານ ແລະ ການມີສ່ວນຮ່ວມຕໍ່ເສດຖະກິດຈະຖືກປະເມີນຕ່ຳເກີນໄປ. |
| *ນ. ທິບຈັນທາ ເຄີຍເກີດລູກທີ່ມີຊີວິດບໍ?* | ຄຳວ່າ 'ເກີດລູກມີຊີວິດ' ຈະບໍ່ລວມເອົາເດັກທີ່ຕາຍໃນທ້ອງກ່ອນການເກີດ. ຖ້າວ່ານັກເດີນສຳຫຼວດບໍ່ໄດ້ລະບຸຄຳນີ້ໃນຄຳຖາມຢ່າງຊັດເຈນ, ພວກເຂົາອາດຈະລວມເອົາເດັກທີ່ຕາຍໃນທ້ອງນຳ, ເຊິ່ງໝາຍຄວາມວ່າການປະເມີນອັດຕາການຈະເລີນພັນ ແລະ ອັດຕາການເສຍຊີວິດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສຈະບໍ່ຖືກຕ້ອງ. |
| *ທ. ສົມຍິງ ມີຄວາມຫຍຸ້ງຍາກໃນການເບິ່ງເຫັນບໍ ເຖິງແມ່ນວ່າຈະໃສ່ແວ່ນຕາກໍ່ຕາມ?* | ຖ້າບໍ່ໄດ້ລະບຸຢ່າງຊັດເຈນວ່າ '*ເຖິງແມ່ນວ່າຈະໃສ່ແວ່ນຕາກໍ່ຕາມ*, ຜູ້ຖືກສຳພາດທີ່ໃສ່ແວ່ນຕາອາດຈະຄິດວ່າພວກເຂົາມີບັນຫາໃນການເບິ່ງເຫັນ, ໃນຂະນະທີ່ໃສ່ແວ່ນຕາ, ພວກເຂົາມີການເບິ່ງເຫັນທີ່ຊັດເຈນ. ດັ່ງນັ້ນ, ສິ່ງສຳຄັນແມ່ນ ຕ້ອງລະບຸວ່າ '*ເຖິງແມ່ນວ່າຈະໃສ່ແວ່ນຕາກໍ່ຕາມ*', ເນື່ອງຈາກຄຳຕອບຄວນໝາຍເຖິງການເບິ່ງເຫັນທີ່ມີແວ່ນຕາຖ້າບຸກຄົນທີ່ຖືກອ້າງອີງເຖິງໃສ່ແວ່ນຕາ. |

- ຫຼັງຈາກທີ່ນັກເດີນສຳຫຼວດຖາມຄຳຖາມແລ້ວ, ໃຫ້ຢຸດຄ້າງໄວ້ກ່ອນ ແລະ ໃຫ້ເວລາຜູ້ຖືກສຳພາດໄດ້ຄິດ. ຖ້າຜູ້ຖືກສຳພາດຮູ້ສຶກວ່າຮີບຮ້ອນເກີນໄປ ຫຼື ບໍ່ມີເວລາຄິດ, ພວກເຂົາອາດຈະຕອບວ່າ "ບໍ່ຮູ້" ຫຼື ໃຫ້ຄຳຕອບທີ່ບໍ່ຊັດເຈນ;

- ບາງຄຳຖາມຂອງການສຳຫຼວດອາດຈະມີຄວາມລະອຽດອ່ອນຕໍ່ຜູ້ຖືກສຳພາດບາງຄົນ. ອາດເປັນຄຳຖາມທີ່ກ່ຽວກັບການຮູ້ໜັງສື ຫຼື ຄວາມພິການ ຫຼື ຄຳຖາມກ່ຽວກັບເດັກທີ່ແມ່ຍິງຜູ້ທີ່ລູກຂອງລາວໄດ້ເສຍຊີວິດໄປແລ້ວ ຫຼື ຄຳຖາມກ່ຽວກັບການແຕ່ງງານຂອງໄວໜຸ່ມຍິງ. ເຮັດໃຫ້ແນ່ໃຈວ່າໄດ້ຖາມຄຳຖາມຢ່າງສຸພາບ ແລະ ເຫັນອົກເຫັນໃຈ. ຄຳຖາມອື່ນໆກໍ່ມີຄວາມລະອຽດອ່ອນໃນທາງອື່ນໆ ຕົວຢ່າງ: ຄຳຖາມທີ່ກ່ຽວກັບຊົນເຜົ່າ ແລະ ສາສະໜາອາດຈະມີຄວາມລະອຽດອ່ອນທາງດ້ານການເມືອງ ຫຼື ວັດທະນະທຳ. ຖາມຄຳຖາມເຫຼົ່ານີ້ດ້ວຍຄວາມລະມັດລະວັງ ແລະ ຄວາມສຸພາບ ແລະ ບໍ່ໃຫ້ມີສ່ວນຮ່ວມໃນການສົນທະນາທາງດ້ານການເມືອງ;

- ໂປຼແກຼມແບບສອບຖາມແມ່ນໂປຼແກຼມທີ່ມີການກວດສອບຄວາມບໍ່ສອດຄ່ອງຂອງການບັນທຶກຄຳຕອບ ຫຼື ຄຳຕອບທີ່ບໍ່ໜ້າເຊື່ອຖືໄດ້. ຕົວຢ່າງ: ມັນອາດຈະບໍ່ສອດຄ່ອງກັນຖ້າວ່າອາຍຸຂອງແມ່ ແມ່ນໜ້ອຍກວ່າອາຍຸຂອງລູກ ຫຼື ອາດເປັນໄປບໍ່ໄດ້ຖ້າວ່າຜູ້ຖືກສຳພາດບອກວ່າລາວເຮັດວຽກ 120 ຊົ່ວໂມງ ຕໍ່ໜຶ່ງອາທິດ. ຄວາມບໍ່ສອດຄ່ອງອາດເກີດຂຶ້ນໄດ້ຖ້າວ່ານັກເດີນສຳຫຼວດບັນທຶກຄຳຕອບທີ່ບໍ່ຖືກຕ້ອງໂດຍບໍ່ໄດ້ຕັ້ງໃຈ ຫຼື ຜູ້ຖືກສຳພາດໃຫ້ຂໍ້ມູນທີ່ບໍ່ສອດຄ່ອງ. ໂປຼແກຼມຈະເຕືອນໃຫ້ນັກເດີນສຳຫຼວດແກ້ໄຂຄຳຕອບດັ່ງກ່າວ ແລະ ໃຫ້ຄຳແນະນຳກ່ຽວກັບການແກ້ໄຂ.

- ນັກເດີນສຳຫຼວດເອງອາດຈະກວດພົບຄຳຕອບທີ່ອາດຈະເປັນບັນຫາໄດ້ເຊັ່ນ ຖ້າວ່ານັກເດີນສຳຫຼວດຈົດນັບຄົວເຮືອນກະສິກຳ ແລະ ຄຳຕອບຂອງຄຳຖາມທີ່ຖາມເຖິງການນຳໃຊ້ທີ່ດິນກະສິກຳເປັນຄ່າລົບ. ໃນກໍລະນີນີ້, ນັກເດີນສຳຫຼວດຄວນຖາມຄຳຖາມເພີ່ມເຕີມເພື່ອອະທິບາຍຄຳຖາມ ແລະ ອະທິບາຍໃຫ້ເຫັນພາບຂອງສະຖານະການທີ່ຊັດເຈນ. ອາດຈະແມ່ນຍ້ອນຜູ້ຖືກສຳພາດບໍ່ເຂົ້າໃຈຄຳຖາມ ຫຼື ນັກເດີນສຳຫຼວດອາດຈະບໍ່ເຂົ້າໃຈຄຳຕອບ. ທາງທີ່ດີ ບໍ່ຄວນຮຽບຮຽງປະໂຫຍກຄຳຖາມຄືນໃຫມ່, ແຕ່ຖ້າວ່າໄດ້ຮຽບຮຽງປະໂຍກຄຳຖາມຄືນໃໝ່ແລ້ວ, ນັກເດີນສຳຫຼວດຕ້ອງກວດສອບໃຫ້ແນ່ໃຈວ່າບໍ່ໄດ້ປ່ຽນແປງຄວາມໝາຍຂອງຄຳຖາມ. ເຖິງຢ່າງໃດກໍ່ຕາມ, ບໍ່ໃຫ້ຮູ້ສຶກວ່າກຳລັງທົດສອບຄວາມຊື່ສັດ ຫຼື ຄວາມສົມບູນແບບຂອງຜູ້ຖືກສຳພາດ. ໃນຕອນທ້າຍຂອງການສຳພາດນັກເດີນສຳຫຼວດຕ້ອງກົດຍອມຮັບຄຳຕອບຂອງຜູ້ຖືກສຳພາດ;

- ອາດມີບາງຄັ້ງທີ່ນັກເດີນສຳຫຼວດຕ້ອງພົບກັບບັນຫາການປະຕິເສດຈາກຄົວເຮືອນທີ່ຈະຖືກສຳພາດ. ໃຫ້ນັກເດີນສຳຫຼວດໃຈເຢັນ ແລະ ສຸພາບຕະຫຼອດເວລາ. ພະຍາຍາມຫາເຫດຜົນຂອງການປະຕິເສດ ແລະ ພະຍາຍາມຜ່ອນຄາຍຄວາມກັງວົນ ຫຼື ຂໍ້ຂັດແຍ້ງຂອງຜູ້ຖືກສຳພາດ. ຖ້າວ່ານັກເດີນສຳຫຼວດບໍ່ປະສົບຜົນສຳເລັດໃນການໂນ້ມນ້າວ, ໃຫ້ບອກວ່າຈະຕ້ອງໄດ້ລາຍງານເລື່ອງນີ້ໃຫ້ນັກກວດກາ ແລະ ອອກຈາກສະຖານທີ່ນັ້ນ. ບໍ່ໃຫ້ບອກວ່າສາມາດລົງໂທດການບໍ່ໃຫ້ຄວາມຮ່ວມມືໃນການສຳຫຼວດ ຍົກເວັ້ນແຕ່ຜູ້ໃຫ້ສຳພາດຖາມກ່ຽວກັບເລື່ອງນີ້. ນັກກວດກາຈະມີໜ້າທີ່ປຶກສາຫາລືກ່ຽວກັບພັນທະທາງດ້ານກົດໝາຍ ແລະ ການລົງໂທດຖ້າຫາກຈຳເປັນ. ໂປຼແກຼມແບບສອບຖາມຈະອະນຸຍາດໃຫ້ນັກເດີນສຳຫຼວດບັນທຶກການປະຕິເສດນີ້ໄດ້ຖ້າຫາກມັນເກີດຂຶ້ນ;

- ອາດມີບາງກໍລະນີທີ່ບາງຄົວເຮືອນບໍ່ສະດວກໃນເວລາທີ່ນັກເດີນສຳຫຼວດໄປສຳພາດ ແລະ ນັກເດີນສຳຫຼວດຕ້ອງໄດ້ນັດໝາຍເວລາໄວ້ເພື່ອກັບໄປຫາອີກຄັ້ງຕໍ່ໄປ. ຕ້ອງໃຫ້ແນ່ໃຈວ່າຈະກັບຄືນໄປໃນເວລາທີ່ໄດ້ນັດໝາຍໄວ້, ເນື່ອງຈາກວ່າ ຜູ້ຖືກສຳພາດອາດຈະລໍຖ້າຢູ່;

- ເມື່ອກຳລັງຈະອອກຈາກຄົວເຮືອນ, ໃຫ້ຈື່ໄວ້ສະເໝີວ່າຕ້ອງສະແດງຄວາມຂອບໃຈສຳລັບເວລາການສະຫຼະເວລາ ແລະ ການຮ່ວມມືຂອງເຂົາເຈົ້າ;

- ມັນອາດຈະເປັນໄປບໍ່ໄດ້ທີ່ນັກເດີນສຳຫຼວດຈະບໍ່ສາມາດພົບກັບສະມາຊິກຄົວເຮືອນໝົດທຸກຄົນໃນລະຫວ່າງທີ່ໄປສຳພາດຄົວເຮືອນນັ້ນ ແລະ ມັນກໍ່ບໍ່ຈຳເປັນທີ່ຈະພົບກັບສະມາຊິກໝົດທຸກຄົນ.
  - ທຸກຂໍ້ມູນກ່ຽວກັບທີ່ຢູ່ອາໄສ ແລະ ຄົວເຮືອນ ຄວນຖາມຈາກຫົວໜ້າຄົວເຮືອນ. ຖ້າວ່າຫົວໜ້າຄົວເຮືອນບໍ່ຢູ່ ຫຼື ຫົວໜ້າຄົວເຮືອນບໍ່ແມ່ນບຸກຄົນທີ່ດີທີ່ສຸດໃນການໃຫ້ຂໍ້ມູນເນື່ອງຈາກວ່າ: ອາຍຸຫຼາຍເກີນໄປ ຫຼື ພິການ, ສະນັ້ນ ສາມາດຖາມຂໍ້ມູນຈາກຜູ້ໃຫຍ່ໃນຄົວເຮືອນນັ້ນທີ່ສາມາດຕອບຄຳຖາມໄດ້;
  - ຂໍ້ມູນກ່ຽວກັບຜູ້ໃຫຍ່ໃນຄົວເຮືອນແມ່ນຄວນຖາມຈາກຕົວບຸກຄົນເອງ. ຖ້າວ່າບຸກຄົນນັ້ນບໍ່ຢູ່ ຫຼື ບໍ່ສາມາດຕອບຄຳຖາມໄດ້, ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຄົນອື່ນສາມາດຕອບຄຳຖາມແທນໄດ້;
  - ຂໍ້ມູນກ່ຽວກັບເດັກນ້ອຍໃນຄົວເຮືອນແມ່ນໃຫ້ຖາມຈາກພໍ່ແມ່ຂອງເຂົາເຈົ້າ. ຖ້າວ່າພໍ່ແມ່ຂອງເຂົາບໍ່ຢູ່ ຫຼື ບໍ່ສາມາດຕອບຄຳຖາມໄດ້, ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຄົນອື່ນສາມາດຕອບຄຳຖາມແທນໄດ້;
  - ຖ້າວ່າບໍ່ມີສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຢູ່ເຮືອນໃນເວລາທີ່ນັກເດີນສຳຫຼວດໄປຫາຄົວເຮືອນນັ້ນ, ໃຫ້ນັດໝາຍໄວ້ເພື່ອກັບຄືນໄປຫາໃນເວລາມີສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຢູ່ເຮືອນ. ທາງເລືອກສຸດທ້າຍເທົ່ານັ້ນ, ທີ່ນັກເດີນສຳຫຼວດຈະຖາມຂໍ້ມູນການສຳຫຼວດຈາກບຸກຄົນທີ່ມີອາຍຸຕໍ່າ 18 ປີ.

# III. ແທັບເລັດ ແລະ ໂປຣແກຣມ ທີ່ໃຊ້ສຳລັບການສຳຫຼວດ

## 3.1 ການໃຊ້ງານແທັບເລັດ

ໜຶ່ງໃນນະວັດຕະກຳຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ແມ່ນການນຳໃຊ້ແທັບເລັດເຂົ້າໃນການເກັບກຳຂໍ້ມູນ. ຫຼັງຈາກການເຊັນສັນຍາຕາມເງື່ອນໄຂທີ່ກຳນົດໄວ້, ນັກເດີນສຳຫຼວດຈະໄດ້ຮັບອຸປະກອນແທັບເລັດຢູ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນເມືອງ (ຫຼື ຢູ່ສະຖານທີ່ຝຶກອົບຮົມ). ແທັບເລັດທີ່ຕິດຕັ້ງໂປຣແກຣມສຳລັບການສຳຫຼວດ ເປັນເຄື່ອງມືທີ່ນັກເດີນສຳຫຼວດຈະນຳໃຊ້ສຳລັບການຈົດນັບທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ. ດັ່ງນັ້ນ, ນັກເດີນສຳຫຼວດຄວນຈະຄຸ້ນເຄີຍກັບ

**ຄຳສັບທົ່ວໄປກ່ຽວກັບແທັບເລັດ**

- *ໜ້າຈໍຫຼັກ (Home screen)*: ແມ່ນຈໍແທັບເລັດທີ່ເປີດຂຶ້ນເມື່ອມັນປົດລັອກຢູ່ (ຮູບສະແດງ 3.1);
- *ໜ້າຈໍລັອກ (Lock screen)*: ແມ່ນໜ້າຈໍແທັບເລັດທີ່ເປີດຢູ່, ແຕ່ຢູ່ໃນສະຖານະລັອກຢູ່;
- *ໂປຣແກຣມ (App)*: ແມ່ນໂປຣແກຣມທີ່ໃຊ້ໃນຮູບບແບບຂອງໂປຣແກຣມຄອມພິວເຕີ ແລະ ຮູບແບບຂອງເວັບໄຊ;
- *ການເລື່ອນໜ້າຈໍ (Swipe)*: ແມ່ນການເລື່ອນນິ້ວມືຈາກຂອບດ້ານຊ້າຍຫາຂວາ ຫຼື ຈາກເທິງລົງລຸ່ມຂອງໜ້າຈໍ;
- *ການຕັ້ງຄ່າ (Settings)*: ແມ່ນໂປຣແກຣມສະເພາະ (ໂດຍປົກກະຕິແລ້ວຈະມີສັນຍາລັກເຟືອງເກຍ) ເຊິ່ງປະກອບດ້ວຍການຕັ້ງຄ່າຕ່າງໆຂອງແທັບເລັດ, ຕົວເລືອກ ແລະ ລາຍລະອຽດການຕັ້ງຄ່າຕ່າງໆ. ຖ້າຕ້ອງການປ່ຽນຄຸນລັກສະນະຂອງແທັບເລັດ, ສິ່ງທີ່ຕ້ອງການອາດຈະຢູ່ໃນການຕັ້ງຄ່ານີ້;
- *ປຸ່ມໃຊ້ງານຫຼັກ (Home button)*: ແມ່ນປຸ່ມທີ່ໃຊ້ງານຫຼັກ ໂດຍປົກກະຕິແລ້ວ ຈະຢູ່ທາງກາງເບື້ອງລຸ່ມຂອງແທັບເລັດ. ເຊິ່ງປຸ່ມນີ້ຈະໃຊ້ໃນການກັບໄປຫາໜ້າຈໍຫຼັກເມື່ອກົດມັນ ແລະ ກໍ່ຍັງສາມາດໃຊ້ປຸ່ມນີ້ອອກຈາກໂປຣແກຣມ ແລະ ລາຍການຕ່າງໆໄດ້;
- *ປຸ່ມປິດ/ເປີດ ແລະ ປຸ່ມລັອກ*: ໂດຍປົກກະຕິແລ້ວປຸ່ມເຫຼົ່ານີ້ຈະຢູ່ ດ້ານເທິງ ຫຼື ຢູ່ທາງຂ້າງຂອງແທັບເລັດ (ຮູບສະແດງ 3.2). ການກົດປຸ່ມເຫຼົ່ານີ້ ແມ່ນການປິດການສະແດງຜົນ ແລະ "ລັອກ" ແທັບເລັດ, ໝາຍຄວາມວ່າຕ້ອງໄດ້ປັດໜ້າຈໍຂຶ້ນ ແລະ ປ້ອນລະຫັດຜ່ານຖ້າມີການຕັ້ງຄ່າໄວ້ ເພື່ອເປີດແທັບເລັດອີກຄັ້ງ;
- *ປຸ່ມລະດັບສຽງ*: ແມ່ນສອງປຸ່ມທີ່ຢູ່ທາງຂ້າງຂອງແທັບເລັດທີ່ໃຊ້ຄວບຄຸມລະດັບສຽງ. ປຸ່ມທາງເທິງສ່ວນຫຼາຍຈະແມ່ນປຸ່ມເພີ່ມລະດັບສຽງ ແລະ ປຸ່ມທາງລຸ່ມແມ່ນປຸ່ມຫຼຸດລະດັບສຽງ.

### 3.1.1. ການເປີດ ແລະ ປິດແທັບເລັດ

ໃນການເປີດແທັບເລັດ, ແມ່ນຕ້ອງກົດປຸ່ມ ເປີດ/ປິດ ຄືດັ່ງທີ່ສະແດງໃນຮູບສະແດງ 3.2 ແລະ ໃນການປິດແທັບເລັດແມ່ນ ໃຫ້ປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ກົດປຸ່ມ ເປີດ/ປິດ;
2. ເມື່ອໜ້າຕ່າງ 'ຕົວເລືອກອຸປະກອນ' ປະກົດຂຶ້ນມາ ຈາກນັ້ນໃຫ້ເລືອກຕົວເລືອກ 'ປິດເຄື່ອງ' (Power Off);
3. ຢູ່ໃນໜ້າຕ່າງ 'ປິດເຄື່ອງ' ແມ່ນໃຫ້ເລືອກກົດປຸ່ມ 'ຕົກລົງ' (OK).

*ຮູບສະແດງ 3.1: ໜ້າຈໍຫຼັກຂອງແທັບເລັດ*




*ຮູບສະແດງ 3.2: ປຸ່ມປິດ/ເປີດ ແລະ ປຸ່ມລັອກ*



### 3.1.2. ລະດັບແບັດເຕີລີ້ ແລະ ການສາກແທັບເລັດ

ສັນຍາລັກຂອງແບັດເຕີລີ້  ຢູ່ໃນແຖບສະຖານະ (ຢູ່ທາງເທິງເບື້ອງຂວາມືຂອງໜ້າຈໍ) ແມ່ນລະບຸລະດັບແບັດເຕີລີ້. ເມື່ອລະດັບແບັດເຕີລີ້ຫຼຸດລົງເຫຼືອ 15 ສ່ວນຮ້ອຍ, ຈະມີຂໍ້ຄວາມເຕືອນຢູ່ໜ້າຈໍແນະນຳໃຫ້ສາກແທັບເລັດ. ຂໍ້ຄວນລະວັງ: ຖ້າຍັງສືບຕໍ່ນຳໃຊ້ແທັບເລັດໂດຍບໍ່ສາກ, ອຸປະກອນແທັບເລັດກໍ່ຈະດັບລົງໃນທີ່ສຸດ. ການສາກແທັບເລັດ ແມ່ນໃຫ້ປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

1. ສຽບສາຍ USB ໃສ່ຫົວສາກ (ຮູບສະແດງ 3.3a);
2. ສຽບສາຍ USB ອີກດ້ານໜຶ່ງໃສ່ຮູສາກໃນເຄື່ອງແທັບເລັດ (ຮູບສະແດງ 3.3b);
3. ສຽບຫົວສາກໃສ່ປັກໄຟຟ້າ;
4. ເມື່ອລະດັບແບັດເຕີລີ້ສາກຮອດ 100 ສ່ວນຮ້ອຍແລ້ວ, ຖອດຫົວສາກອອກຈາກປັກໄຟ ແລະ ສາຍສາກ USB ອອກຈາກແທັບເລັດ.

*ຮູບສະແດງ 3.3a: ການເຊື່ອມຕໍ່ສາຍ USB ໃສ່ກັບຫົວສາກ*



*ຮູບສະແດງ 3.3b: ການເຊື່ອມຕໍ່ສາຍ USB ໃສ່ກັບແທັບເລັດ*



**ຂໍ້ຄວນລະວັງ**: ແທັບເລັດບໍ່ສາມາດສາກໂດຍການເຊື່ອມຕໍ່ສາຍສາກ USB ໃສ່ກັບຄອມພິວເຕີ, ຖ້າວ່າແທັບເລັດໝົດແບັດເຕີລີ້, ບໍ່ຄວນເປີດເຖິງແມ່ນວ່າຈະກຳລັງສາກຢູ່ກໍ່ຕາມ. ນັກເດີນສຳຫຼວດຕ້ອງໄດ້ລໍຖ້າກ່ອນ 2 ຫຼື 3 ນາທີ ກ່ອນທີ່ຈະເປີດເຄື່ອງອີກຄັ້ງ. ສັນຍາລັກຂອງແບັດເຕລີ້ໃນແຖບສະຖານະຈະປ່ຽນແປງໄປດັ່ງລຸ່ມນີ້:

| | |
|---|---|
|  | ແບັດເຕີລີ້ແມ່ນສາກເຕັມແລ້ວ |
|  | ແບັດເຕີລີ້ກຳລັງສາກຢູ່ |
|  | ລະດັບແບັດເຕີລີ້ແມ່ນເຂົ້າຂັ້ນວິກິດແລ້ວ: ມັນຫຼຸດລົງເຫຼືອ 3 ສ່ວນຮ້ອຍ ເທົ່ານັ້ນ |

3.1.3. ການເຊື່ອມຕໍ່ແທັບເລັດກັບອິນເຕີເນັດ

ມີສອງວິທີໃນການເປີດໃຊ້ອິນເຕີເນັດຜ່ານອຸປະກອນແທັບເລັດຄື: ການເຂົ້າເຖິງອິນເຕີເນັດຜ່ານການເຊື່ອມຕໍ່ໄຮ້ສາຍ (ວາຍຟາຍ) ແລະ/ຫຼື ການໃສ່ຊິມອິນເຕີເນັດ (ເຊິ່ງໄດ້ໃສ່ໄວ້ໃນແທັບເລັດແລ້ວ)

## 3.2. ໂປຣແກຣມສຳລັບການຈົດນັບທີ່ຢູ່ອາໄສ ແລະ ຄົວເຮືອນ

ໂປຣແກຣມການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທີ່ໄດ້ຕິດຕັ້ງຢູ່ໃນແທັບເລັດ ປະກອບມີ 2 ສ່ວນປະກອບຫຼັກດັ່ງຕໍ່ໄປນີ້:

- ໂປຣແກຣມແຜນທີ່ ເຊິ່ງມີແບບສອບຖາມພາກ M – ຂໍ້ມູນອາຄານ ເພື່ອກຳນົດວ່າອາຄານມີທີ່ຢູ່ອາໄສ (ແລະ ຄົວເຮືອນ) ຈະຕ້ອງໄດ້ຖືກຈົດນັບ ຫຼື ບໍ່;
- ໂປຣແກຣມແບບສອບຖາມຫຼັກຂອງການສຳຫຼວດ ທີ່ນຳໃຊ້ເກັບກຳຂໍ້ມູນທັງໝົດຂອງການສຳຫຼວດ ເຊິ່ງປະກອບດ້ວຍ ທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ.

ໃນຫົວຂໍ້ນີ້ຈະອະທິບາຍກ່ຽວກັບຄຸນລັກສະນະຕ່າງໆຂອງໂປຣແກຣມແບບສອບຖາມການສຳຫຼວດ. ອົງປະກອບຂອງແຜນທີ່ເຂດສຳຫຼວດແມ່ນໄດ້ອະທິບາຍໃນພາກທີ 2.8 ທີ່ໄດ້ກ່າວມາຂ້າງເທິງນີ້ ແລະ ເນື້ອໃນຂອງແບບສອບຖາມແຜນທີ່ ແລະ ແບບສອບຖາມການສຳຫຼວດແມ່ນໄດ້ອະທິບາຍຢູ່ໃນພາກທີ 4 (ພາກທີ 4.2). ໂປຣແກຣມແບບສອບຖາມການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນສະແດງຄຳຖາມ ແລະ ຕົວເລືອກຄຳຕອບ ເທື່ອລະໜ້າທີ່ມີໜຶ່ງຄຳຖາມ. ຮູບສະແດງ 3.4 ສະແດງອົງປະກອບຂອງຄຳຖາມ ແລະ ຄຳຕອບທີ່ແຕກຕ່າງກັນ.

a. **ຕົວໜັງສືສີຟ້າ** ແມ່ນຄຳຖາມທີ່ນັກເດີນສຳຫຼວດຕ້ອງຖາມຜູ້ຖືກສຳພາດ, ມັນປະກອບມີເລກລຳດັບຄຳຖາມ ແລະ ປະໂຫຍກຄຳຖາມ. ເລກລຳດັບຄຳຖາມປະກອບດ້ວຍຕົວອັກສອນທີ່ລະບຸພາກທີຂອງແບບອບຖາມ ແລະ ຕົວເລກລຳດັບຄຳຖາມໃນພາກນັ້ນໆ. ຕົວຢ່າງໃນຮູບສະແດງ 3.4 ແມ່ນຄຳຖາມທີ 55 ຂອງແບບສອບຖາມພາກ D - ຂໍ້ມູນບຸກຄົນ. ບາງຄຳຖາມແມ່ນຖືກແບ່ງເປັນຄຳຖາມຍ່ອຍ. ໃນກໍລະນີມີການເພີ່ມຕົວອັກສອນເຂົ້າໃນເລກລຳດັບຄຳຖາມ ເຊັ່ນ: C.06A, C.06B ແລະ C.06C ສຳລັບວັນ, ເດືອນ, ປີເກີດ ຕາມລຳດັບ;

b. ບາງຄຳຖາມທີ່ມີຂໍ້ຄວາມແນະນຳ ແມ່ນຈະເປັນຕົວໜັງສືສີຂຽວ. ເຊິ່ງຕົວໜັງສືສີຂຽວ ຈະເປັນການອະທິບາຍຄຳຖາມ ຫຼື ຄຳແນະນຳທີ່ກ່ຽວຂ້ອງກັບຄຳຖາມ. ບໍ່ໃຫ້ອ່ານຄຳແນະນຳນີ້ໃຫ້ຜູ້ຖືກສຳພາດໃນຂະນະທີ່ສຳພາດຢູ່, ນີ້ແມ່ນຄຳແນະນຳໃຫ້ນັກເດີນສຳຫຼວດ! ບາງກໍລະນີ, ຄຳຖາມຈະເປັນຕົວໜັງສືສີຂຽວ ຊຶ່ງໝາຍຄວາມວ່າ ນີ້ແມ່ນຄຳຖາມທີ່ບໍ່ຄວນຖາມຜູ້ຖືກສຳພາດ, ແຕ່ຄວນຈະຫາຄຳຕອບດ້ວຍຕົວຂອງນັກເດີນສຳຫຼວດເອງ. ໂດຍປົກກະຕິແລ້ວ ຄຳຕອບຂອງຄຳຖາມເຫຼົ່ານີ້ ແມ່ນສາມາດຫາຄຳຕອບໄດ້ໂດຍການສັງເກດ ຫຼື ຄຳຕອບແມ່ນຢູ່ໃນຄຳຖາມທີ່ຜ່ານມາແລ້ວ;

c. ລາຍການຄຳຕອບທີ່ກຳນົດໄວ້ລ່ວງໜ້າສຳລັບຄຳຖາມ (ຕົວໜັງສືສີດຳ) ແມ່ນໄດ້ສະແດງຢູ່ລຸ່ມຄຳຖາມ ແລະ ຄຳແນະນຳຕ່າງໆ, ມັນຈະຢູ່ເບື້ອງຊ້າຍມືຂອງໜ້າຈໍ;

d. ຖ້າວ່າລາຍການຄຳຕອບທີ່ກຳນົດໄວ້ລ່ວງໜ້າໄດ້ຖືກສະແດງໄວ້ແລ້ວ, ນັກເດີນສຳຫຼວດຕ້ອງເລືອກຄຳຕອບທີ່ເໝາະສົມໂດຍການແຕະໃສ່ປຸ່ມວົງມົນນ້ອຍໆ – 'ປຸ່ມຕົວເລືອກ' – ທີ່ກົງກັບຄຳຕອບທີ່ໃຫ້ມາ.

ໝາຍເຫດ: ບັນດາຄຳຖາມທີ່ກ່ຽວກັບສະມາຊິກຄົວເຮືອນ ແມ່ນນຳໃຊ້ຊື່ບຸກຄົນເຂົ້າມາໃສ່ໃນຄຳຖາມ, ດັ່ງນັ້ນມັນຈະຊັດເຈນສະເໝີວ່າຄຳຖາມນັ້ນກ່ຽວຂ້ອງກັບໃຜ. ຄຳຖາມທຳອິດໃນການຂຶ້ນບັນຊີສະມາຊິກຄົວເຮືອນ ແມ່ນຈະຖາມຊື່ຂອງສະມາຊິກຄົວເຮືອນກ່ອນ, ຫຼັງຈາກນັ້ນໂປຣແກຣມຈະດຶງເອົາຊື່ທີ່ໄດ້ປ້ອນເຂົ້າໄປແລ້ວ ສຳລັບຖາມຄຳຖາມຕໍ່ໆໄປກ່ຽວກັບບຸກຄົນທີ່ກຳລັງຖາມເຖິງ.

ຮູບສະແດງ 3.4: ບັນດາຄຳຖາມ ແລະ ຄຳຕອບ




ຮູບສະແດງ 3.5: ຄຳຖາມສຳລັບນັກເດີນສຳຫຼວດ




ແບບສອບຖາມມີປະເພດຄຳຖາມທີ່ແຕກຕ່າງກັນ. ຄຳຖາມທີ່ນຳໃຊ້ສ່ວນຫຼາຍແມ່ນດັ່ງທີ່ສະແດງໃນຮູບສະແດງ 3.4. ຄຳຖາມປະເພດນີ້ແມ່ນມີລາຍການຄຳຕອບທີ່ໄດ້ຖືກກຳນົດໄວ້ແລ້ວ, ເຊິ່ງສາມາດເລືອກໄດ້ພຽງຄຳຕອບດຽວເທົ່ານັ້ນ ແລະ ຄວນແຕະໃສ່ປຸ່ມຕົວເລືອກເພື່ອເລືອກຄຳຕອບພຽງໜຶ່ງປຸ່ມເທົ່ານັ້ນ. ໃນບາງຄັ້ງບໍ່ມີຕົວເລືກຄຳຕອບທີ່ກຳນົດໄວ້ກົງກັບຄຳຕອບທີ່ຜູ້ຖືກສຳພາດຕອບມາ. ໃນກໍລະນີນີ້, ນັກເດີນສຳຫຼວດສາມາດເລືອກຄຳຕອບ “ອື່ນໆ” ໄດ້ເຊັ່ນ: “ປະເທດອື່ນໆ” ສຳລັບປະເທດເກີດ ໃນຄຳຖາມ D.14 (ຮູບສະແດງ 3.6). ສຳລັບຄຳຕອບ “ອື່ນໆ” ບາງຄຳຕອບ ຈະມີຄຳຖາມຕໍ່ເນື່ອງເພື່ອອະທິບາຍວ່າ ຄຳຕອບ “ອື່ນໆ” ນັ້ນແມ່ນຫຍັງ ດັ່ງຄຳຖາມທີ D.15 (ຮູບສະແດງ 3.8). ສັງເກດເຫັນວ່າຄຳຖາມທີ D.15 ແມ່ນເປັນຕົວໜັງສືສີຂຽວ: ຜູ້ຖືກສຳພາດໄດ້ໃຫ້ຄຳຕອບໄວ້ແລ້ວໃນຄຳຖາມທີ D.14 ແລ້ວ, ດັ່ງນັ້ນ ບໍ່ຈຳເປັນຕ້ອງຖາມຄຳຖາມ D.15 ອີກ. ຄຳຖາມ D.15 ນີ້ເປັນຄຳຖາມສຳລັບນັກເດີນສຳຫຼວດເອງ, ດັ່ງນັ້ນ ນັກເດີນສຳຫຼວດສາມາດບັນທຶກຄຳຕອບທີ່ໄດ້ມາຈາກຄຳຖາມກ່ອນໜ້ານີ້ແລ້ວ. ໃນບາງກໍລະນີ, ຄຳຖາມທີ່ຕໍ່ເນື່ອງຈະມີຕົວເລືອກຄຳຕອບທີ່ໄດ້ກຳນົດໄວ້ແລ້ວ, ແຕ່ໃນບາງກໍລະນີ ນັກເດີນສຳຫຼວດຕ້ອງຂຽນຄຳຕອບເປັນໃສ່. ບໍ່ວ່າຈະກໍລະນີໃດກໍ່ຕາມ, ນັກເດີນສຳຫຼວດຕ້ອງໃຫ້ຄວາມສຳຄັນຫຼາຍຕໍ່ກັບຄຳຖາມກ່ອນໜ້ານັ້ນ ເພື່ອເບິ່ງວ່າບໍ່ມີລາຍການຄຳຕອບໃດທີ່ເໝາະສົມແທ້ໆຈິ່ງເລືອກຄຳຕອບ “ອື່ນໆ”.

ຮູບສະແດງ 3.6: ລາຍການຕົວເລືອກຄຳຕອບ ‘ອື່ນໆ’




ຮູບສະແດງ 3.7: ຄຳຖາມຕໍ່ເນື່ອງ




ສຳລັບບາງຄຳຖາມ, ນັກເດີນສຳຫຼວດຕ້ອງໄດ້ປ້ອນຢູ່ໜ້າຈໍປາກົດຂຶ້ນມາພ້ອມກັບແປ້ນພິມທີ່ເປັນຕົວເລກຄຳຕອບເປັນຕົວເລກ ຕົວຢ່າງ: ຈຳນວນຫ້ອງໃນທີ່ຢູ່ອາໄສເພື່ອປ້ອນຄຳຕອບ (ຮູບສະແດງ 3.9). ບາງຄຳຖາມ, ແມ່ນຫຼື ວັນ, ເດືອນ ແລະ ປີເກີດ. ກໍລະນີນີ້, ຈະມີຊ່ອງຄຳຕອບ ອະນຸຍາດໃຫ້ເລືອກຄຳຕອບ “ບໍ່ຮູ້” ໄດ້. ໃນກໍລະນີ

ດັ່ງກ່າວ, ຢູ່ເບື້ອງຂວາມືຂອງຊ່ອງຄໍາຕອບ (☰) ຊຶ່ງມີປຸ່ມລາຍການໃຫ້ເລືອກ, ບ່ອນທີ່ສາມາດເລືອກຄໍາຕອບ "ບໍ່ຮູ້" ໄດ້. ຫຼັງຈາກນັ້ນ ໂປຣແກຣມຈະບັນທຶກລະຫັດສໍາລັບ ຄໍາຕອບ "ບໍ່ຮູ້" (ເຊິ່ງຈະກໍານົດເອົາເລກ '9' ໜຶ່ງຕົວຂຶ້ນໄປ).




*ຮູບສະແດງ 3.8: ຄໍາຖາມທີ່ຕ້ອງຕອບເປັນຕົວເລກ*

ສໍາລັບຄໍາຖາມອື່ນໆ, ນັກເດີນສໍາຫຼວດຕ້ອງບັນທຶກເປັນຕົວໜັງສື ເຊັ່ນ: ຄໍາຖາມທີ່ຖາມກ່ຽວກັບຊື່ຂອງບຸກຄົນ (ຮູບສະແດງ 3.9). ກໍລະນີດັ່ງກ່າວນີ້, ຈະມີຊ່ອງຄໍາຕອບປະກົດຂຶ້ນມາພ້ອມກັບແປ້ນພິມທີ່ເປັນຕົວໜັງສື ແລະ ຕົວເລກ ໃຫ້ປ້ອນຄໍາຕອບໃສ່. ຖ້າແປ້ນພິມທີ່ສະແດງອອກມາເປັນພາສາອື່ນ ໃຫ້ກົດໃສ່ສັນຍາລັກຮູບໜ່ວຍໂລກ ເພື່ອປ່ຽນເປັນພາສາລາວ.

*ຮູບສະແດງ 3.9: ຄໍາຖາມທີ່ຕ້ອງຕອບເປັນຕົວໜັງສື*




ສໍາລັບບັນດາຄໍາຖາມທີ່ບໍ່ມີຕົວເລືອກຄໍາຕອບ, ໂປຣແກຣມແບບສອບຖາມຈະກວດສອບວ່າຄໍາຕອບນັ້ນໆເປັນໄປໄດ້ ຫຼື ບໍ. ມັນສາມາດເປັນໄປໄດ້ວ່າຜູ້ຖືກສໍາພາດບໍ່ຮູ້ຄໍາຕອບທີ່ແທ້ຈິງ, ບໍ່ເຂົ້າໃຈຄໍາຖາມ ຫຼື ຕອບຜິດ. ນັກເດີນສໍາຫຼວດກໍ່ສາມາດເຮັດຜິດພາດໃນການບັນທຶກຄໍາຕອບໄດ້ເຊັ່ນກັນ. ຖ້າວ່າໂປຣແກຣມແບບສອບຖາມກວດພົບຂໍ້ສົງໃສ, ຄໍາຕອບທີ່ບໍ່ໜ້າເຊື່ອຖື ຫຼື ຄໍາຕອບທີ່ບໍ່ຖືກຕ້ອງ, ມັນອາດຈະມີຂໍ້ຄວາມຜິດພາດ ຫຼື ຂໍ້ຄວາມແຈ້ງເຕືອນປະກົດຂຶ້ນ (ຮູບສະແດງ 3.10). ໃນກໍລະນີທີ່:

- *ຄໍາຕອບທີ່ບໍ່ສອດຄ່ອງກັນ,* ແມ່ນຄໍາຕອບທີ່ນັກເດີນສໍາຫຼວດໄດ້ບັນທຶກນັ້ນ ບໍ່ສອດຄ່ອງກັບຄໍາຖາມກ່ອນໜ້ານັ້ນ ຕົວຢ່າງ: ອາຍຸຂອງແມ່ໜ້ອຍກວ່າອາຍຸລູກຂອງລາວ. ໃນກໍລະນີນີ້, ຂໍ້ຄວາມແຈ້ງເຕືອນຈະແນະນໍາໃຫ້ນັກເດີນສໍາຫຼວດຕ້ອງແກ້ໄຂຄໍາຕອບດັ່ງກ່າວ ຫຼື ແກ້ໄຂຄໍາຕອບຂອງຄໍາຖາມທີ່ກ່ຽວຂ້ອຍກ່ອນໜ້ານັ້ນ. ກົດໃສ່ປຸ່ມຄໍາຕອບທີ່ຕ້ອງການແກ້ໄຂ, ແກ້ໄຂຄໍາຕອບ ແລະ ສືບຕໍ່. ໃນກໍລະນີທີ່ຕ້ອງການແກ້ໄຂຄໍາຕອບຂອງຄໍາຖາມທີ່ກ່ຽວຂ້ອງກ່ອນໜ້ານີ້ ແມ່ນຕ້ອງກັບໄປຫາຄໍາຖາມບ່ອນທີ່ສະແດງຂໍ້ຄວາມຜິດພາດນັ້ນ. ຖ້າວ່າຄວາມບໍ່ສອດຄ່ອງໄດ້ຮັບແກ້ແລ້ວຂໍ້ຄວາມແຈ້ງເຕືອນກໍ່ຈະບໍ່ປະກົດຂຶ້ນອີກ;
- *ລືມຕອບຄໍາຖາມ,* ແມ່ນການທີ່ກົດປຸ່ມຖັດໄປໂດຍບໍ່ມີການເລືອກຄໍາຕອບ. ໃນກໍລະນີນີ້, ນັກເດີນສໍາຫຼວດຈະບໍ່ສາມາດດໍາເນີນການໄດ້ຈົນກວ່າຈະປ້ອນຄໍາຕອບຂອງຄໍາຖາມທີ່ກໍາລັງຖາມຢູ່ນັ້ນ. ກົດປຸ່ມ 'OK', ຕອບຄໍາຖາມໃຫ້ຖືກຕ້ອງ ແລະ ສືບຕໍ່ຖາມຄໍາຖາມຕໍ່ໄປ;

- *ຄຳຕອບທີ່ຢູ່ນອກຂອບເຂດ,* ແມ່ນຄຳຕອບທີ່ໄດ້ບັນທຶກ ບໍ່ແມ່ນຄຳຕອບທີ່ຖືກຕ້ອງສຳລັບຄຳຖາມນັ້ນ ເຊັ່ນ: ມັນຈະເກີດຂຶ້ນເມື່ອນັກເດີນສຳຫຼວດພະຍາຍາມປ້ອນ ວັນ, ເດືອນ, ປີເກີດທີ່ເປັນໄປບໍ່ໄດ້ ເຊັ່ນ ວັນທີ 41 ເດືອນ ກຸມພາ ປີ 1998. ກົດປຸ່ມ 'OK', ຕອບຄຳຖາມໃຫ້ຖືກຕ້ອງ ແລະ ສືບຕໍ່ຖາມຄຳຖາມຕໍ່ໄປ.

*ຮູບສະແດງ 3.10: ຂໍ້ຄວາມແຈ້ງເຕືອນ*




3.2.1 ການຈັດການແບບສອບຖາມ

ໃນຂະນະສຳຫຼວດທີ່ຢູ່ອາໄສ, ຄົວເຮືອນ ຫຼື ບຸກຄົນ, ໂປຣແກຣມແບບສອບຖາມຈະນຳນັກເດີນສຳຫຼວດຈາກຄຳຖາມໜຶ່ງໄປຫາຄຳຖາມຕໍ່ໄປຢ່າງອັດຕະໂນມັດ. ນອກຈາກນັ້ນ, ໂປຣແກຣມຍັງມີຫຼາຍໆອົງປະກອບທີ່ສາມາດຊ່ວຍນັກເດີນສຳຫຼວດໃນການເຮັດວຽກ. ຮູບສະແດງ 3.11 ສະແດງໃຫ້ເຫັນບັນດາອົງປະກອບຢູ່ເທິງໜ້າຈໍແທັບເລັດ ແລະ ຂໍ້ຄວາມຂ້າງລຸ່ມທີ່ອະທິບາຍການເຮັດວຽກຂອງແຕ່ລະອົງປະກອບເຫຼົ່ານີ້.

*ຮູບສະແດງ 3.11: ບັນດາອົງປະກອບໃນການຈັດການແບບອບຖາມ.*




a. ໃນແຖບສະຖານະສີດຳທາງເທິງເບື້ອງຊ້າຍມື, ຈະມີຄຳວ່າ 'Dwellings' ແມ່ນຊື່ຂອງໂປຣແກຣມ ທີ່ບົ່ງບອກວ່ານັກເດີນກຳລັງຈົດນັບທີ່ຢູ່ອາໄສ (ເຖິງວ່າຈະແມ່ນທີ່ຢູ່ອາໄສ ຫຼື ບໍ່ກໍ່ຕາມ). ຫົວໜ່ວຍການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທີ່ນັກເດີນສຳຫຼວດເກັບກຳຂໍ້ມູນຢູ່ນັ້ນສາມາດເປັນທີ່ຢູ່ອາໄສ, ຄົວເຮືອນ ຫຼື ບຸກຄົນ ທີ່ເປັນສະມາຊິກຄົວເຮືອນ, ຂຶ້ນກັບພາກຂອງແບບສອບຖາມທີ່ກຳລັງສຳພາດຢູ່.

b. ໃນແຖບສະຖານະທາງເທິງເບື້ອງຂວາມື, ຈະມີສັນຍາລັກເປີເຊັນ ທີ່ບົ່ງບອກເຖິງລະດັບການສາກໄຟແບັດເຕີລີ້ຂອງແທັບເລັດ. ໃຫ້ຕິດຕາມລະດັບໄຟແບັດເຕີລີ້ແທັບເລັດຢູ່ເລື້ອຍໆ ແລະ ສາກແທັບເລັດໃຫ້ທັນເວລາກັບການໃຊ້ງານ. ສໍາລັບຂໍ້ມູນເພີ່ມເຕີມເບິ່ງໃນພາກທີ 3.1.2.

c. ສັນຍາລັກຮູບເຈ້ຍ ແລະ ສໍ ຢູ່ໃນແຖບສະຖານະເບື້ອງຂວາມື ແມ່ນເຄື່ອງມືທີ່ຊ່ວຍໃຫ້ນັກເດີນສໍາຫຼວດສາມາດພິມບັນທຶກເຫດການກ່ຽວກັບການຈົດນັບ ຫຼື ການສໍາພາດທີ່ກໍາລັງສໍາພາດຢູ່. ເຊິ່ງອາດຈະເປັນການບັນທຶກກ່ຽວກັບຄໍາຖາມທີ່ສະເພາະເຈາະຈົງທີ່ນັກເດີນສໍາຫຼວດກໍາລັງສໍາພາດຢູ່, ບັນຫາສໍາຄັນທີ່ຜູ້ຖືກສໍາພາດຍົກຂຶ້ນມາ, ຂໍ້ສັງເກດກ່ຽວກັບເຂດແດນ ແລະ ຈຸດຂອງອາຄານໃນແຜນທີ່ເຂດສໍາຫຼວດ ແລະ ອື່ນໆ. ມັນເປັນການດີ ທີ່ຈະລາຍງານສິ່ງຕ່າງໆທີ່ອາດມີຄວາມສໍາຄັນຕໍ່ຜົນການສໍາຫຼວດ. ກົດໃສ່ສັນຍາລັກເຈ້ຍ ແລະ ສໍ (ປຸ່ມບັນທຶກ) ຊ່ອງຂໍ້ຄວາມຈະປະກົດຂຶ້ນ ເຊິ່ງນັກເດີນສໍາຫຼວດສາມາດຂຽນສິ່ງທີ່ຕ້ອງການແຈ້ງເຕືອນໃສ່ໄດ້ ແລະ ເມື່ອກົດໃສ່ປຸ່ມບັນທຶກອີກຄັ້ງ ຊ່ອງຂໍ້ຄວາມກໍ່ຈະຫາຍໄປ ແລະ ນັກເດີນສໍາຫຼວດສາມາດສືບຕໍ່ການສໍາພາດໄດ້. ຂໍ້ຄວາມທີ່ໄດ້ບັນທຶກໄວ້ສາມາດເຫັນໄດ້ໃນຊ່ອງຂໍ້ຄວາມຢູ່ກ້ອງຄໍາຖາມ ແລະ ສັນຍາລັກເຈ້ຍ ແລະ ສໍຈະປ່ຽນເປັນສີຟ້າ ເພື່ອສະແດງໃຫ້ເຫັນວ່າມີການເພີ່ມບັນທຶກເຫດການໃສ່ໃນຄໍາຖາມນັ້ນ;




d. ສັນຍາລັກແວ່ນຂະຫຍາຍ ແມ່ນຊ່ວຍໃຫ້ນັກເດີນສໍາຫຼວດຊອກຫາ ຫຼື ກັ່ນຕອງຕົວເລືອກລາຍການຄໍາຕອບທີ່ສະແດງຢູ່ໜ້າຈໍແທັບເລັດໄດ້. ເຊິ່ງຈະເປັນປະໂຫຍດຫຼາຍຖ້າວ່າລາຍການຄໍາຕອບມີຫຼາຍລາຍການ ເຊັ່ນ: ບັນຊີລາຍຊື່ປະເທດ. ໂດຍການກົດໃສ່ປຸ່ມແວ່ນຂະຫຍາຍ, ຊ່ອງປ້ອນຂໍ້ຄວາມຈະປະກົດຂຶ້ນມາ ເຊິ່ງນັກເດີນສໍາຫຼວດສາມາດພິມຕົວອັກສອນສອງ ຫຼື ສາມຕົວທີ່ມີຢູ່ໃນຄໍາຕອບຂອງຜູ້ຖືກສໍາພາດຕອບມາ ຕົວຢ່າງ: ຖ້າວ່ານັກເດີນສໍາຫຼວດຕ້ອງການເລືອກປະເທດ ສະຫະລັດອາເມລິກາ ເຊິ່ງເປັນປະເທດທີ່ຜູ້ຖືກສໍາພາດຕອບ, ແມ່ນໃຫ້ພິມຄໍາວ່າ "ສະຫະ", ຫຼັງຈາກນັ້ນ ລາຍຊື່ປະເທດປະມານ 200 ປະເທດ ກໍ່ຈະຫຼຸດລົງເຫຼືອພຽງແຕ່ລາຍຊື່ປະເທດທີ່ມີຄໍາວ່າ "ສະຫະ" ເທົ່ານັ້ນ (ໝາຍເຫດ: ໃນການຄົ້ນຫາລາຍການຄໍາຕອບແມ່ນບໍ່ຈໍາເປັນຕ້ອງເປັນພຽງແຕ່ລາຍຊື່ປະເທດເທົ່ານັ້ນ);

e. ການກົດໃສ່ປຸ່ມສາມຈໍ້າທາງຕັ້ງຢູ່ເບື້ອງຂວາມືສຸດຂອງແຖບສະຖານະ ແມ່ນຈະມີຕົວເລືອກເພີ່ມເຕີມເພື່ອຈັດການກັບແບບສອບຖາມ, ເຊິ່ງຢູ່ໃນພາກທີ 3.1.6 ດ້ານລຸ່ມນີ້ຈະອະທິບາຍກ່ຽວກັບຕົວເລືອກຕ່າງໆຢ່າງລະອຽດ;

f. ປຸ່ມລູກສອນຢູ່ເບື້ອງຊ້າຍ ແລະ ຂວາມື ຂອງໜ້າຈໍຫຼັກ ແມ່ນຈະພານັກເດີນສໍາຫຼວດກັບຄືນໄປຫາຄໍາຖາມກ່ອນໜ້ານີ້ (ປຸ່ມລູກສອນເບື້ອງຊ້າຍມື) ຫຼື ຈະພາໄປຫາຄໍາຖາມຕໍ່ໄປ (ປຸ່ມລູກສອນເບື້ອງຂວາມື). ໝາຍເຫດ: ນັກເດີນສໍາຫຼວດສາມາດສືບຕໍ່ຖາມຄໍາຖາມຕໍ່ໄປ ກໍ່ຕໍ່ເມື່ອໄດ້ບັນທຶກຄໍາຕອບຂອງຄໍາຖາມປັດຈຸບັນສໍາເລັດແລ້ວ.

### 3.2.2 ລາຍການຂອງປຸ່ມສາມຈໍ້າທາງຕັ້ງ

ການກົດໃສ່ປຸ່ມສາມຈໍ້າທາງຕັ້ງຢູ່ເບື້ອງຂວາມືສຸດຂອງແຖບສະຖານະ ແມ່ນຈະສະແດງລາຍການຕາມຮູບສະແດງ 3.13 ຂ້າງນີ້.

ຮູບສະແດງ *3.13:* ລາຍການຂອງປຸ່ມສາມຈ້ຳ










- *Partial Save*: ໂປຣແກຣມຈະອະນຸຍາດໃຫ້ບັນທຶກແບບສອບຖາມທີ່ສຳເລັດບາງສ່ວນ, ເຊິ່ງອາດຈຳເປັນສຳລັບການສຳພາດທີ່ຖືກຂັດຈັງຫວະບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ. ເມື່ອກົດໃສ່ຕົວເລືອກ 'Partial Save', ໂປຣແກຣມຈະບັນທຶກຈົນຮອດຄຳຕອບປະຈຸບັນທີ່ໄດ້ຖາມ ແລະ ຈະມີຂໍ້ຄວາມປະກົດຂຶ້ນວ່າ "The current case has been saved". ແບບສອບຖາມທີ່ໄດ້ຖືກບັນທຶກບາງສ່ວນດັ່ງກ່າວ ແລະ ສາມາດເປີດຂຶ້ນອີກຄັ້ງເພື່ອສືບຕໍ່ການສຳພາດຈາກບ່ອນທີ່ຢຸດໄວ້;
- *Change Language*: ໂປຣແກຣມແບບສອບຖາມແມ່ນມີທັງພາສາລາວ ແລະ ພາສາອັງກິດ, ເຊິ່ງສາມາດປ່ຽນພາສາໄດ້ຕະຫຼອດເວລາ. ເລືອກ 'Change Language', ຕົວເລືອກພາສາລາວ (Laos) ແລະ ພາສາອັງກິດ (English) ຈະປະກົດຂຶ້ນ ແລະ ນັກເດີນສຳຫຼວດສາມາດເລືອກພາສາທີ່ຕ້ອງການນຳໃຊ້ໃນການສຳພາດໄດ້. ນັກເດີນສຳຫຼວດຕ້ອງຢືນຢັນການເລືອກ ໂດຍການກົດໃສ່ເຄື່ອງໝາຍຢືນຢັນ (√) ຫຼື ສືບຕໍ່ໃຊ້ພາສາທີ່ກຳລັງສຳພາດຢູ່. ເຊິ່ງຄ່າເລີ່ມຕົ້ນຂອງໂປຣແກຣມແມ່ນພາສາລາວ;
- *Review all notes:* ຕົວເລືອກນີ້ແມ່ນຊ່ວຍໃຫ້ນັກເດີນສຳຫຼວດເຫັນພາບລວມຂອງການບັນທຶກເຫດການທັງໝົດທີ່ໄດ້ເພີ່ມລົງໃນແບບສອບຖາມ. ເມື່ອນັກເດີນສຳຫຼວດເລືອກຕົວເລືອກນີ້, ລາຍການຄຳຖາມຈະປະກົດຂຶ້ນມາພ້ອມກັບຂໍ້ຄວາມການບັນທຶກເຫດການທີ່ໄດ້ບັນທຶກໄວ້. ນັກເດີນສຳຫຼວດສາມາດເລືອກທີ່ຈະໄປຫາຄຳຖາມນັ້ນໂດຍການກົດໃສ່ 'Go to Field >>', ສາມາດລຶບການບັນທຶກເຫດການໂດຍການກົດໃສ່ ຮູບຖັງຂີ້ເຫຍື້ອ (Delete) ຫຼື ກັບໄປຫາບ່ອນທີ່ຢູ່ໃນແບບສອບຖາມໂດຍການກົດໃສ່ເຄື່ອງໝາຍຢືນຢັນ (√);
- *Advance to End:* ຕົວເລືອກໄປຫາສຸດທ້າຍແມ່ນມີປະໂຫຍດຫຼາຍ ຕົວຢ່າງ: ເມື່ອເປີດແບບສອບຖາມທີ່ບັນທຶກສ່ວນໜຶ່ງອີກຄັ້ງ ເພື່ອສືບຕໍ່ການສຳພາດບ່ອນທີ່ໄດ້ຢຸດໄວ້ນັ້ນ, ເມື່ອນຳໃຊ້ຕົວເລືອກນີ້ ໂປຣແກຣມຈະພາໄປຫາຄຳຖາມທີ່ຍັງບໍ່ໄດ້ສຳພາດຄຳຖາມທຳອິດໃນແບບສອບຖາມ. ຈະມີຂໍ້ຄວາມປະກົດຂຶ້ນຢູ່ເທິງໜ້າຈໍວ່າ ຄຳຖາມນີ້ຍັງບໍ່ມີຄຳຕອບເທື່ອ;
- *Hide Navigation Controls:* ການຄວບຄຸມການນຳທາງ 'navigation controls' ໝາຍເຖິງປຸ່ມລູກສອນໄປກັບທີ່ຢູ່ເບື້ອງຊ້າຍ ແລະ ຂວາມື ຢູ່ເທິງໜ້າຈໍຫຼັກທີ່ຊ່ວຍໃຫ້ສາມາດຍ້ອນກັບ ຫຼື ໄປຄຳຖາມຕໍ່ໄປໃນແບບສອບຖາມ. ເມື່ອເລືອກຕົວເລືອກນີ້ ລູກສອນໄປກັບຢູ່ໃນໜ້າຈໍຫຼັກຈະຫາຍໄປ. ຖ້າວ່າກົດໃສ່ປຸ່ມສາມຈ້ຳອີກຄັ້ງ , ຕົວເລືອກນີ້ຈະປ່ຽນເປັນ 'Show Navigation Controls', ເຊິ່ງຈະຊ່ວຍໃຫ້ນັກເດີນສຳຫຼວດນຳເອົາປຸ່ມນຳທາງນີ້ກັບມາຢູ່ໜ້າຈໍຄືນໄດ້.
- *Show Case Tree:* ຕົວເລືອກນີ້ແມ່ນມີປະໂຫຍດຖ້າວ່າຕ້ອງການຂ້າມໄປຫາຄຳຖາມໃດໜຶ່ງໃນແບບສອບຖາມ. ການເລືອກຕົວເລືອກ 'Show Case Tree' ຈະສະແດງແຜນຜັງແນວຕັ້ງຢູ່ເບື່ອງຊ້າຍມືຂອງໜ້າຈໍ, ເຊິ່ງຈະສະແດງແຕ່ລະພາກຂອງແບບສອບຖາມການສຳຫຼວດ (ຮູບສະແດງ 3.14, ແຜນຜັງເບື້ອງຊ້າຍມື). ກົດໃສ່ພາກທີໃດໜຶ່ງ ມັນຈະສະແດງລາຍການຄຳຖາມໃນພາກທີນັ້ນຂຶ້ນມາ ແລະ ເມື່ອກົດໃສ່ຄຳຖາມໃດໜຶ່ງ ໂປຣແກຣມຈະພາໄປຫາຄຳຖາມນັ້ນ. ພາກທີມີຂໍ້ມູນສຳລັບບຸກຄົນທີ່ແຕກຕ່າງກັນ, ມັນຈະສະແດງໃຫ້ຮູ້ວ່າມີຂໍ້ມູນຂອງຫຼາຍຄົນຢູ່ໃນພາກນັ້ນກ່ອນ (ຕົວຢ່າງ, ມີ 2 ຄົນ, ດັ່ງທີ່ສະແດງໃນຮູບ 3.14, ແຜນຜັງເບື້ງຊ້າຍມື). ການກົດ

ໃສ່ຕົວເລກທີ່ສະແດງຢູ່ໃນແຜນຜັງທາງຂວາມືນັ້ນ ແມ່ນບອກເຖິງ ຈຳນວນບຸກຄົນຕາມລຳດັບທີ່ພວກເຂົາໄດ້ຂຶ້ນບັນຊີໃນການສຳຫຼວດ (ຮູບສະແດງ 3.14, ແຜນຜັງເບື້ອງຂວາມື). ນັກເດີນສຳຫຼວດຕ້ອງເລືອກລຳດັບບຸກຄົນກ່ອນ ແລະ ຫຼັງຈາກນັ້ນ ຈຶ່ງສາມາດເລືອກຄຳຖາມສຳລັບບຸກຄົນນັ້ນໄດ້;

ໝາຍເຫດ: ນັກເດີນສຳຫຼວດຈະສາມາດໄປຫາຄຳຖາມທີ່ໄດ້ມີການບັນທຶກຄຳຕອບແລ້ວເທົ່ານັ້ນ (ຄຳຖາມທີ່ໄດ້ຖາມແລ້ວ). ໝາຍຄວາມວ່າ ນັກເດີນສຳຫຼວດຈະບໍ່ສາມາດໄປຫາຄຳຖາມທີ່ຢູ່ຫຼັງຈາກຄຳຖາມທີ່ມີການບັນທຶກຄຳຕອບໄວ້ໃນການສຳພາດ (ຄຳຖາມທີ່ຍັງບໍ່ທັນໄດ້ຖາມ). ຄຳຖາມທີ່ບໍ່ມີການບັນທຶກຄຳຕອບຈະເປັນສີເທົາເຂັ້ມ. ເພື່ອເຊື່ອງແຜນຜັງທີ່ຢູ່ເບື້ອງຊ້າຍມືນັ້ນ ແມ່ນໃຫ້ກົດໃສ ປຸ່ມສາມຈ້ຳທາງຕັ້ງອີກຄັ້ງແລ້ວເລືອກຕົວ 'Hide Case Tree'.

*ຮູບສະແດງ 3.14: ລາຍການຂອງປຸ່ມສາມຈ້ຳທາງຕັ້ງ*



## IV. ໂຄງປະກອບແບບສອບຖາມ ແລະ ວິທີການບັນທຶກຂໍ້ມູນເຂົ້າໂປຣແກຣມແບບສອບຖາມ

### 4.1. ໂຄງປະກອບແບບສອບຖາມສໍາລັບຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່

ສູນສະຖິຕິແຫ່ງຊາດ, ກະຊວງການເງິນ ໄດ້ດໍາເນີນການທົບທວນແບບສອບຖາມການສໍາຫຼວດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ຮ່ວມກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ຄະນະຊ່ຽວຊານຕ່າງປະເທດ ເພື່ອກໍານົດເອົາຂໍ້ມູນບູລິມະສິດລະດັບຊາດ ແລະ ຕາມຄໍາແນະນໍາຂອງສາກົນ. ແບບສອບການສໍາຫຼວດການສໍາຫຼວດໃນຄັ້ງນີ້ ມີສອງແບບສອບຖາມຄື:

1) ແບບສອບຖາມສໍາລັບຄົວເຮືອນສ່ວນບຸກຄົນມີ 10 ພາກ ຊຶ່ງມີຄາຖາມທັງໝົດ ລວມທັງຄາຖາມທີຂຶ້ນໂດຍອັດຕະໂນມັດໃນເທັບເລັດ ມີ 196 ຄໍາຖາມ ແຕ່ຄໍາຖາມຫຼັກທີ່ຕ້ອງໄດ້ສໍາພາດເວລາເດີນສໍາຫຼວດ ມີ 153 ຄາຖາມ;
2) ແບບສອບຖາມສໍາລັບຄົວເຮືອນລວມໝູ່ ມີ 5 ພາກ ຊຶ່ງມີຄາຖາມທັງໝົດ ລວມທັງຄາຖາມທີຂຶ້ນໂດຍອັດຕະໂນມັດໃນເທັບເລັດ ມີ 50 ຄາຖາມ ແຕ່ຄາຖາມຫຼັກທີ່ຕ້ອງໄດ້ສາພາດເວລາເດີນສາຫຼວດ ມີ 24 ຄາຖາມ.

**ໂຄງຮ່າງການສໍາຫຼວດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ມີດັ່ງນີ້:**

| ລ/ດ | ຈໍານວນພາກໃນແບບສອບຖາມ | ແບບສອບຖາມ ຄົວເຮືອນສ່ວນບຸຄົນ | | ແບບສອບຖາມ ຄົວເຮືອນລວມໝູ່ | |
|---|---|---|---|---|---|
| | | ຈໍານວນຄໍາຖາມທັງໝົດ | ຈໍານວນຄໍາຖາມຫຼັກ | ຈໍານວນຄໍາຖາມທັງໝົດ | ຈໍານວນຄໍາຖາມຫຼັກ |
| 1 | **ພາກ M: ຂໍ້ມູນອາຄານ** ແຂວງ, ເມືອງ, ສະຖານະພາບ ແລະ ຈຸດປະສົງການສ້າງອາຄານ ແລະ ປະເພດຄົວເຮືອນ | 9 | 5 | 0 | 0 |
| 2 | **ພາກ DI–RP: ຂໍ້ມູນເອກະລັກ** ເຂດສໍາຫຼວດ, ເລກທີອາຄານ, ລໍາດັບທີ່ຢູ່ອາໄສ, ຈໍານວນຄົວເຮືອນ, ປະເພດບ້ານ, ຂໍ້ມູນຈຸດທີ່ຕັ້ງ (ເສັ້ນແວງ, ເສັ້ນຂະໜານ) | 19 | 3 | 19 | 1 |
| 3 | **ພາກ A: ເລີ່ມການສໍາຫຼວດ** ການຕິດຕໍ່ກັບຄົວເຮືອນ, ສະຖານະທີ່ຢູ່ອາໄສ, ຈໍານວນຄົວເຮືອນ, ຄົວເຮືອນ-ປະຕິເສດ, ຄົວເຮືອນ-ບໍ່ສາມາດຕິດຕໍ່ໄດ້ | 11 | 8 | 10 | 8 |
| 4 | **ພາກ B – ຂໍ້ມູນຄົວເຮືອນ ແລະ ທີ່ຢູ່ອາໄສ** ປະເພດອາຄານ, ຄຸນລັກສະນະທີ່ຢູ່ອາໄສ, ໄຟຟ້າ, ເຊື້ອໄຟຕົ້ນຕໍທີ່ຄົວເຮືອນໃຊ້ແຕ່ງກິນ, ປະເພດວິດຖ່າຍ, ການຄອບຄອງພາຫະນະ, ເຄື່ອງໃຊ້ໃນຄົວເຮືອນ, ຄົວເຮືອນກະສິກໍາ | 22 | 21 | 0 | 0 |
| 5 | **ພາກ C – ຂໍ້ມູນສະມາຊິກຄົວເຮືອນ** ຈໍານວນສະມາຊິກໃນຄົວເຮືອນ, ຊື່, ນາມສະກຸນ, ເພດ, ສາຍພົວພັນກັບຫົວໜ້າຄົວເຮືອນ, ວັນເດືອນປີເກີດ, ອາຍຸ | 14 | 8 | 13 | 9 |

| ລ/ດ | ຈຳນວນພາກໃນແບບສອບຖາມ | ແບບສອບຖາມ ຄົວເຮືອນສ່ວນບຸຄົນ | | ແບບສອບຖາມ ຄົວເຮືອນລວມໝູ່ | |
|---|---|---|---|---|---|
| | | ຈຳນວນຄຳຖາມທັງໝົດ | ຈຳນວນຄຳຖາມຫຼັກ | ຈຳນວນຄຳຖາມທັງໝົດ | ຈຳນວນຄຳຖາມຫຼັກ |
| 6 | **ພາກ D – ຂໍ້ມູນບຸກຄົນ**<br>ຄຸນລັກສະນະດ້ານພົນລະເມືອງ, ໃບຢັ້ງຢືນການເກີດ, ບັດປະຈຳຕົວ, ສະຖານະພາບສົມລົດ, ສັນຊາດ, ຊົນເຜົ່າ, ສາດສະໜາ, ການຍົກຍ້າຍ, ການຮູ້ໜັງສື ແລະ ລະດັບການສຶກສາຂອງພົນລະເມືອງ, ກຳລັງແຮງງານ, ສະຖານະການມີວຽກເຮັດງານທຳ, ອາຊີບ ແລະ ຂະແໜງການອາຊີບ, ຄວາມພິການ, ການຈະເລີນພັນ | 74 | 72 | 6 | 5 |
| 7 | **ພາກ E – ຂໍ້ມູນການເສຍຊີວິດ**<br>ການເສຍຊີວິດໃນ 12 ເດືອນຜ່ານມາ, ຊື່, ນາມສະກຸນ, ເພດຜູ້ເສຍຊີວິດ, ໃບຢັ້ງຢືນການເສຍຊີວິດ, ອາຍຸ, ເດັກເສຍຊີວິດ, ແມ່ຂອງເດັກທີ່ເສຍຊີວິດ, ເສຍຊີວິດໃນເວລາຖືພາ, ເສຍຊີວິດເວລາເກີດລູກ, ການເສຍຊີວິດຫຼັງເກີດລູກ 42 ວັນ | 15 | 11 | 0 | 0 |
| 8 | **ພາກ F – ຂໍ້ມູນຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນຜູ້ທີ່ຍ້າຍໄປຢູ່ຕ່າງປະເທດ**<br>ຊື່, ນາມສະກຸນ, ເພດ, ອາຍຸ, ປະເທດຢູ່ປະຈຸບັນ, ປີທີ່ຍ້າຍອອກໄປ ແລະ ເຫດຜົນການຍົກຍ້າຍ | 13 | 10 | 0 | 0 |
| 9 | **ພາກ G – ຂໍ້ມູນຜູ້ຢ້ຽມຢາມ**<br>ຜູ້ມາພັກຊົ່ວຄາວຢູ່ໃນຄົວເຮືອນໃນຄືນສຳຫຼວດ (ຊື່, ນາມສະກຸນ, ເພດ, ອາຍຸ, ປະເທດຢູ່ປະຈຸບັນ) | 13 | 10 | 0 | 0 |
| 10 | **ພາກ H – ສຳເລັດການສຳພາດ**<br>ປື້ມສຳມະໂນຄົວໃນຄົວເຮືອນ, ເບີໂທລະສັບຂອງຄົວເຮືອນ, ກາໝາຍສຳຫຼວດ | 6 | 5 | 2 | 1 |
| | **ຄຳຖາມທັງໝົດ** | **196** | **153** | **50** | **24** |

ໂປຣແກຣມແບບສອບຖາມການສຳຫຼວດຈະນຳທາງອັດຕະໂນມັດ ຈາກຄຳຖາມໜຶ່ງໄປຫາຄຳຖາມຕໍ່ໄປ ແລະ ຈາກພາກໜຶ່ງໄປຫາພາກຕໍ່ໄປ. ດັ່ງນັ້ນ, ນັກເດີນສຳຫຼວດບໍ່ຕ້ອງກັງວົນກ່ຽວກັບໂຄງສ້າງ ແລະ ລຳດັບຄຳຖາມຂອງຄຳຖາມໃນແບບສອບຖາມການສຳຫຼວດຄັ້ງນີ້.

### 4.2. ວິທີການເຂົ້າໂປຣແກຣມແບບສອບຖາມການສຳຫຼວດ

ການເຂົ້າໂປຣແກຣມແບບສອບຖາມການສຳຫຼວດ ແມ່ນກົດໃສ່ສັນຍາລັກ CSEntry ( ) ທີ່ຢູ່ໜ້າຫຼັກຂອງອຸປະກອນແທັບເລັດ (ຮູບສະແດງ 4.1). ໜ້າຕ່າງຈະສະແດງຂຶ້ນມາຄືກັບຮູບສະແດງ 4.2, ແລ້ວກົດໃສ່ 'PHC-LAO Private Household' ໃນໂປຣແກຣມດັ່ງກ່າວ.

*ຮູບສະແດງ 4.1: ໜ້າຈໍຫຼັກ ແລະ ໂປຣແກຣມແບບສອບຖາມ*



*ຮູບສະແດງ 4.2: ໜ້າຈໍຫຼັກ ແລະ ໂປຣແກຣມແບບສອບຖາມ*




ເມື່ອເປີດໂປຣແກຣມຂຶ້ນມາເປັນຄັ້ງທຳອິດ, ຊ່ອງປ້ອນຂໍ້ມູນຈະສະແດງຂຶ້ນມາເພື່ອໃຫ້ປ້ອນລະຫັດເຂດສຳຫຼວດທີ່ນັກເດີນສຳຫຼວດຮັບຜິດຊອບ, ປ້ອນ ຊື່ ແລະ ນາມສະກຸນຂອງນັກເດີນສຳຫຼວດ, ເບີໂທຂອງຊິມທີ່ຢູ່ໃນແທບເລັດ ແລະ ເບີໂທຂອງນັກເດີນສຳຫຼວດໃສ່. ເມື່ອເປີດໂປຣແກຣມຄັ້ງຕໍ່ໆໄປ, ຂໍ້ມູນດັ່ງກ່າວແມ່ນໄດ້ຕື່ມໃຫ້ອັດຕະໂນມັດແລ້ວ. ແຕ່ນັກເດີນສຳຫຼວດຈະຕ້ອງໄດ້ໃສ່ລະຫັດຜ່ານ. ເມື່ອສຳເລັດຂັ້ນຕອນນີ້ແລ້ວ ແຜນທີ່ເຂດສຳຫຼວດຈະເປີດຂຶ້ນມາ ຊຶ່ງນັກເດີນສຳຫຼວດສາມາດເລີ່ມແບບສອບຖາມພາກ M – ຂໍ້ມູນອາຄານ ໄດ້ຈາກແຜນທີ່ເຂດສຳຫຼວດດັ່ງກ່າວນີ້.

ໜ້າຈໍສະແດງລະຫັດເຂດສຳຫຼວດຈະປະກົດມີໜັງສືສີແດງ ບົ່ງບອກເຖິງເວີຊັນຂອງໂປຣແກຣມແບບສອບຖາມການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ຕົວຢ່າງ '**PHC v1.02.01**'. ນັກເດີນສຳຫຼວດຈຳເປັນຕ້ອງຕິດຕັ້ງເວີຊັນລ້າສຸດ! ຊຶ່ງນັກເດີນສຳຫຼວດຈະໄດ້ຮັບຂໍ້ຄວາມ ໃນກໍລະນີທີ່ຕ້ອງໄດ້ຕິດຕັ້ງໂປຣແກຣມເວີຊັນປັບປຸງໃໝ່. ສຳລັບການຕິດຕັ້ງໂປຣແກຣມປັບປຸງໃໝ່, ເຂົ້າໄປທີ່ໜ້າຕ່າງເລີ່ມຕົ້ນ (ຮູບສະແດງ 4.2) ແລະ ກົດໃສ່ສັນຍາລັກສາມຈໍ້າທາງຕັ້ງຢູ່ຂວາມືໃນແທບດ້ານເທິງ. ເມື່ອກົດໃສ່ສັນຍາລັກດັ່ງກ່າວ ມັນຈະເປີດລາຍການອອກມາໃຫ້ເລືອກ ໃຫ້ກົດໃສ່ 'Update Installed Applications'. ຖ້າວ່າແທັບເລັດໄດ້ເຊື່ອຕໍ່ກັບອິນເຕີເນັດ, ໂປຣແກຣມຈະຕິດຕັ້ງໃຫ້ອັດຕະໂນມັດໂດຍໃຊ້ເວລາບໍ່ເຖິງນາທີ.




### 4.3. ວິທີການສອບຖາມ ແລະ ບັນທຶກຂໍ້ມູນ ແບບສອບຖາມພາກ M - ຂໍ້ມູນອາຄານ

ຈຸດປະສົງຂອງພາກນີ້ແມ່ນເພື່ອເກັບຂໍ້ມູນກ່ຽວກັບອາຄານທັງໝົດທີ່ຢູ່ໃນເຂດສຳຫຼວດ ແລະ ກວດສອບວ່າມີທີ່ຢູ່ອາໄສ ແລະ ຄົວເຮືອນໃນບັນດາອາຄານດັ່ງກ່າວ ຫຼື ບໍ່. ແບບສອບຖາມພາກນີ້ແມ່ນເລີ່ມຈາກແຜນທີ່ເຂດສຳ

ຫຼວດ, ໃນແຜນທີ່ເຂດສຳຫຼວດທີ່ເປີດຂຶ້ນມາຄັ້ງທຳອິດ ຈຸດຂອງອາຄານທັງໝົດຈະເປັນສີແດງ. ເມື່ອເປີດແຜນທີ່ເຂດສຳຫຼວດໃນຄັ້ງຕໍ່ໆໄປ ສີຈຸດຂອງອາຄານຈະປ່ຽນໄປຕາມຄວາມຄືບໜ້າການສຳຫຼວດໃນອາຄານນັ້ນ (ເບິ່ງພາກທີ 2.8.2 ຂ້າງເທິງ). ສຳລັບການສຳພາດໃນເຂດສຳຫຼວດ, ນັກເດີນສຳຫຼວດຕ້ອງໄປຫາແຕ່ລະອາຄານ ແລະ ທຸກໆອາຄານທີ່ກົງກັບຈຸດຂອງອາຄານທີ່ຢູ່ໃນແຜນທີ່ເຂດສຳຫຼວດ. ເມື່ອນັກເດີນສຳຫຼວດຢູ່ໃນເຂດສຳຫຼວດແລ້ວ, ຈະຮູ້ດີວ່າຈະເລີ່ມຢູ່ຈຸດໃດ ແລະ ໄປທິດທາງໃດ ເພື່ອໃຫ້ສາມາດໄປຫາອາຄານໄດ້ຢ່າງຄົບຖ້ວນ ປາສະຈາກອາຄານທີ່ຫຼົງເຫຼືອຈາກການສຳຫຼວດ. ຖ້າຫາກວ່ານັກເດີນສຳຫຼວດພົບເຫັນອາຄານໃນເຂດສຳຫຼວດຂອງຕົນບໍ່ມີຈຸດຂອງອາຄານ, ນັກເດີນສຳຫຼວດຈຳເປັນຕ້ອງໄດ້ເພີ່ມຈຸດຂອງອາຄານໃຫ້ກັບອາຄານດັ່ງກ່າວ ເຂົ້າໃນແຜນທີ່ເຂດສຳຫຼວດ. ພາກທີ 2.8.4 ອະທິບາຍວິທີການເພີ່ມຈຸດອາຄານ ໂດຍນຳໃຊ້ "ສັນຍາຫຼັກເຄື່ອງໝາຍບວກ" (Add-icon) ໃນເຄື່ອງມືຂອງແຜນທີ່.

ໃນພາກນີ້ແມ່ນມີຄຳຖາມທັງໝົດ 5 ຄຳຖາມ ແລະ 4 ຂໍ້ມູນສ້າງໂດຍອັດຕະໂນມັດ, ຊຶ່ງ 4 ຂໍ້ມູນສ້າງໂດຍອັດຕະໂນມັດ ປະກອບມີ: M.01 - ແຂວງ, M.02 - ເມືອງ, M.03 - ເຂດສຳຫຼວດ ໂດຍຂໍ້ມູນດັ່ງກ່າວໄດ້ຖືກໂຫຼດເຂົ້າໃນໂປຣແກຣມໄວ້ແລ້ວ ແລະ M.09 - ເວລາທີ່ໃຊ້ໃນການສຳພາດ ໂປແກຣມຈະສ້າງໂດຍອັດຕະໂນມັດ ຫຼັງຈາກສຳເລັດການສຳພາດໃນພາກນີ້ ຕາມເວລາທີ່ນັກເດີນສຳຫຼວດໃຊ້ໃນການເກັບກຳຂໍ້ມູນໃນພາກນີ້. ໂປຣແກຣມແບບສອບຖາມຈະບໍ່ສະແດງຄຳຖາມທີ່ນັກເດີນສຳຫຼວດບໍ່ຈຳເປັນຕ້ອງໄດ້ຕອບ ໝາຍຄວາມວ່າ ນັກເດີນສຳຫຼວດຕ້ອງໄດ້ປ້ອນຂໍ້ມູນໃສ່ທຸກຄຳຖາມທີ່ສະແດງຂຶ້ນມາ. ນັກເດີນສຳຕ້ອງໄດ້ປ້ອນຂໍ້ມູນໃສ່ແບບສອບຖາມສຳລັບຄຳຖາມທີ M.04 ຫາ M.08 ໂດຍມີຂໍ້ມູນສະຖານະພາບ, ຈຸດປະສົງການກໍ່ສ້າງອາຄານ ແລະ ສະຖານະທີ່ຢູ່ອາໄສ ແລະ ອື່ນໆ. ຂໍ້ມູນເຫຼົ່ານີ້ຈະຖືກນຳໃຊ້ເພື່ອກຳນົດວ່າອາຄານດັ່ງກ່າວຈະຖືກສຳຫຼວດ ຫຼື ບໍ່. ໂດຍສະຖານະທີ່ຖືກກຳນົດ, ໂປຣແກຣມຈະປ່ຽນສີຈຸດຂອງອາຄານເປັນສີເທົາ (ອາຄານບໍ່ມີທີ່ຢູ່ອາໄສ ແລະ ບໍ່ຈຳເປັນຕ້ອງໄດ້ສຳຫຼວດ) ຫຼື ປ່ຽນເປັນສີເຫຼືອງ (ນັກເດີນສຳຫຼວດຕ້ອງໄດ້ຈົດນັບແຕ່ລະທີ່ຢູ່ອາໄສ ແລະ ແຕ່ລະຄົວເຮືອນໃນອາຄານດັ່ງກ່າວ).

ການເລີ່ມຕົ້ນເກັບກຳຂໍ້ມູນພາກຂໍ້ມູນອາຄານແມ່ນກົດໃສ່ຈຸດຂອງອາຄານທີ່ເປັນສີແດງ ຫຼັງຈາກນັ້ນຄຳຖາມຈະປະກົດອອກມາໃນຫ້ອງສີ່ລ່ຽມນ້ອຍໆໃນໜ້າຈໍແທັບເລັດ, ຊຶ່ງແຖວເທິງສຸດແມ່ນມີເລກລຳດັບອາຄານ (ກຳນົດໂດຍອັດໂນມັດໃນບັນຊີອາຄານ) ພ້ອມກັບຄຳຖາມ. ທຸກຄຳຖາມໃນພາກນີ້ແມ່ນນັກເດີນສຳຫຼວດຈະຕ້ອງໄດ້ຕອບດ້ວຍຕົນເອງໂດຍການສັງເກດ, ເຖິງແມ່ນວ່າບາງອາຄານອາດມີຄວາມຫຍຸ້ງຍາກໃນການສັງເກດ ນັກເດີນສຳຫຼວດກໍ່ຕ້ອງຫາວິທີການເພື່ອໃຫ້ສາມາດເຂົ້າໃຈວ່າຈະຕອບຄຳຖາມແນວວ່າແນວໃດ. ເລືອກຄຳຕອບ ໂດຍການກົດໃສ່ຂໍ້ຄວາມທີ່ຖືກຕ້ອງຕາມລາຍການຄຳຕອບໂດຍກົງ ແລະ ຕ້ອງຢືນຢັນການເລືອກຄຳຕອບດັ່ງກ່າວ ໂດຍການກົດໃສ່ສັນຍາລັກຢືນຢັນຢູ່ດ້ານລຸ່ມຂອງຫ້ອງສີ່ລ່ຽມ. ນັກເດີນສຳຫຼວດສາມາດຍົກເລີກການເລືອກ ແລະ ອອກຈາກຄຳຖາມໂດຍການກົດໃສ່ເຄື່ອງໝາຍຕີນກາສີແດງ 'X' ຢູ່ດ້ານລຸ່ມຂອງຫ້ອງສີ່ລ່ຽມ.

**ຄຳຖາມ:** *M.04 ສະຖານະການກໍ່ສ້າງຂອງອາຄານຫຼັງນີ້ເປັນແນວໃດ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກຳນົດວ່າອາຄານສາມາດເປັນ ຫຼື ມີທີ່ຢູ່ອາໄສບໍ ແລະ ຄົນສາມາດອາໄສຢູ່ໃນອາຄານດັ່ງກ່າວໄດ້ ຫຼື ບໍ.

**ນິຍາມ:** ສະຖານະການກໍ່ສ້າງອາຄານແມ່ນມີ 5 ປະເພດທີ່ເປັນລາຍການຄຳຕອບ ດັ່ງຕໍ່ໄປນີ້:

**ກໍ່ສ້າງສໍາເລັດແລ້ວ:** ໝາຍເຖິງອາຄານທີ່ກໍ່ສ້າງສໍາເລັດສົມບູນແລ້ວ ພ້ອມສໍາລັບການນໍາໃຊ້ແບບຖາວອນ, ຊຶ່ງມີຈຸດປະສົງນໍາໃຊ້ເປັນທີ່ຢູ່ອາໄສ ຫຼື ບໍ່ແມ່ນນໍາໃຊ້ເປັນທີ່ຢູ່ອາໄສກໍ່ຕາມ. ສະຖານະອາຄານກໍ່ສ້າງສໍາເລັດແລ້ວເປັນລາຍຄໍາຕອບທີ່ຈະຖືກເລືອກເປັນສ່ວນຫຼາຍສໍາລັບຄໍາຖາມນີ້.

**ກໍາລັງກໍ່ສ້າງ/ຍັງບໍ່ສໍາເລັດ:** ໝາຍເຖິງອາຄານທີ່ກໍ່ສ້າງຍັງບໍ່ທັນສໍາເລັດສົມບູນເພື່ອນໍາໃຊ້ແບບຖາວອນເທື່ອ ຊຶ່ງອາດມີສ່ວນໃດໜຶ່ງທີ່ກໍ່ສ້າງຍັງບໍ່ທັນສໍາເລັດເຊັ່ນ: ຫຼັງຄາ, ຝາ, (ຕ້ອງໄດ້ໃສ່ລາຍລະອຽດຕື່ມ).



**ອາຄານເປ່ເພ:** ໝາຍເຖິງອາຄານທີ່ສະແດງຈຸດເປັນສີແດງໃນແຜ່ນທີ່ເຂດສໍາຫຼວດ ແລະ ມີຢູ່ຈິງໃນພາກສະໜາມ, ແຕ່ຢູ່ໃນຂະບວນການຫຸບ/ມ້າງ ຫຼື ເປ່ເພ. ຊຶ່ງຢູ່ໃນກໍລະນີເຊັ່ນ: ຝາ ແລະ ຫຼັງຄາຂອງອາຄານຖືກຫຸກ/ມ້າງແລ້ວເປັນສ່ວນຫຼາຍ.



**ບໍ່ຫຼົງເຫຼືອອາຄານ/ຮື້ຖອນອອກໄປແລ້ວ:** ມີຈຸດຂອງອາຄານທີ່ເປັນສີແດງຢູ່ໃນແຜ່ນທີ່ເຂດສໍາຫຼວດ, ແຕ່ບໍ່ເຫັນມີອາຄານຕົວຈິງຢູ່ໃນພາກສະໜາມໃນເວລາສໍາຫຼວດ, ຊຶ່ງເນື່ອງມາຈາກອາຄານໄດ້ຖືກທໍາລາຍ ຫຼື ຮື້ຖອນອອກໄປແລ້ວ. ຫຼັງຈາກເລືອກຄໍາຕອບນີ້, ໂປຣແກຣມຈະກັບຄືນສູ່ແຜ່ນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີເທົາ, ໝາຍຄວາມວ່າ ບໍ່ຈໍາເປັນຕ້ອງສໍາຫຼວດອາຄານດັ່ງກ່າວ ແລະ ສາມາດສືບຕໍ່ສໍາຫຼວດອາຄານຕໍ່ໄປໄດ້ເລີຍ.



**ອາຄານຖືກເພີ່ມຂຶ້ນມາຜິດພາດ:** ລາຍການຄໍາຕອບນີ້ສາມາດເລືອກໄດ້ໃນກໍລະນີຈຸດຂອງອາຄານຖືກເພີ່ມເຂົ້າມາໃນແຜນທີ່ໂດຍບໍ່ໄດ້ຕັ້ງໃຈຈາກການນໍາໃຊ້ຄໍາສັ່ງ "ເຄື່ອງໝາຍບວກ" ໃນເຄື່ອງມືແຜນທີ່ເຂດສໍາຫຼວດ. ຖ້ານັກເດີນສໍາຫຼວດເລືອກຄໍາຕອບນີ້, ໂປຣແກຣມຈະກັບຄືນໄປຫາແຜນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະກາຍເປັນສີເທົາ. ໃນກໍລະນີ, ເມື່ອປ່ຽນເປັນສີເທົາແລ້ວນັກເດີນສໍາຫຼວດພົບວ່າອາຄານດັ່ງກ່າວແມ່ນຈໍາເປັນຕ້ອງໄດ້ເພີ່ມເຂົ້າມາ, ນັກເດີນສໍາຫຼວດສາມາດເປີດຈຸດອາຄານສີເທົາຂຶ້ນມາໂດຍການກົດໃສ່ຈຸດດັ່ງກ່າວ ແລະ ຈະກາຍເປັນຈຸດສີແດງ.

**ວິທີບັນການທຶກຄໍາຕອບ:** ເລືອກໜຶ່ງໃນຫ້າລາຍການຄໍາຕອບ ຕາມການສັງເກດອາຄານຕົວຈິງ ຢູ່ພາກສະໜາມຂອງນັກເດີນສໍາຫຼວດ.

**ຄໍາຖາມ: M.05** *ຈຸດປະສົງຂອງການສ້າງອາຄານຫຼັງນີ້ – ຫຼື ສ່ວນໃດໜຶ່ງຂອງອາຄານ – ແມ່ນສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສສໍາລັບຄົນ ຫຼື ບໍ?*




**ຈຸດປະສົງ:** ຄໍາຖາມນີ້ແມ່ນເພື່ອກໍານົດວ່າມີຫົວໜ່ວຍການສໍາຫຼວດຢູ່ໃນອາຄານນີ້ ຫຼື ບໍ. ນັກເດີນສໍາ

ຫຼວດຈຳເປັນຕ້ອງໄດ້ກວດສອບຄັກແນ່ກ່ອນທີ່ຈະຕອບຄຳຖາມນີ້, ໂດຍສະເພາະແມ່ນອາຄານຂະໜາດໃຫຍ່ ແລະ ມີລັກສະນະສັບສົນ.

**ນິຍາມ:** ຈຸດປະສົງການກໍ່ສ້າງອາຄານແມ່ນມີ 3 ລາຍການຄຳຕອບ ດັ່ງຕໍ່ໄປນີ້:

- **ທັງໝົດຂອງອາຄານຫຼັງນີ້ຖືກສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສສຳລັບຄົນເທົ່ານັ້ນ:** ປະກອບມີ ເຮືອນດ່ຽວ ຫຼື ຫ້ອງແຖວ/ອະພາດເມັນ ທີ່ມີຈຸດປະສົງນຳໃຊ້ສະເພາະເປັນທີ່ຢູ່ອາໄສຂອງຄົນເທົ່ານັ້ນ ເຖິງແມ່ນວ່າໃນປັດຈຸບັນໄດ້ນຳໃຊ້ເພື່ອຈຸດປະສົງອື່ນ ຫຼື ເປັນທີ່ຢູ່ອາໄສຫວ່າງເປົ່າກໍ່ຕາມ. ໃຫ້ຈື່ໄວ້ວ່າ, ນີ້ແມ່ນການສຳຫຼວດທີ່ຢູ່ອາໄສ ແລະ ຈະຈົດນັບເອົາທີ່ຢູ່ອາໄສທັງໝົດ ເຖິງວ່າຈະມີຄົນອາໄສຢູ່ ຫຼື ບໍ່ ກໍ່ຕາມ;
- **ສ່ວນໜຶ່ງ ຂອງອາຄານຫຼັງນີ້ສ້າງຂຶ້ນ ເພື່ອເປັນທີ່ຢູ່ອາໄສຂອງຄົນ:** ໝາຍເຖິງອາຄານທີ່ສ້າງຂຶ້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສສຳລັບຄົນ ແລະ ຍັງສ້າງຂຶ້ນເພື່ອຈຸດປະສົງອື່ນນຳ. ຕົວຢ່າງ, ອາຄານທີ່ນຳໃຊ້ເປັນຮ້ານຄ້າໃນຊັ້ນທີ່ໜຶ່ງ ແລະ ເປັນຫ້ອງແຖວ/ອະພາດເມັນ ໃນຊັ້ນຖັດຂຶ້ນໄປ, ອາຄານທີ່ສ້າງເປັນຄລີນິກດ້ານໜ້າ ແລະ ເປັນທີ່ຢູ່ອາໄສດ້ານຫຼັງ ແລະ ອື່ນໆ;
- **ທັງໝົດຂອງອາຄານຫຼັງນີ້ ສ້າງຂຶ້ນບໍ່ແມ່ນຈຸດປະສົງສຳລັບເປັນທີ່ຢູ່ອາໄສຂອງຄົນ:** ໝາຍເຖິງອາຄານທະນາຄານ, ໂຮງງານ, ຟາມ, ສາງສິນຄ້າ, ຮ້ານຄ້າ ຫຼື ອະນຸສາວະລີ ແລະ ອື່ນໆ. ເຖິງແມ່ນອາຄານບໍ່ໄດ້ສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສສຳລັບຄົນ ແຕ່ອາດມີຄົນອາໄສຢູ່ ຊຶ່ງຈະມີຄຳຖາມເພື່ອຖາມວ່າມີຄົນອາໃສຢູ່ອາຄານດັ່ງກ່າວບໍ. ຖ້າເລືອກຄຳຕອບນີ້ ໂປຣແກຣມຈະພາຂ້າມໄປຫາຄຳຖາມ M.07 ເພື່ອຖາມຄາຖາມດັ່ງກ່າວ.

**ວິທີການບັນທຶກຄຳຕອບ:** ເລືອກໜຶ່ງໃນສາມລາຍການຄຳຕອບ ຕາມການສັງເກດອາຄານຕົວຈິງ ຢູ່ພາກສະໜາມຂອງນັກເດີນສຳຫຼວດ.

**ຄຳຖາມ: M.06** *ແມ່ນຄົວເຮືອນປະເພດໃດ ທີ່ອາໄສຢູ່ໃນ (ສ່ວນທີ່ເປັນທີ່ຢູ່ອາໄສ) ຂອງອາຄານນີ້?*




ຄຳຖາມນີ້ຈະຖືກຖາມຖ້າວ່ານັກເດີນສຳຫຼວດ ຄຳຕອບທີ 'ທັງໝົດຂອງອາຄານຫຼັງນີ້ຖືກສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສສຳລັບຄົນເທົ່ານັ້ນ' ຫຼື ຄຳຕອບທີ 2 'ສ່ວນໜຶ່ງ ຂອງອາຄານຫຼັງນີ້ສ້າງຂຶ້ນ ເພື່ອເປັນທີ່ຢູ່ອາໄສຂອງຄົນ' ຂອງຄຳຖາມກ່ອນໜ້ານີ້.

**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກວດສອບວ່າແມ່ນຄົວເຮືອນປະເພດໃດອາໄສຢູ່ທັງໝົດ ຫຼື ສ່ວນໜຶ່ງຂອງອາຄານ. ນີ້ແມ່ນຄຳຖາມເພື່ອໃຫ້ນັກເດີນສຳຫຼວດສາມາດກຳນົດໄດ້ວ່າອາຄານສ້າງຂຶ້ນເພື່ອເປັນທີ່ຢູ່ອາໄສສຳລັບຄົວເຮືອນສ່ວນບຸກຄົນ ຫຼື ຄົວເຮືອນລວມໝູ່. ມັນມີຄວາມສຳຄັນຫຼາຍຍ້ອນວ່າ ການສຳຫຼວດຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນເຮືອນລວມໝູ່ແມ່ນມີວິທີທາງທີ່ແຕກຕ່າງກັນ.

**ນິຍາມ:** ຄຳຖາມນີ້ແມ່ນມີ 3 ລາຍການຄຳຕອບໃຫ້ເລືອກດັ່ງຕໍ່ໄປນີ້:

- **ຄົວເຮືອນສ່ວນບຸກຄົນ:** ໝາຍເຖິງອາຄານ ຫຼື ສ່ວນໜຶ່ງຂອງອາຄານ (ສ່ວນທີ່ເປັນທີ່ຢູ່ອາໄສ) ແມ່ນສ້າງຂຶ້ນມາເພື່ອເປັນທີ່ຢູ່ອາໄສສຳລັບຄົວເຮືອນສ່ວນບຸກຄົນ ຊຶ່ງແມ່ນຄົວເຮືອນທີ່ມີຄົນດຽວ ຫຼື ຫຼາຍຄົນ ອາໄສຢູ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງທີ່ຢູ່ອາໄສຮ່ວມກັນ ແລະ ກິນເຂົ້າຮ່ວມກັນ. ສະມາຊິກຂອງຄົວເຮືອນທີ່ມີຫຼາຍຄົນອາດປະກອບດ້ວຍ: ຜົວ, ເມຍ, ລູກ, ພໍ່ແມ່, ລູກໄພ້-ລູກເຂີຍ, ຫຼານ, ພີ່ນ້ອງ ແລະ ບຸກຄົນອື່ນທີ່ບໍ່ແມ່ນຍາດພີ່ນ້ອງ;
- **ຄົວເຮືອນລວມໝູ່:** ໝາຍເຖິງອາຄານ ຫຼື ສ່ວນໜຶ່ງຂອງອາຄານ (ສ່ວນທີ່ເປັນທີ່ຢູ່ອາໄສ) ແມ່ນສ້າງຂຶ້ນມາເພື່ອເປັນທີ່ຢູ່ອາໄສສຳລັບຄົວເຮືອນລວມໝູ່ ຊຶ່ງແມ່ນກຸ່ມຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສ ຫຼື ອາຄານ ທີ່ຂຶ້ນກັບບັນຊີການຄຸ້ມຄອງຂອງການຈັດຕັ້ງໃດໜຶ່ງເຊັ່ນ: ວັດ, ຫໍພັກນັກຮຽນ, ສູນລ້ຽງເດັກກຳພ້າ, ແຄ້ມກຳມະກອນ, ໂຮງແຮມ, ສູນດູແລສຸຂະພາບຄົນພິການ ແລະ ຜູ້ອາຍຸສູງ ແລະ ອື່ນໆ;

- ທັງສອງ, ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່: ໝາຍເຖິງອາຄານ ຫຼື ສ່ວນໜຶ່ງຂອງອາຄານ (ສ່ວນທີ່ເປັນທີ່ຢູ່ອາໄສ) ແມ່ນສ້າງຂຶ້ນມາເພື່ອເປັນທີ່ຢູ່ອາໄສສາລັບຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່ ທີ່ອາດຈະມີທັງສອງປະເພດຄົວເຮືອນໃນທີ່ຢູ່ອາໄສດຽວກັນ.

**ວິທີການບັນທຶກຄໍາຕອບ:** ໃນຄໍາຖາມນີ້ມີ 3 ລາຍການຄາຕອບໃຫ້ເລືອກ, ນັກເດີນສໍາຫຼວດຕ້ອງໄດ້ຊອກຫາວ່າທີ່ຢູ່ອາໄສໃນອາຄານ ຖືກສ້າງຂຶ້ນເພື່ອເປັນທີ່ຢູ່ສໍາລັບຄົວເຮືອນສ່ວນບຸກຄົນ ຫຼື ຄົວເຮືອນລວມໝູ່ ຫຼື ເປັນທັງສອງຢ່າງ. ເບິ່ງພາກທີ 2.5.5 ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບຄົວເຮືອນລວມໝູ່.




**ໝາຍເຫດ:** ຖ້າວ່ານັກເດີນສໍາຫຼວດເລືອກ 'ສໍາລັບຄົວເຮືອນສ່ວນບຸກຄົນເທົ່ານັ້ນ' ຫຼື 'ສໍາລັບທັງຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່', ໂປຣແກຣມຈະກັບຄືນສູ່ແຜ່ນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີເຫຼືອງ, ໝາຍຄວາມວ່ານັກເດີນສໍາຫຼວດຕ້ອງໄດ້ເລີ່ມສໍາພາດທີ່ຢູ່ອາໄສ (ແລະ ຄົວເຮືອນສ່ວນບຸກຄົນ) ໃນອາຄານດັ່ງກ່າວ. ຖ້າວ່ານັກເດີນສໍາຫຼວດເລືອກ 'ສໍາລັບຄົວເຮືອນລວມໝູ່ເທົ່ານັ້ນ', ໂປຣແກຣມຈະກັບຄືນສູ່ແຜ່ນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີເທົາ. ໃນກໍລະນີນີ້, ນັກເດີນສໍາຫຼວດສາມາດໄປສໍາຫຼວດອາຄານຕໍ່ໄປໄດ້ເລີຍ.

**ຄໍາຖາມ: M.07** *ມີຄົນອາໄສຢູ່ໃນອາຄານຫຼັງນີ້ບໍ?*

ຄໍາຖາມນີ້ຈະຖືກຖາມ ຖ້າວ່າສະຖານະການກໍ່ສ້າງອາຄານແມ່ນ 'ກໍາລັງກໍ່ສ້າງ/ຍັງບໍ່ທັນສໍາເລັດ' ຫຼື 'ອາຄານເປ່ເພ', ຫຼື ອາຄານບໍ່ໄດ້ຖືກສ້າງເພື່ອຈຸດປະສົງເປັນທີ່ຢູ່ອາໄສ.
**ຈຸດປະສົງ:** ເພື່ອກວດສອບວ່າແຕ່ລະອາຄານທີ່ຕົກໃນກໍລະນີທີ່ກ່າວມາຂ້າງເທິງນີ້ວ່າມີຄົນໃດຄົນໜຶ່ງ ຫຼື ຫຼາຍຄົນອາໄສຢູ່ໃນອາຄານນັ້ນ ຫຼື ບໍ. ມັນສາມາດເປັນໄປໄດ້ວ່າຮ້ານຄ້າຈະຖືກໃຊ້ເປັນຫ້ອງນອນ ແລະ ໂຮງງານ ຫຼື ອາຄານສໍາລັບທະນາຄານ ຈະມີຫ້ອງນ້ອຍສໍາລັບພະນັກງານຮັກສາຄວາມປອດໄພອາໄສຢູ່.

**ວິທີບັນການທຶກຄໍາຕອບ:**

- ຖ້າວ່າມີຄົນອາໄສຢູ່ ນັກເດີນສໍາຫຼວດເລືອກຄໍາຕອບ 'ມີ', ໂປຣແກຣມຈະກັບຄືນສູ່ແຜ່ນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີເຫຼືອງ, ໝາຍຄວາມວ່ານັກເດີນສໍາຫຼວດຈະຕ້ອງເລີ່ມສໍາພາດທີ່ຢູ່ອາໄສ (ແລະ ຄົວເຮືອນ) ໃນອາຄານດັ່ງກ່າວ.
- ຖ້າວ່າບໍ່ມີຄົນອາໄສຢູ່ ນັກເດີນສໍາຫຼວດເລືອກຄໍາຕອບ 'ບໍ່ມີ', ໂປຣແກຣມຈະກັບຄືນສູ່ແຜນທີ່ເຂດສໍາຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີເທົາ. ໃນກໍລະນີນີ້, ນັກເດີນສໍາຫຼວດສາມາດໄປສໍາຫຼວດອາຄານຕໍ່ໄປໄດ້ເລີຍ.




**ຄໍາຖາມ: M.08** *ອາຄານຫຼັງນີ້ສ້າງຂຶ້ນມາເພື່ອນໍາໃຊ້ຈຸດປະສົງຫຍັງ?*

ຄໍາຖາມນີ້ຈະຖືກຖາມໃນກໍລະນີທີ່ທັງໝົດຂອງອາຄານສ້າງຂຶ້ນບໍ່ແມ່ນຈຸດປະສົງເປັນທີ່ຢູ່ອາໄສສໍາລັບຄົນ.

**ຈຸດປະສົງ:** ເພື່ອກວດສອບວ່າອາຄານທີ່ສ້າງຂຶ້ນບໍ່ແມ່ນຈຸດປະສົງເປັນທີ່ຢູ່ອາໄສສໍາລັບຄົນ ແມ່ນສ້າງຂຶ້ນເພື່ອຈຸດປະສົງສະເພາະຫຍັງ.

**ນິຍາມ:** ອາຄານທີ່ສ້າງຂຶ້ນບໍ່ແມ່ນຈຸດປະສົງເປັນທີ່ຢູ່ອາໄສສຳລັບຄົນ ແມ່ນໄດ້ແບ່ງອອກເປັນ 4 ລາຍການຄຳຕອບ ດັ່ງຕໍ່ໄປນີ້:

- **ທຸລະກິດ:** ແມ່ນອາຄານທີ່ສ້າງຂຶ້ນເພື່ອຈຸດປະສົງນຳໃຊ້ສຳລັບການດຳເນີນທຸລະກິດຕ່າງໆເຊັ່ນ: ທະນາຄານ, ຮ້ານຄ້າ, ສາງສິນຄ້າ, ໂຮງຮຽນເອກະຊົນ, ໂຮງແຮມ, ຮ້ານອາຫານ, ໂຮງງານ ແລະ ອື່ນໆ;
- **ສຳນັກງານອົງການຂອງລັດ:** ແມ່ນອາຄານທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນຳໃຊ້ຂອງບັນດາອົງການພາກລັດເຊັ່ນ: ໂຮງຮຽນພາກລັດ, ໂຮງໝໍ, ຫ້ອງການ/ສຳນັກງານກະຊວງ/ແຂວງ/ພະແນກການ ແລະ ອື່ນໆ;
- **ອາຄານເສີມ:** ແມ່ນອາຄານທີ່ຄົວເຮືອນສ້າງຂຶ້ນມາເພື່ອນຳໃຊ້ຈຸດປະສົງສະເພາະໃດໜຶ່ງຂອງຄົວເຮືອນ ແຕ່ບໍ່ແມ່ນທຸລະກິດເຊັ່ນ: ສາງເກັບເຄື່ອງ, ຄອກລ້ຽງສັດ, ເຮືອນຄົວທີ່ແຍກຕ່າງຫາກ, ຫ້ອງນ້ຳ, ໂຮງຈອດລົດ ແລະ ອື່ນໆ.
- **ອື່ນໆ:** ປະກອບມີ ອຸສາວະລີ, ອະນຸສອນສະຖານ ແລະ ອື່ນໆ.

## 4.4. ວິທີການສອບຖາມ ແລະ ບັນທຶກຂໍ້ມູນ ແບບສອບຖາມພາກ ID-RP - ຂໍ້ມູນເອກະລັກ

### 4.4.1 ການເລີ່ມແບບສອບຖາມພາກ ID-RP - ຂໍ້ມູນເອກະລັກ

ແບບສອບຖາມພາກ DI-RP - ຂໍ້ມູນເອກະລັກ ແມ່ນເລີ່ມຈາກຈຸດຂອງອາຄານທີ່ເປັນສີເຫຼືອງໃນແຜ່ນທີ່ເຂດສຳຫຼວດ ຊຶ່ງເປັນອາຄານທີ່ມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສທີ່ຕ້ອງໄດ້ສຳຫຼວດ. ຕ້ອງໄດ້ກວດສອບຢ່າງລະມັດລະວັງຢູ່ຕະຫຼອດວ່າມີຫຼາຍກວ່າໜຶ່ງທີ່ຢູ່ອາໄສໃນອາຄານ ຫຼື ບໍ. ທີ່ຢູ່ອາໄສສ່ວນຫຼາຍແມ່ນມີຄົວເຮືອນອາໄສຢູ່ທີ່ຈະຕ້ອງໄດ້ສຳຫຼວດທີ່ຢູ່ອາໄສດັ່ງກ່າວ. ໝາຍເຫດ: ທີ່ຢູ່ອາໄສຫວ່າງເປົ່າ (ທີ່ຢູ່ອາໄສທີ່ບໍ່ມີຄົນອາໄສຢູ່) ກໍ່ຕ້ອງໄດ້ສຳຫຼວດເຊັ່ນກັນ.

ນັກເດີນສຳຫຼວດເຂົ້າຫາແບບສອບຖາມການສຳຫຼວດພາກນີ້ ໂດຍການກົດໃສ່ຈຸດຂອງອາຄານທີ່ເປັນສີເຫຼືອງ. ໃນທີ່ນີ້ຈະເປີດໜ້າຕ່າງສະແດງຂໍ້ມູນກ່ຽວກັບເລກທີອາຄານ, ຈຳນວນທີ່ຢູ່ອາໄສທີ່ສຳພາດສຳເລັດແລ້ວ ແລະ ຈຳນວນທີ່ຢູ່ອາໄສທີ່ຄາດວ່າຕ້ອງໄດ້ສຳຫຼວດໃນອາຄານ. ຕົວເລກຄາດຄະເນດັ່ງກ່າວ ແມ່ນອີງໃສ່ການຈັບຈຸດທີ່ຕັ້ງ ແລະ ແຕ້ມແຜນທີ່ ທີ່ໄດ້ເຮັດສຳເລັດໄປແລ້ວໃນຂັ້ນຕອນການກະກຽມການສຳຫຼວດ. ນັກເດີນສຳຫຼວດຈະຕ້ອງໄດ້ກວດສອບວ່າຈຳນວນທີ່ຢູ່ອາໄສໃນອາຄານດັ່ງກ່າວທີ່ຕ້ອງໄດ້ສຳຫຼວດຖືກຕ້ອງ ຫຼື ບໍ, ມີຫຼາຍ ຫຼື ໜ້ອຍກວ່າທີ່ຄາດຄະເນໄວ້ ຫຼື ບໍ.




ໜ້າຕ່າງດັ່ງກ່າວສະແດງຂຶ້ນເປັນຄັ້ງທຳອິດ ປະກອບມີສອງລາຍການຄຳຕອບໃຫ້ເລືອກ: 'ເພີ່ມທີ່ຢູ່ອາໄສໃນອາຄານ' ແລະ 'ປິດການສຳຫຼວດໃນອາຄານນີ້'. ລາຍການຄຳຕອບທີສອງຈະສາມາດເລືອກໄດ້ກໍ່ຕໍ່ເມື່ອທີ່ຢູ່ອາໄສທັງໝົດໃນອາຄານໄດ້ຖືກສຳຫຼວດໝົດແລ້ວ. ເລືອກລາຍການຄຳຕອບທຳອິດ 'ເພີ່ມທີ່ຢູ່ອາໄສໃນອາຄານ' ເພື່ອເລີ່ມແບບສອບຖາມພາກ DI-RP - ຂໍ້ມູນເອກະລັກ. ຫຼັງຈາກເລືອກແລ້ວມັນຈະເລີ່ມແບບສອບຖາມພາກນີ້ທັນທີ.




ຫຼັງຈາກນັກເດີນສຳຫຼວດໄດ້ສຳພາດທີ່ຢູ່ອາໄສແລ້ວ ຫຼື ໄດ້ເຂົ້າສຳພາດແລ້ວ, ນັກເດີນສຳຫຼວດສາມາດເປີດອາຄານທີ່ມີຈຸດສີເຫຼືອງຄືນໃໝ່ເວລາໃດກໍ່ໄດ້ ເພື່ອເພີ່ມທີ່ຢູ່ອາໄສອື່ນ ຫຼື ສືບຕໍ່ສຳພາດທີ່ຢູ່ອາໄສທຳອິດທີ່ສຳພາດຍັງບໍ່ທັນສຳເລັດ ດ້ວຍເຫດຜົນໃດໆກໍ່ຕາມ. ໃນກໍລະນີດັ່ງກ່າວ, ຂໍ້ມູນກ່ຽວກັບທີ່ຢູ່ອາໄສທຳອິດຈະເພີ່ມເຂົ້າມາໃນຫ້ອງສີ່ລ່ຽມ. ມັນຈະປັບປຸງຂໍ້ມູນກ່ຽວກັບຈຳນວນທີ່ຢູ່ອາໄສທີ່ຖືກສຳພາດຢູ່ແຖວ

ເທິງສຸດ ແລະ ລະບຸທີ່ຢູ່ອາໄສທີ່ຖືກສຳພາດຢູ່ຖັດລົງມາ ພ້ອມດ້ວຍຂໍ້ມູນຈຳນວນໜຶ່ງກ່ຽວກັບທີ່ຢູ່ອາໄສດັ່ງກ່າວ. ການສະແດງດັ່ງກ່າວແມ່ນຂຶ້ນກັບການສຳພາດທີ່ຢູ່ອາໄສສຳເລັດໄປຫຼາຍເທົ່າໃດ, ມັນປະກອບດ້ວຍຂໍ້ມູນກ່ຽວກັບ:

- ເລກທີ່ອາຄານ;
- ລຳດັບຊັ້ນຂອງອາຄານບ່ອນທີ່ຢູ່ອາໄສດັ່ງກ່າວຕັ້ງຢູ່;
- ລຳດັບທີ່ຢູ່ອາໄສໃນຊັ້ນດັ່ງກ່າວ;
- ລຳດັບຄົວເຮືອນໃນທີ່ຢູ່ອາໄສ;
- ຊື່ຄົວໜ້າຄົວເຮືອນ;
- ສັນຍາລັກສະຖານະການສຳຫຼວດທີ່ຢູ່ອາໄສ.

ສັນຍາລັກສະຖານະການສຳຫຼວດສາມາດເປັນໜຶ່ງໃນຈຳນວນຕໍ່ໄປນີ້:

| | |
|---|---|
| ✓ | **ສັນຍາລັກເຄື່ອງໝາຍຢືນຢັນ:** ບົ່ງບອກເຖິງການສາຫຼວດທີ່ຢູ່ອາໄສແມ່ນສຳເລັດແລ້ວ. |
| ⏳ | **ສັນຍາລັກໂມງຊາຍ:** ບົ່ງບອກເຖິງການສຳຫຼວດທີ່ຢູ່ອາໄສແມ່ນໄດ້ເລີ່ມຂຶ້ນແລ້ວ, ແຕ່ມັນຍັງບໍ່ທັນສຳເລັດເທື່ອ. ນັກເດີນສຳຫຼວດຈະຕ້ອງກັບຄືນໄປສຳພາດໃຫ້ສຳເລັດ, ສືບຕໍ່ສຳພາດໂດຍການກົດໃສ່ຈຸດຂອງອາຄານທີ່ເປັນສີເຫຼືອງອີກຄັ້ງ. |
| ? | **ສັນຍາລັກເຄື່ອງໝາຍຖາມ:** ບົ່ງບອກວ່າມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສ ຍັງບໍ່ສາມາດສຳພາດໄດ້, ຕົວຢ່າງ, ບໍ່ມີຄົນຢູ່ເຮືອນ, ເວລາໄປຫາບໍ່ສະດວກໃຫ້ສຳພາດສຳລັບຄົວເຮືອນ. ນັກເດີນສຳຫຼວດຈະຕ້ອງກັບຄືນມາເພື່ອເລີ່ມການສຳພາດໃໝ່, ເລີ່ມການສຳພາດໂດຍການກົດໃສ່ຈຸດຂອງອາຄານທີ່ເປັນສີເຫຼືອງອີກຄັ້ງ. |
| ⛔ | **ສັນຍາລັກເຄື່ອງໝາຍຫ້າມເຂົ້າ:** ບົ່ງບອກເຖິງມີຄົວເຮືອນປະຕິເສດການໃຫ້ສຳພາດ. ນັກກວດກາ ຫຼື ຕາງໜ້າຊຸມຊົນອາດໄປຫາຄົວເຮືອນເພື່ອປຸກລະດົມການໃຫ້ການຮ່ວມມືໃນການຫຼວດ. |

ນັກເດີນສຳຫຼວດສາມາດເລືອກບັນຊີທີ່ຢູ່ອາໄສໃດໆກໍ່ໄດ້ທີ່ສະແດງໃນຫ້ອງສີ່ລ່ຽມ ເພື່ອເປີດການສຳພາດທີ່ຢູ່ອາໄສດັ່ງກ່າວອີກຄັ້ງ. ໂປຣແກຣມຈະຖາມຫາການຢືນຢັນການເລືອກດັ່ງກ່າວ.

ເມື່ອສຳເລັດການສຳຫຼວດທີ່ຢູ່ອາໄສທັງໝົດໃນອາຄານ – ດ້ວຍການສຳເລັດແບບສອບຖາມທັງໝົດທຸກພາກ ຫຼື ຫຼັງຈາກພະຍາຍາມສຳພາດຄົວເຮືອນທີ່ຍັງບໍ່ສຳເລັດຢ່າງໜ້ອຍສາມຄັ້ງ ຫຼື ຄົວເຮືອນປະຕິເສດ – ໂປຣແກຣມຈະອະນຸຍາດໃຫ້ນັກເດີນສຳຫຼວດປິດການສຳຫຼວດໃນອາຄານດັ່ງກ່າວ ໂດຍການເລືອກຄຳຕອບ 'ປິດການສຳຫຼວດອາຄານນີ້' ແລະ ຢືນຢັນການເລືອກຄຳຕອບ. ຈາກນັ້ນໂປຣແກຣມຈະກັບຄືນໄປຫາແຜນທີ່ເຂດສຳຫຼວດ ແລະ ຈຸດຂອງອາຄານຈະປ່ຽນເປັນສີຂຽວ (ເປັນສີຂຽວເຕັມ ຫຼື ມີຈຸດສີຟ້າ ຫຼື ສີແດງ ຢູ່ກາງຈຸດສີຂຽວ; ເບິ່ງພາກທີ 2.8.2 ຂ້າງເທິງ).

### 4.4.2 ແບບສອບຖາມພາກ ID-RP – ຂໍ້ມູນເອກະລັກ

ຈຸດປະສົງຂອງແບບສອບຖາມພາກ ID-RP – ຂໍ້ມູນເອກະລັກ ແມ່ນເພື່ອກຳນົດຄຸນລັກສະນະສະເພາະຂອງທີ່ຢູ່ອາໄສ ຮັບໃຊ້ສຳລັບການກວດສອບ ແລະ ຕິດຕາມການສຳຫຼວດ. ໃນແບບສອບຖາມພາກ ID-RP - ຂໍ້ມູນເອກະລັກ ມີ 3 ຄຳຖາມ 16 ຂໍ້ມູນສ້າງຂຶ້ນອັດຕະໂນມັດ. ສອງຄຳຖາມທຳອິດ ແມ່ນກ່ຽວກັບການກຳນົດທີ່ຢູ່ອາໄສໃນອາຄານ ຊຶ່ງນັກເດີນສຳຫຼວດຕ້ອງໄດ້ຕອບດ້ວຍຕົນເອງ. ມັນມີຄວາມຈຳເປັນໃນເວລາທີ່ນັກເດີນສຳຫຼວດເອງ, ນັກກວດກາ ຫຼື ບຸກຄົນອື່ນຂອງການສຳຫຼວດຕ້ອງການກັບມາຫາທີ່ຢູ່ອາໄສນັ້ນອີກຄັ້ງ.

ໃຫ້ຈື່ໄວ້ວ່າ ທີ່ຢູ່ອາໄສໃໝ່ທີ່ໄດ້ເລີ່ມສຳຫຼວດ, ນັກເດີນສຳຫຼວດຈຳຕ້ອງເຮັດສຳເລັດຄຳຖາມທີ ID.09 ແລະ ID.10 ກ່ອນທີ່ຈະເຂາະປະຕູທີ່ຢູ່ອາໄສນັ້ນ ຫຼື ພະຍາຍາມຕິດຕໍ່ກັບຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວ.




**ຄຳຖາມ:** ID.09. ເລກລຳດັບຊັ້ນ – *ຂຽນເລກລຳດັບຊັ້ນທີ່ເປັນທາງເຂົ້າທີ່ຢູ່ອາໄສ*

**ຈຸດປະສົງ:** ເພື່ອບັນທຶກລຳດັບຊັ້ນຂອງອາຄານ ບ່ອນທີ່ທາງເຂົ້າ/ປະຕູເຂົ້າທີ່ຢູ່ອາໄສຕັ້ງຢູ່ ນຳໃຊ້ເປັນຂໍ້ມູນໃຫ້ແກ່ນັກເດີນສຳຫຼວດໃນເວລາທີ່ຕ້ອງການກັບໄປຫາທີ່ຢູ່ອາໄສ ຫຼື ຄົວເຮືອນທີ່ຢູ່ໃນຊັ້ນດັ່ງກ່າວ.

**ນິຍາມ:** ເລກລຳດັບຊັ້ນໝາຍເຖິງລຳດັບຊັ້ນຂອງອາຄານ ບ່ອນທີ່ທາງເຂົ້າ/ປະຕູເຂົ້າທີ່ຢູ່ອາໄສຕັ້ງຢູ່. ສຳລັບເຮືອນດ່ຽວ, ສ່ວນໃຫຍ່ແມ່ນມີທາງເຂົ້າ/ປະຕູເຂົ້າອາຄານ ແລະ ທາງເຂົ້າ/ປະຕູເຂົ້າທີ່ຢູ່ອາໄສແມ່ນອັນດຽວກັນ ເຊິ່ງເປັນຊັ້ນໜ້າດິນ. ເຖິງຢ່າງໃດກໍ່ຕາມ, ອາຄານອາພາດເມັນ/ຫ້ອງແຖວ ສາມາດມີຫຼາຍຊັ້ນໄດ້ ໂດຍແຕ່ລະຊັ້ນອາດມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສ. ໃນກໍລະນີດັ່ງກ່າວ, ທາງເຂົ້າ/ປະຕູເຂົ້າອາຄານ ປົກກະຕິແລ້ວແມ່ນຢູ່ຊັ້ນໜ້າດິນ, ແຕ່ວ່າທາງເຂົ້າ/ປະຕູເຂົ້າທີ່ຢູ່ອາໄສແມ່ນຢູ່ແຕ່ລະຊັ້ນແຕກຕ່າງກັນ.

ສຳລັບເລກລຳດັບຊັ້ນ, ນັກເດີນສຳຫຼວດຕ້ອງນຳໃຊ້ຫຼັກການຊັ້ນໜ້າດິນ – ຊັ້ນທີ່ຢູ່ໃນລະດັບດຽວກັນກັບທາງ/ຖະໜົນ – ເປັນລຳດັບຊັ້ນທີ 1. ປົກກະຕິແລ້ວເຮືອນດ່ຽວຈະມີທາງເຂົ້າດຽວຢູ່ຊັ້ນໜ້າດິນ, ຊຶ່ງມັນແມ່ນຊັ້ນທີ 1 (ຮູບສະແດງ 4.3.a) ເຖິງແມ່ນວ່າຈະເປັນເຮືອນຮ້ານ ຫຼື ເຮືອນຫຼາຍຊັ້ນກໍ່ຕາມ. ສຳລັບອາຄານຫຼາຍຊັ້ນ (ຮູບສະແດງ 4.3.b), ທາງເຂົ້າ/ປະຕູສູ່ອາຄານ ອາດສາມາດເຂົ້າສູ່ທີ່ຢູ່ອາໄສໃນຊັ້ນໜ້າດິນ, ຊຶ່ງແມ່ນຊັ້ນທີ 1. ໃນຊັ້ນທີ 1, ໃຫ້ນັກເດີນສຳຫຼວດເລີ່ມນັບເລກລຳດັບຊັ້ນຂຶ້ນຕໍ່ໆໄປ. ນັກເດີນສຳຫຼວດຄວນຈື່ໄວ້ວ່າ ບໍ່ຄວນນຳໃຊ້ເລກລຳດັບຊັ້ນຕາມທີ່ຕິດໄວ້ໃນອາຄານ (ຕົວຢ່າງ, ໃນລິບ, ຝາ ຫຼື ພື້ນອາຄານ); ນັກເດີນສຳຫຼວດຕ້ອງກຳນົດເລກລຳດັບຊັ້ນດ້ວຍຕົນເອງ ແລະ ນຳໃຊ້ເລກລຳດັບຕາມລະບົບຂອງການສຳຫຼວດ.

ຖ້າວ່າບໍ່ມີທີ່ຢູ່ອາໄສໃນຊັ້ນໜ້າດິນຂອງອາຄານທີ່ມີຫຼາຍຊັ້ນ (ຕົວຢ່າງ, ຖ້າວ່າຊັ້ນໜ້າດິນແມ່ນຮ້ານຄ້າ) ແຕ່ຊັ້ນທຳອິດທີ່ມີທີ່ຢູ່ອາໄສແມ່ນສອງລະດັບຊັ້ນຖັດຂຶ້ນໄປ, ຊັ້ນຂອງອາຄານທີ່ເປັນທາງເຂົ້າ/ປະຕູເຂົ້າທີ່ຢູ່ອາໄສແມ່ນຊັ້ນ 3, ໃນກໍລະນີແມ່ນໃຫ້ນັບຊັ້ນທີ່ມີທີ່ຢູ່ອາໄສເປັນລາດັບຊັ້ນທີ '1' ແລະ ນັບຕາມລຳດັບຂຶ້ນໄປ. ອາຄານບາງຫຼັງ, ຄົນອາດອາໄສຢູ່ຊັ້ນພື້ນຖານຂອງອາຄານ ຫຼື ຊັ້ນໃຕ້ດິນຂອງອາຄານ. ເລກລຳດັບຊັ້ນຂອງທີ່ຢູ່ອາໄສທີ່ຢູ່ຊັ້ນໃຕ້ດິນຄວນເປັນ ລຳດັບຊັ້ນທີ '0'.

ໃນບາງຊິ້ງເຂດ, ຄົນສ້າງເຮືອນຕາມຄວາມຊັນຂອງພູ ເຊິ່ງປະກອບດ້ວຍທີ່ຢູ່ອາໄສໃນແຕ່ລະຊັນທີ່ແຕກຕ່າງກັນ (ຮູບສະແດງ 4.3.c). ໃນກໍລະນີດັ່ງກ່າວນີ້, ທີ່ຢູ່ອາໄສທີ່ຢູ່ເທິງສຸດ ແມ່ນທີ່ຢູ່ອາໄສທີ່ມີທາງເຂົ້າ/ປະຕູ ຢູ່ຊັ້ນໜ້າດິນ, ດັ່ງນັ້ນ, ຈົດເລກລຳດັບຊັ້ນຂອງທີ່ຢູ່ອາໄສດັ່ງກ່າວເປັນ '1'. ໃນກໍລະນີດຽວກັນ, ມີຂັ້ນໄດລົງໄປຫາຊັ້ນຄົວເຮືອນທີ່ຢູ່ຊັ້ນລຸ່ມກວ່າ, ໃນແຕ່ລະຊັ້ນຖັດລົງໄປແມ່ນໃຫ້ຈົດບັນທຶກເລກລຳດັບຊັ້ນເປັນ '-1' ແລະ '-2'.

*ຮູບສະແດງ 4.3: ທາງເຂົ້າ/ປະຕູ ຂອງອາຄານ ແລະ ທີ່ຢູ່ອາໄສ*



**ວິທີການບັນທຶກຄຳຕອບ:** ບັນທຶກເລກລຳດັບຊັ້ນເປັນຕົວເລກ (ບໍ່ໃຫ້ພິມຕົວອັກສອນ ຫຼື ຂໍ້ຄວາມ) ໃສ່ໃນຊ່ອງຄຳຕອບທີ່ກຳນົດໄວ້.

**ຄຳຖາມ:** ID.10. ເລກລຳດັບທີ່ຢູ່ອາໄສ – *ຂຽນເລກລຳດັບທີ່ຢູ່ອາໄສທີ່ມີຢູ່ໃນຊັ້ນນີ້*




**ຈຸດປະສົງ:** ເພື່ອບັນທຶກເລກລຳດັບທີ່ຢູ່ອາໄສໃນອາຄານ ນຳໃຊ້ເປັນຂໍ້ມູນໃຫ້ແກ່ນັກເດີນສຳຫຼວດໃນເວລາທີ່ຕ້ອງການກັບໄປຫາທີ່ຢູ່ອາໄສດັ່ງກ່າວ.

**ນິຍາມ:** ເລກລຳດັບທີ່ຢູ່ອາໄສແມ່ນມີຄວາມສຳຄັນທີ່ຕ້ອງໄດ້ຈັດລຽງຄືນໃໝ່ ດ້ວຍເຫດຜົນບາງປະການ. ການຈັດລຽງເລກລຳດັບທີ່ຢູ່ອາໄສຄືນໃໝ່ຕ້ອງຕ້ອງປະຕິບັດຕາມຂັ້ນຕອນຢ່າງເຄັ່ງຄັດດັ່ງນີ້:

- ການຈັດລຽງເລກລຳດັບທີ່ຢູ່ອາໄສແມ່ນຈັດລຽງສະເພາະແຕ່ລະຊັ້ນຂອງໃຜລາວ. ໃນແຕ່ລະຊັ້ນ, ການນັບທີ່ຢູ່ອາໄສແມ່ນເລີ່ມຈາກ ‘1’.
- ເລກລຳດັບທີ່ຢູ່ອາໄສໃນແຕ່ລະຊັ້ນແມ່ນນັບຈາກປະຕູຂອງທີ່ຢູ່ອາໄສແຕ່ຊ້າຍຫາຂວາມື, ດັ່ງທີ່ເຫັນຈາກຈຸດບ່ອນທີ່ເຂົ້າເຖິງຊັ້ນດັ່ງກ່າວ (ອາດເປັນທາງເຂົ້າອາຄານ ຫຼື ຂັ້ນໄດ້ – ແຕ່ບໍ່ແມ່ນທາງລິບ)

ສຳລັບເຮືອນດ່ຽວ, ເຊິ່ງທີ່ຢູ່ອາໄສ ແລະ ອາຄານ ແມ່ນອັນດຽວກັນ, ຂັ້ນຕອນການໃສ່ເລກລຳດັບຊັ້ນ ແລະ ເລກລຳດັບທີ່ຢູ່ອາໄສແມ່ນງ່າຍດາຍ: ເປັນອາຄານທີ່ມີທາງເຂົ້າ/ປະຕູເຂົ້າອາຄານຢູ່ຊັ້ນໜ້າດິນ, ເລກລຳດັບຊັ້ນແມ່ນ 1), ຊຶ່ງມີທາງເຂົ້າຫາທີ່ຢູ່ອາໄສດຽວ (ເລກລຳດັບທີ່ຢູ່ອາໄສແມ່ນ 1). ຫຼັກການທີ່ກ່າວມາຂ້າງເທິງແມ່ນອອກແບບມາສຳລັບອາຄານທີ່ມີຫຼາຍທີ່ຢູ່ອາໄສ ແລະ ຫຼາຍຊັ້ນ. ຍົກຕົວຢ່າງ, ອາຄານໃນຮູບສະແດງ 4.4 ມີທາງເຂົ້າ/ປະຕູເຂົ້າສູ່ 6 ທີ່ຢູ່ອາໄສ ໃນຊັ້ນໜ້າດິນ. ດັ່ງນັ້ນ, ໃນທັງໝົດ 6 ທີ່ຢູ່ອາໄສ, ເລກລຳດັບຊັ້ນແມ່ນ ‘1’ ແລະ ເລກລຳດັບທີ່ຢູ່ອາໄສແມ່ນເລີ່ມ ‘1’ ຫາ ‘6’.

*ຮູບສະແດງ 4.4: ການເລກລຳດັບທີ່ຢູ່ອາໄສໃນອາຄານທີ່ມີຫຼາຍທີ່ຢູ່ອາໄສ*



ອາຄານທີ່ມີຫຼາຍຊັ້ນ, ນັກເດີນສຳຫຼວດຈະໃສ່ເລກລຳດັບທີ່ຢູ່ອາໄສເລີ່ມຈາກ ‘1’ ໃນແຕ່ລະຊັ້ນທີ່ມີໜຶ່ງ ຫຼື ຫຼາຍທີ່ຢູ່ອາໄສຕັ້ງຢູ່. ເພື່ອໃຫ້ເລກລຳດັບໄປຕາມລະບົບ, ນັກເດີນສຳຫຼວດຕ້ອງໃສ່ເລກລຳດັບແຕ່ຊ້າຍຫາຂວາ ແລະ ເລີ່ມໃສ່ເລກລຳດັບເມື່ອເຂົ້າເຖິງຊັ້ນດັ່ງກ່າວດ້ວຍການນຳໃຊ້ຂັ້ນໄດ (ຮູບສະແດງ 4.5). ເລືອກເອົາຂັ້ນໄດເປັນທາງເຂົ້າຫາແຕ່ລະຊັ້ນ ຍ້ອນວ່າບໍ່ແມ່ນທຸກອາຄານທີ່ມີຫຼາຍຊັ້ນຈະມີລິບທັງໝົດ. ນັກເດີນສຳຫຼວດຕ້ອງໃສ່ເລກລຳດັບທີ່ຢູ່ອາໄສ ເຖິງແມ່ນວ່າບໍ່ສາມາດຕິດຕໍ່ຫາຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວ ຫຼື ທີ່ຢູ່ອາໄສຫວ່າງເປົ່າກໍ່ຕາມ.

*ຮູບສະແດງ 4.5: ເລກລຳດັບທີ່ຢູ່ອາໄສ ໃນອາຄານທີ່ມີຫຼາຍຊັ້ນ*




**ວິທີການບັນທຶກຄຳຕອບ:** ບັນທຶກເລກລຳດັບທີ່ຢູ່ອາໄສເປັນຕົວເລກ (ບໍ່ໃຫ້ພິມຕົວອັກສອນ ຫຼື ຂໍ້ຄວາມ) ໃສ່ໃນຊ່ອງຄຳຕອບທີ່ກຳນົດໄວ້.

**ໝາຍເຫດ:** ເມື່ອກົດໃສ່ຈຸດຂອງອາຄານທີ່ກຳລັງຈັດຕັ້ງປະຕິບັດການສຳຫຼວດຢູ່, ລາຍການທີ່ຢູ່ອາໄສທີ່ປະກົດຂຶ້ນມາຈະສະແດງເລກລຳດັບຊັ້ນ ແລະ ເລກລຳດັບທີ່ຢູ່ອາໄສໃນຊັ້ນດັ່ງກ່າວ. ຖ້ານັກເດີນສຳຫຼວດປະຕິບັດຕາມຂັ້ນຕອນຢ່າງຖືກຕ້ອງ ສຳລັບການໃສ່ເລກລຳດັບຊັ້ນ ແລະ ເລກລຳດັບທີ່ຢູ່ອາໄສ, ນັກເດີນສຳຫຼວດຈະບໍ່ພົບບັນຫາເມື່ອຕ້ອງການກັບຄືນໄປຫາຄົວເຮືອນທີ່ຕ້ອງການ, ຕົວຢ່າງ, ກັບຄືນໄປຫາເພື່ອກວດສອບວ່າມີຄົນຢູ່ເຮືອນ ຫຼື ບໍ່.

ເມື່ອນັກເດີນສຳຫຼວດປ້ອນຂໍ້ມູນເລກລຳດັບທີ່ຢູ່ອາໄສໃນຄຳຖາມທີ ID.07 ສຳເລັດແລ້ວ, ໃນເວລາທີ່ນັກເ◌ີນສຳຫຼວດໃສ່ຊື່ຂອງຕົນໃນຄຳຖາມ PR.02 ກະລຸນາໃສ່ຊື່ເຕັມ. ຊື່ຂອງນັກເດີນສຳຫຼວດແມ່ນມີຄວາມຕ້ອງການເພື່ອກວດສອບວ່າແມ່ນໃຜເປັນຜູ້ສຳຫຼວດໃນກໍລະນີທີ່ມີບັນຫາ ຫຼື ຄຳຖາມເພີ່ມເຕີມຈາກນັກກວດກາຂອງຕົນ ຫຼື ພະນັກງານການສຳຫຼວດ.




ຈາກນັ້ນ, ໂປຣແກຣມຈະເລີ່ມບັນທຶກຈຸດທີ່ຕັ້ງ GPS (Global Positioning System). ຂັ້ນຕອນນີ້ຈະໃຊ້ເວລາຊົ່ວຄາວ ແລະ ກຳນົດໄດ້ວ່ານັກເດີນສຳຫຼວດຢູ່ຈຸດໃດແທ້. ມັນສະໜອງຂໍ້ມູນທີ່ສຳຄັນກ່ຽວກັບການຄວບຄຸມຄຸນນະພາບຂອງການສຳຫຼວດ, ເຊິ່ງມັນສະແດງໃຫ້ເຫັນວ່າ ນັກເດີນສຳຫຼວດໄດ້ລົງສຳພາດຢູ່ໃນເຂດສຳຫຼວດຂອງຕົນ ແລະ ຢູ່ໃນອາຄານທີ່ໄດ້ເລືອກໃນແຜນທີ່ ຫຼື ບໍ່. ດັ່ງນັ້ນ, ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງໄດ້ເຮັດທຸກຢ່າງຢູ່ໃນບໍລິເວນທີ່ຢູ່ອາໄສ ແລະ ບໍ່ຄວນສຳພາດຄົນໃດໃນສະຖານທີ່ຫ່າງໄກຈາກທີ່ຢູ່ອາໄສຂອງພວກເຂົາ.

ໃນຂັ້ນຕອນບັນທຶກຈຸດທີ່ຕັ້ງແມ່ນນຳໃຊ້ສັນຍານຈາກດາວທຽມເທິງທ້ອງຟ້າ, ມັນຈະເປັນການດີຖ້າວ່ານັກເດີນສຳຫຼວດຢູ່ໃນຈຸດທີ່ບໍ່ມີສິ່ງປົກຄຸມ, ເຊັ່ນຕົ້ນໄມ້ ຫຼື ຫຼັງຄາ. ການບັນທຶກຈຸດທີ່ຕັ້ງນີ້ອາດໃຊ້ເວລາເຖິງ 10 ວິນາທີ ແລະ ນັກເດີນສຳຫຼວດບໍ່ສາມາດຕິດຕາມໄດ້ວ່າອີກດົນປານໃດຈຶ່ງຈະສຳເລັດ. ຫຼັງຈາກສຳເລັດແລ້ວ, ໂປຣແກຣມຈະນຳພາໄປຫາຄຳຖາມທີ A.01 ຂອງແບບສອບຖາມພາກຕໍ່ໄປ ໂດຍອັດຕະໂນມັດ.

## 4.5. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ A – ເລີ່ມການສຳຫຼວດ

ແບບສອບຖາມພາກ A – ເລີ່ມການສຳຫຼວດ ແມ່ນມີຈຸດປະສົງເພື່ອກວດສອບວ່າສາມາດຕິດຕໍ່ກັບຄົວເຮືອນໄດ້ ຫຼື ບໍ່ ແລະ ເກັບກຳຂໍ້ມູນຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສຈຳນວນໜຶ່ງ. ແບບສອບຖາມພາກນີ້ຈະເລີ່ມທັນທີຫຼັງຈາກໂປຣແກຣມແບບສອບຖາມບັນທຶກຂໍ້ມູນຈຸດທີ່ຕັ້ງ (GPS) ຂອງທີ່ຢູ່ອາໄສສຳເລັດ. ໃນເວລານີ້ເປັນເວລາທີ່ນັກເດີນສຳຫຼວດຕ້ອງເຄາະປະຕູທີ່ຢູ່ອາໄສ, ເອີ້ນຫາ ຫຼື ພະຍາຍາມຕິດຕໍ່ກັບຄົວເຮືອນ ເພື່ອດຳເນີນການສຳພາດ.

ແບບສອບຖາມພາກ A - ເລີ່ມການສໍາຫຼວດ ມີ 10 ຄໍາຖາມ 1 ຂໍ້ມູນສ້າງຂຶ້ນອັດຕະໂນມັດ. ໃນການສໍາຫຼວດຕົວຈິງບໍ່ໝາຍຄວາມວ່າຕ້ອງໄດ້ຖາມທຸກຄໍາຖາມ, ຄໍາຖາມຈະຖືກຖາມ ຫຼື ບໍ ແມ່ນຂຶ້ນກັບຄໍາຕອບຂອງຄໍາຖາມກ່ອນໜ້ານັ້ນ.

**ຄໍາຖາມ:** A.01. ສາມາດຕິດຕໍ່ກັບຄົວເຮືອນ – *ໃນຄົວເຮືອນນີ້ມີຜູ້ທີ່ສາມາດໃຫ້ການສໍາພາດໄດ້ບໍ?*




**ຈຸດປະສົງ:** ຄໍາຖາມນີ້ແມ່ນເພື່ອກວດສອບວ່າມີຄົນອາໄສຢູ່ໃນທີ່ຢູ່ອາໄສບໍ ຜູ້ທີ່ສາມາດຕອບການສໍາພາດໄດ້.

**ຫຼັກການ:** ຄໍາຖາມນີ້ຄວນຕອບທັນທີຫຼັງຈາກທີ່ນັກເດີນສໍາຫຼວດໄດ້ເຄາະປະຕູທີ່ຢູ່ອາໄສ (ຫຼື ພະຍາຍາມຕິດຕໍ່ກັບຄົວເຮືອນ) ແລະ ຮູ້ແລ້ວວ່າມີຄົນເປີດປະຕູ ຫຼື ບໍ ລວມທັງສາມາດສໍາພາດໄດ້ ຫຼື ບໍ. ຄໍາຕອບຂອງຄໍາຖາມດັ່ງກ່າວມັນບົ່ງບອກເຖິງຄວາມຄືບໜ້າຂອງການສໍາຫຼວດ.

**ວິທີການບັນທຶກຄໍາຕອບ:** ຖ້າວ່າບໍ່ມີໃຜຢູ່ເຮືອນ ຫຼື ຜູ້ທີ່ເປີດປະຕູອອກມາແມ່ນບຸກຄົນທີ່ບໍ່ສາມາດຕອບການສໍາພາດໄດ້ເຊັ່ນ: ເດັກນ້ອຍ, ຜູ້ເຖົ້າ ຫຼື ຜູ້ທີ່ບໍ່ແມ່ນສະມາຊິກຄົວເຮືອນ, ນັກເດີນສໍາຫຼວດເລືອກຄໍາຕອບຕອບ 'ບໍ່ມີ', ໂປຣແກຣມຈະພາໄປຄໍາຖາມທີ A.02 ເພື່ອກວດສອບສະຖານະທີ່ຢູ່ອາໄສຫວ່າງເປົ່າ. ຖ້າວ່າມີຜູ້ທີ່ສາມາດຕອບການສໍາພາດໄດ້, ເລືອກຄໍາຕອບ 'ມີ', ໂປຣແກຣມຈະພາໄປຫາຄໍາຖາມການແນະນໍາຕົວຕໍ່ຜູ້ເປີດປະຕູ (ຄໍາຖາມທີ A.03) ແລະ ພະຍາຍາມເລີ່ມການສໍາພາດ.

**ໝາຍເຫດ:** ໃນເມື່ອໃດກໍ່ຕາມຕົວໜັງສືຂອງຄໍາຖາມທີ່ສະແດງຢູ່ໃນໜ້າຈໍເປັນສີຂຽວ, ຄໍາຖາມດັ່ງກ່າວແມ່ນສໍາລັບນັກເດີນສໍາຫຼວດເອງ ແລະ ບໍ່ແມ່ນຜູ້ຖືກສໍາພາດເປັນຄົນຕອບ.

**ຄໍາຖາມ:** A.02. ສະຖານະທີ່ຢູ່ອາໄສຫວ່າງເປົ່າ – *ມີຄົນອາໄສຢູ່ໃນທີ່ຢູ່ອາໄສນີ້ ຫຼື ບໍ?*




**ຈຸດປະສົງ:** ເພື່ອກວດສອບວ່າທີ່ຢູ່ອາໄສມີຄົນອາໄສຢູ່ ຫຼື ເປັນທີ່ຢູ່ອາໄສຫວ່າງເປົ່າ.

**ນິຍາມ:** ເມື່ອນັກເດີນສໍາຫຼວດໄປຫາທີ່ຢູ່ອາໄສ ແລະ ບໍ່ມີໃຜເປີດປະຕູ, ມັນມີ 3 ສະຖານະການທີ່ເປັນໄປໄດ້ຄື:

- ທີ່ຢູ່ອາໄສສ່ວນໃຫຍ່ທີ່ນັກເດີນສໍາຫຼວດໄປຫາໃນໄລຍະການສໍາຫຼວດ ແມ່ນຈະເປັນທີ່ຢູ່ອາໄສຂອງຄົວເຮືອນ. ເມື່ອບໍ່ພົບໃຜຢູ່ໃນທີ່ຢູ່ອາໄສ, ນັກເດີນສໍາຫຼວດຍັງຄົງສາມາດສັງເກດເຫັນໄດ້ວ່າທີ່ຢູ່ອາໄສດັ່ງກ່າວມີຄົນອາໄສຢູ່ ຫຼື ບໍ. ຍົກຕົວຢ່າງ, ເຫັນເຄື່ອງຕາກຢູ່ຂ້າງນອກ, ມີເກີບຢູ່ຕໍ່ໜ້າປະຕູ ຫຼື ມີເຄື່ອງຂອງສ່ວນຕົວຢູ່ຕາມເດີ່ນບ້ານ ຫຼື ທາງໃນທີ່ຢູ່ອາໄສ. ນັກເດີນສໍາຫຼວດຍັງສາມາດຖາມເພື່ອນບ້ານຈະຮູ້ຂໍ້ມູນວ່າພວກເຂົາອາໄສຢູ່ທີ່ນັ້ນ ແຕ່ບໍ່ຢູ່ເຮືອນໃນເວລາທີ່ນັກເດີນສໍາຫຼວດໄປຫາ, ໃນກໍລະນີດັ່ງກ່າວ, ເລືອກຄໍາຕອບ 'ມີ, ມີຄົນອາໄສຢູ່ໃນທີ່ຢູ່ອາໄສນີ້, ແຕ່ຕອນນີ້ບໍ່ຢູ່ເຮືອນ'.

  ໃນສະຖານະການດັ່ງກ່າວນີ້, ນັກເດີນສໍາຫຼວດບໍ່ສາມາດເຮັດຫຍັງໄດ້ ແລະ ໂປຣແກຣມຈະຖາມນັກເດີນສໍາຫຼວດໃຫ້ຍອມຮັບກໍລະນີນີ້. ຖ້າວ່ານັກເດີນສໍາຫຼວດເລືອກ ບໍ່ 'NO', ໂປຣແກຣມຈະກັບຄືນໄປຫາຄໍາຖາມທີ A.02 ແລະ ສາມາດປ່ຽນຄໍາຕອບໃນບ່ອນນັ້ນໄດ້. ຖ້ານັກເດີນສໍາຫຼວດເລືອກ ແມ່ນ 'YES', ໂປຣແກຣມຈະບັນທຶກວ່ານັກເດີນສໍາຫຼວດໄດ້ມາຫາທີ່ຢູ່ອາໄສນີ້ແລ້ວຄັ້ງໜຶ່ງ ແລະ ກັບຄືນໄປຫາໜ້າຕ່າງທີ່ນັກເດີນສໍາຫຼວດສາມາດເລີ່ມສໍາພາດທີ່ຢູ່ອາໄສອື່ນ.



ໃນກໍລະນີດັ່ງກ່າວ, ນັກເດີນສຳຫຼວດຕ້ອງໄດ້ກັບມາຫາທີ່ຢູ່ອາໄສນີ້ໃນເວລາໃໝ່ ແລະ ເຖິງແມ່ນວ່າພະຍາມສຳພາດທີ່ຢູ່ອາໄສ ແລະ ຄົວເຮືອນທີ່ອາໄສຢູ່ໃນນັ້ນ ເປັນຄັ້ງທີ່ສາມແລ້ວ. ການກັບຄືນໄປຫາທີ່ຢູ່ອາໄສຄວນກັບໄປໃນວັນ ແລະ ເວລາທີ່ແຕກຕ່າງກັນ, ຖ້າບໍ່ດັ່ງນັ້ນ, ມັນມີໂອກາດສູງທີ່ຈະບໍ່ພົບຄົວເຮືອນຢູ່ເຮືອນອີກຄັ້ງ. ມັນເປັນກົນລະຍຸດທີ່ດີ ໂດຍການຖາມເພື່ອນບ້ານວ່າ ເວລາໃດທີ່ເໝາະສົມທີ່ຈະກັບມາເພື່ອໃຫ້ພົບຄົນຢູ່ເຮືອນ. ເຊັ່ນດຽວກັນ, ນັກເດີນສຳຫຼວດອາດຂຽນຂໍ້ຄວາມປະໄວ້ໜ້າປະຕູທາງເຂົ້າທີ່ຢູ່ອາໄສ, ລະບຸວ່ານັກເດີນສຳຫຼວດໄດ້ມາຫາເພື່ອສຳພາດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ບອກວັນ ແລະ ເວລາທີ່ຈະກັບມາຫາອີກຄັ້ງ ແລະ ຈົດເບີໂທຂອງນັກເດີນສຳຫຼວດໄວ້ພ້ອມ, ສະນັ້ນ, ຄົວເຮືອນສາມາດຕິດຕໍ່ຫານັກເດີນສຳຫຼວດເພື່ອນັດພົບກັນໃນເວລາໃດໜຶ່ງ.

ໃນກໍລະນີນັກເດີນສຳຫຼວດໄດ້ມາຫາທີ່ຢູ່ອາໄສດັ່ງກ່າວເປັນຄັ້ງທີ່ສາມແລ້ວ, ໂປຣແກຣມຈະສືບຕໍ່ໄປຫາ 'ແບບສອບຖາມຫຍໍ້', ເພື່ອໃຫ້ນັກເດີນສຳຫຼວດຕອບຄຳຖາມຈຳນວນໜຶ່ງດ້ວຍຕົນເອງ.

- ມັນອາດມີທີ່ຢູ່ອາໄສຈຳນວນໜຶ່ງທີ່ບໍ່ມີຄົນອາໄສຢູ່ ຫຼື 'ຫວ່າງເປົ່າ'. ນີ້ອາດເປັນກໍລະນີຖືກປະຮ້າງ ທີ່ຍັງບໍ່ມີຜູ້ອາໄສໃໝ່ ຫຼື ເຮືອນປຸກໃໝ່ຍັງບໍ່ທັນມີຄົນມາອາໄສຢູ່. ນັກເດີນສຳຫຼວດອາດເລືອກຄຳຕອບ 'ບໍ່ມີ, ບໍ່ມີຄົນອາໄສຢູ່ໃນທີ່ຢູ່ອາໄສນີ້'. ຖ້າວ່ານັກເດີນສຳຫຼວດໝັ້ນໃຈຄັກແນ່ວ່າບໍ່ມີຄົນອາໄສຢູ່ໃນທີ່ອາໄສນັ້ນແທ້. ກ່ອນເລືອກຄຳຕອບນີ້, ນັກເດີນສຳຫຼວດຈະຕ້ອງມີຫຼັກຖານທີ່ບໍ່ສາມາດໂຕ້ແຍ້ງໄດ້ວ່າທີ່ຢູ່ອາໄສຫວ່າງເປົ່າແທ້. ຫຼັກຖານດັ່ງກ່າວອາດຈະເປັນ, ຕົວຢ່າງ, ນັກເດີນສຳຫຼວດໄດ້ສັງເກດເຫັນວ່າໃນທີ່ຢູ່ອາໄສບໍ່ມີເຄື່ອງໃຊ້ເຟີນີເຈີ ຫຼື ໄດ້ຮັບການຢືນຢັນຈາກເພື່ອບ້ານວ່າບໍ່ມີໃຜນຳໃຊ້ທີ່ຢູ່ອາໄສນັ້ນ. ຖ້າວ່ານັກເດີນສຳຫຼວດເລືອກຄຳຕອບນີ້, ໂປຣແກຣມຈະພາໄປຫາແບບສອບຖາມສະບັບຫຍໍ້ (A.09). ນັກເດີນສຳຫຼວດຈະຖືກພາຫາແບບສອບຖາມສະບັບຫໍ້ໃນກໍລະນີບໍ່ສາມາດຕິດຕໍ່ໄດ້ 3 ຄັ້ງ ຫຼື ປະຕິດເສດບໍ່ໃຫ້ການຮ່ວມມືໃນການສຳຫຼວດເຊັ່ນກັນ.
- ຖ້າວ່ານັກເດີນສຳຫຼວດບໍ່ໝັ້ນໃຈວ່າທີ່ຢູ່ອາໄສມີຄົນອາໄສຢູ່ ຫຼື ບໍ ແລະ ບໍ່ສາມາດຖາມເພື່ອບ້ານໄດ້, ນັກເດີນສຳຫຼວດຕ້ອງເລືອກຄຳຕອບທີສາມ 'ບໍ່ຮູ້'. ໂປຣແກຣມຈະບັນທຶກການໄດ້ມາຫາທີ່ຢູ່ອາໄສດັ່ງກ່າວ ແລະ ຖາມນັກເດີນສຳຫຼວດເພື່ອຍອມຮັບກໍລະນີການສຳພາດນີ້. ນັກເດີນສຳຫຼວດຕ້ອງຝາກຂໍ້ຄວາມໄວ້ວ່າຈະກັບມາອີກຄັ້ງ ຈົນກວ່າຈະພະຍາມສຳພາດທີ່ຢູ່ອາໄສດັ່ງກ່າວຢ່າງໜ້ອຍສາມຄັ້ງແຕ່ບໍ່ສຳເລັດ ແລະ ຈົນກວ່າໂປຣແກຣມຈະນຳພາໄປຫາແບບສອບຖາມຫຍໍ້.

**ວິທີການບັນທຶກຄຳຕອບ:** ບັນທຶກຄຳຕອບຕາມສະຖານະການ, ການສັງເກດ ແລະ ການສອບຖາມເພື່ອນບ້ານທີ່ຢູ່ໃກ້ຄຽງ.

**ຄຳຖາມ:** A.03. ແນະນຳຕົວ




**ຈຸດປະສົງ:** ເພື່ອໃຫ້ນັກເດີນສຳຫຼວດແນະນຳຕົນເອງໃຫ້ແກ່ຜູ້ຖືກສຳພາດເພື່ອຂໍການຮ່ວມມືໃນການເຂົ້າຮ່ວມການສຳຫຼວດກໍ່ຄືການຕອບການສຳພາດ.

**ຫຼັກການ:** ຕ້ອງເນັ້ນວ່າຂໍ້ມູນທີ່ຜູ້ຖືກສຳພາດສະໜອງໃຫ້ຈະຖືກເກັບເປັນຄວາມລັບຢ່າງດີ ແລະ ບໍ່ບອກໃຫ້ຜູ້ທີ່ບໍ່ໄດ້ເຮັດວຽກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຄັ້ງນີ້ຮູ້ຢ່າງເດັດຂາດ.

ໜ້ານີ້ຈະຖືກສະແດງອອກມາ ຖ້າວ່ານັກເດີນສຳຫຼວດເລືອກຄຳຄອບໃນຄຳຖາມທີ A.01 ວ່າສາມາດຕິດຕໍ່ກັບຄົນໃດໜຶ່ງໃນທີ່ຢູ່ອາໄສ. ມັນປະກອບດ້ວຍຂໍ້ມູນທີ່ນັກເດີນສຳຫຼວດຄວນອະທິບາຍໃຫ້ຄົນທີ່ສາມາດຕິດຕໍ່ໄດ້ນັ້ນຟັງ

, ບອກວ່າທ່ານແມ່ນໃຜ, ມາຈາກໃສ, ມາເຮັດຫຍັງ ແລະ ທ່ານສາມາດສຳພາດໄດ້ ຫຼື ບໍ. ນັກເດີນສຳຫຼວດຄວນເນັ້ນວ່າຂໍ້ມູນທີ່ໄດ້ຈະຖືກເກັບເປັນຄວາມລັບຢ່າງດີ.

**ວິທີການບັນທຶກຄຳຕອບ:** ຫຼັງຈາກແນະນຳຕົນເອງ ແລະ ຂໍອະນຸຍາດສາພາດແລ້ວ, ນັກເດີນສາຫຼວດສາມາດກົດປຸ່ມ 'ສືບຕໍ່' ເຖິງແມ່ນວ່າຈະໄດ້ຮັບອະນຸຍາດ ຫຼື ປະຕິເສດກໍ່ຕາມ.

**ໝາຍເຫດ:** ນັກເດີນສຳຫຼວດຕ້ອງຈື່ຄຳແນະນຳຕົນເອງໄວ້ໃນໃຈ, ດັ່ງນັ້ນ, ນັກເດີນສຳຫຼວດຈະສາມາດແນະນຳຕົນເອງໄດ້ຢ່າງເປັນທຳມະຊາດ. ນັກເດີນສຳຫຼວດຈະເຮັດໃຫ້ຄຳເວົ້າທຳອິດຂອງຕົນບໍ່ມີຄວາມປະທັບໃຈ ຖ້າວ່າຈຳເປັນຕ້ອງອ່ານຈາກໜ້າຈໍແທັບເລັດ (ດັ່ງນັ້ນ, ຕົວໜັງສືຈຶ່ງເປັນສີຂຽວ); ແລະ ຈື່ໄວວ່າ, ຄຳເວົ້າທຳອິດແມ່ນມີຄວາມສຳຄັນທີ່ສຸດ ແລະ ນັກເດີນສຳຫຼວດສາມາດເຮັດໄດ້ພຽງແຕ່ຄັ້ງດຽວເທົ່ານັ້ນ.

**ຄຳຖາມ:** A.04. ເລີ່ມສຳພາດໄດ້ບໍ – *ການສຳພາດຂອງການສຳຫຼວດສາມາດເລີ່ມໄດ້ບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກວດສອບວ່າມີຜູ້ທີ່ສາມາດໃຫ້ຂໍ້ມູນການສຳພາດຢູ່ເຮືອນ ຫຼື ບໍ, ມັນເປັນສ່ວນໜຶ່ງຂອງການແນະນຳຕົນເອງ, ນັກເດີນສຳຫຼວດ ທີ່ໄດ້ຖາມວ່າສາມາດສຳພາດໄດ້ບໍ.

**ນິຍາມ:** ຜູ້ທີ່ສາມາດມາດໃຫ້ຂໍ້ມູນການສາພາດແມ່ນຫົວໜ້າຄົວເຮືອນ ຫຼື ສະມາຊິກຄົວເຮືອນຜູ້ໃຫຍ່ທີ່ຮູ້ຂໍ້ມູນກ່ຽວກັບຄົວເຮືອນ ແລະ ສະມາຊິກຄົວເຮືອນ. ຄຳຖາມນີ້, ນັກເດີນສຳຫຼວດພຽງແຕ່ບັນທຶກຄຳຕອບໃສ່. ຄຳຕອບສາມາດເປັນໄດ້ສາມກໍລະນີຕົ້ນຕໍຄື:

- **ໄດ້, ສາມາດເລີ່ມສາພາດໄດ້:** ບຸກຄົນໃນຄົວເຮືອນຕອບວ່າສາມາດສາພາດໄດ້, ຈາກນັ້ນ ໂປຣແກຣມຈະສືບຕໍ່ໄປຄຳຖາມຕໍ່ໄປ;
- **ບໍ່ໄດ້, ຕ້ອງໄດ້ກັບຄືນມາອີກຄັ້ງ:** ມັນອາດເປັນໄປໄດ້ວ່າການສາພາດບໍ່ສາມາດເລີ່ມໄດ້ໃນເວລາທີ່ນັກເດີນສຳຫຼວດໄປຫາ, ຊຶ່ງໃນເວລາທີ່ໄປຫານັ້ນ ຄົວເຮືອນບໍ່ສະດວກໃຫ້ສຳພາດສຳລັບບຸກຄົນໃດໆໃນຄົວເຮືອນ (ຕົວຢ່າງ, ຄົວເຮືອນມີແຂກ ຫຼື ມີທາງໄປ) ຫຼື ຜູ້ທີ່ຢູ່ເຮືອນບໍ່ສາມາດຕອບຄຳຖາມການສຳຫຼວດໄດ້ (ຕົວຢ່າງ, ມີແຕ່ເດັກນ້ອຍຢູ່ເຮືອນ ຫຼື ມີແຕ່ບຸກຄົນທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນ). ນີ້ໝາຍຄວາມວ່ານັກເດີນສຳຫຼວດຕ້ອງໄດ້ນັດສຳພາດໃໝ່ໃນວັນ ແລະ ເວລາອື່ນ.
- **ບໍ່ໄດ້, ປະຕິເສດບໍ່ໃຫ້ການຮ່ວມມື:** ອາດມີກໍລະນີທີ່ບຸກຄົນປະເສດການເຂົ້າຮ່ວມການສາຫຼວດ. ນັກເດີນສຳຫຼວດຕ້ອງພະຍາຍາມໂນ້ມນ້າວຈິດໃຈພວກເຂົາຢ່າງສຸພາບ ເພື່ອໃຫ້ການຮ່ວມມື. ຖ້າວ່າສຸດທ້າຍແລ້ວອາດເຮັດບໍ່ສຳເລັດ, ຈາກນັ້ນໂປຣແກຣມຈະໄປຕໍ່ອີກຄຳຖາມໜຶ່ງສຳລັບບຸກຄົນທີ່ປະຕິເສດ, ກ່ອນທີ່ຈະພາໄປຫາແບບສອບຖາມຫຍໍ້.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກໜຶ່ງໃນສາມຄຳຕອບທີ່ກົງກັບສາມກໍລະນີທີ່ກ່າວມາຂ້າງເທິງນີ້.

**ໝາຍເຫດ:** ຄຳຖາມນີ້ເປັນໂຕໜັງສືສີຂຽວ, ນັກເດີນສາຫຼວດບໍ່ຈຳເປັນຕ້ອງຖາມຄຳຖາມນີ້ກັບຜູ້ຖືກສາພາດ ເພາະວ່າຄຳຕອບແມ່ນໄດ້ມາຈາກຄຳຖາມກ່ອນໜ້ານີ້ແລ້ວ.

**ຄຳຖາມ:** A.05. ສະຖານະພາບການອາໄສຢູ່ – *ທີ່ຢູ່ອາໄສນີ້ແມ່ນບ່ອນຢູ່ຖາວອນຂອງທ່ານບໍ ຫຼື ນຳໃຊ້ຕາມລະດູການ ຫຼື ນຳໃຊ້ເປັນທີ່ຢູ່ອາໄສບ່ອນທີສອງເທົ່ານັ້ນ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກຳນົດວ່າ ບຸກຄົນ ຫຼື ບັນດາບຸກຄົນທີ່ນັກເດີນສຳຫຼວດສຳພາດຢູ່ນັ້ນມີທີ່ຢູ່ອາໄສເປັນປະຈຳຢູ່ໃນທີ່ຢູ່ອາໄສນີ້ ຫຼື ບ່ອນອື່ນ.

**ນິຍາມ:** ສະຖານະການຢູ່ອາໄສໄດ້ຖືກແບ່ງອອກເປັນ 2 ປະເພດ ດັ່ງຕໍ່ໄປນີ້:

- **ທີ່ຢູ່ອາໄສແມ່ນບ່ອນອາໄສຢູ່ເປັນປະຈຳ:** ໝາຍເຖິງຄົວເຮືອນອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວຢ່າງເປັນປະຈຳ ໂດຍອີງໃສ່ຫຼັກການອາໄສຢູ່ຢ່າງໜ້ອຍ 6 ເດືອນຂຶ້ນໄປ ຫຼື ມີຈຸດປະສົງອາໄສຢູ່ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ. ເກືອບທັງໝົດທຸກກໍລະນີ, ທີ່ຢູ່ອາໄສບ່ອນທີ່ນັກເດີນສຳຫຼວດສຳພາດຢູ່ນັ້ນແມ່ນບ່ອນບ່ອນທີ່ເຂົາເຈົ້າອາໄສຢູ່ເປັນປະຈຳ. ໃນກໍລະນີນີ້, ເລືອກຄຳຕອບ 'ທີ່ຢູ່ອາໄສແມ່ນບ່ອນອາໄສຢູ່ເປັນປະຈຳ' ແລະ ໂປຣແກຣມຈະສືບຕໍ່ສຳພາດ.
- **ທີ່ຢູ່ອາໄສນີ້ ແມ່ນນຳໃຊ້ຕາມລະດູການ ຫຼື ນຳໃຊ້ເປັນທີ່ຢູ່ອາໄສບ່ອນທີ່ສອງເທົ່ານັ້ນ:** ເຖິງຢ່າງໃດກໍ່ຕາມ ຈະມີບາງກໍລະນີທີ່ບຸກຄົນ ຫຼື ບັນດາບຸກຄົນທີ່ນັກເດີນສຳຫຼວດສຳພາດຢູ່ນັ້ນມີທີ່ຢູ່ອາໄສເປັນປະຈຳບໍ່ແມ່ນໃນທີ່ຢູ່ອາໄສທີ່ນັກເດີນສຳຫຼວດໄປຫາ, ແຕ່ວ່າປົກກະຕິແລ້ວ ຫຼື ສ່ວນໃຫຍ່ອາໄສຢູ່ບ່ອນອື່ນ. ອາດແມ່ນກໍລະນີທີ່ຜູ້ຄົນມີທີ່ຢູ່ອາໄສທີ່ສອງບ່ອນ ຫຼື ນຳໃຊ້ຕາມລະດູການຊົ່ວຄາວ (ຕ່ຳກວ່າ 6 ເດືອນ), ຕົວຢ່າງ, ອາໄສຢູ່ໃນວັນພັກຜ່ອນ ຫຼື ລະດູການເກັບກ່ຽວ. ກໍລະນີລັກສະນະນີ້, ຜູ້ຄົນເຫຼົ່ານີ້ບໍ່ໄດ້ອາໄສຢູ່ໃນທີ່ຢູ່ອາໄສນັ້ນເປັນປະຈຳ, ແຕ່ເປັນຜູ້ມາຢ້ຽມຢາມ ແລະ ນັກເດີນສຳຫຼວດຄວນເລືອກຄຳຕອບທີສອງ ('ທີ່ຢູ່ອາໄສນີ້ ແມ່ນນຳໃຊ້ຕາມລະດູການ ຫຼື ນຳໃຊ້ເປັນທີ່ຢູ່ອາໄສບ່ອນທີສອງເທົ່ານັ້ນ'). ຈາກນັ້ນໂປຣແກຣມຈະພາໄປຫາຄຳຖາມ B.01 ແລະ ຄຳຖາມຈຳນວນໜຶ່ງກ່າວກັບທີ່ຢູ່ອາໄສ ຈາກນັ້ນໄປຫາພາກຜູ້ມາຢ້ຽມຢາມ, ບ່ອນທີ່ສາມາດບັນທຶກຂໍ້ມູນກ່ຽວກັບບັນດາບຸກຄົນທີ່ມາຢ້ຽມຢາມ.




**ຄຳຖາມ:** A.06. ຈຳນວນຄົວເຮືອນ – *ມີຈັກຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສນີ້ໃນຄືນການສຳຫຼວດ, ຊຶ່ງແມ່ນຄືນຂອງວັນທີ 2 –3 ພະຈິກ 2025>?*

**ຈຸດປະສົງ:** ເພື່ອກຳນົດຈຳນວນຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສດຽວກັນ.

**ນິຍາມ:** ໃນໜຶ່ງທີ່ຢູ່ອາໄສປົກກະຕິແລ້ວແມ່ນມີຄົວເຮືອນອາໄສຢູ່ໜຶ່ງຄົວເຮືອນ. ເຖິງຢ່າງໃດກໍຕາມ, ອາດມີທີ່ຢູ່ອາໄສທີ່ມີສອງ (ຫຼື ຫຼາຍ) ຄົວເຮືອນອາໄສຢູ່ຮ່ວມກັນ. ນີ້ແມ່ນກໍລະນີທີ່ຄົນໃນທີ່ຢູ່ອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວບໍ່ໄດ້ກິນເຂົ້າຮ່ວມກັນເປັນປະຈຳ, ແຕ່ວ່າພວກເຂົາແຕ່ງ ແລະ ກິນ ແຍກກັນໃຜລາວ. ສະນັ້ນ, ເພື່ອໃຫ້ຜູ້ຄົນສາມາດຕອບຄຳຖາມນີ້ໄດ້ຢ່າງຖືກຕ້ອງ, ພວກເຂົາຕ້ອງໄດ້ເຂົ້າໃຈນິຍາມຂອງ 'ຄົວເຮືອນ'. ຄຳແນະນຳຢູ່ໃນໜ້າຈໍສາມາດຊ່ວຍນັກເດີນສຳຫຼວດອະທິບາຍນິຍາມເຫຼົ່ານີ້ໃຫ້ຜູ້ຖືກສຳພາດ, ໂດຍການເນັ້ນໃຫ້ເຫັນວ່າຄົວເຮືອນແມ່ນມີຄົນອາໄສຢູ່ຄົນດຽວ ຫຼື ອາໄສຢູ່ເປັນກຸ່ມຄົນ ທີ່ກົງກັບສອງເງື່ອນໄຂຕໍ່ໄປນີ້:

- ພວກເຂົາອາໄສຢູ່ຮ່ວມກັນໃນທີ່ຢູ່ອາໄສດຽວກັນ;
- ພວກເຂົາກິນເຂົ້າຈາກການແຕ່ງກິນໃນໝໍ້ດຽວກັນ.

**ວິທີການບັນທຶກຄຳຕອບ:** ໃນຄຳຖາມນີ້ນັກເດີນສຳຫຼວດຕ້ອງໄດ້ບັນທຶກຈຳນວນຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສໃສ່ໃນຊ່ອງຄຳຕອບໃຫ້ຖືກຕ້ອງ. ໃຫ້ຈື່ໄວ້ວ່າ ຄຳຖາມນີ້ບໍ່ໄດ້ຖາມກ່ຽວກັບຈຳນວນສະມາຊິກຄົວເຮືອນ, ແຕ່ແມ່ນຖາມກ່ຽວກັບ ຈຳນວນຄົວເຮືອນ.

**ໝາຍເຫດ:** ໃນກໍລະນີທີ່ຢູ່ອາໄສປະກອບດ້ວຍສອງ ຫຼື ຫຼາຍຄົວເຮືອນອາໄສຢູ່, ຫຼັງຈາກການສຳພາດຄົວເຮືອນທຳອິດສຳເລັດ, ໂປຣແກຣມຈະພາກັບຄືນໄປຫາຈຸດເລີ່ມຕົ້ນຂັ້ນຕອນການສຳພາດສຳລັບຄົວເຮືອນອື່ນໆຕໍ່ໄປ.

**ຄຳຖາມ:** A.07. ບ້ານ – *ຄົວເຮືອນນີ້ຂຶ້ນກັບບ້ານໃດ?*




**ຈຸດປະສົງ:** ເນື່ອງຈາກວ່າການແບ່ງເຂດສຳຫຼວດສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V ປີ 2025 ບໍ່ໄດ້ຄຳນຶງເຖິງຂອບເຂດຊາຍແດນຂອງບ້ານ, ຄຳຖາມນີ້ຈະຊ່ວຍໃຫ້ສາມາດຈຳແນກວ່າແຕ່ລະຄົວເຮືອນແມ່ນຂຶ້ນກັບບ້ານໃດ, ສາມາດກຳນົດຂອບເຂດຂອງບ້ານ ແລະ ລາຍງານຂໍ້ມູນໄດ້ຮອດລະດັບບ້ານໄດ້.

**ວິທີການບັນທຶກຄຳຕອບ:** ນັກເດີນສຳຫຼວດເລືອກຄຳຕອບທີ່ສະແດງອອກມາຊຶ່ງຈະປະກອບມີລາຍຊື່ບ້ານທັງໝົດພາຍໃນເມືອງທີ່ນັກເດີນສຳຫຼວດສຳຫຼວດຢູ່. ຫຼັງຈາກນັ້ນ, ໂປຣແກຣມຈະພາໄປຫາແບບສອບຖາມພາກຕໍ່ໄປ.

**ຄຳຖາມ:** A.08. ຈຳນວນສະມາຊິກຄົວເຮືອນ – ກໍລະນີປະຕິເສດ – *ທ່ານສາມາດບອກໄດ້ບໍວ່າມີຈັກຄົນອາໄສຢູ່ໃນທີ່ຢູ່ອາໄສນີ້?*




**ຈຸດປະສົງ:** ແມ່ນຄຳຖາມນີ້ແມ່ນເພື່ອເກັບກາຈຳນວນສະມາຊິກຄົວເຮືອນ ໃນກໍລະນີທີ່ຄົວເຮືອນປະຕິເສດບໍ່ໃຫ້ການຮ່ວມມືໃນການສຳຫຼວດ.

**ຫຼັກການ:** ຈຳນວນຄົນອາໄສຢູ່ໃນທີ່ຢູ່ອາໄສແມ່ນອົງປະກອບຂໍ້ມູນດຽວທີ່ມີຄວາມສຳຄັນທີ່ສຸດໃນເກັບກຳຂໍ້ມູນຂອງການສຳຫຼວດ. ດ້ວຍເຫດຜົນນີ້, ນັກເດີນສຳຫຼວດຕ້ອງພະຍາຍາມເກັບກຳໃຫ້ໄດ້ຂໍ້ມູນດັ່ງກ່າວ, ເຖິງແມ່ນວ່າຜູ້ຖືກສຳພາດບໍ່ຕ້ອງການໃຫ້ການຮ່ວມມືກໍ່ຕາມ. ນັກເດີນສຳຫຼວດອາດອະທິບາຍວ່າ ນັກເດີນສຳຫຼວດຍອມຮັບຈະບໍ່ໄດ້ເກັບກຳຂໍ້ມູນກ່ຽວກັບຄົວເຮືອນ. ແຕ່ວ່າຂໍໃຫ້ສະໜອງຂໍ້ມູນຢ່າງໜ້ອຍແມ່ນຈຳນວນຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສນີ້.

**ວິທີການບັນທຶກຄຳຕອບ:** ບັນທຶກຈຳນວນສະມາຊິກຄົວເຮືອນ ຖ້າວ່າຜູ້ຖືກສຳພາດສະໜອງຂໍ້ມູນໃຫ້. ຖ້າວ່າບໍ່ໄດ້ຕາມນັ້ນ, ແມ່ນໃຫ້ກົດໃສ່ລາຍການຢູ່ດ້ານຂວາມືຂອງຊ່ອງຄຳຕອບ ບ່ອນທີ່ສາມາດເລືອກຄຳຕອບວ່າ 'ປະຕິເສດ'. ໃນທີ່ນີ້ຈະບັນທຶກລະຫັດຄຳຕອບສຳລັບປະຕິເສດອັດຕະໂນມັດ.

**ຄຳຖາມ:** A.09. ແບບສອບຖາມຫຍໍ້ – *ນີ້ແມ່ນຄວາມພະຍາຍາມຄັ້ງທີສາມສຳລັບສຳຫຼວດທີ່ຢູ່ອາໄສນີ້ ຫຼື ກໍລະນີປະຕິເສດ ຫຼື ທີ່ຢູ່ອາໄສຫວ່າງເປົ່າ.*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອໃຫ້ນັກເດີນສາຫຼວດຢັ້ງຢືນວ່າເປັນກໍລະນີທີ່ນັກເດີນສຳຫຼວດໄປຫາຄົວເຮືອນທີ່ບໍ່ສາມາດຕິດຕໍ່ໄດ້ເປັນຄັ້ງທີ່ສາມແລ້ວ ຫຼື ຄົວເຮືອນປະຕິເສດ ຫຼື ທີ່ຢູ່ອາໄສຫວ່າງເປົ່າ.

**ຫຼັກການ:** ນັກເດີນສຳຫຼວດຈຳເປັນຕ້ອງເກັບກຳຂໍ້ມູນເພີ່ມເຕີມເລັກນ້ອຍຈາກການສັງເກດດ້ວຍຕົນເອງ ຫຼື ສອບຖາມຈາກເພື່ອນບ້ານໃກ້ຄຽງ, ຜູ້ດູແລຄວບຄຸມອາຄານ ຫຼື ຫ້ອງການບ້ານ. ນີ້ແມ່ນການເລີ່ມຕົ້ນແບບສອບຖາມຫຍໍ້. ໂປຣແກຣມນຳມາທີ່ນີ້ເມື່ອນັກເດີນສຳຫຼວດສຳຫຼວດຢູ່ທີ່ຢູ່ອາໄສຫວ່າງເປົ່າ (ບໍ່ມີໃຜຢູ່), ໃນກໍລະນີປະຕິເສດ ຫຼື ພະຍາຍາມຕິດຕໍ່ກັບຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສນີ້ສາມຄັ້ງແລ້ວແຕ່ບໍ່ສຳເລັດ.

**ວິທີການບັນທຶກຄຳຕອບ:** ນັກເດີນສຳຫຼວດຕ້ອງພະຍາຍາມຕອບຄຳຖາມຈຳນວນໜຶ່ງໂດຍການສັງເກດເອົາເອງ ຫຼື ຖາມເພື່ອບ້ານໃກ້ຄຽງ, ຜູ້ຄວບຄຸມອາຄານ, ຫ້ອງການບ້ານ ຫຼື ຕົວແທນຊຸມຊົນ. ເລືອກປຸ່ມ 'ໄປຕໍ່' ໃນຄຳຖາມທຳອິດຂອງແບບສອບຖາມຫຍໍ້ນີ້.

**ຄຳຖາມ:** A.10. ຈຳນວນສະມາຊິກຄົວເຮືອນ – ກໍລະນີບໍ່ສາມາດຕິດຕໍ່ໄດ້ – *ຫາທຸກວິທີທາງ – ຕົວຢ່າງ, ໂດຍການຖາມເພື່ອບ້ານ – ເພື່ອກວດສອບວ່າມີຈັກຄົນອາໄສຢູ່ໃນທີ່ຢູ່ອາໄສນີ້.*




**ຈຸດປະສົງ:** ເພື່ອເກັບກຳຈຳນວນສະມາຊິກຄົວເຮືອນ ໃນກໍລະນີນັກເດີນສຳຫຼວດບໍ່ສາມາດຕິດຕໍ່ກັບຄົວເຮືອນໄດ້.

**ຫຼັກການ:** ຈຳນວນຄົນອາໄສຢູ່ໃນທີ່ຢູ່ອາໄສແມ່ນອົງປະກອບຂໍ້ມູນ ທີ່ມີຄວາມສຳຄັນທີ່ສຸດໃນເກັບກຳຂອງການສຳຫຼວດ. ດ້ວຍເຫດຜົນນີ້, ນັກເດີນສຳຫຼວດຕ້ອງພະຍາຍາມເກັບກຳຂໍ້ມູນຈາກແຫຼ່ງອື່ນ ທີ່ບໍ່ແມ່ນຄົວເຮືອນ. ຈື່ໄວ້ວ່າຄຳຖາມນີ້ຈະບໍ່ຖືກຖາມໃນກໍລະນີເປັນທີ່ຢູ່ອາໄສຫວ່າງເປົ່າ ຫຼື ຜູ້ຖືກສຳພາດປະຕິເສດບໍ່ໃຫ້ການຮ່ວມມື ແຕ່ຕ້ອງໄດ້ລະບຸວ່າມີສະມາຊິກຄົວເຮືອນຈັກຄົນ. (ຖາມໃນຄາຖາມ A.08)

**ວິທີການບັນທຶກຄຳຕອບ:** ຖ້າວ່ານັກເດີນສຳຫຼວດໄດ້ຂໍ້ມູນກ່ຽວກັບຈຳນວນສະມາຊິກຄົວເຮືອນແມ່ນໃຫ້ປ້ອນໃສ່ຊ່ອງຄຳຕອບໃຫ້ຖືກຕ້ອງ. ຖ້າວ່າບໍ່ສາມາດໄດ້ຂໍ້ມູນ, ກົດໃສ່ປຸ່ມລາຍການຢູ່ເບື້ອງຂວາມືຂອງຊ່ອງຄຳຕອບ ແລະ ເລືອກ 'ບໍ່ມີຂໍ້ມູນ'.

**ໝາຍເຫດ:** ແບບສອບຖາມຫຍໍ້ຈະສືບຕໍ່ສາມຄຳຖາມກ່ຽວກັບອາຄານທີ່ເປັນບ່ອນທີ່ຢູ່ອາໄສຕັ້ງຢູ່ (B.01 ຫາ B.03).

## 4.6. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ B – ທີ່ຢູ່ອາໄສ ແລະ ຄົວເຮືອນ

ແບບສອບຖາມພາກ B – ທີ່ຢູ່ອາໄສ ແລະ ຄົວເຮືອນ ປະກອບດ້ວຍຄຳຖາມກ່ຽວກັບຄຸນລັກສະນະຂອງທີ່ຢູ່ອາໄສ ແລະ ສິ່ງອຳນວຍຄວາມສະດວກ ແລະ ການຄອບຄອງຊັບສິນຂອງຄົວເຮືອນທີ່ອາໄສຢູ່ທີ່ນັ້ນ. ພາກນີ້ມີຈຸດປະສົງເພື່ອສະໜອງຂໍ້ມູນກ່ຽວກັບເງື່ອນໄຂການດຳລົງຊີວິດຂອງພົນລະເມືອງ ແລະ ການເຂົ້າເຖິງການບໍລິການພື້ນຖານເຊັ່ນ: ການເຂົ້າເຖິງໄຟຟ້າ, ນ້ຳສະອາດ ແລະ ສຸຂະອະນາໄມ. ນອກຈາກນັ້ນ, ຍັງມີຄຳຖາມຈຳນວນໜຶ່ງທີ່ຖາມເຖິງການຄອບຄອງສິ່ງອຳນວຍຄວາມສະດວກຕ່າງໆຂອງຄົວເຮືອນ. ແບບສອບຖາມພາກ B – ຂໍ້ມູນຄົວເຮືອນ ແລະ ທີ່ຢູ່ອາໄສ ມີ 21 ຄາຖາມ 1 ຂໍ້ມູນສ້າງຂຶ້ນອັດຕະໂນມັດ. ຂໍ້ມູນເຫຼົ່ານີ້ສະໜອງໃຫ້ແກ່ການກຳນົດນະໂຍບາຍ ແລະ ໂຄງການຕ່າງໆກ່ຽວກັບທີ່ຢູ່ອາໄສ, ການສະໜອງການບໍລິການ ແລະ ການກຳນົດບຸລິມະສິດສຳລັບຂົງເຂດທີ່ເຂົ້າເຖິງຍາກ ແລະ ກຸມຄົນດ້ອຍໂອກາດ.

**ຄຳຖາມ:** B.01. ປະເພດອາຄານ – *ອາຄານທີ່ເປັນທີ່ຕັ້ງຂອງທີ່ຢູ່ອາໄສແມ່ນອາຄານປະເພດໃດ?*




**ຈຸດປະສົງ:** ປະເພດຂອງອາຄານແມ່ນມີຄວາມຈຳເປັນຕ້ອງໄດ້ຈັດແບ່ງທີ່ຢູ່ອາໄສພາຍໃນອາຄານ ແລະ ເພື່ອກຳນົດໂຄງການທີ່ຢູ່ອາໄສ. ໃນຄຳຖາມນີ້ໃຫ້ຄຳນຶງວ່າພວກເຮົາເກັບກຳຂໍ້ມູນອາຄານ ບໍ່ແມ່ນທີ່ຢູ່ອາໄສ ແຕ່ແມ່ນອາຄານບ່ອນທີ່ຢູ່ອາໄສຕັ້ງຢູ່.

**ນິຍາມ:** ໃນຫຼາຍໆກໍລະນີ, ທີ່ຢູ່ອາໄສແມ່ນອັນດຽວກັນກັບອາຄານ, ແຕ່ວ່າກໍລະນີອື່ນ, ໂດຍສະເພາະແມ່ນ ຫ້ອງແຖວ/ອະພາດເມັນ, ອາດມີຫຼາຍທີ່ຢູ່ອາໄສໃນໜຶ່ງອາຄານ. ປະເພດອາຄານຖືກແບ່ງອອກເປັນ 6 ລາຍການຄຳຕອບດັ່ງລາຍລະອຽດຕໍ່ໄປນີ້:

| | |
|---|---|
| **ເຮືອນດ່ຽວ:** ເປັນອາຄານທີ່ແຍກຕ່າງຫາກ, ມີທີ່ຢູ່ອາໄສດຽວ ໂດຍບໍ່ຕິດ/ເຊື່ອມຈອດອາຄານອື່ນ. |  |
| **ເຮືອນທີ່ຕິດ/ເຊື່ອມຈອດກັບເຮືອນຫຼັງອື່ນດ້ານໜຶ່ງ ຫຼື ຫຼາຍດ້ານ:** ເປັນອາຄານທີ່ມີຝາຮ່ວມກັນກັບອາຄານອື່ນດ້ານໜຶ່ງ ຫຼື ຫຼາຍດ້ານ ແລະ ແຕ່ລະເຮືອນມີທາງເຂົ້າສະເພາະເປັນຂອງຕົນເອງ. |  |
| **ອະພາດເມັນ ຫຼື ຫ້ອງແຖວ:** ເປັນອາຄານທີ່ມີຫຼາຍທີ່ຢູ່ອາໄສ ຊຶ່ງມີໜຶ່ງ ຫຼື ຫຼາຍຫ້ອງອະພາດເມັນໃນແຕ່ລະຊັ້ນທີ່ແຕກຕ່າງກັນ |  |
| **ອາຄານທີ່ບໍ່ມີຈຸດປະສົງໃຫ້ຄົນອາໄສຢູ່:** ເປັນອາຄານທີ່ອອກແບບສະເພາະ ແລະ ບໍ່ມີຈຸດປະສົງໃຊ້ເປັນທີ່ຢູ່ອາໄສ ເຊັ່ນ: ຮ້ານຄ້າ ແລະ ຫ້ອງການ, ເຖິງຢ່າງໃດກໍ່ຕາມພວກມັນອາດຖືກນຳໃຊ້ສຳລັບຢູ່ອາໄສໃນເວລາສຳຫຼວດ. |  |
| **ທີ່ລີ້ບໄພ, ເຕັນ, ກະທ່ອມ:** ເຕັນ ຫຼື ທີ່ລີ້ບໄພທີ່ມີຄົນອາໄສຢູ່. ກະທ່ອມທີ່ລີ້ບໄພນ້ອຍ ຫຼື ທີ່ຢູ່ອາໄສປະເພດໜຶ່ງ, ປົກກະຕິແລ້ວມີການອອກແບບ ແລະ ກໍ່ສ້າງແບບດັ້ງເດີມ ແລະ ປະຖົມປະຖານ. ຕ້ອງລະມັດລະວັງບໍ່ໃຫ້ສັບສົນກັນລະຫວ່າງເຮືອນນ້ອຍທີ່ສະພາບຊຸດໂຊມ ກັບກະທ່ອມ. |  |

| | |
|---|---|
| **ໂຄງສ້າງອາຄານປະເພດອື່ນໆ:** ເປັນໂຄງສ້າງເຄິ່ງຖາວອນຄົງທີ່ ຫຼື ເຄື່ອນຍ້າຍໄດ້ ທີ່ບໍ່ສາມາດໄຈ້ແຍກຢູ່ໃນຫ້າລຳດັບຂ້າງເທິງນີ້. |  |

**ວິທີການບັນທຶກຄຳຕອບ:** ໂດຍອີງໃສ່ການສັງເກດຂອງນັກເດີນສາຫຼວດ (ຄຳຖາມເປັນໜັງສືສີຂຽວ), ນັກເດີນສຳຫຼວດຕ້ອງເລືອກໜຶ່ງໃນຫົກລາຍການຄຳຕອບກ່ຽວກັບປະເພດຂອງອາຄານ ບ່ອນທີ່ຢູ່ອາໄສຕັ້ງຢູ່.

**ໝາຍເຫດ:** ຄຳຖາມກ່ຽວກັບປະເພດຂອງອາຄານແມ່ນສ່ວນໜຶ່ງຂອງແບບສອບຖາມ (ເພື່ອໃຫ້ສຳເລັດໃນການເກັບກຳຂໍ້ມູນ ນັກເດີນສຳຫຼວດຕ້ອງພະຍາຍາມຕິດຕໍ່ກັບຄົວເຮືອນ ຢ່າງໜ້ອຍສາມຄັ້ງ, ໃນກໍລະນີທີ່ຖືກປະຕິເສດຫຼື ທີ່ຢູ່ອາໄສຫວ່າງເປົ່າ)

**ຄຳຖາມ:** B.02. ວັດສະດຸທີ່ໃຊ້ເຮັດຝາ – *ວັດສະດຸຕົ້ນຕໍທີ່ໃຊ້ເຮັດຝານອກຂອງທີ່ອາໄສແມ່ນຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກາຂໍ້ມູນກ່ຽວກັບວັດສະດຸທີ່ໃຊ້ເຮັດ/ກໍ່ສ້າງຝາອ້ອມ (ບໍ່ແມ່ນຝາຂັ້ນຫ້ອງພາຍໃນ) ທີ່ຢູ່ອາໄສ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກວັດສະດຸທີ່ນຳໃຊ້ເປັນສ່ວນໃຫຍ່ ຫຼື ຖ້າວ່າຝາຂອງທີ່ຢູ່ອາໄສເຮັດດ້ວຍວັດສະດຸຫຼາຍກວ່າໜຶ່ງປະເພດ.

**ໝາຍເຫດ:** ນີ້ແມ່ນສິ່ງທີ່ນັກເດີນສຳຫຼວດບໍ່ຈຳເປັນຕ້ອງຖາມໃນຫຼາຍກໍລະນີ, ແຕ່ເປັນສິ່ງທີ່ສາມາດສັງເກດເຫັນໄດ້ທັນທີ (ສະນັ້ນ, ຄຳຖາມນີ້ເປັນໜັງສືສີຂຽວ).

**ຄຳຖາມ:** B.03. ວັດສະດຸທີ່ໃຊ້ມຸງຫຼັງຄາ – *ວັດສະດຸຕົ້ນຕໍທີ່ໃຊ້ມຸງຫຼັງຄາຂອງທີ່ຢູ່ອາໄສແມ່ນຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ເພື່ອເກັບກຳຂໍ້ມູນກ່ຽວກັບວັດສະດຸທີ່ໃຊ້ໃນການມຸງຫຼັງຄາ.

**ນິຍາມ:** ຫຼັງຄາແມ່ນອົງປະກອບທີ່ໃຊ້ປົກຄຸມທີ່ຢູ່ອາໄສຈາກດ້ານເທິງ, ບໍ່ແມ່ນອົງປະກອບທີ່ຢູ່ດ້ານໃນ (ເຖິງແມ່ນວ່າຈະແມ່ນວັດສະດຸປະເພດດຽວກັນກໍ່ຕາມ). ຕົວຢ່າງ, ໃນຊັ້ນທີໜຶ່ງຂອງອາຄານອະພາດເມັນທີ່ມີ 5 ຊັ້ນ, ຫຼັງຄາຂອງທີ່ຢູ່ອາໄສແມ່ນຄອນກຣີດ, ຊຶ່ງເປັນສິ່ງແບ່ງອອກຈາກຊັ້ນທີສອງ.

**ວິທີການບັນທຶກຄຳຕອບ:** ຖ້າວ່າວັດສະດຸທີ່ໃຊ້ເຮັດຫຼັງຄາມີຫຼາຍກວ່າໜຶ່ງປະເພດ ເລືອກບັນທຶກວັດສະດຸທີ່ໃຊ້ເປັນຫຼັກ ຫຼື ເປັນສ່ວນໃຫຍ່. ໂດຍປົກກະຕິແລ້ວ, ນີ້ແມ່ນສິ່ງທີ່ນັກເດີນສຳຫຼວດສາມາດສັງເກດເຫັນໄດ້ທັນທີ.

**ໝາຍເຫດ:** ແບບສອບຖາມຈະຂ້າມໄປທ້າຍແບບສອບຖາມ ຖ້າວ່ານີ້ເປັນການເລືອກ 'ບໍ່ສາມາດຕິດຕໍ່ໄດ້' ເປັນຄັ້ງສຸດທ້າຍ, ປະຕິເສດ ຫຼື ທີ່ຢູ່ອາໄສຫວ່າງເປົ່າ. ນອກຈາກນັ້ນ, ໂປຣແກຣມຈະໄປຕໍ່ຄຳຖາມທີ B.04.

**ຄຳຖາມ:** B.04. ວັດສະດຸປູພື້ນ – *ວັດສະດຸຕົ້ນຕໍທີ່ໃຊ້ປູພື້ນທີ່ຢູ່ອາໄສແມ່ນຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບວັດສະດຸທີ່ໃຊ້ເຮັດພື້ນທີ່ຢູ່ອາໄສ, ຊຶ່ງເປັນການສະໜອງຂໍ້ມູນກ່ຽວກັບສຸຂະອະນາໄມ ແລະ ສະຖານະສຸຂະພາບຂອງຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສ.

**ວິທີການບັນທຶກຄຳຕອບ:** ຖ້າວ່າວັດສະດຸທີ່ໃຊ້ເຮັດພື້ນເຮືອນມີຫຼາຍກວ່າໜຶ່ງປະເພດ ເລືອກບັນທຶກເອົາວັດສະດຸທີ່ໃຊ້ເປັນສ່ວນໃຫຍ່.

**ຄຳຖາມ:** B.05. ໄຟຟ້າ – *ທີ່ຢູ່ອາໄສນີ້ມີໄຟຟ້າໃຊ້ບໍ?*




**ຈຸດປະສົງ:** ການເຂົ້າເຖິງໄຟຟ້າແມ່ນເປັນເງື່ອນໄຂທີ່ສຳຄັນສຳລັບການໃຫ້ແສງສະຫວ່າງ, ການໃຫ້ຄວາມອົບອຸ່ນ, ການປັບອາກາດເຢັນ ແລະ ເຄື່ອງໃຊ້ຕ່າງໆໃນຄົວເຮືອນ, ປະກອບດ້ວຍແອເຢັນ, ເຄື່ອງມືສື່ສານຕ່າງໆເຊັ່ນ: ວິທະຍຸ, ໂທລະພາບ ແລະ ອິນເຕີເນັດ.

**ວິທີການບັນທຶກຄຳຕອບ:** ເລືອກຄຳຕອບຕາມທີ່ຜູ້ຖືກສຳພາດສະໜອງໃຫ້ວ່າມີ ຫຼື ບໍ່ມີ.

**ຄຳຖາມ:** B.06. ປະເພດໄຟຟ້າ – *ທີ່ຢູ່ອາໄສນີ້ນຳໃຊ້ໄຟຟ້າມາຈາກແຫຼ່ງຕໍ່ໄປນີ້ບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນແຫຼ່ງໄຟ້າຕ່າງໆທີ່ຄົວເຮືອນນຳໃຊ້.

**ນິຍາມ:** ຄົວເຮືອນສາມາດມີໄຟຟ້າໃນທີ່ຢູ່ອາໄສມາຈາກຫຼາຍແຫຼ່ງ. ມີຫຼາຍຄົວເຮືອນມີໄຟຟ້າຫຼາຍກວ່າໜຶ່ງປະເພດ, ຍົກຕົວຢ່າງ, ແຫຼ່ງໄຟຟ້າມາຈາກຕາຂ່າຍຂອງລັດ ແລະ ແຜງໂຊລາເຊວ. ສຳລັບຄຳຖາມນີ້, ມີແຫຼ່ງໄຟຟ້າທີ່ເປັນໄປໄດ້ທັງໝົດ 7 ແຫຼ່ງ ໂດຍໄດ້ກຳນົດເປັນຄຳຖາມຍ່ອຍ (A ຫາ G; ໃນນີ້ໄດ້ສະແດງພຽງແຕ່ຄຳຖາມ B.06.A ແລະ B.06.B). ສຳລັບແຫຼ່ງໄຟຟ້າແຕ່ລະປະເພດ ນັກເດີນສຳຫຼວດຕ້ອງໄດ້ຖາມວ່າມີຢູ່ໃນທີ່ຢູ່ອາໄສ ຫຼື ບໍ.

ສຳລັບ 7 ປະເພດຄຳຕອບທີ່ເປັນໄປໄດ້ປະກອບດ້ວຍ:

- **ໄຟຟ້າຈາກຕາຂ່າຍຂອງລັດ:** ໄຟຟ້າທີ່ຕໍ່ເຂົ້າທີ່ຢູ່ອາໄສແມ່ນມາຈາກລະບົບຕາຂ່າຍຂອງລັດ. ໃນຄວາມເປັນຈິງແລ້ວປະຊາຊົນຕ້ອງໄດ້ມີບັນຊີກັບບໍລິສັດລັດວິສາຫະກິດໄຟຟ້າລາວ.
- **ແຜງໂຊລາເຊວ:** ແມ່ນລະບົບປ່ຽນແສງອາທິດເປັນໄຟຟ້າ. ໄຟຟ້ານີ້ແມ່ນຖືກຜະລິດມາຈາກແຜງ/ແຜ່ນ ທີ່ປົກກະຕິແລ້ວ (ແຕ່ບໍ່ແມ່ນທັງໝົດ) ພົບເຫັນຕິດຕັ້ງຢູ່ເທິງຫຼັງຄາຂອງອາຄານ.

- **ກັງພັດລົມ:** ລວມເອົາກັງພັດລົມຂະໜາດນ້ອຍທີ່ຜິດກະແສໄຟຟ້າເພື່ອຂາຍ ສໍາລັບໜຶ່ງ ຫຼື ຫຼາຍເຮືອນ. ໄຟຟ້າຖືກຜະລິດຂຶ້ນມາຈາກການປິ່ນໃບພັດທີ່ເກີດຂຶ້ນຈາກລົມ.
- **ເຄື່ອງປັ່ນໄຟຟ້າ:** ແມ່ນລະບົບຜະລິດໄຟຟ້າໂດຍໃຊ້ນໍ້າມັນແອັດຊັງ ຫຼື ກະຊວນ.
- **ໝໍ້ໄຟ:** ປະຊາຊົນອາດນໍາໃຊ້ໝໍ້ໄຟ ຫຼື ໝໍ້ໄຟລົດ ເພື່ອຜະລິດໄຟຟ້າໃນເຮືອນ.
- **ໄຟຟ້ານໍ້າຢອດ:** ໄຟຟ້ານໍ້າຢອດແມ່ນລະບົບຜະລິດໄຟຟ້າດ້ວຍພະລັງນໍ້າ ທີ່ຜະລິດໄຟຟ້າໄດ້ບໍ່ເກີນ 5 kW.
- **ແຫຼ່ງໄຟຟ້າປະເພດອື່ນໆ:** ແຫຼ່ງໄຟຟ້າອື່ນໆທີ່ບໍ່ກົງກັບລາຍການທີ່ໄດ້ກ່າວມາຂ້າງເທິງ.

**ວິທີການບັນທຶກຄໍາຕອບ:** ເລືອກຄໍາຕອບຕາມທີ່ຜູ້ຖືກສໍາພາດສະໜອງໃຫ້ວ່າມີ ຫຼື ບໍ່ມີ ໃນແຕ່ລະປະເພດແຫຼ່ງໄຟຟ້າ.

**ຄໍາຖາມ:** B.07. ແຫຼ່ງພະລັງງານ – *ແຫຼ່ງພະລັງງານຕົ້ນຕໍທີ່ຄົວເຮືອນໃຊ້ສໍາລັບແຕ່ງກິນແມ່ນຫຍັງ?*




**ຈຸດປະສົງ:** ມັນມີການພົວພັນກັນລະຫວ່າງເຊື້ອໄຟທີ່ໃຊ້, ມົນລະພິດທາງອາກາດພາຍໃນເຮືອນ, ສຸຂະພາບ, ການຕັດໄມ້ທໍາລາຍປ່າ, ດິນເຊາະເຈື່ອນ ແລະ ການປ່ອຍອາຍພິດເຮືອນແກ້ວ. ປະເພດເຊື້ອໄຟເປັນຕົວກໍານົດການປ່ອຍມົນລະພິດທາງອາກາດພາຍໃນເຮືອນ. ແຕ່ງກິນດ້ວຍໄຟໃນທີ່ໂລ່ງ ອາດສົ່ງຜົນໃຫ້ເກີດມົນລະພິດທາງອາກາດຕາມມາ ແລະ ມີຄວາມສ່ຽງທີ່ສໍາຄັນດ້ານສຸຂະພາບ (ເສັ້ນເລືອດອຸດຕັນ, ໂລກຫົວໃຈ, ມະເລັງປອດ, ການຕິດເຊື້ອທາງລົມຫາຍໃຈ), ການຕາຍ ແລະ ການເປັນພິການເພີ່ມຂຶ້ນ.

**ວິທີການບັນທຶກຄໍາຕອບ:** ຄົວເຮືອນຈໍານວນໜຶ່ງອາດນໍາໃຊ້ໄຟຟ້າ, ແກັສ ແລະ ຟືນໃນເວລາດຽວກັນ ຄໍາຕອບທີ່ຕ້ອງການແມ່ນເຊື້ອໄຟປະເພດໃດໃຊ້ຫຼາຍທີ່ສຸດ.

**ຄໍາຖາມ:** B.08. ຈໍານວນຫ້ອງທັງໝົດ – *ຄົວເຮືອນນີ້ນໍາໃຊ້ຈັກຫ້ອງໃນທີ່ຢູ່ອາໄສນີ້?*




**ຈຸດປະສົງ:** ຄໍາຖາມນີ້ແມ່ນເພື່ອເກັບກໍາຂໍ້ມູນຈໍານວນຫ້ອງຂອງທີ່ຢູ່ອາໄສທີ່ຄົວເຮືອນນໍາໃຊ້ເປັນປະຈໍາ.

**ນິຍາມ:** ຫ້ອງຕ້ອງຂັ້ນດ້ວຍຝາທີ່ມີປະຕູເຂົ້າ-ອອກ, ມີຫຼັງຄາ ແລະ ມີລວງກ້າງ ແລະ ລວງຍາວພຽງພໍສໍາລັບໜຶ່ງຄົນນອນຢູ່ໃນ, ຕົວຢ່າງ, ລວງຍາວຢ່າງໜ້ອຍ 2 ແມັດ, ລວງກວ້າງຢ່າງໜ້ອຍ 1.5 ແມັດ ແລະ ລວງສູງ ຢ່າງໜ້ອຍ 2 ແມັດ.

ຫ້ອງປະກອບດ້ວຍ ຫ້ອງນັ່ງຫຼິ້ນ, ຫ້ອງນອນ, ຫ້ອງກິນເຂົ້າ, ຫ້ອງແຕ້ມຮູບ, ຫ້ອງຮຽນໜັງສື, ຫ້ອງຄົນໃຊ້ ແລະ ຫ້ອງອື່ນໆ ທີ່ເປັນບ່ອນຢູ່ອາໄສ ທີ່ຕອບສະໜອງຕາມເງື່ອນໄຂຂ້າງເທິງ. ຫ້ອງທີ່ປົກກະຕິບໍ່ໄດ້ນໍາໃຊ້, ຕົວຢ່າງຫ້ອງສໍາລັບແຂກ, ແມ່ນໃຫ້ນັບລວມເອົາເຊັ່ນກັນ.

<u>ຫ້ອງທີ່ບໍ່ນັບລວມເອົາ</u> ປະກອບມີ ຫ້ອງອາບນໍ້າ, ຫ້ອງຖ່າຍ/ສ້ວມຖ່າຍ, ຫ້ອງສາງ, ລະບຽງ, ແລວທາງຍ່າງ ແລະ ອື່ນໆ ທີ່ບໍ່ໄດ້ໃຊ້ເປັນປົກກະຕິ.

ຫ້ອງຄົວຄວນຖືກນັບລວມເຂົ້າໃນຈຳນວນຫ້ອງ ຖ້າວ່າຄົບເງື່ອນໄຂທີ່ກ່ຽວຂ້ອງກັບຝາ ແລະ ເນື້ອທີ່. ຫ້ອງຄົວ ຫຼື ເຮືອນຄົວທີ່ມີເນື້ອທີ່ນ້ອຍກວ່າ 4 ຕາແມັດ ຫຼື ບໍ່ຄົບຄຸນລັກສະນະທີ່ກຳນົດໄວ້ອື່ນໆ ແມ່ນບໍ່ນັບລວມເຂົ້າເປັນຈຳນວນຫ້ອງ. ຖ້າວ່າເຮືອນຄົວຢູ່ແຍກອອກຢູ່ນອກໂຄງສ້າງຈາກທີ່ຢູ່ອາໄສ ກໍ່ໃຫ້ນັບລວມເຂົ້າໃນຈຳນວນຫ້ອງເຊັ່ນກັນ.

ສຳລັບຫ້ອງອະເນປະສົງ, ໃຊ້ສຳລັບນອນ, ນັ່ງ, ກິນເຂົ້າ, ເກັບເຄື່ອງ, ແຕ່ງກິນ ແລະ ອື່ນໆ ຢູ່ຫ້ອງດຽວກັນ ຕ້ອງນັບເປັນໜຶ່ງຫ້ອງ. ຖ້າວ່າຫ້ອງຂັ້ນດ້ວຍຜ້າ, ແຜ່ນຜ້າເລື່ອນ, ກ່ອງເຈ້ຍ, ແຜ່ນຢາງ ຫຼື ວັດສະດຸທີ່ໃຊ້ຊົ່ວຄາວ ແມ່ນພິຈາລະນາເປັນໜຶ່ງຫ້ອງ.

ຫ້ອງທີ່ໃຊ້ຮ່ວມກັນຫຼາຍກວ່າໜຶ່ງຄົວເຮືອນຈະບໍ່ຖືກນັບເປັນຈຳນວນຫ້ອງຂອງຄົວເຮືອນໃດໜຶ່ງ, ຫຼືເວົ້າວ່າ, ມີພຽງຫ້ອງທີ່ໃຊ້ສະເພາະໃນຄົວເຮືອນທີ່ຈະຖືກນັບ.

ຖ້າວ່າຄົນໃຊ້ ນຳໃຊ້ບ່ອນຈອດລົດ ຫຼື ຢູ່ນອກອາຄານ ແລະ ລາວອາໄສຢູ່ບ່ອນນັ້ນ, ມັນແມ່ນຄົວເຮືອນຕ່າງຫາກ ແລະ ພິຈາລະນາຫ້ອງດັ່ງກ່າວເປັນຄົວເຮືອນຂອງຄົນໃຊ້. ຖ້າຄົນໃຊ້ຖືກພິຈາລະນາເປັນສະມາຊິກຂອງຄົວເຮືອນ, ບ່ອນຈອດລົດ ຫຼື ຫ້ອງນອກອາຄານ ຄວນຖືກພິຈາລະນາເປັນຫ້ອງເພີ່ມສຳລັບຄົວເຮືອນ.

ບາງຄົວເຮືອນອາໄສຢູ່ກະທ່ອມຊົ່ວຄາວ ຫຼື ເຕັນ. ທີ່ຢູ່ອາໄສປະເພດນີ້ຈະບໍ່ມີຝາເປັນສີ່ດ້ານປະກອບເປັນຫ້ອງ; ດັ່ງນັ້ນເງື່ອນໄຂທີ່ກ່າວມາຂ້າງເທິງຈະບໍ່ຖືກນຳໃຊ້ໃນກໍລະນີນີ້. ເຖິງຢ່າງໃດກໍ່ຕາມ, ຫຼັງຄາຂອງກະທ່ອມຊົ່ວຄາວ ຫຼື ເຕັນແມ່ນສ້າງຂຶ້ນຈາກພື້ນ ແລະ ຍັງມີໜ້າທີ່ເປັນຝາໃນເວລາດຽວກັນ. ດັ່ງນັ້ນ, ກະທ່ອມຊົ່ວຄາວ ຫຼື ເຕັນ ຄວນຖືກພິຈາລະນາເປັນຫ້ອງດ່ຽວ.

**ວິທີການບັນທຶກຄຳຕອບ:** ບັນທຶກຈຳນວນຫ້ອງທັງໝົດ ທີ່ຄົວເຮືອນນຳໃຊ້ໂດຍລວມໃສ່ຊ່ອງຄຳຕອບໃຫ້ຖືກຕ້ອງ.

**ຄຳຖາມ:** B.09. ກຳມະສິດທີ່ຢູ່ອາໄສ – *ຄົວເຮືອນນີ້ມີກຳມະສິດຕໍ່ທີ່ຢູ່ອາໄສນີ້ແນວໃດ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບກຳມະສິດຕໍ່ທີ່ຢູ່ອາໄສ ຂອງຄົວເຮືອນທີ່ອາໄສຢູ່ໃນທີ່ຢູ່ອາໄສດັ່ງກ່າວ.

**ຄວາມສຳຄັນ:** ກຳມະສິດທີ່ຢູ່ອາໄສແມ່ນເປັນແຫຼ່ງມູນທີ່ມີຄວາມສຳຄັນສຳລັບຂະແໜງການທີ່ຢູ່ອາໄສ. ກຳມະສິດທີ່ຢູ່ອາໄສແມ່ນມີຄວາມສຳຄັນຫຼາຍສຳລັບຂະແໜງການທີ່ກ່ຽວຂ້ອງກັບທີ່ຢູ່ອາໄສ. ມັນໝາຍເຖິງການຈັດການສິດທາງກົດໝາຍກ່ຽວກັບການອາໄສຢູ່ໃນທີ່ຢູ່ອາໄສຂອງຄົວເຮືອນ ແລະ ບົ່ງບອກເຖິງຄວາມປອດໄພຂອງການອາໃສຢູ່ໃນທີ່ຢູ່ອາໄສຂອງຄົວເຮືອນ. ກຳມະສິດຍັງພິຈາລະນາເຖິງລາຍໄດ້ ແລະ ຄວາມຮັ່ງມີໂດຍທາງອ້ອມ.

**ນິຍາມ:** ນັກເກັບສຳຫຼວດຄວນຈື່ໄວ້ (ແລະ ອະທິບາຍໃຫ້ຜູ້ຕອບສຳພາດຟັງຖ້າຈຳເປັນ) ວ່າ:

- ສະຖານະກຳມະສິດແມ່ນກ່ຽວຂ້ອງກັບທີ່ພັກອາໄສຂອງຄົວເຮືອນ ແລະ ບໍ່ແມ່ນທີ່ດິນທີ່ທີ່ຢູ່ອາໄສຕັ້ງຢູ່.
- ຖ້າຄົວເຮືອນເປັນເຈົ້າຂອງທີ່ຢູ່ອາໄສຫຼາຍກວ່າໜຶ່ງທີ່ຢູ່ອາໄສ, ຂໍ້ມູນທີ່ຈະຕ້ອງບັນທຶກເອົາຕ້ອງກ່ຽວຂ້ອງກັບທີ່ຢູ່ອາໄສທີ່ນັກເກັບສຳຫຼວດກຳລັງສຳພາດຢູ່ເທົ່ານັ້ນ.

ລາຍການຄຳຕອບ 6 ປະເພດກຳມະສິດທີ່ຢູ່ອາໄສຕໍ່ໄປນີ້ແມ່ນໃຊ້ສຳລັບຄຳຖາມທີ B.09 ກ່ຽວກັບກຳມະສິດທີ່ຢູ່ອາໄສ:

- **ຄົວເຮືອນເປັນເຈົ້າຂອງທີ່ຢູ່ອາໄສ:** ຈະຖືກເລືອກຖ້າວ່າສະມາຊິກຄົວເຮືອນໜຶ່ງ ຫຼື ຫຼາຍຄົນທີ່ອາໄສຢູ່ທີ່ຢູ່ອາໄສນີ້ເປັນເຈົ້າຂອງ.

- **ຄົວເຮືອນເຊົ່າທັງໝົດ ຫຼື ສ່ວນໃດໜຶ່ງຂອງທີ່ຢູ່ອາໄສ:** ຈະຖືກເລືອກຖ້າວ່າສະມາຊິກຄົວເຮືອນໜຶ່ງ ຫຼື ຫຼາຍຄົນທີ່ອາໄສຢູ່ທີ່ຢູ່ອາໄສນີ້ເຊົ່າສະຖານທີ່ຢູ່. ຄວນຈື່ໄວ້ວ່າມັນບໍ່ແຕກຕ່າງກັນລະຫວ່າງຜູ້ເຊົ່າ ແລະ ຜູ້ເຊົ່າຕໍ່.
- **ນາຍຈ້າງໃຫ້ຢູ່ລ້າ:** ບໍ່ໄດ້ຈ່າຍຄ່າເຊົ່າ; ທີ່ຢູ່ອາໄສແມ່ນນາຍຈ້າງເອົາໃຫ້ສະມາຊິກຄົວເຮືອນໜຶ່ງ ຫຼື ຫຼາຍຄົນອາໄສຢູ່ລ້າ.
- **ລັດໃຫ້ຢູ່ລ້າ:** ໃນຂໍ້ນີ້ແມ່ນລວມເອົາເຮືອນທີ່ສະໜອງໃຫ້ໂດຍລັດຖະບານ ເພື່ອໃຫ້ພະນັກງານລັດຖະກອນ ແລະ ບັນດາບຸກຄົນອື່ນໆຢູ່ໂດຍບໍ່ໄດ້ເສຍຄ່າເຊົ່າ.
- **ຄອບຄົວ ຫຼື ໝູ່ເພື່ອໃຫ້ຢູ່ລ້າ:** ຄົວເຮືອນສາມາດອາໄສຢູ່ໂດຍບໍ່ເສຍຄ່າເຊົ່າໃນທີ່ຢູ່ອາໄສທີ່ເປັນຂອງສະມາຊິກຄອບຄົວ ຫຼື ໝູ່ເພື່ອ ທີ່ເປັນສະມາຊິກຄົວເຮືອນອື່ນ.
- **ກຳມະສິດປະເພດອື່ນໆ:** ຍົກຕົວຢ່າງ, ຖ້າວ່າຄົວເຮືອນອາໄສຢູ່ເພື່ອໃຫ້ບໍລິການເຊັ່ນ: ການປັບປຸງບູລະນະ ຫຼື ກິດຈະກຳການປູກຝັງ.

**ວິທີການບັນທຶກຄຳຕອບ:** ເລືອກຄຳຕອບຕາມທີ່ຜູ້ຖືກສຳພາດສະໜອງໃຫ້.

**ຄຳຖາມ:** B.10. ນ້ຳດື່ມ – *ແຫຼ່ງນ້ຳດື່ມຕົ້ນຕໍຂອງຄົວເຮືອນແມ່ນຫຍັງ?*




**ຈຸດປະສົງ:** ແຫຼ່ງນ້ຳດື່ມທີ່ມີການສະໜອງທີ່ພຽງພໍ, ເຂົ້າເຖິງງ່າຍ ແລະ ປອດໄພ ແມ່ນມີຄວາມສຳຄັນຫຼາຍສຳລັບສຸຂະອະນາໄມ, ສຸຂະພາບ ແລະ ຄວາມຕ້ອງການພາຍໃນ. ຄຳຖາມທີ B.10 ແມ່ນເພື່ອຄົ້ນຫາວ່າຄົວເຮືອນມີລະບົບການສະໜອງນ້ຳທີ່ພຽງພໍ ຫຼື ບໍ່.

**ນິຍາມ:** ລະບົບການສະໜອງນ້ຳ ແມ່ນລະບົບເພື່ອຈັດເກັບ ແລະ ແຈກຈ່າຍນ້ຳຈາກແຫຼ່ງນ້ຳໃຫ້ຜູ້ຊົມໃຊ້. ຜູ້ຖືກສຳພາດອາດຈະບໍ່ສາມາດເຂົ້າໃຈຕອບໄດ້ທັນທີ. ດັ່ງນັ້ນ, ນັກເດີນສຳຫຼວດຄວນອ່ານແຕ່ລະລາຍການຄຳຕອບທີ່ສະແດງຢູ່ໃນໜ້າຈໍໃຫ້ຜູ້ຖືກສຳພາດຟັງ. ຄຳຖາມນີ້ມີ 12 ລາຍການຄຳຕອບແມ່ນມີລາຍລະອຽດດັ່ງຕໍ່ໄປນີ້:

- **ນ້ຳປະປາໃນທີ່ຢູ່ອາໄສ:** ກັອກນ້ຳໜຶ່ງ ຫຼື ຫຼາຍອັນ ຕໍ່ກັບທໍ່ນ້ຳປະປາ ຕິດຕັ້ງຢູ່ພາຍໃນເຮືອນ, ຕົວຢ່າງ, ໃນເຮືອນຄົວ ຫຼື ໃນຫ້ອງນ້ຳ;
- **ນ້ຳປະປາໃນບໍລິເວນເດີ່ນບ້ານ:** ນ້ຳປະປາຕໍ່ໃສ່ກັອກນ້ຳພາຍໃນເດີ່ນບ້ານ;
- **ນ້ຳສ້າງ/ນ້ຳບາດານ ທີ່ໄດ້ຮັບການປົກປ້ອງ:** ຂຸມເລິກທີ່ຖືກຂຸດ ຫຼື ເຈາະ ເພື່ອເອົານ້ຳໃຕ້ດິນ. ນ້ຳຖືກດູດຂຶ້ນມາໂດຍນ້ຳໃຊ້ປໍ້ານ້ຳ, ຊຶ່ງປໍ້າດັ່ງກ່າວອາດໃຊ້ແຮງງານຄົນ, ສັດ, ພະລັງງານລົມ, ໄຟຟ້າ, ນ້ຳມັນ ຫຼື ໂຊລາເຊວ. ນ້ຳສ້າງ/ນ້ຳບາດານ ແມ່ນໄດ້ປ້ອງກັນບໍ່ໃຫ້ນ້ຳພາຍນອກໄຫຼເຂົ້າ ຫຼື ຍົກຂຶ້ນສູງກວ່າພື້ນດິນ ແລະ ລະບົບປ້ອງກັນບໍ່ໃຫ້ນ້ຳເຮື່ອໄຫຼກັບລົງສູ່ນ້ຳສ້າງ/ບາດານ. ເງື່ອນໄຂສອງຢ່າງນີ້ຕ້ອງໄດ້ສັງເກດຢ່າງຄັກແນ່ເພື່ອພິຈາລະນາວ່າເປັນນ້ຳສ້າງ/ນ້ຳບາດານທີ່ໄດ້ຮັບການປົກປ້ອງ;
- **ນ້ຳສ້າງ/ນ້ຳບາດານ ທີ່ບໍ່ໄດ້ຮັບການປົກປ້ອງ:** ແມ່ນນ້ຳສ້າງ/ນ້ຳບາດານທີ່ບໍ່ໄດ້ຮັບການປົກປ້ອງຕາມການອະທິບາຍໃນຂໍ້ກ່ອນໜ້ານີ້;
- **ແມ່ນ້ຳ/ຄອງນ້ຳ/ເຂື່ອນ/ຊົນລະປະທານ:** ນ້ຳທີ່ໄດ້ຈາກແຫຼ່ງນ້ຳໜ້າດິນທົ່ວໄປ, ຍົກເວັ້ນນ້ຳລິນ/ນ້ຳຈາກເທິງພູ, ມັນຢູ່ໃນຂໍ້ຕໍ່ໄປ;
- **ນ້ຳລິນ/ນ້ຳອອກບໍ່ຈາກເທິງພູ:** ນ້ຳທີ່ເອົາມາຈາກນ້ຳອອກບໍ່ຢູ່ເທິງພູ;

- **ກັກເກັບນ້ຳຝົນ:** ປົກກະຕິແມ່ນເກັບໄວ້ໃນຖັງເກັບນ້ຳຝົນ ຫຼື ຄຸກໍ່ໄດ້;
- **ນ້ຳຂວດ/ນ້ຳຕຸກ - ທີ່ມາສົ່ງຢູ່ເຮືອນ:** ບໍລິສັດບັນຈຸນ້ຳໃສ່ຂວດ/ຕຸກ ແລ້ວມາສົ່ງຂາຍຮອດເຮືອນໃຫ້ຄົວເຮືອນ;
- **ນ້ຳຂວດ/ນ້ຳຕຸກ - ທີ່ໄປຊື້ຢູ່ຮ້ານ:** ບໍລິສັດບັນຈຸນ້ຳໃສ່ຂວດ/ຕຸກ ແລ້ວມາຂາຍຕາມຮ້ານຄ້າ ຊຶ່ງຄົວເຮືອນຕ້ອງໄດ້ໄປຊື້ເອງຢູ່ຮ້ານຄ້າ;
- **ນ້ຳທີ່ບັນຈຸລົງໃນຖັງ ຫຼື ຟຸ້ຍ - ທີ່ມາສົ່ງຢູ່ເຮືອນ:** ນ້ຳທີ່ໄດ້ມາຈາກລົດບັນທຸກຕ່າງນ້ຳໂດຍຜູ້ສະໜອງນ້ຳຂົນສົ່ງມາຂາຍໃຫ້ຊຸມຊົນ. ປົກກະຕິແລ້ວຜູ້ຂາຍຈະສົ່ງໃຫ້ແຕ່ລະເຮືອນ;
- **ນ້ຳທີ່ບັນຈຸລົງໃນຖັງ ຫຼື ຟຸ້ຍ - ທີ່ໄປຊື້ຢູ່ຮ້ານ:** ນ້ຳທີ່ໄດ້ມາຈາກລົດບັນທຸກຕ່າງນ້ຳໂດຍຜູ້ສະໜອງນ້ຳຂົນສົ່ງມາຂາຍຢູ່ຮ້ານ. ປົກກະຕິແລ້ວຄົວເຮືອນຕ້ອງໄດ້ໄປຊື້ເອງຢູ່ຮ້ານຄ້າ ຫຼື ສະຖານທີ່ສະໜອງນ້ຳຂອງຜູ້ຂາຍ;
- **ແຫຼ່ງນ້ຳດື່ມອື່ນໆ:** ແຫຼ່ງນ້ຳອື່ນໆທີ່ບໍ່ກວມເອົາແຫຼ່ງນ້ຳທີ່ກ່າວມາຂ້າງເທິງນີ້.

**ວິທີການບັນທຶກຄຳຕອບ:** ນັກເດີນສຳຫຼວດເລືອກເອົາຄຳຕອບກ່ຽວກັບແຫຼ່ງນ້ຳດື່ມຕົ້ນຕໍທີ່ໄດ້ຈາກການຕອບຂອງຜູ້ຖືກສຳພາດ. ນີ້ແມ່ນແຫຼ່ງນ້ຳດື່ມທີ່ຄົວເຮືອນໃຊ້ຫຼາຍທີ່ສຸດໃນຊ່ວງໜຶ່ງປີ. ຕົວຢ່າງ, ຖ້າວ່າຄົວເຮືອນໃຊ້ແຫຼ່ງນ້ຳດື່ມຈາກນ້ຳບາດານທີ່ໄດ້ຮັບການປົກປ້ອງ ໃນໄລຍະລະດູຝົນ, ແຕ່ວ່າຊ່ວງເວລາອື່ນທີ່ຍາວນານກ່ວາໃນຊ່ວງໜຶ່ງປີແມ່ນນຳໃຊ້ນ້ຳດື່ມຈາກແມ່ນ້ຳທີ່ບໍ່ມີການປົກປ້ອງ, ດັ່ງນັ້ນເລືອກ 'ແມ່ນ້ຳ/ຄອງ/ເຂື່ອນ/ແຫຼ່ງບໍ່ໄດ້ຮັບການປັບປຸງ' ເປັນແຫຼ່ງນ້ຳດື່ມຕົ້ນຕໍ.

**ຄຳຖາມ:** B.11. ໄລຍະເວລາໄປຫາແຫຼ່ງນ້ຳດື່ມ – *ໃຊ້ເວລາຈັກນາທີເພື່ອໄປຫາແຫຼ່ງນ້ຳ, ເອົານ້ຳ ແລະ ກັບຄືນ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກວດສອບເບິ່ງຄວາມສະດວກໃນການເຂົ້າເຖິງແຫຼ່ງນ້ຳ ໂດຍອີງໃສ່ເວລາໃນການໄປຫາແຫຼ່ງນ້ຳ, ເອົານ້ຳ ແລະ ກັບຄືນ.

**ວິທີການບັນທຶກຄຳຕອບ:** ບັນທຶກໄລຍະເວລາເປັນນາທີ, ທີ່ໃຊ້ໃນການໄປຫາແຫຼ່ງນ້ຳ, ເອົານ້ຳ (ລວມທັງເວລາລໍຖ້າ) ແລະ ກັບຄືນເຮືອນ. ຖ້າວ່າໃຊ້ເວລາຊົ່ວໂມງເຄິ່ງແມ່ນໃຫ້ຂຽນ 90, ໜຶ່ງຊົ່ວໂມງ ແລະ ເຄິ່ງຊົ່ວໂມງ ເປັນ 60+30 ນາທີ. ຖ້າຜູ້ຖືກສຳພາດບໍ່ຮູ້ເວລາທີ່ແນ່ນອນແມ່ນບອກໃຫ້ລາວຄາດຄະເນເອົາ.

**ໝາຍເຫດ:** ຄຳຖາມນີ້ຈະບໍ່ຖືກຖາມ ຖ້າວ່າຄົວເຮືອນນຳໃຊ້ນ້ຳປະປາທີ່ຢູ່ໃນເຮືອນ ຫຼື ຢູ່ເດີ່ນບ້ານ ຫຼື ຜູ້ຂາຍນ້ຳຂົນສົ່ງມາເຖິງເຮືອນ.

**ຄຳຖາມ:** B.12. ປະເພດວິດຖ່າຍ – *ຄົວເຮືອນຂອງທ່ານປົກກະຕິແລ້ວນຳໃຊ້ວິດຖ່າຍປະເພດໃດ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳ ແລະ ວັດແທກລະດັບສຸຂະພິບານຂອງຄົວເຮືອນ, ຊຶ່ງວິດຖ່າຍແມ່ນມີຄວາມສຳຄັນສຳລັບການຄວບຄຸມພະຍາດ ແລະ ປັບປຸງສຸຂະພາບໃຫ້ດີຂຶ້ນ.

**ນິຍາມ:** ນິຍາມ ແລະ ຮູບສະແດງຕໍ່ໄປນີ້ ແມ່ນວິດຖ່າຍທີ່ໃຊ້ໂດຍທົ່ວໄປ 9 ປະເພດ. ໃນບາງຄົວເຮືອນ ແມ່ຍິງ, ຜູ້ຊາຍ ແລະ ເດັກນ້ອຍອາດນ້ຳໃຊ້ວິດຖ່າຍປະເພດແຕກຕ່າງກັນ. ນັກເດີນສຳຫຼວດຕ້ອງຖາມຫາປະເພດວິດຖ່າຍທີ່ສະມາຊິກຄົວເຮືອນໃຊ້ເປັນຫຼັກ.

| | |
|---|---|
| **ວິດໃຊ້ນໍ້າລ້າງ:** ວິດກົດລ້າງ ແມ່ນວິດທີ່ຕໍ່ກັບທໍ່ນໍ້າ ເຊິ່ງເຮັດໃຫ້ຄົນເຮົາສາມາດກົດລ້າງອາຈົມໄດ້ເລີຍ ແລະ ຈາກການກົດດັ່ງກ່າວນໍ້າຈະລ້າງອາຈົມລົງໄປ. ວິດຕັກນໍ້າລ້າງ ແມ່ນວິດທີ່ລ້າງອາຈົມໂດຍການຕັກນໍ້າຈາກອ່າງ ຫຼື ຄຸໃນຫ້ອງນໍ້າ ແລ້ວຖອກໃສ່ເພື່ອລ້າງ. |   |
| **ວິດແຫ້ງທີ່ມີທໍ່ລະບາຍອາກາດ:** ວິດແຫ້ງທີ່ມີທໍ່ລະບາຍອາກາດ ແມ່ນວິດທີ່ໃຊ້ຂຸມໃຕ້ດິນເພື່ອກັກເກັບອາຈົມ ແລະ ມີແຜ່ນພື້ນນັ່ງຢອງ ຫຼື ເປັນລະບົບທີ່ຕອບສະໜອງທຸກຂະໜາດ, ທຳຄວາມສະອາດງ່າຍ ແລະ ຍົກຂຶ້ນສູງກວ່າພື້ນດິນເພື່ອປ້ອງກັນນໍ້າໄຫຼເຂົ້າ. ເປັນລະບົບຮູນັ່ງ ຫຼື ນັ່ງຢອງພໍດີກົ້ນ. |   |
| **ວິດແຫ້ງປະເພດອື່ນໆ:** ຄືກັນກັບຂໍ້ເທິງ, ແຕ່ບໍ່ມີທໍ່ລະບາຍອາກາດ. |   |
| **ວິດມັກ/ປົ່ມ:** ກັກເກັບອາຈຸມໃນຖັງມັກ/ປົ່ມ. ວິດປະເພດນີ້ຈະບໍ່ໃຊ້ນໍ້າລ້າງ. ອາຈົມຈະແຫ້ງໃນຖັງເກັບທີ່ສາມາດເອົາອອກໄດ້ເມື່ອເຕັມ. ອາຈົມແຫ້ງສາມາດນຳໃຊ້ເປັນປຸຍມັກໄດ້. |  |
| **ຄຸ/ຖັງ:** ຄຸ/ຖັງທີ່ໃຊ້ເປັນວິດຖ່າຍ, ມີ ຫຼື ບໍ່ມີທີ່ນັ່ງຢອງກໍ່ໄດ້. |  |

| | |
|---|---|
| **ວິດຫ້ອຍ:** ເປັນວິດທີ່ສ້າງຂຶ້ນເທິງແມ່ນໍ້າ, ນໍ້າປະເພດຕ່າງໆ, ໂດຍອາຈົມຈະຕົກລົງໃສ່ນໍ້າໂດຍກົງ. |  |
| **ບໍ່ມີວິດຖ່າຍ (ພຸ່ມໄມ້, ທົ່ງ, ຝັ່ງ, ແມ່ນໍ້າ, ໜອງ, ບຶງ):** ຄົວເຮືອນຖ່າຍໃນສະຖານທີ່ໂລ່ງແຈ້ງຕ່າງໆ. |  |
| **ປະເພດອື່ນ – ມີບ່ອນນັ່ງຢອງ:** ວິດຖ່າຍປະເພດອື່ນໆ, ປົກກະຕິແລ້ວເປັນວິດຖ່າຍທີ່ໄດ້ຮັບການປັບປຸງ, ມີຝາປິດທີ່ມີບ່ອນນັ່ງຢອງ. | |
| **ປະເພດອື່ນໆ – ບໍ່ມີບ່ອນນັ່ງຢອງ:** ເປັນວິດຖ່າຍປະເພດອື່ນໆ, ແຕ່ວ່າບໍ່ມີບ່ອນນັ່ງຢອງ. ກວດໃຫ້ແນ່ໃຈວ່າວິດດັ່ງກ່າວບໍ່ຕົກຢູ່ໃນວິດປະເພດຕ່າງທີ່ກ່າວມາຂ້ອງເທິງ. | |

**ວິທີການບັນທຶກຄໍາຕອບ:** ຈາກການສອບຖາມ ແລະ ສັງເກດຕົວຈິງ ນັກເດີນສໍາຫຼວດບັນທຶກຄໍາຕອບໜຶ່ງໃນ 9 ປະເພດວິດຖ່າຍທີ່ໄດ້ກ່າວມາຂ້າງເທິງນີ້.

**ຄໍາຖາມ:** B.13. ການຄອບຄອງພາຫະນະ – *ຄົວເຮືອນຂອງທ່ານເປັນເຈົ້າຂອງພາຫະນະຕໍ່ໄປນີ້ບໍ?*




**ຈຸດປະສົງ:** ຄໍາຖາມທີ B.13 ຖາມຄົວເຮືອນວ່າເປັນເຈົ້າຂອງພາຫະນະໃດໜຶ່ງ ຫຼື ບໍ. ໃນນີ້ມີຄໍາຖາມຍ່ອຍເພື່ອຖາມພາຫະນະທີ່ຄົວເຮືອນເປັນເຈົ້າຂອງ 5 ປະເພດ (A ຫາ E; ຮູບສະແດງນີ້ໄດ້ສະແດງພຽງແຕ່ຄໍາຖາມທີ B.13.A).

**ວິທີການບັນທຶກຄໍາຕອບ:** ຖາມຄວາມເປັນເຈົ້າຂອງພາຫະແຕ່ລະປະເພດຕາມແຕ່ລະຄາຖາມ ແລະ ບັນທຶກຄາຕອບຂອງຜູ້ຖືກສໍາພາດວ່າມີ ຫຼື ບໍ່ມີ.

**ຄໍາຖາມ:** B.14. ເຄື່ອງໃຊ້ໃນຄົວເຮືອນ – *ຄົວເຮືອນຂອງທ່ານເປັນເຈົ້າຂອງເຄື່ອງໃຊ້ຕໍ່ໄປນີ້ບໍ?*




**ຈຸດປະສົງ:** ເພື່ອສອບຖາມການເປັນເຈົ້າຂອງເຄື່ອງໃຊ້ຕ່າງໆຂອງຄົວເຮືອນ, ມັນສາມາດນໍາໃຊ້ເຂົ້າໃນການຈັດແບ່ງຄົວເຮືອນຕາມການວັດແທກຄວາມຄວາມຮັ່ງມີ ແລະ ຊັບສິນ. ຄໍາຖາມມີຄໍາຖາມຍ່ອຍ 7 ຄໍາຖາມ (A ຫາ K, ຮູບສະແດງນີ້ໄດ້ສະແດງພຽງແຕ່ຄໍາຖາມທີ B.14.A) ເພື່ອວັດແທກມາດຖານການດໍາລົງຊີວິດຂອງຄົວເຮືອນ.

**ວິທີການບັນທຶກຄຳຕອບ:** ສຳລັບສິ່ງອຳນວຍຄວາມສະດວກ ຫຼື ເຄື່ອງໃຊ້ແຕ່ລະປະເພດ, ນັກເດີນສຳຫຼວດຕ້ອງໄດ້ຖາມວ່າວ່າເປັນເຈົ້າຂອງ ຫຼື ວ່າມີຢູ່ໃນຄົວເຮືອນ ຫຼື ບໍ່. ສິ່ງອຳນວຍຄວາມສະດວກຕ່າງໆເຫຼົ່ານີ້ແມ່ນແຍກອອກເປັນສີ່ໜ້າໃນແທັບເລັດ.

- ຕ້ອງເລືອກຄຳຕອບວ່າ 'ມີ' ຖ້າວ່າຄຳຖາມກ່ຽວກັບ 'ໂທລະສັບມືຖື' ຖ້າວ່າ <u>ບຸກຄົນໃດໜຶ່ງ</u> ທີ່ເປັນສະມາຊິກຄົວເຮືອນມີໂທລະສັບມືຖື.
- ການສຳຫຼວດແມ່ນເນັ້ນໃສ່ວັດຖຸສິ່ງຂອງ ແລະ ສິ່ງອຳນວຍຄວາມສະດວກທີ່ຢູ່ໃນສະພາບໃຊ້ງານໄດ້. ດັ່ງນັ້ນ, ຕົວຢ່າງ, ຖ້າຄົວເຮືອນມີແອເຢັນແຕ່ໃຊ້ງານບໍ່ໄດ້, ນັກເດີນສຳຫຼວດຕ້ອງເລືອກວ່າ 'ບໍ່ມີ'.

**ຄຳຖາມ B.15 ຫາ B.21** ແມ່ນເພື່ອກຳນົດວ່າຄົວເຮືອນໄດ້ມີສ່ວນຮ່ວມໃນກິດຈະກຳການຜະລິດກະສິກຳ ຫຼື ບໍ່. ກິດຈະກຳການຜະລິດກະສິກຳປະກອບດ້ວຍ ການປູກຝັງ, ການລ້ຽງສັດ ແລະ ການປະມົງ. ຄຳຖາມເຫຼົ່ານີ້ແມ່ນກ່ຽວຂ້ອງກັບຄວາມເຂົ້າໃຈກິດຈະກຳທາງດ້ານເສດຖະກິດຂອງຄົວເຮືອນ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຍັງຈະຖືກນຳໃຊ້ເປັນບັນຊີຄົວເຮືອນກະສິກຳ ສຳລັບການວາງແຜນການສຳຫຼວດກະສິກຳຄັ້ງຕໍ່ໄປ.

**ຄຳຖາມ:** B.15. ດິນກະສິກຳ – *ຄົວເຮືອນຂອງທ່ານນຳໃຊ້ດິນກະສິກຳໃດໜຶ່ງບໍ່ ສຳລັບເປັນຟາມສັດ ຫຼື ປູກຝັງ ໃນໄລຍະ 12 ເດືອນ ຜ່ານມາ ທັງເປັນເຈົ້າຂອງ ຫຼື ເຊົ່າ?*




**ຈຸດປະສົງ:** ຄຳຖາມທີ B.15 ແມ່ນມີຈຸດປະສົງເພື່ອເກັບກຳຂໍ້ມູນການນຳໃຊ້ດິນກະສິກຳຂອງຄົວເຮືອນ. ນີ້ແມ່ນຄຳຖາມເພື່ອກຳນົດວ່າຈະໄດ້ຖາມຄຳຖາມ B.16 ກ່ຽວກັບຂະໜາດດິນກະສິກຳ ຫຼື ບໍ່.

**ນິຍາມ:** ດິນກະສິກຳເນື້ອທີ່ດິນທີ່ນາໃຊ້ປູກຝັງ ນາໃຊ້ສາລັບການປູກພືດແບບຖາວອນ ຫຼື ເປັນທົ່ງຫຍ້າລ້ຽງສັດແບບຖາວອນ. ມັນຍັງລວມເອົາດິນສຳລັບເຮັດສວນຄົວນຳ. ດິນກະສິກຳປະເພດຕ່າງໆ ແມ່ນກຳນົດດັ່ງຕໍ່ໄປນີ້:

- ດິນປູກຝັງ: ດິນທີ່ເຮັດການ (ໄຖ ຫຼື ຄາດ) ເປັນປົກກະຕິ, ໂດຍທົ່ວໄປແລ້ວແມ່ນຢູ່ໃນລະບົບພືດໝູນວຽນທີ່ມີການປູກພືດຊົ່ວຄາວເຊັ່ນ: ເຂົ້າ, ທັນຍາພືດ, ພືດຕະກູນຖົ່ວ, ຜັກ, ມັນຝຣັ່ງ, ພືດອາຫານສັດ, ດອກໄມ້ ແລະ ພືດປະດັບ. ການລາຍງານກຳນຳໃຊ້ເດີນກະສິກຳແມ່ນລວມເອົາສວນຄົວ ແລະ ດິນປູກພືດຊົ່ວຄາວ (ຕໍ່າກວ່າ 5 ປີ);
- ສວນຄົວ: ເປັນພື້ນທີ່ຂະໜາດນ້ອຍ, ປົກກະຕິຢູ່ໃກ້ກັບທີ່ຢູ່ອາໄສ ແລະ ແຍກອອກຈາກສ່ວນທີ່ເຫຼືອຂອງທີ່ດິນກະສິກຳອື່ນໆ. ຊຶ່ງນຳໃຊ້ເຂົ້າໃນການປູກຝັງຜະລິດທາງກະສິກຳ (ຜັກ, ດອກໄມ້, ພືດອຸດສະຫະກຳ ແລະ ຕົ້ນໄມ້ກະແຈກກະຈາຍ ຫຼື ພືດຖາວອນ) ເພື່ອບໍລິໂພກຂອງຄົວເຮືອນເອງ.
- ທີ່ດິນສຳລັບການປູກພືດຖາວອນ: ທີ່ດິນທີ່ປູກພືດທີ່ຄອບຄອງທີ່ດິນເປັນເວລາດົນນານ ແລະ ບໍ່ຈຳເປັນຕ້ອງປູກຄືນຫຼັງຈາກການເກັບກ່ຽວແຕ່ລະຄັ້ງ, ຕົວຢ່າງເຊັ່ນ: ຕົ້ນໄມ້ກິນໝາກ ແລະ ສວນອະງຸ່ນ.
- ທົ່ງຫຍ້າລ້ຽງສັດ ແລະ ທົ່ງຫຍ້າ: ທີ່ດິນທີ່ໃຊ້ໄດ້ຢ່າງໜ້ອຍຫ້າປີເພື່ອການເຕີບໃຫຍ່ຂອງຫຍ້າ ຜ່ານການເພາະປູກ ຫຼື ເກີດຂຶ້ນເອງຕາມທຳມະຊາດ ແລະ ບໍ່ລວມເອົາພືດລົ້ມລຸກ. ເນື້ອທີ່ດິນສາມາດປູກຫຍ້າ ຫຼື ຫຍ້າໝັກ ຫຼື ຫຍ້າແຫ້ງໄດ້. ດິນລັດທີ່ຄຸ້ມຄອງໂດຍບ້ານ ຫຼື ລັດຖະບານ ແລະ ຄົວເຮືອນອື່ນນຳໃຊ້ ຄວນບໍ່ລວມເຂົ້ານຳ.

**ວິທີການບັນທຶກຄຳຕອບ:** ຖ້າຄົວເຮືອນໄດ້ນຳໃຊ້ດິນກະສິກາສຳລັບການຜະລິດກະສິກຳໃດໜຶ່ງ ຈະເປັນເຈົ້າຂອງ ຫຼື ເຊົ່າ ຫຼື ຕາມການຕົກລົງໃດໆກໍ່ຕາມ ແມ່ນໃຫ້ເລືອກຄຳຕອບ "ມີ", ຖ້າວ່າຄົວເຮືອນບໍ່ໄດ້ນຳໃຊ້ດິນກຳສິກຳແມ່ນເລືອກຄຳຕອບ "ບໍ່ມີ"

**ຄຳຖາມ:** B.16. ຂະໜາດດິນກະສິກຳ – *ຂະເນື້ອທີ່ດິນກະສິກຳທີ່ຄົວເຮືອນຂອງທ່ານນຳໃຊ້ໃນ 12 ເດືອນຜ່ານມາ ມີຈັກເຮັກຕາ?*




**ຈຸດປະສົງ:** ເພື່ອເກັບກຳຂໍ້ມູນຂະໜາດເນື້ອທີ່ດິນກະສິກຳທີ່ຄົວເຮືອນນຳໃຊ້ຜະລິດກະສິກຳໃນ 12 ເດືອນຜ່ານມາ.

**ນິຍາມ:** ເນື້ອທີ່ດິນກະສິກຳທັງໝົດທີ່ຄົວເຮືອນໃຊ້ໃນການຜະລິດກະສິກຳໃນ 12 ເດືອນຜ່ານມາ ຄິດໄລ່ເປັນເຮັກຕາ (1 ເຮັກຕາ = 10,000 ຕາແມັດ) ຊຶ່ງໃນຄາຖາມນີ້ມີລາຍການຄຳຕອບໃຫ້ເລືອກ 5 ຄາຕອບດັ່ງຕໍ່ໄປນີ້:

- **ໜ້ອຍກວ່າ 0.20 ເຮັກຕາ:** ຄິດໄລ່ເປັນຕາແມັດແມ່ນໜ້ອຍກວ່າ 2,000 ຕາແມັດ;
- **0.20 – 0.49 ເຮັກຕາ:** ຄິດໄລເປັນຕາແມັດແມ່ນຢູ່ໃນລະຫວ່າງ 2,000 ຕາແມັດ ຫາ 4,999 ຕາແມັດ;
- **0.50 – 1.99 ເຮັກຕາ:** ຄິດໄລເປັນຕາແມັດແມ່ນຢູ່ໃນລະຫວ່າງ 5,000 ຕາແມັດ ຫາ 19,999 ຕາແມັດ;
- **2.00 – 3.99 ເຮັກຕາ:** ຄິດໄລເປັນຕາແມັດແມ່ນຢູ່ໃນລະຫວ່າງ 20,000 ຕາແມັດ ຫາ 39,999 ຕາແມັດ;
- **4.00 ເຮັກຕາ ຂຶ້ນໄປ:** ຄິດໄລເປັນຕາແມັດແມ່ນ 40,000 ຕາແມັດ ຂຶ້ນໄປ.

ຖ້າວ່າຜູ້ຖືກສຳພາດຕອບເນື້ອທີ່ດິນກະສິກຳຫົວໜ່ວຍເປັນໄລ່ ແມ່ນໃຫ້ປ່ຽນຫົວໜ່ວຍເປັນເຮັກຕາກ່ອນ ແລ້ວຈຶ່ງເລືອກຄຳຕອບທີ່ເໝາະສົມ (1 ໄລ່ ເທົ່າ 1,600 ຕາແມັດ ຫຼື ເທົ່າກັບ 0.16 ເຮັກຕາ). ຕົວຢ່າງ, ຖ້າວ່າຜູ້ຕອບສາພາດຕອບວ່າໄດ້ນຳໃຊ້ດິນກະສິກຳ 3 ໄລ່ ແມ່ນສາມາດຄິດໄລ່ດັ່ງນີ້: 3 x 1,600 = 4,800 ຕາແມັດ ຫຼື 3 x 0.16 = 0.48 ເຮັກຕາ ເລືອກຄຳຕອບທີສອງ “0.20-0.49 ເຮັກຕາ”.

ນັກເດີນສຳຫຼວດບາງຄັ້ງຕ້ອງໄດ້ຄິດໄລ່ເນື້ອທີ່ດິນດ້ວຍຕົນເອງ. ຍົກຕົວຢ່າງ, ຜູ້ຕອບບອກວ່າດິນມີຂະໜາດຄວາມຍາວ 100 ແມັດ ແລະ ຄວາມກວ້າງ 50 ແມັດ, ສະນັ້ນເນື້ອທີ່ດິນແມ່ນ 100x50 = 5,000 ຕາແມັດ. ເອົາຜົນທີ່ໄດ້ຫານໃຫ້ 10,000 ເພື່ອຄິດໄລ່ເປັນເຮັດຕາ ຈະໄດ້ເນື້ອທີ່ດິນແມ່ນ 5,000/10,000 = 0.5 ເຮັກຕາ.

**ວິທີການບັນທຶກຄຳຕອບ:** ເລືອກລາຍການຄຳຕອບທີ່ຖືກຕ້ອງກົງກັບຄຳຕອບຂອງຜູ້ຖືກສາພາດ.

**ຄຳຖາມ:** B.17. ສັດລ້ຽງ – *ຄົວເຮືອນຂອງທ່ານມີສັດລ້ຽງໃນເວລາໃດໜຶ່ງ ໃນ 12 ເດືອນ ຜ່ານມາບໍ?*




**ຈຸດປະສົງ:** ເປັນຄຳຖາມເພື່ອກຳນົດວ່າຄຳຖາມທີ B.18 ຕໍ່ໄປນີ້ກ່ຽວກັບຈຳນວນສັດລ້ຽງທີ່ຄົວເຮືອນມີ ຈຳເປັນຕ້ອງຖາມ ຫຼື ບໍ່.

**ນິຍາມ:** ສັດລ້ຽງ ລວມເຖິງສັດພາຍທັງໝົດ, ໂດຍບໍ່ຄຳນຶງເຖິງອາຍຸ, ສະຖານທີ່ ຫຼື ຈຸດປະສົງຂອງການລ້ຽງ. ເຖິງຢ່າງໃດກໍ່ຕາມ ແມ່ນບໍ່ລວມເອົາ ໝາ, ແມວ, ສັດລ້ຽງໃນເຮືອນອື່ນໆ ຫຼື ມ້າແຂ່ງ ຫຼື ມາໂດດ. ປະເພດສັດລ້ຽງທີ່ພົບເຫັນຫຼາຍທີ່ສຸດໃນລາວແມ່ນ ໝູ, ງົວ, ຄວາຍ, ມ້າ, ຊ້າງ, ແບ້ ແລະ ແກະ. ນອກຈາກນີ້ຍັງປະກອບມີການລ້ຽງສັດອື່ນໆທີ່ລ້ຽງເພື່ອການຜະລິດຊີ້ນ, ຜະລິດຕະພັນນົມ ຫຼື ຜະລິດຕະພັນຈາກສັດອື່ນໆ.

**ວິທີການບັນທຶກຄຳຕອບ:** ຖ້າຄົວເຮືອນມີສັດລ້ຽງທີ່ໄດ້ກ່າວມາຂ້າງເທິງ ບັນທຶກ ‘ມີ’, ຖ້າຄົວເຮືອນບໍ່ມີສັດລ້ຽງ ‘ບັນທຶກ’ ບໍ່ມີ. ຄຳຖາມນີ້ບໍ່ໄດ້ໝາຍເຖິງສັດລ້ຽງທີ່ຄົວເຮືອນມີໃນເວລາສຳຫຼວດ ແຕ່ແມ່ນສັດລ້ຽງທີ່ຄົວເຮືອນມີໃນ

ເວລາໃດໜຶ່ງ ໃນໄລຍະ 12 ເດືອນກ່ອນມື້ສຳພາດ. ນັກເດີນສຳຫຼວດຄວນໃຫ້ເວລາແກ່ຜູ້ຖືກສຳພາດໄດ້ຄິດກ່ອນຕອບຄຳຖາມນີ້.

**ຄຳຖາມ:** B.18. ຈຳນວນສັດລ້ຽງ – *ຄົວເຮືອນຂອງທ່ານມີສັດລ້ຽງຈັກໂຕ ໃນ 12 ເດືອນຜ່ານມາ?*




**ຈຸດປະສົງ:** ນີ້ແມ່ນຄຳຖາມເພື່ອຖາມຈຳນວນສັດລ້ຽງທີ່ຄົວເຮືອນມີໃນ 12 ເດືອນຜ່ານມາກ່ອນມື້ສາພາດ.

**ວິທີການບັນທຶກຄຳຕອບ:** ຈຳນວນຂອງສັດອາດຈະມີການປ່ຽນແປງໃນແຕ່ລະໄລຍະເວລາ, ໂດຍສະເພາະແມ່ນ ໝູ, ເພາະວ່າສັດເຫຼົ່ານີ້ອາດຈະຖືກຂ້າໃນເວລາໃດໜຶ່ງ. ດ້ວຍເຫດນີ້ , ນັກເດີນສາຫຼວດຄວນເລືອກຄາຕອບສານວນສັດລ້ຽງໂດຍສະເລ່ຍໃນ 12 ເດືອນຜ່ານມາ. ຈຳນວນສະເລ່ຍແມ່ນຕ້ອງໄດ້ລວມເອົາຈຳນວນສັດລ້ຽງທຸກປະເພດທີ່ຄົວເຮືອນເປັນເຈົ້າຂອງໃນ 12 ເດືອນຜ່ານມາ.

**ໝາຍເຫດ:** ສັດລ້ຽງແມ່ນບໍ່ລວມເອົາສັດປີກ, ຊຶ່ງສັດປີກແມ່ນຈະຖາມໃນຄາຖາມຕໍ່ໄປ.

**ຄຳຖາມ:** B.19. ສັດປີກ – *ຄົວເຮືອນຂອງທ່ານມີສັດປີກປະເພດໃດໜຶ່ງ ໃນໄລຍະເວລາໃດໜຶ່ງ ໃນ 12 ເດືອນ ຜ່ານມາບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອຖາມວ່າຄົວເຮືອນມີສັດປີກ ຫຼື ບໍ ໃນໄລຍະ 12 ເດືອນ ກ່ອນມື້ສາພາດ ແລະ ເພື່ອການົດວ່າຄາຖາມຕໍ່ໄປ ກ່ຽວກັບຈຳນວນສັດປີກ ຈະຖືກຖາມ ຫຼື ບໍ.

**ນິຍາມ:** ສັດປີກປົກກະຕິທີ່ມີຢູ່ປະເທດລາວປະກອບດ້ວຍ: ໄກ່, ເປັດ, ໄກ່ງວງ ແລະ ຫ່ານ

**ວິທີການບັນທຶກຄຳຕອບ:** ຖ້າວ່າຄົວເຮືອນມີ ຫຼື ໄດ້ລ້ຽງສັດປີກ ບັນທຶກ 'ມີ', ຖ້າຄົວເຮືອນບໍ່ມີສັດປີກ ບັນທຶກ 'ບໍ່ມີ'.

**ຄຳຖາມ:** B.20. ຈຳນວນສັດປີກ – *ຄົວເຮືອນຂອງທ່ານມີສັດປີກຈັກໂຕ ໃນໄລຍະເວລາ 12 ເດືອນຜ່ານມາ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຈຳນວສັດປີກທີ່ຄົວເຮືອນມີ ຫຼື ຄົວເຮືອນລ້ຽງ ໃນໄລຍະ 12 ເດືອນຜ່ານມາ.

**ວິທີການບັນທຶກຄຳຕອບ:** ບັນທຶກຈຳນວນສັດປີກທັງໝົດ (ທຸກປະເພດ) ທີ່ຄົວເຮືອນເປັນເຈົ້າຂອງໃນ 12 ເດືອນກ່ອນການສຳພາດ.ຈຳນວນຂອງສັດປີກອາດຈະມີການປ່ຽນແປງໃນແຕ່ລະໄລຍະ, ເພາະວ່າສັດປີກເຫຼົ່ານີ້ອາດຈະຖືກຂ້າໃນເວລາດຽວກັນເປັນຈຳນວນຫຼາຍ. ເລືອກປະເພດຄຳຕອບທີ່ສະແດງຄ່າສະເລ່ຍຂອງຈຳນວນສັດປີກໂດຍສະເລ່ຍໃນໄລຍະ 12 ເດືອນຜ່ານມາ.

**ຄຳຖາມ:** B.21. ການລ້ຽງສັດນ້ຳ – *ຄົວເຮືອນຂອງທ່ານໄດ້ເຮັດການລ້ຽງສັດນ້ຳໃດໜຶ່ງ ໃນໄລຍະ 12 ເດືອນ ຜ່ານມາບໍ?*




**ຈຸດປະສົງ:** ຄຳຖາມສຸດທ້າຍແມ່ນກ່ຽວກັບກິດຈະກາທາງດ້ານກະສິກຳເພື່ອກຳນົດຄົວເຮືອນທີ່ມີການເພາະລ້ຽງສັດນ້ຳໃນທຸກຮູບແບບ.

**ນິຍາມ:** ກິດຈະກາການລ້ຽງ ຫຼື ເພາະລ້ຽງສັດນ້ຳປະກອບດ້ວຍການປາ, ກຸ້ງ ຫຼື ສັດນ້ຳປະເພດອື່ນໆ ໃນໜອງ, ໃນນາເຂົ້າ ຫຼື ໃນກະຊັງ.

**ວິທີການບັນທຶກຄຳຖອບ:** ຖ້າວ່າຄົວເຮືອນໄດ້ລ້ຽງ ຫຼື ເພາະລ້ຽງສັດນ້ຳ ບັນທຶກ 'ມີ', ຖ້າວ່າ ຄົວເຮືອນບໍ່ໄດ້ລ້ຽງ ຫຼື ເພາະລ້ຽງສັດນ້ຳ ບັນທຶກ 'ບໍ່ມີ'.

## 4.7. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ C – ຂໍ້ມູນສະມາຊິກຄົວເຮືອນ

ແບບສອບຖາມພາກ C – ຂໍ້ມູນສະມາຊິກຄົວເຮືອນ ແມ່ນນຳໃຊ້ເພື່ອກຳນົດສະມາຊິກຄົວເຮືອນທັງໝົດ ແລະ ເກັບກຳຂໍ້ມູນພື້ນຖານຂອງແຕ່ລະຄົນ. ການເກັບຂໍ້ມູນທີ່ມີຄວາມຄົບຖ້ວນ ແລະ ຖືກຕ້ອງໃນພາກນີ້ແມ່ນມີຄວາມສຳຄັນຫຼາຍເພື່ອຮັບປະກັນຄວາມຄົບຖ້ວນຂອງການຈົດນັບພົນລະເມືອງ. ຫຼັງຈາກການຂຶ້ນບັນຊີສະມາຊິກຄົວເຮືອນສຳເລັດແລ້ວ, ໂປຣແກຣມໄປພາກຕໍ່ໄປ (ພາກ D - ຂໍ້ມູນບຸກຄົນ), ຊຶ່ງຂໍ້ມູນລາຍລະອຽດຂອງສະມາຊິກຄົວເຮືອນແຕ່ລະຄົນແມ່ນຈະຖືກເກັບກຳເທື່ອລະຄົນຕາມລຳດັບທີ່ໄດ້ຂຶ້ນບັນຊີໄວ້.

ຂໍ້ມູນພື້ນຖານທີ່ເກັບກຳໃນພາກ C – ມີທັງໝົດ ມີ 6 ຄາຖາມ 4 ຂໍ້ມູນສ້າງຂຶ້ນອັດຕະໂນມັດ, ຊຶ່ງປະກອບດ້ວຍ ຊື່, ເພດ, ວັນເດືອນປີເກີດ, ອາຍຸ ແລະ ສາຍພົວພັນກັບຫົວໜ້າຄົວເຮືອນ ຊຶ່ງເປັນພື້ນຖານສຳຄັນຂອງການສຳຫຼວດ ແລະ ສະແດງຂໍ້ມູນທີ່ສຳຄັນທີ່ເກັບກຳໄດ້. ຂໍ້ມູນເຫຼົ່ານີ້ເປັນຕົວກຳນົດວ່າຄຳຖາມໃດແດ່ທີ່ຈະຖືກຖາມໃນພາກຂໍ້ມູນສ່ວນບຸກຄົນ (ພາກ D - ຂໍ້ມູນບຸກຄົນ). ຍົກຕົວຢ່າງ, ຄຳຖາມກ່ຽວກັບກິດຈະກຳທາງດ້ານເສດຖະກິດທີ່ຈະຖາມໃນພາກ D ແມ່ນຈະບໍ່ຖາມບຸກຄົນທີ່ມີອາຍຸຕ່ຳກວ່າ 10 ປີ ແລະ ຄຳຖາມກ່ຽວກັບການເກີດມີຊີວິດ ແມ່ນຖາມສະເພາະແມ່ນຍິງອາຍຸ 13 ປີ ຂຶ້ນໄປ ເທົ່ານັ້ນ.

**ຄຳຖາມ:** C.01 ການນຳສະເໜີຄົວເຮືອນເບື້ອງຕົ້ນ – *ກ່າວເຖິງຂໍ້ຄວາມຕໍ່ໄປນີ້:* ທຸກໆຄົນໃນຄົວເຮືອນຈະຕ້ອງໄດ້ຖືກຈົດນັບບຸກຄົນທີ່ອາໄສຢູ່ເປັນປະຈຳໃນຄົວເຮືອນ ໃນຊ່ວງການສຳຫຼວດ ເຊິ່ງເລີ່ມຈາກທ່ຽງຄືນຂອງວັນທີ *2 –3 ພະຈິກ 2025*.




**ຈຸດປະສົງ:** ມັນມີຄວາມຈຳເປັນທີ່ຕ້ອງໄດ້ຮັບຂໍ້ມູນບັນຊີສະມາຊິກຄົວເຮືອນທີ່ຖືກຕ້ອງ ແລະ ຄົບຖ້ວນ, ນັກເດີນສຳຫຼວດຕ້ອງອະທິບາຍເງື່ອນໄຂເພື່ອກຳນົດວ່າບຸກຄົນໃດຄວນຖືກຈົດນັບເຂົ້າໃນບັນຊີ ຫຼື ບຸກຄົນໃດບໍ່ຄວນຈົດເຂົ້າໃນບັນຊີ. ສຳລັບເຫດຜົນເຫຼົ່ານີ້, ໜ້າແທບເລັດສຳລັບຄຳຖາມ C.01 ປະກົດຂຶ້ນມາ ເພື່ອສະໜອງຂໍ້ມູນໃຫ້ນັກເດີນສຳຫຼວດວ່າຜູ້ຢູ່ອາໄສຄົນໃດຄວນຈົດນັບລວມເຂົ້າໃນບັນຊີສະມາຊິກຄົວເຮືອນ. ນັກເດີນສຳຫຼວດຕ້ອງເຂົ້າໃຈແຈ້ງກ່ຽວກັບເນື້ອໃນໃຈຄວາມນີ້ ໂດຍບໍ່ຈຳເປັນຕ້ອງອ່ານຕາມໜ້າຈໍ. ກົດທີ່ 'ສືບຕໍ່' ຫຼັງຈາກສື່ສານກັບຜູ້ຖືກສຳພາດແລ້ວ.

ຄຳເວົ້າທີ່ນັກເດີນສຳຫຼວດຕ້ອງສື່ສານອອກໄປແມ່ນ ທຸກຄົນທີ່ ອາໄສຢູ່ຄົວເຮືອນນີ້ເປັນປະຈຳ ໃນເວລານັດໝາຍການສຳຫຼວດ ໃນຄືນວັນທີ 2 ຫາ 3 ພະຈິກ 2025 ຕ້ອງລວມຢູ່ໃນຄຳເວົ້າຂອງນັກເດີນສຳຫຼວດ.

**ນິຍາມ:** ສະມາຊິກຄົວເຮືອນທີ່ມີອາໄສຢູ່ເປັນປະຈຳໝາຍເຖິງບຸກຄົນທີ່:

ອາໄສຢູ່ປະເທດລາວເປັນປະຈຳໃນຄືນວັນທີ 2 ຫາ 3 ພະຈິກ 2025 (ສຳລັບລາຍລະອຽດກ່ຽວກັບ 'ອາໄສຢູ່ເປັນປະຈຳ', ເບິ່ງພາກທີ 2.5.2) ແລະ

ອາໄສຢູ່ທີ່ຢູ່ອາໄສທີ່ກຳລັງສຳພາດຢ່າງໜ້ອນ 6 ເດືອນ ຂຶ້ນໄປ ຫຼື ມີຈຸດປະສົງອາໄສຢູ່ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ທຽບໃສ່ເວລານັດໝາຍການສຳຫຼວດ.

ບຸກຄົນໃດໆທີ່ເກີດຫຼັງຈາກເວລານັດໝາຍການສຳຫຼວດ ແລະ ຜູ້ທີ່ເຂົ້າມາເປັນສະມາຊິກຄົວເຮືອນຫຼັງຈາກເວລານັດໝາຍການສຳຫຼວດ ບໍ່ຄວນຖືກຈົດນັບເຂົ້າບັນຊີສະມາຊິກຄົວເຮືອນ, ເຖິງແມ່ນວ່າບັນດາບຸກຄົນດັ່ງກ່າວເປັນສະມາຊິກຄົວເຮືອນແລ້ວໃນເວລາສຳພາດຢູ່ຄົວເຮືອນ. ຄ້າຍຄືກັນ, ບຸກຄົນທີ່ເສຍຊີວິດກ່ອນເວລານັດໝາຍການສຳຫຼວດ ຫຼື ບຸກຄົນທີ່ຍ້າຍອອກຈາກຄົວເຮືອນກ່ອນເວລານັດໝາຍການສຳຫຼວດ ແມ່ນບໍ່ຄວນຖືກຈົດນັບເຂົ້າບັນຊີສະມາຊິກຄົວເຮືອນເຊັ່ນກັນ.

ຄວນຈື່ໄວ້ວ່າ ບັນດາບຸກຄົນທີ່ປົກກະຕິແລ້ວແມ່ນອາໄສຢູ່ໃນຄົວເຮືອນໃນຄືນການສຳຫຼວດ, ແຕ່ລາວບໍ່ຢູ່ຊົ່ວຄາວໜ້ອຍກວ່າ 6 ເດືອນ, ຕົວຢ່າງ, ຕາມລັກສະນະຂອງວຽກເຮັດງານທຳຂອງພວກເຂົາ, ເຂົາເຈົ້າອາດຖືກປະຈຳການຢູ່ໂຮງໝໍ, ຢູ່ໃນວັນພັກຜ່ອນ ຫຼື ໄປຢ້ຽມຢາມພີ່ນ້ອງໃນຄືນສຳຫຼວດ.

ໃນກໍລະນີທີ່ເປັນໄປໄດ້ໜ້ອຍ ທີ່ວ່າຄົວເຮືອນຈະຍ້າຍເຮືອນໃນລະຫວ່າງຄືນສຳຫຼວດ ແລະ ເວລາສຳພາດ, ແຕ່ນັກເດີນສຳຫຼວດຕ້ອງໄດ້ພະຍາຍາມສຳພາດ ແລະ ຂຶ້ນບັນຊີສະມາຊິກຄົວເຮືອນ, ເຖິງແມ່ນວ່າໃນຄືນສຳຫຼວດພວກເຂົາບໍ່ໄດ້ຢູ່ໃນທີ່ຢູ່ອາໄສທີ່ກຳລັງສຳພາດຢູ່ກໍ່ຕາມ.

ບັນດາບຸກຄົນທີ່ມາຢ້ຽມຢາມຄົວເຮືອນໃນຄືນການສຳຫຼວດ ບໍ່ຄວນຈົດນັບເຂົ້າໃນບັນຊີສະມາຊິກຄົວເຮືອນເພາະວ່າພວກເຂົາຈະຖືກຈົດນັບຢູ່ບ່ອນທີ່ພວກເຂົາອາໄສຢູ່ເປັນປະຈຳ. ເຖິງຢ່າງໃດກໍ່ຕາມ, ຈະແຍກແບບສອບຖາມຕ່າງຫາກສຳລັບຜູ້ທີ່ມາຢ້ຽມຢາມໃນຕອນທ້າຍຂອງການສຳພາດ (ພາກ G). ບັນດາບຸກຄົນທີ່ເຄີຍເປັນສະມາຊິກຂອງຄົວເຮືອນ ແຕ່ວ່າໃນປັດຈຸບັນໄປອາໄສຢູ່ຕ່າງປະເທດ ແມ່ນຈະບໍ່ຖືກຈົດນັບເຂົ້າໃນບັນຊີສະມາຊິກຂອງຄົວເຮືອນເຊັ່ນດຽວກັນ. ເຖິງຢ່າງໃດກໍ່ຕາມ, ການຂຶ້ນບັນຊີສຳລັບສະມາຊິກຄົວເຮືອນທີ່ອາໄສຢູ່ຕ່າງປະເທດແມ່ນແຍກຢູ່ຕ່າງຫາກ (ພາກ F).

ພວກເຮົາມີບົດຮຽນວ່າເດັກເກີດໃໝ່, ເດັກນ້ອຍ ແລະ ຜູ້ເຖົ້າໃນຄົວເຮືອນມັກຈະບໍ່ຖືກຈົດນັບເຂົ້າໃນການສຳຫຼວດ. ດັ່ງນັ້ນ, ນັກເດີນສຳຫຼວດຕ້ອງເອົາໃຈໃສ່ໃນຈຸດນີ້ເພື່ອຈົດນັບເອົາພວກເຂົາເຂົ້າໃນບັນຊີສະມາຊິກຄົວເຮືອນໂດຍການຖາມຄຳຖາມວ່າມີສະມາຊິກຄົວເຮືອນຄົນອື່ນອີກບໍ, ໂດຍສະເພາະແມ່ນເນັ້ນໃສ່ກຸ່ມຄົນທີ່ກ່າວມາຂ້າງເທິງນີ້.

**ວິທີການບັນທຶກຄຳຕອບ:** ກົດໃສ່ປຸ່ມ 'ສືບຕໍ່' ເພື່ອເລີ່ມຂຶ້ນບັນຊີສະມາຊິກຄົວເຮືອນ.

**ໝາຍເຫດ:** ການຂຶ້ນບັນຊີສະມາຊິກຄົວເຮືອນ ແມ່ນໃຫ້ຖາມຂໍ້ມູນຂອງຫົວໜ້າຄົວເຮືອນກ່ອນສະມາຊິກຄົນອື່ນໆທຸກຄັ້ງ. ນັກເດີນສຳຫຼວດຕ້ອງຖາມວ່າແມ່ນໃຜເປັນຫົວໜ້າຄົວເຮືອນ. ມັນຈະເປັນການດີໃນທາງຈັດຕັ້ງປະຕິບັດ ທີ່ຄົນຕໍ່ໄປຫັດຈາກຫົວໜ້າຄົວເຮືອນແມ່ນຈົດຂໍ້ມູນເມຍຂອງຫົວໜ້າຄົວເຮືອນ (ຫຼື ຜົວຂອງຫົວໜ້າຄົວເຮືອນ ກໍລະນີຫົວໜ້າຄົວເຮືອນເປັນແມ່ຍິງ) ຖ້າວ່າລາວເປັນສະມາຊິກຂອງຄົວເຮືອນ. ຈາກນັ້ນແມ່ນໃຫ້ສືບຕໍ່ລູກຜູ້ໃຫຍ່ສຸດ, ຖ້າວ່າລູກຄົນນີ້ແຕ່ງງານແລ້ວ ແລະ ຄູ່ຜົວ ຫຼື ເມຍຂອງລາວແມ່ນສະມາຊິກຂອງຄົວເຮືອນ, ຈົດນັບຜົວ ຫຼື ເມຍ ຂອງລາວເປັນຄົນຕໍ່ໄປ, ຕາມດ້ວຍລູກຂອງຄູ່ຜົວເມຍນີ້ (ຫຼານຂອງຫົວໜ້າຄົວເຮືອນ) ຕາມລຳດັບອາຍຸແຕ່ໃຫຍ່ຫານ້ອຍ.

ຈາກນັ້ນແມ່ນຂຶ້ນບັນຊີສະມາຊິກຄົວເຮືອນຄົນອື່ນ ເລີ່ມຈາກຜູ້ທີ່ມີສາຍພົວພັນກັບຫົວໜ້າຄົວເຮືອນ ແລະ ບໍ່ມີສາຍພົວພັນກັບຫົວໜ້າຄົວເຮືອນ. ໃນບາງກໍລະນີ, ເມື່ອນັກເດີນສຳຫຼວດກຳລັງສຳພາດຄົວເຮືອນທີ່ມີສາຍພົວພັນລັກສະນະຊັບຊ້ອນ, ມັນອາດມີຄວາມຈຳເປັນທີ່ຈະຕ້ອງໄດ້ຂຽນຊື່ ແລະ ຂໍ້ມູນທີ່ກ່ຽວຂ້ອງກ່ອນ ແລ້ວຈຶ່ງຖາມແຕ່ລະຄຳຖາມ.

ຕົວຢ່າງລຳດັບການຂຶ້ນບັນຊີສະມາຊິກຄົວເຮືອນ:

1. ຫົວໜ້າຄົວເຮືອນ;
2. ຜົວ/ເມຍຂອງຫົວໜ້າຄົວເຮືອນ;
3. ລູກຄົນໃຫຍ່ສຸດຂອງສະມາຊິກຄົວເຮືອນ
4. ຜົວ/ເມຍຂອງລູກຄົນໃຫຍ່ສຸດ;
5. ຫຼານ (ລູກຂອງລູກຫົວໜ້າຄົວເຮືອນຜູ້ໃຫຍ່ສຸດ);
6. ລູກຂອງຫົວໜ້າຄົວເຮືອນຜູ້ຖັດໄປ (ຖ້າແຕ່ງງານແລ້ວ ເຮັດຄືລູກຄົນທຳອິດ);
7. ພໍ່/ແມ່ຂອງຫົວໜ້າຄົວເຮືອນ;
8. ພໍ່/ແມ່ຂອງຜົວ ຫຼື ເມຍ ຂອງຫົວໜ້າຄົວເຮືອນ;
9. ອ້າຍ/ເອື້ອຍ/ນ້ອງຂອງຫົວໜ້າຄົວເຮືອນ;
10. ເອື້ອຍ/ອ້າຍ/ນ້ອງ ຂອງຜົວຫຼືເມຍ ຫົວໜ້າຄົວເຮືອນ
11. ພີ່ນ້ອງອື່ນໆ;
12. ບໍ່ແມ່ນພີ່ນ້ອງ.

**ຄຳຖາມ:** C.02. ຊື່ – *ຊື່ຂອງສະມາຊິກຄົວເຮືອນຄົນທີ <n> ແມ່ນຫຍັງ?*




**ຈຸດປະສົງ:** ການເກັບກຳຊື່ຂອງສະມາຊິກຄົວເຮືອນແມ່ນເພື່ອຮັບປະກັນສະມາຊິກຄົວເຮືອນທີ່ອາໄສຢູ່ເປັນປະຈຳທຸກຄົນຖືກຈົດນັບຄົບຖ້ວນ ແລະ ຫຼີກລ້ຽງການຈົດນັບຊ້ຳຊ້ອນ. ນອກຈາກນັ້ນ, ຊື່ຂອງສະມາຊິກຄົວເຮືອນ ແມ່ນເກັບກຳມາເພື່ອນຳໃຊ້ເປັນຄຳຖາມສ່ວນບຸກຄົນໃນແບບສອບຖາມ. ຍົກຕົວຢ່າງ, ຖ້າວ່າຊື່ຂອງສະມາຊິກຄົວເຮືອນຄົນໃດໜຶ່ງແມ່ນ ແສງເພັດ, ຈາກນັ້ນ ຄຳຖາມກ່ຽວກັບແສງເພັດຈະຖາມວ່າ: 'ເພດຕອນເກີດຂອງ ແສງເພັດ ແມ່ນຫຍັງ?' ໂດຍວິທີນີ້, ມັນຈະເຮັດໃຫ້ມີຄວາມງ່າຍຂຶ້ນໃນການຖາມຄຳຖາມບຸກຄົນໃນຄົວເຮືອນທີ່ມີຫຼາຍຄົນ.

**ວິທີການບັນທຶກຄຳຕອບ:** ເມື່ອນັກເດີນສາຫຼວດຖາມຄຳຖາມນີ້ກັບສະມາຊິກຄົວເຮືອນຄົນທຳອິດ, ຄຳຖາມຄວນຖາມເຈາະຈົງສຳລັບຊື່ຂອງຫົວໜ້າຄົວເຮືອນ. ພິມຊື່ແທ້ໃສ່, ເຖິງແມ່ນວ່າຜູ້ທີ່ຖືກສຳພາດບໍ່ແມ່ນຫົວໜ້າຄົວເຮືອນກໍ່ຕາມ, ນັກເດີນສຳຫຼວດຕ້ອງພິມຊື່ຂອງຫົວໜ້າຄົວເຮືອນກ່ອນໝູ່.

**ຄຳຖາມ:** C.03. ນາມສະກຸນ – *ນາມສະກຸນຂອງ <ຊື່> ແມ່ນຫຍັງ?*




**ຈຸດປະສົງ:** ເພື່ອເກັບກຳນາມສະກຸນຂອງສະມາຊິກຄົວເຮືອນ ຊຶ່ງເປັນຂໍ້ມູນໜຶ່ງສຳລັບການຮັບປະກັນບໍ່ໃຫ້ມີການຕົດນັບຊ້ຳຊ້ອນໃນກໍລະນີທີ່ສະມາຊິກຄົວເຮືອນມີຊື່ແທ້ຄືກັນ ມັນອາດຈະເກີດຂຶ້ນໃນກໍລະນີທີ່ສະມາຊິກຄົວເຮືອນບໍ່ມີສາຍພົວພັນທາງສາຍເລືອດ.

**ວິທີການບັນທຶກຄຳຕອບ:** ນັກເດີນສຳຫຼວດພຽງແຕ່ພິມນາມສະກຸນຂອງບຸກຄົນໃສ່ຊ່ອງຄາຕອບທີ່ກຳນົດໄວ້. ໃນບາງກໍລະນີ, ບາງຄົນອາດຈະບໍ່ມີນາມສະກຸນ. ໃນກໍລະນີດັ່ງກ່າວ, ພິມຄຳວ່າ 'ບໍ່ມີນາມສະກຸນ' ໃສ່.

**ຄຳຖາມ:** C.04. ເພດ – *ເພດຕອນເກີດຂອງ <ຊື່> ແມ່ນຫຍັງ?*




**ຈຸດປະສົງ:** ເພດຂອງບຸກຄົນແມ່ນຂໍ້ມູນທີ່ຈາເປັນ ແລະ ສາຄັນຫຼາຍໃນການຄິດໄລ່ສະຖິຕິແຍກເພດ.

**ຫຼັກການ:** ເກືອບທຸກກໍລະນີ, ເພດຂອງບຸກຄົນແມ່ນຮູ້ຢ່າງຈະແຈ້ງແລ້ວ. ເຖິງຢ່າງໃດກໍ່ຕາມ, ນັກເດີນສຳຫຼວດຈຳເປັນຕ້ອງຖາມຄຳຖາມນີ້. ໜ້າທີ່ຂອງນັກເດີນສຳຫຼວດແມ່ນຖາມຄຳຖາມ, ບໍ່ແມ່ນຕອບຄຳຖາມ. ຖ້າມັນຈຳເປັນ, ອະທິບາຍໃຫ້ຜູ້ຕອບສຳພາດເຂົ້າໃຈກ່ຽວກັບບົດບາດນີ້.

**ວິທີການບັນທຶກຄຳຕອບ:** ຕ້ອງລະມັດລະວັງການບັນທຶກເພດຂອງເດັກນ້ອຍໃຫ້ຖືກຕ້ອງ. ບາງທີອາດບໍ່ສາມາດຮູ້ໄດ້ວ່າເພດຂອງເດັກທີ່ຂີ່ຫຼັງແມ່ຢູ່ນັ້ນເປັນເດັກຊາຍ ຫຼື ເດັກຍິງ. ໃນກໍລະນີດັ່ງກ່າວນີ້, ນັກເດີນສຳຫຼວດຕ້ອງຖາມ, ບໍ່ໃຫ້ເດົາຄຳຕອບເດັດຂາດ.

**ຄຳຖາມ:** C.05. ສາຍພົວພັນກັບຫົວໜ້າຄົວເຮືອນ – *ສາຍພົວພັນຂອງ <ຊື່> ກັບຫົວໜ້າຄົວເຮືອນແມ່ນຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳສະຖານະສາຍພົວພັນຂອງບຸກຄົນທີ່ອາໃສຢູ່ຮ່ວມກັນໃນຄົວເຮືອນດຽວກັນ.

**ນິຍາມ:** ສາຍພົວພັນກັບຫົວໜ້າຄົວເຮືອນໝາຍເຖິງສະມາຊິກຄົວເຮືອນແຕ່ລະຄົນມີສາຍພົວພັນແນວໃດກັບຫົວໜ້າຄອບຄົວ ຕົວຢ່າງ, ສາຍພົວພັນທາງຄອບຄົວຈາກການແຕ່ງງານ ຫຼື ທາງສາຍເລືອດ ຫຼື ບໍ່ມີສາຍພົວພັນທາງຄອບຄົວ. ຕ້ອງຈື່ໄວ້ວ່າສະມາຊິກຄົວເຮືອນທີ່ຂຶ້ນບັນຊີຄົນທຳອິດແມ່ນຫົວໜ້າຄົວເຮືອນ. ສຳລັບຄົວໜ້າຄົວເຮືອນ, ໂປຣແກຣມຈະສະແດງຄຳຕອບພຽງອັນດຽວເທົ່ານັ້ນ.

ສຳລັບສະມາຊິກຄົວເຮືອນຄົນຕໍ່ໄປ, ລາຍການສາຍພົວພັນກັບຫົວໜ້າຄົວເຮືອນ ປະກອບມີ 12 ລາຍການຄຳຕອບຈະສະແດງຂຶ້ນມາໃຫ້ເລືອກ. ໃນ 12 ຕົວເລືອກຄຳຕອບນີ້ ຈະບໍ່ລວມເອົາ 'ຫົວໜ້າຄົວເຮືອນ', ຊຶ່ງໃນໜຶ່ງຄົວເຮືອນຈະມີຫົວໜ້າຄົວເຮືອນພຽງຄົນດຽວເທົ່ານັ້ນ.




ມັນມີຄວາມເປັນໄປໄດ້ສູງທີ່ຫົວໜ້າຄົວເຮືອນຈະເປັນແມ່ຍິງ. ບໍ່ຕ້ອງຄາດຫວັງວ່າຫົວໜ້າຄົວເຮືອນຕ້ອງເປັນຜູ້ຊາຍເທົ່ານັ້ນ. ກວດເບິ່ງວ່າເພດຂອງບຸກຄົນສອດຄ່ອງກັບສາຍພົວພັນກັບຫົວໜ້າຄົວເຮືອນ ແລະ ຊື່ ຫຼື ບໍ່; 'ຜູ້ຊາຍ' ບໍ່ຄວນຖືກເລືອກເປັນ 'ຜົວ/ເມຍ' ຂອງຫົວໜ້າຄົວເຮືອນທີ່ເປັນເພດຊາຍ ແລະ ກົງກັນ, 'ແມ່ຍິງ' ບໍ່ຄວນຖືກເລືອກເປັນ 'ຜົວ/ເມຍ' ຂອງຫົວໜ້າຄົວເຮືອນທີ່ເປັນເພດຍິງ.

ໃນກໍລະນີ, ບຸກຄົນທີ່ເປັນລູກຊາຍ ຫຼື ລູກສາວ ຂອງຫົວໜ້າຄົວເຮືອນ, ຖາມຄືນເພື່ອໃຫ້ແນ່ໃຈວ່າລາວເປັນລູກແທ້/ລູກກິ່ງ ຂອງຫົວໜ້າຄົວເຮືອນບໍ. ຖ້າວ່າພວກເຂົາບໍ່ແມ່ນລູກແທ້/ລູກກິ່ງ, ຖາມເພີ່ມຕື່ມວ່າເປັນ 'ລູກບຸນທຳ ຫຼື ລູກລ້ຽງ' ຫຼື 'ສາຍພົວພັນອື່ນໆ'.

ບາງຄັ້ງຄາວ, ນັກເດີນສຳຫຼວດອາດຈະພົບພໍ້ຄົວເຮືອນທີ່ມີຫຼາຍຄົນ ທີ່ບໍ່ມີສາຍພົວພັນທາງສາຍເລືອດ ຫຼື ການແຕ່ງງານ ແຕ່ພວກເຂົາອາໄສຢູ່ຮ່ວມກັນ. ສ່ວນໃຫຍ່ຈະພົບກໍລະນີນີ້ໃນເຂດຕົວເມືອງ. ຕາມຫຼັກການແລ້ວ, ນັກເດີນສຳຫຼວດເລືອກຜູ້ທີ່ມີອາຍຸສູງສຸດ ແລະ ກຳນົດໃຫ້ລາວເປັນຫົວໜ້າຄົວເຮືອນ. ຈາກນັ້ນເລືອກ 'ບໍ່ມີສາຍພົວພັນ' ສຳລັບບັນດາບຸກຄົນທີ່ເຫຼືອ. ມັນມີຫຼາຍຄົວເຮືອນ, ໂດຍສະເພາະແມ່ນຢູ່ນະຄອນຫຼວງວຽງຈັນ ທີ່ຫຼາຍຄົນທີ່ບໍ່ມີສາຍພົວພັນກັນອາໄສຢູ່ໃນຄົວເຮືອນດຽວກັນ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກໜຶ່ງໃນ 12 ລາຍການຄຳຕອບໃຫ້ຖືກຕ້ອງ.

**ຄຳຖາມ:** C.6.A. ວັນທີເກີດ – *<ຊື່> ເກີດວັນທີເທົ່າໃດ?*

**ຄຳຖາມ:** C.6.B. ເດືອນເກີດ – *<ຊື່> ເກີດເດືອນໃດ?*

**ຄຳຖາມ:** C.6.C. ປີເກີດ – *<ຊື່> ເກີດປີໃດ?*




**ຈຸດປະສົງ:** ຂໍ້ມູນກ່ຽວກັບເພດ ແລະ ວັນເດືອນປີເກີດຂອງບຸກຄົນ ເປັນຂໍ້ມູນທີ່ສຳຄັນທີ່ສຸດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ນັກເດີນສຳຫຼວດຕ້ອງຫາວິທີທາງທີ່ດີທີ່ສຸດເພື່ອໃຫ້ໄດ້ຄຳຕອບແຕ່ລະຄຳຖາມຍ່ອຍຂອງຄຳຖາມ C.06.

**ວິທີການບັນທຶກຄຳຕອບ:** ພິມວັນທີ, ເດືອນ ແລະ ປີເກີດຕາມການລາຍງານໃສ່ແຕ່ລະຊ່ອງຄຳຕອບຕາມທີ່ກຳນົດໄວ້ໃຫ້ຖືກຕ້ອງ. ຖ້າວ່າລາວບໍ່ຮູ້ວັນທີເກີດທີ່ແນ່ນອນ, ບອກລາວເພື່ອຄົ້ນຫາວັນເກີດຂອງລາວທີ່ຖືກຕ້ອງ. ບາງຄັ້ງ, ປະຊາຊົນຈະມີເອກະສານທາງການ ໃບຢັ້ງຢືນ ຫຼື ໃບຢັ້ງຢືນການເກີດ ທີ່ສະແດງວັນເດືອນປີເກີດ. ສຳລັບບຸກຄົນທີ່ຈື່ປີເກີດເປັນພຸດທະສັງກະລາດ ແມ່ນໃຫ້ສົມທຽບປີເກີດ ແລະ ອາຍຸ ຕາມເອກະສານຊ້ອນທ້າຍ **

ສຳລັບຄຳຖາມຍ່ອຍ A, B ແລະ C, ມັນກໍ່ມີຕົວເລືອກ 'ບໍ່ຮູ້' ຖ້າວ່າຜູ້ຖືກສຳພາດບໍ່ສາມາດຫາຄຳຕອບໃຫ້ໄດ້ ແລະ ບໍ່ສາມາດຄາດເດົາໄດ້. ໃນກໍລະນີດັ່ງກ່າວ, ກົດທີ່ປຸ່ມລາຍການ ( ) ຢູ່ເບື້ອງຂວາມືຂອງຊ່ອງຄຳຕອບ. ຢູ່ໃນນີ້ຈະພົບເຫັນລະຫັດຄຳຕອບທີ່ກຳນົດໄວ້ສຳລັບ 'ບໍ່ຮູ້'. ຖ້າວ່າກົດໃສ່ປຸ່ມລາຍການດັ່ງກ່າວ, ລະຫັດສະເພາະສຳລັບ 'ບໍ່ຮູ້' ປະກົດຂຶ້ນມາໃນຊ່ອງຄຳຕອບ ('99' ສຳລັບວັນທີ ແລະ ເດືອນເກີດ, '9999' ສຳລັບປີເກີດ). ສຳລັບຄຳຖາມຍ່ອຍ C.06.B ກ່ຽວກັບເດືອນເກີດ, ລາຍການທີ່ສະແດງອອກມານັ້ນມັນລວມເດືອນທັງໝົດຂອງປີນຳ. ແຕ່ວ່ານັກເດີນສຳຫຼວດສາມາດເລືອກເດືອນໂດຍກົງໃນຊ່ອງລາຍການຄຳຕອບນີ້ໄດ້ເຊັ່ນກັນ.

**ໝາຍເຫດ:** ຖ້າວ່າບຸກຄົນຮູ້ປີເກີດ, ໂປຣແກຣມຈະເສີບຕໍ່ໄປຄຳຖາມທີ C.07. ນອກຈາກນັ້ນ, ຈະໄປຫາຄຳຖາມທີ C.08 ເລີຍ, ບ່ອນທີ່ສາມາດຖາມອາຍຸຂອງບຸກຄົນ.

**ຄຳຖາມ:** C.07. ອາຍຸ – *<ຊື່> ມີອາຍຸໄດ້ຈັກປີ?*




**ຈຸດປະສົງ:** ຄຳຖາມນີ້ຈະຖືກຖາມກໍ່ຕໍ່ເມື່ອຂໍ້ມູນໃນຄຳຖາມທີ C.06 ກ່ຽວກັບປີເກີດຂອງບຸກຄົນຖືກຕອບວ່າ 'ບໍ່ຮູ້'. ເນື່ອງຈາກວ່າຂໍ້ມູນກ່ຽວກັບອາຍຸແມ່ນມີຄວາມຈຳເປັນຫຼາຍສຳລັບການສຳຫຼວດ, ຄຳຖາມກ່ຽວກັບອາຍຸຕ້ອງຖືກຕອບ, ເຖິງແມ່ນວ່າມັນມີຄວາມຖືກຕ້ອງໜ້ອຍກວ່າການຄິດໄລ່ອີງໃສ່ວັນເດືອນປີເກີດກໍ່ຕາມ.

**ຫຼັກການ:** ນັກເດີນສາຫຼວດຕ້ອງບອກໃຫ້ຜູ້ຖືກສຳພາດຄາດຄະເນອາຍຸ, ໂດຍການອ້າງອີງໃສ່ເຫດການທີ່ສຳຄັນຕ່າງໆ ໃນໄລຍະບຸກຄົນດັ່ງກ່າວເກີດ ຫຼື ປຽບທຽບອາຍຸຂອງລາວກັບສະມາຊິກຄົວເຮືອນຄົນອື່ນ ແລະ ຄາດຄະເນອາຍຸຕາມຂໍ້ມູນດັ່ງກ່າວ. ຂໍ້ຄວນເອົາໃຈໃສ່ທຳອິດໃນການຄາດຄະເນອາຍຸແມ່ນສັງເກດວ່າມີໜຶ່ງ ຫຼື ສອງຄົນໃນຄົວເຮືອນ ຫຼື ບໍ່. ວິທີການໜຶ່ງທີ່ໜ້າເຊື່ອຖືສຳລັບການຄາດຄະເນອາຍຸຂອງບຸກຄົນແມ່ນນຳໃຊ້ອາຍຸຂອງສະມາຊິກຄົວເຮືອນຄົນອື່ນ ໂດຍການປຽບທຽບວ່າລາວມີອາຍຸຫຼາຍກວ່າ ຫຼື ໜ້ອຍກວ່າຄົນດັ່ງກ່າວຈັກປີ. ຖ້າວ່າບໍ່ມີຫຍັງສາມາດຊ່ວຍໄດ້ແທ້ໆ ແລະ ວິທີດຽວທີ່ສາມາດເຮັດໄດ້ ແມ່ນໃຫ້ນັກເດີນເດົາອາຍຸຂອງບຸກຄົນດັ່ງກ່າວໃສ່ດ້ວຍຕົນເອງ.

**ວິທີການບັນທຶກຄຳຕອບ:** ບັນທຶກອາຍຸຂອງບຸກຄົນເປັນປີເຕັມ ໂດຍການຄາດຄະເນ ໃສ່ຊ່ອງຄຳຕອບໃຫ້ຖືກຕ້ອງ.

**ຄຳຖາມ:** C.08. ຄວາມຖືກຕ້ອງຂອງການຄິດໄລ່ອາຍຸ – *<ຊື່> ມີອາຍຸ <ອາຍຸ> ໃນຄືນວັນທີ 2 ຫາ 3 ພະຈິກ 2025 ຖືກຕ້ອງບໍ?*




**ຈຸດປະສົງ:** ຂໍ້ມູນອາຍຸແມ່ນມີຄວາມສຳຄັນຫຼາຍສຳລັບການສາຫຼວດ, ຄຳຖາມນີ້ມີເພື່ອກວດສອບຄືນວ່າອາຍຸຂອງບຸກຄົນໄດ້ບັນທຶກຢ່າງຖືກຕ້ອງ.

**ຫຼັກການ:** ໂປຣແກຣມຈະຄິດໄລ່ອາຍາຍຸຂອງບຸກຄົນ ໂດຍອີງໃສ່ຂໍ້ມູນທີ່ໄດ້ບັນທຶກໃນຄຳຖາມທີ C.06 ແລະ ຖາມຄືນໃນຄຳຖາມທີ C.08 ວ່າອາຍຸທີ່ຄິດໄລ່ມານັ້ນຖືກຕ້ອງ ຫຼື ບໍ່. ຖ້າວ່າຂໍ້ມູນວັນທີເດືອນປີເກີດບໍ່ຄົບຖ້ວນໃນຄຳຖາມທີ C.06 (ບໍ່ມີວັນທີເກີດ ຫຼື ບໍ່ມີເດືອນເກີດ), ໂປຣແກຣມຈະຄາດຄະເນອາຍຸຂອງບຸກຄົນດັ່ງກ່າວ. ສະນັ້ນ, ໃນກໍລະນີດັ່ງກ່າວ, ມັນມີຄວາມສຳຄັນເປັນພິເສດເພື່ອກວດຄືນວ່າການຄາດຄະເນດັ່ງກ່າວຖືກຕ້ອງແລ້ວ ຫຼື ບໍ່.

**ວິທີການບັນທຶກຄຳຕອບ:** ຖ້າວ່າການຄິດໄລອາຍຸບໍ່ຖືກຕ້ອງ, ໃຫ້ນັກເດີນສຳຫຼວດເລືອກຄຳຕອບ 'ບໍ່ແມ່ນ', ແລະ ໂປຣແກຣມຈະສະແດງຂໍ້ມູນອອກມາໃຫ້ແປງຄຳຕອບໃຫ້ຖືກຕ້ອງ. ໝາຍຄວາມວ່ານັກເດີນສຳຫຼວດຈະກັບຄືນໄປຫາຄຳຖາມທີ C.06, ບ່ອນທີ່ໄດ້ບັນທຶກວັນເດືອນປີເກີດ ແລະ ປ້ອນຂໍ້ມູນໃໝ່ທີ່ຖືກຕ້ອງໃສ່ (ຫຼື ໄປຫາຄຳຖາມທີ C.08 ຖ້າວ່າຜູ້ຕອບສຳພາດບໍ່ສາມາດຕອບປີເກີດໄດ້).

**ຄຳຖາມ:** C.09. ສະມາຊິກຄົນອື່ນ – *ຄົວເຮືອນຂອງທ່ານມີສະມາຊິກຄົວເຮືອນຄົນອື່ນອີກບໍ່ ທີ່ອາໄສຢູ່ເປັນປະຈຳໃນຄືນວັນທີ 2 ຫາ 3 ພະຈິກ 2025?*




**ຈຸດປະສົງ:** ເພື່ອກວດສອບວ່າຍັງມີສະມາຊິກຄົວເຮືອນຄົນອື່ນອີກບໍ່ທີ່ຕ້ອງໄດ້ຈົດເຂົ້າໃນການສຳຫຼວດ.

**ວິທີການບັນທຶກຄຳຕອບ:** ຖ້າວ່າຄຳຕອບໃນຄຳຖາມນີ້ແມ່ນ 'ມີ', ແບບສອບຖາມຈະວົນກັບຄືນໄປຫາຄຳຖາມທີ C.02 ສຳລັບຊື່ຂອງສະມາຊິກຄົວເຮືອນຄົນຕໍ່ໄປ. ຈາກນັ້ນນັກເດີນສຳຫຼວດຈະໄດ້ສຳພາດບັນດາຄຳຖາມທັງໝົດທີ່ກ່າວມາຂ້າງເທິງ, ແລະ ນັກເດີນສຳຫຼວດສາມາດຕື່ມຂໍ້ມູນດ້ວຍວິທີການດຽວກັນ.

**ໝາຍເຫດ:** ເມື່ອນັກເດີນສຳຫຼວດຂຶ້ນບັນຊີສະມາຊິກຄົວເຮືອນທີ່ອາໄສຢູ່ເປັນປະຈຳໝົດທຸກຄົນແລ້ວ ແລະ ໄປຮອດຄຳຖາມທີ C.09 ອີກຄັ້ງ, ໃຫ້ເລືອກຄຳຕອບ 'ບໍ່ມີ'. ໃນກໍລະນີດັ່ງກ່າວ, ນັກເດີນສຳຫຼວດຈະໄປຫາຄຳຖາມພາກຕໍ່ໄປ.

## 4.8. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ D – ຂໍ້ມູນບຸກຄົນ

ແບບສອລຖາມພາກ D ພາກບຸກຄົນ ຕ້ອງສຳພາດໃຫ້ສຳເລັດແຕ່ລະບຸກຄົນທີ່ຖືກຂຶ້ນບັນຊີສະມາຊິກຄົວເຮືອນໃນພາກ C. ໂປຣແກຣມແບບສອບຖາມສະແດງຄຳຖາມສຳລັບແຕ່ລະບຸກຄົນຕາມລຳດັບທີ່ໄດ້ຂຶ້ນບັນຊີໄວ້.

ແບບສອລຖາມພາກ D – ຂໍ້ມູນບຸກຄົນ ມີ 72 ຄາຖາມ 1 ຂໍ້ມູນສ້າງຂຶ້ນອັດຕະໂນມັດ, ແຕ່ວ່າບໍ່ແມ່ນຄໍາຖາມທັງໝົດທີ່ຈໍາເປັນຕ້ອງຖາມສໍາລັບສະມາຊິກທຸກຄົນ. ຊຶ່ງຄໍາຖາມຈະຖືກຖາມຕາມເງື່ອນໄຂ, ເປັນຕົ້ນແມ່ນ ອາຍຸ ແລະ ເພດຂອງບຸກຄົນ ແລະ ຕາມຄໍາຕອບສະເພາະໃດໜຶ່ງໃນຄໍາຖາມກ່ອນໜ້າ. ດັ່ງນັ້ນ, ຍົກຕົວຢ່າງ, ຄໍາຖາມກ່ຽວກັບອາຊີບຈະຖາມສະເພາະຜູ້ທີ່ມີວຽກເຮັດງານທໍາ, ໃນຂະນະທີ່ຄໍາຖາມກ່ຽວກັບເຫດຜົນທີ່ບໍ່ເຮັດວຽກແມ່ນຖາມຜູ້ທີ່ບໍ່ມີວຽກເຮັດງານທໍາເທົ່ານັ້ນ.

**ຄໍາຖາມ:** D.01. ຜູ້ໃຫ້ຂໍ້ມູນສະມາຊິກຄົວເຮືອນ – *ຂໍ້ມູນຂອງ <ຊື່> ແມ່ນຕົວລາວເອງ ຫຼື ຄົນອື່ນ ເປັນຜູ້ໃຫ້ຂໍ້ມູນ?*




**ນິຍາມ:** ສໍາລັບຜູ້ໃຫຍ່ (ຜູ້ທີ່ມີອາຍຸ 18 ປີ ຂຶ້ນໄປ), ຜູ້ທີ່ສາມາດຕອບຄໍາຖາມໄດ້ດີໃນພາກຂໍ້ມູນສ່ວນບຸກຄົນ ແມ່ນຜູ້ທີ່ຄໍາຖາມກ່າວເຖິງ. ເຖິງຢ່າງໃດກໍ່ຕາມ, ມັນບໍ່ແມ່ນວ່າທຸກຄົນຈະຢູ່ເຮືອນໃນເວລາສໍາພາດ. ຍົກຕົວຢ່າງ, ພວກເຂົາອາດຢູ່ບ່ອນເຮັດວຽກໃນເວລານັກເດີນສໍາຫຼວດໄປຫາ. ໃນກໍລະນີທີ່ບຸກຄົນບໍ່ຢູ່ເຮືອນ, ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຄົນໃດໜຶ່ງອາດຕອບແທນລາວ, ຄວນເປັນ – ຫົວໜ້າຄົວເຮືອນ – ແຕ່ກໍ່ບໍ່ຈໍາເປັນທຸກກໍລະນີ. ຂໍ້ມູນກ່ຽວກັບເດັກ (ຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ) ໃນຄົວເຮືອນ – ແລະ ຜູ້ໃຫຍ່ທີ່ບໍ່ສາມາດໃຫ້ສໍາພາດໄດ້ – ຄວນໃຫ້ຜູ້ທີ່ຮັບຜິດຊອບສະມາຊິກຄົວເຮືອນສະໜອງຂໍ້ມູນແທນ. ຖ້າບໍ່ມີໃຜແທ້ໆ ທ່ານຈຶ່ງເກັບກໍາຂໍ້ມູນຈາກເດັກ. ດັ່ງນັ້ນ, ລໍາດັບຄວາມຕ້ອງການໃນການເກັບກໍາຂໍ້ມູນກ່ຽວກັບສະມາຊິກຄົວເຮືອນແມ່ນ:

1. ຕອບດ້ວຍຕົນເອງ (ຍົກເວັ້ນເດັກ ແລະ ຜູ້ມີບໍ່ສາມາດໃຫ້ຄໍາຕອບໄດ້)
2. ຜູ້ທີ່ເປັນຕົວແທນ
3. ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ຄົນອື່ນທີ່ສາມາດຕອບໄດ້.

**ວິທີການບັນທຶກຄໍາຕອບ:** ໃນຄໍາຖາມນີ້,ນັກເດີນສໍາຫຼວດເປັນຜູ້ລະບຸເອງວ່າແມ່ນໃຜເປັນຜູ້ໃຫ້ຂໍ້ມູນ ໂຕລາວເອງ ຫຼື ຄົນອື່ນເປັນຜູ້ໃຫ້ຂໍ້ມູນແທນ, ແນ່ນອນວ່າບໍ່ຈໍາເປັນຕ້ອງຖາມຄໍາຖາມນີ້ (ດັ່ງນັ້ນ, ຕົວໜັງສືຂອງຄໍາຖາມເປັນສີຂຽວ), ພຽງແຕ່ລະບຸເອົາເອງວ່າໃຜຕອບສໍາພາດ.

**ໝາຍເຫດ:** ຄໍາຖາມເກືອບທັງໝົດຂອງພາກຂໍ້ມູນສ່ວນບຸກຄົນ ແມ່ນຖືກນໍາໃຊ້ຄໍາສັບໃຫ້ເປັນກໍລະນີຄົນອື່ນຕອບແທນ (‘ຕອບໂດຍບຸກຄົນທີສາມ’). ນີ້ແມ່ນເຮັດຂຶ້ນມາເພື່ອຄວາມກະຈ່າງແຈ້ງສໍາລັບນັກເດີນສໍາຫຼວດ ແລະ ຜູ້ຖືກສໍາພາດກ່ຽວກັບບຸກຄົນທີ່ຄໍາຖາມນັ້ນຖາມເຖິງ. ຖ້າບຸກຄົນນັ້ນເປັນຜູ້ຕອບຄໍາຖາມເອງ, ນັກເດີນສໍາຫຼວດອາດຈະປັບຄໍາສັບຂອງຄໍາຖາມດ້ວຍຕົນເອງ, ໂດຍການປ່ຽນຄໍາສັບໂດຍກົງຈາກບຸກຄົນທີສາມມາເປັນ (‘ຕອບໂດຍບຸກຄົນທີສອງ’).

**ຄໍາຖາມ:** D.02. ໃບຢັ້ງຢືນການເກີດ – *<ຊື່> ມີໃບຢັ້ງຢືນການເກີດ ທີ່ອອກໂດຍຫ້ອງການພາຍໃນເມືອງບໍ?*




**ຈຸດປະສົງ:** ການມີໃບຢັ້ງຢືນການເກີດແມ່ນມີຄວາມສໍາຄັນຫຼາຍ ເພາະວ່າການຈົດທະບຽນຕອນເກີດຖືເປັນວິທີການທີ່ສໍາຄັນສໍາລັບການປົກປ້ອງສິດທິຂອງບຸກຄົນ ເພື່ອບະບຸຕົວຕົນ ແລະ ຮອງຮັບສິດທິດ້ານຕ່າງໆ. ການບໍ່ມີໃບຢັ້ງຢືນການເກີດອາດຈະເຮັດໃຫ້ບຸກຄົນຖືກກີດກັ້ນຈາກການໄດ້ຮັບການດູແລດ້ານສຸຂະພາບ ແລະ ການຊ່ວຍເຫຼືອທາງສັງຄົມ ແລະ ລວມທັງການຈົດທະບຽນເຂົ້າໂຮງຮຽນ.

**ວິທີການບັນທຶກຄຳຕອບ:** ຄຳຖາມນີ້ແມ່ນຖາມຫາໃບຢັ້ງຢືນການເກີດສະເພາະທີ່ອອກໃຫ້ໂດຍຫ້ອງການພາຍໃນເມືອງ (MoHa). ຖ້າວ່າບຸກຄົນມີພຽງແຕ່ໃບຢັ້ງຢືນການເກີດຈາກຂະແໜງການອື່ນ – ເລືອກຄຳຕອບ 'ບໍ່, ບໍ່ມີໃບຢັ້ງຢືນການເກີດ'.

**ໝາຍເຫດ:** ມັນອາດເປັນໄປໄດ້ວ່າທີ່ບຸກຄົນຈະເຮັດໃບຢັ້ງຢືນການເກີດເສຍ. ໃບຢັ້ງຢືນການເກີດຈະມີ ຫຼື ເສຍແລ້ວມັນບໍ່ກ່ຽວຂ້ອງກັບການສຳຫຼວດ. ສິ່ງທີ່ສຳຄັນແມ່ນບຸກຄົນເຄີຍໄດ້ຮັບໃບຢັ້ງຢືນການເກີດ ຫຼື ບໍ່.

**ຄຳຖາມ:** D.03. ເລກທີໃບຢັ້ງຢືນການເກີດ – *ກະລຸນາບອກເລກລະຫັດບຸກຄົນໃນໃບຢັ້ງຢືນການເກີດຂອງ <ຊື່>?*






**ຈຸດປະສົງ:** ເພື່ອເກັບກາຂໍ້ມູນເລກລະຫັດບຸກຄົນທີ່ສະແດງຢູ່ໃນໃບຢັ້ງຢືນການເກີດ ສຳລັບຜູ້ທີ່ມີໃບຢັ້ງຢືນການເກີດ ຫຼື ໄດ້ຈົດທະບຽນການເກີດ.

**ນິຍາມ:** ເລກລະຫັດບຸກຄົນ ແມ່ນເລກລະຫັດທີ່ໄດ້ກຳນົດໄວ້ໃບຢັ້ງຢືນການເກີດ ສຳລັບຜູ້ທີ່ໄດ້ຈົດທະບຽນການເກີດນຳຫ້ອງການພາຍໃນເມືອງ ຊຶ່ງລະຫັດດັ່ງກ່າວແມ່ນປະກອບດ້ວຍຕົວເລກທັງໝົດຈຳນວນ 12 ຕົວເລກ.

**ວິທີການບັນທຶກຄຳຕອບ:** ຖ້າວ່າຜູ້ຖືກສຳພາດສາມາດສະໜອງຂໍ້ມູນເລກລະຫັດບຸກຄົນໃນໃບຢັ້ງຢືນການເກີດໃຫ້, ຖາມຫາໃບຢັ້ງຢືນການເກີດ ແລະ ບັນທຶກລະຫັດບຸກຄົນໃສ່ຊ່ອງບັນຊີຄຳຕອບ, ຖ້າວ່າບໍ່ສາມາດສະໜອງໃຫ້ ເລືອກປຸ່ມລາຍການຢູ່ຂວາມືຂອງຊ່ອງຄຳຕອບເພື່ອເລືອກຄຳຕອບ.

**ຄຳຖາມ:** D.04. ບັດປະຈຳຕົວ – *<ຊື່> ມີບັດປະຈຳຕົວ ຫຼື ບໍ່?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມວ່າບຸກຄົນມີບັດປະຈຳຕົວ ຫຼື ບໍ່.

**ວິທີການບັນທຶກຄຳຕອບ:** ບັນທຶກຄຳຕອບທີ່ງ່າຍດາຍຄື ເລືອກ 'ມີ' ຖ້າວ່າບັກຄົນມີ ຫຼື ເຄີຍມີບັດປະຈຳຕົວ, ເລືອກ 'ບໍ່ມີ' ຖ້າວ່າບຸກຄົນບໍ່ມີບັດປະຈຳຕົວ.

**ໝາຍເຫດ:** ເປັນໄປໄດ້ທີ່ບຸກຄົນອາດຈະເຮັດບັດປະຈາຕົວດັ່ງກ່າວເສຍ. ບັດປະຈຳຕົວດັ່ງກ່າວຈະຍັງມີຢູ່ ຫຼື ເສຍໄປແລ້ວແມ່ນບໍ່ກ່ຽວຂ້ອງກັບການສຳຫຼວດ. ສິ່ງທີ່ສຳຄັນແມ່ນບຸກຄົນເຄີຍໄດ້ຮັບບັດປະຈຳຕົວດັ່ງກ່າວ ຫຼື ບໍ່.

**ຄຳຖາມ:** D.05. ເລກທີໃບຢັ້ງຢືນການເກີດ – *ສາມາດໃຫ້ລະຫັດບັດປະຈຳຕົວຂອງ <ຊື່> ໄດ້ບໍ?*




**ຈຸດປະສົງ:** ເພື່ອເກັບກາຂໍ້ມູນເລກລະຫັດບຸກຄົນທີ່ສະແດງຢູ່ໃນບັດປະຈຳຕົວ ສຳລັບຜູ້ທີ່ມີບັດປະຈຳຕົວ.

**ນິຍາມ:** ເລກລະຫັດບັດປະຈຳຕົວ ແມ່ນເລກລະຫັດບຸກຄົນທີ່ໄດ້ກຳນົດໄວ້ບັດປະຈຳຕົວ ສຳລັບຜູ້ທີ່ມີບັດປະຈຳຕົວທີ່ອອກໃຫ້ໂດຍກອງບັນຊາການປ້ອງກັນຄວາມສະຫງົບແຂວງ (ປກສ ແຂວງ). ສຳລັບບັດປະຈຳຕົວແບບເກົ່າ (ສີຂາວ) ລະຫັດແມ່ນຢູ່ເບື້ອງເທິງດ້ານຊາຍມື, ສຳລັບບັດປະຈຳຕົວແບບໃໝ່ (ສີຂຽວ) ລະຫັດແມ່ນຢູ່ດ້ານລຸ່ມຂອງຮູບເຈົ້າຂອງບັດ.

**ວິທີການບັນທຶກຄຳຕອບ:** ຖ້າວ່າຜູ້ຖືກສຳພາດສາມາດສະໜອງຂໍ້ມູນເລກລະຫັດບັດປະຈຳຕົວໃຫ້ໄດ້, ຖາມຫາບັດປະຈຳຕົວ ແລະ ບັນທຶກລະຫັດບຸກຄົນໃສ່ຊ່ອງບັນຊຶກຄາຕອບ, ຖ້າວ່າບໍ່ສາມາດສະໜອງໃຫ້ ເລືອກປຸ່ມລາຍການຢູ່ຂວາມືຂອງຊ່ອງຄຳຕອບເພື່ອເລືອກຄຳຕອບ.

**ຄຳຖາມ:** D.06. ສະຖານະພາບສົມລົດ – *ສະຖານະພາບສົມລົດຂອງ <ຊື່> ແມ່ນຫຍັງ?*




**ຈຸດປະສົງ:** ຂໍ້ມູນກ່ຽວກັບສະຖານະພາບສົມລົດ ແມ່ນມີຄວາມສຳຄັນເພື່ອຄວາມເຂົ້າໃຈກ່ຽວກັບອົງປະກອບຂອງຄົວເຮືອນ ແລະ ຄອບຄົວ. ສະຖານະພາບສົມລົດຍັງກ່ຽວຂ້ອງກັບພົນລະເມືອງໃນຫຼາຍທາງເປັນຕົ້ນແມ່ນ ສຸຂະພາບ, ການມີລູກ, ການມີສ່ວນຮ່ວມໃນກຳລັງແຮງງານ, ການປົກປ້ອງທາງເສດຖະກິດ ແລະ ຄວາມຢູ່ດີກິນດີໂດຍລວມ ແລະ ແມ່ນຕົວປ່ຽນຫຼັກໃນການວິເຄາະ ທາງດ້ານປະຊາກອນສາດ ແລະ ການປ່ຽນແປງທາງສັງຄົມ.

**ນິຍາມ:** ສະຖານະພາບສົມລົດ ໝາຍເຖິງສະຖານະທາງກົດໝາຍຂອງບຸກຄົນທີ່ກ່ຽວຂ້ອງກັບກົດໝາຍການແຕ່ງງານໃນ ສປປ ລາວ. ຈື່ໄວ້ວ່າ ຖ້າບຸກຄົນເປັນໝ້າຍ ຫຼື ຢ່າຮ້າງ ໃນອະດີດ ແຕ່ໄດ້ແຕ່ງດອງຄືນໃໝ່ແລ້ວ, ຄຳຕອບຄວນເປັນ 'ແຕ່ງດອງ'. ເຊັ່ນດຽວກັນ, ຈື່ໄວ້ວ່າມີຄວາມແຕກຕ່າງກັນລະຫວ່າງ 'ຢ່າງຮ້າງ' ແລະ 'ແຍກກັນຢູ່ (ແຕ່ຍັງມີສະຖານະແຕ່ງດອງ)'. 'ຢ່າງຮ້າງ' ໝາຍເຖິງສະຖານະການແຕ່ງດອງໄດ້ຈົບລົງຕາມກົດໝາຍ, ໃນຂະນະທີ່ ແຍກກັນຢູ່ໝາຍເຖິງຄູ່ຜົວ/ເມຍ ບໍ່ໄດ້ອາໄສຢູ່ຮ່ວມກັນແລ້ວ, ສະຖານະການແຕ່ງດອງຕາມກົດໝາຍຍັງບໍ່ທັນຈົບລົງ.

ໃນກໍລະນີທີ່ສະມາຊິກຄົວເຮືອນຢູ່ຮ່ວມກັນດ້ວຍຄວາມຍິນຍອມ (ອາໄສຢູ່ຮ່ວມກັນ, ແຕ່ບໍ່ໄດ້ແຕ່ງດອງຕາມກົດໝາຍ), ເຂົາເຈົ້າຕ້ອງໄດ້ຖືກບັນທຶກສະຖານະພາບສົມລົດຕາມກົດໝາຍ (ປະກອບດ້ວຍ 'ບໍ່ເຄີຍແຕ່ງດອງ', 'ແຕ່ງດອງ', 'ໝ້າຍ', 'ຢ່າຮ້ອງ' ຫຼື 'ແຍກກັນຢູ່, ແຕ່ຍັງແຕ່ງດອງຕາມກົດໝາຍ'). ມີຄຳຖາມແຍກຕ່າງຫາກໃນພາກຂໍ້ມູນສ່ວນບຸກຄົນ (D.06) ຖາມກ່ຽວກັບການຢູ່ຮ່ວມກັນ.

**ວິທີການບັນທຶກຄຳຕອບ:** ບັນທຶກຄຳຕອບຕາມສະຖານະພາບສົມລົດໃນປັດຈຸບັນຂອງບຸກຄົນ.

**ໝາຍເຫດ:** ຄຳຖາມນີ້ແມ່ນຖາມສະເພາະຜູ້ທີ່ມີອາຍຸ 13 ປີ ຂຶ້ນໄປ.

**ຄຳຖາມ:** D.07. ໃບຢັ້ງຢືນການແຕ່ງດອງ – *<ຊື່> ໄດ້ຈົດທະບຽນການແຕ່ງດອງ ນຳເຈົ້າໜ້າທີ່ ຫຼື ບໍ່?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມສະເພາະຜູ້ທີ່ຕອບວ່າ 'ແຕ່ງດອງ' ໃນຄຳຖາມກ່ອນໜ້ານີ້ ເພື່ອສຶກສາກ່ຽວກັບການຈົດທະບຽນການແຕ່ງດອງຂອງພົນລະເມືອງລາວ. ສຳລັບຜູ້ທີ່ຕອບວ່າ ບໍ່ເຄີຍແຕ່ງດອງ, ໝ້າຍ ຫຼື ແຍກກັນຢູ່, ໂປຣແກຣມຈະຂ້າມໄປຄຳຖາມທີ D.09. ຖ້າວ່າບຸກຄົນມີສະພາບຢ່າຮ້າງ ແມ່ນຂ້າມໄປຄຳຖາມທີ D.08.

**ນິຍາມ:** ຄຳຖາມແມ່ນຖາມກ່ຽວກັບການແຕ່ງດອງໄດ້ຈົດທະບຽນນຳເຈົ້າໜ້າທີ່ບໍ່. 'ເຈົ້າໜ້າທີ່' ໝາຍເຖິງເຈົ້າໜ້າທີ່ຄຸ້ມຄອງພົນລະເມືອງໃນປະເທດລາວ, ບໍ່ແມ່ນວັດ ຫຼື ໂບດ. ມັນບໍ່ສຳຄັນວ່າບຸກຄົນດັ່ງກ່າວມີໃບຢັ້ງຢືນ ຫຼື ບໍ່, ພຽງແຕ່ວ່າໄດ້ຈົດທະບຽນການແຕ່ງດອງ ຫຼື ບໍ່ ກໍ່ພໍ.

**ວິທີການບັນທຶກຄຳຕອບ:** ຖ້າວ່າໄດ້ຈົດທະບຽນນຳເຈົ້າໜ້າທີ່ ເລືອກບັນທຶກຄຳຕອບ 'ແມ່ນ, ໄດ້ຈົດທະບຽນການແຕ່ງດອງ', ຖ້າວ່າບໍ່ໄດ້ຈົດທະບຽນ ເລືອກບັນທຶກຄຳຕອບ 'ບໍ່, ບໍ່ໄດ້ຈົດທະບຽນການແຕ່ງດອງ', ຖ້າວ່າບໍ່ຮູ້ ຫຼື ບໍ່ແນ່ໃຈວ່າໄດ້ຈົດທະບຽນ ຫຼື ບໍ່ ເລືອກບັນທຶກຄຳຕອບ 'ບໍ່ຮູ້'.

**ຄຳຖາມ:** D.08. ເອກະສານຢັ້ງຢືນການຢ່າຮ້າງ – *<ຊື່> ໄດ້ຈົດທະບຽນການຢ່າຮ້າງ ນຳເຈົ້າໜ້າທີ່ ຫຼື ບໍ່?*




**ຈຸດປະສົງ:** ຄ້າຍຄືກັນກັບຄຳຖາມກ່ອນໜ້ານີ້, ມັນພຽງແຕ່ຖາມວ່າ ການຢ່າງຮ້າງຂອງບຸກຄົນໄດ້ຈົດທະບຽນນຳເຈົ້າໜ້າທີ່ ຫຼື ບໍ່, 'ໄດ້ຈົດ' ຫຼື 'ບໍ່ໄດ້ຈົດ'.

ຄຳຖາມນີ້ແມ່ນຖາມສະເພາະຜູ້ທີ່ມີສະຖານະພາບສົມລົດ ໃນຄຳຖາມທີ D.06 ແມ່ນໄດ້ບັນທຶກວ່າ 'ຢ່າຮ້າງ (ແລະ ຍັງບໍ່ທັນແຕ່ງດອງໃໝ່)'.

**ນິຍາມ:** ຄຳຖາມແມ່ນຖາມກ່ຽວກັບການຢ່າຮ້າງໄດ້ຈົດທະບຽນນຳເຈົ້າໜ້າທີ່ບໍ່. 'ເຈົ້າໜ້າທີ່' ໝາຍເຖິງເຈົ້າໜ້າທີ່ຄຸ້ມຄອງພົນລະເມືອງໃນປະເທດລາວ, ບໍ່ແມ່ນວັດ ຫຼື ໂບດ. ມັນບໍ່ສຳຄັນວ່າບຸກຄົນດັ່ງກ່າວມີໃບຢັ້ງຢືນ ຫຼື ບໍ່, ພຽງແຕ່ວ່າໄດ້ຈົດທະບຽນການຢ່າຮ້າງ ຫຼື ບໍ່ ກໍ່ພໍ.

**ວິທີການບັນທຶກຄຳຕອບ:** ຖ້າວ່າໄດ້ຈົດທະບຽນນຳເຈົ້າໜ້າທີ່ ເລືອກບັນທຶກຄຳຕອບ 'ແມ່ນ, ໄດ້ຈົດທະບຽນການຢ່າງຮ້າງ', ຖ້າວ່າບໍ່ໄດ້ຈົດທະບຽນ ເລືອກບັນທຶກຄຳຕອບ 'ບໍ່, ບໍ່ໄດ້ຈົດທະບຽນການຢ່າຮ້າງ', ຖ້າວ່າບໍ່ຮູ້ ຫຼື ບໍ່ແນ່ໃຈວ່າໄດ້ຈົດທະບຽນ ຫຼື ບໍ່ ເລືອກບັນທຶກຄຳຕອບ 'ບໍ່ຮູ້'.

**ຄຳຖາມ:** D.09. ຢູ່ຮ່ວມກັນກັບຄູ່ຮັກ – *ປະຈຸບັນ <ຊື່> ໄດ້ອາໄສຢູ່ຮ່ວມກັນກັບຄູ່ຮັກແບບຖາວອນ ຫຼື ບໍ່?*




**ຈຸດປະສົງ:** ຄົນເຮົາສາມາດອາໄສຢູ່ຮ່ວມກັນດ້ວຍສາຍພົວພັນແຕ່ງດອງຕາມກົດໝາຍ ຫຼື ບໍ່ໄດ້ແຕ່ງດອງຕາມກົດໝາຍ. ຄຳຖາມທີ D.03 ຖາມກ່ຽວກັບສະຖານະການແຕ່ງດອງຕາມກົດໝາຍ. ຄຳຖາມນີ້ຖາມກ່ຽວກັບ 'ການຢູ່ຮ່ວມກັນ'; ໂດຍທີ່ບຸກຄົນອາໄສຢູ່ຮ່ວມກັນກັບຄູ່ຮັກໂດຍບໍ່ໄດ້ແຕ່ງດອງຕາມກົດໝາຍ. ໃນຄຳຖາມນີ້, ພວກເຮົາຕ້ອງການຮູ້ວ່າບຸກຄົນ

ມີສາຍພົວພັນກັບຄົນອື່ນໃນຄົວເຮືອນແນວໃດ. ຄຳຖາມນີ້ຈະບໍ່ຖືກຖາມ ຖ້າວ່າເປັນຄົວເຮືອນທີ່ອາໄສຢູ່ຄົນດຽວ, ຊຶ່ງມັນເປັນບໍ່ໄດ້ທີ່ຈະອາໄສຢູ່ຮ່ວມກັບຄົນອື່ນ. ຄຳຖາມນີ້ຍັງບໍ່ຖາມບຸກຄົນທີ່ລະບຸຢູ່ໃນຄຳຖາມທີ D.06 ວ່າລາວແຕ່ງດອງ ແລະ ຄຳຖາມນີ້ຍັງບໍ່ຖາມເດັກທີ່ມີອາຍຸຕ່ຳກວ່າ 13 ປີ.

ຄ້າຍຄືກັນກັບສະຖານະພາບສົມລົດ, ຂໍ້ມູນກ່ຽວກັບການອາໄສຢູ່ຮ່ວມກັນແມ່ນມີຄວາມສຳຄັນເພື່ອຄວາມເຂົ້າໃຈກ່ຽວກັບອົງປະກອບຂອງຄົວເຮືອນ ແລະ ຄອບຄົວ. ສະຖານະພາບສົມລົດຍັງກ່ຽວຂ້ອງກັບກັບພົນລະເມືອງໃນຫຼາຍທາງເປັນຕົ້ນແມ່ນ ສຸຂະພາບ, ການມີລູກ, ການມີສ່ວນຮ່ວມໃນກຳລັງແຮງງານ, ການປົກປ້ອງທາງເສດຖະກິດ ແລະ ຄວາມຢູ່ດີກິນດີໂດຍລວມ, ແລະ ແມ່ນຕົວປ່ຽນຫຼັກໃນການວິເຄາະ ທາງດ້ານປະຊາກອນສາດ ແລະ ການປ່ຽນແປງທາງສັງຄົມ.

**ວິທີການບັນທຶກຄຳຕອບ:** ຖ້າວ່າບຸກຄົນອາໄສຢູ່ຮ່ວມກັນໂດຍທີ່ບໍ່ໄດ້ແຕ່ງດອງຖືກຕ້ອງຕາມກົດໝາຍ ເລືອກບັນທຶກຄຳຕອບ 'ແມ່ນ', ຖ້າວ່າບຸກຄົນບໍ່ໄດ້ບໍ່ໄດ້ອາໄສຢູ່ຮ່ວມກັນກັບຄູ່ຮັກ ເລືອກບັນທຶກຄຳຕອບ 'ບໍ່ແມ່ນ'.

**ຄຳຖາມ:** D.10. ສັນຊາດ – *ສັນຊາດຂອງ <ຊື່> ແມ່ນປະເທດໃດ?*




**ຈຸດປະສົງ:** ເພື່ອເກັບກາວ່າພົນລະເມືອງທີ່ອາໄສຢູ່ເປັນປະຈາໃນ ສປປ ລາວ ແມ່ນມີສັນຊາດໃດແດ່ ຫຼື ແມ່ນຄົນປະເທດໃດ.

**ນິຍາມ:** ປະເທດສັນຊາດແມ່ນການົດເອົາປະເທດທີ່ບຸກຄົນເປັນພົນລະເມືອງຂຶ້ນກັບ ແລະ ຊຶ່ງໄດ້ມາໂດຍບຸກຄົນດັ່ງກ່າວມີຄວາມຜູກພັນທາງກົດໝາຍໂດຍສະເພາະປະກອບດ້ວຍການເກີດ, ການປ່ຽນສັນຊາດ, ການແຕ່ງດອງ ຫຼື ວິທີການອື່ນໆ. ພົນລະເມືອງສັນຊາດລາວ ແມ່ນພົນລະເມືອງລາວທີ່ຖືກຕ້ອງຕາມກົດໝາຍ, ສັນຊາດຕ່າງປະເທດ ແມ່ນພົນລະເມືອງທີ່ບໍ່ແມ່ນສັນຊາດລາວຕາມກົດໝາຍ (ໝາຍເຖິງຄົນສັນຊາດອື່ນ ແລະ ຄົນບໍ່ມີສັນຊາດ).

ສັນຊາດໄດ້ມາຜ່ານການເກີດ ຫຼື ການປ່ຽນສັນຊາດ ຫຼື ວິທີການອື່ນຕາມການກຳນົດໄວ້ໃນກົດໝາຍ. ສັນຊາດບົ່ງບອກເຖິງການຮັບຮູ້ຢ່າງເປັນທາງການຂອງພົນລະເມືອງວ່າເປັນຄົນປະເທດໃດ. ດັ່ງນັ້ນ, ສັນຊາດຈຶ່ງມີຄວາມແຕກຕ່າງກັບ 'ເຊື້ອຊາດ', ຊຶ່ງໝາຍເຖິງສາຍພົວພັນລະຫວ່າງບຸກຄົນ ແລະ ສະຖານທີ່ເກີດຂອງລາວ ແລະ ຍັງກ່ຽວຂ້ອງກັບຊົນເຜົ່າອີກດ້ວຍ. ເຖິງແມ່ນວ່າປະເທດສັນຊາດ ແລະ ປະເທດເກີດປົກກະຕິແລ້ວແມ່ນຄືກັນ, ໃນທີ່ນີ້ມັນບໍ່ຈຳເປັນສະເໝີໄປ.

ສັນຊາດກ່ຽວຂ້ອງກັບສະຖານະປັດຈຸບັນຂອງບຸກຄົນ, ບໍ່ແມ່ນສະຖານະຂອງບຸກຄົນຕອນເກີດ. ຊັນຊາດໄດ້ກຳນົດໄວ້ໃນລາຍການຕົວເລືອກຄຳຕອບ. ພົນລະເມືອງລາວທັງໝົດ ຄວນລະບຸເປັນ 'ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ' ນອກຈາກວ່າພວກເຂົາໄດ້ປ່ຽນສັນຊາດແລ້ວ; ຈາກນັ້ນບັນທຶກຕາມການຕອບ. ຖ້າບຸກຄົນເກີດຢູ່ຕ່າງປະເທດ, ເຊັ່ນ ເກີດຢູ່ປະເທດຈີນ ແລະ ໄດ້ປ່ຽນສັນຊາດເປັນສັນຊາດລາວແລ້ວ, ດັ່ງນັ້ນ, ບັນທຶກ 'ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ'.

ອາດມີຄົນຈຳນວນໜຶ່ງທີ່ບໍ່ມີສັນຊາດ, ໝາຍຄວາມວ່າພວກເຂົາບໍ່ສາມາດລະບຸໄດ້ວ່າເປັນສັນຊາດໃດ ຫຼື ເປັນຄົນຂອງປະເທດໃດ. ໃນບາງກໍລະນີ, ບາງຄົນອາດບໍ່ຮູ້ວ່າຕົນເອງເປັນຄົນສັນຊາດໃດ ຫຼື ຄົນຂອງປະເທດໃດ.

**ວິທີການບັນທຶກຄຳຕອບ:** ເພື່ອປະຢັດເວລາ, 6 ປະເທດທີ່ເປັນສັນຊາດ ຄາດວ່າມີຫຼາຍແມ່ນໄດ້ລວມເຂົ້າໃນລາຍການທາງເລືອກຄຳຕອບ. ຖ້າປະເທດສັນຊາດຂອງບຸກຄົນຢູ່ໃນ 6 ປະເທດດັ່ງກ່າວນີ້, ນັກເດີນສຳຫຼວດພຽງແຕ່

ເລືອກປະເທດດັ່ງກ່າວ. ສຳລັບຄົນບໍ່ມີສັນຊາດ ແມ່ນໃຫ້ເລືອກ 'ບໍ່ມີສັນຊາດ'. ນອກຈາກນັ້ນ, ເລືອກ 'ປະເທດອື່ນໆ'. ໃນກໍລະນີນີ້, ນັກເດີນສຳຫຼວດຈະໄປຕໍ່ຄຳຖາມທີ D.11, ໃນນີ້ຈະລວມມີລາຍຊື່ທຸກປະເທດ.

**ຄຳຖາມ:** D.11. ສັນຊາດອື່ນໆ – *ສັນຊາດຂອງ <ຊື່> ແມ່ນປະເທດໃດ?*




**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາ ຖ້າວ່າເລືອກ 'ປະເທດອື່ນໆ' ໃນຄຳຖາມທີ D.10 ເພື່ອໃຫ້ສາມາດເລືອກຊື່ປະເທດໃດກໍ່ໄດ້ຕາມທີ່ຜູ້ຖືກສຳພາດຕອບ.

**ວິທີການບັນທຶກຄຳຕອບ:** ນີ້ແມ່ນຄຳຖາມທົ່ວໄປທີ່ມີຄວາມສະດວກໃນການນຳໃຊ້ຄຳສັ່ງຄົ້ນຫາຂອງໂປຣແກຣມ. ນັກເດີນສຳຫຼວດສາມາດນຳໃຊ້ຄຳສັ່ງຄົ້ນຫາໂດຍການກົດໃສ່ຮູບແວ່ນຂະຫຍາຍຢູ່ດ້ານຂວາມືໃນແຖບເບື້ອງເທິງຂອງໜ້າຈໍ. ເມື່ອພິມຂໍ້ຄວາມຈຳນວນໜຶ່ງຂອງຊື່ປະເທດທີ່ຕ້ອງການໃສ່, ປະເທດທີ່ມີຊື່ປະກອບດ້ວຍຂໍ້ຄວາມດັ່ງກ່າວຈະສະແດງຂຶ້ນມາ (ໃນຫຼາຍລັກສະນະ).

**ໝາຍເຫດ:** ຈື່ໄວ້ວ່າຄາຖາມນີ້ເປັນໜັງສືສີຂຽວ, ໝາຍຄວາມວ່ານັກເດີນສຳຫຼວດບໍ່ຈຳເປັນຕ້ອງຖາມຄຳຖາມນີ້ (ຄຳຕອບແມ່ນໄດ້ຈາກຄຳຖາມກ່ອນໜ້ານີ້ແລ້ວ). ປະເທດທີ່ມີຢູ່ໃນລາຍການຄຳຕອບໃນຄຳຖາມທີ D.10 ກ່ອນໜ້ານີ້ຈະບໍ່ລວມໃນລາຍຊື່ປະເທດຂອງຄຳຖາມນີ້ອີກ.

**ຄຳຖາມ:** D.12. ຊົນເຜົ່າ – *<ຊື່> ແມ່ນຊົນເຜົ່າຫຍັງ?*




**ຈຸດປະສົງ:** ຊົນເຜົ່າແມ່ນມີຄວາມສຳຄັນສຳລັບການເບິ່ງຄວາມແຕກຕ່າງທາງດ້ານເສດຖະກິດ ແລະ ສັງຄົມ ຊຶ່ງເປັນຜົນຈາກວິທີການດຳລົງຊີວິດ: ວັດທະນະທຳ ແລະ ຮີດຄອງປະເພນີ. ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນຊົນເຜົ່າຂອງພົນລະເມືອງສັນຊາດລາວທັງໝົດ.

**ນິຍາມ:** ເຖິງແມ່ນວ່າກຸ່ມຄົນຈຳນວນໜຶ່ງມີແນວຄວາມຄິດທີ່ແນ່ນອນກ່ຽວກັບຊົນເຜົ່າ, ແນວຄວາມຄິດສາມາດເຂົ້າໃຈໄປໃນທິດທາງທີ່ແຕກຕ່າງກັນໂດຍກຸ່ມຄົນທີ່ແຕກຕ່າງກັນ. ຊຶ່ງຊົນເຜົ່າກ່ຽວຂ້ອງກັບຄຸນລັກສະນະຕ່າງໆທີ່ຫຼາກຫຼາຍ, ເຊັ່ນບັນພະບຸລຸດ ຫຼື ເຊື້ອສາຍ, ວັດທະນະທຳ, ຊາດກຳເນີດ, ສີຜິວ, ສະຖານະກຸ່ມສ່ວນໜ້ອຍ, ພາສາ, ສາສະໜາ ແລະ ການປະສົມປະສານຄຸນລັກນະຕ່າງໆເຫຼົ່ານີ້ຢ່າງຫຼາກຫຼາຍ. ຊົນເຜົ່າຍັງແນວແນວຄວາມຄິດທີ່ປ່ຽນແປງຕະຫຼອດເວລາ, ຊຶ່ງຄວາມໝາຍຂອງມັນອາດປ່ຽນແປງໄປຕາມເວລາ, ເຖິງແມ່ນວ່າຈະເມ່ນກຸ່ມຄົນດຽວກັນ.

ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ລັກສະນະຊົນເຜົ່າ ແມ່ນກຳນົດຕາມຄວາມເຂົ້າໃຈຊົນເຜົ່າຂອງບຸກຄົນ ຫຼື ພື້ນຖານຄວາມເປັນມາຂອງຊຸມຊົນ ແລະ ຂົງເຂດ (ພາກພື້ນ, ລະດັບຊາດ), ກໍ່ຄືຄຸນລັກສະນະສະເພາະດ້ານວັດທະນະທຳ, ກຸມພາສາປາກເວົ້າ ແລະ/ຫຼື ສາສະໜາ ແລະ/ຫຼື ວັດຖະນະທຳສະເພາະ ແລະ ວິຖີຊີວິດ. ຂໍ້ມູນກ່ຽວກັບຊົນເຜົ່າຕ້ອງບໍ່ສັບສົນກັບຂໍ້ມູນສັນຊາດ ຫຼື ປະເທດເກີດ. ຕ້ອງຫຼີກລ້ຽງການນຳໃຊ້ຂໍ້ມູນກ່ຽວກັບ 'ເຊື້ອຊາດ' ແທນທີ່ຊົນເຜົ່າ.

ນັກເດີນສຳຫຼວດຕ້ອງບໍ່ຄາດເດົາຊົນເຜົ່າຂອງບຸກຄົນ ແລະ ຖາມທຸກຄົນເພື່ອໄດ້ຄຳຕອບຈາກເຂົາເຂົ້າ. ບັນທຶກຕາມການຕອບ, ເຖິງແມ່ນວ່າຄອບຄົວດຽວກັນແຕ່ໃຫ້ຂໍ້ມູນຊົນເຜົ່າແຕກຕ່າງກັນ. ນັກເດີນສຳຫຼວດຈະຕ້ອງບໍ່ຊີ້ນຳຄຳຕອບ ຫຼື ບອກໃຫ້ເຂົາເຂົາເຈົ້າຕອບໃຫ້ໄດ້ຖ້າເຂົາເຈົ້າບໍ່ຢາກຕອບ. ເຖິງຢ່າງໃດກໍຕາມ, ໃນກໍລະນີນີ້, ໃຫ້ທ່ານເລືອກ

ຄຳ 'ບໍ່ບອກ'. ເຊັ່ນດຽວກັນ, ບໍ່ຈຳເປັນຕ້ອງອ່ານຄຳຕອບໃຫ້ຜູ້ຖືກສຳພາດຟັງ, ເພາະວ່າລຳດັບການອ່ານຄຳຕອບເປັນການຊີ້ນຳຄຳຕອບ.

**ວິທີການບັນທຶກຄຳຕອບ:** ຈາກລາຍການຕົວເລືອກຄຳຕອບ, ເລືອກຊົນເຜົ່າທີ່ບຸກຄົນລະບຸວ່າລາວແມ່ນຊົນເຜົ່າດັ່ງກ່າວ. ຖ້າບຸກຄົນບໍ່ຮູ້ວ່າລາວແມ່ນຊົນເຜົ່າໃດ, ເລືອກ 'ບໍ່ຮູ້'. ບາງຄົນອາດຈະແມ່ນຊົນເຜົ່າປະສົມ ຫຼື ຊົນເຜົ່າທີ່ບໍ່ມີໃນລາຍການຄຳຕອບ. ທັງສອງກໍລະນີນີ້, ນັກເດີນສຳຫຼວດໄປຕໍ່ຄຳຖາມຕໍ່ໄປບ່ອນທີ່ທ່ານສາມາດຂຽນຄຳຕອບໃສ່ໄດ້. ເຖິງຢ່າງໃດກໍ່ຕາມ, ຕ້ອງໃຫ້ໝັ້ນໃຈ ຖ້າວ່າບຸກຄົນຕອບ 'ອື່ນໆ', ມັນບໍ່ແມ່ນໃນກຸ່ມຊົນເຜົ່າທີ່ມີຢູ່ໃນລາຍການຄຳຕອບຢູ່ແລ້ວ. *<u>ຕາລະລາຍລາຍລະອຽດກ່ຽວກັບຊົນເຜົ່າ, ຊື່ແຊງ ຫຼື ຂະແໜງ ແລະ ຊື່ເອີ້ນຕາມທ້ອງຖິ່ນ ແມ່ນສະແດງຢູ່ໃນຕາຕະລາງຊ້ອນທ້າຍ***</u>*




**ຄຳຖາມ:** D.13. ຊົນເຜົ່າອື່ນໆ – *<ຊື່> ແມ່ນຊົນເຜົ່າຫຍັງ?*

**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາ ຖ້າເລືອກ 'ຊົນເຜົ່າອື່ນໆ' ຫຼື 'ຊົນເຜົ່າປະສົມ' ໃນຄຳຖາມທີ D.12. ຈື່ໄວ້ວ່າຄຳຖາມນີ້ເປັນໜັງສືສີຂຽວ, ໝາຍຄວາມວ່າບໍ່ຈຳເປັນຕ້ອງຖາມຄຳຖາມນີ້ (ຄຳຕອບແມ່ນໄດ້ຈາກຄຳຖາມກ່ອນໜ້ານີ້ແລ້ວ).

**ວິທີການບັນທຶກຄຳຕອບ:** ພິມຊື່ຊົນເຜົ່າຕາມການລາຍງານຂອງຜູ້ຖືກສຳພາດໃສ່ຊ່ອງຄຳຕອບໃຫ້ຖືກຕ້ອງ.




**ຄຳຖາມ:** D.14. ສາສະໜາ – *<ຊື່> ນັບຖືສາສະໜາຫຍັງ?*

**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບຂໍ້ມູນກ່ຽວກັບສາສະໜາ ຫຼື ຄວາມເຊື່ອຖືຂອງພົນລະເມືອງ.

**ນິຍາມ:** ຄຳຖາມນີ້ປະກອບດ້ວຍລາຍການຕົວເລືອກຄຳຕອບ 9 ສາສະໜາຕົ້ນຕໍທີ່ນັບຖືໃນປະທດລາວ, ພ້ອມກັນນັ້ນຍັງມີສາສະໜາອື່ນໆເປັນຕົວເລືອກອີກດ້ວຍ. ເພື່ອປ້ອງກັນຄຳຕອບທີ່ຄາດເຄື່ອນ, ບໍ່ຕ້ອງອ່ານຕົວເລືອກສາສະໜາຕ່າງໆໃຫ້ຜູ້ຖືກສຳພາດຟັງ.

**ວິທີການບັນທຶກຄຳຕອບ:** ຜູ້ຄົນຈຳນວນໜຶ່ງແມ່ນບໍ່ນັບຖື ຫຼື ສັດທາສາສະໜາໃດໆ. ສຳລັບກໍລະນີນີ້, ແມ່ນໃຫ້ເລືອກ 'ບໍ່ມີສາສະໜາ'. ສຳລັບຜູ້ທີ່ບໍ່ຕ້ອງການໃຫ້ຂໍ້ມູນກ່ຽວກັບຄວາມເຊື່ອຖືສະເພາະຂອງພວກເຂົາ, ເລືອກຄຳຕອບ 'ບໍ່ຕອບ'. ຖ້າວ່າຜູ້ຖືກສຳພາດຕອບສາສະໜາ ຫຼື ສັດທາ ທີ່ບໍ່ມີໃນລາຍການຄຳຕອບ, ນັກເດີນສຳຫຼວດຄວນເລືອກ 'ສາສະໜາອື່ນໆ'.




**ຄຳຖາມ:** D.15. ເກີດຢູ່ເມືອງດຽວກັນກັບທີ່ຢູ່ປະຈຸບັນ – *ປະຈຸບັນ <ຊື່> ອາໄສຢູ່ສະຖານທີ່ດຽວກັນກັບ ບ່ອນທີ່ລາວເກີດ ແມ່ນບໍ?*

**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກາຂໍ້ມູນກ່ຽວກັບການຍົກຍ້າຍໃນຊ່ວງຊີວິດຂອງພົນລະເມືອງ ໂດຍການສົມທຽບສະຖານທີ່ອາໄສຢູ່ໃນປັດຈຸບັນ ກັບສະຖານທີ່ເກີດ.

**ວິທີການບັນທຶກຄຳຕອບ:** ສ່ວນຫຼາຍຂອງພົນລະເມືອງທີ່ອາໄສຢູ່ປະເທດລາວ ອາໄສຢູ່ເມືອງດຽວກັນກັບເມືອງທີ່

ພວກເຂົາເກີດ. ເພື່ອເຮັດໃຫ້ການສຳພາດໄວຂຶ້ນ, ແທນທີ່ຈະຖາມວ່າເຂົາເຈົ້າເກີດຢູ່ເມືອງໃດ (ຫຼື ປະເທດໃດ) ໂດຍກົງ, ໂປຣແກຣມຖາມວ່າພວກເຂົາອາໄສຢູ່ເມືອງດຽວກັນກັບເມືອງທີ່ພວກເຂົາເກີດຫຼືບໍ່. ຄຳຕອບສັ້ນໆຄື 'ແມ່ນ' ຫຼື 'ບໍ່ແມ່ນ'. ຖ້າວ່າຄຳຕອບເປັນ 'ແມ່ນ', ໂປຣແກຣມຈະຂ້າມໄປຖາມຄຳຖາມວ່າບຸກຄົນດັ່ງກ່າວເຄີຍໄປອາໄສຢູ່ບ່ອນອື່ນທີ່ບໍ່ແມ່ນເມືອງນີ້ ຫຼື ບໍ (ຄຳຖາມທີ D.21). ຖ້າຄຳຕອບເປັນ 'ບໍ່ແມ່ນ', ໂປຣແກຣມຈະສືບຕໍ່ຄຳຖາມ ເພື່ອກຳນົດວ່າບຸກຄົນນັ້ນເກີດຢູ່ໃສ.




**ຄຳຖາມ:** D.16. ເກີດຢູ່ປະເທດລາວ ຫຼື ຕ່າງປະເທດ – *<ຊື່> ເກີດຢູ່ປະເທດລາວ ຫຼື ຕ່າງປະເທດ?*

**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາໃນກໍລະນີທີ່ ສະຖານທີ່ເກີດຕ່າງຈາກເມືອງທີ່ກຳລັງສຳຫຼວດຢູ່. ຄຳຕອບຂອງຄຳຖາມນີ້ບົ່ງບອກເຖິງ ບຸກຄົນເກີດຢູ່ໃນປະເທດລາວ ຫຼື ຕ່າງປະເທດ, ເພື່ອຈະກຳນົດຄຳຖາມທີ່ຈະໄປຕໍ່. ຖ້າວ່າບຸກຄົນເກີດຢູ່ພາຍໃນປະເທດລາວ, ໂປຣແກຣມຈະຂ້າມໄປຄຳຖາມ ເພື່ອຖາມສະຖານທີ່ເກີດຢູ່ພາຍໃນປະເທດລາວແມ່ນຢູ່ໃສ (ຄຳຖາມທີ D.19 ແລະ D.120). ຖ້າວ່າບຸກຄົນທີ່ບໍ່ໄດ້ເກີດຢູ່ພາຍໃນປະເທດລາວ, ໂປຣແກຣມຈະສືບຕໍ່ຖາມປະເທດເກີດ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກຄຳຕອບວ່າບຸກຄົນເກີດຢູ່ປະເທດ ຫຼື ເກີດຢູ່ຕ່າງປະເທດ.




**ຄຳຖາມ:** D.17. ປະເທດເກີດ – *<ຊື່> ເກີດຢູ່ປະເທດໃດ?*

**ຈຸດປະສົງ:** ຄຳຖາມນີ້ຖືກຖາມສາລັບບຸກຄົນທີ່ບໍ່ໄດ້ເກີດຢູ່ໃນປະເທດລາວ.

**ວິທີການບັນທຶກຄຳຕອບ:** ເລືອກປະເທດທີ່ກຳນົດໄວ້ໃນລາຍການຄຳຕອບ. ນີ້ແມ່ນປະເທດເກີດຂອງຄົນທີ່ເກີດຢູ່ຕ່າງປະເທດທີ່ມາອາໄສຢູ່ປະເທດລາວຫຼາຍກວ່າໝູ່.

ຖ້າວ່າປະເທດເກີດບໍ່ມີຢູ່ໃນລາຍການຄຳຕອບ. ເລືອກ 'ປະເທດ ອື່ນໆ'. ຈາກນັ້ນຈະສາມາດເລືອກປະເທດເກີດໄດ້ທຸກປະເທດໃນລາຍການຄຳຕອບ ໃນຄຳຖາມທີ D.18. ນອກຈາກນັ້ນ, ຂ້າມໄປຄຳຖາມທີ D.21.




**ຄຳຖາມ:** D.18. ປະເທດອື່ນໆ – *<ຊື່> ເກີດຢູ່ປະເທດໃດ?*

**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາ ຖ້າວ່າເລືອກຄຳຕອບ 'ປະເທດອື່ນໆ' ໃນຄຳຖາມທີ D.14. ຈື່ໄວ້ວ່າຄຳຖາມນີ້ເປັນໜັງສືສີຂຽວ, ໝາຍຄວາມວ່ານັກເດີນສຳຫຼວດບໍ່ຈຳເປັນຕ້ອງຖາມຄຳຖາມນີ້ (ຄຳຕອບແມ່ນໄດ້ຈາກຄຳຖາມກ່ອນໜ້ານີ້ແລ້ວ).

**ວິທີການບັນທຶກຄຳຕອບ:** ເພື່ອຊອກຫາປະເທດເກີດໄດ້ໄວຂຶ້ນ, ນັກເດີນສຳຫຼວດສາມາດນຳໃຊ້ຄຳສັ່ງຄົ້ນຫາ (ສັນຍາລັກແວ່ນຂະຫຍາຍຢູ່ດ້ານຂວາມືໃນແຖບເບື້ອງເທິງຂອງໜ້າຈໍ). ຖ້າວ່າບໍ່ຮູ້ປະເທດເກີດ, ເລືອກຄຳຕອບ 'ບໍ່ຮູ້'.

**ຄຳຖາມ:** D.19. ແຂວງເກີດ – *<ຊື່> ເກີດຢູ່ແຂວງໃດ?*




**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາຄຳຖາມທາອິດ ໃນກໍລະນີບຸກຄົນທີ່ເກີດຢູ່ພາຍໃນປະເທດລາວ, ແຕ່ວ່າຕ່າງເມືອງກັບເມືອງທີ່ກຳລັງສຳຫຼວດຢູ່.

**ນິຍາມ:** ຈື່ໄວ້ວ່າສະຖານທີ່ເກີດໝາຍເຖິງ ສະຖານທີ່ອາໄສຢູ່ເປັນປະຈຳຂອງແມ່ໃນເວລາທີ່ບຸກຄົນທີ່ຖືກຖາມເຖິງເກີດ. ບາງຄັ້ງຜູ້ເປັນແມ່ອາດຈະຍ້າຍຈາກເຂດຊົນນະບົດ ມາເກີດລູກຢູ່ໃນເຂດຕົວເມືອງເນື່ອງຈາກການບໍລິການທີ່ດີກວ່າ. ປະເພດການຍົກຍ້າຍນີ້ ແມ່ນໃນໄລຍະສັ້ນເທົ່ານັ້ນ ແລະ ບໍ່ໃຫ້ສັບສົນກັບການຍົກຍ້າຍ.

**ວິທີການບັນທຶກຄຳຕອບ:** ເລືອກແຂວງທີ່ບຸກຄົນດັ່ງກ່າວເກີດຕາມລາຍການຄາຕອບ.

**ຄຳຖາມ:** D.20. ເມືອງເກີດ – *<ຊື່> ເກີດຢູ່ເມືອງໃດ?*




ຈຸດປະສົງ: ເມືອງເກີດແມ່ນເກັບກຳເພື່ອກຳນົດໄດ້ການຍົກຍ້າຍຊ່ວງຊີວິດຮອດລະດັບເມືອງ.

**ວິທີການບັນທຶກຄຳຕອບ:** ເລືອກລາຍການຄຳຕອບຊື່ເມືອງ ທີ່ສະແດງໃນຄຳຖາມນີ້ ເຊິ່ງໄດ້ລວມເອົາສະເພາະເມືອງທີ່ຂຶ້ນກັບແຂວງທີ່ເລືອກໃນຄຳຖາມກ່ອນໜ້ານີ້ (ຄຳຖາມທີ D.19).

**ໝາຍເຫດ:** ຖ້າຊື່ເມືອງບ່ອນທີ່ບຸກຄົນເກີດບໍ່ປະກົດໃນລາຍການຄຳຕອບ, ແມ່ນເລືອກແຂວງເກີດຜິດ. ໃນກໍລະນີດັ່ງກ່າວ, ກັບຄືນໄປຄຳຖາມກ່ອນໜ້ານີ້ ແລະ ກວດຄືນວ່າໄດ້ເລືອກແຂວງຖືກຕ້ອງແລ້ວ ຫຼື ບໍ.

**ຄຳຖາມ:** D.21. ອາໄສຢູ່ບ່ອນອື່ນມາກ່ອນ – *ກ່ອນທີ່ຈະມາອາໄສຢູ່ບ່ອນນີ້, <ຊື່> ເຄີຍອາໄສຢູ່ບ່ອນອື່ນທີ່ບໍ່ແມ່ນເມືອງນີ້ 6 ເດືອນ ຂຶ້ນໄປ ມາກ່ອນບໍ?*




**ຈຸດປະສົງ:** ເຖິງແມ່ນວ່າ ເມືອງທີ່ກຳລັງສຳຫຼວດຢູ່ ແລະ ເມືອງເກີດແມ່ນເມືອງດຽວກັນ, ບຸກຄົນອາດຍ້າຍໄປເມືອງອື່ນ (ຫຼື ປະເທດອື່ນ) ໃນໄລຍະເວລາໃດໜຶ່ງ. ຄຳຖາມນີ້ເກັບກຳວ່າເຫດການດັ່ງກ່າວເກີດຂຶ້ນ ຫຼື ບໍ.

**ນິຍາມ:** ການສາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແມ່ນມີຄວາມສົນໃຈພຽງແຕ່ວ່າ ການຍົກຍ້າຍໝາຍເຖິງການປ່ຽນທີ່ຢູ່ອາໄສລະຫວ່າງເມືອງ (ຫຼື ປະເທດ) ແລະ ກຳນົດເວລາ 6 ເດືອນ ຂຶ້ນໄປ. ດັ່ງນັ້ນ, ນັກເດີນສຳຫຼວດຕ້ອງຖາມຄຳຖາມໃຫ້ຄົບຖ້ວນຕາມທີ່ສະແດງໃນໜ້າຈໍ, ໃຫ້ກວມເອົາຄຳເວົ້າທີ່ວ່າ ‘ທີ່ບໍ່ແມ່ນເມືອງນີ້’ ແລະ ‘6 ເດືອນ ຂຶ້ນໄປ’. ບຸກຄົນອາດເຄີຍອາໄສຢູ່ເມືອງນີ້ມາກ່ອນ ແຕ່ໄດ້ຍ້າຍໄປອາໄສຢູ່ບ່ອນອື່ນເປັນເວລາ 6 ເດືອນ ຂຶ້ນໄປ ເຊັ່ນ: ໄປເຮັດວຽກ, ໄປຮຽນ, ໄປຢູ່ກັບຄອບຄົວ ແລະ ອື່ນໆ ແມ່ນຖືວ່າເຄີຍອາໄສຢູ່ບ່ອນອື່ນມາກ່ອນ.

**ວິທີການບັນທຶກຄຳຕອບ:** ຖ້າບຸກຄົນພຽງແຕ່ອາໄສຢູ່ໃນທີ່ຢູ່ອາໄສອື່ນ ເປັນເວລາ 6 ເດືອນ ຂຶ້ນໄປ, ແຕ່ຍັງຢູ່ໃນເມືອງດຽວກັນ, ດັ່ງນັ້ນ, ຄຳຕອບແມ່ນ ‘ບໍ່ແມ່ນ, ອາໄສຢູ່ແຕ່ເມືອງນີ້’.

**ໝາຍເຫດ:** ຖ້າວ່າຄຳຕອບແມ່ນ ‘ບໍ່ແມ່ນ’, ຈາກນັ້ນ ໂປຣແກຣມຈະຂ້າມໄປຫາຄຳຖາມກ່ຽວກັບການຮູ້ໜັງສື ແລະ ການສຶກສາ. ນອກຈາກນັ້ນ, ຄຳຖາມເພີ່ມຕື່ມກ່ຽວກັບການຍົກຍ້າຍແມ່ນຈະຖືກຖາມ.

**ຄຳຖາມ:** D.22. ຈຳນວນປີທີ່ອາໄສຢູ່ເມືອງນີ້ – *<ຊື່> ອາໄສຢູ່ເມືອງທີ່ເຮົາຢູ່ປັດຈຸບັນໄດ້ຈັກປີແລ້ວ ນັບຕັ້ງແຕ່ລາວຍ້າຍເຂົ້າມາຄັ້ງສຸດທ້າຍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມສະເພາະບັນດາບຸກຄົນທີ່ເຄີຍອາໄສຢູ່ເມືອງອື່ນມາກ່ອນທີ່ບໍ່ແມ່ນເມືອງທີ່ກຳລັງຖືກສຳຫຼວດຢູ່.

**ນິຍາມ:** ແມ່ນການົດເອົາຈານວນປີ ທີ່ບຸກຄົນໄດ້ຍ້າຍເຂົ້າມາອາໄສຢູ່ເມືອງນີ້ຄັ້ງສຸດທ້າຍ ເຖິງແມ່ນວ່າລາວຈະເຄີຍຍ້າຍເຂົ້າມາອາໄສຢູ່ເມືອງນີ້ຫຼາຍຄັ້ງກໍ່ຕາມ.

**ວິທີການບັນທຶກຄຳຕອບ:** ບັນທຶກຈຳນວນປີທີ່ບຸກຄົນໄດ້ອາໄສຢູ່ໃນເມືອງທີ່ກາລັງສຳຫຼວດຢູ່, ບັນທຶກເປັນປີເຕັມ. ຍົກຕົວຢ່າງ, ສຳລັບຜູ້ທີ່ອາໄສຢູ່ເມືອງຢູ່ປັດຈຸບັນໜ້ອຍກວ່າ 1 ປີ, ບັນທຶກ '0'. ຖ້າບຸກຄົນເກີດຢູ່ໃນເມືອງ 'A', ຈາກນັ້ນອາໄສຢູ່ບ່ອນນັ້ນເປັນເວລາ 28 ປີ ແລະ ປັດຈຸບັນອາໄສຢູ່ເມືອງ 'B' ເປັນເວລາ 2 ປີ, ພິມ '2' ສຳລັບຈຳນວນປີທີ່ອາໄສຢູ່ເມືອງ 'B'. ໃຫ້ຈື່ໄວ້ວ່າ ມັນບໍ່ຈຳເປັນສຳລັບບຸກຄົນທີ່ຕ້ອງອາໄສຢູ່ໃນທີ່ຢູ່ອາໄສດຽວກັນ ຢູ່ໃນເມືອງດັ່ງກ່າວ.

ສຳລັບກໍລະນີທີ່ບຸກຄົນອາໄສຢູ່ຫຼາຍກວ່າ 97 ປີ ໃນເມືອງດຽວກັນ ຫຼື ຜູ້ຕອບສຳພາດບໍ່ຮູ້ຄຳຕອບ. ກົດໃສ່ປຸ່ມລາຍການຢູ່ເບື້ອງຂວາມືຂອງຊ່ອງຄຳຕອບ ແລະ ເລືອກໜຶ່ງໃນຕົວເລືອກຄຳຕອບທີ່ມີຢູ່ໃນທີ່ນີ້.

**ຄຳຖາມ:** D.23. ສະຖານທີ່ອາໄສຢູ່ກ່ອນໜ້ານີ້ – *ກ່ອນໜ້ານີ້ ອາໄສຢູ່ປະເທດລາວ ຫຼື ຕ່າງປະເທດ?*




**ຈຸດປະສົງ:** ຄຳຕອບໃນຄາຖາມນີ້ ແມ່ນເພື່ອກຳນົດຄຳຖາມຕໍ່ໄປ. ຖ້າວ່າສະຖານທີ່ອາໄສຢູ່ກ່ອນໜ້ານີ້ຂອງບຸກຄົນ ແມ່ນຢູ່ຕ່າງປະເທດ, ໂປຣແກຣມຈະສືບຕໍ່ຖາມກ່ຽວກັບປະເທດທີ່ອາໄສຢູ່ກ່ອນໜ້ານີ້. ຖ້າວ່າສະຖານທີ່ອາໄສຢູ່ກ່ອນໜ້າໃນແມ່ນຢູ່ພາຍໃນປະເທດລາວ. ໂປຣແກຣມຈະຂ້າມໄປຄຳຖາມກ່ຽວກັບສະຖານທີ່ພາຍໃນປະເທດລາວ (D.26 ແລະ D.27).

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກຄຳຕອບວ່າກ່ອນໜ້ານີ້ບຸກຄົນອາໄສຢູ່ປະເທດລາວ ຫຼື ຢູ່ຕ່າງປະເທດ.

**ຄຳຖາມ:** D.24. ປະເທດອາໄສຢູ່ກ່ອນໜ້ານີ້ – *ກ່ອນໜ້ານີ້ <ຊື່> ອາໄສຢູ່ປະເທດໃດ?*




**ຈຸດປະສົງ:** ຄຳຖາມນີ້ມີຄວາມຄ້າຍຄືກັນກັບຄາຖາມກ່ຽວກັບປະເທດເກີດ (D.17) ເພື່ອສຶກສາເບິ່ງການຍົກຍ້າຍລະຫວ່າງປະເທດ.

**ວິທີການບັນທຶກຄຳຕອບ:** ເລືອກປະເທດທີ່ກຳນົດໄວ້ໃນລາຍການຄຳຕອບ ປະເທດທີ່ມີທີ່ເປັນໄປໄດ້ຫຼາຍທີ່ສຸດ. ຖ້າວ່າປະເທດທີ່ອາໄສຢູ່ກ່ອນໜ້ານີ້ບໍ່ມີໃນລາຍການຄຳຕອບ, ໃຫ້ເລືອກ 'ປະເທດອື່ນໆ'. ໃນກໍລະນີນີ້, ນັກເດີນສຳຫຼວດສາມາດເລືອກປະເທດທີ່ຜູ້ຖືກສຳພາດກ່າວເຖິງໄດ້ທັງໝົດໃນຄຳຖາມທີ D.25. ນອກຈາກນັ້ນ, ໂປຣແກຣມຈະຂ້າມໄປຄຳຖາມທີ D.28.

**ຄຳຖາມ:** D.25. ປະເທດອື່ນທີ່ອາໄສຢູ່ກ່ອນໜ້ານີ້ – *ກ່ອນໜ້ານີ້ <ຊື່> ອາໄສຢູ່ປະເທດໃດ?*




ຈຸດປະສົງ: ນີ້ແມ່ນຄຳຖາມທີ່ຕາມມາ ຖ້າວ່າທ່ານເລືອກ 'ປະເທດອື່ນໆ' ໃນຄຳຖາມທີ D.24. ຈື່ໄວ້ວ່າຄຳຖາມນີ້ເປັນໜັງສືສີຂຽວ, ໝາຍຄວາມວ່າບໍ່ຈຳເປັນຕ້ອງຖາມຄຳຖາມນີ້ (ຄຳຕອບແມ່ນໄດ້ຈາກຄຳຖາມກ່ອນໜ້ານີ້ແລ້ວ).

**ວິທີການບັນທຶກຄຳຕອບ:** ເພື່ອຊອກຫາປະເທດທີ່ອາໄສຢູ່ກ່ອນໜ້ານີ້ໄດ້ໄວຂຶ້ນ, ນັກເດີນສຳຫຼວດສາມາດນຳໃຊ້ຄຳສັ່ງຄົ້ນຫາ (ສັນຍາລັກແວ່ນຂະຫຍາຍຢູ່ດ້ານຂວາມືໃນແທບເບື້ອງເທິງຂອງໜ້າຈໍ). ຖ້າວ່າບໍ່ຮູ້ປະເທດທີ່ອາໄສຢູ່ກ່ອນນີ້, ເລືອກຄຳຕອບ 'ບໍ່ຮູ້'.

**ຄຳຖາມ:** D.26. ແຂວງທີ່ອາໄສຢູ່ກ່ອນໜ້ານີ້ – *ກ່ອນໜ້ານີ້ <ຊື່> ອາໄສຢູ່ແຂວງໃດ?*




**ຈຸດປະສົງ:** ນີ້ແມ່ນຄຳຖາມທີ່ຕາມມາຄຳຖາມທຳອິດ ໃນກໍລະນີບຸກຄົນທີ່ກ່ອນໜ້ານີ້ອາໄສຢູ່ສະຖານທີ່ອື່ນຢູ່ພາຍໃນປະເທດລາວ ເພື່ອໃຫ້ຮູ້ກ່ຽວກັບການຍົກຍ້າຍລະຫວ່າງແຂວງ.

**ວິທີການບັນທຶກຄຳຕອບ:** ເລືອກແຂວງທີ່ບຸກຄົນດັ່ງກ່າວອາໄສຢູ່ກ່ອນໜ້ານີ້ຕາມລາຍການຄຳຕອບ.

**ຄຳຖາມ:** D.27. ເມືອງທີ່ອາໄສຢູ່ກ່ອນໜ້ານີ້ – *ກ່ອນໜ້ານີ້ <ຊື່> ອາໄສຢູ່ເມືອງໃດ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນການຍົກຍ້າຍຂອງພົນລະເມືອງລະຫວ່າງເມືອງ.

**ວິທີການບັນທຶກຄຳຕອບ:** ລາຍການຄຳຕອບຊື່ເມືອງ ທີ່ສະແດງໃນຄຳຖາມນີ້ ເຊິ່ງຈະລວມເອົາສະເພາະເມືອງທີ່ຂຶ້ນກັບແຂວງທີ່ຖືກເລືອກໃນຄຳຖາມກ່ອນໜ້ານີ້ (ຄຳຖາມທີ D.23).

**ຄຳຖາມ:** D.28. ເຫດຜົນຂອງການຍົກຍ້າຍ – ສາເຫດຕົ້ນຕໍທີ່ <ຊື່> ຍ້າຍມາຢູ່ເມືອງນີ້ແມ່ນຫຍັງ?




**ຈຸດປະສົງ:** ຄຳຖາມນີ້ຈະຖືກຖາມພຽງແຕ່ສຳລັບບຸກຄົນ ຜູ້ທີ່ເຄີຍອາໄສຢູ່ເມືອງອື່ນທີ່ບໍ່ແມ່ນເມືອງທີ່ຖືກສຳຫຼວດຢູ່ ໃນເວລາໃດໜຶ່ງ ເພື່ອໃຫ້ຮູ້ເຫດຜົນທີ່ບຸກຄົນຕັດສິນໃຈຍົກຍ້າຍບ່ອນຢູ່ອາໄສ.

**ນິຍາມ:** ປົກກະຕິແລ້ວຄົນເຮົາມີຫຼາຍເຫດຜົນທີ່ເຮັດໃຫ້ເຂົາເຈົ້າປ່ຽນບ່ອນຢູ່ອາໄສ. ສຳລັບຄຳຖາມນີ້, ນັກເດີນສຳຫຼວດຕ້ອງຖາມຫາເຫດຜົນຕົ້ນຕໍຂອງການຍົກຍ້າຍ. ໂປຣແກຣມສະໜອງລາຍງານຄຳຕອບທີ່ເປັນໄປໄດ້ໃຫ້ເລືອກດັ່ງຕໍ່ໄປນີ້:

- ປ່ຽນບ່ອນເຮັດວຽກ/ທຸລະກິດ. ບຸກຄົນໄດ້ວຽກເຮັດໃນເມືອງນີ້ (ເຂດໃກ້ຄຽງ) ແລະ ຕັດສິນໃຈຍ້າຍສຳລັບເຫດຜົນນີ້. ຫຼື ບຸກຄົນຖືກມອບໝາຍໃຫ້ໂດຍນາຍຈ້າງໃຫ້ມາປະຈຳຢູ່ບ່ອນເຮັດວຽກໃໝ່ໃນເມືອງນີ້ (ເຂດໃກ້ຄຽງ). ຫຼື ກິດຈະກຳທາງດ້ານທຸລະກິດໃນເມືອງນີ້ (ເຂດໃກ້ຄຽງ) ພັກດັນໃຫ້ລາວຍ້າຍມາຢູ່ເມືອງທີ່ຖືກສຳຫຼວດຢູ່.
- ຊອກຫາວຽກເຮັດ. ບຸກຄົນຍ້າຍມາເພື່ອຊອກວຽກເຮັດໃນເມືອງນີ້. ນີ້ໝາຍຄວາມວ່າເມື່ອຕອນລາວຍ້າຍເຂົ້າມາລາວຍັງບໍ່ທັນມີວຽກເຮັດໃນເມືອງນີ້ເທື່ອ.
- ການສຶກສາ. ເຫດຜົນຕົ້ນຕໍຂອງການຍ້າຍມາແມ່ນເພື່ອຕາມຫາການສຶກສາໃນທຸກລະດັບ: ຊັ້ນກຽມປະຖົມ, ປະຖົມ, ມັດທະຍົມ, ວິທະຍາໄລ ຫຼື ມະຫາວິທະຍາໄລ. ເຫດຜົນນີ້ສ່ວນໃຫຍ່ແມ່ນເປັນເຫດຜົນຂອງໄວໜຸ່ມໃນເກນອາຍຸເຂົ້າໂຮງຮຽນຈົນເຖິງອາຍຸ 25 ປີ.
- ແຕ່ງດອງ. ບຸກຄົນຍ້າຍມາຢູ່ເມືອງປັດຈຸບັນຍ້ອນການແຕ່ງດອງ. ຕົວຢ່າງ, ຍ້າຍມາຢູ່ກັບພໍ່ແມ່ຂອງຄູ່ຜົວ/ເມຍຫຼັງຈາກແຕ່ງດອງ.
- ຍ້າຍມາຢູ່ກັບສະມາຊິກຄອບຄົວ. ບຸກຄົນຍ້າຍມາຢູ່ເມືອງນີ້ເພາະວ່າສະມາຊິກຄອບຄົວໜຶ່ງ ຫຼື ຫຼາຍຄົນອາໄສຢູ່ເມືອງນີ້ ແລະ ເປັນເຫດຜົນທີ່ຍ້າຍມາຢູ່ກັບພວກເຂົາ. ນີ້ອາດແມ່ນກໍລະນີທີ່ (ຕົວຢ່າງ, ຜົວ/ເມຍ ຫຼື ລູກ) ຜູ້ທີ່ຍ້າຍມາອາໄສຢູ່ກັບສະມາຊິກຄອບຄົວ (ຕົວຢ່າງ, ຫົວໜ້າຄົວເຮືອນ) ຜູ້ທີ່ຍ້າຍມາຢູ່ເມືອງນີ້ກ່ອນແລ້ວ. ຫຼື ລູກຊາຍ ຫຼື ລູກສາວທີ່ຍ້າຍມາອາໄສຢູ່ກັບພໍ່ແມ່ເພື່ອດູແລ້ເຂົາເຈົ້າເວລາແກ່ເຖົ້າ.
- ຍ້າຍມານຳຄອບຄົວ. ນີ້ແມ່ນເຫດຜົນເມື່ອສະມາຊິກຄອບຄົວ (ຕົວຢ່າງ, ຫົວໜ້າຄົວເຮືອນ) ມີເຫດຜົນທີ່ຕ້ອງຍ້າຍມາເມືອງນີ້ (ຕົວຢ່າງ, ເຫດຜົນດ້ານວຽກເຮັດງານທຳ) ແລະ ບຸກຄົນ (ຕົວຢ່າງ, ຜົວ/ເມຍ ຫຼື ລູກ) ຍ້າຍມາພ້ອມກັນກັບສະມາຊິກຄອບຄົວ.
- ຊື້/ປຸກເຮືອນໃໝ່; ເພື່ອທີ່ຢູ່ອາໄສດີກວ່າ. ຄົນເຮົາອາດຍ້າຍໄປຢູ່ເມືອງອື່ນ ຖ້າວ່າພວກເຂົາສາມາດຫາທີ່ຢູ່ອາໄສທີ່ດີກວ່າໃນທີ່ນັ້ນ ຫຼື ສາມາດປຸກເຮືອນໃໝ່.
- ບ້ານຍ້າຍ. ດ້ວຍເຫດຜົນພາຍນອກ, ທັງໝົດບ້ານແມ່ນຖືກຍ້າຍ, ຍົກຕົວຢ່າງ, ໄພທຳມະຊາດ, ໂຄງການກໍ່ສ້າງຂະໜາດໃຫຍ (ຕົວຢ່າງ, ເຂື່ອນໄຟຟ້າ) ຫຼື ການປ່ຽນແປງຂອງສາຍນ້ຳ.
- ຂັດແຍ່ງ/ສົງຄາມ. ບຸກຄົນໜີມາອາໄສຢູ່ເມືອງນີ້ຍ້ອນສົງຄາມ ຫຼື ຄວາມຂັດແຍ່ງ, ຊຶ່ງອາດກ່ຽວຂ້ອງກັບການເກີດຄວາມຮຸນແຮງ ຫຼື ສິ່ງທີ່ເກີດຂຶ້ນໃນອະດີດ.
- ໄພທຳມະຊາດ. ເຫດຜົນນີ້, ຍົກຕົວຢ່າງ, ໃນກໍລະນີທີ່ຢູ່ອາໄສຂອງບຸກຄົນຖືກທຳລາຍເນື່ອງຈາກນ້ຳຖ້ວມ, ພາຍຸ, ແຜ່ນດິນໄຫວ ແລະ ອື່ນໆ.
- ເຫດຜົນອື່ນໆ. ເຫດຜົນອື່ນໃດໆກໍ່ໄດ້. ຕ້ອງໝັ້ນໃຈວ່າເຫດຜົນນີ້ບໍ່ກົງກັບໜຶ່ງໃນທາງເລືອກຄຳຕອບທີ່ກ່າວມາກ່ອນໜ້ານີ້.

**ວິທີການບັຍທຶກຄຳຕອບ:** ເລືອກບັນທຶກຄຳຕອບເຫດຜົນຂອງການຍົກຍ້າຍຕາມທີ່ຜູ້ຖືກສຳພາດຕອບ.

**ຄຳຖາມ:** D.29. ອາໄສຢູ່ລາວກ່ອນໜ້ານີ້ 10 ປີ – *ກ່ອນໜ້ານີ້ 10 ປີ <ຊື່> ອາໄສຢູ່ປະເທດລາວ ຫຼື ຕ່າງປະເທດ?*

**ຄຳຖາມ:** D.30. ປະເທດທີ່ອາໄສຢູ່ກ່ອນໜ້ານີ້ 10 ປີ – *ກ່ອນໜ້ານີ້ 10 ປີ <ຊື່> ອາໄສຢູ່ປະເທດໃດ?*

**ຄຳຖາມ:** D.31. ປະເທດອື່ນທີ່ອາໄສຢູ່ກ່ອນໜ້ານີ້ 10 ປີ – *ກ່ອນໜ້ານີ້ 10 ປີ <ຊື່> ອາໄສຢູ່ປະເທດໃດ?*

**ຄຳຖາມ:** D.32. ແຂວງທີ່ອາໄສຢູ່ກ່ອນໜ້ານີ້ 10 ປີ – *ກ່ອນໜ້ານີ້ 10 ປີ <ຊື່> ອາໄສຢູ່ແຂວງໃດ?*

**ຄຳຖາມ:** D.33. ເມືອງທີ່ອາໄສຢູ່ກ່ອນໜ້ານີ້ 10 ປີ – *ກ່ອນໜ້ານີ້ 10 ປີ <ຊື່> ອາໄສຢູ່ເມືອງໃດ?*




**ຈຸດປະສົງ:** ຄຳຖາມເຫຼົ່ານີ້ຖາມສະເພາະບຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປ ຜູ້ທີ່ເຄີຍອາໄສຢູ່ເມືອງອື່ນມາກ່ອນ ເພື່ອສຶກສາເບິ່ງການຍົກຍ້າຍທຽບໃສ່ໄລຍະເວລາສະເພາະໃດໜຶ່ງຄື 10 ປີ ກ່ອນໜ້ານີ້.

**ວິທີການບັນທຶກຄຳຕອບ:** ມີຂັ້ນຕອນຄືກັນກັບຄຳຖາມກ່ຽວກັບສະຖານທີ່ອາໄສຢູ່ກ່ອນໜ້ານີ້ (D.23 ຫາ D.27) ແມ່ນນຳມາໃຊ້ໃນທີ່ນີ້, ແຕ່ວ່າໃນທີ່ນີ້ແມ່ນຖາມສະຖານທີ່ອາໄສຢູ່ໃນຕອນ 10 ປີກ່ອນໜ້ານີ້ວ່າອາໄສຢູ່ປະເທດລາວ ຫຼື ຕ່າງປະເທດ, ຈາກນັ້ນ, ໂດຍອີງຕາມຄຳຕອບທີ່ໄດ້ຈະຖາມປະເທດ ຫຼື ແຂວງ ແລະ ເມືອງທີ່ອາໄສຢູ່ໃນຕອນ 10 ປີ ກ່ອນໜ້ານີ້.

**ຄຳຖາມ:** D.34. ການຮູ້ໜັງສືພາສາລາວ – *<ຊື່> ສາມາດອ່ານ ແລະ ຂຽນພາສາລາວ ຂໍ້ຄວາມສັ້ນໆ ໃຫ້ໝູ່ໄດ້ບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນມີຈຸດປະສົງເພື່ອເກັບສະພາບການຮູ້ໜັງສືສຳລັບພາສາລາວຂອງພົນລະເມືອງ.

**ນິຍາມ:** ອີງການສະຫະປະຊາຊາດ (UN) ໃຫ້ນິຍາມການຮູ້ໜັງສືວ່າ: 'ຜູ້ທີ່ຮູ້ໜັງສືແມ່ນບຸກຄົນທີ່ສາມາດອ່ານ ແລະ ຂຽນປະຂໍ້ຄວາມສັ້ນໆທີ່ໃຊ້ໃນຊີວິດປະຈຳວັນໄດ້. ຜູ້ກືກໜັງສືແມ່ນບຸກຄົນທີ່ບໍ່ສາມາດອ່ານ ແລະ ຂຽນຂໍ້ຄວາມດັ່ງກ່າວໄດ້ດ້ວຍຄວາມເຂົ້າໃຈ. ດັ່ງນັ້ນ, ບຸກຄົນທີ່ສາມາດອ່ານ ແລະ ຂຽນໄດ້ພຽງແຕ່ຕົວເລກ ແລະ ຊື່ຂອງລາວເອງເທົ່ານັ້ນ ຕ້ອງຈັດຢູ່ໃນກຸ່ມກືກໜັງສື, ຜູ້ທີ່ສາມາດອ່ານໄດ້ ແຕ່ຂຽນບໍ່ເປັນກໍ່ເຊັ່ນດຽວກັນ, ລວມທັງຜູ້ທີ່ອ່ານ ແລະ ຂຽນໄດ້ແຕ່ວະລີເດີມໆທີ່ຈົດຈຳໄວ້ເທົ່ານັ້ນ'.

**ວິທີການບັນທຶກຄຳຕອບ:** ຄຳຖາມທີ D.34 ແມ່ນຖາມການຮູ້ໜັງສືສຳລັບພາສາລາວ ຫຼື ພາສາອື່ນ, ດັ່ງນັ້ນ, ຖ້າບຸກຄົນສາມາດອ່ານ ແລະ ຂຽນພາສາໃດໜຶ່ງໄດ້, ຄຳຕອບຄວນເປັນ 'ໄດ້'.

**ໝາຍເຫດ:** ມັນມີຄວາມສຳຄັນທີ່ຈາຕ້ອງຈື່ໄວ້ວ່າ ຄົນຈຳນວນໜຶ່ງອາດບໍ່ເຄີຍເຂົ້າໂຮງຮຽນ, ແຕ່ພວກເຂົາໄດ້ຮຽນຮູ້ວິທີອ່ານ ແລະ ຂຽນພາສາລາວ. ບຸກຄົນອື່ນໆອາດເຄີຍຮຽນການອ່ານ ແລະ ຂຽນພາສາລາວ ຜ່ານລະບົບກປະຊາສຶກສາສຳລັບຜູ້ໃຫຍ່ (ການສຶກສາທີ່ບໍ່ເປັນທາງການ ຫຼື ໂຄງການທີ່ຄ້າຍຄືກັນ). ຜູ້ຄົນຈຳນວນໜຶ່ງອາດເຄີຍເຂົ້າໂຮງຮຽນ ແຕ່ບໍ່ຮູ້ວ່າພວກເຂົາສາມາດອ່ານ ແລະ ຂຽນພາສາລາວໄດ້ ຫຼື ບໍ, ຫຼື ໄດ້ສູນເສຍຄວາມສາມາດຕາມການເວລາ. ບໍ່ມີການທົດສອບການຮູ້ໜັງສືໃນໄລຍະການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ.

**ໝາຍເຫດ:** ຄຳຖາມທີ D.34 ແມ່ນຖາມສະເພາະຜູ້ທີ່ມີອາຍຸ 6 ປີ ຂຶ້ນໄປ ເທົ່ານັ້ນ.

**ຄຳຖາມ:** D.35. ການເຂົ້າໂຮງຮຽນ – *<ຊື່> ເຄີຍເຂົ້າໂຮງຮຽນບໍ?*

**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳສະພາບ ແລະ ໂອກາດໃນການສຶກສາຂອງພົນລະເມືອງ.




**ນິຍາມ:** ການເຂົ້າໂຮງຮຽນແມ່ນຖືກນິຍາມວ່າເປັນການເຂົ້າໂຮງຮຽນໂດຍທົ່ວໄປໃນສະຖາບັນການສຶກສາ ແລະ ຫຼັກສູດທີ່ຖືກຮັບຮອງ ຂອງພາກລັດ ຫຼື ເອກະຊົນ, ສຳລັບການຈັດຕັ້ງການຮຽນການສອນໃນທຸກລະດັບຂອງການສຶກສາໃນເວລາສຳຫຼວດ. ການສິດສອນທັກສະສະເພາະໃດໜຶ່ງທີ່ບໍ່ແມ່ນສ່ວນໜຶ່ງຂອງລະບົບການສຶກສາຢູ່ພາຍໃນປະເທດ (ຕົວຢ່າງ, ການຝຶກອົບຮົມການບໍລິການພາຍໃນໂຮງງານ) ແມ່ນບໍ່ພິຈາລະນາ "ເຂົ້າໂຮງຮຽນ" ສຳລັບຈຸດປະສົງຂອງການສຳຫຼວດ. ຊຶ່ງພຽງແຕ່ການສຶກສາທີ່ເປັນທາງການເທົ່ານັ້ນຈຶ່ງລວມເຂົ້າເປັນການເຂົ້າໂຮງຮຽນ.

**ວິທີການບັນທຶກຄຳຕອບ:** ບຸກຄົນທີ່ກຳລັງເຂົ້າຮຽນຢູ່ໃນປັດຈຸບັນ ແມ່ນຕ້ອງພິຈາລະນາເປັນ 'ເຄີຍເຂົ້າໂຮງຮຽນ', ດັ່ງນັ້ນ 'ເຄີຍ' ຕ້ອງຖືກເລືອກ. ໃນກໍລະນີດັ່ງກ່າວ, ມີຫຼາຍຄຳຖາມກ່ຽວກັບການສຶກສາຈະຖືກຖາມ. ຖ້າວ່າ ຄຳຕອບໃນຄຳຖາມນີ້ແມ່ນ 'ບໍ່ເຄີຍ', ໂປຣແກຣມຈະຂ້າມໄປຄຳຖາມທີ D.39.

**ໝາຍເຫດ:** ຄຳຖາມທັງໝົດທີ່ກ່ຽວກັບການສຶກສາແມ່ນຖາມສະເພາະຜູ້ທີ່ມີອາຍຸ 3 ປີ ຂຶ້ນໄປ ເທົ່ານັ້ນ.

**ຄຳຖາມ:** D.36. ລະດັບການສຶກສາທີ່ຮຽນຈົບສູງສຸດ – *ລະດັບການສຶກສາສູງສຸດທີ່ <ຊື່> ຮຽນຈົບຂັ້ນໃດ?*

ຈຸດປະສົງ: ຄຳຖາມນີ້ແມ່ນເພື່ອເກັບກຳລະດັບການສຶກສາຂອງພົນລະເມືອງ ໂດຍອີງໃສ່ລະດັບການສຶກສາສູງສຸດທີ່ຮຽນຈົບ.

**ນິຍາມ:** ຄຳຖາມທີ D.35 ໝາຍເຖິງລະດັບການສຶກສາສູງສຸດທີ່ບຸກຄົນຮຽນຈົບ. ມັນມີຄວາມສຳຄັນທີ່ຕ້ອງພິຈາລະນາພຽງແຕ່ລະດັບການສຶກສາທີ່ໄດ້ຮັບການຢັ້ງຢືນໂດຍຄຸນວຸທິທີ່ເປັນທີ່ຍອມຮັບ.

**ວິທີການບັນທຶກຄຳຕອບ:** ເລືອກລະດັບການສຶກສາຕາມທີ່ຜູ້ຖືກສຳພາດຕອບ. ຖ້າບຸກຄົນຕອບວ່າ 'ມະຫາວິທະຍາໄລ', ໃຫ້ຖາມຢ້ຳວ່າ ປະລິນຍາຕີ, ປະລິນຍາໂທ ຫຼື ສູງກວ່າ.

**ໝາຍເຫດ:** ຜູ້ຖືສຳພາດອາດຈະບໍ່ຄຸ້ນເຄີຍກັບລະດັບການສຶກສາທີ່ໄດ້ກຳນົດໃນລາຍການຕົວເລືອກຄຳຕອບ. ດ້ວຍເຫດຜົນດັ່ງກ່າວ, ນັກເດີນສຳຫຼວດອາດຈະອ່ານລາຍການຄຳຕອບຕ່າງໆໃຫ້ລາວຟັງ.

ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອກຳນົດລະດັບການສຶກສາ ຫຼື ຂັ້ນການສຶກສາທຽບເທົ່າ ໃຫ້ເໝາະສົມ ສຳລັບບັນດາບຸກຄົນທີ່ໄດ້ຮັບການສຶກສາພາຍໃຕ້ລະບົບທີ່ແຕກຕ່າງກັນ ຫຼື ຈົບຈາກຕ່າງປະເທດ ແລະ ໃນສະຖານະການທີ່ລະບົບການສຶກສາອາດມີການປ່ຽນແປງຕາມການເວລາ. ຖ້າວ່າ ລະດັບການສຶກສາທີ່



ຮຽນຈົບ ແມ່ນຢູ່ພາຍໃຕ້ລະບົບການສຶກສາທີ່ແຕກຕ່າງກັນ, ນັກເດີນສຳຫຼວດຕ້ອງຫາວິທີເພື່ອປຽບທຽບກັບລະບົບການສຶກສາຂອງປະເທດລາວໃນປັດຈຸບັນ.

ຕ້ອງກວດຢ່າງສະໝ່ຳສະເໝີວ່າ ລະດັບການສຶກສາມີຄວາມສອດຄ່ອງກັບອາຍຸຂອງບຸກຄົນ ຫຼື ບໍ່. ເດັກອາຍຸ 7 ປີ ບໍ່ສາມາດຈົບມະຫາວິທະຍາໄລໄດ້, ໃນຄວາມເປັນຈິງແລ້ວ, ບໍ່ສາມາດຈົບຊັ້ນມັດທະຍົມດ້ວຍຊ້ຳ.

ຖ້າວ່າ ບຸກຄົນຕອບວ່າ 'ບໍ່ມີການສຶກສາ' ຫາ 'ມັດທະຍົມຕອນປາຍ ມ7', ໂປຣແກຣມຈະຂ້າມໄປຄຳຖາມກ່ຽວກັບການເຂົ້າໂຮງຮຽນໃນປັດຈຸບັນ (D.38). ສຳລັບຄຳຕອບ 'ວິຊາຊີບຊັ້ນຕົ້ນ' ຫາ 'ປະລິນຍາເອກ/ສູງກວ່າ', ຄຳຖາມເພື່ອເຕີມຈະຖືກຖາມກ່ຽວກັບສາຂາວິຊາຫຼັກທີ່ຮຽນຈົບ.

**ຄຳຖາມ:** D.37. ສາຂາວິຊາຮຽນຈົບ – *ສາຂາວິຊາຫຼັກທີ <ຊື່> ຮຽນຈົບສູງສຸດແມ່ນວິຊາຫຍັງ?*




**ຈຸດປະສົງ:** ຂໍ້ມູນກ່ຽວກັບລະດັບການສຶກສາ ແລະ ສາຂາວິຊາທີ່ຮຽນຈົບ ແລະ ຝຶກອົບຮົມ ແມ່ນມີຄວາມສຳຄັນສຳລັບການກວດສອບຄວາມສອດຄ່ອງກັນລະຫວ່າງ ການສະໜອງ ແລະ ຄວາມຕ້ອງການແຮງງານທີ່ມີວຸດທິ, ມີຄວາມຊ່ຽວຊານສະເພາະດ້ານໃນຕະຫຼາດແຮງງານ. ມັນຍັງມີຄວາມສຳຄັນຫຼາຍສຳລັບການວາງແຜນ ແລະ ການຄວບຄຸມການຜະລິດໃນແຕ່ລະລະດັບ, ປະເພດ ແລະ ສາຂາຂອງສະຖາບັນການສຶກສາ ແລະ ໂຄງການການຝຶກອົບຮົມ.

**ວິທີການບັນທຶກຄຳຕອບ:** ສຳລັບຄາຖາມນີ້, ນັກເດີນສຳຫຼວດຕ້ອງໄດ້ພິມຄຳຕອບຂອງຜູ້ຖືກສຳພາດໃສ່. ອະທິບາຍສາຊາວິຊາຮຽນໃຫ້ຖືກຕ້ອງ ແລະ ໃສ່ລາຍລະອຽດໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ຍົກຕົວຢ່າງ, ຖ້າວ່າ ບຸກຄົນຮຽນເປັນອາຈານສອນ, ໃຫ້ຖາມວ່າຮຽນເປັນອາຈານສອນສາຂາໃດ, ຕົວຢ່າງ, ຄູຄະນິດສາດ, ຄູດົນຕີ, ຄູພາສາ (ອັງກິດ, ຈີນ ...). ຖ້າວ່າ ບັນດາບຸກຄົນຮຽນຈົບຫຼາຍສາຂາວິຊາ, ຖາມວ່າສາຂາໃດມີຄວາມສຳຄັນທີ່ສຸດສຳລັບວຽກທີ່ເຂົາເຈົ້າເຮັດຢູ່. ຖ້າວ່າ ບັນດາບຸກຄົນນັ້ນບໍ່ໄດ້ເຮັດວຽກ, ໃຫ້ຖາມວ່າສາຂາໃດມີຄວາມສຳຄັນທີ່ສຸດສຳລັບເຂົາເຈົ້າ.

**ຄຳຖາມ:** D.38. ການເຂົ້າໂຮງຮຽນໃນປັດຈຸບັນ – *<ຊື່> ກຳລັງຮຽນຢູ່ແມ່ນບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳສະພາບການເຂົ້າໂຮງຮຽນໃນປັດຈຸບັນຂອງພົນລະເມືອງ. ຂໍ້ມູນກ່ຽວກັບການເຂົ້າໂຮງຮຽນໃນປັດຈຸບັນແມ່ນເກັບກຳສຳລັບທຸກຄົນທີ່ມີອາຍຸ 3 ຫາ 50 ປີ. ຈື່ໄວ້ວ່າ ຄຳຖາມທີ D.38 ແມ່ນກ່ຽວກັບການເຂົ້າໂຮງຮຽນໃນປັດຈຸບັນ. ຄຳຖາມກ່ອນໜ້ານີ້ແມ່ນລະດັບການສຶກສາສູງສຸດທີ່ຮຽນຈົບ, ຊຶ່ງອາດຈະຈົບໄປແລ້ວຫຼາຍປີກ່ອນໜ້ານີ້.

**ນິຍາມ:** 'ໂຮງຮຽນ' ໝາຍເຖິງການສຶກສາພາດລັດ, ເອກະຊົນ, ໂຮງຮຽນສະເພາະ, ວິທະຍາໄລ, ມະຫາວິທະຍາໄລທີ່ ຫຼື ໂຮງຮຽນວິຊາຊີບ ທີ່ໄດ້ຮັບການຮັບຮອງຢ່າງເປັນທາງການ, ການເຂົ້າໂຮງຮຽນອາດເປັນເຂົ້າເຕັມເວລາ ຫຼື ເຂົ້າເວລາຫວ່າງຈາກວຽກປົກກະຕິ. ໂຮງຮຽນປົກກະຕິທາງການເລີ່ມຕົ້ນຫ້ອງທຳອິດໃນຊັ້ນປະຖົມ. ເຖິງຢ່າງໃດກໍ່ຕາມ, ໃນການສຳຫຼວດຄັ້ງນີ້, ຫ້ອງກຽມປະຖົມ ແລະ ອະນຸບານ ແມ່ນນັບເອົາເປັນການເຂົ້າໂຮງຮຽນປົກກະຕິ. ການສິດສອນທັກສະສະເພາະໃດໜຶ່ງທີ່ບໍ່ແມ່ນສ່ວນໜຶ່ງຂອງລະບົບການສຶກສາຢູ່ພາຍໃນປະເທດ (ຕົວຢ່າງ, ການຝຶກອົບຮົມຫຼັກສູດການບໍລິການໃຫ້ພະນັກງານ, ການຝຶກອົບຮົມທັກສະດ້ານຄອມພິວເຕີໃນວິທະຍາໄລ) ແມ່ນບໍ່ນັບເປັນ 'ການເຂົ້າໂຮງຮຽນ' ສຳລັບຈຸດປະສົງຂອງການສຳຫຼວດຄັ້ງນີ້.

**ວິທີການບັນທຶກຄຳຕອບ:** ຖ້າວ່າບຸກຄົນກາລັງເຂົ້າໂຮງຮຽນຢູ່ ບັນທຶກຄາຕອບ “ແມ່ນ”, ຖ້າບໍ່ໄດ້ກາລັງເຂົ້າໂຮງຮຽນຢູ່ ບັນທຶກຄຳຕອບ “ບໍ່ແມ່ນ”.

**ຄຳຖາມ:** D.39. ຊັ້ນຮຽນ/ປີຮຽນທີ່ກຳລັງເຂົ້າຮຽນຢູ່ – *<ຊື່> ກຳລັງຮຽນຢູ່ ຊັ້ນ ຫຼື ປີ ໃດ?*

**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳສະພາບຂອງເຂົ້າຮຽນຮຽນໃນປັດຈຸບັນຂອງພົນລະເມືອງວ່າຮຽນຢູ່ໃນຊັ້ນໃດ.

**ນິຍາມ:** ຂໍ້ມູນທີ່ເກັບດ້ວຍຄຳຖາມນີ້ ໝາຍເຖິງຊັ້ນຮຽນ ຫຼື ປີຮຽນ ຂອງການສຶກສາທີ່ສະມາຊິກຂອງຄົວເຮືອນກຳລັງເຂົ້າຮຽນຢູ່. ມັນຖາມທຸກຄົນທີ່ມີອາຍຸ 3 ຫາ 50 ປີ ແລະ ຜູ້ທີ່ປັດຈຸບັນແມ່ນກຳລັງເຂົ້າໂຮງຮຽນຢູ່ ດັ່ງທີ່ໄດ້ຕອບໃນຄຳຖາມທີ D.38.




**ວິທີການບັນທຶກຄຳຕອບ:** ບັນທຶກຄຳຕອບຕາມການຕອບຂອງຜູ້ຖືກສຳພາດ.

**ໝາຍເຫດ:** ລາຍການຕົວເລືອກຄຳຕອບແມ່ນຄືກັນກັບຄຳຖາມກ່ຽວກັບລະດັບການສຶກສາສູງສຸດ (D.36), ຍົກເວັ້ນຄຳຕອບທຳອິດ (ບໍ່ເຄີຍເຂົ້າໂຮງຮຽນ) ບໍ່ມີໃນຄຳຖາມນີ້. ຜູ້ຕອບສຳພາດອາດຈະບໍ່ຄຸ້ນເຄີຍກັບລະດັບການສຶກສາທີ່ໄດ້ກຳນົດໃນລາຍການທາງເລືອກຄຳຕອບ. ດ້ວຍເຫດຜົນດັ່ງກ່າວ, ນັກເດີນສຳຫຼວດອາດຈະອ່ານລາຍການຄຳຕອບຕ່າງໆໃຫ້ລາວຟັງ.

**ຄຳຖາມ:** D.40. ສາຂາວິຊາທີ່ກຳລັງຮຽນຢູ່ – *ສາຂາວິຊາທີ່ <ຊື່> ກຳລັງຮຽນຢູ່ແມ່ນວິຊາຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມສະເພາະຜູ້ທີ່ກຳລັງຮຽນຢູ່ໃນລະດັບວິຊາຊີບ ແລະ ການສຶກສາຂັ້ນສູງ ເພື່ອໃຫ້ຮູ້ວ່າຄົນທີ່ຈະຮຽນຈົບໃນອະນາຄົດອັນໃກ້ນີ້ແມ່ນຈະມີທັກສະໃນດ້ານໃດແດ່.

**ວິທີການບັນທຶກຄຳຕອບ:** ອະທິບາຍສາຂາວິຊາທີ່ຮຽນໃຫ້ຖືກຕ້ອງ ແລະ ໃສ່ລາຍລະອຽດໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ຍົກຕົວຢ່າງ, ຖ້າວ່າ ບຸກຄົນຮຽນເປັນອາຈານສອນ, ໃຫ້ຖາມວ່າຮຽນເປັນອາຈານສອນສາຂາໃດ, ຕົວຢ່າງ, ຄູຄະນິດສາດ, ຄູດົນຕີ, ຄູພາສາ (ອັງກິດ, ຈີນ...). ຖ້າວ່າ ບັນດາບຸກຄົນກຳລັງຮຽນຫຼາຍສາຂາວິຊາ, ຖາມວ່າສາຂາໃດມີຄວາມສຳຄັນທີ່ສຸດ.

**ຄຳຖາມ:** D.41. ການນຳໃຊ້ອິນເຕີເນັດ – *ໃນອາທິດຜ່ານມາ <ຊື່> ໃຊ້ອິນເຕີເນັດ ໃນຄອມພິວເຕີຕັ້ງໂຕະ, ໂນດບຸກ ຫຼື ໂທລະສັບ ຢູ່ເຮືອນ ຫຼື ຢູ່ບ່ອນອື່ນໆບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມສະເພາະຜູ້ທີ່ມີອາຍຸ 15 ປີ ຂຶ້ນໄປ. ຄຳຖາມແມ່ນຖາມກ່ຽວກັບການນຳໃຊ້ອິນເຕີເນັດ, ບໍ່ແມ່ນກ່ຽວກັບການຄອບຄອງໂທລະສັບ, ແທບເລັດ ຫຼື ຄອມພິວເຕີ.

**ວິທີການບັນທຶກຄຳຕອບ:** ຖ້າວ່າບຸກຄົນໃຊ້ອິນເຕີເນັດຢູ່ບ່ອນເຮັດວຽກ, ແຕ່ບໍ່ໄດ້ໃຊ້ຢູ່ເຮືອນ, ຄຳຕອບແມ່ນ ‘ໃຊ້’.

**ຄຳຖາມ:** D.42.A. ການປູກຝັງ – *ໃນອາທິດຜ່ານມາ <ຊື່> ໄດ້ເຮັດກະສິກຳ ຫຼື ປູກຜັກ ຢູ່ສວນຄົວ ຫຼື ບໍ?*
**ຄຳຖາມ:** D.42.B. ການລ້ຽງສັດ – *ໃນອາທິດຜ່ານມາ <ຊື່> ໄດ້ລ້ຽງ ຫຼື ເບິ່ງແຍງ ສັດລ້ຽງໃນຟາມ, ໄກ່ ຫຼື ສັດປີກ ຫຼື ບໍ?*
**ຄຳຖາມ:** D.42.C. ການປະມົງ – *ໃນອາທິດຜ່ານມາ <ຊື່> ໄດ້ໄປຫາປາ ຫຼື ເກັບຫອຍ ຫຼື ສັດນ້ຳ ຫຼື ບໍ?*










**ຈຸດປະສົງ:** ຄຳຖາມທີ D.42 ຫາ D.51 ທັງໝົດແມ່ນກ່ຽວກັບການມີວຽກເຮັດງານທຳ ແລະ ການຫວ່າງງານ ສຳລັບພົນລະເມືອງທີ່ມີອາຍຸ 10 ປີ ຂຶ້ນໄປ. ໃນ 3 ຄຳຖາມ D.42.A ຫາ D.42.C, ເປັນການສອບຖາມເພື່ອໃຫ້ຮູ້ວ່າ ສະມາຊິກຂອງຄົວເຮືອນໄດ້ມີສ່ວນຮ່ວມໃນກິດຈະກຳທາງດ້ານກະສິກຳປະເພດໃດໜຶ່ງ ຫຼື ບໍ. ຊຶ່ງປະກອບດ້ວຍການປູກຝັງ – ເຖິງແມ່ນວ່າປູກສຳລັບສວນຄົວກໍ່ຕາມ – (D.42.A) ຫຼື ການລຽງ ຫຼື ດູແລຟາມສັດ ຫຼື ສັດປີກ – ເຖິງແມ່ນວ່າພຽງແຕ່ສອງສາມໂຕກໍ່ຕາມ – (D.42.B) ຫຼື ການຫາປາປະເພດໃດໜຶ່ງ ຫຼື ການເພາະລຽງສັດນ້ຳ (D.42.C).

**ນິຍາມ:** ຄຳຖາມດັ່ງກ່າວແມ່ນໝາຍເຖິງວຽກທີ່ໄດ້ເຮັດໃນອາທິດຜ່ານມາກ່ອນການສຳພາດ (ອ້າງອີງເວລາເປັນອາທິດ). ກິດຈະກຳໃດໜຶ່ງໃນສາມປະເພດກະສິກຳ ທີ່ໄດ້ເຮັດບໍ່ຈຳເປັນຕ້ອງເຮັດເຕັມເວລາ. ເຖິງແມ່ນວ່າໄດ້ເຮັດພຽງແຕ່ 1 ຊົ່ວໂມງ ໃນອາທິດຜ່ານມາ ຕົວຢ່າງ, ການເກືອສັດ ກໍ່ນັບເຂົ້າເປັນເວລາເຮັດວຽກ.

ສັດປີກຖືວ່າເປັນສັດລ້ຽງທີ່ຄົນເຮົາລ້ຽງໄວ້ເພື່ອເອົາໄຂ່, ຊີ້ນ ຫຼື ຂົນ. ນອກຈາກໄກ່ແລ້ວ, ຍັງປະກອບດ້ວຍ ໄກ່ງວງ, ເປັດ, ຫ່ານ, ໄກ່ຕ໊ອກ, ນົກກາງແກ ແລະ ອື່ນໆ. ຈື່ໄວ້ວ່າ ຄຳຖາມກ່ຽວກັບກິດຈະກຳການລ້ຽງສັດແມ່ນກຳນົດເອົາສະເພາະສັດລ້ຽງໃນຟາມ, ຊຶ່ງບໍ່ກວມເອົາ ໝາ, ແມວ ແລະ ສັດລ້ຽງໃນເຮືອນອື່ນໆ. ການເພາະລ້ຽງສັດນ້ຳໝາຍເຖິງການລ້ຽງປາ, ກຸ້ງ ແລະ ສັດນ້ຳປະເພດອື່ນໃນໜອງ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດວ່າໄດ້ເຮັດ ຫຼື ບໍ່ໄດ້ເຮັດ.

**ຄຳຖາມ:** D.43. ຂາຍ ຫຼື ຊົມໃຊ້ເອງ – *ພົນຜະລິດກະສິກຳ, ສັດລ້ຽງ ຫຼື ປະມົງ ທີ່ <ຊື່> ຜະລິດນັ້ນ ມີຈຸດປະສົງເພື່ອຂາຍເທົ່ານັ້ນ, ສ່ວນໃຫຍ່ເພື່ອຂາຍ, ເພື່ອການບໍລິໂພກ ຫຼື ຊົມໃຊ້ໃນຄົວເຮືອນ ເທົ່ານັ້ນ?*

ຄຳຖາມນີ້ແມ່ນຈະຖືກຖາມຖ້າວ່າຢ່າງໜ້ອຍໜຶ່ງໃນສາມຄຳຖາມ D.40A ຫາ D.40C ໄດ້ຕອບວ່າ 'ໄດ້ເຮັດ'.




**ຈຸດປະສົງ:** ໃນຄາຖາມນີ້, ການສຳຫຼວດນີ້ຕ້ອງກວດສອບເບິ່ງວ່າບຸກຄົນທີ່ເຮັດກິດຈຳກຳກ່ຽວກັບກະສິກຳ ແມ່ນເຮັດສຳລັບຮັບໃຊ້ພາຍໃນຄົວເຮືອນ ຫຼື ມີຈຸດປະສົງເຮັດເພື່ອຂາຍ. ບາງຄັ້ງຜົນຜະລິດກະສິກຳອາດເປັນໄດ້ທັງຜະລິດເພື່ອຂາຍ ແລະ ບໍລິໂພກພາຍໃນຄົວເຮືອນ.

**ນິຍາມ:** ຄຳຖາມນີ້ມີ 4 ລາຍການຄຳຕອບໃຫ້ເລືອກ. ຄຳຕອບທຳອິດ ແລະ ສຸດທ້າຍແມ່ນເມື່ອຜົນຜະລິດກະສິດັ່ງກ່າວແມ່ນຜະລິດເພື່ອຂາຍຢ່າງດຽວ ຫຼື ເພື່ອບໍລິໂພກຢ່າງດຽວ. ສອງຄຳຕອບເຄິ່ງກາງອອກແບບມາເພື່ອໃນກໍລະນີຜົນຜະລິດແມ່ນເພື່ອຂາຍບາງສ່ວນ ແລະ ບໍລິໂພກບາງສ່ວນ. ຂໍ້ມູນນີ້ແມ່ນບົ່ງບອກເຖິງມີຄວາມສຳຄັນຂອງຜົນຜະລິດກະສິກຳສຳລັບການຄໍ້າປະກັນສະບຽງອາຫານຂອງພົນລະເມືອງ ແລະ ເສດຖະກິດຕະຫຼາດຂອງປະເທດລາວ.

**ວິທີການບັນທຶກຄຳຕອບ:** ບັນທຶກຄຳຕອບຕາມການຕອບຂອງຜູ້ຖືກສາພາດ.

**ຄຳຖາມ:** D.44. ການຈ້າງງານ– *ໃນອາທິດຜ່ານມາ <ຊື່> ໄດ້ເຮັດວຽກທີ່ມີລາຍຮັບ ຢ່າງໜ້ອຍ 1 ຊົ່ວໂມງ ເຊັ່ນ: ວຽກທີ່ໄດ້ຮັບຄ່າຈ້າງ, ທຸລະກິດສ່ວນຕົວ, ວຽກໄດ້ເງິນເດືອນ, ວຽກປະຈຳ, ວຽກເສີມ, ຂາຍເຄື່ອງ, ວຽກການບໍລິການອື່ນໆທີ່ໄດ້ຮັບຄ່າຈ້າງ ຫຼື ບໍ່?*




**ຈຸດປະສົງ:** ຄຳຕາມນີ້ແມ່ນເພື່ອເກັບກຳສະພາບການມີວຽກເຮັດງານທຳຂອງພົນລະເມືອງ.

**ນິຍາມ:** ຄາຖາມທີ D.44 ຫາ D.53 ຖາມກ່ຽວກັບການມີວຽກເຮັດງານທຳໃນໄລຍະທີ່ກຳນົດໄວ, ຊຶ່ງແມ່ນໜຶ່ງອາທິດກ່ອນການສຳພາດ. ວຽກເຮັດ ແລະ ກິດຈະກຳການຜະລິດທຸກຢ່າງແມ່ນຄວນລວມເຂົ້າໃນນີ້, ບໍ່ວ່າຈະເປັນວຽກໃນລະບົບ ແລະ ນອກລະບົບ ຫຼື ກິດຈະກຳທີ່ຖືກຕ້ອງຕາມກົດໝາຍ. ບໍ່ລວມເອົາກິດຈະກຳທີ່ບໍ່ແມ່ນການຜະລິດສິນຄ້າ ແລະ ການບໍລິການ (ຕົວຢ່າງ, ຂໍທານ, ຂີ້ລັກ) ການດູແລຕົນເອງ (ຕົວຢ່າງ, ການແຕ່ງກາຍ ແລະ ອະນາໄມຕົນເອງ) ແລະ ກິດຈະກຳທີ່ຄົນອື່ນເຮັດແທນບໍ່ໄດ້ (ຕົວຢ່າງ, ການນອນ, ການຮຽນ, ກິດຈະກຳໂຕ້ຕອບຂອງຕົນເອງ).

ຄຳຖາມທີ D.44 ເປັນຄຳຖາມທີ່ຍາວ ແລະ ສັບສົນ, ນັກເດີນສຳຫຼວດຕ້ອງໝັ້ນໃຈວ່າໄດ້ຖາມເຕັມປະໂຫຍກ, ຕາມທີ່ສະແດງໃນໜ້າຈໍ. ຖ້າວ່າບໍ່ປະຕິບັດຕາມນີ້, ຜູ້ຕອບສຳພາດອາຈະບໍໄດ້ລວມເອົາວຽກສະເພາະໃດໜຶ່ງ ທີ່ຈຳເປັນຕ້ອງລວມເຂົ້າ.

- ລະບຸຢ່າງຈະແຈ້ງວ່າ 'ເຮັດວຽກໄດ້ຄ່າຈ້າງ ຫຼື ກຳໄລ' ມັນມີຄວາມສຳຄັນຫຼາຍທີ່ຕ້ອງຈຳແນກວຽກສ້າງລາຍໄດ້ອອກຈາກວຽກສຳລັບຊົມໃຊ້ເອງ. ຄຳຕອບຂອງຄຳຖາມນີ້ແມ່ນເນັ້ນໃສ່ວຽກທີ່ໄດ້ຄ່າຈ້າງ ຫຼື ກຳໄລ.
- ວຽກທີ່ໄດ້ຮັບຄ່າຈ້າງ ແມ່ນບຸກຄົນໄດ້ຮັບການຈ່າຍຄ່າແຮງງານຈາກບຸກຄົນອື່ນ ຫຼື ບໍລິສັດ ຈາກວຽກທີ່ພວກເຂົາເຮັດ. ເຮັດວຽກເພື່ອກຳລັງໄລແມ່ນແມ່ນບຸກຄົນຂາຍສິນຄ້າ ຫຼື ການບໍລິການ ແລະ ສ້າງກຳລັງຫຼັງຈາກຫັກຕົ້ນທຶນ.
- ລະບຸຢ່າງຈະແຈ້ງວ່າ 'ເປັນເວລາຢ່າງໜ້ອຍໜຶ່ງຊົ່ວໂມງ'; ຖ້າບໍ່ດັ່ງນັ້ນ, ຜູ້ຄົນອາດບໍ່ພິຈາລະນາການເຮັດ

ວຽກເປັນເວລາສັ້ນໆ ເປັນການເຮັດວຽກ. ໃນສະຖິຕິແຮງງານ, ປະລິມານວຽກເທົ່າໃດກໍ່ຕາມແມ່ນນັບໝົດ, ເຖິງແມ່ນວ່າພຽງຊົ່ວໂມງດຽວກໍ່ຕາມ.

- ຂໍ້ມູນຕ້ອງອ້າງອີງເຖິງເວລາໜຶ່ງອາທິດ. ຊຶ່ງແມ່ນໜຶ່ງອາທິດກ່ອນມື້ສຳພາດ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.

**ຄຳຖາມ:** D.45. ພັກວຽກຊົ່ວຄາວ – *<ຊື່> ມີວຽກເຮັດປະຈຳ ທີ່ໄດ້ຮັບຄ່າແຮງງານ ຫຼື ທຸລະກິດປະຈຳ, ແຕ່ວ່າ <ຊື່> ໄດ້ຂາດ ຫຼື ພັກຊົ່ວຄາວ ເຊັ່ນ: ປ່ວຍ, ລາພັກ, ເກີດລູກ ແລະ ອື່ນໆ ແມ່ນບໍ່?*




**ຈຸດປະສົງ:** ໂດຍບັງເອີນ, ມັນອາດເກີດຂຶ້ນໄດ້ວ່າຜູ້ທີ່ມີວຽກເຮັດງານທຳປົກກະຕິ ແຕ່ວ່າດ້ວຍເຫດຜົນໃດໜຶ່ງ, ເຂົາເຈົ້າອາດບໍ່ໄດ້ເຮັດວຽກໃນໄລຍະເວລາໜຶ່ງອາທິດທີ່ອ້າງອີງເຖິງ. ມີຄຳຖາມເພີ່ມຕື່ມທີ່ອະນຸຍາດໃຫ້ລວມເອົາຄົນເຫຼົ່ານີ້ເຂົ້າເປັນກຸ່ມຄົນທີ່ມີວຽກເຮັດ.

**ນິຍາມ:** ເຫດຜົນຂອງການພັກວຽກຊົ່ວຄາວອາດແມ່ນ, ຍົກຕົວຢ່າງ, ບໍ່ສະບາຍ ຫຼື ເຈັບປ່ວຍ, ໃນວັນພັກ ຫຼື ວັນພັກປະຈຳປີ, ອອກວຽກ, ຝຶກອົບຮົມ, ປະທ້ວງ, ຖືກໃຫ້ຢຸດວຽກຊົ່ວຄາວ, ເກີດລູກ ຫຼື ພັກຕອນເປັນພໍ່ໃໝ່ ແລະ ອື່ນໆ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.

**ຄຳຖາມ:** D.46. ຊ່ວຍວຽກທຸລະກິດຄອບຄົວ – *ໃນອາທິດຜ່ານມາ <ຊື່> ໄດ້ຊ່ວຍທຸລະກິດຄົວເຮືອນທີ່ບໍ່ໄດ້ຮັບຄ່າແຮງງານບໍ?*




**ຈຸດປະສົງ:** ຫຼາຍຄົນອາດຊ່ວຍວຽກສະມາຊິກຄອບຄົວ ຫຼື ສະມາຊິກຄົວເຮືອນ ໃນທຸລະກິດໃດໜຶ່ງທີ່ເປີດໂດຍສະມາຊິກຄອບຄົວ ຫຼື ຄົວເຮືອນ, ຫຼື ອາຊີບໃນການຊ່ວຍເຫຼືອສະມາຊິກຄອບຄົວ ຫຼື ຄົວເຮືອນທີ່ເປັນລູກຈ້າງ ຫຼື ຕາມສັນຍາແບບອິດສະຫຼະ. ພວກເຂົາບໍ່ໄດ້ຮັບຄ່າຈ້າງປົກກະຕິ, ເຊັ່ນຄ່າແຮງ ຫຼື ເງິນເດືອນ, ໃນທາງກົງກັນຂ້າມພວກເຂົາອາດໄດ້ຜົນປະໂຫຍດຈາກກຳໄລຂອງທຸລະກິດ ຫຼື ຈາກລາຍໄດ້ຂອງຄົນອື່ນ. ພວກເຂົາບໍ່ໄດ້ຕັດສິນໃຈຕໍ່ບັນຫາສຳຄັນຂອງບໍລິສັດ ຫຼື ຮັບຜິດຊອບຕໍ່ກັບມັນ. ຄຳຖາມນີ້ອະນຸຍາດໃຫ້ລວມເອົາວຽກປະເພດເຫຼົ່ານີ້ເຂົ້າເປັນພົນລະເມືອງທີ່ມີວຽກເຮັດງານທຳ.

ນິຍາມ: ຊ່ວຍທຸລະກິດຄົວເຮືອນທີ່ບໍ່ໄດ້ຮັບຄ່າແຮງງານປະກອບດ້ວຍ:

- ເມຍຊ່ວຍຜົວຂອງລາວໃນທຸລະກິດຂອງຜົວໂດຍບໍ່ໄດ້ຮັບຜົນຕອບແທນເປັນເງິນ.
- ສະມາຊິກຄົວເຮືອນຜູ້ໜຸ່ມນ້ອຍເຮັດວຽກໃນທຸລະກິດ ຫຼື ບໍລິສັດຂອງພໍ່ແມ່ໂດຍບໍ່ໄດ້ຮັບຜົນຕອບແທນເປັນເງິນ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດວ່າໄດ້ເຮັດ ຫຼື ບໍ່ໄດ້ເຮັດ.

**ຄຳຖາມ:** D.47. ອາຊີບ – *ວຽກ/ກິດຈະກຳປະເພດໃດທີ່ <ຊື່> ເຮັດຕົ້ນຕໍເປັນປົກກະຕິ ທີ່ສ້າງລາຍຮັບ ຫຼື ກຳໄລ ໃນອາທິດຜ່ານມາ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບອາຊີບຂອງສະມາຊິກຂອງຄົວເຮືອນ ຊຶ່ງເປັນຄຳຖາມໜຶ່ງຂອງການສຳຫຼວດທີ່ມີຄວາມຍາກຫຼາຍ.

**ນິຍາມ:** ອາຊີບໝາຍເຖິງປະເພດຂອງວຽກເຮັດທີ່ຢູ່ໃນຄວາມຮັບຜິດຊອບຂອງບຸກຄົນທີ່ມີວຽກເຮັດງານທຳ, ໂດຍບໍ່ຄຳນຶງເຖິງຂະແໜງການຂອງອົງກອນ ຫຼື ວິສາຫະກິດທີ່ເຮັດວຽກຢູ່. ປະເພດຂອງການເຮັດວຽກນີ້ຄວນໄດ້ຮັບການອະທິບາຍໂດຍຫົວຂໍ້ວຽກເຮັດງານທຳ ແລະ ໜ້າທີ່ຮັບຜິດຊອບຕົ້ນຕໍ ແລະ ໜ້າທີ່ວຽກ.

ຈື່ໄວ້ວ່າມີການພົວພັນກັນຢ່າງເປັນປົກກະຕິລະຫວ່າງວຽກຂອງບຸກຄົນ ແລະ ກິດຈະກຳຂອງອົງກອນ ຫຼື ວິສາຫະກິດທີ່ບຸກຄົນນັ້ນເຮັດວຽກຢູ່ (ຄຳຖາມທີ D.48). ຍົກຕົວຢ່າງ, ພະຍາບານຈະເຮັດວຽກຢູ່ໃນສະຖານບໍລິການສາມາລະນະສຸກ ແລະ ຊາວກະສິກອນຈະເຮັດວຽກຢູ່ໃນຟາມ. ເຖິງຢ່າງໃດກໍຕາມ, ມັນອາດຈະບໍ່ພົວພັນກັນຄືແນວນັ້ນທັງໝົດ. ຍົກຕົວຢ່າງ:

- ຄົນຂັບລົດອາດເຮັດວຽກຢູ່ບໍລິສັດຂົນສົ່ງ. ແຕ່ກໍ່ສາມາດເຮັດວຽກຢູ່ກະຊວງ ຫຼື ບໍລິສັດກໍ່ສ້າງໄດ້ເຊັ່ນກັນ;
- ຄົນເຮັດອາຫານອາດເຮັດວຽກຢູ່ຮ້ານອາຫານ, ແຕ່ກໍ່ສາມາດເຮັດຢູ່ໂຮງແຮມ ຫຼື ອົງກອນໃຫຍ່ໆທີ່ສະໜອງອາຫານໃຫ້ພະນັກງານໄດ້ເຊັ່ນກັນ;
- ສາວທຳຄວາມສະອາດ ອາດເຮັດວຽກສຳລັບຄົວເຮືອນສ່ວນບຸກຄົນ ຫຼື ໃນຮ້ານຂາຍສິນຄ້າ, ທະນາຄານ ຫຼື ໂຮງໝໍ;
- ຜູ້ບໍລິຫານອາດບໍລິຫານຈັດການຮ້ານຄ້າ, ອົງກອນການທ່ອງທ່ຽວ ຫຼື ໂຮງແຮມ.

ຄຳຖາມທີ D.47 ແມ່ນເນັ້ນໃສ່ການອະທິບາຍກ່ຽວກັບວຽກງານທີ່ຄົນເຮັດໂດຍສະເພາະ, ບໍ່ແມ່ນກ່ຽວກັບກິດຈະກຳຂອງອົງກອນ ຫຼື ວິສາຫະກິດ ທີ່ເຂົາເຈົ້າເຮັດວຽກຢູ່. ການຫາຂໍ້ມູນເຫຼົ່ານີ້ສາມາດເຮັດໄດ້ໂດຍການສອບຖາມ (ແລະ ບັນທຶກ) ຫົວຂໍ້ຂອງວຽກ, ເຊັ່ນດຽວກັນກັບໜ້າວຽກຕົ້ນຕໍ ແລະ ຄວາມຮັບຜິດຊອບຂອງບຸກຄົນ. ໃນເວລາທີ່ລາຍງານອາຊີບ, ໃຫ້ສະເພາະເຈາະຈົງເທົ່າທີ່ເປັນເຮັດໄດ້, ດັ່ງນັ້ນ, ພະນັກງານຂອງສູນສະຖິຕິແຫ່ງຊາດ ຈະສາມາດຈັດໝວດອາຊີບໄດ້ຢ່າງຊັດເຈນຕາມການຈັດແບ່ງຂະແໜງອາຊີບຂອງສາກົນ. ການບັນທຶກພຽງແຕ່ຫົວຂໍ້ໃຫຍ່ 'ຜູ້ບໍລິຫານ', 'ຜູ້ໃຊ້ແຮງງານ', 'ພະນັກງານ' ຫຼື 'ຄູສອນ' ບໍ່ໄດ້ໃຫ້ລາຍລະອຽດພຽງພໍເພື່ອເຂົ້າໃຈໜ້າວຽກຂອງບຸກຄົນ. ຕາຕະລາງ 4.1 ໃຫ້ຕົວຢ່າງຂອງຂໍ້ມູນສະເພາະທີ່ຄວນເພີ່ມໃສ່.

ຕາຕະລາງ *4.1:* ຕົວຢ່າງການອະທິບາຍອາຊີບ

| ຫົວຂໍ້ວຽກ | ໜ້າທີ່ ແລະ ຄວາມຮັບຜິດຊອບສະເພາະ |
|---|---|
| ຄູສອນ | ສອນພາອັງກິດຢູ່ໂຮງຮຽນມັດທະຍົມ (ສຳລັບຄູສອນ, ຢ່າລືມຂຽນຂໍ້ມູນກ່ຽວລະດັບຂັ້ນການສຶກສາຂອງໂຮງຮຽນ, ຍົກຕົວຢ່າງ, ປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ, ການສຶກສາຂັ້ນສູງ). |
| ຜູ້ບໍລິຫານ | ບໍລິຫານຈັດການຮ້ານກາເຟ; ຮ້ານອາຫານ; ຮ້ານຂາຍຍ່ອຍ; ທະນາຄານສາຂາທ້ອງຖິ່ນທີ່ມີພະນັກງານ 80 ຄົນ; ພະແນກການຂາຍ / ພະແນກການເງິນ / ພະແນກບູກຄະລາກອນ |
| ພະນັກງານ | ພະນັກງານຮັກສາປຶ້ມ; ສຳລັບການປ້ອນຂໍ້ມູນ; ສຳລັບການບໍລິຫານ; ສຳລັບວຽກງານຫ້ອງການທົ່ວໄປ |

| ຫົວຂໍ້ວຽກ | ໜ້າທີ່ ແລະ ຄວາມຮັບຜິດຊອບສະເພາະ |
|---|---|
| ພະນັກງານຂາຍ / ເຈົ້າຂອງຮ້ານ | ຂາຍເກີບ / ຮ້ານຂາຍເຄື່ອງແຫ້ງ / ເຄື່ອງໃຊ້ຫ້ອງການ / ຮ້ານເຂົ້າຈີ່; ຂາຍໝາກໄມ້ຢູ່ໃນຕະຫຼາດ / ບູດເຄື່ອງດື່ມ |
| ຊາວກະສິກອນ | ເປັນເຈົ້າຂອງຟາມ; ປູກສາລີ / ມັນຝຣັ່ງ / ໝາກໄມ້; ດູແລງົວ / ໄກ່ |
| ກຳມະກອນ / ຜູ້ໃຊ້ແຮງງານ | ເກັບກ່ຽວພືດສວນ; ລ້ຽງສັດ; ອັດບ້ອກ; ລາດຢາງປູທາງ; ທາສີອາຄານ; ຜະລິດຫັດຖະກຳເຄື່ອງໜັງ |
| ຜູ້ຄຸມເຄືອງຈັກ | ພິມໜັງສືພິມ; ຜະລິດຊີມັງ; ຜະລິດແຜ່ນເຫຼັກ: ຄຸມຈັກເລື່ອຍ, ຄຸມເຄືອງເຈາະ |
| ວິສະວະກອນໄຟຟ້າ | ບຳລຸງຮັກສາ ແລະ ສອບແປງລະບົບໄຟຟ້າ |
| ພະນັກງານເສີບ | ເສີບເຄືອງດື່ມໃນຮ້ານກາເຟ |
| ຄົນຂັບລົດ | ລົດບັນທຸກ / ແທກຊີ / ລົດໂດຍສານ |
| ຂາຍເຄືອງຕາມຖະໜົນ | ຂາຍປຸມເປົ້າ / ຖົ່ວ / ໝາກໄມ້ / ດອກໄມ້ |

**ຫຼາຍຄົນອາດເຮັດສອງວຽກ ຫຼື ຫຼາຍກວ່າ ເພື່ອໃຫ້ມີລາຍໄດ້ພຽງພໍສຳລັບຄົວເຮືອນ. ຖ້າວ່າໃນກໍລະນີນີ້, ອາຊີບຄວນໄດ້ຮັບການລາຍງານແມ່ນວຽກທີ່ໃຊ້ເວລາຫຼາຍທີ່ສຸດເປັນວຽກຕົ້ນຕໍ.**

**ວິທີການບັນທຶກຄຳຕອບ:** ຄວາມຫຼາກຫຼາຍຂອງອາຊີບ ມັນຫຼາຍເກີນໄປ ຊຶ່ງບໍ່ສາມາດສ້າງລາຍການທາງເລືອກຄຳຕອບໄດ້ໃນທາງປະຕິບັດໄດ້. ດັ່ງນັ້ນ, ນັກເດີນສຳຫຼວດຕ້ອງໄດ້ຂຽນຄຳຕອບໃສ່ພາຍຫຼັງໄດ້ສອບຖາມເພື່ອໄດ້ລາຍລະອຽດພຽງພໍກ່ຽວກັບອາຊີບຂອງບຸກຄົນ.

**ຄຳຖາມ:** D.48. ຂະແໜງເສດຖະກິດ – *ກິດຈະກຳຫຼັກຂອງທຸລະກິດ/ອົງການ ທີ່ <ຊື່> ໄດ້ເຮັດໃນອາທິດຜ່ານມາ ຜະລິດສິນຄ້າຫຍັງ ຫຼື ໃຫ້ບໍລິການຫຍັງເປັນຕົ້ນຕໍ?*




**ຈຸດປະສົງ:** ຄຳຕອບຂອງຄຳຖາມນີ້ຈະສະໜອງຂໍ້ມູນກ່ຽວກັບຂະແໜງການເສດຖະກິດ ທີ່ສະມາຊິກຄົວເຮືອນເຮັດວຽກຢູ່.

**ນິຍາມ:** 'ກິດຈະກຳຂອງອົງກອນ ຫຼື ວິສາຫະກິດ' ໝາຍເຖິງປະເພດຂອງສິນຄ້າທີ່ຜະລິດ ຫຼື ບໍລິການ ໂດຍຫົວໜ່ວຍທີ່ບຸກຄົນທີ່ເຮັດວຽກຢູ່. ສຳລັບບັນດາຫົວໜ່ວຍທີ່ປະຕິບັດຫຼາຍກວ່າໜຶ່ງກິດຈະກຳແມ່ນກຳນົດເອົາ<u>ກິດຈະກຳຕົ້ນຕໍ</u> ທີ່ເປັນກິດຈະກຳທີ່ມີຈຳນວນຄົນງານທີ່ຫຼາຍທີ່ສຸດຂອງອົງການກອນ ຫຼື ວິສາຫະກິດ ບ່ອນທີ່ຂອງບຸກຄົນເຮັດວຽກຢູ່. ຖ້າບຸກຄົນນັ້ນເຮັດເຮັດວຽກໃຫ້ຕົນເອງ (ຄຳຖາມທີ D.47), ກິດຈະກຳຕົ້ນຕໍຂອງທຸລະກິດຂອງຕົນເອງຄວນຈະຖືກບັນທຶກ.

ໃຫ້ຈື່ໄວ້ວ່າກິດຈະກຳທີ່ຄວນຈະຖືກອະທິບາຍແມ່ນປະເພດຂອງຜົນຜະລິດ ຫຼື ການບໍລິການ ໂດຍອົງການ ຫຼື ວິສາຫະກິດ, ເຊິ່ງບໍ່ຈຳເປັນຕ້ອງເປັນກິດຈະກຳດຽວກັນຂອງບຸກຄົນທີ່ເຮັດວຽກຢູ່ທີ່ນັ້ນ. ຍົກຕົວຢ່າງ, ຄຣີນິກຮັກສາສຸຂະພາບອາດຈະຈ້າງພະນັກງານຮັກສາສຸຂະພາບ (ທ່ານໝໍ, ພະຍາບານ), ແຕ່ຍັງມີຜູ້ບໍລິຫານພະແນກ, ຄົນຂັບລົດ, ພະນັກງານອະນາໄມ, ພະນັກງານທົ່ວໄປ, ແລະ ອື່ນໆ. ໃນເວລາທີ່ລາຍງານກິດຈະກຳຂອງອົງກອນ ຫຼື ວິສາຫະກິດ, ໃຫ້ສະເພາະເຈາະຈົງເທົ່າທີ່ເປັນໄປໄດ້ ເພື່ອໃຫ້ພະນັກງານຂອງສູນສະຖິຕິແຫ່ງຊາດ ສາມາດຈັດໝວດປະເພດຂະແໜງເສດຖະກິດໄດ້ຢ່າງຖືກຕ້ອງ. ກິດຈະກຳທີ່ໄດ້ອະທິບາຍນັ້ນໂດຍປົກກະຕິແລ້ວແມ່ນອົງກອນ ຫຼື ວິສາຫະກິດເປັນ

ຜູ້ເຮັດ ແລະ ສະແດງອອກໂດຍຜະລິດຕະພັນ ຫຼື ການບໍລິການ. ສຳລັບທຸລະກິດການຄ້າ, ນັກເດີນສຳຫຼວດຕ້ອງບັນທຶກບໍ່ວ່າຈະເປັນທຸລະກິດຂາຍສົ່ງ ຫຼື ຂາຍຍ່ອຍ ແລະ ປະເພດຂອງສິນຄ້າທີ່ຊື້ຂາຍ ສະເໝີ. ຕໍ່ໄປນີ້ແມ່ນຕົວຢ່າງຂອງການອະທິບາຍກ່ຽວກັບກິດຈະກຳຂອງອີງການກອນ ແລະ ວິສາຫະກິດ.

- ຂາຍຍ່ອຍ, ຂາຍເກີບ
- ການສຶກສາຊັ້ນປະຖົມ
- ກະສິກຳ, ຟາມ, ປູກຜັກ
- ຟາມສັດ, ລ້ຽງງົວ
- ຮ້ານອາຫານຕາມສັ່ງ
- ຂາຍຍ່ອຍ, ຂາຍໝາກໄມ້ຕາມຖະໜົນ
- ຫາປາ
- ສາທາລະນະສຸກ, ໂຮງໝໍ, ບໍລິການເກີດລູກ
- ຜະລິດໄຟຟ້າ
- ກໍ່ສ້າງທົ່ນທາງ
- ສ້ອມແປງໂທລະສັບ
- ຮ້ານກາເຟ
- ຂາຍຍົກ, ອຸປະກອນກໍ່ສ້າງ

**ວິທີການບັນທຶກຄຳຕອບ:** ຄ້າຍຄືກັນກັບອາຊີບ, ຄວາມຫຼາກຫຼາຍຂອງຂະແໜງເສດຖະກິດ ມັນຫຼາຍເກີນໄປ ຊຶ່ງບໍ່ສາມາດສ້າງລາຍການຕົວເລືອກຄຳຕອບໄດ້ ແລະ ຕ້ອງໄດ້ຂຽນຄຳຕອບໃສ່ຊ່ອງຄຳຕອບທີ່ກຳນົດໃຫ້.

**ຄຳຖາມ:** D.49. ສະຖານະພາບການມີວຽກເຮັດງານທຳ – *ກິດຈະກຳຕົ້ນຕໍທີ່ <ຊື່> ກຳລັງເຮັດນີ້ຈັດຢູ່ປະເພດໃດ?* *<ອ່ານລາຍການຄຳຕອບ>*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອເກັບຂໍ້ມູນກ່ຽວກັບສະຖານະພາບການມີວຽກເຮັດງານທຳຂອງພົນລະເມືອງວ່າຖືກຈັດຢູ່ສະນະປະເພດໃດຂອງການມີວຽກເຮັດງານທຳດັ່ງກ່າວ.

**ນິຍາມ:** ຄຸນລັກສະນະທີ່ສຳຄັນຂອງການເຮັດວຽກແມ່ນປະເພດການໄດ້ຮັບຈັດສັນຂອງບຸກຄົນຢູ່ໃນຫົວໜ່ວຍບ່ອນທີ່ລາວເຮັດວຽກ. ການຈັດສັນນີ້ – ຈະແຈ້ງ ຫຼື ບໍ່ຈະແຈ້ງ – ສາມາດຈຳແນກຕາມຄວາມສ່ຽງທາງດ້ານເສດຖະກິດ ແລະ ປະເພດສິດອຳນາດໃນຫົວໜ່ວຍດັ່ງກ່າວ. ສຳລັບຄຳຖາມທີ D.47, ໄດ້ຈຳແນກປະເພດຂອງຜູ້ອອກແຮງງານອອກເປັນ 5 ປະເພດ ອີງຕາມການໄດ້ຮັບປະເພດການຈັດສັນຂອງພວກເຂົາຈາກຫົວໜ່ວຍທີ່ພວກເຂົາເຮັດວຽກຢູ່:

- *ລູກຈ້າງ* ແມ່ນບຸກຄົນທີ່ເຮັດວຽກໃນໜ້າວຽກຢູ່ບ່ອນທີ່ໄດ້ຮັບການຈັດສັນ (ຈະແຈ້ງ ຫຼື ບໍ່ຈະແຈ້ງ) ຂອງການມີວຽກເຮັດງານທຳ ທີ່ສ້າງລາຍໄດ້ພື້ນຖານໃຫ້ແກ່ບຸກຄົນ ທີ່ເປັນອິດສະຫຼະຈາກລາຍຮັບຂອງຫົວໜ່ວຍທີ່ລາວເຮັດວຽກຢູ່. ລູກຈ້າງໂດຍປົກກະຕິແລ້ວໄດ້ຮັບຄ່າແຮງ ຫຼື ເງິນເດືອນ, ແຕ່ວ່າອາດໄດ້ຮັບຜົນຕອບແທນຈາກການຂາຍ ຫຼື ຜ່ານອັດຕາສ່ວນ, ໂບນັດ ຫຼື ລາຍໄດ້ທາງອ້ອມເຊັ່ນ ອາຫານ, ທີ່ພັກອາໄສ ຫຼື ການຝຶກອົບຮົມ.
- *ຜູ້ປະກອບການອິດສະຫຼະ* ແມ່ນບຸກຄົນທີ່ເຮັດວຽກໃນວຽກເຮັດທີ່ລາຍໄດ້ແມ່ນອີງຕາມກຳໄລຂອງພວກເຂົາໂດຍກົງ. ຜູ້ປະກອບການອິດສະຫຼະອາດເຮັດວຽກຄົນດຽວ (ທາງເລືອກຄຳຕອບທີສອງ) ຫຼື ມີລູກຈ້າງທີ່ໄດ້ຈ່າຍຄ່າແຮງງານ (ທາງເລືອກຄຳຕອບທີສາມ).
- ຄົນທີ '*ຊ່ວຍວຽກທຸລະກິດຄອບຄົວ ຫຼື ຟາມ, ເຮັດວຽກໂດຍບໍ່ໄດ້ຮັບຄ່າຈ້າງ*' ແມ່ນບຸກຄົນຜູ້ທີ່ຖືວຽກເຮັດງານທຳດ້ວຍຕົນເອງໃນສະຖານປະກອບການຕາມຕະຫຼາດທີ່ດຳເນີນໂດຍບຸກຄົນທີ່ກ່ຽວຂ້ອງທີ່ອາໄສຢູ່ໃນ

ຄອບຄົວດຽວກັນ ຫຼື ໃນຄົວເຮືອນອື່ນ ແລະ ຜູ້ທີ່ບໍ່ສາມາດຖືວ່າເປັນຄູ່ຮ່ວມງານໄດ້. ພະນັກງານຄອບຄົວທີ່ປະກອບສ່ວນໃຫ້ວຽກເຮັດແຕ່ບໍ່ໄດ້ຮັບຄ່າຈ້າງ (ແຕ່ປົກກະຕິແລ້ວໄດ້ຮັບຜົນປະໂຫຍດຈາກຜົນກຳໄລທີ່ສ້າງຂຶ້ນ).

- '*ພະນັກງານຕາມສັນຍາ, ທົດລອງວຽກ, ຝຶກງານ*' ປົກກະຕິແລ້ວແມ່ນໄວໜຸ່ມທີ່ເຮັດວຽກເປັນຜູ້ທົດລອງງານ ໃນບໍລິສັດ ຫຼື ອົງການຈັດຕັ້ງຂອງລັດຖະບານເພື່ອຮຽນຮູ້ວຽກ. ໃນກໍລະນີຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ມັນມີຄວາມສຳຄັນວ່າພວກເຂົາໄດ້ຮັບຄ່າຈ້າງສຳລັບວຽກທີ່ພວກເຂົາເຮັດ, ເຖິງແມ່ນວ່າເປັນຈຳນວນໜ້ອຍກໍ່ຕາມ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.




**ຄຳຖາມ:** D.50. ຊອກຫາວຽກເຮັດ– *ໃນ 30 ວັນຜ່ານມາ, <ຊື່> ໄດ້ຊອກຫາວຽກເຮັດ ຫຼື ເລີ່ມຕົ້ນເຮັດທຸລະກິດ ບໍ?*

**ຈຸດປະສົງ:** ຄຳຖາມນີ້ເປັນຄຳຖາມໜຶ່ງເພື່ອການົດເງື່ອໄຂວ່າ ບຸກຄົນຫວ່າງງານ ຫຼື ບໍ.

**ນິຍາມ:** ສຳລັບບຸກຄົນທີ່ບໍ່ໄດ້ເຮັດວຽກໃນອາທິດທີ່ອ້າງອີງເຖິງ, ມີສອງຄຳຖາມເພື່ອກຳນົດວ່າພວກເຂົາຖືກຈັດຢູ່ໃນກຸ່ມ 'ຫວ່າງງານ' ຫຼື ບໍ ໂດຍອີງໃສ່ນິຍາມທີ່ເປັນທາງການ. ເງື່ອນໄຂການຫວ່າງງານອັນທຳອິດແມ່ນ ບຸກຄົນຕ້ອງມີການຊອກຫາວຽກເຮັດ ຫຼື ພະຍາຍາມເລີ່ມຕົ້ນເຮັດທຸລະກິດໃນຊ່ວງໄລຍະເວລາໜຶ່ງເດືອນຜ່ານມາ, ເປັນເວລາໜຶ່ງເດືອນກ່ອນມື້ສຳພາດ.

'ຊອກຫາວຽກເຮັດ ຫຼື ພະຍາຍາມເລີ່ມຕົ້ນເຮັດທຸລະກິດ' ປະກອບດ້ວຍໜຶ່ງ ຫຼື ຫຼາຍກິດຈະກຳເຊັ່ນ:

- ຂຽນໃບສະໝັກຫານາຍຈ້າງ;
- ການລົງທະບຽນຢູ່ອົງການການຈ້າງງານ;
- ກວດເບິ່ງສະຖານທີ່ເຮັດວຽກ;
- ຊອກຫາການຊ່ວຍເຫຼືອຈາກໝູ່ເພື່ອນ ຫຼື ພີ່ນ້ອງ;
- ຊອກຫາທີ່ດິນ, ສະຖານທີ່, ອຸປະກອນ ຫຼື ແຫຼ່ງທຶນເພື່ອສ້າງຕັ້ງວິສາຫະກິດ;
- ຍື່ນຂໍການອະນຸຍາດ ແລະ ໃບອະນຸຍາດ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.




**ຄຳຖາມ:** D.51. ຄວາມພ້ອມທີ່ຈະເຮັດວຽກ – *ຖ້າຫາກມີວຽກເຮັດ ຫຼື ມີໂອກາດໃຫ້ເຮັດທຸລະກິດໃນ 2 ອາທິດຕໍ່ໜ້ານີ້, <ຊື່> ພ້ອມຈະເຮັດບໍ?*

**ຈຸດປະສົງ:** ເງື່ອໄຂທີ່ສອງຂອງການຫວ່າງງານສຳລັບບຸກຄົນທີ່ບໍ່ມີວຽກເຮັດ ເພື່ອຈັດເຂົ້າໃນກຸ່ມ 'ຫວ່າງງານ' ແມ່ນລາວຕ້ອງມີຄວາມພ້ອມສຳລັບວຽກໃນສອງອາທິດຫຼັງຈາກມື້ສຳພາດ.

ຄຳຕອບຂອງຄຳຖາມທີ D.48 ແລະ D.49, ແມ່ນສາມາດກຳນົດໄດ້ວ່າ ສະມາຊິກຄົວເຮືອນທີ່ບໍ່ໄດ້ເຮັດວຽກຈັດຢູ່ໃນກຸ່ມຄົນຫວ່າງງານ ຫຼື ຢູ່ນອກກຳລັງແຮງງານ (ຊຶ່ງລວມມີ ມີວຽກເຮັດງານທຳ ແລະ ຫວ່າງງານ).

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.




**ຄຳຖາມ:** D.52. ເຫດຜົນທີ່ບໍ່ມີວຽກເຮັດ – *ຍ້ອນເຫດຜົນຕົ້ນຕໍຫຍັງທີ່ <ຊື່> ບໍ່ໄດ້ເຮັດວຽກທີ່ໄດ້ຮັບຄ່າແຮງງານ ຫຼື ກຳໄລ ໃນອາທິດຜ່ານມາ?*

**ຈຸດປະສົງ:** ສຳລັບບຸກຄົນທີ່ບໍ່ເຮັດວຽກ, ມັນມີຄວາມສຳຄັນເພື່ອໃຫ້ຮູ້ວ່າເປັນຫຍັງພວກເຂົາຈຶ່ງບໍ່ເຮັດວຽກ.

**ນິຍາມ:** ມັນມີຫຼາຍເຫດຜົນທີ່ສາມາດເປັນໄປໄດ້ – ແລະ ບາງຄັ້ງກໍ່ເປັນເຫດຜົນທີ່ປະສົມກັນ – ວ່າເປັນຫຍັງຜູ້ຄົນຈຶ່ງບໍ່ເຮັດວຽກ. ຕົວຢ່າງ, ເດັກນ້ອຍ ແລະ ນັກຮຽນມີໜ້າທີ່ໃນການຮ່ຳຮຽນໜັງສື, ແມ່ເຮືອນອາດບໍ່ມີເວລາໃນການເຮັດວຽກທີ່ມີລາຍຮັບ, ບຸກຄົນທີ່ເຂົ້າບຳນານ, ບໍ່ສະບາຍ ຫຼື ເຈັບປ່ວຍ ແລະ ບໍ່ມີຄວາມສາມາດໃນການເຮັດວຽກ, ບາງຄົນອາດພົບວ່າກິດຈະກຳການເຮັດວຽກຕາມລະດູການຂອງພວກເຂົາແມ່ນພຽງບໍ່ແລ້ວ, ຄົນທີ່ບໍ່ຕ້ອງການເຮັດວຽກ, ບາງຄົນອາດຈະຄິດວ່າມີໂອກາດໜ້ອຍທີ່ຈະໄດ້ວຽກເຮັດ ແລະ ບໍ່ມີແຮງບັນດານໃຈໃນການຊອກຫາວຽກເຮັດ ຫຼື ຜູ້ຄົນບໍ່ຕ້ອງການນອກເໜືອຈາກການຊ່ວຍເຫຼືອທາງສັງຄົມສຳລັບການເປັນຢູ່ຂອງເຂົາເຈົ້າ.

**ວິທີການບັນທຶກຄຳຕອບ:** ນັກເດີນສາຫຼວດຕ້ອງຖາມຫາເຫດຜົນຕົ້ນຕໍວ່າເປັນຫຍັງຜູ້ຄົນຈຶ່ງບໍ່ເຮັດວຽກ ແລະ ບັນທຶກເຫດຜົນທີ່ສຳຄັນທີ່ສຸດ. ຖ້າເຫດຜົນບໍ່ກົງກັບຄຳຕອບໃດໆໃນ 9 ຕົວເລືອກລາຍການຕອບ, ໃຫ້ເລືອກ 'ເຫດຜົນອື່ນໆ'. ໃນກໍລະນີນີ້, ນັກເດີນສຳຫຼວດຈະຖືກຖາມໃຫ້ລະບຸແຈ້ງເຫດຜົນຂອງການບໍ່ເຮັດວຽກຂອງບຸກຄົນຢູ່ໃນຄຳຖາມທີ D.53.




**ຄຳຖາມ:** D.53. ເຫດຜົນອື່ນໆທີ່ບໍ່ໄດ້ເຮັດວຽກ – *ຍ້ອນເຫດຜົນຕົ້ນຕໍຫຍັງທີ່ <ຊື່> ບໍ່ໄດ້ເຮັດວຽກທີ່ໄດ້ຮັບຄ່າແຮງງານ ຫຼື ກຳໄລ ໃນອາທິດຜ່ານມາ?*

**ຈຸດປະສົງ:** ນີ້ແມ່ນຄຳຖາມມີຕາມມາໃນກໍລະນີເລືອກ 'ເຫດຜົນອື່ນໆ' ໃນຄຳຖາມທີ D.53. ຄຳຖາມເປັນຕົວໜັງສືສີຂຽວ, ຊຶ່ງຮູ້ຄຳຕອບແລ້ວຈາກຄຳຖາມທີ D.53.

**ວິທີການບັນທຶກຄຳຕອບ:** ຂຽນໃຫ້ຖືກຕ້ອງຊັດເຈນໃສ່ຊ່ອງຄຳຕອບເມື່ອໄດ້ຄຳຕອບຂອງຄຳຖາມນີ້.

**ຄຳຖາມ:** D.54.A. ແນະນຳຄຳຖາມກ່ຽວກັບຄວາມພິການ – *ບອກຜູ້ຖືກສຳພາດວ່າພວກເຮົາມີ 6 ຄຳຖາມ ກ່ຽວກັບຄວາມຫຍຸ້ງຍາກຂອງຄົນທີ່ອາດຈະມີ, ທັງໝົດນີ້ມີຄຳຕອບໃຫ້ເລືອກຄືກັນ. ຜູ້ຖືກສຳພາດຄວນຕອບຕາມແຕ່ລະຄຳຖາມດ້ວຍຄຳຕອບ 1 ໃນ 4 ຕົວເລືອກຄື: ບໍ່ – ບໍ່ມີຄວາມຫຍຸ້ງຍາກ, ມີ – ມີຄວາມຫຍຸ້ງຍາກໜ້ອຍໜຶ່ງ, ມີ – ມີຄວາມຫຍຸ້ງຍາກຫຼາຍ ແລະ ບໍ່ສາມາດເຮັດຫຍັງໄດ້.*

**ຄວາມສຳຄັນ:** ນີ້ແມ່ນຄາແນະນາທີ່ນັກເດີນສາຫຼວດຕ້ອງຈື່ໄວ້ໃນໃຈ ແລະ ບອກໃຫ້ຜູ້ຖືກສຳພາດຮູ້. ມັນມີ 6 ຄຳຖາມກ່ຽວກັບປະເພດຂໍ້ຈຳກັດທາງດ້ານໜ້າທີ່ການທີ່ແຕກຕ່າງກັນຂອງຜູ້ຄົນທີ່ປະສົບພົບພໍ້ຢູ່. ມັນມີຄວາມສຳຄັນສຳລັບສະມາຊິກຄົວເຮືອນທີ່ມີອາຍຸ 5 ປີ ຂຶ້ນໄປ, ຄຳຖາມເຫຼົ່ານີ້ຈະຖືກຖາມ ແລະ ຄຳຕອບຂອງຜູ້ຖືກສຳພາດແມ່ນ 1 ໃນ 4 ທາງເລືອກຄຳຕອບ.




ບັນດາບຸກຄົນທີ່ມີຂໍ້ຈຳກັດທາງດ້ານໜ້າທີ່ການຈະມີຄວາມສ່ຽງສູງກວ່າຄົນທົ່ວໄປ ທີ່ຈະປະສົບກັບຂໍ້ຈຳກັດໃນການປະຕິບັດວຽກງານສະເພາະໃດໜຶ່ງ ຫຼື ເຂົ້າຮ່ວມກິດຈະກຳຕ່າງໆ. ກຸ່ມຄົນເຫຼົ່ານີ້ຈະປະກອບມີຜູ້ທີ່ປະສົບກັບຂໍ້ຈຳກັດໃນການເຮັດກິດຈະກຳພື້ນຖານເຊັ່ນ: ການຍ່າງ ຫຼື ການໄດ້ຍິນ, ເຖິງແມ່ນວ່າຂໍ້ຈຳກັດດັ່ງກ່າວຈະຖືກແກ້ໄຂໂດຍການໃຊ້ອຸປະກອນຊ່ວຍເຫຼືອ, ສະພາບແວດລ້ອມທີ່ສະໜັບສະໜູນ ຫຼື ຊັບພະຍາກອນທີ່ອຸດົມສົມບູນ.

ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ຂໍ້ຈຳກັດດ້ານໜ້າທີ່ການແມ່ນຄວາມບົກຜ່ອງດ້ານຮ່າງກາຍ, ຄວາມຮູ້ສຶກ, ຈິດໃຈ ຫຼື ຄວາມບົກຜ່ອງດ້ານອື່ນໆ, ລວມທັງຄວາມພິການທາງສາຍຕາ, ການໄດ້ຍິນ ຫຼື ທາງດ້ານຮ່າງກາຍ ເຊິ່ງມີຜົນກະທົບທາງລົບໃນໄລຍະຍາວຢ່າງຫຼວງຫຼາຍຕໍ່ຄວາມສາມາດໃນການປະຕິບັດກິດຈະກຳປະຈຳວັນ. ມັນເປັນສະພາບທາງດ້ານຮ່າງກາຍ, ຈິດໃຈ ຫຼື ສຸຂະພາບຈິດ ຫຼື ຄວາມບົກຜ່ອງທາງດ້ານຈິດໃຈທີ່ມີຜົນກະທົບຢ່າງຫຼວງຫຼາຍຕໍ່ກິດຈະກຳປະຈຳວັນຂອງບຸກຄົນ ຫຼື ຂໍ້ຈຳກັດບຸກຄົນໃນການປະຕິບັດ ໜຶ່ງ ຫຼື ຫຼາຍກິດຈະກຳໃນຊີວິດທີ່ສຳຄັນເຊັ່ນ: ການດູແລຕົນເອງ, ການດຳເນີນກິດຈະກຳດ້ວຍຕົນເອງ, ການຍ່າງ, ການເບິ່ງເຫັນ, ການໄດ້ຍິນ, ການປາກເວົ້າ, ການຫາຍໃຈ, ການຮຽນຮູ້ ຫຼື ການເຮັດວຽກ ແລະ ການພົວພັນກັບຜູ້ອື່ນ.

ເນື່ອງຈາກຄວາມອ່ອນໄຫວຂອງຫົວຂໍ້ນີ້, ຖາມຄຳຖາມດ້ວຍຄວາມສຸພາບ ແລະ ເຫັນອົກເຫັນໃຈເພື່ອບໍ່ໃຫ້ຄວາມຮູ້ສຶກຂອງຜູ້ຕອບ ແລະ/ຫຼື ສະມາຊິກອື່ນໆໃນຄົວເຮືອນຮູ້ສຶກເຈັບປວດ. ໃນຕອນຕົ້ນ, ອະທິບາຍວ່າຂໍ້ມູນກ່ຽວກັບຄວາມພິການມີຄວາມສຳຄັນຫຼາຍສຳລັບຈຸດປະສົງດັ່ງຕໍ່ໄປນີ້:

- ມັນຈະຊ່ວຍໃຫ້ລັດຖະບານກຳນົດແຜນນະໂຍບາຍ, ຈັດສັນຊັບພະຍາກອນໃຫ້ພຽງພໍ ແລະ ໃຫ້ບໍລິການຊ່ວຍເຫຼືອຄົນພິການ ແລະ ຄອບຄົວຂອງເຂົາເຈົ້າ.
- ມັນຈະຊ່ວຍໃນການໃຊ້ມາດຕະການທີ່ພຽງພໍເພື່ອສະໜອງໂອກາດເທົ່າທຽມກັນໃນດ້ານການສຶກສາ ແລະ ການຈ້າງງານສຳລັບຄົນພິການ.
- ມັນຈະຊ່ວຍເຮັດໃຫ້ການຂົນສົ່ງສາທາລະນະ ແລະ ການບໍລິການສຸຂະພາບສາມາດເຂົ້າເຖິງຄົນພິການໄດ້.

ດັ່ງນັ້ນ, ຂໍ້ມູນກ່ຽວກັບຂໍ້ຈຳກັດດ້ານໜ້າທີ່ການແມ່ນຢູ່ໃນຄວາມສົນໃຈທຳອິດຂອງຄົນທີ່ກຳລັງຊີວິດຢູ່ກັບຄວາມເປັນພິການ. ການໄດ້ມາເຊິ່ງຂໍ້ມູນກ່ຽວກັບຄວາມພິການມັນເປັນໜ້າທີ່ຂອງນັກເດີນສຳຫຼວດ. ມີຄົນພິການຈຳນວນຫຼາຍທີ່ບໍ່ໄດ້ຖືກຈົດນັບວ່າເປັນພົນລະເມືອງພິການໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຄັ້ງທີ່ຜ່ານມາ. ຄັ້ງນີ້ບໍ່ຄວນເກີດຂຶ້ນອີກ! ຢ່າຕັ້ງຂໍ້ສົມມຸດເອງວ່າບໍ່ມີໃຜໃນຄົວເຮືອນມີຂໍ້ຈຳກັດທາງດ້ານໜ້າທີ່ການ. ຖາມຄຳຖາມເຫຼົ່ານີ້ກັບສະມາຊິກຄົວເຮືອນທັງໝົດ ແລະ ຄົ້ນຫາຫາຄຳຕອບໃຫ້ໄດ້.

ສຸດທ້າຍ, ການປະເມີນຂໍ້ຈຳກັດໃນທາງດ້ານໜ້າທີ່ການແມ່ນເຮັດໂດຍຜູ້ຕອບ, ບໍ່ແມ່ນນັກເດີນສຳຫຼວດ! ຢ່າຄິດໄປເອງວ່າ ຖ້າວ່າບຸກຄົນໃດໜຶ່ງເບິ່ງຄ້າຍຄືວ່າແຂງແຮງ ຈະບໍ່ມີຄວາມຫຍຸ້ງຍາກ, ນັ້ນຈະເປັນບັນຫາ. ເພາະສະນັ້ນ, ບໍ່ໃຫ້ຕື່ມຄຳຕອບໃດໆໂດຍບໍ່ໄດ້ຖາມຜູ້ຕອບ. ໃນລະຫວ່າງການຕິດຕາມຂອງນັກກວດກາຂອງ, ນັກກວດກາຈະກວດສອບວ່ານັກເດີນສຳຫຼວດໄດ້ຖາມຄຳຖາມ ແລະ ກວດເບິ່ງຄຳຕອບໄດ້.

**ຄຳຖາມ:** D.55. ຄວາມຫຍຸ້ງຍາກໃນການເບິ່ງເຫັນ – *<ຊື່> ມີຄວາມຫຍຸ້ງຍາກການເບິ່ງເຫັນ ຫຼື ບໍ ເຖິງແມ່ນວ່າຈະໃສ່ແວ່ນຕາກໍ່ຕາມ? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ຄຳຖາມ:** D.56. ຄວາມຫຍຸ້ງຍາກໃນການໄດ້ຍິນ – *<ຊື່> ມີຄວາມຫຍຸ້ງຍາກການໄດ້ຍິນ ຫຼື ບໍ ເຖິງແມ່ນວ່າຈະໃສ່ເຄື່ອງຊ່ວຍກໍ່ຕາມ? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ຄຳຖາມ:** D.57. ຄວາມຫຍຸ້ງຍາກໃນການຍ່າງ – *<ຊື່> ມີຄວາມຫຍຸ້ງຍາກການຍ່າງ ຫຼື ການເຄື່ອນຍ້າຍ ບໍ? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ຄຳຖາມ:** D.58. ຄວາມຫຍຸງຍາກໃນການຈື່ຈຳ – *<ຊື່> ມີຄວາມຫຍຸ້ງຍາກການຈື່ຈຳ ຫຼື ສະມາທິ ບໍ? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ຄຳຖາມ:** D.59. ຄວາມຫຍຸ້ງຍາກໃນການດູແລຕົນເອງ – *<ຊື່> ມີຄວາມຫຍຸ້ງຍາກກ່ຽວກັບການດູແລຕົນເອງບໍ ເຊັ່ນ: ການອະນາໄມ ຫຼື ການນຸ່ງເຄື່ອງດ້ວຍຕົວເອງ? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ຄຳຖາມ:** D.60. ຄວາມຫຍຸ້ງຍາກໃນການສື່ສານ – *ເນື່ອງຈາກບັນຫາດ້ານຮ່າງກາຍ, ຈິດໃຈ ຫຼື ອາລົມ, <ຊື່> ມີຄວາມຫຍຸ້ງຍາກກ່ຽວກັບການປາກເວົ້າ ຫຼື ການສື່ສານບໍ ເຊັ່ນ: ຄວາມເຂົ້າໃຈດ້ານການສື່ສານຂອງ <ຊື່> ຕໍ່ກັບຜູ້ອື່ນ ຫຼື ຄວາມເຂົ້າໃຈດ້ານການສື່ສານຂອງຜູ້ອື່ນຕໍ່ກັບ <ຊື່>? ທ່ານສາມາດຕອບວ່າ... (ອ່ານລາຍການຄຳຕອບ)*




**ນິຍາມ:** ສຳລັບແຕ່ລະຄຳຖາມກ່ຽວກັບຄວາມຫຍຸ້ງຍາກ 6 ຄຳຖາມ, ລາຍການຕົວເລືອກຄຳຕອບແມ່ນໃຊ້ຄືກັນ:

- *ບໍ່ – ບໍ່ມີຄວາມຫຍຸ້ງຍາກ.* ນີ້ແມ່ນກໍລະນີບຸກຄົນທີ່ບໍ່ມີຄວາມຫຍຸ້ງຍາກ ໃນກິດຈະກຳທີ່ກ່ຽວຂ້ອງ;
- *ມີ – ມີຄວາມຫຍຸ້ງຍາກໜ້ອຍໜຶ່ງ.* ແມ່ນບຸກຄົນທີ່ມີຄວາມຫຍຸ້ງຍາກເລັກນ້ອຍ, ຊຶ່ງບໍ່ເປັນບັນຫາໃຫຍ່, ພວກເຂົາສາມາດເຮັດກິດຈະກຳຕ່າງໆໄດ້.
- *ມີ – ມີຄວາມຫຍຸ້ງຍາກຫຼາຍ.* ນີ້ແມ່ນໃນກໍລະນີທີ່ມີຄວາມຫຍຸ້ງຍາກຫຼາຍ ແລະ ມີຜົນຕໍ່ການປະຕິບັດກິດຈະກຳຕ່າງໆ.
- *ບໍ່ສາມາດເຮັດຫຍັງໄດ້.* ບຸກຄົນທີ່ບໍ່ສາມາດເຮັດກິດຈະກຳໄດ້: ຍົກຕົວຢ່າງ, ບໍ່ສາມາດຍ່າງໄດ້, ຕາບອດ, ປາກກືກ ແລະ ອື່ນໆ.

**ວິທີການບັນທຶກຄຳຕອບ:** ອ່ານແຕ່ລະຄຳຖາມໃນໜ້າຈໍ ແລະ ໃຫ້ຜູ້ຖືກສຳພາດເລືອກເອົາໜຶ່ງໃນສີ່ຕົວເລືອກຄຳຕອບ. ຖ້າວ່າບໍ່ເຮັດແນວນີ້, ຄົນອາດຈະໃຫ້ຄຳຕອບອື່ນໆເຊັ່ນ 'ປົກກະຕິ'. ຄຳຕອບເຫຼົ່ານີ້ຈະບໍ່ໃຫ້ຄຳຕອບໂດຍກົງແກ່ນັກເດີນສຳຫຼວດ, ຕົວຢ່າງ, ບໍ່ມີຄວາມຫຍຸ້ງຍາກ ແລະ ຄວາມຫຍຸ້ງຍາກໜ້ອຍໜຶ່ງ. ຕ້ອງໃຫ້ແນ່ໃຈວ່າໄດ້ອ່ານສີ່ປະເພດຄຳຕອບໃຫ້ຜູ້ຖືກສຳພາດໃນເວລາຖາມທຸກຄຳຖາມ.

ຄຳຖາມກ່ຽວກັບຄວາມຫຍຸ້ງຍາກໃນການເບິ່ງເຫັນ (D.55) ແລະ ການໄດ້ຍິນ (D.60) ລວມມີຕົວເລືອກທີ່ຄົນອາດຈະໃຊ້ແວ່ນຕາ ຫຼື ເຄື່ອງຊ່ວຍຟັງ. ໃນກໍລະນີດັ່ງກ່າວ, ລະດັບຄວາມຫຍຸ້ງຍາກທີ່ຄວນຈະໄດ້ຮັບການລາຍງານແມ່ນໃນເວລາທີ່ເຂົາເຈົ້ານຳໃຊ້ອຸປະກອນຊ່ວຍເຫຼືອດັ່ງກ່າວ, ຕົວຢ່າງ, ຖ້າຄົນນັ້ນໃຊ້ແວ່ນຕາມີຄວາມຫຍຸ້ງຍາກບໍ?

**ຄຳຖາມ:** D.61. ສາເຫດການເປັນພິການ – *ສາເຫດຕົ້ນຕໍທີ່ເຮັດໃຫ້ <ຊື່> ມີຄວາມຫຍຸ້ງຍາກ ແມ່ນຫຍັງ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອໃຫ້ຮູ້ວ່າສາເຫດຕົ້ນຕໍທີ່ພາໃຫ້ບຸກຄົນເປັນພິການແມ່ນມາຈາກສາເຫດອັນໃດ. ຖ້າວ່າບຸກຄົນທີ່ 'ບໍ່ມີຄວາມຫຍຸ້ງຍາກ' ໃນທຸກຄຳຖາມກ່ຽວກັບຄວາມເປັນພິການ, ຄຳຖາມທີ D.58 ກ່ຽວກັບສາເຫດຂອງຄວາມຫຍຸ້ງຍາກ ຈະຖືກຂ້າມ. ໃນກໍລະນີອື່ນໆ, ຄຳຖາມນີ້ແມ່ນຈະຖືກຖາມ. ໃນບາງຄັ້ງອາດມີຫຼາຍສາເຫດທີ່ເຮັດໃຫ້ມີຄວາມຫຍຸ້ງຍາກໃນການປະຕິບັດກິດຈະກຳໜຶ່ງ ຫຼື ຫຼາຍຢ່າງ. ໃນກໍລະນີດັ່ງກ່າວ, ແມ່ນຖາມຫາສາເຫດທີ່ສຳຄັນທີ່ສຸດ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສຳພາດ.

**ຄຳຖາມ:** D.62. ລູກຊາຍທີ່ເກີດມີຊີວິດ – *ຈຳນວນລູກຊາຍທັງໝົດທີ່ <ຊື່> ເກີດມີຊີວິດ ຢູ່ໃນຊ່ວງຊີວິດຂອງລາວ ມີທັງໝົດຈັກຄົນ?*




ຈຸດປະສົງ: ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບການເກີດລູກຂອງແມ່ຍິງ ໂດຍເນັ້ນໃສ່ການເກີດລູກຊາຍເທົ່ານັ້ນ. ຄຳຖາມທີ D.62 ຫາ D.72 ແມ່ນຖາມສະເພາະແມ່ຍິງອາຍຸ 15 ປີ ຂຶ້ນໄປ. ຄຳຖາມກ່ຽວກັບການມີລູກອາດມີຄວາມອ່ອນໄຫວທີ່ຈະຖາມເດັກຍິງທີ່ອາຍຸຍັງນ້ອຍ. ຕ້ອງໝັ້ນໃຈວ່າໄດ້ຖາມຄຳຖາມເຫຼົ່ານີ້ດ້ວຍຄວາມສຸພາບ ແລະ ອະທິບາຍວ່າ ຄຳຖາມນີ້ແມ່ນມີຕ້ອງການເພື່ອມາຄິດໄລ່ລະດັບການເກີດລູກຂອງໄວໜຸ່ມ ໃນ ສປປ ລາວ. ມັນບໍ່ໄດ້ສົນໃຈວ່າບັນດາບຸກຄົນດັ່ງກ່າວໄດ້ແຕ່ງດອງແລ້ວ, ຢ່າຮ້າງ ຫຼື ແຍກກັນຢູ່; ເຂົາເຈົ້າກຳລັງເຂົ້າໂຮງຮຽນຢູ່ ຫຼື ບໍ່ກໍ່ຕາມ; ຫຼືມີສາຍພົວພັນກັບຫົວໜ້າຄົວເຮືອນໃດໆກໍ່ຕາມ. ແມ່ຍິງຫຼາຍຄົນບໍ່ຕ້ອງການຕອບຄຳຖາມກ່ຽວກັບລູກຂອງເຂົາເຈົ້າ. ມີຫຼາກຫຼາຍເຫດຜົນກ່ຽວກັບບັນຫາດັ່ງກ່າວ, ແຕ່ມັນເປັນໜ້າທີ່ຂອງຂອງນັກເດີນສຳຫຼວດເພື່ອໃຫ້ໄດ້ຄຳຕອບ. ມັນຈະຮຽກຮ້ອງໃຫ້ມີຄວາມໜັກແໜ້ນ, ຄວາມສຸພາບ ແລະ ໄຫວພິບ.

**ນິຍາມ:** ຄຳຖາມທີ D.59 ຖາມກ່ຽວກັບຈຳນວນລູກຊາຍທັງໝົດ ທີ່ແມ່ຍິງເຄີຍເກີດໃນຊ່ວງຊີວິດຂອງເຂົາເຈົ້າ. ການສຳຫຼວດພົນລະເມືອງ ແມ່ນສົນໃຈພຽງແຕ່ລູກເກີດມີຊີວິດ. ບໍ່ໃຫ້ລວມເອົາລູກທີ່ຕາຍໃນທ້ອງ, ເດັກທີ່ຕາຍກ່ອນເກີດ ແລະ ບໍ່ໄດ້ສະແດງສັນຍາຍການມີຊີວິດໃດໆໃນເວລາເກີດ. ເດັກເກີດມີຊີວິດແມ່ນເດັກທີ່ສະແດງໜຶ່ງ ຫຼື ຫຼາຍສັນຍານການມີຊີວິດຕໍ່ໄປນີ້ທັນທີຫຼັງຈາກເກີດ:

- ຮ້ອງໄຫ້ ຫຼື ສຽງທີ່ຄ້າຍຄືການຮ້ອງໄຫ້;
- ການເຄື່ອນໄຫວຂອງແຂນຂາ ຫຼື ສ່ວນອື່ນໆ ຂອງຮ່າງກາຍ; ແລະ
- ສັນຍານການມີຊີວິດທີ່ສັງເກດເຫັນໄດ້ອື່ນໆ.

**ວິທີການບັນທຶກຄຳຕອບ:** ບັນທຶກຈຳນວນລູກຊາຍທີ່ເກີດມີຊີວິດທັງໝົດ. ຖ້າວ່າ ແມ່ບໍ່ໄດ້ເກີດລູກຜູ້ຊາຍໃຫ້ຂຽນ

'0'. ບັນທຶກຕົວເລກສະເໝີ, ເຖິງແມ່ນວ່າບໍ່ມີລູກຜູ້ຊາຍ ຫຼື ບໍ່ມີລູກກໍຕາມ.

**ຄຳຖາມ:** D.63. ລູກຊາຍທີ່ຍັງມີຊີວິດ – *ຈຳນວນລູກຊາຍທີ່ຍັງມີຊີວິດຢູ່ປະຈຸບັນນີ້ມີຈັກຄົນ?*




**ຈຸດປະສົງ:** ຖ້າວ່າແມ່ຍິງມີລູກຊາຍທີ່ເກີດມີຊີວິດ, ໃຫ້ຖາມວ່າມີລູກຊາຍຈັກຄົນທີ່ຍັງມີຊີວິດຢູ່.

**ວິທີການບັນທຶກຄຳຕອບ:** ຖ້າວ່າບໍ່ມີລູກຊາຍທີ່ເສຍຊີວິດ, ຈຳນວນລູກຊາຍທີ່ຍັງມີຊີວິດຢູ່ຕ້ອງຄືກັນກັບກັບຄຳຕອບໃນຄຳຖາມທີ D.59 ກ່ອນໜ້ານີ້. ຖ້າວ່າບໍ່ມີລູກຊາຍຄົນໃດຍັງມີຊີວິດຢູ່, ໃຫ້ບັນທຶກ ‘0’.

**ຄຳຖາມ:** D.64. ລູກຊາຍທີ່ເສຍຊີວິດ – *ຈຳນວນລູກຊາຍທີ່ເສຍຊີວິດແລ້ວມີຈັກຄົນ?*




ດປະສົງ: ຄຳຖາມນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບລູກຊາຍທີ່ແມ່ຍິງເກີດ ແຕ່ປັດຈຸບັນໄດ້ເສຍຊີວິດແລ້ວ.

ຫຼາຍຄົນບໍ່ຢາກເວົ້າເຖິງສະມາຊິກຂອງຄອບຄົວທີ່ເສຍຊີວິດ ແລະ ຫຼາຍໆຄົນຮູ້ສຶກເຈັບປວດເມື່ອຕ້ອງເວົ້າເຖິງລູກທີ່ເສຍຊີວິດຂອງເຂົາເຈົ້າ. ມັນຈະເປັນການດີທີ່ສຸດທີ່ຈະຖາມຄຳຖາມນີ້ໂດຍປາສະຈາກສາເຫດທີ່ເຮັດໃຫ້ເຂົາເຈົ້າຮູ້ສຶກເຈັບປວດ ຫຼື ສ້າງຄວາມລຳບາກໃຈ. ຕ້ອງສ້າງຄວາມເຫັນອົກເຫັນໃຈ ແລະ ມີໄຫວພິບຫຼາຍເທົ່າທີ່ຈະເຮັດໄດ້. ໃຫ້ເວົ້າວ່າທ່ານຮູ້ດີວ່າຫົວຂໍ້ນີ້ມັນສ້າງຄວາມເຈັບປວດໃຫ້ຜູ້ຖືກສຳພາດ ແຕ່ວ່າຂໍ້ມູນນີ້ແມ່ນມີຄວາມສຳຄັນຫຼາຍເພື່ອຫຼຸດຜ່ອນການຕາຍຂອງເດັກອ່ອນ ແລະ ການຕາຍຂອງເດັກ.

ໃນບາງຄັ້ງຄາວ, ແມ່ຍິງອາດຈະບໍ່ໄດ້ກ່າວເຖິງເດັກທີ່ຕາຍແຕ່ຕອນຍັງນ້ອຍໆ, ດັ່ງນັ້ນ, ຖ້າວ່າບໍ່ມີລູກຊາຍທີ່ເສຍຊີວິດ ມັນມີຄວາມສຳຄັນຫຼາຍທີ່ຕ້ອງກວດສອບໂດຍຖາມເພີ່ມເຕີມວ່າ ‘*ມີເດັກຄົນໃດບໍທີ່ເກີດມາແລ້ວຮ້ອງໄຫ້, ເໜັງຕີງ, ມີສຽງ ຫຼື ສາມາດຫາຍໃຈ ຫຼື ສະແດງສັນຍານການມີຊີວິດ ເຖິງແມ່ນວ່າເປັນເວລາສັ້ນໆກໍ່ຕາມ?*’ ຖ້າຜົນຂອງການສອບຖາມດັ່ງກ່າວນີ້ພົບວ່າມີເດັກຄົນອື່ນທີ່ເກີດມີຊີວິດ (ແລະ ຕາຍ) (ໝາຍຄວາມວ່າເຮັດການສຳພາດໄດ້ດີ!), ນັກເດີນສຳຫຼວດຕ້ອງໄດ້ປັບປຸງຂໍ້ມູນໃນຄຳຖາມທີ D.59 ຄືນໃໝ່.

**ວິທີການບັນທຶກຄຳຕອບ:** ຖ້າວ່າແມ່ຍິງເຄີຍເກີດລູກຊາຍມີຊີວິດ ແລະ ມີລູກຊາຍ ໜຶ່ງ ຫຼື ຫຼາຍຄົນ ໄດ້ເສຍຊີວິດໄປແລ້ວ ບັນທຶກຈຳນວນລູກຊາຍທີ່ເສຍຊີວິດທັງໝົດ, ຖ້າວ່າ ບໍ່ມີລູກຊາຍເສຍຊີວິດ ບັນທຶກ ‘o’.

**ຄຳຖາມ:** D.65. ລູກສາວທີ່ເກີດມີຊີວິດ – *ຈຳນວນລູກສາວທັງໝົດທີ່ <ຊື່> ເກີດມີຊີວິດ ຢູ່ໃນຊ່ວງຊີວິດຂອງລາວ ມີທັງໝົດຈັກຄົນ?*




**ຄຳຖາມ:** D.66. ລູກສາວທີ່ຍັງມີຊີວິດ – *ຈຳນວນລູກສາວທີ່ຍັງມີຊີວິດຢູ່ປະຈຸບັນນີ້ມີຈັກຄົນ?*

**ຄຳຖາມ:** D.67. ລູກສາວທີ່ເສຍຊີວິດ – *ຈຳນວນລູກສາວທີ່ເສຍຊີວິດແລ້ວມີຈັກຄົນ?*

ຄຳຖາມທີ D.65 ຫາ D.67 ແມ່ນຄ້າຍຄືກັນກັບຄຳຖາມທີ D.62 ຫາ D.64, ແຕ່ເປັນຄຳຖາມທີ່ຖາມເຖິງລູກສາວ. ສາມາດນຳໃຊ້ຫຼັກການ ແລະ ຄຳແນະນຳອັນດຽວກັນກັບຄຳຖາມກ່ອນໜ້ານີ້.

**ຄໍາຖາມ:** D.68. ປີເກີດຂອງລູກທີ່ເກີດມີຊີວິດຜູ້ສຸດທ້າຍ – *<ຊື່> ເກີດມີຊີວິດຄົນສຸດທ້າຍໃນປີໃດ?*

**ຄໍາຖາມ:** D.69. ເດືອນເກີດຂອງລູກທີ່ເກີດມີຊີວິດຜູ້ສຸດທ້າຍ – *<ຊື່> ເດີ ເກີດມີຊີວິດຄົນສຸດທ້າຍຂອງ ໃນເດືອນໃດ?*




**ຈຸດປະສົງ:** ຄໍາຖາມທີ D.68 ຫາ D.69 ແມ່ນເພື່ອເກັບກໍາປີ ແລະ ເດືອນເກີດລູກຄົນສຸດທ້າຍເພື່ອນໍາໃຊ້ເຂົ້າໃສການຄິດໄລ່ອັດຕາການຈະເລີນພັນໃນປັດຈຸບັນ. ຄໍາຖາມນີ້ແມ່ນຖາມສະເພາະແມ່ຍິງອາຍຸ 15 ປີ ຂຶ້ນໄປ ຜູ້ທີ່ເຄີຍເກີດລູກມີຊີວິດ.

**ວິທີການບັນທຶກຄໍາຕອບ:** ສໍາລັບຄາຖາມທີ D.68 ແລະ D.69, ບັນທຶກປີເກີດ ແລະ ເດືອນເກີດຂອງລູກຜູ້ສຸດທ້າຍ, ຖ້າວ່າບໍ່ຮູ້ປີເກີດ, ແມ່ນໃຫ້ຂຽນ ‘9999’. ຖ້າວ່າຜູ້ຖືກສໍາພາດຮູ້ແຕ່ປີເກີດ, ແຕ່ວ່າບໍ່ຮູ້ເດືອນເກີດແມ່ນໃຫ້ສືບຖາມຫາໃຫ້ຄາດຄະເນເດືອນເກີດ. ພະຍາຍາມຄາດຄະເນເດືອນເກີດໂດຍອີງໃສ່ລະດູການທີ່ເກີດ. ຖ້າວ່າເດືອນເກີດຂອງລູກຄົນສຸດທ້າຍຍັງບໍ່ສາມາດຄາດຄະເນໄດ້, ເລືອກຄໍາຕອບ ‘ບໍ່ຮູ້’.

**ຄໍາຖາມ:** D.70. ເພດຂອງລູກທີ່ເກີດມີຊີວິດຜູ້ສຸດທ້າຍ – *ເພດຂອງລູກທີ່ເກີດມີຊີວິດຜູ້ສຸດທ້າຍຂອງ <ຊື່> ແມ່ນເພດໃດ?*

**ຈຸດປະສົງ:** ຄໍາຖາມນີ້ແມ່ນເພື່ອເກັບກາຂໍ້ມູນກ່ຽວກັບເພດຂອງລູກເກີດມີຊີວິດຄົນສຸດທ້າຍ.

**ວິທີການບັນທຶກຄໍາຕອບ:** ເລືອກເພດຂອງລູກຄົນສຸດທ້າຍ: ‘ຊາຍ’ ຫຼື ‘ຍິງ’.

**ໝາຍເຫດ:** ບໍ່ຄວນເດົາເພດຂອງເດັກນ້ອຍສຸດໃນບັນຊີສະມາຊິກຄົວເຮືອນໃນພາກ C ເປັນເດັກເກີດຄົນສຸດທ້າຍຂອງແມ່ຍິງ. ເດັກເກີດຄົນສຸດທ້າຍອາດເສຍຊີວິດແລ້ວ ຫຼື ອາໄສຢູ່ບ່ອນອື່ນ.

**ຄໍາຖາມ:** D.71. ລູກທີ່ເກີດມີຊີວິດຄົນສຸດທ້າຍທີ່ຍັງມີຊີວິດ – *ລູກທີ່ເກີດມີຊີວິດຜູ້ສຸດທ້າຍຍັງມີຊີວິດຢູ່ ຫຼື ບໍ່?*




**ຈຸດປະສົງ:** ຄາຖາມນີ້ແມ່ນມີຄວາມສາຄັນໃນການຄິດໄລ່ອັດຕາການຕາຍຂອງເດັກ.

**ວິທີການບັນທຶກຄໍາຕອບ:** ບັນທຶກຄາຕອບວ່າເດັກທີ່ແມ່ຍິງເກີດມີຊີວິດຄົນສຸດທ້າຍຍັງມີຊີວິດ ຫຼື ເສຍຊີວິດແລ້ວ.

**ໝາຍເຫດ:** ເຖິງແມ່ນວ່າຄໍາຕອບຂອງຄາຖາມນີ້ແມ່ນງ່າຍດາຍ ‘ຍັງມີຊີວິດ’ ຫຼື ‘ເສຍຊີວິດ’, ແຕ່ວ່າມັນບໍ່ງ່າຍດາຍ ແລະ ສາມາດສົ່ງຜົນກະທົບທາງດ້ານຈິດໃຈໃຫ້ຜູ້ຖືກສໍາພາດ. ຕ້ອງມີໄຫວພິບ ແລະ ສະແດງຄວາມເຂົ້າອົກເຂົ້າໃຈ.

**ຄໍາຖາມ:** D.72. ອາຍຸຕອນເກີດລູກຜູ້ທໍາອິດ – *<ຊື່> ເກີດລູກຜູ້ທໍາອິດຕອນອາຍຸຈັກປີ?*




**ຈຸດປະສົງ:** ຄໍາຖາມນີ້ແມ່ນຖາມຫາອາຍຸຂອງແມ່ຍິງໃນຕອນທີ່ແມ່ຍິງເກີດລູກມີຊີວິດຄົນທໍາອິດ.

**ວິທີການບັນທຶກຄໍາຕອບ:** ບັນທຶກອາຍຸເປັນປີເຕັມ. ຖ້າວ່າແມ່ຍິງບໍ່ສາມາດຕອບຄໍາຖາມນີ້ໄດ້, ກວດເບິ່ງອາຍຸຂອງລູກ ແລະ ເອົາອາຍຸແມ່ລົບອາຍຸຂອງລູກຄົນທໍາອິດ. ຖ້າວ່າອາຍຸຂອງແມ່ຍິງຕອນເກີດລູກຄົນທໍາອິດບໍ່ສາມາດລະບຸໄດ້ແທ້ໆ, ເລືອກຄໍາຕອບ 'ບໍ່ຮູ້'.

## 4.9. ວິທີການສອບຖາມ ແລະ ບັນທຶກຄໍາຕອບ ແບບສອບຖາມພາກ E – ຂໍ້ມູນການເສຍຊີວິດ

ພາກນີ້ມີຈຸດປະສົງເພື່ອເກັບກໍາຂໍ້ມູນກ່ຽວກັບການເສຍຊີວິດໃນຄົວເຮືອນ. ຂໍ້ມູນທີ່ໄດ້ເກັບກໍານັ້ນມີຄວາມສໍາຄັນໃນການປະເມີນອັດຕາການເສຍຊີວິດໃນປະເທດ. ໃນບາງສ່ວນຂອງພາກນີ້ແມ່ນໄດ້ກ່າວເຖິງຄໍາຖາມທີ່ກ່ຽວຂ້ອງກັບການເສຍຊີວິດຂອງແມ່. ບັນດາຄໍາຖາມໃນພາກນີ້ຄວນຈະຖືກຕອບໂດຍຫົວໜ້າຄົວເຮືອນ ຫຼື ສະມາຊິກຄົວເຮືອນຄົນອື່ນໆທີ່ຮັບຜິດຊອບ. ຂໍ້ມູນທີ່ໄດ້ມຸ່ງເນັ້ນນັ້ນຈະໝາຍເຖິງສະມາຊິກຄົວເຮືອນທີ່ຢູ່ເປັນປົກກະຕິ ແລະ ໄດ້ເສຍຊີວິດໃນໄລຍະ 12 ເດືອນຜ່ານມາກ່ອນມື້ສໍາຫຼວດ. ສິ່ງສໍາຄັນທີ່ຂໍ້ມູນນີ້ໝາຍເຖິງຜູ້ທີ່ອາໄສຢູ່ໃນຄົວເຮືອນ ນີ້ກ່ອນທີ່ຈະເສຍຊີວິດ ແລະ ບໍ່ແມ່ນຍາດພີ່ນ້ອງກັບຜູ້ທີ່ອາໄສໃນຄົວເຮືອນອື່ນ.

ການເສຍຊີວິດຂອງສະມາຊິກໃນຄົວເຮືອນຖືເປັນເຫດການທີ່ເສົ້າສະຫຼົດໃຈ ແລະ ຄົນສ່ວນຫຼາຍອາດຈະພົບວ່າເປັນເລື່ອງຍາກທີ່ຈະເວົ້າເຖິງເລື່ອງນີ້. ໃຫ້ອົດທົນ ແລະ ທໍາຄວາມເຂົ້າໃຈ ໂດຍສະເພາະ, ຖ້າຫາກມີເດັກນ້ອຍເສຍຊີວິດທັນທີຫຼັງການເກີດ, ມັນອາດຈະເຮັດໃຫ້ຄວາມຊົງຈໍາທີ່ເຈັບປວດນັ້ນກັບຄືນມາຫາຜູ້ຖືກສໍາພາດໄດ້. ດ້ວຍເຫດນີ້, ຄົນສ່ວນຫຼາຍບໍ່ມັກທີ່ຈະເວົ້າເຖິງເດັກນ້ອຍເຫຼົ່ານີ້ ແລະ ເວົ້າວ່າເດັກເສຍຊີວິດກ່ອນ ຫຼື ຫຼັງການເກີດ, ຫຼື ພວກເຂົາ "ລືມ" ທີ່ຈະເວົ້າເຖິງເດັກເຫຼົ່ານັ້ນ. ນັກເດີນສໍາຫຼວດຕ້ອງໄດ້ກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ນັບເປັນການເກີດທີ່ມີຊີວິດ ສໍາລັບຜູ້ທີ່ເສຍຊີວິດຫຼັງການເກີດ. ດັ່ງນັ້ນ, ນັກເດີນສໍາຫຼວດຄວນກວດສອບໃຫ້ແນ່ໃນວ່າຜູ້ຖືກສໍາພາດບໍ່ລືມທີ່ຈະເວົ້າເຖິງເດັກນ້ອຍທີ່ມີຊີວິດຢູ່ພຽງແຕ່ໄລຍະເວລາສັ້ນໆເທົ່ານັ້ນ. ແຕ່ວ່າໃຫ້ສະແດງຄວາມເຫັນອົກເຫັນໃຈ ແລະ ຄວາມລະອຽດອ່ອນ ເມື່ອຖາມກ່ຽວກັບເຫດການນີ້ເພື່ອບໍ່ໃຫ້ກະທົບກັບຄວາມຮູ້ສຶກຂອງຜູ້ຖືກສໍາພາດ,ໃຊ້ພາສາທີ່ເປັນທີ່ຍອມຮັບທາງດ້ານວັດທະນະທໍາ ແລະ ໃນເວລາດຽວກັນໃຫ້ແຈ້ງຕໍ່ຜູ້ຖືກສໍາພາດວ່າຂໍ້ມູນທີ່ກໍາລັງເກັບກໍາຢູ່ແມ່ນມີຄວາມສໍາຄັນຫຼາຍທີ່ຈະຊ່ວຍໃຫ້ໂຄງການຕໍ່ສູ້ກັບການເສຍຊີວິດກ່ອນໄວອັນຄວນ

**ຄໍາຖາມ:** E.01. ການເສຍຊີວິດໃນຄົວເຮືອນ – *ໃນ 12 ເດືອນຜ່ານມາ ມີຜູ້ໃດຜູ້ໜຶ່ງທີ່ອາໄສຢູ່ໃນຄົວເຮືອນນີ້ເສຍຊີວິດບໍ? ( ໃນລະຫວ່າງ <3 ພະຈິກ 2024> ຫາ < 14 ທັນວາ 2025>*




**ຈຸດປະສົງ:** ຄໍາຖາມນີ້ແມ່ນຄໍາຖາມເພື່ອກວດສອບວ່າມີຜູ້ໃດໜຶ່ງໃນຄົວເຮືອນໄກ້ເສຍຊີວິດໃນ 12 ເດືອນຜ່ານມາ ຫຼື ບໍ.

**ວິທີການບັນທຶກຄໍາຕອບ:** ຖ້າຜູ້ໃຫ້ສາພາດແຈ້ງວ່າມີສະມາຊິກຄົວເຮືອນເສຍຊີວິດ ໃນ 12 ເດືອນຜ່ານມາ ກ່ອນການສໍາຫຼວດ, ໃຫ້ເລືອກຄໍາຕອບ **'ມີ'** ແລະ ສືບຕໍ່ຖາມຄໍາຖາມຕໍ່ໄປໃນພາກນີ້ ເພື່ອເກັບກໍາຂໍ້ມູນເພີ່ມເຕີມກ່ຽວກັບການເຍຊີວິດ. ຖ້າຫາກບໍ່ມີສະມາຊິກຄົວເຮືອນເຍຊີວິດໃນ 12 ເດືອນຜ່ານມາ, ໃຫ້ເລືອກຄໍາຕອບ **"ບໍ່ມີ"** ຈາກນັ້ນໂປຼແກຼມແບບອບຖາມຈະຂ້າມໄປຫາພາກຕໍ່ໄປ.

**ໝາຍເຫດ:** ສະເພາະແຕ່ຜູ້ທີ່ໄດ້ອາໄສຢູ່ໃນຄົວເຮືອນນີ້ກ່ອນທີ່ພວກເຂົາຈະເສຍຊີວິດເທົ່ານັ້ນ ທີ່ຄວນຖືກລວມເອົາໃນພາກນີ້.

**ຄຳຖາມ:** E.02. ຊື່ຂອງຜູ້ເສຍຊີວິດ– *ຊື່ຂອງສະມາຊິກທີ່ເຄີຍອາໄສໃນຄົວເຮືອນນີ້ ທີ່ໄດ້ເສຍຊີວິດແລ້ວ ຄົນທີ <n> ແມ່ນຊື່ຫຍັງ?*

**ຄຳຖາມ:** E.03. ນາມສະກຸນຂອງຜູ້ເສຍຊີວິດ – *ນາມສະກຸນຂອງຂອງສະມາຊິກທີ່ເຄີຍອາໄສໃນຄົວເຮືອນນີ້ ທີ່ໄດ້ເສຍຊີວິດແລ້ວ ຄົນທີ <n> ແມ່ນຫຍັງ?*







**ຈຸດປະສົງ:** ຄຳຖາມນີ້ແມ່ນເປັນການຂຶ້ນບັນຊີລາຍຊື່ສະມາຊິກຄົວເຮືອນຜູ້ທີ່ເສຍຊີວິດໃນໄລຍະ 12 ເດືອນຜ່ານມາ.

**ວິທີການບັນທຶກຄຳຕອບ:** ປ້ອນຊື່ ແລະ ນາມສະກຸນຂອງຜູ້ທີ່ເສຍຊີວິດ. ໃນກໍລະນີທີ່ ມີເດັກນ້ອຍເສຍຊີວິດກ່ອນທີ່ຈະໄດ້ຕັ້ງຊື່,ໃຫ້ບັນທຶກວ່າ “ເດັກຊາຍ” ຫຼື “ເດັກຍິງ” ຫຼື “ລູກຂອງ ... (ຊື່ແມ່ຂອງເດັກ)”. ເຊັ່ນດຽວກັນກັບບັນຊີສະມາຊິກຄົວເຮືອນ, ຊື່ທີ່ໄດ້ບັນທຶກໄວ້ຈະຖືກໃຊ້ໃນຄຳຖາມຖັດໄປກ່ຽວກັບການເສຍຊີວິດຂອງສະມາຊິກຄົວເຮືອນນີ້. ໃນບາງກໍລະນີ ສຳລັບຜູ້ທີ່ບໍ່ມີນາມສະກຸນ ແມ່ນໃຫ້ບັນທຶກວ່າ ‘ບໍ່ມີນາມສະກຸນ’ ເປັນຄຳຕອບສຳລັບຄຳຖາມ E.03.

**ຄຳຖາມ:** E.04. ເພດຂອງຜູ້ທີ່ເສຍຊີວິດ – *ເພດຂອງ <ຊື່> ແມ່ນເພດຫຍັງ?*




**ຈຸດປະສົງ:** ເພດຂອງຜູ້ເສຍຊີວິດແມ່ນມີຄວາມສາຄັນເພື່ອຄິດໄລ່ອັດຕາຕາຍແບ່ງຕາມເພດ.

**ວິທີການບັນທຶກຄຳຕອບ:** ລະບຸວ່າຜູ້ທີ່ເສຍຊີວິດນັ້ນແມ່ນເພດຊາຍ ຫຼື ເພດຍິງ.

**ຄຳຖາມ:** E.05. ໃບຢັ້ງຢືນການເສຍຊີວິດ – *ຄອບຄົວມີໃບຢັ້ງຢືນການເສຍຊີວິດຂອງ <ຊື່> ທີ່ອອກໃຫ້ໂດຍ ຫ້ອງການພາຍໃນເມືອງ (MOHA) ບໍ?*




**ຈຸດປະສົງ:** ປະເທດລາວແມ່ນກາລັງດາເນີນການປັບປຸງ ການຈົດທະບຽນພົນລະເມືອງ. ດ້ວຍເຫດນີ້ຂໍ້ມູນການສຳຫຼວດພົນລະ ເມືອງທີ່ໄດ້ຖືກເກັບກຳກ່ຽວກັບການຈົດທະການເສຍຊີວິດຈຶ່ງມີຄວາມຈຳເປັນຫຼາຍ. ສິ່ງທີ່ສຳຄັນການຈົດທະບຽນການເສຍຊີວິດແມ່ນຕ້ອງອອກໃຫ້ໂດຍຫ້ອງການພາຍໃນເມືອງ (MoHA) ເທົ່ານັ້ນ. ການຈົດທະບຽນຢູ່ວັດ ຫຼື ອົງກອນອື່ນທີ່ບໍ່ຂຶ້ນກັບລັດຖະບານແມ່ນບໍ່ຄວນນັບເອົາ.

**ວິທີການບັນທຶກຄຳຕອບ:** ຖ້າວ່າຜູ້ຖືກສຳພາດບໍ່ຮູ້ວ່າຜູ້ທີ່ເສຍຊີວິດໄດ້ຈົດທະບຽນການເສຍຊີວິດແລ້ວ ຫຼື ຍັງ, ໃຫ້ຖາມສະມາຊິກຄົວເຮືອນຄົນອື່ນໆທີ່ອາດຈະຮູ້ຂໍ້ມູນດັ່ງກ່າວ. ຖ້າວ່າບໍ່ມີໃຜຮູ້ໃຫ້ເລືອກຄຳຕອບວ່າ ‘ບໍ່ຮູ້’. ບໍ່ຈຳເປັນໃຫ້ຜູ້ຖືກສຳພາດສະແດງເອກະສານໃບທະບຽນການເສຍຊີວິດ.

**ຄຳຖາມ:** E.06. ອາຍຸຜູ້ເສຍຊີວິດ – *<ຊື່> ເສຍຊີວິດຕອນອາຍຸຈັກປີ?*




ຈຸດປະສົງ: ອາຍຸຕອນເສຍຊີວິດແມ່ນມີຄວາມສຳຄັນໃນການຄິດໄລ່ອັດຕາການເສຍຊີວັດຕາມອາຍຸ ແລະ ການຄິດໄລ່ອາຍຸຍືນສະເລ່ຍ.

**ວິທີການບັນທຶກຄຳຕອບ:** ມັນເປັນໄປໄດ້ທີ່ຜູ້ໃຫ້ສຳພາດອາດຈະບໍ່ຮູ້ ອາຍຸທີ່ຊັດເຈນຂອງຜູ້ເສຍຊີວິດໃນຄົວເຮືອນ, ໃນກໍລະນີນີ້ ຂໍໃຫ້ຜູ້ຖືກສຳພາດຄາດຄະເນເອົາອາຍຸຂອງຜູ້ເສຍຊີວິດນັ້ນ. ຕົວຢ່າງ: ຖ້າວ່າຮູ້ອາຍຸຂອງເມຍຜູ້ເສຍຊີວິດ , ນັກເດີນສຳຫຼວດສາມາດຖາມວ່າຜູ້ເສຍຊີວິດແມ່ນໜຸ່ມກວ່າ ຫຼື ແກ່ກວ່າ ແລະ ໃຫ້ຖາມວ່າອາຍຸຫ່າງກັນປະມານຈັກປີ, ວິທີນີ້ ທ່ານສາມາຄາດຄະເນອາຍຸຂອງຜູ້ເຍຊີວິດໄດ້. ຖ້າວ່າບໍ່ຮູ້ຂໍ້ມູນທັງໝົດ ໃຫ້ບັນທຶກຄຳຕອບແມ່ນ '999'. ບໍ່ຕ້ອງປ່ອຍໃຫ້ຊ່ອງຄຳຕອບຂອງຄຳຖາມນີ້ເປົ່າວ່າງ, ສາລັບເດັກນ້ອຍທີ່ມີອາຍຸຕ່າກວ່າ 1 ປີແມ່ນໃຫ້ບັນທຶກ '0'.

**ຄຳຖາມ:** E.07. ເດັກເສຍຊີວິດຕອນອາຍຸຈັກເດືອນ – *ເດັກ <ຊາຍ/ຍິງ> ເສຍຊີວິດຕອນອາຍຸຈັກເດືອນ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນຖາມສະເພາະເດັກນ້ອຍທີ່ເສຍຊີວິດຕອນອາຍຸຕໍ່າກວ່າ 1 ປີ. ຄຳຖາມນີ້ມີຈຸດປະສົງເພື່ອໃຫ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຮູບແບບການເສຍຊີວິດຂອງເດັກນ້ອຍພາຍໃນປະເທດ.

**ວິທີການບັນທຶກຄຳຕອບ:** ບັນທຶກອາຍຸຕອນເດັກເສຍຊີວິດເປັນເດືອນ, ຖ້າຫາກເດັກໄດ້ເສຍຊີວິດພາຍໃນເດືອນທາອິດຂອງຊີວິດ, ໃຫ້ບັນທຶກຄຳຕອບເປັນ '0'.

**ຄຳຖາມ:** E.08. ແມ່ຂອງເດັກທີ່ເສຍຊີວິດ – *ໃຜເປັນແມ່ຂອງເດັກທີ່ເສຍຊີວິດ?*




**ຈຸດປະສົງ:** ສິ່ງສຳຄັນແມ່ນຕ້ອງການເຊື່ອມໂຍງຂໍ້ມູນຄຸນລັກສະນະຂອງແມ່ກັບເດັກທີ່ເສຍຊີວິດເພື່ອກຳນົດວ່າແມ່ນປັດໄຈໃດແດ່ທີ່ເຮັດໃຫ້ເກີດຄວາມເສຍສ່ຽງຕໍ່ການເສຍຊີວິດຂອງເດັກທີ່ເພີ່ມຂຶ້ນ. ດັ່ງນັ້ນ, ສຳລັບເດັກທີ່ເສຍຊີວິດໃນປີທຳອິດຂອງຊີວິດ, ຈະຖາມວ່າແມ່ນໃຜໃນຄົວເຮືອນເປັນແມ່ຂອງເດັກທີ່ເສຍຊີວິດ.

**ວິທີການບັນທຶກຄຳຕອບ:** ນັກເດີນສຳຫຼວດຈະໄດ້ເຫັນລາຍຊື່ແມ່ຂອງເດັກທີ່ເສຍຊີວິດທີ່ອາດເປັນໄດ້ທັງໝົດ. ໃຫ້ເລືອກຊື່ແມ່ຂອງເດັກທີ່ເສຍຊີວິດນັ້ນ. ຖ້າວ່າບໍ່ມີລາຍຊື່ແມ່ຂອງເດັກທີ່ເສຍຊີວິດປະກົດຂຶ້ນມາ, ລາວອາດຈະບໍ່ໄດ້ອາໄສຢູ່ໃນຄົວເຮືອນນັ້ນແລ້ວ ຫຼື ເສຍຊີວິດແລ້ວ. ໃນກໍລະນີທີ່ແມ່ຂອງເດັກທີ່ເສຍຊີວິດບໍ່ໄດ້ອາໄຢູ່ໃນຄົວເຮືອນ, ໃຫ້ເລືອກຄຳຕອບ 'ແມ່ອາໄສຢູ່ບ່ອນອື່ນ'. ໃນກໍລະນີທີ່ແມ່ຂອງເດັກທີ່ເສຍຊີວິດ ໄດ້ເສຍຊີວິດແລ້ວ, ໃຫ້ເລືອກຄຳຕອບ 'ແມ່ໄດ້ເສຍຊີວິດແລ້ວ'.

**ຄຳຖາມ:** E.09. ການເສຍຊີວິດຕອນເກີດລູກ – *<ຜູ້ເສຍຊີວິດ> ເສຍຊີວິດໃນເວລາເກີດລູກ ຫຼື ເວລາທຳແທ້ງ ຫຼື ຫຼູລູກບໍ?*




**ຈຸດປະສົງ:** ໃນຄຳຖາມນີ້ ແລະ ອີກສອງຄຳຖາມຖັດໄປ (E.10 ແລະ E.11) ແມ່ນມີຄວາມສຳຄັນຫຼາຍ ໃນການກຳນົດລະດັບອັດຕາການຕາຍຂອງແມ່ພາຍໃນປະເທດ. ສອງຄຳຖາມດັ່ງກ່າວນີ້ຈະຖາມສະເພາະແມ່ຍິງທີ່ເສຍຊີວິດຕອນອາຍຸລະຫວ່າງ 15 ປີ ຫາ 50 ປີ ເທົ່ານັ້ນ. ຄຳຖາມທຳອິດແມ່ນເພື່ອໃຫ້ຮູ້ວ່າມີແມ່ຍິງທີ່ເສຍຊີວິດໃນຂະນະທີ່ລາວເກີດລູກ ຫຼື ບໍ.

**ວິທີການບັນທຶກຄຳຕອບ:** ຄຳຕອບສຳລັບຄຳຖາມນີ້ກໍ່ເປັນຄຳຕອບທົ່ວໄປຄື 'ແມ່ນ' ຫຼື 'ບໍ່ແມ່ນ'. ມັນເປັນໄປໄດ້

ວ່າຜູ້ຖືກສຳພາດບໍ່ໄດ້ຮູ້ເຖິງສະພາບການເສຍຊີວິດຂອງສະມາຊິກຄົວເຮືອນ. ໃນກໍລະນີນີ້,ໃຫ້ເລືອກຄຳຕອບແມ່ນ 'ບໍ່ຮູ້'.

**ຄຳຖາມ:** E.10. ການເສຍຊີວິດໃນເວລາຖືພາ – *<ຜູ້ເສຍຊີວິດ> ເສຍຊີວິດໃນເວລາຖືພາບໍ?*




**ຈຸດປະສົງ:** ຄຳຖາມນີ້ແມ່ນເພື່ອກວດສອບວ່າແມ່ຍິງທີ່ເສຍຊີວິດແມ່ນເສຍຊີວິດໃນເວລາຖືພາບໍ.

**ວິທີການບັນທຶກຄຳຕອບ:** ເລືອກຄຳຕອບ 'ແມ່ນ' ຖ້າວ່າແມ່ຍິງຄົນນັ້ນເສຍຊີວິດໃນເວລາຖືພາ ແລະ ເລືອກຄຳຕອບ 'ບໍ່ແມ່ນ' ຖ້າວ່າແມ່ຍິງຄົນນັ້ນບໍ່ໄດ້ຖືພາ. ໃນກໍລະນີ ຜູ້ຖືກສຳພາດບໍ່ໝັ້ນໃຈວ່າແມ່ຍິງຄົນນັ້ນຖືພາ ຫຼື ບໍ, ໃຫ້ນັກເດີນສຳຫຼວດສອບຖາມກັບສະມາຊິກໃນຄົວເຮືອນຄົນອື່ນຕື່ມອີກ.

**ຄຳຖາມ:** E.11. ການເສຍຊີວິດຫຼັງເກີດລູກ – *<ຜູ້ເສຍຊີວິດ> ເສຍຊີວິດຫຼັງເກີດລູກ ຫຼື ສິ້ນສຸດການຖືພາ ພາຍໃນ 6 ອາທິດ ຫຼື ບໍ?*




**ຈຸດປະສົງ:** ໃນໄລຍະເວລາ 42 ວັນ (6 ອາທິດ) ຫຼັງເກີດລູກ, ເອົາລູກອອກ ຫຼື ລຸລູກ ແມ່ນໄລຍະອ້າງອີງທີ່ກຳນົດວ່າການເສຍຊີວິດຂອງແມ່ຍິງຈັດຢູ່ໃນປະເພດການເສຍຊີວິດຂອງແມ່ ຫຼື ບໍ.

**ວິທີການບັນທຶກຄຳຕອບ:** ບັນທຶກຄາຕອບຕາມການຕອບຂອງຜູ້ຖືກສາພາດ.

**ຄຳຖາມ:** E.12. ການເສຍຊີວິດ ຜູ້ອື່ນ – *ມີສະມາຊິກຄົນອື່ນໆ ໃນຄົວເຮືອນນີ້ເສຍຊີວິດໃນ 12 ເດືອນທີ່ຜ່ານມາບໍ?*




**ຈຸດປະສົງ:** ເພື່ອກວດສອບເບິ່ງວ່າມີສະມາຊິກຄົວເຮືອນຄົນອື່ນທີ່ເສຍຊີວິດໃນ 12 ເດືອນຜ່ານມາບໍ.

**ວິທີການບັນທຶກຄຳຕອບ:** ຖ້າວ່າມີສະມາຊິກຄົນອື່ນໃນຄົວເຮືອນເສຍຊີວິດ ໃນ 12 ເດືອນທີ່ຜ່ານມາກ່ອນການສຳຫຼວດ, ໃຫ້ເລືອກຄຳຕອບ 'ມີ'. ໂປຼແກຼມຈະພາກັບໄປຫາຄຳຖາມທຳອິດຂອງພາກນີ້ ເພື່ອຖາມຂໍ້ມູນຂອງຜູ້ທີ່ເສຍຊີວິດຄົນອື່ນໆໃນຄົວເຮືອນ. ຖ້າຫາກບໍ່ມີຜູ້ເສຍຊີວິດຄົນອື່ນໆໃນຄົວເຮືອນ, ໃຫ້ເລືອກຄຳຕອບ 'ບໍ່ມີ'.ໃນກໍລະນີນີ້, ໂປຼແກຼມຈະສືບຕໍ່ຖາມຄຳຖາມໃນພາກຕໍ່ໄປ.

## 4.10. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ F – ຂໍ້ມູນຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ

ການຂຶ້ນບັນຊີຂອງຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ໃນພາກນີ້ ແມ່ນຈະໄດ້ຖືກເພີ່ມເຂົ້າໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ເພື່ອເກັບກຳພົນລະເມືອງທີ່ຍົກຍ້າຍໄປອາໄສຢູ່ຕ່າງປະເທດ, ເພື່ອບໍ່ໃຫ້ຖືກຈົດນັບເປັນສະມາຊິກຄົວເຮືອນທີ່ມີໜ້າຢູ່ເປັນປະຈຳ.

ເຊິ່ງຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ບໍ່ແມ່ນຜູ້ທີ່ອາໄສຢູ່ບ່ອນອື່ນໃນໃນປະເທດລາວເປັນເປັນປະຈຳ ແລະ ສະນັ້ນ, ເຂົາເຈົ້າບໍ່ຄວນຖືກຈົດນັບເອົາເປັນສ່ວນໜຶ່ງຂອງຄົວເຮືອນ ຫຼື ຈົດນັບເອົາບ່ອນໃດບ່ອນໜຶ່ງພາຍໃນປະເທດລາວ. ພວກເຂົາຄວນຈະຖືກຈົດນັບເປັນຜູ້ຢູ່ອາໄສໃນປະເທດທີ່ພວກເຂົາກຳລັງອາໄສຢູ່ ໂດຍເປັນສ່ວນໜຶ່ງຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂອງປະເທດນັ້ນ. ພາກ F ແມ່ນຈະເກັບ

ຂໍ້ມູນທີ່ຈຳກັດກ່ຽວກັບຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ. ຄຳຖາມສ່ວນຫຼາຍແມ່ນຄ້າຍຄືກັນກັບບາງຄຳຖາມທີ່ຖາມຢູ່ໃນພາກຂໍ້ມູນບັນຊີສະມາຊິກຄົວເຮືອນ (ພາກ C) ແລະ ພາກຂໍ້ມູນບຸກຄົນ (ພາກ D).

ບັນດາຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ໝາຍເຖິງຜູ້ທີ່ກ່ອນຈະຍ້າຍໄປອາໄສຢູ່ຕ່າງປະເທດ ແມ່ນອາໄສຢູ່ຄົວເຮືອນທີ່ກຳລັງສຳຫຼວດຢູ່ ແລະ ໃນເວລານັດໝາຍການສຳຫຼວດ ພວກເຂົາມີທີ່ຢູ່ອາໄສເປັນປະຈຳຢູ່ຕ່າງປະເທດ (ຜູ້ທີ່ໄດ້ອາໄສຢູ່ຕ່າງປະເທດ ເປັນເວລາ 6 ເດືອນຂຶ້ນໄປ ຫຼື ມີຈຸດປະສົງອາໄສຢູ່ທີ່ນັ້ນເປັນເວລາ 6 ເດືອນ ຂຶ້ນໄປ).

**ຄຳຖາມ:** F.01. ຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ ທີ່ໄປຢູ່ຕ່າງປະເທດ – *ມີຄົນໃດບໍ່ທີ່ເຄີຍເປັນສະມາຊິກຂອງຄົວເຮືອນນີ້ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ? ໝາຍເຖິງຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນນີ້ ກ່ອນຍ້າຍໄປຢູ່ຕ່າງປະເທດ ແລະ ບໍ່ແມ່ນຜູ້ທີ່ຍ້າຍໄປອາໄສຢູ່ບ່ອນອື່ນ ໃນສປປ ລາວ.*




**ຈຸດປະສົງ:** ຄຳຕອບຂອງຄຳຖາມ F.01 ຈະກຳນົດວ່ານັກເດີນສຳຫຼວດຕ້ອງການເລີ່ມຕົ້ນຖາມຄຳຖາມກ່ຽວກັບຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນ.

**ວິທີການບັນທຶກຄຳຕອບ:** ຖ້າວ່າມີຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ບັນທຶກຄຳຕອບ "ມີ", ຖ້າບໍ່ມີ ແມ່ນບັນທຶກຄາຕອບ "ບໍ່ມີ" ໂປຣແກຣມຈະເຕັ້ນຂ້າມໄປຖາມພາກຕໍ່ໄປ (ພາກ G ສຳລັບຂໍ້ມູນຜູ້ຢັ້ງຢາມຊົ່ວຄາວ).

**ໝາຍເຫດ:** ຄຳຖາມຕໍ່ໄປໃນພາກນີ້ຈະມີພຽງແຕ່ສະມາຊິກຄົວເຮືອນທີ່ກຳລັງອາໄສຢູ່ຕ່າງປະເທດເທົ່ານັ້ນທີ່ຈະຖືກຖາມເຖິງ.

**ຄຳຖາມ:** F.02. ຊື່ ຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ – *ຊື່ແທ້ຂອງຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ ແມ່ນຫຍັງ?*

**ຄຳຖາມ:** F.03. ນາມສະກຸນ ຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ – *ນາມສະກຸນ <ຂອງຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້> ແມ່ນຫຍັງ?*







**ຈຸດປະສົງ:** ສອງຄຳຖາມນີ້ແມ່ນເພື່ອຂຶ້ນບັນຊີຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ.

**ວິທີບັນທຶກຄຳຕອບ:** ຂຽນຊື່ ແລະ ນາມສະກຸນ ຂອງຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ໃນຄຳຖາມ F.02 ແລະ F.03, ຕາມລຳດັບ. ເຊັ່ນດຽວກັບໃນບັນຊີສະມາຊິກຄົວເຮືອນ, ຊື່ທີ່ໄດ້ບັນທຶກ ຈະຖືກໃຊ້ໃນຄຳຖາມຖັດໄປທັງໝົດກ່ຽວກັບຜູ້ທີ່ເຄີຍອາໄສໃນຄົວເຮືອນ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ.ສຳລັບບຸກຄົນທີ່ບໍ່ມີນາມສະກຸນແມ່ນໃຫ້ບັນທຶກວ່າ 'ບໍ່ມີນາມສະກຸນ'.

**ຄຳຖາມ:** F.04. ເພດ – *ເພດຂອງ <ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ> ແມ່ນເພດຫຍັງ?*



**ຈຸດປະສົງ:** ຂໍ້ມູນກ່ຽວກັບເພດຂອງຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ແມ່ນມີຄວາມສຳຄັນໃນການສຶກສາວ່າພົນລະເມືອງທີ່ຍົກຍ້າຍໄປຢູ່ຕ່າງປະເທດແມ່ນກ່ຽວຂ້ອງກັບເພດຄືແນວໃດ.

**ວິທີການບັນທຶກຄຳຕອບ:** ລະບຸເພດຂອງຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ. ເອົາໃຈໃສ່ເປັນພິເສດໃນການບັນທຶກເພດໃຫ້ຖືກຕ້ອງ.

**ຄຳຖາມ:** F.05. ອາຍຸ – *ອາຍຸຂອງ <ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ> ແມ່ນຈັກປີ?*




**ຈຸດປະສົງ:** ຂໍ້ມູນກ່ຽວກັບເພດຂອງຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ແມ່ນມີຄວາມສຳຄັນໃນການສຶກສາວ່າພົນລະເມືອງໃນກຸ່ມອາຍຸໃດທີ່ຍົກຍ້າຍໄປຢູ່ຕ່າງປະເທດ

**ວິທີການບັນທຶກຄຳຕອບ:** ໃຫ້ຖາມອາຍຸຂອງຜູ້ທີ່ເຄີຍອາໄສຢູ່ໃນຄົວເຮືອນນີ້ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ. ຖ້າຫາກບໍ່ຮູ້,ໃຫ້ພະຍາຍາມຄາດຄະເນໂດຍການສົມທຽບ ອາຍຸຂອງສະມາຊິກທີ່ອາໄສຢູ່ໃນຄວເຮືອນປະຈຸບັນ. ຕົວຢ່າງ: ຖ້າຜູ້ທີ່ເຄີຍອາໄສຢູ່ຄົວເຮືອນນີ້ແມ່ນພີ່ນ້ອງຂອງຫົວໜ້າຄົວເຮືອນ, ນັກເດີນສາມາດຖາມວ່າບຸກຄົນນັ້ນແມ່ນໜຸ່ມກວ່າ ຫຼື ແກ່ກວ່າຫົວໜ້າຄົວເຮືອນ ແລະ ໃຫ້ຖາມວ່າອາຍຸຫ່າງກັນຈັກປີ.

**ຄຳຖາມ:** F.06. ປະເທດທີ່ອາໄສຢູ່ປັດຈຸບັນ – *ປັດຈຸບັນ <ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ> ອາໄສຢູ່ປະເທດໃດ?*




**ຈຸດປະສົງ:** ເພື່ອເກັບກາຂໍ້ມູນວ່າຜູ້ທີ່ໄປອາໄສຢູ່ຕ່າງປະດທ ແແມ່ນໄປອາໄສຢູ່ປະເທດໃດ, ໂປຼແກຼມຈະສະແດງລາຍຊື່ທີ່ກຳນົດໄວ້ 5 ປະເທດ ເຊິ່ງເປັນປະເທດທີ່ມີການນົກຍ້າຍປະເທດລາວໄປຢູ່ຫຼາຍທີ່ສຸດ. ສັງເກດວ່າຈະບໍ່ລວມເອົາປະເທດລາວເຂົ້າໄປນຳ, ໃນພາກນີ້ຄວນຈະຈົດນັບເອົາສະເພາະບຸກຄົນທີ່ຍ້າຍໄປຢູ່ຕ່າງປະເທດເທົ່ານັ້ນ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກຄຳຕອບທີ່ກົງກັບປະເທດທີ່ບຸກຄົນທີ່ເຄີຍເປັນສະມາຊິກຄົວເຮືອນອາໄສຢູ່ໃນປັດຈຸບັນ.

**ໝາຍເຫດ:** ຖ້າວ່າພົບວ່າປະເທດທີ່ລາວອາໄສຢູ່ເປັນປະຈາແມ່ນປະເທດລາວ, ກໍ່ບໍ່ຄວນຈົດນັບບຸກຄົນນີ້ເປັນຜູ້ທີ່ເຄີຍຢູ່ອາໄສໃນຄົວເຮືອນນີ້ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ. ໃນະຖານະການດັ່ງກ່າວ, ນັກເດີນສຳຫຼວດຕ້ອງກັບໄປໃນແບບສອບຖາມ ແລະ ລຶບລາຍຊື່ບຸກຄົນນີ້ອອກຈາກການຂຶ້ນບັນຊີສຳລັບພາກນີ້.

ຖ້າວ່າປະເທດຂອງຜູ້ທີ່ເຄີຍອາໄສຢູ່ຄົວເຮືອນນີ້ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ ບໍ່ມີໃນບັນຊີທີ່ສະແດງໃນໜ້າຈໍແທັບເລັດ, ໃຫ້ເລືອກ 'ປະເທດອື່ນໆ' ແລະ ໂແປຼແກຼມຈະພາໄປຫາຄຳຖາມ F.07, ບ່ອນທີ່ສາມາດເລືອກລາຍຊື່ປະເທດອື່ນໆໄດ້.

**ຄຳຖາມ:** F.07. ປະເທດອື່ນໆ – *ປັດຈຸບັນ <ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ> ອາໄສຢູ່ປະເທດໃດ?*

**ຈຸດປະສົງ:** ຖ້າວ່າເລືອກຕົວເລືອກ 'ປະເທດອື່ນໆ' ເປັນຄໍາຕອບຂອງຄໍາຖາມ F.06, ໂປຼແກຼມຈະສະແດງລາຍຊື່ປະເທດທີ່ລຽງລໍາດັບຕາມຕົວອັກສອນໃນຄໍາຖາມ F.07, ແຕ່ບໍ່ລວມເອົາລາຍຊື່ປະເທດທີ່ສະແດງໃນຄໍາຖາມທີ F.06.




**ວິທີການບັນທຶກຄໍາຕອບ:** ນັກເດີນສໍາຫຼວດສາມາດເລືອກປະເທດທີ່ຜູ້ຖືກສໍາພາດຕອບໃນຄໍາຖາມທີ F.06 ໄດ້ໃນຂໍ້ນີ້. ເພື່ອຊອກຫາຊື່ປະເທດໃນບັນຊີລາຍຊື່ປະເທດ, ນັກເດີນສໍາຫຼວດສາມາດເລື່ອນລາຍການ ຫຼື ຄົ້ນຫາປະເທດ ໂດຍການພິມຕົວອັກສອນຕົວທໍາອິດຂອງຊື່ປະເທດໂດຍໃຊ້ສັນຍາລັກແວ່ນຂະຫຍາຍໃນແຖບສະຖານະ.

**ໝາຍເຫດ:** ນັກເດີນສໍາຫຼວດບໍ່ຈໍາເປັນຕ້ອງຖາມຄໍາຖາມນີ້ກ່ຽວກັບປະເທດທີ່ພວກເຂົາອາໄສຢູ່ອີກຄັ້ງ ໃນຄໍາຖາມ F.07, ເພາະວ່າຮູ້ຄໍາຕອບຢູ່ແລ້ວ. ດ້ວຍເຫດຜົນນີ້, ໜ້າຈໍແທັບເລັດຈຶ່ງສະແດງຄໍາຖາມທີ່ເປັນສີຂຽວ ໝາຍຄວາມວ່າຄໍາຖາມນີ້ແມ່ນມີໄວ້ສໍາລັບການອ້າງອີງສໍາລັບນັກເດີນສໍາຫຼວດເທົ່ານັ້ນ.

**ຄໍາຖາມ:** F.08. ປີທີ່ຍ້າຍອອກໄປ – *<ຜູ້ທີ່ເຄີຍອາໄສຢູ່> ຍ້າຍອອກໄປອາໄສຢູ່ຕ່າງປະເທດໃນປີໃດ?*




**ຈຸດປະສົງ:** ເພື່ອເກັບກໍາຂໍ້ມູນກ່ຽວກັບປີທີ່ບຸກຄົນຍົກຍ້າຍໄປອາໄສຢູ່ຕ່າງປະເທດ ຊຶ່ງເປັນຂໍ້ມູນຄິດໄລ່ໄລຍະເວລາການອາໄສຢູ່ຕ່າງປະເທດຂອງພົນລະເມືອງລາວ.

**ວິທີການບັນທຶກຄໍາຕອບ:** ບັນທຶກປີທີ່ຜູ້ເຄີຍເປັນສະມາຊິກຄົວເຮືອນ ແຕ່ປດຈຸບັນອາໄສຢູ່ຕ່າງປະເທດ ໄດ້ຍົກຍ້າຍອອກໄປຄັ້ງສຸດທ້າຍ. ນັກເດີນສໍາຫຼວດສາມາດບັນທຶກປີໃນລະຫວ່າງ ປີ 1995 ຫາ 2025. ສໍາລັບຜູ້ທີ່ຍົກຍ້າຍໄປອາໄສຢູ່ຕ່າງປະເທດຫຼາຍກວ່າ 30 ປີ ແມ່ນບໍ່ໃຫ້ລວມເຂົ້າໃນບັນຊີໃນພາກນີ້ ເຖິງແມ່ນວ່າເຂົ້າເຈົ້າຍັງຖືສັນຊາດລາວຢູ່ກໍຕາມ. ໃນກໍລະນີຜູ້ຖືກສໍາພາດບໍ່ຈື່ວ່າຜູ້ທີ່ເຄີຍເປັນສາມະຊິກຄົວເຮືອນຍົກຍ້າຍໄປອາໄສຢູ່ຕ່າງປະເທດໃນປີໃດ ແມ່ນໃຫ້ຖາມວ່າບຸກຄົນດັ່ງກ່າວຍົກຍ້ານໄປອາໄສຢູ່ຕ່າງປະເທດໄດ້ຈັກປີແລ້ວ ຫຼັງຈາກນັ້ນຈຶ່ງຄິດໄລ່ຄືນວ່າວ່າຍົກຍ້າຍໄປຢູ່ຕ່າງປະເທດໃນປີໃດ.

**ຄຳຖາມ:** F.09. ເຫດຜົນການຍົກຍ້າຍໄປຕ່າງເທດ – *ເຫດຜົນຫຍັງ ທີ່ເຮັດໃຫ້ <ຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ> ຍົກຍ້າຍອອກໄປອາໄສຢູ່ຕ່າງປະເທດ?*




**ຈຸດປະສົງ:** ເພື່ອເກັບກຳວ່າຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ແມ່ນຍ້ອນສາເຫັດໃດເຂົາເຈົ້າຈຶ່ງຍົກຍ້າຍໄປອາໄສຢູ່ຕ່າງປະເທດ.

**ວິທີການບັນທຶກຄຳຕອບ:** ຖ້າວ່າເຫດຜົນຂອງຜູ້ຖືກສຳພາດບໍ່ສາມາດຈັດເຂົ້າຢູ່ໃນລາຍການຕົວເລືອກຄຳຕອບທັງ 10 ຂໍ້ທີ່ໄດ້ສະແດງຢູ່ໜ້າຈໍ, ໃຫ້ເລືອກ 'ອື່ນໆ'. ໃນກໍລະນີນີ້,ໃນຄຳຖາມຖັດໄປນັກເດີນສຳຫຼວດຕ້ອງໄດ້ລະບຸແຈ້ງສຳລັບເຫດຜົນອື່ນໆນີ້. ເລືອກຄຳຕອບ 'ບໍ່ຮູ້' ຖ້າຫາກເຫດຜົນບໍ່ຈະແຈ້ງ ຫຼື ຜູ້ຖືກສຳພາດບໍ່ຮູ້.

**ໝາຍເຫດ:** ເຫດຜົນຂອງການຍົກຍ້າຍໄປອາໄສຢູ່ຕ່າງປະເທດທີ່ໄດ້ສະແດງໃນໜ້າຈໍແທັບເລັດ ແມ່ນຄືກັນກັບເຫດຜົນທີ່ໄດ້ລະບຸໄວ້ ໃນຄຳຖາມ D.25 (ເຫດຜົນໃນການຍົກຍ້າຍມາອາໄສຢູ່ທີ່ຢູ່ປັດຈຸບັນ). ສຳລັບຄຳແນະນຳກ່ຽວກັບເຫດຜົນທີ່ແຕກຕ່າງ, ໃຫ້ເບິ່ງຄຳແນະນຳສຳລັບຄຳຖາມທີ D.25.

**ຄຳຖາມ:** F.10. ຜູ້ທີ່ເຄີຍອາໄສໃນຄົວເຮືອນນີ້ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ ຄົນອື່ນ – *ມີໃຜອີກບໍ ທີ່ເຄີຍສະມາຊິກຄົວເຮືອນນີ້ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ?*




**ຈຸດປະສົງ:** ເມື່ອສຳເລັດການສຳພາດສຳລັບຜູ້ທີ່ເຄີຍເປັນສະມາຊິກຄົນທຳອິດ ທີ່ປັດຈຸບັນອາໄສຢູ່ຕ່າງປະເທດ, ໂປຼແກຼມຈະຖາມວ່າມີຜູ້ທີ່ເຄີຍເປັນສະມາຊິກຄົວເຮືອນນີ້ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດ ຄົນອື່ນອີກບໍ ເພື່ອກວດສອບວ່າທຸກຄົນທີ່ເຄີຍເປັນສະມາຊິກຄົວເຮືອນ ແຕ່ປັດຈຸບັນອາໄສຢູ່ຕ່າງປະເທດແມ່ນໄດ້ຖືກຂຶ້ນບັນຊີທັງໝົດ.

**ວິທີການບັນທຶກຄຳຕອບ:** ຖ້າຜູ້ຖືກສາພາດຕອບວ່າ 'ມີ', ໂປຼແກຼມຈະພາກັບໄປຫາຄຳ F.02 ເພື່ອເກັບກຳຂໍ້ມູນສະເພາະຂອງບຸກຄົນຖັດໄປ. ຖ້າຕອບວ່າ 'ບໍ່ມີ', ໂປຼແກຼມຈະສືບຕໍ່ຖາມພາກ G.

## 4.11. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ G – ຂໍ້ມູນຜູ້ຢ້ຽມຢາມຊົ່ວຄາວ

ໃນພາກນີ້ຈະເກັບກຳຂໍ້ມູນກ່ຽວກັບຜູ້ທີ່ອາໄສຢູ່ທີ່ຢູ່ອາໄສໃນຄືນສຳຫຼວດ (ຄືນວັນທີ 2 ຫາ 3 ພະຈິກ 2025), ແຕ່ບໍ່ແມ່ນສະມາຊິກຄົວເຮືອນທີມີໜ້າຢູ່ເປັນປະຈຳ. ຂໍ້ມູນຄຸນລັກສະນະຂອງບຸກຄົນເຫຼົ່ານີ້ຈຳນວນໜຶ່ງແມ່ນຈະໄດ້ຖືກເກັບກຳ. ຂໍ້ມູນທີ່ຄົບຖ້ວນຂອງພວກເຂົາຈະຖືກເກັບກຳໃນຄົວເຮືອນບ່ອນທີ່ພວກເຂົາອາໄສຢູ່ເປັນປະຈຳ.

**ຄຳຖາມ:** G.01. ຜູ້ຢ້ຽມຢາມຊົ່ວຄາວ – *ມີຜູ້ຢ້ຽມຢາມ ພັກເຊົາຊົ່ວຄາວຢູ່ໃນຄົວເຮືອນນີ້ບໍ ໃນຄືນສຳຫຼວດ <ຄືນວັນທີ 2 ຫາ 3 ພະຈິກ 2025>?*




**ຈຸດປະສົງ:** ນີ້ເປັນຄຳຖາມທີ່ກົງໄປກົງມາກວດເບິ່ງວ່າມີໃຜບໍທີ່ອາໄສຢູ່ຄົວເຮືອນຊົ່ວຄາວໃນຄືນສຳຫຼວດ.

**ວິທີການບັນທຶກຄຳຕອບ:** ມາຮອດຕອນນີ້, ນັກເດີນສຳຫຼວດໄດ້ຮູ້ແລ້ວວ່າສະມາຊິກຄົວເຮືອນທີ່ມີໜ້າຢູ່ປະຈຳແມ່ນໃຜແດ່ ຖ້າວ່າມີ ເລືອກບັນທຶກ 'ມີ'. ໃນຂະນະທີ່ການສຳພາດເກີດຂຶ້ນຫຼັງຈາກຄືນສຳຫຼວດ, ອາດເປັນໄປໄດ້ວ່າມີຄົນມາພັກເຊົາຢູ່ກັບຄົວເຮືອນນັ້ນ ແຕ່ບໍ່ໄດ້ຢູ່ດົນ, ໃນກໍລະນີນີ້, ຄວນຈະຈົດນັບເອົາບຸກຄົນນັ້ນເປັນຜູ້ຢ້ຽມຢາມຊົ່ວຄາວ ແຕ່ຖ້າວ່າຄົນນັ້ນແມ່ນກຳລັງພັກເຊົາຢູ່ໃນຄົວເຮືອນນັ້ນແຕ່ບໍ່ແມ່ນຄືນສຳຫຼວດ ແມ່ນຈະບໍ່ໄດ້ຈົດນັບເອົາວ່າແມ່ນຜູ້ຢ້ຽມຢາມຊົ່ວຄາວ.

**ໝາຍເຫດ:** ຖ້າວ່າຜູ້ຢ້ຽມຢາມຊົ່ວຄາວທີ່ພັກເຊົາຢູ່ກັບຄົວເຮືອນໃນຄືນສຳຫຼວດນັ້ນມີໜ້າຢູ່ໃນເວລາສຳພາດ, ວິທີທີ່ດີທີ່ສຸດແມ່ນໃຫ້ນັກເດີນສຳຫຼວດສຳພາດກັບບຸກຄົນນັ້ນດ້ວຍຕົນເອງເລີຍ.

**ຄຳຖາມ:** G.02. ຊື່ແທ້ຂອງຜູ້ຢ້ຽມຢາມຊົ່ວຄາວ – *ຊື່ແທ້ຂອງຜູ້ຢ້ຽມຢາມຊົ່ວຄາວ ທີ່ອາໄສຊົ່ວຄາວໃນຄົວເຮືອນໃນຄືນສຳຫຼວດແມ່ນຊື່ຫຍັງ?*




**ຄຳຖາມ:** G.03. ນາມສະກຸນຂອງຜູ້ຢ້ຽມຢາມຊົ່ວຄາວ– *ນາມສະກຸນ <ຜູ້ຢ້ຽມຢາມຊົ່ວຄາວ> ທີ່ອາໄສຊົ່ວຄາວໃນຄົວເຮືອນໃນຄືນສຳຫຼວດແມ່ນຫຍັງ?*




**ຈຸດປະສົງ:** ເພື່ອຂຶ້ນບັນຊີຜູ້ທີ່ມາຢ້ຽມຢາມຄົວເຮືອນຊົ່ວຄາວໃນຄືນສຳຫຼວດ. ຊື່ຂອງຜູ້ທີ່ມາຢ້ຽມຢາມຊົ່ວຄາວແມ່ນໃຊ້ສຳລັບຄຳຖາມໃນແບບສອບຖາມເທົ່ານັ້ນ.

**ວິທີການບັນທຶກຄຳຕອບ:** ພິມຊື່ ແລະ ນາມສະກຸນຜູ້ທີ່ມາຢ້ຽມຢາມຊົ່ວຄາວໃນຄົວເຮືອນໃສ່ຊ່ອງຄຳຕອບໃຫ້ຖືກຕ້ອງ, ສຳລັບຜູ້ທີ່ບໍ່ມີນາມສະກຸນ, ໃຫ້ບັນທຶກວ່າ 'ບໍ່ມີນາມສະກຸນ' ໃນຄຳຕອບຂອງຄຳຖາມ G.04.

**ຄຳຖາມ:** G.04. ເພດ – *ເພດຂອງ <ຜູ້ຢ້ຽມຢາມຊົ່ວຄາວ> ແມ່ນເພດຫຍັງ?*




**ຈຸດປະສົງ:** ບັນເກັບກາຂໍ້ມູນເພດຂອງຜູ້ທີ່ມາຢ້ຽມຢາມຊົ່ວຄາວໃນຄົວເຮືອນ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກເພດຂອງຜູ້ຢ້ຽມຢາມໃຫ້ຖືກຕ້ອງ. ລະມັດລະວັງເປັນພິເສດໃນການບັນທຶກເພດຂອງຜູ້ຢ້ຽມຢາມທີ່ເປັນເດັກນ້ອຍຢ່າງຖືກຕ້ອງ.

**ຄຳຖາມ:** G.05. ອາຍຸ – *ອາຍຸຂອງ <ຜູ້ຢ້ຽມຢາມຊົ່ວຄາວ> ແມ່ນຈັກປີ?*




**ຈຸດປະສົງ:** ເພື່ອເກັບກາຂໍ້ມູນກ່ຽວກັບອາຍຸຂອງຜູ້ທີ່ມາຢ້ຽມຢາມຊົ່ວຄາວໃນຄົວເຮືອນ

**ວິທີການການບັນທຶກຄຳຕອບ:** ໃຫ້ຖາມ ແລະ ບັນທຶກອາຍຸຂອງຜູ້ຢ້ຽມຢາມຊົ່ວຄາວເປັນປີເຕັມ. ຖ້າຫາກບໍ່ຮູ້ອາຍຸ, ພະຍາຍາມຄາດຄະເນອາຍຸຮ່ວມກັບຜູ້ໃຫ້ສຳພາດ. ຕົວຢ່າງ: ຖາມວ່າຜູ້ມາຢ້ຽມຢາມຊົ່ວຄາວໜຸ່ມກວ່າ ຫຼື ແກ່ກວ່າຫົວໜ້າຄົວເຮືອນ ຫຼື ສະມາຊິກໃນຄົວເຮືອນຄົນໃດໜຶ່ງ. ຈາກນັ້ນ, ໃຫ້ສອບຖາມວ່າອາຍຸ ໜ້ອຍກວ່າ ຫຼື ຫຼາຍກວ່າຈັກປີ.

**ຄຳຖາມ:** G.06. ປະເທດທີ່ຢູ່ອາໄສໃນປະຈຸບັນ – *ປັດຈຸບັນ <ຜູ້ຢັ້ງມຢາມຊົ່ວຄາວ> ອາໄສຢູ່ເປັນປະຈຳໃນປະເທດໃດ?*




**ຈຸດປະສົງ:** ເພື່ອເກັບກາຂໍ້ມູນກ່ຽວກັບປະເທດທີ່ຜູ້ມາຢັ້ງມຢາມຊົ່ວຄາວອາໄສຢູ່ເປັນປະຈຳແມ່ນປະເທດໃດ.

**ວິທີການບັນທຶກຄຳຕອບ:** ສາລັບປະເທດທີ່ຜູ້ຢັ້ງມຢາມຊົ່ວຄາວອາໄສຢູ່, ໃຫ້ເລືອກຄຳຕອບທີ່ເໝາະສົມຈາກລາຍການຕົວເລືອກຄຳຕອບຂອງຄຳຖາມ G.06. ຖ້າວ່າບໍ່ມີລາຍຊື່ປະເທດໃນບັນຊີ, ໃຫ້ເລືອກ 'ປະເທດອື່ນໆ'. ໃນກໍລະນີນີ້, ນັກເດີນສຳຫຼວດສາມາດເລືອກຊື່ປະເທດທີ່ອາໄສຢູ່ຈາກບັນຊີລາຍຊື່ປະເທດທັງໝົດໃນຄຳຖາມ G.07.

**ຄຳຖາມ:** G.07. ປະເທດອື່ນໆ – *ປັດຈຸບັນ <ຜູ້ຢັ້ງມຢາມຊົ່ວຄາວ> ອາໄສຢູ່ເປັນປະຈຳໃນປະເທດໃດ?*




**ຈຸດປະສົງ:** ເພື່ອໃຫ້ນັກເດີນສາຫຼວດສາມາດເລືອກປະເທດໃດກໍ່ໄດ້ເປັນເປັນປະເທດທີ່ຜູ້ມາຢັ້ງມຢາມຊົ່ວຄາວອາໄສຢູ່ເປັນປະຈຳ.

**ວິທີການບັນທຶກຄຳຕອບ:** ໃນຄຳຖາມ G.07 ທ່ານຕ້ອງລະບຸແຈ້ງຊື່ປະເທດທີ່ຜູ້ຢັ້ງມຢາມຊົ່ວຄາວອາໄສຢູ່ໃນປັດຈຸບັນ, ໃນກໍລະນີທີ່ບໍ່ມີຊື່ປະເທດໃນບັນຊີຂອງຄຳຖາມ G.06.

**ຄຳຖາມ:** G.08. ແຂວງ ທີ່ອາໄສຢູ່ໃນປັດຈຸບັນ – *<ຜູ້ຢັ້ງມຢາມຊົ່ວຄາວ> ກຳລັງອາໄສຢູ່ແຂວງໃດ?*

**ຄຳຖາມ:** G.09. ເມືອງ ທີ່ຢູ່ອາໄສໃນປັດຈຸບັນ – *<ຜູ້ຢັ້ງມຢາມຊົ່ວຄາວ> ກຳລັງອາໄສຢູ່ເມືອງໃດ?*







**ຈຸດປະສົງ:** ສາລັບຜູ້ຢັ້ງມຢາມຊົ່ວຄາວທີ່ອາໄສຢູ່ໃນປະເທດລາວ, ນັກເດີນສຳຫຼວດຕ້ອງຖາມວ່າແຂວງທີ່ພວກເຂົາກຳລັງອາໄສຢູ່ເປັນປະຈຳ. ຫຼັງຈາກນັ້ນໂປຼແກຼມຈະຖາມຄຳຖາມ G.09 ສຳລັບຊື່ເມືອງທີ່ພວກເຂົາກຳລັງອາໄສຢູ່ເປັນປະຈຳ. ເຊິ່ງຈະແດງລາຍຊື່ເມືອງທີ່ຂຶ້ນກັບແຂວງທີ່ໄດ້ເລືອກໃນ ຄຳຖາມ G.08 ຂຶ້ນມາເທົ່ານັ້ນ.

**ວິທີການບັນທຶກຄຳຕອບ:** ເລືອກບັນທຶກຄຳຕອບແຂວງ ແລະ ເມືອງໃຫ້ຖືກຕ້ອງຕາມການຕອບຂອງຜູ້ຖືກສຳພາດ.

**ຄຳຖາມ:** G.10. ຜູ້ຢັ້ງມຢາມຊົ່ວຄາວ ຄົນອື່ນໆ – *ມີຜູ້ຢັ້ງມຢາມຊົ່ວຄາວ ຄົນອື່ນອີກບໍ ທີ່ມາພັກເຊົາຊົ່ວຄາວໃນຄົວເຮືອນນີ້ໃນຄືນສຳຫຼວດ <ຄືນວັນທີ 2 ຫາ 3 ພະຈິກ 2025 ຜະ>?*




**ຈຸດປະສົງ:** ເພື່ອກວດສອບວ່າມີຜູ້ທີ່ມາຢັ້ງມຢາມຊົ່ວຄາວຄົນອື່ອີກບໍ ແລະ ຮັບປະກັນວ່າໄດ້ຂຶ້ນບັນຊີຢ່າງຄົບຖ້ວນ.

**ວິທີການບັນທຶກຄຳຕອບ:** ຖ້າວ່າມີຜູ້ຢັ້ງຢາມຊົ່ວຄາວຄົນອື່ນອີກໃນຄືນສຳຫຼວດ, ໃຫ້ເລືອກ 'ມີ' ແລະ ໂປຣແກຣມຈະນຳກັບໄປຫາຄຳຖາມ G.03 ຄືນ ເພື່ອເພີ່ມຂໍ້ມູນຜູ້ຢັ້ງຢາມຊົ່ວຄາວຄົນຕໍ່ໄປ. ຖ້າຕອບວ່າ 'ບໍ່ມີ' ໂປຼແກຼມຈະພາໄປຫາສອງສາມຄຳຖາມສຸດທ້າຍຂອງການສຳພາດ.

## 4.12. ວິທີການສອບຖາມ ແລະ ບັນທຶກຄຳຕອບ ແບບສອບຖາມພາກ H – ສຳເລັດການສຳພາດ

**ຄຳຖາມ:** H.01. ປື້ມສຳມະໂນຄົວ – *ຄົວເຮືອນນີ້ມີປື້ມສຳມະໂນຄົວບໍ່?*




**ຈຸດປະສົງ:** ເພື່ອກວດສອບວ່າຄົວເຮືອນມີປື້ມສາມະໂນຄົວ ຫຼື ບໍ່.

**ວິທີການບັນທຶກຄຳຕອບ:** ຄົວເຮືອນສ່ວນຫຼາຍແມ່ນມີປື້ມສຳມະໂນຄົວແລ້ວ, ເຊິ່ງສະມາຊິກທັງໝົດຂອງຄົວເຮືອນ ຫຼື ຄອບຄົວແມ່ນໄດ້ລົງທະບຽນແລ້ວ. ໃນຄຳຖາມນີ້, ນັກເດີນສຳຫຼວດຈະໄດ້ຖາມວ່າຄົວເຮືອນມີປື້ມສຳມະໂນຄົວບໍ?. ບໍ່ຈຳເປັນຕ້ອງໃຫ້ຜູ້ຖືກສຳພາດສະແດງປື້ມສຳມະໂນຄົວໃຫ້ເບິ່ງ.

**ໝາຍເຫດ:** ຜູ້ທີ່ມີລາຍຊື່ໃນປື້ມສຳມະໂນຄົວ ບໍ່ຈຳເປັນຕ້ອງແມ່ນບຸກຄົນທີ່ເປັນສະມາຊິກຄົວເຮືອນທີ່ອາໄສຢູ່ເປັນປະຈຳ ໂດຍອີງຕາມນິຍາມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ.

**ຄຳຖາມ:** H.02. ການຈົດທະບຽນປື້ມສຳມະໂນຄົວ – *ຄົວເຮືອນນີ້ມີປື້ມສຳມະໂນຄົວຈັກຫົວ?*




**ຈຸດປະສົງ:** ເພື່ອກວດສອບວ່າຄົວເຮືອນມີປື້ມສາມະໂນຄົວຈັກຫົວ.

**ວິທີການບັນທຶກຄຳຕອບ:** ບາງຄົວເຮືອນແມ່ນມີປື້ມສາມະໂນຄົວຫຼາຍກວ່າໜຶ່ງຫົວ. ໃນຄຳຖາມນີ້, ນັກເດີນສຳຫຼວດຕ້ອງຖາມວ່າສະມາຊິກຄົວເຮືອນມີປື້ມສຳມະໂນຄົວທັງໝົດຈັກຫົວ. ບັນທຶກຈຳນວນປື້ມສຳມະໂນຄົວຕາມທີ່ຜູ້ຖືກສຳພາດຕອບມາ.

**ຄຳຖາມ:** H.03. ເບີໂທຕິດຕໍ່– *ຂໍຂອບໃຈສຳລັບການໃຫ້ການຮ່ວມມື. ກະລຸນາໃຫ້ເບີໂທຕິດຕໍ່ຂອງທ່ານ ເພື່ອກໍລະນີມີຄຳຖາມທີ່ຈຳເປັນເພີ່ມຕື່ມ*




**ຈຸດປະສົງ:** ເພື່ອສະດວກໃນການຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມຈາກຄົວເຮືອນ. ໃນຄຳຖາມນີ້, ນັກເດີນສຳຫຼວດຕ້ອງໄດ້ຂອບໃຈຜູ້ຖືກສຳພາດສຳລັບການຮ່ວມມື ແລະ ຖາມເບີໂທຕິດຕໍ່ຂອງພວກເຂົາ. ເຊິ່ງຈະເຮັດໃຫ້ນັກເດີນສຳຫຼວດ ຫຼື ພະນັກງານຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ສາມາດຕິດຕໍ່ກັບຄົວເຮືອນໄດ້ ຖ້າວ່າຕ້ອງການຖາມຄຳຖາມເພີ່ມເຕີມ.

**ວິທີການບັນທຶກຄຳຕອບ:** ພິມເບີໂທຕິດຕໍ່ໃສ່ຊ່ອງຄາຕອບໃຫ້ຖືກຕ້ອງ. ຖ້າວ່າຜູ້ຖືກສຳພາດບໍ່ມີໂທລະສັບ, ໃຫ້ຖາມເບີໂທລະສັບຂອງສະມຊິກຄົນອື່ນ. ໃນກໍລະນີ ບໍ່ມີເບີໂທລະສັບ ຫຼື ຜູ້ຖືກສຳພາດບໍ່ຕ້ອງການເປີດເຜີຍໝາຍເລກໂທລະສັບ, ນັກເດີນສຳຫຼວດສາມາດປະວ່າງໃນຊ່ອງຄຳຕອບຂອງຄຳຖາມນີ້ໄດ້.

**ຄຳຖາມ:** H.04. ກາໝາຍສຳຫຼວດພົນລະເມືອງ – *ມີກາໝາຍສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທີ່ມີເລກລະຫັດການສຳຫຼວດ ຕິດໃສ່ທາງເຂົ້າ ຫຼື ທີ່ຢູ່ອາໄສຂອງບໍ?*




ຈຸດປະສົງ: ເພື່ອໃຫ້ນັກເດີນສຳຫຼວດຄວນຕິດກາໝາຍສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄວ້ເທິງປະຕູຂອງ ຫຼື ໜ້າປະຕູຂອງທີ່ຢູ່ອາໄສ.

**ວິທີການບັນທຶກຄຳຕອບ:** ຄຳຕອບຂອງຄຳຖາມນີ້ຄວນຈະຕອບວ່າ 'ມີ' ສະເໝີ. ໃນກໍລະນີນີ້, ຄຳຖາມ H.05 ຈະໃຫ້ນັກເດີນສຳຫຼວດສະແກນບາໂຄດ(barcode) ທີ່ຢູ່ໃນກາໝາຍສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ.

**ຄຳຖາມ:** H.05. ເລກລະຫັດໃນກາໝາຍສຳຫຼວດ – *ກະລຸນາສະແກນບາໂຄດ:*




**ຈຸດປະສົງ:** ເພື່ອບັນທຶກລະຫັດບາໂຄດຂອງການສາຫຼວດເຂົ້າໃນແບບສອບຖາມການສຳຫຼວດ.

**ວິທີການບັນທຶກຄຳຕອບ:** ເປີດກ້ອງຖ່າຍຮູບໃນແທັບເລັດໂດຍການກົດໃສ່ຮູບບາໂຄດທີ່ຢູ່ເບື້ອງຂວາມືຂອງຊ່ອງຄຳຕອບ. ໃຫ້ນັກເດີນສຳຫຼວດຫຍັບກ້ອງຖ່າຍຮູບຂອງແທັບເລັດໄປຈົນກວ່າຈະເຫັນຫາກາໝາຍສຳຫຼວດ ແລະ ບາໂຄດ (barcode). ໂປຼແກຼມຈະອ່ານບາໂຄດ (barcode) ຢ່າງອັດຕະໂນມັດ ແລະ ກັບໄປຫາຄຳຖາມ H.05 ຄືນ. ຫຼັງຈາກນັ້ນນັກເດີນສຳຫຼວດຈະສາມາດເຫັນຕົວເລກບາໂຄດ (barcode) ໃນຊ່ອງຄຳຕອບໄດ້.

ຫຼັງຈາກນັ້ນ ຖ້າວ່ານັກເດີນສຳຫຼວດກົດປຸ່ມລູກສອນນຳທາງຢູ່ເບື້ອງຂວາມື, ໂປຼແກຼມຈະຖາມໃຫ້ນັກເດີນສຳຫຼວດຢືນຢັນການສຳເລັດການສຳພາດໂດຍການກົດຍອມຮັບ (Accept Case).




**ໝາຍເຫດ:** ຖ້າມີຄົວເຮືອນອື່ນໆອີກໃນທີ່ຢູ່ອາໄສດຽວກັນ, ໂປຼແກຼມຈະເລີ່ມແບບສອບຖາມໃໝ່ອີກຄັ້ງສຳລັບຄົວເຮືອນຕໍ່ໄປ.

ຖ້າວ່າມີທີ່ຢູ່ອາໄສອື່ນໆອີກໃນອາຄານດຽວກັນ, ນັກເດີນສຳຫຼວດສາມາດເປີດການຈົດນັບສຳລັບອານັ້ນອີກຄັ້ງໂດຍການກົດໃສ່ຈຸດສີເຫຼືອງ ແລະ ເລືອກຕົວເລືອກໃນການເພີ່ມທີ່ຢູ່ອາໄສໃໝ່ໃນອາຄານນັ້ນ. ໃຫ້ນັກເດີນສຳຫຼວດສືບຕໍ່ປະຕິບັດຕາມນີ້ຈົນກວ່າທຸກໆທີ່ຢູ່ອາໄສໃນອາຄານ:

- ໄດ້ຈົດນັບຄົວເຮືອນທັງໝົດທີ່ອາໄສຢູ່ໃນອາຄານນັ້ນ;
- ໄດ້ຈົດນັບທີ່ຢູ່ອາໄສຫວ່າງເປົ່າພ້ອມກັບສຳເລັດການຕອບແບບສອບຖາມໂດຍຫຍໍ້;
- ໄດ້ຈົດນັບພ້ອມກັບສຳເລັດການຕອບແບບສອບຖາມຫຍໍ້ ຫຼັງຈາກທີ່ພະຍາຍາມຕິດຕໍ່ຫາຄົວເຮືອນທີ່ອາໄສຢູ່ໃນທີ່ນັ້ນແຕ່ບໍ່ສຳເລັດ ຢ່າງໜ້ອຍ 3 ຄັ້ງ;
- ໄດ້ຈົດນັບພ້ອມກັບສຳເລັດການຕອບແບບສອບຖາມຫຍໍ້ ຫຼັງຈາກທີ່ຄົວເຮືອນປະຕິເສດໃຫ້ການຮ່ວມມືໃນການສຳພາດ.

ຖ້າວ່າທຸກໆທີ່ຢູ່ອາໄສໃນອາຄານໄດ້ຖືກຈົດນັບແລ້ວ, ໃຫ້ນັກເດີນສຳຫຼວດແຕະໃສ່ຈຸດອາຄານອີກຄັ້ງ ແລ້ວກົດປຸ່ມ 'ປິດການສຳຫຼວດສຳລັບອາຄານນີ້'. ຖ້າວ່າຢືນຢັນການດຳເນີນການນີ້, ໝາຍຄວາມວ່ານັກເດີນສຳຫຼວດໄດ້ສຳເລັດສຳລັບການສຳຫຼວດອາຄານນີ້ແລ້ວ.

# V. ການເກັບກຳຂໍ້ມູນຄົວເຮືອນລວມໝູ່

## 5.1. ປະເພດຄົວເຮືອນລວມໝູ່

ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ, ນັກເດີນສຳຫຼວດຈະໄດ້ຮັບຜິດຊອບທັງການເກັບກຳຂໍ້ມູນຄົວເຮືອນລວມໝູ່ ໃນເຂດສຳຫຼວດທີ່ຕົນຮັບຜິດຊອບ. ເນື່ອງຈາກວ່ານັກເດີນສຳຫຼວດຕ້ອງເກັບກຳຂໍ້ມູນພົນລະເມືອງທີ່ອາໄສຢູ່ໃນຄົວເຮືອນລວມໝູ່ ຈຶ່ງສຳຄັນຫຼາຍທີ່ນັກເດີນສຳຫຼວດຈະຕ້ອງຮູ້ຢ່າງເລິກເຊິ່ງເຖິງນິຍາມຂອງທີ່ຢູ່ອາໄສຄົວເຮືອນລວມໝູ່. ອີງຕາມອົງການສະຫະປະຊາຊາດ, ທີ່ຢູ່ອາໄສຄົວເຮືອນລວມໝູ່ແມ່ນປະກອບມີສະຖານທີ່ຢູ່ອາໄສທີ່ແຍກອອກຈາກກັນທາງໂຄງສ້າງ ແລະ ເປັນເອກະລາດ ມີຈຸດປະສົງເພື່ອໃຫ້ກຸ່ມຄົນຈຳນວນຫຼາຍ ຫຼື ຫຼາຍຄົວເຮືອນອາໄສຢູ່ ແລະ ອາໄສຢູ່ໃນໄລຍະການສຳຫຼວດ. ປົກກະຕິແລ້ວທີ່ຢູ່ອາໄສຄົວເຮືອນລວມໝູ່ຈະມີສິ່ງອຳນວຍຄວາມສະດວກສ່ວນກາງເຊັ່ນ: ບ່ອນແຕ່ງກິນ ແລະ ຫ້ອງຖ່າຍ, ຫ້ອງອາບນ້ຳ, ຫ້ອງນັ່ງຫຼິ້ນ ຫຼື ຫ້ອງພັກທີ່ຜູ້ຢູ່ອາໄສໃຊ້ຮ່ວມກັນ ຊຶ່ງຄົວເຮືອນລວມໝູ່ອາດຈະຖືກຈັດວ່າເປັນໂຮງແຮມ, ເຮືອນໃຫ້ເຊົ່າເປັນຫ້ອງ, ເຮືອນພັກຕ່າງໆ, ສະຖາບັນຕ່າງໆ, ຄ້າຍທີ່ພັກ ແລະ ອື່ນໆ. ແຜນວາດລຸ່ມນີ້ສະແດງໃຫ້ເຫັນປະເພດຕ່າງໆຂອງຄົວເຮືອນລວມໝູ່.

**ປະເພດທີ່ຢູ່ອາໄສຄົວເຮືອນລວມໝູ່**




ປະເພດຂອງຄົວເຮືອນລວມໝູ່ ປະກອບມີດັ່ງຕໍ່ໄປນີ້:

1) <u>ໂຮງແຮມ, ເຮືອນພັກ ແລະ ສະຖານທີ່ບໍລິການທີ່ພັກອື່ນໆ:</u> ປະກອບດ້ວຍໂຄງສ້າງຖາວອນເຊິ່ງໃຫ້ບໍລິການທີ່ພັກໂດຍມີຄ່າເຊົ່າ. ໂຮງແຮມ,ພັກ,ເຮືອນເຊົ່າ, ເຮືອນພັກ ແລະ ອື່ນໆ ແມ່ນຈັດຢູ່ໃນໝວດໝູ່ນີ້ ຖ້າຫາກມີບ່ອນພັກອາໄສໃດໜຶ່ງພາຍໃນໂຮງແຮມ ຫຼື ສະຖານທີ່ຄ້າຍຄືກັນ ທີ່ຄົວເຮືອນຄອບຄອງ ແລະ ສອດຄ່ອງຕາມຂໍ້ກຳນົດຂອງທີ່ຢູ່ອາໄສທົ່ວໄປ, ມັນຄວນຖືກຈັດເປັນທີ່ຢູ່ອາໄສປະເພດນີ້. ຖ້າວ່າມີບ່ອນຢູ່ອາໄສຢູ່ໃນໂຮງແຮມ, ເຮືອນພັກ ຫຼື ສະຖານທີ່ບໍລິການທີ່ພັກອື່ນໆ ທີ່ມີຄົວເຮືອນສ່ວນບຸກຄົນອາໄສຢູ່ ແລະ ສອດຄອງກັບນິຍາມທີ່ຢູ່ອາໄສຄົວເຮືອນສ່ວນບຸກຄົນ ຄວນຖືກຈັດເປັນຄົວເຮືອນສ່ວນບຸກຄົນ. ສະເພາະຜູ້ທີ່ພັກເຊົາຢູ່ສະຖານທີ່ດັ່ງກ່າວ 6 ເດືອນຂຶ້ນໄປ ທີ່ຕ້ອງໄດ້ຖືກຈົດນັບ. ປົກກະຕິແລ້ວຜູ້ທີ່ພັກເຊົາຢູ່ໃນສະຖານທີ່ນີ້ແມ່ນພັກເຊົາແບບຊົ່ວຄາວຕ່ຳກວ່າ 6 ເດືອນ ແລະ ບໍ່ຄວນຈົດນັບບັນດາບຸກຄົນເຫຼົ່ານີ້.

2) <u>ສະຖາບັນຕ່າງໆ:</u> ກຸ່ມນີ້ກວມເອົາສະຖານທີ່ໃດໜຶ່ງໃນໂຄງສ້າງຖາວອນ ຫຼື ໂຄງສ້າງທີ່ອອກແບບມາເພື່ອຮອງຮັບກຸ່ມຄົນ (ໂດຍປົກກະຕິແລ້ວຈະເປັນກຸ່ມໃຫຍ່) ທີ່ມີຈຸດປະສົງສາທາລະນະ ຫຼື ຜົນປະໂຫຍດທົ່ວໄປຮ່ວມກັນ. ທີ່ຢູ່ອາໄສດັ່ງກ່າວມີສິ່ງອຳນວຍຄວາມສະດວກສ່ວນກາງ ທີ່ຜູ້ຢູ່ອາໄສໃຊ້ຮ່ວມກັນ (ຫ້ອງນໍ້າ, ຫ້ອງນັ່ງຫຼິ້ນ, ຫ້ອງພັກ ແລະ ອື່ນໆອີກ). ຍົກຕົວຢ່າງ: ໂຮງໝໍ, ສະຖາບັນການທະຫານ, ໂຮງຮຽນກິນນອນ, ສຳນັກສົງ ແລະ ຄຸກ ແມ່ນຈັດຢູ່ໃນໝວດໝູ່ນີ້.

3) <u>ແຄ້ມແມ່ນກຸ່ມຂອງສະຖານທີ່ ທີ່ສ້າງຂຶ້ນໃນເພື່ອເປັນທີ່ຢູ່ອາໄສຊົ່ວຄາວຂອງບັນດາບຸກຄົນທີ່ມີກິດຈະກຳ ຫຼື ຄວາມສົນໃຈໃດໜຶ່ງຮ່ວມກັນ.</u> ໝວດນີ້ລວມມີຄ້າຍທະຫານ, ຄ້າຍອົບພະຍົບ ແລະ ຄ້າຍທີ່ສ້າງຂຶ້ນເພື່ອເປັນທີ່ພັກໃຫ້ແກ່ກຳມະກອນໃນບໍ່ແຮ່, ກະສິກຳ, ໂຄງການຂອງລັດ ຫຼື ວິສາຫະກິດປະເພດອື່ນໆ.

4) <u>ທີ່ຢູ່ອາໄສລວມໝູ່ປະເພດອື່ນໆ:</u> ແມ່ນທີ່ຢູ່ອາໄສທີ່ບໍ່ໄດ້ຖືກຈັດຢູ່ໃນໝວດ a, b, ຫຼື c.

ໝາຍເຫດ: ຄຸກ, ສະຖາບັນທະຫານ, ສະຖາບັນຕຳຫຼວດ ແລະ ຄ້າຍທະຫານ ແມ່ນຫົວໜ່ວຍການສຳຫຼວດ. ເຖິງຢ່າງໃດກໍ່ຕາມ, ດ້ວຍເຫດຜົນດ້ານຄວາມປອດໄພ ແລະ ການຮັກສາຄວາມລັບຂອງຂໍ້ມູນ, ຫົວໜ່ວຍເຫຼົ່ານີ້ແມ່ນຈະມີພະນັກງານກ້ອນກຳລັງຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບໃນການເກັບກຳຂໍ້ມູນ.

## 5.2. ການເກັບກຳຂໍ້ມູນຄົວເຮືອນລວມໝູ່

### 5.2.1. ຫຼັກການທົ່ວໄປ

ມັນມີຄວາມສຳຄັນຫຼາຍທີ່ຕ້ອງໄດ້ກຳນົດວ່າມີທີ່ຢູ່ອາໄສລວມໝູ່ໃນເຂດສຳຫຼວດ ຫຼື ບໍ ຕັ້ງແຕ່ເລີ່ມຕົ້ນໄວເທົ່າທີ່ຈະໄວໄດ້. ໃນຕອນແນະນຳຕົນເອງກັບອຳນາດການປົກຄອງບ້ານ ໃຫ້ສອບຖາມວ່າມີທີ່ຢູ່ອາໄສລວມໝູ່ໃນເຂດສຳຫຼວດຂອງຕົນ ຫຼື ບໍ. ເກືອບທຸກບ້ານແມ່ນມີວັດ ແລະ ຕ້ອງໄດ້ຖືກສຳຫຼວດເປັນຄົວເຮືອນລວມໝູ່.

ການໄປຫາຄົວທີ່ຢູ່ອາໄສລວມໝູ່ຄວນເປັນສິ່ງທຳອິດທີ່ນັກເດີນສຳຫຼວດຄວນເຮັດໃນເວລາໄປຮອດພາກສະໜາມ, ປົກກະຕິແລ້ວແມ່ນໃຫ້ໄປກັບນັກກວດກາ. ການເຮັດແບບນີ້ກໍ່ເພາະວ່າ, ນັກເດີນສຳຫຼວດອາດຈຳເປັນຕ້ອງໄດ້ຈັດສັນການເກັບກຳຂໍ້ມູນຄົວເຮືອນລວມໝູ່ ແລະ ນັກເດີນສຳຫຼວດອາດຕ້ອງໄດ້ກັບມາຫຼາຍຄັ້ງເພື່ອໃນສຳເລັດການເກັບຂໍ້ມູນໃນຄົວເຮືອນລວມໝູ່ດັ່ງກ່າວ.

- ເມື່ອນັກເດີນສຳຫຼວດ (ແລະນັກກວດກາ) ໄດ້ຕິດຕໍ່ກັບຄົວເຮືອນລວມໝູ່ແລ້ວ, ນັກເດີນສາຫຼວດຈະຕ້ອງໄດ້ອະທິບາຍຈຸດປະສົງຂອງການມາຫາ ແລະ ຂໍ້ມູນຫຍັງແດ່ທີ່ຕ້ອງການເກັບກຳຈາກສະມາຊິກຄົວເຮືອນລວມໝູ່. ນອກຈາກນັ້ນ, ນັກເດີນສຳຫຼວດຕ້ອງອະທິບາຍວ່າແມ່ນເປັນເປັນຜູ້ທີ່ອາໄສຢູ່ເປັນປະຈຳ (ເບິ່ງຂໍ້ຕໍ່ໄປນີ້) ສາລັບຜູ້ທີ່ຕ້ອງໄດ້ຖືກຈົດນັບ.

- ນັກເດີນສຳຫຼວດຕ້ອງໄດ້ກຳນົດໄດ້ວ່າຈະສາມາດສຳພາດສະມາຊິກຄົວເຮືອນລວມໝູ່ແຕ່ລະຄົນແຍກກັນໄດ້ ຫຼື ບໍ ຫຼື ຕ້ອງໄດ້ເກັບກຳຂໍ້ມູນຈາກຜູ້ບໍລິຫານ/ຜູ້ດູແລເທົ່ານັ້ນ.

a. ເປັນສິ່ງສຳຄັນທີ່ນັກເດີນສຳຫຼວດຕ້ອງປະຕິບັດຕາມຫຼັກການຕໍ່ໄປນີ້: ຖ້າວ່າສາມາດສຳພາດຜູ້ອາໄສຢູ່ຄົວເຮືອນລວມໝູ່ແຕ່ລະຄົນໄດ້, ນັກເດີນສຳຫຼວດຕ້ອງໃຊ້ແບບສອບຖາມດິຈິຕອນ ທີ່ຢູ່ໃນແທັບເລັດຂອງນັກເດີນສຳຫຼວດເພື່ອເກັບກຳຂໍ້ມູນ. ຍົກຄົວຢ່າງ, ນັກເດີນສຳຫຼວດສາມາດສຳພາດເຊິ່ງໜ້າກັບຜູ້ທີ່ອາໄສຢູ່ວັດ, ແຄ້ມກຳມະກອນ, ຫໍພັກໂຮງງານ ແລະ ຫໍພັກນັກສຶກສາ. ຖ້າມີຄົນຈຳນວນຫຼາຍອາໄສຢູ່ໃນຄົວເຮືອນລວມໝູ່, ວິທີທີ່ດີທີ່ສຸດກໍ່ຄືການສ້າງຕາຕະລາງເພື່ອນັດສຳພາດແຕ່ລະບຸກຄົນໃນຕອນເລີ່ມຕົ້ນ.

ອາດຈະເປັນໄປໄດ້ວ່າພວກເຂົາບໍ່ສາມາດໃຫ້ສຳພາດໄດ້ໃນເວລາດຽວກັນ. ໃນກໍລະນີນີ້ ນັກເດີນສຳຫຼວດຕ້ອງໄດ້ກັບມາສຳພາດຄືນ;

b. ໃນທີ່ຢູ່ອາໄສປະເພດອື່ນເຊັ່ນ: ໂຮງໝໍ, ສູນລ້ຽງເດັກກຳພ້າ ແລະ ສູນດູແລຄົນພິການ ແລະ ຜູ້ອາຍຸສູງ ແມ່ນອາດເປັນໄປບໍ່ໄດ້ທີ່ຈະສຳພາດເຊິ່ງໜ້າ. ໃນກໍລະນີດັ່ງກ່າວແມ່ນໃຫ້ອີງໃສ່ຂໍ້ມູນບໍລິຫານຂອງທີ່ຢູ່ອາໄສລວມໝູ່ດັ່ງກ່າວ. ປົກກະຕິແລ້ວຈະມີບັນຊີບຸກຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ທີ່ປະກອບດ້ວຍ ຊື່, ວັນເດືອນປີເກີດ ແລະ ຂໍ້ມູນຈຳນວນໜຶ່ງກ່ຽວກັບຄຸນລັກສະນະຂອງບຸກ. ບາງຄັ້ງຂໍ້ມູນແມ່ນຖືກຕອບໂດຍຜູ້ຄຸ້ມຄອງ ຫຼື ຜູ້ບໍລິຫານ ຜູ້ທີ່ຮູ້ຂໍ້ມູນຂອງບຸກຄົນ. ໃນກໍລະນີທີ່ນັກເດີນສຳຫຼວດປະແບບຟອມສອບຖາມໄວ້ກັບຜູ້ທີ່ສາມາດຕິດຕໍ່ໄດ່ໃນທີ່ຢູ່ອາໄສລວມໝູ່ ຊຶ່ງເປັນແບບຟອມທີ່ມີຄຳຖາມຕ້ອງຕ້ອງຕອບຕາມແຕ່ລະລຸກຄົນທີ່ອາໄສຢູ່ເປັນປະຈຳ. ນັກເດີນສຳຫຼວດຕ້ອງກັບຄືນໄປຫາເພື່ອເກັບແບບຟອມຄືນ ແລະ ປ້ອນຂໍ້ມູນທີ່ໄດ້ເຂົ້າໃນແທັບເລັດໂດຍນຳໃຊ້ໂປຣແກຣມແບບສອບຖາມສຳລັບຄົວເຮືອນລວມໝູ່.

- ໄລຍະເວລາຂອງແຕ່ລະຄົນທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ແມ່ນແຕກຕ່າງກັນ, ມັນມີຄວາມສຳຄັນໃນໄລຍະການເກັບກຳຂໍ້ມູນ, ຄວາມແຕກຕ່າງຕ້ອງໄດ້ຈຳແນກລະຫວ່າງຜູ້ທີ່ອາໄສຢູ່ທີ່ຢູ່ອາໄສລວມໝູ່ຫຼາຍກວ່າ 6 ເດືອນ (ອາໄສຢູ່ເປັນປະຈຳ) ແລະ ຜູ້ທີ່ອາໄສຢູ່ໜ້ອຍກວ່າ 6 ເດືອນ. ຜູ້ທີ່ອາໄສຢູ່ໜ້ອຍກວ່າ 6 ເດືອນ (ຫຼື ມີຈຸດປະສົງອາໄສຢູ່ໜ້ອຍກວ່າ 6 ເດືອນ) ແມ່ນບໍ່ຄວນຖືກຈົດນັບໃນທີ່ຢູ່ອາໄສລວມໝູ່, ແຕ່ລາວຈະຖືກຈົດນັບຢູ່ເຮືອນ. ໃນໂປຣແກຣມແບບສອບຖາມສຳລັບຄົວເຮືອນລວມໝູ່ ແມ່ນໄດ້ລວມມີຄຳຖາມເພື່ອກວດສອບໄລຍະເວລາການອາໄສຢູ່ໃນທີ່ຢູ່ອາໄສລວມໝູ່. ເຖິງຢ່າງໃດກໍ່ນາມ, ເມື່ອນຳໃຊ້ຂໍ້ມູນບໍລິຫານ (ບັນຊີ) ຂອງທີ່ຢູ່ອາໄສລວມໝູ່, ນັກເດີນສຳຫຼວດຕ້ອງໄດ້ກວດສອບກັບຜູ້ຄຸ້ມຄອງ ແລະ ປ້ອນຂໍ້ມູນຜູ້ທີ່ອາໄສຢູ່ເປັນປະຈຳເທົ່ານັ້ນ.
- ນັກເດີນສຳຫຼວດອາດບໍ່ສາມາດສຳຫຼວດທີ່ຢູ່ອາໄສລວມໝູ່ຂະໜາດໃຫຍ່ທີ່ມີຜູ້ອາໄສຢູ່ຈຳນວນຫຼາຍ. ການສຳຫຼວດສຳຫຼວດຕ້ອງໄດ້ເຮັດສຳເລັດພາຍໃນເວລາທີ່ກຳນົດໄວ້ (6 ອາທິດ). ດັ່ງນັ້ນ, ເພື່ອໄປຫາທີ່ຢູ່ອາໄສລວມໝູ່ຄັ້ງທຳອິດ ຕ້ອງໄດ້ສອບຖາມຈຳນວນຜູ້ທີ່ອາໄສຢູ່ໃນສະຖານທີ່ດັ່ງກ່າວ. ຖ້າມີຈຳນວນຜູ້ອາໄສຢູ່ຫຼາຍເກີນໄປທີ່ອາດເຮັດໃຫ້ບໍ່ສາມາດສຳເລັດຕາມກຳນົດເລາໄດ້ ແມ່ນໃຫ້ລາຍງານຕໍ່ນັກກວດກາຂອງຕົນທັນທີ.
- ນອກຈາກຜູ້ທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ແລ້ວ, ອາກມີທີ່ຢູ່ອາໄສທີ່ເປັນບ່ອນອາໄສຢູ່ເປັນປະຈຳຂອງຄົວເຮືອນສ່ວນບຸກຄົນ. ຄົວເຮືອນສ່ວນບຸກຄົນຕ້ອງໄດ້ສຳຫຼວດຕ່າງຫາກໂດຍນຳໃຊ້ໂປຣແກຣມແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ.

### 5.2.2. ຂັ້ນຕອນການເກັບກຳຂໍ້ມູນຄົວເຮືອນລວມໝູ່

*ວັດ*

ທີ່ຢູ່ອາໄສລວມໝູ່ສ່ວນໃຫຍ່ທີ່ພົບເຫັນໃນເຂດສຳຫຼວດແມ່ນວັດ. ພະສົງ, ສາມະເນນ ແລະ ແມ່ຊີ ທີ່ອາໄສຢູ່ໃນວັດຕ້ອງໄດ້ຖືກຈັດນັບ. ບາງວັດຍັງມີບຸກຄົນອື່ນທີ່ອາໄສຢູ່ເປັນປະຈຳເຊັ່ນ: ສັງຄະລີ, ຄົນອະນາໄສ ແລະ ຄົນແຕ່ງກິນ. ບຸກຄົນເຫຼົ່ານີ້ກໍ່ໄດ້ຕ້ອງຖືກຈົດນັບເຂົ້າໃນຄົວເຮືອນລວມໝູ່ໃນວັດ.

ຖ້າວ່າເປັນວັດຂະໜາດໃຫຍ່, ມີຜູ້ອາໄສຢູ່ຈຳນວນຫຼາຍ ຕ້ອງໄດ້ຫາວິທີເພື່ອໃຫ້ສາມາດສຳຫຼວດສຳເລັດ. ພະສົງ ຫຼື ສາມະເນນທີ່ອາໄສຢູ່ວັດໜ້ອຍກວ່າ 6 ເດືອນ ບໍ່ຄວນຖືກຈົດນັບຢູ່ວັດ ແຕ່ພວກເຂົາຈະຖືກຈົດນັບຢູ່ເຮືອນກັບຄອບຄວນ ບ່ອນທີ່ພວກເຂົາອາໄສຢູ່ເປັນປະຈຳ. ການເກັບກຳຂໍ້ມູນຢູ່ວັດ, ນັກເດີນສຳຫຼວດຕ້ອງສຳພາດເຊິ່ງໜ້າກັບທຸກຄົນທີ່ອາໄສຢູ່ເປັນປະຈຳ ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ຫຼື ມີຈຸດປະສົງອາໄສຢູ່ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ.

ພະຍາຍາມສຳພາດເຊິ່ງໜ້າສະມາຊິກພາຍໃນວັດໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ຖ້າວ່າບໍ່ສາມາດສຳພາດເຊິ່ງໜ້າໄດ້ ນັກກວດກາອາດນຳໃຊ້ຂໍ້ມູນມູນບໍລິຫານ (ປຶ້ມບັນຊີ) ທີ່ມີຢູ່ໃນວັດ ເມື່ອເກັບຂໍ້ມູນແຕ່ລະຄົນ ຫຼື ສຳພາດເຈົ້າອາວາດ ຫຼື ຜູ້ຜູ້ທີ່ຮູ້ຂໍ້ມູນຂອງສະມາຊິກພາຍໃນວັດ. ສາມະເນນທີ່ມີອາຍຸຕ່ຳກວ່າ 15 ປີ ບໍ່ຄວນສຳພາດເຊິ່ງໜ້າ.
ປົກກະຕິແລ້ວ, ວັດປະກອບມີຫຼາຍອາຄານທີ່ມີຄວາມສັບສົນ, ອາດມີຫຼາຍກຸດຕິທີ່ເປັນບ່ອນນອນຂອງພະສົງ. ໃນກໍລະນີດັ່ງກ່າວ, ໃຫ້ບັນທຶກອີງອາຄານໃດໜຶ່ງ (ກຸດຕິ) ເປັນ 'ສ້າງຂຶ້ນເປັນທີ່ຢູ່ອາໄສສຳລັບຄົນ' ໃນແບບສອບຖາມພາກຂໍ້ມູນອາຄານ ແລະ ອາຄານອື່ນໆ ບັນທຶກເປັນ 'ສ້າງຂຶ້ນບໍ່ມີຈຸດປະສົງເປັນທີ່ຢູ່ອາໄສສຳລັບຄົນ' ທີ່ບໍ່ມີຄົນອາໄສຢູ່. ບຸກຄົນທັງໝົດທີ່ອາໄສຢູ່ວັດຈະຖືກຈົດນັບເຂົ້າໃນອາຄານດຽວກັນ.

*ສູນລ້ຽງເດັກກຳພາ ສະຖານທີ່ພັກພິງ*

ນັກເດີນສຳຫຼວດຕ້ອງຮັບຜິດຊອບໃນການເກັບຂໍ້ມູນສຳລັບສູນລ້ຽງເດັກກຳພ້າ (ບ່ອນຢູ່ອາໄສຂອງເດັກທີ່ພໍ່ແມ່ເສຍຊີວິດແລ້ວ) ແລະ ສະຖານທີ່ພັກພິງ (ບ່ອນຢູ່ອາໄສຂອງຜູ້ທີ່ປະສົບເຄາະຮ້າຍການການປະຕິບັດຂອງຄົນອື່ນເຊັ່ນ: ຄວາມຮຸນແຮງພາຍໃນຄອບຄົວ). ແນ່ນອນວ່າການເກັບກຳຂໍ້ມູນແມ່ນບໍ່ສາມາດສຳພາດເຊິ່ງໜ້າໄດ້, ມັນຈຳເປັນຕ້ອງໄດ້ນຳໃຊ້ຂໍ້ມູນບໍລິຫານ (ບັນຊີ). ກໍລະນີສະຖານທີ່ພັກພິງ, ການປະຕິບັດຄວາມເປັນສ່ວນຕົວຕ້ອງໄດ້ເຮັດຢ່າງເຄັ່ງຄັດ. ໃນບາງກໍລະນີ, ແມ່ນບໍສາມາດບັນທຶກຊື່ຂອງບຸກຄົນໄດ້.
ນັກເດີນສຳຫຼວດຈະປ້ອນຂໍ້ມູນບໍລິຫານເຂົ້າໃນໂປຣແກຣມແບບສອບຖາມຄົວເຮືອນລວມໝູ່. ໃນກໍລະນີຂໍ້ມູນບໍລິຫານມີບໍ່ຄົບຖ້ວນ, ນັກເດີນສຳຫຼວດຕ້ອງສອບຖາມຈາກຜູ້ດູແລເດັກໃນສູນດັ່ງກ່າວ. ເຊັ່ນດຽວກັນ, ຂໍ້ມູນແມ່ນຈະເກັບກຳສະເພາະຜູ້ທີ່ອາໄສຢູ່ໃນສູນລ້ຽງເດັກກຳພ້າ 6 ເດືອນ ຂຶ້ນໄປ ຫຼື ມີຈຸດປະສົງອາໄສຢູ່ 6 ເດືອນ ຂຶ້ນໄປ. ການຈົດນັບແມ່ນບໍ່ລວມເອົາພະນັກງານທີ່ເຮັດວຽກຢູ່ສູນໃນວັດເຮັດວຽກ ແລະ ກັບບ້ານໃນວັນພັກ (ວັນເສົາ ແລະ ວັນອາທິດ). ໃນກໍລະນີດັ່ງກ່າວ, ສູນລ້ຽງເດັກກຳພ້າບໍ່ແມ່ນສະຖານທີ່ອາໄສຢູ່ເປັນປະຈຳຂອງເຂົາເຈົ້າ.

*ໂຮງໝໍ*

ໂຮງໝໍແມ່ນມີຄວາມສັບຊ້ອນສຳລັບການສຳຫຼວດ. ໃນບໍລິເວນໂຮງໝໍອາດມີທີ່ຢູ່ອາໄສລວມໝູ່, ຕົວຢ່າງ, ຫໍພັກຂອງພະນັກງານ ແລະ ພະຍາບານທີ່ອາໄສຢູ່ຮ່ວມກັນ, ນອກນັ້ນຍັງມີທີ່ຢູ່ອາໄສສຳລັບຄົວເຮືອນສ່ວນບຸກຄົນເຊັ່ນ: ຄົວເຮືອນຂອງທ່ານໝໍ, ພະຍາບານ, ພະນັກງານບໍລິຫານ ແລະ ພະນັກງານຮັກສາຄວາມປອດໄພ. ທີ່ຢູ່ອາໄສລວມໝູ່ຕ້ອງໄດ້ຖືກຈົດນັບໂດຍນຳໃຊ້ໂປຣແກຣມແບບສອບຖາມສຳລັບຄົວເຮືອນລວມໝູ່ (ສຳພາດເຊິ່ງໜ້າ ຫຼື ເອົາຂໍ້ມູນບໍລິຫານຂອງໂຮງໝໍ) ແລະ ທີ່ຢູ່ອາໄສຄົວເຮືອນສ່ວນບຸກຄົນທີ່ແຍກຕ່າງຫາກຕ້ອງສຳຫຼວດໂດຍນຳໃຊ້ໂປຣແກຣມແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ.
ນອກຈາກນັ້ນ, ນັກເດີນສຳຫຼວດຕ້ອງໄດ້ກວດສອບຂໍ້ມູນຂອງໂຮງໝໍເບິ່ງວ່າມີຄົນເຈັບທີ່ປິ່ນປົວຢູ່ໂຮງໝໍໃນຄືນສຳຫຼວດ ແລະ 1) ອາໄສຟູ່ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ຫຼື 2) ມີຈຸດປະສົງອາໄສຢູ່ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ ທຽບໃສ່ຄືນສຳຫຼວດ. ມັນອາດມີໜ້ອຍທີ່ຈະມີຄົນເຈັບປິ່ນປົວຢູ່ໂຮງໝໍໄລຍະຍາວ. ນັກເດີນສຳຫຼວດແມ່ນບໍອະນຸຍາດໃຫ້ສຳພາດເຊິ່ງໜ້າກັບຄົນເຈັບ, ຖ້າມີຄົນເຈັບທີ່ປິ່ນປົວຢູ່ໂຮງໝໍໄລຍະຍາວແມ່ນໃຫ້ອີງໃສ່ຂໍ້ມູນບໍລິຫາຂອງໂຮງໝໍ.

*ໂຮງແຮມ, ບ້ານພັກ ແລະ ສະຖານທີບໍລິການທີ່ພັກອື່ນໆ*

ປົກກະຕິແລ້ວ ໂຮງແຮມເປັນບ່ອນຢູ່ໄລຍະສັ້ນ ສຳລັບການເຮັດວຽກ ຫຼື ພັກຜ່ອນ. ດັ່ງນັ້ນ, ມັນເປັນໄປໄດ້ວ່າບໍ່ມີຫຼາຍຄົນອາໄສຢູ່ໂຮງແຮມ ຫຼື ບ້ານພັກຮອດ 6 ເດືອນ ຂຶ້ນໄປ. ເພື່ອຮັບປະກັນວ່າ ບຸກຄົນທີ່ອາໄສຢູ່ໂຮງແຮມ ຫຼື ບ້ານພັກໄດ້ຮັບການຈົດນັບ, ນັກກວດກາຕ້ອງໄປຫາສະຖານທີ່ດັ່ງກ່າວ. ນັກກວດກາຕ້ອງໄປຫາແຕ່ລະໂຮງແຮມ ແລະ ບ້ານພັກທັງໝົດໃນ 4 ເຂດສຳຫຼວດທີ່ຕົນຮັບຜິດຊອບ ເພື່ອກວດສອບວ່າມີຄົນອາໄສຢູ່ເປັນເວລາຍາວນານ ຫຼື ບໍ່. ຖ້າເປັນໄປໄດ້ ບຸກຄົນທີ່ອາໄສຢູ່ໂຮງແຮມແມ່ນຕ້ອງສຳພາດໂດຍນຳໃຊ້ໂປຣແກຣມແບບສອບຖາມຄົວເຮືອນລວມໝູ່. ຖ້າວ່າບໍ່ສາມາດສຳພາດເຊິ່ງໜ້າໄດ້ ເນື່ອງຈາກມີບັນຫາດ້ານພາສາ, ນັກກວດກາຕ້ອງນຳໃຊ້ແບບສອບ

ຖາມເຈົ້າ ແລະ ຝາກແບບສອບຖາມດັ່ງກ່າວທີ່ເປັນພາສາອັງກິດໃຫ້ຜູ້ທີ່ອາໄສຢູ່ໂຮງແຮມ ແລະ ກັບມາເກັບຄືນໃນມື້ຕໍ່ໄປ.

ກຸ່ມຄົນພິເສດທີ່ອາໄສຢູ່ອາພາດເມັດບໍລິການ. ອາພາດເມັນບໍລິການ ໃນລາວໝາຍເຖິງ ສະຖານທີ່ຢູ່ອາໄສປະເພດໜຶ່ງທີ່ມີລັກສະນະຄືນກັບອາພາດເມັນ ທີ່ໃຫ້ບໍລິການພິເສດຄືກັນກັບໂຮງແຮມ. ການບໍລິການດັ່ງກ່າວປະກອບດ້ວຍ ແມ່ບ້ານ, ການສອບແປງ, ການບໍລິການຄວາມປອດໄພ, ການບໍລິການຊັກລ້າງ ແລະ ບາງລວມເຖິງການບໍລິການສິ່ງອຳນວຍຄວາມສະດວກເຊັ່ນ ໄຟຟ້າ, ນໍ້າປະປາ ແລະ ອິນເຕີເນັດ. ບຸກຄົນທີ່ອາໄສຢູ່ໃນອາພາດເມັນບໍລິການ ຕ້ອງໄດ້ຖືກຈົດນັບເປັນຄົວເຮືອນສ່ວນບຸກຄົນ ໂດຍນໍາໃຊ້ແບບສອບຖາມຄົວເຮືອນສ່ວນບຸກຄົນ ແລະ ຂັ້ນຕອນມາດຕະຖານທົ່ວໄປ.

*ສູນດູແລຄົນພິການ ແລະ ຜູ້ອາຍຸສູງ*

ຕາມວັດທະນະທໍາຂອງລາວ, ຜູ້ສູງອາຍຸ ແລະ ຄົນພິການສ່ວນໃຫຍ່ ແມ່ນໄດ້ຮັບການດູແລຈາກຊຸມຊົນ ແລະ ຄອບຄົວ. ດັ່ງນັ້ນ, ສູນດູແລຄົນພິການ ແລະ ຜູ້ອາຍຸສູງ ຈຶ່ງມີໜ້ອຍໃນຂອບເຂດທົ່ວປະເທດ, ທີ່ມີສ່ວນໃຫຍ່ແມ່ນໃນເຂດຕົວເມືອງ. ການເກັບກໍາຂໍ້ມູນແມ່ນອີງໃສ່ຂໍ້ມູນບໍລິຫານ (ບັນຊີ) ທີ່ຢູ່ໃນສູນ.

ແນ່ນອນວ່າ ນັກເດີນສໍາຫຼວດຈະບໍ່ສາມາດສໍາພາດເຊິ່ງໜ້າກັບຜູ້ສູງອາຍຸ, ດັ່ງນັ້ນຈຶ່ງຈໍາເປັນຕ້ອງໄດ້ນໍາໃຊ້ຂໍ້ມູນບໍລິຫານ (ບັນຊີ), ນັກເດີນສໍາຫຼວດຕ້ອງສອບຖາມເອົາຂໍ້ມູນຈາກຜູ້ດູແລ ຖ້າວ່າຂໍ້ມູນບໍ່ຄົບຖ້ວນ.

*ໂຮງຮຽນກິນນອນ ແລະ ຫໍພັກນັກສຶກສາ*

ມີນັກຮຽນ ແລະ ນັກສຶກສາຈໍານວນໜຶ່ງ ອາໄສໃນທີ່ຢູ່ອາໄສລວມໝູ່ (ຫໍພັກ) ທີ່ຢູ່ຫ່າງຈາກຄອບຄົວໃນໄລເປີດຮຽນ. ພວກເຂົາອາດແມ່ນນັກຮຽນຊັ້ນປະຖົມ ຫຼື ມັດທະຍົມ, ນັກສຶກສາຂັ້ນສູງ ຫຼື ມະຫາວິທະຍາໄລ. ນັກຮຽນທີ່ອາໄສຢູ່ຫໍພັກໂຮງຮຽນສໍາລັບຊັ້ນປະຖົມ ແລະ ມັດທະຍົມ ນັກເດີນສໍາຫຼວດບໍ່ຄວນສໍາພາດເຊິ່ງໜ້າກັບນັກຮຽນເຫຼົ່ານີ້. ນັກເດີນສໍາຫຼວດຄວນເອົາຂໍ້ມູນບໍລິຫານ (ບັນຊີ) ຈາກໂຮງຮຽນ ຫຼື ຜູ້ຄຸ້ມຄອງຫໍພັກ.
ນັກສຶກສາຂັ້ນສູງ ແລະ ມະຫາວິທະຍາໄລ ຜູ້ທີ່ອາໄສຢູ່ຫໍພັກ ຫຼື ທີ່ຢູ່ອາໄສລວມໝູ່ ນັກເດີນສໍາຫຼວດຕອງໄດ້ສໍາພາດເຊິ່ງໜ້າກັບນັກສຶກສາເຫຼົ່ານັ້ນ ໂດຍນໍາໃຊ້ໂປຣແກຣມແບບສອບຖາມສໍາລັບຄົວເຮືອນລວມໝູ່ທີ່ມີຢູ່ໃນແທັບເລັດ. ນັກເດີນສໍາຫຼວດສໍາຫຼວດອາດຈໍາເປັນຕ້ອງໄດ້ກັບມາຫຼາຍຄັ້ງເພື່ອໃຫ້ສາມາດເກັບຂໍ້ມູນນັກສຶກສາທັງໝົດໄດ້. ຖ້າກໍລະນີ້ທີ່ເປັນຫໍພັກຂະໜາດໃຫຍ່ມີນັກສຶກສາອາໄສຢູ່ຈໍານວນຫຼາຍທີ່ອາດຈະບໍ່ສາມາດສໍາຫຼວດສໍາເລັດຕາມກໍານົດເວລາໄດ້, ນັກເດີນສໍາຫຼວດຕ້ອງລາຍງານນັກກວດກາທັນທີ ເພື່ອລາຍງານໃຫ້ຫ້ອງການສໍາຫຼວດຂັ້ນເມືອງແກ້ໄຂບັນຫາດັ່ງກ່າວ.

*ແຄ້ມກໍາມະກອນ/ຫໍພັກໂຮງງານ*

ແຄ້ມກໍາມະກອນປົກກະຕິແລ້ວຕັ້ງຢູ່ໃກ້ກັບໂຄງການກໍ່ສ້າງຂະໜາດໃຫຍ່ເຊັ່ນ: ການສ່ໍສ້າງຫົນທາງ, ອາຄານ ແລະ ໂຄງການໂຄງລ່າງພື້ນຖານອື່ນໆ. ແຄ້ມກໍາມະກອນເຫຼົ່ານີ້ສະໜອງທີ່ຢູ່ອາໄສຊົ່ວຄາວໃຫ້ແກ່ກໍາມະກອນທີ່ມາຈາກສະຖານທີ່ຕ່າງໆຂອງປະເທດ ຫຼື ມາຈາກປະເທດໃກ້ຄຽງ.

ສິ່ງທີ່ສໍາຄັນແຄ້ມກໍາມະກອນກໍ່ສ້າງຈໍານວນຫຼາຍເປັນບ່ອນຢູ່ຊົ່ວຄາວຂອງກໍາມະກອນ, ຊຶ່ງອາດໜ້ອຍກວ່າ 6 ເດືອນ. ການນໍານົດວ່າແຄ້ມກໍາມະກອນມີຢູ່ໃສ ແລະ ແມ່ນໃຜແດ່ທີ່ຄວນຖືກຈົດນັບແມ່ນໜ້າທີ່ຂອງນັກກວດກາ ແລະ ອໍານາດການປົກຄອງບ້ານ. ບາງກໍລະນີ, ພາຫະນະການເດີນທາງສະເພາະຄວນໄດ້ການກຽມພ້ອມ. ສໍາລັບແຄ້ມກໍາມະກອນກໍ່ສ້າງຫົນທາງ ແລະ ກໍ່ສ້າງອາຄານ ຫຼື ໂຄງການໂຄງລ່າງພື້ນຖານຂະໜາດໃຫຍ່, ແຄ້ມກໍາມະກອນອາດ

ມີຜູ້ຢູ່ອາໄສ 100 ຫຼື 200 ຄົນ ຂຶ້ນໄປ. ໃນກໍລະນີດັ່ງກ່າວນີ້, ຫ້ອງການສຳຫຼວດຂັ້ນເມືອງອາດສົ່ງນັກເດີນສຳຫຼວດພິເສດໄປຮັບຜິດຊອບໃນການເກັບກຳຂໍ້ມູນ. ຖ້າວ່າມີແຄ້ມກຳມະກອນ ຫຼື ຫໍພັກໂຮງງານຢູ່ບ່ອນໃດໜຶ່ງຂອງເຂດສຳຫຼວດບ່ອນໃດໃນເຂດສຳຫຼວດຂອງຕົນ, ນັກເດີນສຳຫຼວດຕ້ອງໄດ້ສຳຫຼວດທີ່ຢູ່ອາໄສລວມໝູ່ທັງໝົດ ແລະ ຜູ້ທີ່ອາໄສຢູ່ເປັນປະຈຳ ຫຼື ມີຈຸດປະສົງອາໄສຢູ່ 6 ເດືອ ນຂຶ້ນໄປ ໃນທີ່ຢູ່ອາໄລລວມໝູ່ທັງໝົດ.

ນັກເດີນສຳຫຼວດຕ້ອງພິຈາລະນາວ່າ ແຄ້ມກຳມະກອນກໍ່ສ້າງຫົນທາງອາດມີການເຄື່ອນຍ້າຍໄປຕາມຄວາມຄືບໜ້າຂອງການກໍ່ສ້າງ ຊຶ່ງຕ່າງຈາກແຄ້ມກໍ່ສ້າງອາຄານ. ເຖິງຢ່າງໃດກໍ່ຕາມ, ຫໍພັກໂຮງງານປົກກະຕິແລ້ວແມ່ນຕັ້ງຢູ່ໃກ້ກັບໂຮງງານ ແລະ ປົກກະຕິແລ້ວແມ່ນເປັນທີ່ຢູ່ອາໄສແບບຖາວອນ.

ວິທີການການເກັບກຳຂໍ້ມູນສຳລັບແຄ້ມກຳມະກອນ ແລະ ຫໍພັກໂຮງງານ ແມ່ນນຳໃຊ້ວິທີການສຳພາດເຊິ່ງໜ້າ ໂດຍນຳໃຊ້ແທັບເລັດ ແລະ ໂປຣແກຣມແບບສອບຖາມສຳລັບຄົວເຮືອນລວມໝູ່. ຖ້າວ່າການສຳພາດເຊິ່ງໜ້າບໍ່ສາມາດຈັດຕັ້ງປະຕິບັດໄດ້, ນັກເດີນສຳຫຼວດຕ້ອງໄດ້ສອບຖາມຂໍ້ມູນບໍລິຫານທີ່ມີຢູ່ ຫຼື ຖາມຂໍ້ມູນຈາກຜູ້ບໍລິຫານ/ຜູ້ດູແລແຄ້ມກຳມະກອນ/ຫໍພັກໂຮງງານ.

## 5.3. ໂປຣແກຣມເກັບກຳຂໍ້ມູນຄົວເຮືອນລວໝູ່

### 5.3.1 ການກຳນົດທີ່ຢູ່ອາໄສລວມໝູ່ໃນໂປຣແກຣມແບບສອບຖາມ




ແບບສອບຖາມສຳລັບຄົວເຮືອນລວມໝູ່ສາມາດນຳໃຊ້ກໍ່ຕໍ່ເມື່ອໄດ້ບັນທຶກວ່າ ອາຄານ (ຫຼື ສ່ວນໜຶ່ງຂອງອາຄານ) ສ້າງຂຶ້ນເພື່ອຈຸດປະສົງເປັນທີ່ຢູ່ອາໄສ 'ສຳລັບຄົວເຮືອນລວມໝູ່ເທົ່ານັ້ນ' ຫຼື 'ທັງສອງ, ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່'. ມັນເປັນການດີທີ່ຕ້ອງໄດ້ຄົ້ນຫາວ່າໃນອາຄານທີ່ເປັນທີ່ຢູ່ອາໄສລວມໝູ່ວ່າມີຄົວເຮືອນລວມໝູ່ເທົ່ານັ້ນ ຫຼື ມີຄົວເຮືອນສ່ວນບຸກຄົນຢູ່ນຳ ກ່ອນທີ່ຈະເລີ່ມແບບສອບຖາມພາກຂໍ້ມູນອາຄານ.




ຖ້າວ່າໜຶ່ງໃນສອງລາຍການຄຳຕອບຖືກເລືອກໃນແບບສອບຖາມພາກຂໍ້ມູນອາຄານ, ລາຍການທີ່ຈະສະແດງຂຶ້ນມາໃນເວລານັກເດີນສຳຫຼວດກົດໃສ່ຈຸດອາຄານທີ່ເປັນສີເຫຼືອງຈະມີລາຍການສະແດງຂຶ້ນມາວ່າ 'ເພີ່ມທີ່ຢູ່ອາໄສຄົວເຮືອນລວມໝູ່ໃນອາຄານນີ້'. ໃນກໍລະນີທີ່ນັກເດີນສຳຫຼວດເລືອກ 'ທັງສອງ, ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່' ໃນແບບສອບຖາມພາກຂໍ້ມູນອາຄານ ກໍ່ຈະມີລາຍການ 'ເພີ່ມທີ່ຢູ່ອາໄສຄົວເຮືອນລວມໝູ່ໃນອາຄານນີ້' ສະແດງຂຶ້ນມາເຊັ່ນກັນ. ໃນອາຄານດັ່ງກ່າວ, ນັກເດີນສຳຫຼວດຈຳເປັນຕ້ອງໄດ້ສຳຫຼວດທັງຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່. ນັກເດີນສຳຫຼວດສາມາດປິດອາຄານໄດ້ ເມື່ອຄົວເຮືອນເຮືອນລວມໝູ່ (ແລະ ຄົວເຮືອນສ່ວນບຸກຄົນ) ໃນອາຄານດັ່ງກ່າວໄດ້ຖືກສຳຫຼວດໝົດແລ້ວ.

ຖ້າວ່າເລືອກ 'ເພີ່ມທີ່ຢູ່ອາໄສຄົວເຮືອນລວມໝູ່ໃນອາຄານນີ້', ແບບສອບຖາມສຳລັບຄົວເຮືອນລວມໝູ່ຈະເປີດຂຶ້ນມາ. ແບບສອບຖາມສຳລັບຄົວເຮືອນລວມໝູ່ແມ່ນສັ້ນກວ່າແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ. ເພື່ອປະສົມປະສານຂໍ້ມູນຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່ເຂົ້າກັນໄດ້, ຄຳຖາມໃນແບບສອບຖາມຄົວເຮືອນລວມໝູ່ເປັນຄຳຖາມດຽວກັນກັບຄຳຖາມໃນແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ. ແບບສອບຖາມສຳລັບຄົວເຮືອນລວມໝູ່ປະກອບມີ 5 ພາກດັ່ງຕໍ່ໄປນີ້:

1) ພາກ ID – ຂໍ້ມູນເອກະລັກ
2) ພາກ A - ເລີ່ມການສຳຫຼວດ;
3) ພາກ C – ຂໍ້ມູນສະມາຊິກໃນຄົວເຮືອນ ແລະ ພາກ D – ຂໍ້ມູນບຸກຄົນ (ລວມເຂົ້າກັນ);
4) ພາກ H – ສຳເລັດການສຳພາດ.

ຕະຫຼອດທັງແບບສອບຖາມສຳລັບຄົວເຮືອນລວມໝູ່, ຄຳຖາມສ່ວນໃຫຍ່ແມ່ນມີລາຍການຄຳຕອບ 'ບໍ່ຮູ້', ຍົກເວັ້ນຄຳຖາມກ່ຽວກັບເພດ ແລະ ອາຍຸ ຊຶ່ງຂໍ້ມູນເຫຼົ່ານີ້ຕ້ອງຖາມໃຫ້ໄດ້ຂໍ້ມູນ. ບໍ່ໃຫ້ຍອມຮັບຄຳຕອບ 'ບໍ່ຮູ້' ຢ່າງງ່າຍດາຍ ແຕ່ຕ້ອງໄດ້ຖາມເຈາະຈີ້ມເພື່ອໃຫ້ໄດ້ຄຳຕອບ ແລະ ໃຫ້ເວລາຜູ້ຖືກສຳພາດໄດ້ຄິດຫາຄຳຕອບ.

### ພາກ ID – ຂໍ້ມູນເອກະລັກ

ເມື່ອເລືອກ 'ເພີ່ມທີ່ຢູ່ອາໄສຄົວເຮືອນລວມໝູ່ໃນອາຄານນີ້', ຄຳຖາມ D.01 (ເລກລຳດັບຊັ້ນທີ່ເປັນທີ່ຕັ້ງຂອງທີ່ຢູ່ອາໄສລວມໝູ່) ແລະ ຄຳຖາມ D.02 (ເລກລຳດັບທີ່ຢູ່ອາໄສລວມໝູ່ໃນຊັ້ນ) ຕ້ອງໄດ້ຕອບດ້ວຍການສັງເກດຂອງນັກເດີນສຳຫຼວດເອງ. ນີ້ແມ່ນຄຳຖາມດຽວກັນກັບແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ. ຕ້ອງປະຕິບັດຕາມຂັ້ນຕອນການໃສ່ເລກລຳດັບຊັ້ນ ແລະ ເລກລຳດັບມີ່ຢູ່ອາໄສຢ່າງເຄັ່ງຄັດ. ສຳລັບເລກລຳດັບຊັ້ນ (ຂັ້ນລະດັບໜ້າດິນເປັນຊັ້ນທີ '1') ແລະ ສຳລັບດັບທີ່ຢູ່ອາໄສ (ນັບແຕ່ຊ້າຍຫາຂວາ).

### ພາກ A - ເລີ່ມການສຳຫຼວດ

**ຄຳຖາມ:** A.01A. *ນີ້ແມ່ນປະເພກຄົວເຮືອນລວມໝູ່ປະເພດໃດ?*







ຄຳຖາມນີ້ມີລາຍການຄຳຕອບຄົວເຮືອນລວມໝູ່ປະເພດຕ່າງໆ. ລາຍການຄຳຕອບສ່ວນໃຫຍ່ແມ່ນສິ່ງທີ່ໄດ້ອະທິບາຍໄວ້ກ່ອນໜ້ານີ້. ກຳນົດປະເພດທີ່ຢູ່ອາໄສລວມໝູ່ທີ່ໄປຫາ ແລະ ສອບຕໍ່ໄປຄຳຖາມຕໍ່ໆໄປ.

**ຄຳຖາມ:** A.01. ສາມາດຕິດຕໍ່ກັບຄົວເຮືອນ – *ມີຄົນທີ່ສາມາດໃຫ້ການສຳພາດຢູ່ໃນ <ປະເພດທີ່ຢູ່ອາໄສລວມໝູ່> ນີ້ ບໍ?*

ຄຳຖາມຕໍ່ໄປແມ່ນຄືກັນກັບແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ, ມີພຽງບາງຄຳຖາມທີ່ແຕກຕ່າງກັນ. ຄຳຖາມທຳອິດຕໍ່ຈາກນີ້ແມ່ນແມ່ນຖາມກ່ຽວກັບວ່າມີຜູ້ທີ່ສາມາດຕິດຕໍ່ໄດ້ເພື່ອສຳພາດ ຫຼື ບໍ. ປະເພດທີ່ຢູ່ອາໄສແມ່ນສະແດງຢູ່ໃນຄຳ

ຖາມນີ້. ຄໍາຖາມຕໍ່ໄປນີ້ແມ່ນນໍາໃຊ້ຕົວຢ່າງ ກໍລະນີນັກເດີນສໍາຫຼວດຕອບຄໍາຖາມນີ້ແມ່ນ 'ວັດ ຫຼື ສະຖານທີ່ທາງສາສະໜາອື່ນໆ'. ໃນບາງຄໍາຖາມ, ປະເພດທີ່ຢູ່ອາໄສລວມໄດ້ສະແດງຢູ່ໃນຄໍາຖາມເພື່ອຄວາມກະຈ່າງແຈ້ງ. ຖ້ານັກເດີນສໍາຫຼວດເຂົ້າໃຈແຈ້ງແບບສອບຖາມສໍາລັບຄົວເຮືອນສ່ວນບຸກຄົນແລ້ວ, ຈາກຄໍາຖາມນີ້ເປັນຕົ້ນໄປຈະມີຄວາມຈະແຈ້ງ ແລະ ບໍ່ມີບັນຫາຫຍັງຫຼາຍ.

**ຄໍາຖາມ:** A.02 ສະຖານະທີ່ຢູ່ອາໄສຫວ່າງເປົ່າ - *ມີຄົນຢູ່ໃນທີ່ຢູ່ອາໄສນີ້ ຫຼື ບໍ?*

ຄໍາຖາມນີ້ຈະສະແດງຂຶ້ນມາຖ້າວ່າບໍ່ສາມາດຕິດໃຜໄດ້ເພື່ອສໍາພາດ ຫຼື ໄດ້ພະຍາມຕິດຕໍ່ກັບຜູ້ຄຸ້ມຄອງທີ່ຢູ່ອາໄສລວມໝູ່ແລ້ວ ແຕ່ບໍ່ສາມາດຕິດຕໍ່ໄດ້.

**ຄໍາຖາມ:** A.03 ແນະນໍາຕົວ

ໜ້ານີ້ຈະສະແດງຂຶ້ນມາຖ້າວ່າຄໍາຖາມ A.01 ຕອບວ່າສາມາດຕິດຕໍ່ກັບຜູ້ໃດໜຶ່ງໃນທີ່ຢູ່ອາໄສລວມໝູ່. ມັນປະກອບດ້ວຍຂໍ້ມູນທີ່ນັກເດີນສໍາຫຼວດຄວນອະທິບາຍໃຫ້ຄົນທີ່ສາມາດຕິດຕໍ່ໄດ້ນັ້ນຟັງ, ບອກວ່າທ່ານແມ່ນໃຜ, ມາຈາກໃສ, ມາເຮັດຫຍັງ ແລະ ທ່ານສາມາດສໍາພາດໄດ້ ຫຼື ບໍ. ນັກເດີນສໍາຫຼວດຄວນເນັ້ນວ່າຂໍ້ມູນທີ່ໄດ້ຈະຖືກເກັບເປັນຄວາມລັບຢ່າງດີ. ຫຼັງຈາກແນະນໍາຕົນເອງ ແລະ ຂໍອະນຸຍາດສໍາພາດແລ້ວ, ນັກເດີນສາຫຼວດສາມາດກົດປຸ່ມ 'ສືບຕໍ່' ເຖິງແມ່ນວ່າຈະໄດ້ຮັບອະນຸຍາດ ຫຼື ປະຕິເສດກໍ່ຕາມ.

**ຄໍາຖາມ:** A.04. ເລີ່ມສໍາພາດໄດ້ບໍ – *ການສໍາພາດຂອງການສໍາຫຼວດສາມາດເລີ່ມໄດ້ບໍ?*

**ຄໍາຖາມ:** A.08. ຈໍານວນສະມາຊິກຄົວເຮືອນ – ກໍລະນີປະຕິເສດ – *ທ່ານສາມາດບອກໄດ້ບໍວ່າມີຈັກຄົນອາໄສຢູ່ໃນ <ທີ່ຢູ່ອາໄສລວມໝູ່>?*

**ຄໍາຖາມ:** A.9. ຈໍານວນສະມາຊິກຄົວເຮືອນ – ກໍລະນີບໍ່ສາມາດຕິດຕໍ່ໄດ້ – *ຫາທຸກວິທີທາງ – ຕົວຢ່າງ, ໂດຍການຖາມເພື່ອນບ້ານ – ເພື່ອກວດສອບວ່າມີຈັກຄົນອາໄສຢູ່ໃນ <ທີ່ຢູ່ອາໄສລວມໝູ່>.*

ນັກເດີນສໍາຫຼວດຕ້ອງພະຍາຍາມເກັບກໍາຂໍ້ມູນຈາກແຫຼ່ງອື່ນ ຍົກຕົວຢ່າງຖາມເພື່ອນບ້ານ ເພື່ອຄົ້ນຫາວ່າມີຈັກຄົນທີ່ອາໄສຢູ່ <ປະເພດທີ່ຢູ່ອາໄສລວມໝູ່>. ຖ້າວ່າບໍ່ສາມາດຫາຂໍ້ມູນໄດ້ວ່າມີຈັກຄົນອາໄສຢູ່ໃນທີ່ຢູ່ອາໄສລວມໝູ່, ກົດໃສ່ປຸ່ມລາຍການຢູ່ເບື້ອງຂວາມືຂອງຊ່ອງຄໍາຕອບ ແລະ ເລືອກ 'ບໍ່ມີຂໍ້ມູນ'.

## ພາກ C - ຂໍ້ມູນສະມາຊິກໃນຄົວເຮືອນ ແລະ ພາກ D - ຂໍ້ມູນບຸກຄົນ

ແບບສອບສໍາລັບຄົວເຮືອນລວມໝູ່ ແມ່ນມີຄວາມແຕກຕ່າງຈາກແບບສອບຖາມສໍາລັບຄົວເຮືອນສ່ວນບຸກຄົນ ເພາະວ່າບໍ່ໄດ້ຂຶ້ນບັນຊີສະມາຊິກຄົວເຮືອນກ່ອນຖາມຂໍ້ມູນບຸກຄົນ. ຄໍາຖາມກ່ຽວກັບບຸກຄົນແມ່ນຖາມທັງໝົດແຕ່ລະຄົນໃນເທື່ອດຽວ ຈຶ່ງຖາມຄົນຕໍ່ໆໄປ.

**ຄໍາຖາມ:** C.01 ການນໍາສະເໜີຄົວເຮືອນເບື້ອງຕົ້ນ

ມັນມີຄວາມຈໍາເປັນທີ່ຕ້ອງໄດ້ຮັບຂໍ້ມູນບັນຊີສະມາຊິກຄົວເຮືອນລວມໝູ່ທີ່ຖືກຕ້ອງ ແລະ ຄົບຖ້ວນ, ນັກເດີນສໍາຫຼວດຕ້ອງອະທິບາຍເງື່ອນໄຂເພື່ອກໍານົດວ່າບຸກຄົນໃດຄວນຖືກຈົດນັບເຂົ້າໃນບັນຊີ ຫຼື ບຸກຄົນໃດບໍ່ຄວນຈົດເຂົ້າໃນບັນຊີ. ສໍາລັບເຫດຜົນເຫຼົ່ານີ້, ໜ້າແທບເລັດສໍາລັບຄໍາຖາມ C.01 ປະກົດຂຶ້ນມາ ເພື່ອສະໜອງຂໍ້ມູນໃຫ້ນັກເດີນສໍາຫຼວດວ່າຜູ້ຢູ່ອາໄສຄົນໃດຄວນຈົດນັບລວມເຂົ້າໃນບັນຊີສະມາຊິກຄົວເຮືອນ. ນັກເດີນສໍາຫຼວດຕ້ອງເຂົ້າໃຈແຈ້ງກ່ຽວກັບເນື້ອໃນໃຈຄວາມນີ້ ໂດຍບໍ່ຈໍາເປັນຕ້ອງອ່ານຕາມໜ້າຈໍ. ກົດທີ່ 'ສືບຕໍ່' ຫຼັງຈາກສື່ສານກັບຜູ້ຖືກສໍາພາດແລ້ວ.

**ຄໍາຖາມ:** C.02. ຊື່ – *ຊື່ຂອງສະມາຊິກ <ປະເພດທີ່ຢູ່ອາໄສລວມໝູ່> ຄົນທີ <n> ແມ່ນຫຍັງ?*

**ຄໍາຖາມ:** C.03. ນາມສະກຸນ – *ນາມສະກຸນຂອງ <ຊື່> ແມ່ນຫຍັງ?*

**ຄຳຖາມ:** C.04. ເພດ – *ເພດຕອນເກີດຂອງ <ຊື່> ແມ່ນຫຍັງ?*

**ຄຳຖາມ: C.06 ວັນເດືອນປີເກີດ**

> **ຄຳຖາມ:** C.6.A. ວັນທີເກີດ – *<ຊື່> ເກີດວັນທີເທົ່າໃດ?*
>
> **ຄຳຖາມ:** C.6.B. ເດືອນເກີດ – *<ຊື່> ເກີດເດືອນໃດ?*
>
> **ຄຳຖາມ:** C.6.C. ປີເກີດ – *<ຊື່> ເກີດປີໃດ?*

**ຄຳຖາມ:** C.07. ອາຍຸ – *<ຊື່> ມີອາຍຸໄດ້ຈັກປີ?*

ໃນພາກບັນຊີສະມາຊິກຄົວເຮືອນ ຍັງມີບາງຄຳຖາມເພື່ອກຳນົດວ່າບຸກຄົນມີທີ່ຢູ່ອາໄສເປັນປະຈຳໃນທີ່ຢູ່ອາໄສລວມໝູ່ ຫຼື ບໍ່. ເພື່ອກວດສອບວ່າມີບຸກຄົນໃດບໍ່ທີ່ອາໄສຢູ່ໃນທີ່ຢູ່ອາໄສລວມໝູ່ໜ້ອຍກວ່າ 6 ເດືອນ ຫຼື ມີຈຸດປະສົງອາໄສຢູ່ໜ້ອຍກວ່າ 6 ເດືອນ.

**C.07A. ການເຂົ້າມາຢູ່ໃນທີ່ຢູ່ອາໄສລວມໝູ່ -** <ຊື່> ຍ້າຍເຂົ້າມາອາໄສຢູ່ໃນ <ປະເພດທີ່ຢູ່ອາໄສລວມໝູ່> ນີ້ ໃນປີໃດ ແລະ ເດືອນໃດ?

**C.07A1. ປີທີ່ຍ້າຍເຂົ້າມາ -** <ຊື່> ຍ້າຍເຂົ້າມາອາໄສຢູ່ໃນ <ປະເພດທີ່ຢູ່ອາໄສລວມໝູ່> ນີ້ ໃນປີໃດໃດ?

**C.07A2 ເດືອນຍ້າຍເຂົ້າມາ -** <ຊື່> ຍ້າຍເຂົ້າມາອາໄສຢູ່ໃນ <ປະເພດທີ່ຢູ່ອາໄສລວມໝູ່> ນີ້ ເດືອນໃດ?

**C.07B ອອກຈາກທີ່ຢູ່ອາໄສຄົວເຮືອນລວມໝູ່ - 6 ເດືອນ** *<ປະເພດທີ່ຢູ່ອາໄສລວມໝູ່> ນີ້ ເປັນເວລາ 6 ເດືອນຂຶ້ນໄປ ຫຼື ໜ້ອຍກວ່າ 6 ເດືອນ?*

**C.07C. ອອກຈາກທີ່ຢູ່ອາໄສຄົວເຮືອນລວມໝູ່-ເດືອນ.** *<ຊື່> ມີຈຸດປະສົງທີ່ຈະອາໄສຢູ່ໃນ <ປະເພດທີ່ຢູ່ອາໄສລວມໝູ່> ນີ້ ເປັນເວລາຈັກເດືອນ?*

**D.01. ສະມາຊິກຄົວເຮືອນຜູ້ໃຫ້ຂໍ້ມູນ -** *ຂໍ້ມູນຂອງ <ຊື່> ແມ່ນ <ລາວເອງ> ຫຼື ຄົນອື່ນ ເປັນຜູ້ໃຫ້ຂໍ້ມູນ?*

D.03. ສະຖານະພາບສົມລົດ – *ສະຖານະພາບສົມລົດຂອງ <ຊື່> ແມ່ນຫຍັງ?*

D.10. ສັນຊາດ – *ສັນຊາດຂອງ <ຊື່> ແມ່ນປະເທດໃດ?*

D.12. ຊົນເຜົ່າ – *<ຊື່> ແມ່ນຊົນເຜົ່າຫຍັງ?*

D.36. ລະດັບການສຶກສາທີ່ຮຽນຈົບສູງສຸດ – *ລະດັບການສຶກສາສູງສຸດທີ່ <ຊື່> ຮຽນຈົບຊັ້ນໃດ?*

**C.09.** ສະມາຊິກຄົນອື່ນ – <ປະເພດທີ່ຢູ່ອາໄສລວມໝູ່>ມີສະມາຊິກຄົວເຮືອນຄົນອື່ນອີກບໍ່ ທີ່ອາໄສຢູ່ເປັນປະຈຳໃນຄືນວັນທີ <**> ຫາ <**> ?

**ພາກ H – ສຳເລັດການສຳພາດ**

H.03. ເບີໂທຕິດຕໍ່– *ຂໍຂອບໃຈສຳລັບການໃຫ້ການຮ່ວມມື. ກະລຸນາໃຫ້ເບີໂທຕິດຕໍ່ຂອງທ່ານ ເພື່ອກໍລະນີມີຄຳຖາມທີ່ຈຳເປັນເພີ່ມຕື່ມ*

ຖ້າຜູ້ໃຫ້ຂໍ້ມູນ ບໍ່ມີໂທລະສັບ ໃຫ້ເອົາເບີຕິດຕໍ່ສະມາຊິກທ່ານອື່ນ ທີ່ຢູ່ໃນຄົວເຮືອນ. ຖ້າບໍ່ມີໃຜມີ ແມ່ນໃຫ້ປະວ່າງໄວ້

ຄຳແນະນຳສຳລັບແຕ່ລະຄຳຖາມແມ່ນສາມາດເບິ່ງໄດ້ໃນພາກແບບສອບຖາມສຳລັບຄົວເຮືອນສ່ວນບຸກຄົນ ໃນປຶ້ມຄູ່ມືສະບັບນີ້.

## VI. ຫຼັກການທີ່ສຳຄັນ

1. ສ້າງແຜນງານດຳເນີນການເຮັດວຽກທີ່ຮັບປະກັນວ່ານັກເດີນສຳຫຼວດຈະສາມາດສຳເລັດການສຳຫຼວດໃນເຂດສຳຫຼວດທີ່ໄດ້ຮັບຜິດຊອບພາຍໃນໄລຍະເວລາການສຳຫຼວດ 6 ອາທິດ, ຫຼັງຈາກນັ້ນໃຫ້ປະຕິບັດຕາມແຜນການດຳເນີນງານຂອງດັ່ງກ່າວ;

2. ກວດສອບອາຄານທັງໝົດໃນເຂດສຳຫຼວດທີ່ໄດ້ຮັບຜິດຊອບວ່າມີທີ່ຢູ່ອາໄສ ແລະ ບຸກຄົນກຳລັງອາໄສຢູ່ ຫຼືບໍ່, ເຖິງແມ່ນວ່າອາຄານນັ້ນ ບໍ່ໄດ້ມີຈຸດປະສົງສ້າງເປັນທີ່ຢູ່ອາໄສ; ຈົດນັບທີ່ຢູ່ໄສ ແລະ ຄົວເຮືອນທັງໝົດທີ່ກຳລັງອາໄສຢູ່ໃນອາຄານນັ້ນໆ;

3. ກວດສອບໃຫ້ແນ່ໃຈວ່ານັກເດີນສຳຫຼວດ ແລະ ຜູ້ຖືກສຳພາດເຂົ້າໃຈນິຍາມຂອງການອາໄສຢູ່ເປັນປະຈຳໄດ້ຢ່າງຖືກຕ້ອງ ເພື່ອໃຫ້ທຸກຄົນໄດ້ຖືກຈົດນັບໃນບ່ອນທີ່ເໝາະສົມ.
   - ບຸກຄົນໃດໆມີທີ່ຢູ່ອາໄສເປັນປະຈຳໃນປະເທດລາວ ໃນໄລຍະການສຳຫຼວດ ແລະ ໄດ້ອາໄສຢູ່ເປັນເວລາ 6 ເດືອນ ຂຶ້ນໄປ ແມ່ນຕ້ອງໄດ້ຖືກຈົດນັບ;
   - ບັນດາບຸກຄົນຄວນຖືກຈົດນັບຢູ່ບ່ອນທີ່ເຂົາເຈົ້າອາໄສຢູ່ຢ່າງຕໍ່ເນື່ອງຢ່າງໜ້ອຍເປັນເວລາ 6 ເດືອນ, ລວມທັງໃນຊ່ວງໄລຍະການສຳຫຼວດ.

4. ຖາມຄຳຖາມຜູ້ຖືກສຳພາດທຸກໆຄຳຖາມ ແລະ ຖາມຄຳຖາມຕາມທີ່ໄດ້ລະບຸໃນໜ້າຈໍແທັບເລັດຢ່າງຖືກຕ້ອງ ແລະ ຊັດເຈນ;

5. ບໍ່ໃຫ້ຕອບຄຳຖາມດ້ວຍຕົວເອງ, ຍົກເວັ້ນກໍລະນີທີ່ໂປຼແກຼມມີຄຳແນະນຳໃຫ້ນັກເດີນສຳຫຼວດຕອບຄຳຖາມດ້ວຍຕົວເອງ (ຄຳຖາມທີ່ເປັນໜັງສືຂຽວ).

6. ບໍ່ໃຫ້ອ່ານລາຍການຕົວເລືອກຄຳຕອບທີ່ສະແດງໃນໂປຼແກຼມ ຍົກເວັ້ນກໍລະນີທີ່ໂປຼແກຼມໄດ້ລະບຸໄວ້ວ່າໃຫ້ອ່ານລາຍການຕົວເລືອກຄຳຕອບດັ່ງກ່າວ;

## ເອກະສານຊ້ອນທ້າຍ 1. ໜັງສືແຈ້ງເຂົ້າຮ່ວມການສຳຫຼວດ

**ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025**

**ໜັງສືແຈ້ງການສຳຫຼວດ**

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025, ສະບັບເລກທີ 133/ນຍ, ລົງວັນທີ 16 ທັນວາ 2022;
- ອີງຕາມແຜນການຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງນັກເດີນສຳຫຼວດ ແລະ ນັກກວດກາ ສຳລັບການທົດລອງການສຳຫຼວດ ສະບັບເລກທີ..........., ລົງວັນທີ...............

ສູນສະຖິຕິແຫ່ງຊາດ ກຳລັງຈັດຕັ້ງປະຕິບັດການການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V ປີ 2025 ໃນລະຫວ່າງວັນທີ 3 ພະຈິກ ຫາ 14 ທັນວາ 2025. ການສຳຫຼວດຄັ້ງນີ້ແມ່ນຈະໄດ້ເກັບກຳຂໍ້ມູນທຸກທີ່ຢູ່ອາໄສ, ຄົວເຮືອນ ແລະ ບຸກຄົນ ໃນເຂດສຳຫຼວດ ໂດຍສະເພາະແມ່ນບຸກຄົນທີ່ອາໄສຢູ່ເປັນປະຈຳ 6 ເດືອນຂຶ້ນໄປແມ່ນຕ້ອງໄດ້ຖືກຈົດນັບ. ການສຳຫຼວດຄັ້ງນີ້ແມ່ນສາມາດສະໜອງຂໍ້ມູນທາງດ້ານປະຊາກອນສາດ, ການປ່ຽນແປງ ແລະ ການແຈກຢາຍພົນພົນລະເມືອງ, ຄຸນລັກສະນະທາງດ້ານເສດຖະກິດ-ສັງຄົມ ແລະ ທີ່ຢູ່ອາໄສ ຮັບໃຊ້ສຳລັບການວາງແຜນການພັດທະນາ. ຂໍ້ມູນທີ່ເກັບກຳໄດ້ຈະຖືກເກັບຮັກສາ ເປັນຄວາມລັບຢ່າງດີ ໂດຍບໍ່ເປີດເຜີຍໃຫ້ບຸກຄົນທີ່ບໍ່ກ່ຽວຂ້ອງກັບການສຳຫຼວດຮູ້ຢ່າງເດັດຂາດ ຊຶ່ງຂໍ້ມູນຈະຖືກສັງລວມ ລາຍງານໃນທາງສະ ຖິຕິເທົ່ານັ້ນ.

ຂ້າພະເຈົ້າຊື່:............................................................................ ເປັນນັກເດີນສຳຫຼວດ ຮັບຜິດຊອບເກັບກຳຂໍ້ມູນໃນຂົງເຂດນີ້ ໃນລະຫວ່າງວັນທີ 3 ພະຈິກ ຫາ 14 ທັນວາ 2025. ຂ້າພະເຈົ້າໄດ້ມາຫາຄົວເຮືອນຂອງທ່ານເພື່ອສຳພາດຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແຕ່ບໍ່ສາມາດຕິດຕໍ່ໃຜໄດ້.

ດັ່ງນັ້ນ, ຂ້າພະເຈົ້າຈະກັບມາຫາຄົວເຮືອນຂອງທ່ານເພື່ອສຳພາດ ໃນເວລາ .................. ຂອງວັນທີ ................................... 2025. ຖ້າວ່າທ່ານຕ້ອງການໃຫ້ຂ້າພະເຈົ້າກັບໄປສາພາດໃນເວລາອື່ນ ແມ່ນສາມາດຕິດຕໍ່ຂ້າພະເຈົ້າໄດ້ເພື່ອນັດເວລາສຳພາດ ຊຶ່ງສາມາດຕິດຕໍ່ຕາມເບີໂທຕໍ່ໄປນີ້:

ຂໍ້ມູນຕິດຕໍ່, ໂທ: 020.......................................

ຂອບໃຈ ສຳລັບການຮ່ວມມືຂອງທ່ານ

## ເອກະສານຊ້ອນທ້າຍ 2 ລະຫັດຊົນເຜົ່າໃນ ສປປ ລາວ

| **ລະຫັດ** | **ຊື່ຊົນເຜົ່າ** | **ຊື່ແຊງ ຫຼື ຂະແໜງ** | **ຊື່ເອີ້ນຕາມທ້ອງຖິ່ນ** |
|---|---|---|---|
| **I.** | **ໝວດພາສາລາວ-ໄຕ (ມີ 8 ຊົນເຜົ່າ)** | | |
| 1 | ລາວ | | ລາວ |
| | | ພວນ | ພວນ |
| | | ກະເລິງ | ກະເລິງ |
| | | ບໍ | ບໍ |
| | | ໂຢຍ | ໂຢຍ |
| | | ຍໍ | ຍໍ |
| | | | ໄທເຜິ້ງ |
| | | | ໄທຊາມ |
| | | | ໄທເຍືອງ |
| | | | ໄທລານ |
| | | | ໄທຈາ |
| | | | ໄທມັດ |
| | | | ໄທໂອ |
| | | | ໄທລັງ |
| | | | ອີສານ |
| 2 | ໄຕ | | |
| | | ໄຕດຳ | ໄຕດຳ |
| | | ໄຕແດງ | ໄຕແດງ |
| | | ໄຕຂາວ | ໄຕຂາວ |
| | | ໄຕເມີ້ຍ | ໄຕເມີ້ຍ |
| | | | ໄຕແມນ |
| | | | ໄຕແຖງ |
| | | | ໄຕແອດ |
| | | | ໄຕໂສມ |
| 3 | ຜູ້ໄທ | | ຜູ້ໄທ |
| | | | ໄທອ່າງຄຳ |
| | | | ໄທກະຕະ |
| | | | ໄທກະປອງ |
| | | | ໄທສາມເກົ້າ |
| 4 | ລື້ | | ລື້ |
| | | ຂຶ້ນ (ເຂີນ) | ຂຶ້ນ (ເຂີນ) |
| 5 | ຍວນ | | |
| | | ກະລອມ | ກະລອມ |
| | | ງ້ຽວ | ງ້ຽວ |

| ລະຫັດ | ຊື່ຊົນເຜົ່າ | ຊື່ແຊງ ຫຼື ຂະແໜງ | ຊື່ເອີ້ນຕາມທ້ອງຖິ່ນ |
|---|---|---|---|
| 6 | ຢັ້ງ | | ຢັ້ງ |
| 7 | ແຊກ | | ແຊກ |
| | | | ກອຍ |
| 8 | ໄທເໜືອ | | ໄທເໜືອ |
| II. | ໝວດພາສາມອນ-ຂະແມ (ມີ 33 ຊົນເຜົ່າ) | | |
| 9 | ກຶມມຸ | | ກຳມຸ, ຂະມຸ |
| | | ກະສັກ | ກະສັກ |
| | | ກຶມມຸອູ | ກຶມມຸອູ |
| | | ກຶມມຸຍວນ | ກຶມມຸຍວນ |
| | | ກຶມມຸລື້ | ກຶມມຸລື້ |
| | | ກຶມມຸຄຮອງ | ກຶມມຸຄຮອງ |
| | | ກຶມມຸຮອກ | ກຶມມຸຮອກ |
| | | ກຶມມຸແຄວນ | ກຶມມຸແຄວນ |
| | | ກຶມມຸແມ | ກຶມມຸແມ |
| | | ກຶມມຸເຈືອງ | ກຶມມຸເຈືອງ |
| | | ກຶມມຸອຳ | ກຶມມຸອຳ |
| | | | ມີກໄປຣ |
| | | | ມີກປຣາງ |
| | | | ມີກຕາງຈາກ |
| | | | ມີກກຶກ |
| | | | ມີກຕູ໊ |
| | | ກຣີ, ຍຸມບຣີ, ລາບຣີ | ກຣີ, ຍຸມບຣີ, ລາບຣີ |
| | | | ຕອງເຫຼືອງ(ຢູ່ໄຊຍະບູລີ) |
| 10 | ໄປຣ | | ຖິ່ນ, ລີວະ |
| | | | ລວມໃໝ່, ໄຟ |
| 11 | ຊິງມູນ | | ພວກ |
| 12 | ຜ້ອງ | | ຜ້ອງ, ຄະນຽງ |
| | | ຜ້ອງປຽດ | ຜ້ອງປຽດ |
| | | ຜ້ອງລານ | ຜ້ອງລານ |
| | | ຜ້ອງແຟນ | ຜ້ອງແຟນ |
| | | ຜ້ອງຈະປວງ | ຜ້ອງຈະປວງ |
| 13 | ແທ່ນ | | ແທ່ນ, ໄທແທ່ນ |
| 14 | ເອດູ | | ເອດູ, ໄທຮາດ |
| 15 | ບິດ | | ບິດ |
| 16 | ລະເມດ | | ລະເມດ, ລະແມດ |
| 17 | ສາມຕ່າວ | | ສາມຕ່າວ |

| ລະຫັດ | ຊື່ຊົນເຜົ່າ | ຊື່ແຂງ ຫຼື ຂະແໜງ | ຊື່ເອີ້ນຕາມທ້ອງຖິ່ນ |
|---|---|---|---|
| | | ດອຍ | ດອຍ |
| 18 | ກະຕາງ | | ບຣູກະຕາງ |
| | | ພະແກ້ວ | ພະແກ້ວ |
| 19 | ມະກອງ | | ບຣູມະກອງ |
| | | ຕຣູຍ | ຕຣູຍ |
| | | ພົ້ວ | ພົ້ວ |
| | | ມະຣ້ອຍ | ມະຣ້ອຍ |
| | | ຕຣອງ | ຕຣອງ |
| 20 | ຕຣີ | | ບຣູຕຣີ |
| 21 | ຢຣຸ | | ລະເວນ, ສຸ ຫຼື ຊູ |
| | | ຢຣຸກອງ | ຢຣຸກອງ |
| | | ຢຣຸດາກ | ຢຣຸດາກ |
| 22 | ຕຣຽງ | | ຕຣຽງ |
| 23 | ຕະໂອ້ຍ | | ຕະໂອ້ຍ |
| | | ຕົງ | ຣາດົງ |
| | | ອິນ (ຢີນຣ໌) | ອິນ |
| 24 | ແຢະ | | ແຢະ |
| 25 | ເບຣົາ | | ລະແວ, ລຸຍເວ |
| | | | ລະແວດ |
| | | | ຣາລາງ |
| 26 | ກະຕູ | | ກະຕູ |
| | | ຕຣິວ | ຕຣິວ |
| | | ດາກກັງ | ດາກກັງ (ປັນແດງ) |
| 27 | ຮາຣັກ | | ອາລັກ |
| 28 | ໂອຍ | | ໂອຍ |
| | | ສະປວນ | ສະປວນ |
| | | ສອກ | ສອກ |
| | | ອິນທີ | ອິນທີ |
| | | | ແມກລອງ |
| | | | ແມຣີຢາວ |
| 29 | ກຣຽງ | | ແງະ |
| | | ຈະຕ້ອງ | ຈະຕ້ອງ |
| | | ເກາະ | ເກາະ |
| 30 | ເຈັງ | | ເຕັງ |
| 31 | ສະດາງ | | ເຊີດາງ |
| | | ກະຢ້ອງ | ກະຢ້ອງ |

| ລະຫັດ | ຊື່ຊົນເຜົ່າ | ຊື່ແຊງ ຫຼື ຂະແໜງ | ຊື່ເອີ້ນຕາມທ້ອງຖິ່ນ |
|---|---|---|---|
| | | ສະດາງດອນ | ສະດາງດອນ |
| 32 | ຊ່ວຍ | | ຊ່ວຍ |
| 33 | ຍະເຫີນ | | ຕັງແກະ, ເຮີນຍ໌ |
| 34 | ລະວີ | | ລະວີ |
| 35 | ປະໂກະ | | ປະໂກະ |
| | | ກາໂດ | ກາໂດ |
| | | ກາໄນ | ກາໄນ |
| 36 | ຂະແມ | | ຂະແມ, ຂອມ |
| | | | ແຄະ |
| 37 | ຕຸ້ມ | | ຕຸ້ມ |
| | | ລີຮາ | ລີຮາ |
| | | ໄທຈຳ | ໄທຈຳ |
| | | ໄທປອງ | ໄທປອງ |
| | | | ໄທປຸນ |
| 38 | ງວນ | | ງວນ |
| 39 | ມ້ອຍ | | ມ້ອຍ, ເມືອງ |
| 40 | ກຣີ | | ກຣີ, ອາເລມ, ມະແລງ |
| | | | |
| 50 | ບຣູ | | |
| **III.** | **ໝວດພາສາມົ້ງ-ອິວມຽນ (ມີ 2 ຊົນເຜົ່າ)** | | |
| 41 | ມົ້ງ | | |
| | | ມົ້ງຂາວ | ມົ້ງເດີ້ |
| | | ມົງລາຍ (ມົ້ງຂຽວ) | ມົ້ງເລັ່ງ, ມົ້ງຊື້, ມົ້ງຢົວ |
| | | ມົ້ງດຳ | ມົ້ງດູ້ |
| 42 | ອິວມຽນ | | ຢ້າວ |
| | | ລານແຕນ | ລານແຕນ |
| | | | ລາວຫ້ວຍ |
| | | ຢ້າວຂາວ | ຢ້າວຂາວ |
| | | ຢ້າວພົມໄໝແດງ | ຢ້າວພົມໄໝແດງ |
| **IV.** | **ໝວດພາສາຈີນ-ຕິເບດ (ມີ 7 ຊົນເຜົ່າ)** | | |
| 43 | ອາຄາ | | ກໍ |
| | | ໂອມາ | ໂອມາ |
| | | ເຄີ | ເຄີ |
| | | ມູເຕີນ | ມູເຕີນ |
| | | ຈີຈໍ | ຈີຈໍ |
| | | ປູລີ | ປູລີ |

| ລະຫັດ | ຊື່ຊົນເຜົ່າ | ຊື່ແຂງ ຫຼື ຂະແໜງ | ຊື່ເອີ້ນຕາມທ້ອງຖິ່ນ |
|---|---|---|---|
| | | ປານາ | ປານາ |
| | | ກໍເຟ | ກໍເຟ |
| | | ນູກູຍ | ນູກູຍ |
| | | ລູມາ | ລູມາ |
| | | ເອີປາ | ເອີປາ |
| | | ຈີເປຍ | ຈີເປຍ |
| | | ມູຈີ | ມູຈີ |
| | | ຢາເອີ | ຢາເອີ |
| | | ກົງສາດ | ກົງສາດ |
| | | ພູຊາງ | ພູຊາງ |
| 44 | ພູນ້ອຍ | | ແສນສີຣີ, ປີຊູ |
| | | ພູຍອດ | ພູຍອດ |
| | | ຕາປາດ | ຕາປາດ |
| | | ບ້ານຕັ້ງ | ບ້ານຕັ້ງ |
| | | ຈາຫໍ | ຈາຫໍ |
| | | ລາວແຊງ | ລາວແຊງ |
| | | ໄພ(ຜົ້ງສາລີ) | ໄພ(ຜົ້ງສາລີ) |
| | | ລາວປານ | ລາວປານ |
| | | ຜົ້ງກູ້ | ຜົ້ງກູ້ |
| | | ຜົ້ງເສດ | ຜົ້ງເສດ |
| 45 | ລາຫູ | | ມູເຊີ |
| | | ລາຫູນະ | ມູເຊີດຳ |
| | | ລາຫູຊີ | ມູເຊີຂາວ |
| | | ລາຫູເຊເລະ | ກູຍສູງ |
| | | | ກູຍຫຼວງ |
| 46 | ສີລາ | | ສີດາ |
| 47 | ຮາຢີ | | ຮາຍີ |
| 48 | ໂລໂລ | | ອາລູ |
| 49 | ຫໍ້ | | ຫໍ້ |